ຮູ້ຈັກປະເທດ

ໃນອາຊີຕາເວັນອອກສຽງໃຕ້

In Search of South East Asia

A Modern History

Revised Edition edited by David Joel Steinbery

1987

ພາກທີ V

ປະເທດໃນອາຊີຕາເວັນອອກສຽງໃຕ້

ກັບ ໂລກສະໄໝໃໝ່

ສະບັບປັບປຸງໃໝ່ ໂດຍ ເດວິດ ໂຈລ ສະເຕນເບີກ

1987

ໂດຍຄະນະນັກຂຽນ

David P. Chandler, William R. Roff, John.W. Smail,

David Joel Steinberg, Robert H. Taylor, Alexander Woodside David K. Wyatt

ຈັດພິມໂດຍ: ໂຄງການປົກປັກຮັກສາ ໜັງສືໃບລານລາວ, ຫໍສະໝຸດແຫ່ງຊາດ

ອຸປະຖຳໂດຍ: ມູນນິທິໂຕໂຍຕາ TOYOTA FOUNDATION

ຮູ້ຈັກປະເທດ
ໃນອາຊີຕາເວັນອອກສຽງໃຕ້

ພາກທີ V
ປະເທດໃນອາຊີຕາເວັນອອກສຽງໃຕ້
ກັບ ໂລກສະໄໝໃໝ່

ສະບັບປັບປຸງໃໝ່ ໂດຍ ເດວິດ ໂຈລ ສະເຕນເບີກ
1987

In Search of South East Asia
A Modern History
Revised Edition edited by David Joel Steinberg 1987

ໂດຍຄະນະນັກຂຽນ	ຄະນະໂຄງການ ແປ ແລະຈັດພິມ
David P. Chandler	ດາຣາ ກັນລະຍາ
William R. Roff	ດວງເດືອນ ບຸນຍາວົງ
John. W. Smail	ຮ.ສ ສົມໝາຍ ເປຣມຈິດ
David Joel Steinberg	
Robert H. Taylor	
Alexander Woodside	
David K. Wyatt	

ຈັດພິມໂດຍ: ໂຄງການປົກປັກຮັກສາ ໜັງສືໃບລານລາວ, ຫໍສະໝຸດແຫ່ງຊາດ

ອຸປະຖຳໂດຍ: ມູນນິທິໂຕໂຢຕາ TOYOTA FOUNDATION

ຮູ້ຈັກປະເທດໃນອາຊີຕາເວັນອອກສ່ຽງໃຕ້
In Search of South East Asia

ສະບັບຮຽບຮ່ຽງໃໝ່ 1987 ໂດຍ ເດວິດ ໂຈແອລ ສະແຕນເບີກ

ພາກທີ V : ປະເທດໃນອາຊີຕາເວັນອອກສ່ຽງໃຕ້ ກັບ ໂລກສະໄໝໃໝ່

ໂດຍຄະນະນັກຂຽນ

David P. Chandler, William R. Roff, John. W. Smail, David Joel Steinberg,
Robert H. Taylor, Alexander, David K. Wyatt.
Revised Edition edited by David Joel Steinberg, 1987.
©University of Havaii Press, 1987

ຄະນະໂຄງການ ແປເປັນພາສາລາວ

ດາຣາ ກັນລະຍາ
ດວງເດືອນ ບຸນຍາວົງ
ຮອງສາສະດາມຈານ ສົມໝາຍ ເປຣມຈິດ
ສຸກພັນສາ ພູຜາສຸກ

ຄະນະບັນນາທິການ

ກົ່ງເດືອນ ເນດຕະວົງ
ກະວິນ ກ່ຽງຄຳຊົນນີ

ຕີພິມ ຈັດໜ້າ: ສາຍຝົນ ອິນທະລັງສິດ

ອອກແບບປົກ: ດວງແຂ ບຸນຍາວົງ

ຈັດພິມ ສະບັບພາສາລາວ ໂດຍ:

ໂຄງການປົກປັກຮັກສາ ໜັ່ງສືໃບລານລາວ,
ຫໍສະໝຸດແຫ່ງຊາດ ຮ່ວມກັບ ສຳນັກພິມ ດອກເກດ

Lao Language Edition published by:
Preservation of Lao Palm Leaf Manuscript Programme
National Library, Vientiane, Lao PDR.

ໂດຍການອະນຸມັດລິຂະສິດ ຈາກສຳນັກພິມ ມະຫາວິທະຍາໄລ ຮາວາຍ, ສ. ອະເມລິກາ.

ອຸປະຖຳໂດຍ ມູນນິທິໂຕໂຢຕາ TOYOTA FOUNDATION

ພິມທີ່: ໂຮງພິມ ລາວ ຢູນິພຣິ້ນ, ນະຄອນຫຼວງວຽງຈັນ, 2012

ທະບຽນພິມເລກທີ: 219ພຈ11062012

ສາລະບັນ

ບົດ ໜ້າ

ຄຳນຳຂອງຜູ້ຈັດພິມ VII
ຄຳນິຍົມ IX
ຄຳນຳຂອງຄະນະຜູ້ແປ XII
ຄຳນຳຂອງຜູ້ຂຽນ XVI
ຄຳນຳໃນການຈັດພິມຄັ້ງທີສອງ XX

ພາກທີ V ປະເທດໃນອາຊີຕາເວັນອອກສຽງໃຕ້ ກັບ ໂລກສະໄໝໃໝ່

32: ສິງຄາມ ເອກະລາດ ແລະ ການຂ້າມຜ່ານທາງການເມືອງ 25
33: ຫວຽດນາມ 36
34: ກຳປູເຈຽ ແລະ ລາວ 66
35: ພະຣາຊະອານາຈັກໄທ 88
36: ສະຫະພາບພະມ້າ 102
37: ມາເລເຊຍ, ສິງກະໂປ ແລະ ບຣູໄນ 122
38: ສາທາລະນະລັດ ອິນໂດເນເຊຍ 147
39: ສາທາລະນະລັດ ຟີລິບປິນ 173
40: ອາຊີຕາເວັນອອກສຽງໃຕ້ ທີ່ພວມປ່ຽນຮູບໂສມ.....198

ຄຳນຳຂອງຜູ້ຈັດພິມ

ໂຄງການປົກປັກຮັກສາໜັງສືໃບລານລາວ ເປັນໂຄງການໜຶ່ງຂອງ ຫໍສະໝຸດ ແຫ່ງຊາດ ແລະ ມີໜ້າທີ່ປົກປັກຮັກສາໜັງສືໃບລານ ທີ່ກະແຈກກະຈາຍຢູ່ຕາມ ວັດວາອາຮາມ ໃນຂອບເຂດທົ່ວປະເທດ ໃຫ້ຫຼຸດພົ້ນອອກຈາກການສູນເສຍ. ນອກ ຈາກພາລະບົດບາດຕົ້ນຕໍນີ້ແລ້ວ, ໂຄງການຍັງມີໜ້າທີ່ ຄັດເລືອກເອົາເລື່ອງສາລະ ໜ້າຮູ້ ທາງດ້ານປະຫວັດສາດ, ວັນນະຄະດີ, ສຸພາສິດ ຮີດຄອງປະເພນີ ທີ່ກ່ຽວ ກັບວິຖີຊີວິດຂອງຄົນລາວບູຮານ ນຳມາຊຳລະ ແລະ ຈັດພິມເຜີຍແຜ່ ຕໍ່ປວງຊົນ ໃນຮູບແບບເປັນ ປຶ້ມຄົ້ນຄວ້າ ຫຼື ວາລະສານ.

ໂຄງການປົກປັກຮັກສາໜັງສືໃບລານລາວ ຮູ້ສຶກພາກພູມໃຈ ທີ່ທາງສຳນັກ ພິມ ມະຫາວິທະຍາໄລຮາວາຍ (University of Hawai Press) ໄດ້ໃຫ້ຄວາມໄວ້ ວາງໃຈ ແລະ ເຊື່ອໝັ້ນຕໍ່ຄວາມສາມາດຂອງ ທ່ານ ນາງ ດາຣາ ກັນລະຍາ ກັບທີມ ງານ ແປປຶ້ມ “In Search of S.E.A : A Modern History” ເຊິ່ງເປັນຜົນງານການ ຂຽນຂອງ ຄະນະນັກຂຽນຕາເວັນຕົກ ເຈັດທ່ານ ຄື: ຣັອຟ, ເທເລີ, ໄວແອັດ, ແຊນດະເລີ, ວູດໄຊດ໌, ສເມລ, ສະແຕນເບີກ ເຫຼັ້ມນີ້ ອອກເປັນພາສາລາວ ແລະຈັດພິມເພື່ອຮັບໃຊ້ ສະຖາບັນຄົ້ນຄວ້າ, ການສຶກສາຊັ້ນສູງ, ມະຫາວິທະຍາໄລແຫ່ງຊາດ ແລະຫ້ອງສະໝຸດ ທີ່ສຳຄັນໃນທົ່ວປະເທດ.

ການແປ ແລະຈັດພິມກ່ຽວກັບ ປະຫວັດສາດ ວັດທະນະທຳ ຂອງປະເທດ ເພື່ອນບ້ານ ໃນອາຊີແລະປີຕຸພູມເຮົາເອງ ນັບວ່າມີໜ້ອຍທີ່ສຸດ. ປຶ້ມເຫຼັ້ມນີ້ ກໍເປັນ

ໜຶ່ງໃນນັ້ນ. ຂ້າພະເຈົ້າໄດ້ອ່ານບົດ ແລະຄຳນຳເບື້ອງຕົ້ນຂອງປຶ້ມ "ຂອກຮູ້ກ່ຽວກັບ ອາຊີອາຄະເນ" ນີ້ແລ້ວ ຮູ້ສຶກວ່າ ມີຄວາມກະຕືລືລົ້ນ ຢາກຈະອ່ານຕໍ່ໄປເລື້ອຍໆ ເພາະເຫັນວ່າການຂຽນ ແລະການແປເຊິ່ງວັນນະຄະດີ ຮັກສາໄວ້ເຊິ່ງຄວາມງົດງາມ ອັນສູນທອນຂອງພາສາໄດ້ຢ່າງເຕັມປ່ຽມ.ເຫັນວ່າຄະນະຜູ້ແປໄດ້ເຮັດວຽກຢ່າງຕັ້ງໜ້າ ແລະ ຮັບຜິດຊອບສູງ.

ໃນນາມຫໍສະໝຸດແຫ່ງຊາດ ຂອງ ສ.ປ.ປ. ລາວ. ແລະໃນຖານະຜູ້ຮັບຜິດ ຊອບໂຄງການປົກປັກຮັກສາໜັງສືໃບລານລາວ ທີ່ໄດ້ຮັບມອບລິຂະສິດ ໃຫ້ແປຄັ້ງນີ້ ແລະໃນນາມໂຄງການສົ່ງເສີມການອ່ານແຫ່ງຊາດ ຂ້າພະເຈົ້າຖືວ່າຜົນງານແປເຫຼັ້ມນີ້ ຈະກາຍເປັນພະລັງກະຕຸ້ນ ໃຫ້ມີການແປເຫຼັ້ມອື່ນໆຕໍ່ໄປ.

ສ້າງສັງຄົມການອ່ານ ຫຼື ສ້າງວັດທະນະທຳມັກອ່ານ ມັກຄົ້ນຄວ້າ ແມ່ນ ອຸດົມການອັນສູງສົ່ງຂອງຫໍສະໝຸດແຫ່ງຊາດ. ໃນນາມປະຊາຊົນລາວ ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຕໍ່ສຳນັກພິມມະຫາວິທະຍາໄລ ຮາວາຍ ທີ່ອະນຸຍາດໃຫ້ແປ ອອກເປັນພາສາລາວ ແລະຂໍສະແດງຄວາມຂອບໃຈອັນລົ້ນເຫຼືອ ຕໍ່ ມູນນິທິໂຕໂຍຕາ ແຫ່ງ ປະເທດຍີ່ປຸ່ນ (TOYOTA FOUNDATION) ທີ່ໄດ້ສະໜັບສະໜູນການແປ ແລະການພິມເຜີຍແຜ່ຄັ້ງນີ້ດ້ວຍ.

ວຽງຈັນ, ວັນທີ 1 ມິຖຸນາ 2004
ກົງເດືອນ ເນດຕະວົງ
ຫົວໜ້າອຳນວຍການ ຫໍສະໝຸດແຫ່ງຊາດ

ຄຳນິຍົມ

ຂ້າພະເຈົ້າໄດ້ອ່ານບາງບົດໃນປຶ້ມ "In Sarch of S.E.A." ຫຼື ຮູ້ຈັກປະເທດ ໃນອາຊີຕາເວັນອອກສ່ຽງໃຕ້ ຂຽນໂດຍຄະນະນັກຂຽນຕ່າງປະເທດ ທີ່ເປັນນັກປະຫວັດສາດອາວຸໂສຜູ້ມີຊື່ສ່ຽງ ມີປະສົບການໃນການຄົ້ນຄວ້າ ທັ້ງເປັນສາສະດາຈານ ສອນ ຢູ່ໃນມະຫາວິທະຍາໄລຕ່າງໆທີ່ ອາເມລິກາ, ອິດສະຕຣາລີ, ອັງກິດ, ຮ່ອງກົງ... ດ້ວຍຄວາມສົນໃຈ.

ສະພາບການຂາດເຂີນປຶ້ມອ່ານ ທີ່ເຈາະເລິກຫຼາຍແງ່ມຸມ ຂອງປະຫວັດສາດ ປະເທດຕ່າງໆ ຂອງອາຊີອາຄະເນ ໃນພາສາລາວ ເຮັດໃຫ້ຂ້າພະເຈົ້າມີຄວາມມ່ວນ ຊື່ນ ແລະ ຍິນດີຢ່າງຍິ່ງທີ່ຈະເຫັນປຶ້ມຫົວນີ້ ໄດ້ຮັບການຈັດພິມອອກເປັນພາສາລາວ ຈຶ່ງຂໍຊົມເຊີຍຄະນະຈັດທຳຢ່າງຈິງໃຈ ທີ່ໄດ້ພະຍາຍາມເອົາສິ່ງທີ່ມີປະໂຫຍດ ເປັນ ຄວາມຮູ້ ມາໃຫ້ຜູ້ອ່ານລາວ. ຄູອາຈານ ອາດຈະນຳໃຊ້ຂໍ້ມູນເນື້ອເລື່ອງໃນປຶ້ມນີ້ໄປ ປະກອບໃສ່ບົດສອນຂອງຕົນ ແລະນັກວິຊາການສາຍອື່ນ ກໍສາມາດຮຽນຮູ້ເລື່ອງລາວ ຂອງປະເທດ ໃນພາກພື້ນຫຼາຍຂຶ້ນ.

ເວົ້າສະເພາະເນື້ອເລື່ອງ ແລະທັດສະນະຂອງນັກຂຽນ ທີ່ເປັນນັກປະຫວັດສາດ ໂດຍອາຊີບແລ້ວ ຂ້າພະເຈົ້າເຫັນວ່າ:

1. ມີທັດສະນະເປັນກາງ ແລະບໍ່ເນັ້ນໃສ່ບັນຫາການເມືອງ, ແຕ່ສຸມໃສ່ວິວັດ

ທະນາການທາງດ້ານສັງຄົມ ແລະວັດທະນະທຳ ຂອງອາຊີອາຄະເນ.

2. ສະເພາະຄຳນຳ, ເຫັນວ່າມີເນື້ອໃນດີ ແລະເວົ້າຄວາມຈິງ ເຊັ່ນ (ໃນແຖວທີ 4 ຈາກເທິງ ໄດ້ເວົ້າວ່າ) "... When Europeans in the region first had the power and inclination to impose on others their technical skills and new world view." (ເມື່ອຊາວເອີຣົບ ທີ່ອາໄສຢູ່ໃນພາກພື້ນ ໄດ້ເຂົ້າມາມີອຳນາດ ແລະກຳນົດກົດເກນທາງດ້ານວິຊາການ ແລະ ທັດສະນະໂລກໃໝ່ໃຫ້ແກ່ຄົນອື່ນ) ເຫັນວ່ານີ້ແມ່ນທັດສະນະທີ່ກ້າວໜ້າ. ໃນແຖວທີ 12-13 ໄດ້ເວົ້າວ່າ "Southeast Asians have been reduced to roles as mere bit players..." (ເຊິ່ງໄດ້ເຮັດໃຫ້ບົດບາດ ຂອງຊາວອາຊີຕາເວັນອອກສ່ຽງໃຕ້ ຫຼຸດລົງເຫຼືອພຽງໜ້ອຍດຽວ) ນີ້ກໍເປັນ ການວິເຄາະທີ່ມີຄວາມຈິງ.

3. ຕໍ່ບົດ "The Peasant World" (ໂລກຂອງຊາວນາ) ເຫັນວ່າ ຄະນະຜູ້ຂຽນໄດ້ໃຫ້ຂໍ້ມູນ ທີ່ຫາອ່ານຍາກຫຼາຍຈາກເອກະສານ ຫຼື ໜັງສືອື່ນ, ເປັນການຄົ້ນຄວ້າລົງເລິກວ່າ ປະຊາຊາດໃນອາຊີອາຄະເນ ເມື່ອ 200 ກວ່າປີກ່ອນ ມີການດຳລົງຊີວິດແນວໃດ. ເປັນພາກທີ່ພາຜູ້ ອ່ານກັບຄືນໄປເຂົ້າໃຈ ກ່ຽວກັບຊີວິດຈິງຂອງເຂົາເຈົ້າ.

4. ຕໍ່ບົດຊື່ "Non-State People" (ປະຊາຊົນນອກສັງກັດລັດ) ເຫັນວ່າ ເປັນບົດທີ່ໄດ້ສຶກສາຄົ້ນຄວ້າ ແລະສະແດງຂໍ້ມູນທີ່ຊັດເຈນສົມຄວນ ກ່ຽວ ກັບຊົນຊາດຊົນເຜົ່າຕ່າງໆ ທີ່ຜູ້ຂຽນເວົ້າວ່າ ມີເຖິງ 400 ກວ່າ

ຊົນເຜົ່າ ຢູ່ໃນອາຊີອາຄະເນ ແລະ ໄດ້ມີການເວົ້າເຖິງຄົນລາວ

5. ບາງເນື້ອໃນກໍເປັນຜົນດີໃຫ້ແກ່ ສ.ປ.ປ. ລາວ. ເຮົາ ເຊັ່ນ ຢູ່ໜ້າ IX* ທີ່ເວົ້າເຖິງສາຍພູຫຼວງ ທີ່ແບ່ງປັນລະຫວ່າງ ລາວແລະຫວຽດນາມ, ເວົ້າ ເຖິງເບື້ອງລາວ ແມ່ນເຮືອນຮ້ານ ແລະເບື້ອງຫວຽດນາມ ແມ່ນມີເຮືອນ ຕິດກັບພື້ນດິນ ເປັນຕົ້ນ.

ຢ່າງໃດກໍດີ ການໄດ້ອ່ານປຶ້ມກ່ຽວກັບປະຫວັດສາດ ຂອງນາໆປະເທດ ຂຽນ ໂດຍນັກຂຽນທີ່ບໍ່ແມ່ນຄົນໃນຊາດ ຍ່ອມໃຫ້ທັດສະນະທີ່ອາດແຕກຕ່າງແດ່ ນັ້ນມັນ ໝາຍຄວາມວ່າ ພວກເຮົາຈະໄດ້ຮັບຮູ້ນາໆທັດສະນະ ແລະອາດຈະເຂົ້າໃຈບັນຫາ ຕ່າງໆ ໄດ້ກວ້າງຂວາງ ແລະເລິກເຊິ່ງຍິ່ງຂຶ້ນ.

24/VII

ห้ามจำหน่าย

ວຽງຈັນ, ວັນທີ 20 ພຶດສະພາ 2004

ໄຊຍະການ ສີສຸວົງ

ຫົວໜ້າກົມອາຊຽນ ກະຊວງການຕ່າງປະເທດ

* ໜ້າ IX ໃນປຶ້ມເຫຼັ້ມທີ 1

ຄຳນຳຂອງຄະນະຜູ້ແປ

ນັບແຕ່ 1989 ເປັນຕົ້ນມາ ຫຼາຍພາກສ່ວນ ໃນວົງການສິ່ງເສີມການອ່ານການຂຽນຢູ່ ສ.ປ.ປ.ລາວ ໄດ້ຕື່ນຕົວກັນຢ່າງເປັນຂະບວນຟົດຟື້ນ ຈັດພິມເຜີຍແຜ່ປຶ້ມອ່ານນອກລະບົບ ທີ່ເນັ້ນໃນດ້ານວັນນະຄະດີເກົ່າ ຮ່ວມສະໄໝ ເລື່ອງແປ ແລະ ສະເພາະເດັກ. ຂ້າພະເຈົ້າແລະໝູ່ຄະນະຫຼາຍຄົນ ສັງເກດເຫັນວ່າ ປຶ້ມທີ່ຈະໃຫ້ຂໍ້ມູນຄວາມຮູ້ກ່ຽວກັບຄວາມເປັນມາ ຂອງຊາດຕ່າງໆ ອ້ອມຂ້າງຊາດລາວເຮົາ ທີ່ພິມເປັນພາສາລາວ ເກືອບວ່າບໍ່ມີເລີຍ. ໃນເມື່ອປະເທດເຮົາໄດ້ເຂົ້າເປັນສະມາຊິກ ຂອງ ກຸ່ມອາຊຽນ (ASEAN) ແລ້ວແນວນີ້ ເຍົາວະຊົນ ນັກສຶກສາ ຕະຫຼອດເຖິງ ຜູ້ມີວຽກເຮັດກ່ຽວຂ້ອງກັບການພົວພັນຕິດຕໍ່ກັບປະເທດສະມາຊິກນຳກັນ ຄວນທີ່ຈະໄດ້ຮູ້ຈັກກັບຊາດຕ່າງໆ ໃນອາຊີຕາເວັນອອກສ່ຽງໃຕ້ນີ້ ເພື່ອເສີມສ້າງຄວາມເຂົ້າໃຈອັນດີງາມ ລະຫວ່າງກັນແລະກັນ ເອີ້ນວ່າຮູ້ຈັກກັນດີຂຶ້ນ ເພື່ອການພົວພັນທີ່ງອງາມ ຍິ່ງໆຂຶ້ນໄປ.

ການຮູ້ຈັກຄົນໃນຊາດໜຶ່ງ ຫຼື ປະເທດໜຶ່ງນັ້ນ ຈຳເປັນຈະຕ້ອງຮູ້ທັງປັດຈຸບັນ ແລະອະດີດ ກໍຄືຄວາມເປັນມາຂອງປະເທດເພີ່ນ ຜ່ານຂໍ້ມູນທາງປະຫວັດສາດ. ມີແຕ່ປຶ້ມທີ່ກ່າວເຖິງປະຫວັດສາດ ການຕໍ່ສູ້ເພື່ອຄວາມຢູ່ລອດຂອງປະຊາຊົນ ແລະວິຖີການດຳລົງຊີວິດ ການທຳມາຫາກິນ ຄວາມເຊື່ອຖື ແລະ ວັດທະນາທຳຂອງປະຊາຊາດ ຈຶ່ງຈະອຳນວຍໃຫ້ຄົນເຮົາເຂົ້າໃຈເຊິ່ງກັນແລະກັນ ແລະສານຕໍ່ສາຍສຳພັນອັນຄວນມີລະຫວ່າງກັນ ນອກເໜືອໄປຈາກການພົວພັນທາງການທູດ ເສດຖະກິດ

ແລະ ການທ່ອງທ່ຽວ.

ປຶ້ມ "ຮູ້ຈັກປະເທດໃນອາຊີຕາເວັນອອກສ່ຽງໃຕ້" (In Search of S.E.A.) ນີ້ ຈະຕອບສະໜອງສິ່ງຄວນຮູ້ດັ່ງກ່າວມາຂ້າງຕົ້ນ ຢ່າງອຸດົມສົມບູນ. ປຶ້ມຫົວນີ້ ເມື່ອອ່ານໃນສະບັບພາສາອັງກິດ ກໍເປັນເນື້ອໃນອ່ານງ່າຍ ຊວນຕິດຕາມ ສຳນວນພາສາມ່ວນ ແລະ ເລິກເຊິ່ງ ເວົ້າເຖິງປະຊາຊົນຜູ້ອາໄສ ໃນດິນແດນພາກພື້ນນີ້ ຢ່າງລະອຽດ ເວົ້າເຖິງຜູ້ນຳຜູ້ປົກຄອງ ໃນຍຸກສະຕະວັດທີ 18 ຈົນຮອດລະຍະ ການ ຍາດແຍ່ງດິນແດນໂດຍມະຫາອຳນາດ ນັກລ່າເມືອງຂຶ້ນແບບເກົ່າ ທີ່ພະຍາຍາມ ເຂົ້າມາປັບປ່ຽນວິຖີຊີວິດ ແລະຄວາມເຊື່ອຖື ຮີດຄອງປະເພນີ ຂອງຊາວອາຊີອາຄະເນ ໂດຍຈຸດປະສົງທາງອຳນາດເສດຖະກິດ ເປັນຕົ້ນຕໍ.

ເມື່ອໄດ້ອ່ານປຶ້ມຫົວນີ້ຄັ້ງທຳອິດ ຂ້າພະເຈົ້າວາງບໍ່ລົງ ຢາກຕິດຕາມໄປບົດ ຕໍ່ບົດ ຄືຈັ່ງວ່າໄດ້ເດີນທາງໄປແຕ່ລະປະເທດ. ເມື່ອອ່ານກ່ຽວກັບປະເທດທີ່ເຄີຍໄປ ແລ້ວ ເຊັ່ນ ໄທ ຫວຽດນາມ ແລະ ກຳປູເຈຍ ກໍຮູ້ສຶກວ່າ ຮູ້ຈັກກັບຜູ້ຄົນໃນຊັ້ນຄົນ ຕ່າງໆດີຂຶ້ນ ໄດ້ເຂົ້າໃຈວ່າດ້ວຍເຫດໃດ ເຂົາເຈົ້າຈຶ່ງເປັນຄົນແບບນັ້ນ ຄຶດຈັ່ງຊັ້ນ ເຮັດໃຫ້ຮູ້ຈັກຜູ້ຄົນໃນປະເທດເພື່ອນບ້ານເຮົາດີຂຶ້ນ ເຂົ້າໃຈແນວຄຶດ ວັດທະນະທຳ ແລະ ວາດດຳລົງຊີວິດຂະເຈົ້າ ໄດ້ຫຼາຍກວ່າ ທີ່ເຮົາເຫັນຈາກສາລະຄະດີ ໂທລະພາບ ແລະ ຂ່າວຄາວ ໃນໜ້າໜັງສືພິມປະຈຳວັນ.

ອ່ານແລ້ວ ຂ້າພະເຈົ້າຈຶ່ງລົງຄຳເຫັນວ່າ ນີ້ແມ່ນຂໍ້ມູນທີ່ທຸກຄົນຄວນອ່ານ. ມັນ ແມ່ນສິ່ງຈຳເປັນທີ່ພວກເຮົາຈະຕ້ອງຮູ້ໄວ້ ການຮູ້ຈັກຄົນອື່ນ ໂດຍສະເພາະຜູ້ທີ່ຢູ່ໃກ້ໆ ເຮົາ ໃກ້ປະເທດເຮົາ ເປັນການເສີມສ້າງຄວາມເຂົ້າໃຈ ລະຫວ່າງຄົນກັບຄົນ ທີ່

ຈະພາໄປສູ່ສາຍພິວພັນອັນດີ ໃນລະດັບສູງຂຶ້ນໄປເລື້ອຍໆ.

ດ້ວຍເຫດນີ້ ຂ້າພະເຈົ້າ ພ້ອມດ້ວຍຄະນະ ຈຶ່ງໄດ້ສູ້ຊົນແປປຶ້ມ ທີ່ມີຄວາມຍາວ ຮອດ 570 ໜ້າ ໃຊ້ເວລາກວ່າສີ່ປີ ໃນການແປ ຮຽບຮຽງ ແລະ ກວດແກ້ຄືນ 3-4 ຕ່າວ ກ່ອນຈະໄດ້ເນື້ອໃນ ທີ່ເປັນພາສາລາວອອກມາຈັດພິມ ສູ່ສາຍຕາຜູ້ອ່ານ. ຄະນະຈັດ ທຳ ໄດ້ຕົກລົງໃຈແບ່ງເປັນ 4 ເຫຼັ້ມ ເພື່ອສະດວກໃນການຈັບຖື ອ່ານໄດ້ງ່າຍດາຍ.

ແນ່ນອນ ການແປປຶ້ມທີ່ໃຫຍ່ ແລະສຳຄັນ ຄືແນວນີ້ ແມ່ນຕ້ອງມີສິ່ງທີ່ບົກພ່ອງ ຢູ່ແດ່ເປັນທຳມະດາ. ຄະນະພວກເຮົາກໍໄດ້ສຸມໃສ່ສຸດຄວາມສາມາດ ແລະ ເວລາ ເທົ່າທີ່ມີ ເພື່ອໃຫ້ເນື້ອໄນຂອງປຶ້ມ ຍັງຄົງຮັກສາຂໍ້ມູນເດີມຂອງນັກຂຽນ ທີ່ເປັນທັງນັກ ປະຫວັດສາດແລະນັກມະນຸດວິທະຍາ. ພວກເຮົາພະຍາຍາມຊູດເກົ່າປະໂຫຍສຳນວນ ໃຫ້ອ່ານເປັນພາສາລາວທີ່ຄ່ອງຕົວ ແຕ່ກໍປາສະຈາກບໍ່ໄດ້ ສຳນວນທີ່ຍັງເປັນອັງກິດຢູ່ ແດ່ ຍ້ອນວ່າບໍ່ຢາກໃຫ້ເນື້ອໄນຂອງເພີ່ນຜິດພ້ຽນໄປ.

ອີກປະການໜຶ່ງ ໃນດ້ານການສະກົດຊື່ ຂອງບຸກຄົນໃນປະຫວັດສາດ ຂອງ ແຕ່ລະປະເທດ ກໍເປັນບັນຫາໃຫຍ່ ເພາະພວກເຮົາເອົາຈາກສະບັບພາສາອັງກິດ ການ ອອກສຽງອາດຜິດພາດຫຼາຍຢູ່ ກໍຕ້ອງຂໍອະໄພມາພ້ອມນີ້.

ຂໍອຸທິດ ຄຸນປະໂຫຍດຈາກປຶ້ມຫົວນີ້ ແດ່ບຸບພາຈານ ຜູ້ປະສິດປະສາດຄວາມ ຮູ້ໃຫ້ແກ່ພວກເຮົາ ຜູ້ເຮັດວຽກແປແລະກວດແກ້ ຕາມແບບອາສາສະໝັກ ທັງນີ້ກໍເພື່ອ ສ້າງບັນນະພິບພາສາລາວ ໃຫ້ອຸດົມຮັ່ງມີ. ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອ ມາ ຍັງ ມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ ຜູ້ອຸປະຖຳທຶນຮອນ ໃນການຈັດພິມທັງ

4 ເຫຼັ້ມ. ຂໍຂອບໃຈ ຕໍ່ສຳນັກພິມມະຫາວິທະຍາໄລ ຮາວາຍ ສະຫະລັດອາເມລິກາ ທີ່ອະນຸມັດລິຂະສິດ ໃນການພິມເປັນພາສາລາວ ຊຸດນີ້ ດ້ວຍຄວາມໃຈບຸນ.

ຂໍໃຫ້ມີດຕະພາບທີ່ງອກງາມ ຈົ່ງມີແກ່ຊາວອາຊີຕາເວັນອອກສ່ຽງໃຕ້ ແລະ ຊາວໂລກ ດ້ວຍເຖີດ.

ວຽງຈັນ, ວັນທີ 5 ພຶດສະພາ 2004

ດາຣາ ວິຣະວົງສ໌ ກັນລະຍາ

ຕາງໜ້າຄະນະຜູ້ແປ

ຄຳນຳຂອງຜູ້ຂຽນ

ຢູ່ດອນນ້ອຍໆ ຊື່ ມັກຕັນ (Mactan) ປະເທດຟີລິບປິນ ມີອະນຸສາວະລີ ສ້າງຂຶ້ນໃນສະຕະວັດທີ 19 ໂດຍຊາວສະເປນ ເພື່ອສັນລະເສີນພຣະເປັນເຈົ້າ, ປະເທດສະເປນ ແລະ ແຟດີນັງ ມາແຊນລັງ. ໃນປີ 1941 ສະໄໝທີ່ອາເມລິກາເຂົ້າໄປຢູ່ຟີລິບປິນ ເພິ່ນໄດ້ສ້າງຈາລຶກໃສ່ອະນຸສາວະລີ ກ່າວເຖິງການຈາກໄປຂອງ ແຟ-ດີນັງ ມາແຊນລັງ ວ່າ: "ນະທີ່ນີ້ ແຟດີນັງ ມາແຊນລັງ ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 27 ເມສາ 1521 ພາຍຫຼັງໄດ້ຖືກບາດເຈັບ ໃນການສູ້ຮົບກັບ ທະຫານຂອງລາປູລາປູ ຫົວໜ້າເຜົ່າຂອງດອນມັກຕັນ (Mactan Island)". ເຮືອສະເພົາລຳໜຶ່ງຂອງ ມາ-ແຊນລັງ ຊື່ ວິກໂຕເຣຍ, ໂດຍການບັນຊາຂອງ ຮວນ ເຊບາສະຕຽນ ແອນກາໂນ (Juan Sabastian Elcano) ເດີນທາງມາຈາກເຊປຸ ເມື່ອວັນທີ 1 ພຶດສະພາ 1521 ມາຈອດຢູ່ທ່າ ຊານລູກາ ເດີບາຣັນເມດາ ຖືເປັນການເດີນເຮືອຮອບໜ່ວຍໂລກເປັນຄັ້ງທຳອິດ. ອີກໜຶ່ງທົດສະວັດຕໍ່ມາ ເມື່ອຟີລິບປິນ* ໄດ້ຮັບເອກະລາດແລ້ວ ໄດ້ສ້າງຈາລຶກຫຼັກໃໝ່ຂຶ້ນ ຊື່ວ່າ "ລາປູ ລາປູ" ຂຽນໄວ້ວ່າ: "ນະທີ່ນີ້ ເມື່ອວັນທີ 27 ເມສາ 1521 ລາປູ ລາປູ ແລະທະຫານ ໄດ້ຂັບໄລ່ຜູ້ຮຸກຮານ ແລະ ຂ້າຜູ້ນຳຂອງພວກເຂົາ ແຟດີນັງ ມາແຊນລັງ. ດັ່ງນີ້ ລາປູ ລາປູ ແມ່ນຄົນຟີລິບປິນຜູ້ທຳອິດ ທີ່ລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຂອງຊາວເອີຣົບ."

* ຄົງໝາຍເຖິງ 10 ປີ ຫຼັງຈາກປີ 1941 (ຜູ້ແປ)

ຕົວຢ່າງທີ່ຍົກຂຶ້ນມານີ້ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າ ນັກປະຫວັດສາດ ຕ້ອງພົບກັບສະຖານະການທີ່ຫຍຸ້ງຍາກ ພໍພຽງໃດ. ການຕີລາຄາສະພາບການຕ່າງໆ ມັກແຕກຕ່າງກັນໄປຫຼາຍ ລະຫວ່າງຄຳເວົ້າ ທີ່ຄືຈ່ຶງວ່າ ຈະເປັນຂໍ້ມູນແທ້ ແຕ່ແລ້ວ ຜັດແມ່ນການຈັດວາງຂອງ ນັກປະຫວັດສາດ ເພື່ອຕີລາຄາເຫດການໜຶ່ງ ໃນອະດີດ ໃຫ້ກັບກາຍເປັນສິ່ງທີ່ໜ້າສົງໄສ. ປຶ້ມຫົວນີ້ ນອນຢູ່ໃນຂໍ້ສະຫຼຸບ ຂອງຜົນການຮ່ວມ ຄົ້ນຄວ້າແລະຂຽນຂອງຫຼາຍຄົນ ທີ່ແລກປ່ຽນຂໍ້ຄຶດເຫັນກັນ ຢ່າງເລິກເຊິ່ງເພື່ອບັນທຶກ ເຫດການຂອງມວນມະນຸດ. ແຮກແຕ່ລະດູໃບໄມ້ຫຼົ່ນ ປີ 1966, ພວກເຮົາໄດ້ເລີ່ມ ປຶກສາຫາລື ກ່ຽວກັບໂຄງຮ່າງ ແລະຖົກຖຽງ ຂໍ້ສະຫຼຸບ ຈາກການຄົ້ນຄວ້າ. ຮອດ ລະດູຮ້ອນ ປີ 1969 ພວກເຮົາມາພົບກັນອີກຄັ້ງໜຶ່ງຢູ່ ອານ ອາເບີ ໃນການ ສຳມະນາປະຕິບັດການຂຽນປະຫວັດສາດຍຸກສະໄໝໃໝ່ ຂອງອາຊີຕາເວັນອອກສຽງ ໃຕ້. ພວກເຮົາຂຽນໂຄງຮ່າງນຳກັນ, ແບ່ງຂົງເຂດທີ່ຮັບຜິດຊອບຂຽນ ແລະ ຕິຊົມ ງານຂຽນຂອງກັນແລະກັນ ດ້ວຍຄວາມຫວັງອັນໝັ້ນຄົງວ່າ ອາດຈະສາມາດຂຽນໜ້າ ປະຫວັດສາດສະໄໝໃໝ່ຂອງອາຊີອາຄະເນ ແບບສັງເກດການ ຢ່າງລະອຽດໄດ້. ຢ່າງ ໃດກໍຕາມ ກໍບ່ອາດຫຼີກໜ່ຽງຂໍ້ບົກພ່ອງໄດ້ ດ້ວຍວ່າ ພວກເຮົາບາງຄົນກໍຂາດເອກະ ສານອ້າງອີງ ທັ່ງເວລາກໍໜ້ອຍ. ຕົວຢ່າງ ໃນກຸ່ມພວກເຮົາ ບໍ່ມີໃຜຊ່ຽວຊານກ່ຽວກັບ ປະຫວັດສາດປະເທດພະມ້າເລີຍ ແລະພວກເຮົາກໍບ່ອາດລະໄລປະເທດນີ້ໄດ້. ພວກ ເຮົາໄດ້ຕັ້ງປະຕິຫານໄວ້ແລ້ວວ່າ ການຮ່ວມກັນສຶກສາຄົ້ນຄວ້າ ກ່ຽວກັບອາຊີອາຄະ ເນທັ່ງໝົດ ເປັນເອກະພາບນັ້ນ ບໍ່ແມ່ນຍ້ອນວ່າມີສາຍຕາຂອງນັກປະຫວັດສາດປຽບ ທຽບຢູ່ແລ້ວ ແຕ່ຫາກມີຄຳພາສິດບົດໜຶ່ງຂອງ ສາທາລະນະລັດອິນໂດເນເຊຍ ກ່າວ ໄວ້ວ່າ "ມີຄວາມເປັນເອກະພາບ ຢູ່ໃນຄວາມແຕກຕ່າງນັ້ນ." ການທີ່ພວກເຮົາເລັ່ງໃສ່ ຂົງເຂດນີ້ແບບລວມໆ ຊ່ວຍໃຫ້ພົບຄວາມສາມາດເລິກເຊິ່ງ ແລະ ແລວທາງແຫ່ງ

ຄວາມເຂົ້າໃຈ ໃນສ່ວນອາຊີອາຄະເນເອງ. ເຖິງແມ່ນວ່າ ຕົກລົງໃຈແນວນີ້ແລ້ວ ໃນ ການສົນທະນາແລກປ່ຽນຄວາມຄຶດເຫັນ ກໍຍັງຕ້ອງຖົກຖຽງກັນອີກຫຼາຍ.

ລາຍຊື່ບຸກຄົນ ທີ່ພວກເຮົາຢາກສະແດງຄວາມຂອບໃຈນັ້ນ ຫຼາຍກວ່ານີ້ ຢ່າງໜ້ອຍທີ່ສຸດ ກໍມີອີກຫົກເທົ່າ ຄືຕ້ອງຂອບໃຈໄປທຸກແຈໂລກ ແຕ່ຂໍຈາລຶກໄວ້ ເປັນພິເສດ ສະເພາະສາສະດາຈານ ເກລ ແນສ (Professor Gayl Ness) ແລະ ຈອນ ບຣູມຟິວ (John Broomfield) ແຫ່ງ ສູນຄົ້ນຄວ້າອາຊີຕາເວັນອອກສຽງໃຕ້ ທີ່ມະຫາວິທະຍາໄລມິຊິແກນ ທີ່ໄດ້ຊຸກຍູ້ທຸກຂັ້ນຕອນຂອງໂຄງການນີ້. ປະການນຶ່ງ ຖ້າປາສະຈາກ ດຣ. ດາວິດ ປ໌ຟານເນີ (Dr. David Pfanner) ແຫ່ງ ມູນນິທິ ຝອດ (Ford Foundation) ແລະ ດຣ. ວິລຽມ ບຣາດລີ (Dr. William Bradly) ແຫ່ງ ມູນນິທິ ຣັອກກີ ແຟລເລີ (Rockefeller Foundation) ແລ້ວ ປຶ້ມເຫຼັ້ມນີ້ ຄົງບໍ່ເກີດຂຶ້ນໄດ້; ພວກເຮົາຂໍສະແດງຄວາມຮູ້ບຸນຄຸນອັນລົ້ນເຫຼືອຕໍ່ມູນນິທິທັ້ງສອງ ແລະ ຕໍ່ທ່ານທັ້ງສອງ ທີ່ປະຕິບັດວຽກງານຢູ່ໃນມູນນິທິຢ່າງເຕັມຄວາມສາມາດ. ພວກ ເຮົາຂໍຂອບໃຈ ກອງທຶນແຫ່ງຊາດເພື່ອມະນຸດຊາດ (National Endowment for the Humanities) ແລະ ສະຖາບັນ ໂຮຣາດ ແຣກແຮມ (Horace Rackham school) ແຫ່ງ ວິທະຍາໄລ ມິຊິແກນ ທີ່ໄດ້ອະນຸມັດທຶນໃນການຄົ້ນຄວ້າເກັບກຳຂໍ້ ມູນ. ສະເພາະແຜນທີ່ນັ້ນ ແມ່ນທ່ານ ໂຣນານ ເອັດເກີຕັນ (Ronald Edgerton) ເປັນຜູ້ກະກຽມຂໍ້ມູນ ແລະ ແຕ້ມໂດຍ ນາງ ຄາເຣັນ ອີວິງ (Karen Ewing). ພວກ ເຮົາຍັງຕ້ອງຂອບໃຈ ບັນດານັກສຶກສາທີ່ມາຊ່ວຍ ໂດຍສະເພາະ ສະຈ໊ວດ ກໍດອນ,

ປາຕຼິເຊັຍ ເຮີເບີກ, ທີໂອດໍ ກຼອສມັນ ແລະ ນໍມັນ ໂອເວັນ ແຫ່ງວິທະຍາໄລ ມິຊິແກນ. ຂໍຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ ໂຣນານ ເອັດເກີຕັນ ທີ່ໄດ້ຊ່ອຍເຫຼືອດ້ວຍຄວາມຈິງຈັງ ແລະ ສະໜັບສະໜູນ ທຸກຂັ້ນຕອນຂອງໂຄງການ. ສຸດທ້າຍນີ້ຕ້ອງຂໍອະໄພນຳ ບັນດາພັນລະຍາຂອງພວກເຮົາທັງຫ້າຄົນ, ລູກໆອີກ ແປດຄົນ ທີ່ຕ້ອງຢູ່ຢ່າງປ່ຽວພອຍ ໃນລະດູຮ້ອນ ລະດູໃບໄມ້ຫຼົ່ນ ແລະ ລະດູໜາວ ຕະຫຼອດເວລາຫຼາຍປີ.

Ann Arbor, Michigan
ກໍລະກົດ 1970

ຄຳນຳໃນການຈັດພິມຄັ້ງທີສອງ

ເມື່ອລົງມືເຮັດວຽກໜຶ່ງເປັນເທື່ອທຳອິດນັ້ນ ເຮົາອາດຈະຕື່ນເຕັ້ນຫຼາຍແດ່ ແຕ່ ບາດແລ້ວ ກໍຄ່ອຍໆ ກັບກາຍມາເປັນຄວາມຊິນເຄີຍໄປເອງ. ເຈັດປີກ່ອນໜ້ານີ້ ການ ຂຽນປຶ້ມຫົວນີ້ ແມ່ນປະສົບການທີ່ຍິ່ງໃຫຍ່ຫຼາຍ ສຳລັບພວກເຮົາ ແຕ່ເວລານີ້ ກໍຈຳ ເປັນຕ້ອງປັບປຸງຂໍ້ມູນໃຫ້ທັນເຫດການຂຶ້ນມາ: ການແລກປ່ຽນທັດສະນະ ແຮ່ງຕ້ອງ ເຂັ້ມຂຸ້ນກວ່າ, ຂໍ້ຖົກຖຽງຕ້ອງມີຊີວິດຊີວາ ຕິວຈິງ ມີຄວາມເປັນເພື່ອນລົ້ງແກວ່ນບວກ ເຂົ້າມາ ແລ້ວຍັງມີຄວາມນັບຖືໃນວິຊາການຂອງກັນແລະກັນຕື່ມອີກ. ຍັງມີຫຼາຍຂໍ້ທີ່ ພວກເຮົາຂັດແຍ່ງກັນ ແຕ່ປີ 1969 ແຕ່ແລ້ວກໍລົ້ງທ້າຍນຳກັນວ່າ ເທື່ອນີ້ຈະຕ້ອງປັບປຸງ ຂໍ້ມູນໃຫ້ທັນເຫດການຂຶ້ນ. ສ່ວນຈຸດບົກບາງຕ່າງໆ ຍ່ອມມີຢູ່ ແຕ່ນີ້ກໍເປັນປຶ້ມທີ່ຂຽນ ໄດ້ດີທີ່ສຸດແລ້ວ ດີກວ່າຈະຂຽນຄືນດຽວ.

ໃນການກວດແກ້ຄືນ ເພື່ອພິມຄັ້ງທີ 2 ນີ້ ພວກເຮົາໄດ້ຕົກລົ້ງໃຈ ຮັບເອົາ ຜູ້ຊ່ຽວຊານ ປະຫວັດສາດ ປະເທດພະມ້າເຂົ້າມາຮ່ວມ ເປັນກຸ່ມນຳກັນ. ທ່ານ ໂຣເບີດ ເທເລີ (Robert H. Taylor) ຕັດສິນໃຈມາເຂົ້າກັບພວກເຮົາ; ໄດ້ຈັດໃຫ້ມີກອງ ທຶນກ້ອນນ້ອຍນຶ່ງ ເພື່ອເດີນທາງໄປເກັບກຳຂໍ້ມູນ ຈາກຄະນະກຳມະການຮ່ວມ ເພື່ອ ອາຊີຕາເວັນອອກສຽງໃຕ້ ຂອງສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ (SSRC) ແລະ ທຶນຈາກ American Council of Societies ເພື່ອຈັດຕັ້ງກອງປະຊຸມ ຢູ່ ອິທາກາ (Ithaca) ເປັນເວລາໜຶ່ງອາທິດ ໃນເດືອນ ພຶດສະພາ 1986. ພວກເຮົາໄດ້ຂຽນ ຄືນໃໝ່ນຳກັນ ເກືອບທັງໝົດພາກທີ 5 ແລະຮຽບຮຽງບ່ອນອ້າງອີງຄືນໃໝ່; ທ່ານ ເທເລີ

ເປັນຜູ້ຂຽນບົດທີ່ກ່ຽວກັບ ພະມ້າ; ພວກເຮົາກໍໄດ້ກວດກາແປງຄືນ ບົດທີ 1, 2, 5 ແລະ 8. ໂດຍອ້າງອີງໃສ່ກອງປະຊຸມທີ່ ອິທາກາ. ທ່ານ ແຊນດະເລ ແລະ ເທເລ ໄດ້ຂຽນຄືນໃໝ່ ບົດທີ 40, ສ່ວນ ທ່ານ ໄວແອັຕ ຂຽນຄືນບົດທີ 32. ພວກເຮົາ ຂໍຂອບໃຈຕໍ່ກຳມະການຮ່ວມ ດ້ານອາຊີອາຄະເນ ແລະ ຜູ່ຢູ່ ອິທາກາ ທຸກຄົນ ທີ່ ໄດ້ຊ່ວຍວຽກງານນີ້ ຈົນເປັນຮູບຮ່າງຂຶ້ນມາ ຂໍຂອບໃຈພາກວິຊາປະຫວັດສາດ ແຫ່ງ ວິທະຍາໄລ ຄໍແນລ (Cornell University) ທ່ານ ສະຕິຟ ໂຣເຈີ (Steve Rogers) ແລະ ຈິຣະນັນ ປະເສີດກຸລ. ສ່ວນ ນາງ ດາມາຣິສ ເກີຊໂຣເຟີ (Damaris Kirchrofer) ມະຫາວິທະຍາໄລຮາວາຍ ເຊິ່ງຊ່ວຍຈັດສັນເອົາປຶ້ມສະບັບທີ 1 ເຂົ້າພິມ, ມາໃນຊຸດນີ້ ປຶ້ມຫົວນີ້ກໍຄົງບໍ່ເກີດ ຖ້າຫາກນາງບໍ່ຊຸກຍູ້ ອົດທົນ ທັງໃຫ້ຄຳແນະນຳຕື່ມ.

24 / VII

ที่เมืองอิทากา
มังกอน 1987

ห้ามจำหน่าย

ພາກທີ V

ປະເທດໃນອາຊີຕາເວັນອອກສຽງໃຕ້ ກັບ ໂລກສະໄໝໃໝ່

32

ສົງຄາມ, ເອກະລາດ ແລະ ການຂ້າມຜ່ານທາງການເມືອງ

ໃນຕະຫຼອດໄລຍະປະຫວັດສາດຂອງອາຊີອາຄະເນ ເຫດການທີ່ສົ່ງຜົນເລິກເຊິ່ງ ໄວວາ ຕໍ່ພາກພື້ນໄດ້ ຄືກັບສົງຄາມໂລກຄັ້ງທີ II ມີແຕ່ໜ້ອຍເທື່ອ. ໃນເວລາພຽງສາມປີເຄິ່ງ ພື້ນຖານຂອງລະບົບເມືອງຂົ້ນ ຖືກທຳລາຍ, ປະຊາຊົນໃນພາກພື້ນເລີ່ມຄິດວາງແຜນແລະລຸກຂຶ້ນຕໍ່ສູ້ (ລາງເທື່ອເຖິງຂັ້ນສະຫຼະຊີວິດ) ເພື່ອຄວາມເປັນເຈົ້າການຕັດສິນໃຈອະນາຄົດຂອງເຂົາເຈົ້າເອງ ແທນທີ່ການຖືກຈັດສັນທຸກຢ່າງໂດຍເຈົ້າອານານິຄົມ. ສິ່ງທີ່ກະຕຸ້ນ ໃຫ້ເກີດການປ່ຽນແປງດັ່ງກ່າວ ບໍ່ແມ່ນຜົນກະທົບທາງວັດຖຸທີ່ເກີດຈາກສົງຄາມ ດັ່ງຈຳນວນຜູ້ເສຍຊີວິດທີ່ນັບບໍ່ໄດ້ ເຄື່ອງຂອງ ເຮືອນຊານ ຖືກທຳລາຍ, ຫຼື ວິຖີຊີວິດທີ່ປ່ຽນແປງໄປ ຫຼື ອັນອື່ນໆ ທີ່ຮ້າຍແຮງເຊັ່ນນັ້ນ; ແຕ່ກຳຫາກແມ່ນຜົນກະທົບຫຼັກຂອງສົງຄາມ ຄື ການທີ່ສົງຄາມ ໄດ້ສ້າງພັດທະນາການທາງຄວາມຄິດ ໃຫ້ກັບຄົນອາຊີຕາເວັນອອກສຽງໃຕ້. ຜົນກະທົບດັ່ງກ່າວ ສົ່ງຜົນຕໍ່ຄວາມຮູ້ສຶກຢ່າງເລິກເຊິ່ງ ຕໍ່ຜູ້ຄົນທີ່ຜ່ານໄລຍະສົງຄາມ ແລະຍັງດຳລົງຊີວິດ ເຖິງປັດຈຸບັນ ພວກເຂົາເອີ້ນເວລາດັ່ງກ່າວວ່າ “ຈຸດຫັນປ່ຽນ” ເວລາທີ່ເຂົາເລົ່າເຖິງປະຫວັດສ່ວນຕົວ ຫຼືປະຫວັດສາດຂອງຊາດ ຈຶ່ງມັກມີວະລີວ່າ “ໄລຍະກ່ອນສົງຄາມ” “ປາງສົງຄາມ” ແລະ “ຫຼັງສົງຄາມ” ປາກົດຂຶ້ນ. ປະສົບການໃນໄລຍະສົງຄາມ ໄດ້ເລັ່ງການປ່ຽນແປງທາງແນວຄິດ ຂະໜາດໃຫຍ່ ແລະ ນຳເອົາລັດທິຊາດນິຍົມມາສູ່ອາຊີອາຄະເນ. ໃນຂະບວນການປົດປ່ອຍສັງຄົມ ແລະ ກ້າວຂຶ້ນສູ່ຍຸກສະໄໝໃໝ່ນັ້ນ ນັກຊາດນິຍົມຜູ້ທີ່ກ້າວຂຶ້ນສູ່ອຳນາດໃນລະຫວ່າງສົງຄາມ ບໍ່ໄດ້ຄຳນຶງເລີຍວ່າ ຈະພາເອົາອຳນາດການປົກຄອງໃໝ່ ໄປສູ່ສະພາບການຍອມຈຳນົນ. ນັ້ນເທົ່າກັບວ່າ ຄຳພະຍາກອນເລື່ອງຍຸກໃໝ່ຂອງອາຊີ (a new dawn for Asia) ແລະ ອາຊີເພື່ອຄວາມເປັນອາຊີ (Asia

for the Asiatics) ຂອງຍີ່ປຸ່ນ ໄດ້ກາຍມາເປັນຄວາມຈິງແລ້ວ.

ຕັ້ງແຕ່ສົງຄາມໂລກຄັ້ງທີ II ເລີ່ມຂຶ້ນ ເມື່ອເດືອນກັນຍາ 1939 ຢູ່ທະວີບເອີຣົບ ຄົນອາຊີອາຄະເນສ່ວນໃຫຍ່ ປາກົດວ່າຖືກແກ່ດຶງເຂົ້າມາມີສ່ວນຮ່ວມກັບສົງຄາມໂດຍ ທີ່ເຂົາເຈົ້າ ເກືອບບໍ່ມີສິດຕອບໂຕ້ຫຍັງເລີຍ, ຕົວຢ່າງ ປະຊາຊົນມຽນມ້າ ໄດ້ຮັບແຈ້ງ ພຽງແຕ່ວ່າ ເຂົາເຈົ້າພວມເຮັດສົງຄາມ ກັບ ເຢຽລະມັນ. ດັ່ງນັ້ນ ສະບຽງອາຫານ ແລະ ວັດຖຸດິບຕ່າງໆ ໂດຍສະເພາະແມ່ນເຫຼັກ, ນ້ຳມັນເຊື້ອໄຟ ແລະຢາງ ຖືກປ່ຽນເປັນ ເຄື່ອງມືຮັບໃຊ້ສົງຄາມ ທີ່ບໍ່ພຽງຮັບໃຊ້ເຈົ້າອານານິຄົມ ທີ່ພວມຕໍ່ສູ້ກັນ ໃນເອີຣົບ ແຕ່ ຍັງປ້ອນອຸດສະຫະກຳຂອງຍີ່ປຸ່ນ ນັບຕັ້ງແຕ່ຍີ່ປຸ່ນປະສົບພາວະຢຸດຊະງັກ ຍ້ອນເຮັດ ສົງຄາມກັບຈີນ ແຕ່ປີ 1937 ມາ.

ເມື່ອຝຣັ່ງແລະໂຮນລັງ ຖືກເຢຽລະມັນຍຶດໄດ້ໃນເດືອນມິຖຸນາ 1940 ບວກ ກັບມີການຄາດການວ່າ ສົງຄາມໃນເອີຣົບຈະສັ້ງສຸດລົງ ຍີ່ປຸ່ນຈຶ່ງຟ້າວເຂົ້າມາຍຶດຄອງ ພາກພື້ນອາຊີອາຄະເນ ອັນໜຶ່ງເພາະຢ້ານວ່າ ເຢຽລະມັນຈະໄດ້ຮັບສິດປົກຄອງບັນດາ ເມືອງຂຶ້ນ ຂອງອັງກິດແລະໂຮນລັງ ໄປໃນຕົວ ແລະ ອີກເຫດຜົນໜຶ່ງກໍແມ່ນ ເພື່ອປ້ອງ ກັນ ແຫຼ່ງຊັບພະຍາກອນຂອງຕົນ ໃນການເຮັດສົງຄາມກັບ ຈີນ. ທັນທີທີ່ຝຣັ່ງປະລາໄຊ ຍີ່ປຸ່ນໄດ້ເຂົ້າແຊກແຊງ ລັດຖະບານອິນໂດຈີນຝຣັ່ງເສດ ເຊິ່ງມີຖານທັບ ແລະ ທີ່ຕັ້ງ ຍຸດທະສາດທີ່ສຳຄັນຢູ່ພາກເໜືອຫວຽດນາມ, ຕັດເສັ້ນທາງລຳລຽງ ຂອງຈີນທາງ ແມ່ນ້ຳແດງ ບັງຄັບໃຫ້ຈີນຕ້ອງໄດ້ສ້າງ "ຖະໜົນ ສາຍພະມ້າ" ເພື່ອລຳລຽງສິ່ງຂອງ ຈາກຢ່າງກຸ້ງ ຂ້າມມຽນມ້າເຂົ້າຫາຢູນນານ. ຝ່າຍຍີ່ປຸ່ນກໍຂະຫຍາຍຖານທັບຂອງຕົນ ໄປສູ່ອິນໂດຈີນຕອນໃຕ້ ຈີນຮອດກາງປີ 1941 ແລະ ທະວີການກົດດັນເຂດອິນເດຽ ຕາເວັນອອກຂອງໂຮນລັງ ແລະ ມາລາຢາຂອງອັງກິດ ເພື່ອເພີ່ມປະລິມານການສົ່ງ ສະບຽງຮັບໃຊ້ກອງທັບຂອງຕົນ.

ຮອດຈຸດນີ້ເອງ ທີ່ກຸ່ມພັນທະມິດ ເລີ່ມຕໍ່ຕ້ານການຄອບຄອງອາຊີອາຄະເນ ຂອງຍີ່ປຸ່ນຢ່າງເຂັ້ມແຂງ ຈີນມີອີກຫຼາຍໆເຫດການຕໍ່ເນື່ອງເກີດຂຶ້ນ ໃນລະຍະ 25

ປີ ຕໍ່ມາ. ເຫດການເລີ່ມຈາກ ການທີ່ສະຫະລັດອາເມລິກາ ເຂົ້າແຊກແຊງພາກໃຕ້ ຂອງຫວຽດນາມ. ເຖິງວ່າຍີ່ປຸ່ນໄດ້ຍຶດຄອງຖານທັບທັງໝົດໃນພາກໃຕ້ອິນໂດຈີນ ຝ່າຍ ສະຫະລັດ ໄດ້ຢຸດສົ່ງນ້ຳມັນເຊື້ອໄຟແລະເຫຼັກໄປຍີ່ປຸ່ນ, ຝ່າຍອັງກິດ ແລະ ໂຮນລັງ ກໍເລີ່ມເຮັດນຳ ບໍ່ຍອມສະໜອງການສົ່ງອອກນ້ຳມັນແລະຢາງ ໄປຍີ່ປຸ່ນ. ຜ່ານການ ເຈລະຈາທາງການທູດກວ່າຫ້າເດືອນ ສອງຝ່າຍພົບທາງອອກ ແຕ່ຜັດຄາບັນຫາທີ່ ຝ່າຍພັນທະມິດ ໃຫ້ຄວາມຊ່ວຍເຫຼືອຈີນ ອີກທັງຝ່າຍຕາເວັກຕິກ ຍັງມີສ່ວນຊ່ວຍ ເຫຼືອສະບຽງຮັບໃຊ້ສົງຄາມໃຫ້ອາຊີອາຄະເນ. ຍີ່ປຸ່ນຈຶ່ງວາງແຜນເຮັດສົງຄາມ ໃນພາກ ພື້ນນີ້ ສົງຄາມທີ່ສຸດທ້າຍແລ້ວ ເປັນຍຸດທະສາດທີ່ຜິດພາດຂອງຍີ່ປຸ່ນ ທີ່ມາເຮັດສົງ ຄາມທາງທະເລຢູ່ພາກໃຕ້ ແທນທີ່ຈະເປັນສົງຄາມເທິງບົກ ເພື່ອໂຈມຕີໂຊຽດ ຜ່ານ ທາງ ແມນຈູເລຽ (ຈີນ).

ຍີ່ປຸ່ນໄດ້ສ້າງ ເຂດວົງແຫວນການຮ່ວມມື ເພື່ອຄວາມວັດທະນາ ຂອງມະຫາ ອາຊີຕາເວັນອອກ (Greater Asia co-prosperity sphere) ເຊິ່ງຕີອ້ອມ ເອົາອາຊີຕາເວັນອອກແລະອາຊີອາຄະເນ ໂດຍສ້າງຈິນຕະນາການ ທີ່ຈະຮວບຮວມ ບັນດາລັດ ເຊິ່ງໃນລາຍລະອຽດແລ້ວ ຄ້າຍຄືກັບລະບົບເຄືອຈັກກະພົບອັງກິດ ໂດຍ ໃຫ້ "ບັນດາອານາຈັກ" ແລະ "ລັດທີ່ຂຶ້ນກັບອານານິຄົມ (crown colonies)" ມີ ຄວາມເທົ່າທຽມກັນ, ແຜນການນີ້ ຍັງປະກອບມີ ແຜນທາງການທະຫານ ທີ່ຍິ່ງໃຫຍ່ ອະລັງການ. ບໍ່ທ່ໃດຊົ່ວໂມງ ກ່ອນແລະຫຼັງຕາເວັນຂຶ້ນຂອງວັນທີ 8 ທັນວາ 1941 (ເປັນວັນທີ 7 ທັນວາ ຕາເວັນອອກ ຕາມເສັ້ນແບ່ງເວລາສາກົນ) ກອງທັບຍີ່ປຸ່ນໄດ້ ໂຈມຕີ ຖານທັບເຮືອຂອງສະຫະລັດທີ່ ທ່າເຮືອເພີລຮາເບີ (Pearl Harber) ຮາວາຍ; ໂຈມຕີກອງທັບສະຫະລັດ ທີ່ຕັ້ງຖານຢູ່ຕາມມະຫາສະມຸດປາຊີຟິກຕາເວັນຕົກ ເຂດ ອາລູຊຽນ ແລະ ຟີລິບປິນ; ບຸກຕີທະຫານອັງກິດຢູ່ຮົ່ງກົ່ງ, ສິງກະໂປ, ອີກຫຼາຍເມືອງ ຕາມແຄມຝັ່ງທະເລທິດເໜືອຂອງມາເລເຊຍ, ໂຈມຕີອີກ 7 ຈຸດໃນເຂດອ່າວໄທ ຕະ ຫຼອດ ຊາຍແດນກຳປູເຈຍ ແລະ ຍັງໂຈມຕີທາງອາກາດ ໃສ່ຖານທັບອາກາດ ທາງ ທິດເໜືອຂອງບາງກອກ. ຈຸດປະສົງຫຼັກຂອງການໂຈມຕີ ແມ່ນຕ້ອງການຄວບຄຸມເສັ້ນ ທາງຂົນສົ່ງສາກົນ ທີ່ຜ່ານຊ່ອງແຄບມະລະກາ ແລະ ຊຸນດາ ເຊິ່ງເຂົ້າເຖິງແຫຼ່ງ

ຊັບພະຍາກອນ ກົ່ວ, ນ້ຳມັນເຊື້ອໄຟ, ຢາງ ແລະ ເຂົ້າ ໃນ ມາເລເຊຍ, ມຽນມ້າ, ເຂດອິນເດຍຕາເວັນອອກຂອງໂຮນລັງ (ຕັດການສົ່ງຊັບພະຍາກອນດັ່ງກ່າວໃຫ້ຝ່າຍພັນທະມິດ) ແລະ ເພື່ອຍຶດທີ່ຕັ້ງທາງຍຸດທະສາດ ທີ່ສາມາດຂົ່ມຂູ່ ອົສຕຣາລີ ແລະ ອິນເດຍ ແລະຢຸດການຂົນສົ່ງສະບຽງ ຜ່ານທາງພະມ້າໄປຫາ ຝ່າຍຈີນຊາດນິຍົມ.

ໄທຍອມຈຳນົນ ແລະເຂົ້າຮ່ວມກັບຝ່າຍຍີ່ປຸ່ນ ໃນບໍ່ເທົ່າໃດຊົ່ວໂມງຂອງການໂຈມຕີ. ທະຫານເຮືອອັງກິດ ອາເມລິກາ ແລະ ໂຮນລັງ ຕໍ່ສູ້ກັບການບຸກໂຈມຕີ ແຕ່ເມື່ອຜະເຊີນໜ້າກອງທັບອັນຍິ່ງໃຫຍ່ ຂອງຍີ່ປຸ່ນ ໃນເວລາດຽວກັນ ກອງທັບໃນເອີຣົບກໍພວມຕົກຢູ່ໃນທ່າຮັບ ຍ້ອນກຳລັງພົນ ແລະ ເຄື່ອງມືຂອງພວກເຂົາມີຈຳກັດ ພວກເຂົາຈຶ່ງບໍ່ສາມາດ ສູ້ຢັນຢູ່ໄດ້ດົນ. ເປັນເວລາສີ່ເດືອນ ທີ່ໜັງສືພິມທົ່ວໂລກ ລາຍງານການເສຍເມືອງສຳຄັນໆ ໃຫ້ຍີ່ປຸ່ນທຸກອາທິດ ເຊັ່ນ: ຮົງກົງ ໃນວັນທີ 25 ທັນວາ, ມະນີລາ ວັນທີ 2 ມັງກອນ, ກົວລາລຳເປ ວັນທີ 11 ມັງກອນ, ສິງກະໂປ ວັນທີ 15 ກຸມພາ, ຢ່າງກຸ້ງ ວັນທີ 7 ມີນາ ແລະສ່ວນທີ່ເຫຼືອຂອງ ອິນເດຍຕາເວັນອອກຂອງໂຮນລັງ ເມື່ອວັນທີ 9 ມີນາ. ຖືໄດ້ວ່າ ອຳນາດຂອງຕາເວັນຕົກ ທີ່ມີມາຫຼາຍທົດສະວັດ ຫຼື ເປັນຫຼາຍສະຕະວັດ ຖືກຂັບໄລ່ອອກຢ່າງສົມບູນ ຈາກພາກພື້ນນີ້ ກ່ອນທ້າຍເດືອນເມສາ ສ່ວນຝ່າຍ ລັດຖະບານຫຸ່ນ ຂອງອິນໂດຈີນຝຣັ່ງເສດແມ່ນປອດໄພ ເພາະສາມາດຕົກລົງແບ່ງປັນອຳນາດກັບຝ່າຍຍີ່ປຸ່ນໄດ້.

ການບຸກເຂົ້າມາອາຊີອາຄະເນຂອງຍີ່ປຸ່ນ ຄືການພັງທະລາຍຂອງອຳນາດ ແລະລະບົບການລ່າເມືອງຂຶ້ນຂອງຕາເວັນຕົກ. ການຂະຫຍາຍຕົວຂອງ ຈັກກະພັດຍີ່ປຸ່ນ ສະແດງໃຫ້ເຫັນຄວາມອ່ອນແອຂອງຝ່າຍຕາເວັນຕົກ. ຄວາມເດັດຂາດ, ຄວາມໄວ ແລະກຳລັງແຮງ ໃນໄຊຊະນະຂອງຍີ່ປຸ່ນ ກະຕຸກໃຫ້ຄົນອາຊີອາຄະເນ ຫຼຸດພົ້ນອອກຈາກການຍົນຍອມ, ຄວາມຢ້ານ ຫຼື ຄວາມຢຳເກງ ຕໍ່ອຳນາດຂອງຄົນເອີຣົບ ແລະ ຄວາມຈິງທີ່ວ່າ ຄົນຍີ່ປຸ່ນແມ່ນຄົນອາຊີ ກໍຍິ່ງຝັງແໜ້ນໃນຄວາມຄຶດ. ເຂົາເຈົ້າອາດມີຄວາມຮູ້ສຶກຄືກັບວ່າ ຖືກຈ່ອງດຶງຢ່າງບໍ່ເຕັມໃຈ ໂດຍສິ່ງໜຶ່ງເປັນເວລາຫຼາຍທົດສະວັດ ຖືກດຶງເຂົ້າສູ່ລະບົບເສດຖະກິດສາກົນ ອີກສ່ວນໜຶ່ງກໍຄືວ່າ ໂຕຖືກໂຍນເຂົ້າສູ່ວັງວົນ

ຂອງການເມືອງໂລກ ໂດຍບໍ່ມີກຳລັງໃດໆໃນການປ້ອງກັນຕົວ ທັງບໍ່ມີອຳນາດໃດໆ ທີ່ຮັບປະກັນຄວາມປອດໄພຂອງເຂົາເຈົ້າ. ສິ່ງນີ້ເອງ ທີ່ໄດ້ຫວ່ານເຊື້ອແນວ ຂອງຄວາມເປັນຊາດນິຍົມ ເຊິ່ງຈະເຫັນຈະແຈ້ງຂຶ້ນໃນຍຸກຫຼັງສົງຄາມ. ເຖິງວ່າຜົນກະທົບຈາກການບຸກຂອງຍີ່ປຸ່ນ ຈະກວ້າງຂວາງ ຫຼາກຫຼາຍ ແລະແຕກຕ່າງກັນ ຢູ່ແຕ່ລະສ່ວນຂອງອາຊີອາຄະເນ ແຕ່ມີຜົນຮັບຮ່ວມຢ່າງໜຶ່ງລ້ຳຢູ່. ໃນແຕ່ລະທ້ອງຖິ່ນ ຍີ່ປຸ່ນ ກະຕຸ້ນໃຫ້ເກີດ ກອງທະຫານ ແລະ ກອງຫຼອນ ຂຶ້ນໃນທົ່ວພາກພື້ນ. ໄລຍະຫຼັງສົງຄາມ ກອງກຳລັງດັ່ງກ່າວໄດ້ກາຍມາເປັນກອງທັບແຫ່ງຊາດ ແລະ ກອງທັບເພື່ອປົດປ່ອຍຈາກແອກລ່າເມືອງຂຶ້ນ. ການບໍລິຫານແບບກອງທັບຍີ່ປຸ່ນ ຍັງໄດ້ສະແດງໃຫ້ເຫັນເຖິງການມີສ່ວນຮ່ວມທາງການເມືອງຂອງກອງທັບ ເຊິ່ງສິ່ງນີ້ ຖືກຈົດຈຳແລະນຳໄປໃຊ້ ໃນຍຸກຫຼັງສົງຄາມ. ການຟື້ນຟູກອງກຳລັງທ້ອງຖິ່ນ ແລະ ການທຳລາຍຄວາມເຊື່ອວ່າຄົນຕາເວັນຕົກຍິ່ງໃຫຍ່-ເຮັດໄດ້ທຸກຢ່າງ ແມ່ນມໍລະດົກສອງຢ່າງ ທີ່ກອງທັບຍີ່ປຸ່ນ ປະໄວ້ໃຫ້. ບໍ່ວ່າຈະເປັນທີ່ຮັບຮູ້ຂອງສາທົນຫຼືບໍ່ ນະໂຍບາຍທີ່ຍີ່ປຸ່ນປະຕິບັດໃນຫຼາຍປະເທດຂອງອາຊີອາຄະເນ ໄດ້ຊ່ວຍເຝິກຝົນຄວາມສາມາດແລະປະສົບການ ໃຫ້ກັບຜູ້ນຳທາງການເມືອງໃນປະເທດ ແລະສ້າງໂອກາດການມີສ່ວນຮ່ວມທາງການເມືອງ ແກ່ປະຊາຊົນ. ໃນສັງຄົມລະດັບຕ່ຳກວ່າ ແລະໃນຫຼາຍແງ່ມຸມ ປະຊາຊົນຫຼາຍພັນຄົນທີ່ຖືກບັງຄັບໃຫ້ປະຖິ້ມບ້ານເກີດ ມາສູ່ "ກອງທັບທາດ" ເຊິ່ງກໍຄືການຖືກເກນມາເປັນແຮງງານສ້າງທາງລົດໄຟ ຈາກມຽນມ້າຫາໄທ ເພື່ອຂົນສົ່ງສິ່ງຂອງໃຫ້ກອງທັບ ເຂົາເຫຼົ່ານັ້ນຖືກບັງຄັບໃຫ້ອອກຈາກບ້ານເກີດ ແລະ ໄດ້ຮັບຮູ້ເຖິງໂອກາດ ທີ່ຈະສ້າງຄວາມປ່ຽນແປງໃຫ້ກັບຊີວິດ.

ການທີ່ຍີ່ປຸ່ນຊຸກຍູ້ໃຫ້ເກີດລະບົບຊາດນິຍົມໃນອາຊີອາຄະເນ ບໍ່ແມ່ນເລື່ອງການເຂົ້າຂ້າງໃຜ. ໃນຫຼາຍໆປະເທດ ຂອງອາຊີຕາເວັນອອກສ່ຽງໃຕ້, ເບິ່ງຄືກັບວ່າການລຸກຮືຂຶ້ນເພື່ອປົດປ່ອຍຕົນເອງ ມີຄວາມສຳຄັນເທົ່າກັບ ການໄດ້ຮັບການຍອມຮັບໃນລະດັບສາກົນ. ຄາເມອິ ຄັດຊຶອິຈິໂຣະ ຊາວຍີ່ປຸ່ນທີ່ເກີດຫຼັງສົງຄາມ ວິຈານການບຸກອາຊີອາຄະເນ ວ່າ: ໜ້າເສຍໃຈ ທີ່ຍີ່ປຸ່ນບໍ່ໄດ້ພິດສະໜາດປະເທດອື່ນໆໃນອາຊີເລີຍ, ການທີ່ຍີ່ປຸ່ນສາມາດຜະລິດເຄື່ອງອຸດສະຫະກຳ ເຮັດໃຫ້ເບິ່ງຄືວ່າ ຍີ່ປຸ່ນ

ກ້າວໜ້າໄວກວ່າເພື່ອນບ້ານໃກ້ຄຽງອື່ນໆ ແຕ່ນັ້ນຄື ໄພພິບັດອັນໃຫຍ່ຫຼວງ ຈາກການກ້າວສູ່ຄວາມທັນສະໄໝ ຂອງປະເທດຍີ່ປຸ່ນ ໃນລະຫວ່າງສົງຄາມ ຍີ່ປຸ່ນໄດ້ໃຫ້ຂໍ້ມູນດ້ານດຽວ ເພື່ອສ້າງຄວາມຄຽດຊັງຊາວຕາເວັນຕົກ ແລະ ລະບົບການປົກຄອງເມືອງຂຶ້ນຂອງພວກເຂົາ. ເຈົ້າໜ້າທີ່ຊາວຍີ່ປຸ່ນ ໄດ້ແຜ່ຂະຫຍາຍຄວາມຄຽດຊັງຊາວຕາເວັນຕົກ ສູ່ບັນດາປະເທດອາຊີອາຄະເນ ທີ່ພວກເຂົາປົກຄອງ. (ອີກປະການໜຶ່ງເວົ້າໄດ້ວ່າ ອຳນາດການປົກຄອງຍີ່ປຸ່ນ ໃນອາຊີອາຄະເນ ແມ່ນເຄື່ອງມືທຳລາຍຊາວຕາເວັນຕົກ ທີ່ມີປະສິດທິພາບ ຫຼືອີກປະການໜຶ່ງ ການຄອບຄອງຂອງຍີ່ປຸ່ນ ຍັງເປັນການທຳລາຍເສດຖະກິດ ໃນອາຊີອາຄະເນ). ການສົ່ງອອກສິນຄ້າຖືກສະກັດກັ້ນ ເພາະກອງທັບເຮືອຂອງຝ່າຍພັນທະມິດ ສາມາດຈົມເຮືອຂອງຍີ່ປຸ່ນໄດ້ຫຼາຍຂຶ້ນໆ ເກີດການຢຸດຈ້າງງານພາກການກະເສດຢ່າງກະທັນຫັນ, ຄວາມຕ້ອງການເຂົ້າ ແລະ ສະບຽງສຳລັບກອງທັບຍີ່ປຸ່ນ ຕິດຕາມມາດ້ວຍການຂາດແຄນເຂົ້າ, ເໝືອງກໍ່ ແລະ ບໍ່ນ້ຳມັນ ຖືກໂຈມຕີ, ຖະໜົນ, ຂົວ ແລະ ທາງລົດໄຟ ຖືກລະເບີດ, ແຮງງານເກນຖືກບັງຄັບໃຫ້ເຮັດວຽກໜັກ, ທັງໝົດນີ້ ກໍ່ໃຫ້ເກີດວິກິດການລົ້ມລະລາຍຂອງສັງຄົມ ແລະ ເສດຖະກິດ. ລາຄາສິນຄ້າທີ່ຂຶ້ນສູງຢ່າງຄວບຄຸມບໍ່ໄດ້ ຍິ່ງເຮັດໃຫ້ວິກິດການ ຮ້າຍແຮງຍິ່ງຂຶ້ນ.

ໃນເວລາດຽວກັນນັ້ນ ສະຖານະການຂອງຍີ່ປຸ່ນທີ່ປ່ຽນແປງ ໄດ້ສ້າງຜົນກະທົບທາງອ້ອມ ໃຫ້ເກີດການປ່ຽນແປງທາງການເມືອງ ຂອງພາກພື້ນອາຊີອາຄະເນ. ຍີ່ປຸ່ນ ໂຈມຕີອາຊີອາຄະເນ ໂດຍຫວັງວ່າ ສົງຄາມໃນເອີຣົບຈະສິ້ນສຸດ ໃນປີ 1942 ແຕ່ ຮອດກາງປີ 1943 ສະຖານະການສູ້ຮົບ ເລີ່ມປັ້ນຄືນ, ຍີ່ປຸ່ນປະລາໄຊ ໃນການບຸກອິນເດຍ ແລະ ໃນເສັກມິດເວ (Midway) ກອງທັບເຮືອຍີ່ປຸ່ນຖືກທຳລາຍຢ່າງໜັກ ເປີດທາງໃຫ້ຝ່າຍສະຫະລັດ ບຸກຂຶ້ນເໜືອ ຈາກພາກຕາເວັນຕົກສ່ຽງໃຕ້ຂອງມະຫາສະມຸດປາຊີຟິກ. ເພື່ອຮຽກຮ້ອງການສະໜັບສະໜຸນຈາກພາຍໃນ ກອງທັບຍີ່ປຸ່ນ ເລີ່ມດຳເນີນນະໂຍບາຍສ້າງຊື່ສຽງ ໃຫ້ກັບຜູ້ປົກຄອງໃນພາກພື້ນ ໂດຍໄດ້ຕັ້ງ ອຳນາດການປົກຄອງເຄິ່ງເອກະລາດ (quasi-independent) ໃນພະມ້າ ແລະ ຟີລິບປິນ, ແລະ ໂອນບາງສ່ວນຂອງລັດສານ ແລະ ພາກເໜືອມາເລເຊຍ ໃຫ້ໄທປົກຄອງ. ຍີ່ປຸ່ນຖືກກົດດັນໃຫ້ດຳເນີນນະໂຍບາຍທີ່ມີຄວາມອ່ອນໄຫວຫຼາຍຂຶ້ນ ເພາະກອງທັບຍີ່ປຸ່ນເອງ

ຖືກກົດດັນຢ່າງໜັກ ເລີ່ມແຕ່ ກາງປີ 1944 ເມື່ອກອງທັບອັງກິດ ເລີ່ມບຸກເຂົ້າທາງ ພາກເໜືອມຸງນມ້າ, ກອງທັບສະຫະລັດເຂົ້າຍຶດຄອງຟີລິບປິນຄືນ, ກອງທັບພັນທະມິດ ຖົ້ມລະເບີດຕາມເສັ້ນທາງລຳລຽງ ອີກທັ້ງອັງກິດ ແລະ ສະຫະລັດ ກໍໃຫ້ການສະໜັບ ສະໜຸນກອງກຳລັງຕໍ່ຕ້ານ ໃນພະມ້າ, ໄທ, ອິນໂດຈີນຝຣັ່ງເສດ ແລະ ມາເລເຊຍ. ໄລຍະເຄິ່ງປີທຳອິດຂອງປີ 1945 ໂດຍສະເພາະເມື່ອອັງກິດຍຶດພະມ້າຄືນ ໃນເດືອນ ພຶດສະພາ ກອງທັບຍີ່ປຸ່ນຕ້ອງເຮັດວຽກຢ່າງເຄັ່ງຕຶງ ໃນສະພາບການທີ່ບໍ່ອຳນວຍ ເພື່ອ ສົ່ງການສະໜັບສະໜຸນ ຈາກອາຊີອາຄະເນ ໄປສູ່ສະໜາມຮົບຕ່າງໆ ຍີ່ປຸ່ນເລີ່ມຊຸກຍູ້ ໃຫ້ລັດຖະບານຄົນທ້ອງຖິ່ນ ຂຶ້ນມາມີອຳນາດ. ສິ່ງນັ້ນນຳໄປສູ່ຈຸດສິ້ນສຸດ ຂອງຍຸກ ອານານິຄົມ.

ເດືອນ ກໍລະກົດ 1945 ຕອນນັ້ນຍັງບໍ່ມີໃຜຄາດວ່າ ສົງຄາມໂລກ ຈະສິ້ນສຸດ ລົງໃນບໍ່ເທົ່າໃດອາທິດຕໍ່ຈາກນັ້ນ, ລະເບີດປະລະມານູ ຖືກຖົ້ມລົງ ແຂວງຮິໂຣຊິມະ ແລະ ນາງາຊາກິ ວັນທີ 6 ແລະ 9 ສິງຫາ ຕາມລຳດັບ ແລະ ວັນທີ 14 ສິງຫາ ຈັກກະພັດ ຮິໂຣຮິໂຕະ ກໍປະກາດຍອມຈຳນົນຢ່າງບໍ່ມີເງື່ອນໄຂ. ບັນດາເຈົ້າອານານິຄົມເກົ່າ ຕ່າງ ກຽມໂຕບໍ່ທັນ ບໍ່ແມ່ນແຕ່ເລື່ອງທາງການທະຫານ ຫຼື ການບໍລິຫານ ແຕ່ເຈົ້າອານາ ນິຄົມເກົ່າ ຍັງບໍ່ເຂົ້າໃຈ ເລື່ອງການຕໍ່ຕ້ານ ເພື່ອປົດປ່ອຍຕົນເອງ ຂອງອາຊີອາຄະເນ. ຍົກເວັ້ນແຕ່ສະຫະລັດ ທີ່ເຂົ້າມາສ້າງລະບົບເມືອງຂຶ້ນແບບໃໝ່ໃນຟີລິບປິນ ຕັ້ງແຕ່ ທົດສະວັດກ່ອນໜ້າ. ເຈົ້າອານານິຄົມເກົ່າຄິດວ່າຈະສາມາດຄືນມາຄອງອຳນາດ ໂດຍ ປາສະຈາກອຸປະສັກໃດໆ, ຍ້ອນຜົນເສຍຫາຍຈາກສົງຄາມ ເຮັດໃຫ້ຕ້ອງມີການປະຕິ ຮູບທາງການເມືອງບາງສ່ວນ ຄືກັບສະໄໝທີ່ເຈົ້າອານານິຄົມເກີດຂັດແຍ່ງກັບ ເຈົ້າ ນາຍທ້ອງຖິ່ນ ໃນຊຸມປີ 1920-1930 ຈົນວ່າເສດຖະກິດແລະສັງຄົມເວລານັ້ນ ຢູ່ໃນ ກຳມືຂອງເຈົ້າອານານິຄົມຢ່າງສົມບູນ ລັດຕ່າງໆ ຂອງອາຊີອາຄະເນ ຕົກຢູ່ໃນຄວາມ ຂັດແຍ່ງອັນຮຸນແຮງ ລະຫວ່າງ ຝ່າຍຊາດນິຍົມ ທີ່ພວມເຕີບໃຫຍ່ຂຶ້ນຢ່າງແຂງແຮງ ແລະ ຝ່າຍນິຍົມລະບອບລ່າເມືອງຂຶ້ນ.

ໃນໜ້າຕໍ່ໆໄປ ພວກເຮົາຈະໄດ້ສຶກສາປະຫວັດສາດອາຊີອາຄະເນ ໄລຍະ

ພາຍຫຼັງສົງຄາມໂລກຄັ້ງທີ II. ກ່ອນທີ່ຈະໄດ້ຮູ້ຈັກກັບໄລຍະທີ່ສັບສົນທີ່ສຸດຂອງອາຊີອາຄະເນ, ຢາກໃຫ້ພວກເຮົາເຂົ້າໃຈນຳກັນກ່ອນວ່າ ແມ່ນໄລຍະປະຫວັດສາດນີ້ເອງ ທີ່ເຮັດໃຫ້ພາກພື້ນນີ້ ມີຄວາມໜ້າສົນໃຈ ຫຼາຍກວ່າ ເປັນພຽງກຸ່ມຂອງປະເທດກຸ່ມໜຶ່ງ.

ຍຸກສະໄໝຫຼັງສົງຄາມ ໃນທີ່ນີ້ ສາມາດແບ່ງອອກເປັນສີ່ໄລຍະ ອີງຕາມ ເຫດການທີ່ສຳຄັນທີ່ເກີດຂຶ້ນໃນລະດັບພາກພື້ນ. ໄລຍະທຳອິດແມ່ນນັບແຕ່ການສິ້ນສຸດ ສົງຄາມໂລກຄັ້ງທີ II ຮອດການສິ້ນສຸດຂອງສົງຄາມພາຍໃນ ຂອງເກືອບທຸກປະເທດ ປະມານປີ 1954. ໄລຍະນີ້ແມ່ນຂີດໝາຍແຫ່ງການຕໍ່ສູ້ຂອງປະຊາຊົນ ໃນມຽນມ້າ, ອິນໂດເນເຊຍ, ກຳປູເຈຍ, ລາວ, ຫວຽດນາມ ແລະ ຟີລິບປິນ ແລະການເຕີບໃຫຍ່ ທາງການເມືອງ ຂອງຊາວມາເລ ຈົນຮອດມື້ທີ່ການຕໍ່ສູ້ເຫຼົ່ານັ້ນ ໄດ້ຮັບໄຊຊະນະ (ຢ່າງສົມບູນໃນປີ 1957). ໄລຍະນີ້ເອງ ຂະບວນການກອມມູນິດ ໄດ້ເຄື່ອນໄຫວ ຢ່າງແຂງແຮງ ໃນທຸກໆປະເທດຂອງພາກພື້ນ. ຜູ້ກຳອຳນາດໃນເວລານັ້ນ ຜະເຊີນ ບັນຫາອັນໃຫຍ່ຫຼວງ ເພື່ອຟື້ນຟູປະເທດ ພາຍຫຼັງສົງຄາມໂລກ, ຟື້ນຟູເສດຖະກິດ, ແລະຕ້ອງໄດ້ກໍ່ສ້າງບັນດາສະຖາບັນທາງການເມືອງ ແລະສັງຄົມຄືນໃໝ່. ການຟື້ນ ໂຕຂອງເສດຖະກິດຂອງອາຊີອາຄະເນ ມາຈາກກຳລັງການບໍລິໂພກໃນໂລກຕາເວັນ ຕົກ, ຕໍ່ມາກໍແມ່ນສົງຄາມເກົາຫຼີ (1950-1953). ແຕ່ການເກີດການປະຕິວັດພາຍໃນ, ການປະຕິຮູບໜ່ວຍງານທາງການເມືອງ, ແລະການແຊກແຊງຈາກພາຍນອກດ້ວຍຮູບ ແບບໃໝ່ ໄດ້ທຳລາຍ ບັນຍາກາດຄວາມສຳເລັດ ທີ່ເກີດຂຶ້ນ.

ໄລຍະທີສອງ ເລີ່ມນັບເອົາຫຼັງຈາກສົງຄາມເກົາຫຼີ ປະມານປີ 1954, ໄລຍະ ແຫ່ງໄຊຊະນະ ຂອງກຳລັງຄອມມູນິດຈີນ ໃນປີ 1949, ຄວາມຂັດແຍ່ງທີ່ນຳໄປ ສູ່ກອງປະຊຸມເຊີແນວ ປີ 1954, ຈຸດສິ້ນສຸດຂອງສົງຄາມອິນໂດຈີນຄັ້ງທຳອິດ, ແລະ ການສ້າງຕັ້ງ ກຸ່ມສົນທິສັນຍາປ້ອງກັນອາຊີຕາເວັນອອກສ່ຽງໃຕ້ (SEATO) ປີ 1954. ຈຸດສິ້ນສຸດຂອງໄລຍະນີ້ແມ່ນ ການເກີດຄວາມຂັດແຍ່ງຢ່າງຮຸນແຮງ ໃນທົ່ວອິນໂດຈີນ ໃນຊຸມປີ 1960. ໄລຍະທີສອງ ແມ່ນໄລຍະແຫ່ງການເຂົ້າມາ ຂອງກຳລັງຊາດຕາ ເວັນຕົກ ທີ່ຢ້ານກົວການແຜ່ອິດທິພົນ ຂອງຝ່າຍກອມມູຍນິດ ທີ່ມີຈີນ ແລະ ໂຊວຽດ

ເປັນຫົວຈັກຫຼັກແຫຼ່ງ. ອາຊີອາຄະເນ ຕົກຢູ່ທ່າມກາງຄວາມຂັດແຍ່ງ ຂອງສອງຂົ້ວ ມະຫາອຳນາດ, ຂະນະທີ່ໄທ, ຫວຽດນາມເໜືອ ແລະ ຟີລິບປິນ ເຂົ້າຮ່ວມໃນຄວາມ ຂັດແຍ່ງດັ່ງກ່າວ, ບາງປະເທດເຊັ່ນ ອິນໂດເນເຊຍ ແລະ ກຳປູເຈຍໄດ້ເຂົ້າຮ່ວມ ຂະ ບວນການບໍ່ຝັກໃຝ່ຝ່າຍໃດ ໂດຍມີການຈັດປະຊຸມຂອງຂະບວນການດັ່ງກ່າວ ທີ່ແຂວງ ບັນດຸງ (ອິນໂດເນເຊຍ) ໃນປີ 1955 ທັງຝ່າຍຕາເວັນອອກ ແລະ ຕາເວັນຕົກໄດ້ ຖອກເທງົບປະມານມະຫາສານ ທັງທາງເສດຖະກິດ ແລະ ການທະຫານ ໃຫ້ພັນ ທະມິດຂອງຕົນ ໃນພາກພື້ນນີ້ ຂະນະທີ່ການແຊກແຊງ ທາງການເມືອງດຳເນີນໄປ ທັງທາງເປີດເຜີຍແລະທາງລັບ. ການທີ່ສະຫະລັດ ສູນເສຍຕະຫຼາດ ແລະແຫຼ່ງວັດຖຸດິບ ຂະໜາດໃຫຍ່ ເຊັ່ນຈີນ, ສະຫະລັດ ຈຶ່ງຫັນມາສົ່ງເສີມໃຫ້ຍີ່ປຸ່ນ ສ້າງສາຍພົວພັນທາງ ເສດຖະກິດ ກັບບັນດາປະເທດອາຊີອາຄະເນ. ຖືໄດ້ວ່າ ເປັນຍຸກຂອງການເຕີບໃຫຍ່ ໂດຍມີເງິນຊ່ວຍເຫຼືອ ແລະການຄ້າຂາຍ ເປັນໂຕຊຸກຍູ້ ແລະກໍເປັນໄລຍະທີ່ບັນດາ ສະຖາບັນທາງການເມືອງແລະສັງຄົມ ຍົກບັນຫາເລື່ອງ ເອກະລາດຂອງຊາດຂຶ້ນມາ ແລະນຳໄປສູ່ຄວາມຂັດແຍ່ງ ຕົວຢ່າງ ນະໂຍບາຍ ເສັ້ນທາງສູ່ປະຊາທິປະໄຕ ຂອງ ອະດີດຜູ້ນຳ ຊູກາໂນ ໃນອິນໂດເນເຊຍ ແລະຫຼາຍໆກໍລະນີອື່ນໆ ໃນຫຼາຍປະເທດ ຄວາມຮຸນແຮງທີ່ເກີດຂຶ້ນ ຊ່ວຍໃຫ້ຫຼາຍກຸ່ມຄົນ ກ້າວຂຶ້ນມາມີອຳນາດໄດ້.

ການປ່ຽນແປງ ໄລຍະທີ 3 ແມ່ນນັບເອົາໄລຍະທີສອງຂອງສົງຄາມອິນໂ ດຈີນ ຄື ແຕ່ປີ 1956-1957 ສົງຄາມໃນຫວຽດນາມ ກຳປູເຈຍ ແລະລາວ ໄດ້ສິ່ງຜົນ ສະທ້ອນເປັນວົງກວ້າງໄປທົ່ວພາກພື້ນ. ກອງທັບສະຫະລັດ ໄດ້ນຳເອົາວັດຖຸອຸປະກອນ ແລະກຳລັງພົນເຂົ້າມາຢ່າງຫຼວງຫຼາຍ ແລະອຳນາດທາງເສດຖະກິດຂອງສະຫະລັດ ກໍ ສ້າງຄວາມປ່ຽນແປງຢ່າງໃຫຍ່ຫຼວງ ຕໍ່ເສດຖະກິດຂອງ ອາຊີອາຄະເນ, ຂະນະດຽວ ກັນ ຊັບພະຍາກອນແລະກຳລັງການຊ່ວຍເຫຼືອ ກໍຫຼັ່ງໄຫຼມາຈາກທາງຝ່າຍກອມມູນິດ ຄື ຈີນ ແລະ ສະຫະພາບໂຊວຽດ ເຊັ່ນກັນ. ການເຂົ້າມາຂອງອາເມລິກາ ດ້ວຍຂໍ້ອ້າງ ວ່າ ເພື່ອຮັບປະກັນສະເຖຍລະພາບຂອງພາກພື້ນນີ້ ຊ້ຳເປັນການສ້າງຂໍ້ຂັດແຍ່ງ ດ້ານ ການຖ່ວງດຸນອຳນາດຂອງປະເທດໃນພາກພື້ນນີ້. ຂະນະດຽວກັນ ອຳນາດທາງການ ເງິນ ແລະການທະຫານ ທີ່ສະຫະລັດຖອກເທເຂົ້າມາຍັງສ້າງຄວາມປ່ຽນແປງຂະໜາດ

ໃຫຍ່ ແກ່ເສດຖະກິດສັງຄົມ ເຮັດໃຫ້ເກີດກຸ່ມຂອງ "ຜູ່ໄດ້ຮັບຜົນປະໂຫຍດ" ທີ່ລ້ຳລວຍ ຂົ້ນມະຫາສານ ແລະເຮັດໃຫ້ຄວາມຂັດແຍ່ງລະຫວ່າງຊັ້ນຄົນ ຢ່ັງຮາກເລິກລົງໄປອີກ.

ໄລຍະທີສີ່ ເລີ່ມແຕ່ການຖອນກຳລັງສະຫະລັດ ຫຼັງປະລາໄຊໃນສົງຄາມອິນໂດຈີນ ເມື່ອຕົ້ນຊຸມປີ 1970. ເປັນໄຊຊະນະຂອງຂະບວນການກອມມູນິດໃນຫວຽດ ນາມ, ກຳປູເຈ ແລະລາວ ໃນປີ 1975 ເຫດການທາງການເມືອງໃນໄລຍະນີ້ ຊຸກຍູ້ໃຫ້ເກີດການປ່ຽນແປງໃນ ພະມ້າ ຈາກປະເທດທີ່ປິດໂຕເອງ ເລີ່ມມີການພົວພັນ ກັບກຸ່ມປະເທດໃນພາກພື້ນ ເປັນການເຕີບໃຫຍ່ກ້າວສຳຄັນຂອງ ສະມາຄົມປະຊາ ຊາດ ອາຊີຕາເວັນອອກສ່ຽງໃຕ້ (ASEAN, ສ້າງຕັ້ງຂົ້ນໃນປີ 1967) ເຮັດໃຫ້ການ ຮ່ວມມືກັນຂອງປະເທດອາຊີຕາເວັນອອກສ່ຽງໃຕ້ ມີການເຕີບໃຫຍ່ຂົ້ນ. ເຫດການຫຼັງ ໄຊຊະນະຂອງຂະບວນການກອມມູນິດໃນພາກພື້ນນີ້ ກໍເປັນທີ່ປະຫຼາດໃຈຫຼາຍ, ມີ ການປະທະກັນທາງທະຫານຢ່າງຈະແຈ້ງ ລະຫວ່າງປະເທດທີ່ນັບຖືລັດທິມາກຄືກັນ, ຫວຽດນາມໂຈມຕີກຳປູເຈ ແລະຈີນກໍໂຈມຕີຫວຽດນາມ ລະຫວ່າງປີ 1978-1979. ຫຼາຍໆປະເທດ ເກີດມີຈຸດປ່ຽນທາງດ້ານການເມືອງ, ໄທ (1973-1977), ກຳປູເຈ (1975-1979), ລາວ (1975), ຟີລິບປິນ (1972-1986), ມາເລເຊ (1971) ແລະ ອິນໂດເນເຊ (1956-1966) ເຮັດໃຫ້ແຕ່ລະປະເທດມີປະສົບການ ແລະຈຳ ເປັນຕ້ອງປັບຕົວ ໃຫ້ເຂົ້າກັບສັງຄົມທີ່ສະຫຼັບຊັບຊ້ອນ ແລະ ເປີດກວ້າງ. ດ້ານເສດຖະ ກິດ ທັ່ງໃນພາກພື້ນນີ້ ແລະສ່ວນອື່ນໆຂອງໂລກ ລ້ວນຕ້ອງໄດ້ປັບຕົວໃຫ້ເຂົ້າກັບ ການທີ່ລາຄານ້ຳມັນ ພຸ່ງສູງຂົ້ນ ພໍປານຈະຫຼວດ ຍ້ອນການຕັດສິນໃຈຂອງກຸ່ມ ໂອເປັກ (OPEC) ລະຫວ່າງປີ 1973-1974, ເຫດການດັ່ງກ່າວ ທຳຮ້າຍປະເທດທີ່ທຸກຍາກ ຫຼາຍກວ່າປະເທດຕາເວັນຕົກທີ່ຮັ່ງມີ, ກ່ອນວິກິດການນັ້ນຈະຜ່ອນຄາຍ ໃນປີ 1986 (ການທີ່ ອິນໂດເນເຊ, ມາເລເຊ, ພະມ້າ ແລະ ບຣູນາຍ ສາມາດຜະລິດນ້ຳມັນ ໄດ້ ເຮັດໃຫ້ການແກ່ວ່ງຕົວຂອງລາຄານ້ຳມັນຢຸດລົງ). ການຂົ້ນແລະລົງ ຂອງນ້ຳມັນ ສະທ້ອນຄວາມຂາດສະເຖຍລະພາບ ຂອງລາຄາສິນຄ້າໃນທົ່ວໂລກ ແລະ ເສດຖະ ກິດພາກພື້ນນີ້ ທີ່ຍັງບອບບາງຕໍ່ການປ່ຽນແປງດັ່ງກ່າວ. ຄວາມໝັ້ນຄົງທາງດ້ານເສດ ຖະກິດຂອງພາກພື້ນແຮ່ງຫຼຸດລົງ ຍ້ອນລະບອບການປົກປ້ອງເສດຖະກິດພາຍໃນ ຂອງ

ບັນດາປະເທດອຸດສາຫະກຳ. ແຕ່ໃນຂະນະດຽວກັນ ໃນທົດສະວັດທີ 1970-1980 ຍີ່ປຸ່ນ ແລະ ສະຫະລັດ ໄດ້ມີການລົງທຶນຂະໜາດໃຫຍ່ ໃນບັນດາປະເທດສະມາຊິກ ASEAN, ເຮັດໃຫ້ເສດຖະກິດພາກພື້ນນີ້ ໄດ້ຮັບຜົນປະໂຫຍດຢ່າງຫຼວງຫຼາຍ ແລ້ວ ພາຍຸເສດຖະກິດ ໃນອາຊີຕາເວັນອອກສ່ຽງໃຕ້ ຈຶ່ງໝົດກຳລັງລົງ.

ຫຼາຍທົດສະວັດຫຼັງສົງຄາມໂລກຄັ້ງທີ II ສິ້ນສຸດ ບັນດາປະເທດພາກພື້ນອາຊີ ຕາເວັນອອກສ່ຽງໃຕ້ ບ່ອນທີ່ຫຼາຍຄົນໄດ້ເສຍສະຫຼະໃນການຕໍ່ສູ້ເພື່ອຄວາມເປັນເອກະ ລາດ ດ້ວຍຄວາມຫວັງທີ່ຈະມີຄວາມປອດໄພ ປາສະຈາກການຮຸກຮານຈາກພາຍນອກ ດັ່ງທີ່ເກີດຂຶ້ນໃນສະໄໝລ່າເມືອງຂຶ້ນ, ບັດນີ້ ເຂົາເຈົ້າພົບວ່າ ໂລກນັ້ນອັນຕະລາຍ ເຕັມ ໄປດ້ວຍສັດຕູ ຍິ່ງກວ່າເມື່ອຊຸມປີ 1940 ຫຼາຍເທົ່າ.

33

ຫວຽດນາມ

ການຍຶດຄອງຫວຽດນາມຂອງຍີ່ປຸ່ນ ລະຫວ່າງປີ 1941-1945 ໄດ້ສ້າງຈຸດຫັນປ່ຽນ ສູ່ການປະຕິວັດປົດປ່ອຍຊາດ ກະແສດຽວກັນນີ້ເອງ ເກີດຂຶ້ນທົ່ວທຸກປະເທດທີ່ຍີ່ປຸ່ນເຂົ້າຍຶດຄອງ. ນອກຈາກການທຳລາຍຊື່ສຽງແລະພະລັງອຳນາດຂອງກອງທັບຝຣັ່ງ ໃຫ້ປະຊາຊົນຫວຽດນາມໄດ້ເຫັນກັບຕາແລ້ວ ການເຂົ້າມາຂອງຍີ່ປຸ່ນ ຍັງໄດ້ສ້າງຄວາມຄຶດຊາດນິຍົມຂຶ້ນ ເຊິ່ງເປັນເຫດຜົນໃຫ້ແກ່ການເຄື່ອນໄຫວຕໍ່ຕ້ານ ທັງກະໂຕຝຣັ່ງແລະຍີ່ປຸ່ນ ໃນຍາມຕໍ່ມາ.

ຫຼັງຈາກໄປຢ້ຽມຢາມສະຫະພາບໂຊວຽດ ໂຮຈິມິນ ກັບຄືນຫວຽດນາມໃນເດືອນກຸມພາ 1941 ລະຫວ່າງທາງ ເພິ່ນໄດ້ຢ້ຽມຢາມທີ່ໝັ້ນທາງການທະຫານ ຂອງຈີນ ທີ່ຢູນນານ ເພິ່ນເລີ່ມສ້າງຕັ້ງສຳນັກງານຂຶ້ນທີ່ ປັກບ່ ແຂວງຊາວບັງ ທາງພາກເໜືອຫວຽດນາມໃກ້ຊາຍແດນ ຈີນ. ກອງປະຊຸມຄະນະກຳມະການສູນກາງພັກກອມມູນິດ ຈັດຂຶ້ນໃນເດືອນພຶດສະພາ 1941 ໄດ້ຮັບຮອງການສ້າງຕັ້ງ ແນວຮ່ວມ ອ້າຍນ້ອງຫວຽດນາມເອກະລາດ ໂດຍເປັນທີ່ຮູ້ຈັກທົ່ວໄປໃນຊື່ ຫວຽດມິນ. ພັກກອມມູນິດອິນດູຈີນເວລານັ້ນມີສະມາຊິກ ພຽງແຕ່ 20,000 ຄົນ ເພາະເຖິງວ່າ ປະຊາຊົນຈະບໍ່ມັກລະບອບລ່າເມືອງຂຶ້ນ ແຕ່ເຂົາເຈົ້າກໍຍັງບໍ່ທັນມີຄວາມນັບຖືຕໍ່ລັດທິ ມາກ-ເລນິນເທື່ອ. ການສະໜັບສະໜູນຈາກຕ່າງປະເທດ ກໍຍັງບໍ່ມີ ແມ່ນແຕ່ປະເທດທີ່ ຢາກຂັບໄລ່ຍີ່ປຸ່ນອອກໄປ ເຊັ່ນ ອັງກິດ, ສະຫະລັດອາເມລິກາ ຫຼື ລັດຖະບານຕໍ່ຕ້ານກອມມູນິດຂອງຈີນ ນຳໂດຍ ຈຽງ ໄຄ ເຊັກ ໃນເວລານັ້ນ ກໍບໍ່ໄດ້ສະໜັບສະໜູນຫຍັງ. ໂຮ ຈິ ມິນ ເຂົ້າໃຈວ່າ ຫວຽດນາມປະເທດດຽວ ແມ່ນໜ້ອຍເກີນໄປທີ່ຈະສາມາດປົດປ່ອຍ

ຕົນເອງ ແຕ່ເພິ່ນກໍເຊື່ອວ່າ ການຮ່ວມມືກັບລັດຖະບານ ແລະ ພັກການເມືອງຂອງ ຕ່າງປະເທດ ຈະເຮັດໃຫ້ມີກຳລັງພຽງພໍ ທີ່ຈະພາຫວຽດນາມກ້າວສູ່ຄວາມເປັນເອກະ ລາດໄດ້. ຫວຽດມິນ ອີງການຈັດຕັ້ງແນວໜ້າຂອງ ພັກກອມູນິດນິດອິນໂດຈີນ ເຮັດວຽກ ສ້າງຄວາມສາມັກຄີ ແລະຄວາມຮັກຊາດ ລະຫວ່າງຊັ້ນຄົນຕ່າງໆ ໃນສັງຄົມ.

ຫວຽດມິນຕ້ອງໄດ້ສູ້ຢັນ ກັບກອງກຳລັງພາຍໃນປະເທດ ພາຍໃຕ້ການນຳຂອງ ມາຊານ ເປແຕັງ (Marshal Petain) ຜູ້ນຳກອງທະຫານຝຣັ່ງເວລານັ້ນ ໄດ້ຽກ ຮ້ອງເຖິງຊາວຝຣັ່ງ ດ້ວຍຄຳຂວັນ ກູ້ຊາດ ໂດຍຍຶດຄວາມຮັກຊາດ, ຄວາມເປັນຄອບ ຄົວ ເປັນພື້ນຖານ ແລະຕ້ານແນວຄຶດເຫັນແກ່ໂຕ. ເມື່ອປະຊາຊົນປະເທດເມືອງຂຶ້ນ ໄດ້ຍິນຄຳຂວັນນີ້ ຜັດແຮ່ງເກີດມີກະແສຕ້ານລະບອບລ່າເມືອງຂຶ້ນ ຕື່ມອີກ. ປັນຍາຊົນ ຫວຽດນາມເລີ່ມສຶກສາສັງຄົມ ແລະ ອະດີດຂອງຕົນຫຼາຍຂຶ້ນ. ໜັງສືພິມ (Clear-Counsel, Thanh-nghi) ເລີ່ມຕີພິມໃນ ເດືອນມິຖຸນາ 1941 ດ້ວຍພາສາເອກະລາດ ຂອງຫວຽດນາມ (ພາສາຫວຽດນາມປັດຈຸບັນ) ມີຫົວຂໍ້ການສົນທະນາຫຼາຍໆຫົວຂໍ້ ເຊັ່ນ ການຟື້ນຟູການກະສິກຳຂອງຫວຽດນາມ. ໜັງສືພິມ ເປັນທີ່ນິຍົມຮອດໃນກຸ່ມຄົນ ຝຣັ່ງທີ່ມີການສຶກສາ ແລະບໍ່ໄດ້ເຮັດວຽກໃຫ້ລັດຖະບານເມືອງຂຶ້ນ. ສຳນັກພິມ ຮັນເຢີນ (Han Thuyen) ໃນປີ 1941 ບ່ອນກຳເນີດສະມາຄົມນັກຄຶດ ນັກຂຽນ ເຊິ່ງເປັນ ສະມາຊິກຫວຽດມິນຫຼາຍຄົນ ຖືກໂຈມຕີວ່າເປັນລັດທິ ໂຕຣສະກີ (Trotsgyists) ມີການຊຳລະຄືນປະຫວັດສາດຫວຽດນາມຢ່າງກວ້າງຂວາງ ໂດຍສະເພາະ ເລື່ອງທີ່ ກ່ຽວກັບ ເຈົ້າຊີວິດ ກວາ ຕຸງ (1788) ຜູ້ທີ່ ບັດນີ້ ໄດ້ເປັນຕົວແທນ ຂອງຊົນຊັ້ນ ຜູ້ອອກແຮງງານ ທີ່ຖືກສັກດິນາກິດຂີ. ນັກຂຽນຮຸ່ນໃໝ່ ໄດ້ສ້າງສັນວັນນະກຳ ທີ່ສ່ອງ ແສງເຖິງຄວາມທຸກທໍລະມານ ຂອງຊົນຊັ້ນຜູ້ອອກແຮງງານ ເຊັ່ນເລື່ອງ “ທຸລະຂອງຄຸ້ມ ບ້ານ” ຂອງນັກປະພັນ ໂຫ ຖັດ ໂຕ (Ngo Tat To, Viec lang, 1940). ພາຍ ໃຕ້ສະຖານະການທີ່ເຄັ່ງຮ້ອນ ຫວຽດມິນ ຕ້ອງໄດ້ສູ້ຢັນກັບຫຼາຍສະພາບການ ທັງສິ່ງ ຕິກຄ້າງຈາກພັກຊາດນິຍົມຫວຽດນາມ,ສູ້ຢັນກັບລັດທິຄວາມເຊື່ອທີ່ຊິງອິດທິພົນຢູ່ທາງ ພາກໃຕ້ ແລະ ລັດທິມະຫາອາຊີບິວລະພາຂອງຍີ່ປຸ່ນ. ແຕ່ນະໂຍບາຍທາງການເມືອງ ຂອງຫວຽດມິນ ກໍເບິ່ງໄວ້ໄກກວ່າຄວາມເປັນເອກະລາດ ເພື່ອຈະກ້າວໄປສູ່ການເປັນ

ສາທາລະນະລັດ ປະຊາທິປະໄຕ (ລັດສັງຄົມນິຍົມເອກະລາດທຳອິດ ໃນຂະບວນການ ປະຕິວັດ ສັງຄົມນິຍົມ)

ຮອດເດືອນ ມັງກອນ 1945 ກຳລັງທະຫານຍີ່ປຸ່ນໃນອິນໂດຈີນ ຍັງຢູ່ປະມານ 35,000 ຄົນ ພວກເຂົາປະຈຳການ ເພື່ອສ້າງຕັ້ງລັດຖະບານເມືອງຂຶ້ນ ແລະກຳຈັດ ອຳນາດການປົກຄອງຂອງຝຣັ່ງ. ການຫຼົ້ມສະຫຼາຍຂອງອຳນາດການປົກຄອງຝຣັ່ງ ໃນ ອິນໂດຈີນ ປີ 1944 ແລະການບຸກເຂົ້າຟີລິບປິນ ຂອງສະຫະລັດອາເມລິກາ ເຮັດໃຫ້ ຍີ່ປຸ່ນຕ້ອງປັບຍຸດທະສາດໃໝ່. ຕົ້ນປີ 1945 ຍີ່ປຸ່ນ ເພີ່ມກຳລັງທະຫານ ໃນອິນໂດຈີນຂຶ້ນ ແລະໃຫ້ອຳນາດສັ່ງການສູງສຸດ ແກ່ແມ່ທັບ. ວັນທີ 9 ມີນາ 1945 ຍີ່ປຸ່ນສາມາດຍຶດ ຄອງເມືອງຂຶ້ນຂອງຝຣັ່ງໄດ້ຢ່າງສົມບູນ ພວກເຂົາສາມາດກຳຈັດທະຫານ ຮວມທັງ ໂຄງສ້າງການປົກຄອງທີ່ເປັນຂອງຝຣັ່ງທັງໝົດໃນອິນໂດຈີນ ໃນເວລາພຽງ 24 ຊົ່ວ ໂມງ. ທູດຍີ່ປຸ່ນໃນຫວຽດນາມ ພາຍຫຼັງຍຶດອຳນາດໄດ້ແລ້ວ ເລົ່າວ່າ ຄົນຝຣັ່ງໃນ ຫວຽດນາມ ເປັນຄືນົກຖືກຍິງ ແລ້ວຕົກລົງໃສ່ກະໂຕມືຂອງນາຍພານ ແລະ ສຳລັບ ທະຫານຍີ່ປຸ່ນແລ້ວ ການໂຈມຕີຄົນທີ່ອ່ອນແອ ແລະບໍ່ມີທາງສູ້ ຖືເປັນຄວາມອັບອາຍ ຍິ່ງ. ເຈົ້າຊີວິດ ບ້າວ ດ໋າຍ (Bao Dai) ໄດ້ເຊັນ ພະລາຊະໂອງການ ທີ່ຮ່າງຂຶ້ນໃຕ້ການ ແນະນຳຂອງຍີ່ປຸ່ນ ຮັບຮອງເອົາ ສິດທິຄວາມເປັນເອກະລາດຂອງຊາດຫວຽດນາມ ແຕ່ ກໍໃຫ້ຍອມຮັບວ່າ ຫວຽດນາມກໍເປັນສ່ວນໜຶ່ງຂອງ ມະຫາອາຊີບູລະພາ ຂອງຍີ່ປຸ່ນ.

ແຕ່ຫວຽດມິນໄດ້ຮັບປະໂຫຍດຫຼາຍຈາກການກວາດລ້າງຝຣັ່ງຂອງຍີ່ປຸ່ນຄັ້ງນີ້ ຜູ້ນຳຫວຽດມິນໄດ້ວາງແຜນການລຸກຮືຂຶ້ນທົ່ວອິນໂດຈີນ ໂດຍຖືເອົາໂອກາດທີ່ ເຈົ້າອາ ນານິຄົມ ຄື ຝຣັ່ງແລະຍີ່ປຸ່ນ ພວມເກີດຂໍ້ຂັດແຍ່ງກັນ. "ກອງທັບປົດປ່ອຍ" ຖືກສ້າງ ຕັ້ງຂຶ້ນໃນເດືອນທັນວາ 1944 ທີ່ເຂດ ກາວ ບັ໋ງ (Cao Bang). ໃນມື້ສ້າງຕັ້ງນັ້ນ ກອງ ທັບປົດປ່ອຍມີກຳລັງພຽງ 34 ຄົນ ໂດຍມີ ຫວໍ ຫງວຽນ ຢຽບ (Vo Nguyen Giap) ອະດີດອາຈານສອນຈາກຮ່າໂນ້ຍ ເປັນຜູ້ບັນຊາການ. ລະດູບານໃໝ່ປີ 1945 ກອງ ກຳລັງຫວຽດມິນ ທີ່ພວມເຕີບໃຫຍ່ ໄດ້ສ້າງເຂດປົດປ່ອຍຂຶ້ນຕາມເຂດພູສູງ ຊາຍແດນ ທາງພາກເໜືອ ແລະ ສາມຫຼ່ຽມລ່ອງແມ່ນ້ຳແດງ. ເຈົ້າໜ້າທີ່ຝ່າຍຍຸດທະສາດຂອງ

ສະຫະລັດອາເມລິກາທີ່ປະຈຳໃນຈີນ ຕ້ອງການຄວາມຊ່ອຍເຫຼືອຈາກໂຮຈິມິນ ເພື່ອ ໃຫ້ຊ່ອຍຊີວິດນັກບິນທີ່ຍິນຖືກຍິງຕົກ ຢູ່ເຂດພາກເໜືອຫວຽດນາມ ສະຫະລັດຈຶ່ງໃຫ້ ຄວາມຊ່ອຍເຫຼືອທາງດ້ານເຕັກນິກ ແກ່ຫວຽດມິນ. ຈົດໝາຍຈາກ ໂຮ ຈິ ມິນ ຂຽນ ເຖິງເຈົ້າໜ້າທີ່ສະຫະລັດ ລົງວັນທີ 9 ພຶດສະພາ 1945 ມີເນື້ອຄວາມບາງຕອນວ່າ "ຂ້າພະເຈົ້າປິຕິຕ່ການຊ່ອຍເຫຼືອຂອງທ່ານ ຫວັງວ່າ ຄົນຂອງພວກເຮົາຈະໄດ້ຮຽນຮູ້ ກ່ຽວກັບວິທະຍຸແລະວິຊາການອື່ນໆ ທີ່ຈຳເປັນ ສຳລັບການຮ່ວມມືຂອງພວກເຮົາ ເພື່ອ ຕ່ສູ້ກັບຍີ່ປຸ່ນ... ດ້ວຍຄວາມຮັກແພງ ໂຮ່"

ນອກຈາກໄຊຊະນະ ຕ່ຍີ່ປຸ່ນຢ່າງຕ່ເນື່ອງ ຂອງສະຫະລັດແລ້ວ ຂະບວນການ ກອມມູນິດ ຂອງຫວຽດນາມ ຍັງມີທ່າໄດ້ປຽບ ເມື່ອເກີດວິກິດການຂາດແຄນອາຫານ ໃນທ້າຍປີ 1944. ຊາວຫວຽດນາມນັບແສນ ພາກັນອຶດເຂົ້າ ແມ່ນ້ຳຕ່ງແກ່ງເຕັມໄປ ດ້ວຍຊາກສົບ, ຜູ້ທີ່ຍັງມີຊີວິດ ກ່ຢູ່ລອດໂດຍການກິນຮາກໄມ້. ກອງທັບຂອງ ງ່ງ ບຸກ ເຂົ້າບ້ານທາງພາກເໜືອ ຍຶດສາງເຂົ້າຂອງບັນດາເຈົ້າທີ່ດິນ ແລະຂອງກອງທັບຍີ່ປຸ່ນ ແລ້ວແຈກຢາຍໃຫ້ປະຊາຊົນຜູ້ອຶດຫິວ ຫວຽດມິນຍົກຄ່ຂວັນ "ເພື່ອເອກະລາດຂອງ ຊາດ" ແລະ "ບຸກຕິເຈົ້າທີ່ດິນແລະຄວາມອຶດຢາກ" ເຊ່ິງຄືວ່າຈະມີແຮງບັນດານໃຈຈາກ ຄ່ຂວັນ ປີ 1917 "ສັນຕິພາບ, ເຂົ້າຈີ່ ແລະ ທີ່ດິນ" ຂອງພັກ ໂບນເຊວິກ ໂຊວຽດ. ໄພອຶດຢາກຄັ້ງນັ້ນເຮັດໃຫ້ບັນດາບ້ານ ທີ່ເຄີຍຕ່ຕ້ານ ທັນມາສະໜັບສະໜູນ ຫວຽດ ມິນ. ເຈົ້ານາຍຂອງບ້ານຕ່າງໆ ຖືກເຊີນໄປສຶກສາອົບຮົມ ເພື່ອໃຫ້ປ່ຽນແທນອ່ານາດ ອາດຍາສິດ ດ້ວຍ ຄະນະກ່ມະການປະຊາຊົນ.

ເມື່ອຍີ່ປຸ່ນຍອມຈ່ານົນຕ່ກຸ່ມສ່ພັນທະມິດ ໃນເດືອນ ສິງຫາ ປີ 1945, ຫວຽດມິນ ໄດ້ຍຶດຄອງຫຼາຍເມືອງ ດ້ວຍວິທີການເດີນຂະບວນຂອງປະຊາຊົນ. ຂະ ບວນການກອມມູນິດ ຕ້ອງການຄວບຄຸມຫວຽດນາມ ໃຫ້ໄດ້ພື້ນທີ່ກ້ວ້າງທີ່ສຸດ ເທ່ົາທີ່ຈະ ເຮັດໄດ້ ກ່ອນຝຣ່ັ່ງຈະກັບຄືນມາ ເພື່ອຍຶດຄອງອີກຄັ້ງນຶ່ງ ລັດຖະບານຂອງ ບ້າວ ດ່ໍາຍ ໃນນະຄອນເຫວ້ ເປັນລັດຖະບານທີ່ສະໜັບສະໜູນໂດຍກຸ່ມຄົນ ແລະ ປັນຍາຊົນ ໃນເມືອງໃຫຍ່ ແຕ່ຜັດບ່ມີກອງກ່ລັງປະກອບອາວຸດ. ປີ 1945 ບ້າວ ດ່ໍາຍ ໄດ້

ຊຸມໃນຈິດໝາຍວ່າ “ລາວຮູ້ສຶກ ຄືກັນກັບ ຖືກກັກຂັງຢູ່ໃນເມືອງຫຼວງທີ່ຕາຍແລ້ວ”. ເມື່ອເຖິງເວລາ ບ້າວ ດ່າຍ ຈຶ່ງສະຫຼະລາຊະອຳນາດ ໂດຍໄດ້ມອບການລາຊະວົງໃຫ້ກັບ ຜູ້ຕາງໜ້າຂອງ ໂຮ່ ຈິ ມິນ ໃນພິທີທີ່ເປັນທາງການ (Remarkable Public Ceremony). ດ້ວຍເງື່ອນໄຂທີ່ຈັກກະພັດ ກ້າວລົງຈາກພະລາຊະອຳນາດ ດ້ວຍຄວາມຍິນຍອມ ໂຮ່ ຈິ ມິນ ຈຶ່ງສາມາດປະກາດສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມຂຶ້ນ ທີ່ຮ່າໂນ້ຍ ໃນວັນທີ 2 ກັນຍາ 1945 ໂດຍເພີ່ນດຳລົງຕຳແໜ່ງ ປະທານປະເທດ. ໃນຄຳປະກາດ ໂຮ່ຈິມິນ ໄດ້ອ້າງອີງເຖິງຄຳປະກາດ ເອກະລາດຂອງ ສະຫະລັດອາເມລິກາ ແລະ ຄຳປະກາດວ່າດ້ວຍ ສິດທິມະນຸດ ໃນການປະຕິວັດຝຣັ່ງ ເມື່ອປີ 1791. ຄຳປະກາດດັ່ງກ່າວ ສະແດງເຖິງຄວາມເຊື່ອຂອງໂຮ່ຈິມິນ ທີ່ວ່າ ການ ປະຕິວັດຫວຽດນາມ ອາດຖືກທຳລາຍລົງຈາກກຸ່ມຄົນທີ່ຫຼາກຫຼາຍ ທັງພາຍໃນຫວຽດ ນາມແລະຕ່າງປະເທດ. ເຫດການໃນປີ 1945 ໄດ້ສ້າງກະແສຟອງຄວາມຮັກຊາດອັນ ຟົດຟື້ນ ແຕ່ກໍເປັນທີ່ຈັບຕາຂອງລັດຖະບານຈີນ ຈຽງໄຄເຊັກ ທີ່ອາດຈະໂຈມຕີຫວຽດ ນາມ ຖ້າເຫັນວ່າ ລັດຖະບານຂອງໂຮ່ ອາດຈະສ້າງບັນຫາ. ໂຮ່ຈິມິນແລະຫວຽດມິນ ຍົກສູງ “ການປະຕິວັດເດືອນ ສິງຫາ” ເຊິ່ງຖືວ່າເປັນຕົວແທນຂອງ “ຄວາມປິຕິຊົມຊື່ນ” ຂອງທະຫານ, ປະຊາຊົນ ແລະຊາວຜູ້ອອກແຮງງານ ໃນຮ່າໂນ້ຍ (ເຊັ່ນດຽວກັບທີ່ ຜູ້ສັງເກດການທາງການທະຫານສະຫະລັດ ໃນຮ່າໂນ້ຍ ໄດ້ບັນຍາຍໄວ້) ລະບົບພາສີ ແບບເມືອງຂຶ້ນຖືກຍົກເລີກ ການສຶກສາເພື່ອມວນຊົນຖືກຍົກຂຶ້ນ, ແຕ່ດ້ານມືດຂອງ ການປະຕິວັດ ກໍແມ່ນ ການທີ່ນັກການເມືອງແລະປັນຍາຊົນ ຈຳນວນຫຼາຍ ຖືກລອບ ສັງຫານ.

ທັກສະທາງການເມືອງຂອງໂຮ່ຈິມິນ ຖືກທົດສອບຄັ້ງສຳຄັນ ໃນປີ 1946. ລະ ດູໃບໄມ້ຫຼົ່ນ ປີ 1945 ກອງທັບຈີນຂະໜາດ 180,000 ຄົນ ບຸກເຂົ້າມາທາງພາກ ເໜືອຫວຽດນາມ ໂດຍອ້າງວ່າຫວຽດນາມ ກໍແມ່ນເມືອງຂຶ້ນໜຶ່ງຂອງຈີນ. ທີ່ຕິດຕາມ ມາກັບກອງທັບ ແມ່ນມວນຊົນ ເຊິ່ງມີໜ້າທີ່ພຽງເຝົ້າຍາມ ພ້ອມລູກເມຽ ແລະທະນາ ບັດ (ເງິນ) ຈີນສະໄໝສົງຄາມ ເຊິ່ງບັດນີ້ ບໍ່ມີຄ່າຫຍັງ. ອີກຂໍ້ອ້າງໜຶ່ງຂອງຈີນແມ່ນ ໃນຖານະໜຶ່ງໃນກຸ່ມພັນທະມິດ ຊາວຈີນຜູ້ຮັກຊາດ ກໍຄວນໄດ້ຮັບການແບ່ງປັນຜົນ

ປະໂຫຍດ ເມື່ອຍີ່ປຸ່ນຍອມຈຳນົນແລ້ວ, ແຕ່ເຫດຜົນທີ່ແຝງໄວ້ ແມ່ນ ຈຸງ ໄຄ ເຊັກ ຢາກຈະປ່ຽນແທນລັດຖະບານຂອງ ໂຮ່ ຈິ ມິນ ດ້ວຍ ລັດຖະບານອື່ນທີ່ຈຸງຢາກໃຫ້ເປັນ. ແທນທີ່ຈະ ໂຈມຕີ ກອງທັບຈີນ, ໂຮ່ ຈິ ມິນ ຜັດໃຫ້ການຕ້ອນຮັບກອງທັບດັ່ງກ່າວ ໃນ ຖານະສະຫາຍ.

ເພື່ອຮຽກຮ້ອງ ການສະໜັບສະໜູນ ແລະຍັງລ້າງຄວາມສັບສົນໃຫ້ຈີນ ໂຮ ຈິ ມິນ ປະກາດຍຸບເລີກ ພັກກອມມູນິດອິນໂດຈີນ ໃນເດືອນພະຈິກ 1945 ຢ່າງ ເປັນລາຍລັກອັກສອນ, ການຍຸບເລີກພັກກອມມູນິດ ເພື່ອສ້າງຕັ້ງ "ລັດຖະບານ ເອກະພາບແຫ່ງຊາດ" ຂຶ້ນ ເຮັດໃຫ້ຊາວຫວຽດນາມທີ່ບໍ່ແມ່ນກອມມູນິດ ຮູ້ສຶກວ່າ ປະເທດນີ້ກໍແມ່ນ ບ້ານຂອງເຂົາເຈົ້າເຊັ່ນກັນ. ພັກກອມມູນິດເຄື່ອນໄຫວຢ່າງປິດລັບ ກ່ອນຈະກັບຄືນມາ ສູ່ເວທີການເມືອງອີກຄັ້ງ ໃນປີ 1951.

ໂຮ ຈິ ມິນ ຍັງກ້າຮອດ ເຊີນໃຫ້ກອງທັບຝຣັ່ງເຂົ້າມາພາກເໜືອຫວຽດນາມ, ເຮັດໃຫ້ກອງທັບຂອງຈີນຖືກຖ່ວງດູນ (ຕອນນັ້ນ ກອງທັບຝຣັ່ງໄດ້ເຂົ້າມາຮອດ ພາກໃຕ້ ຫວຽດນາມແລ້ວ ໂດຍການຊ່ວຍເຫຼືອຂອງອັງກິດ) ໃນສົນທິສັນຍາເດືອນມີນາ 1946 ຝຣັ່ງຮັບຮູ້ສາທາລະນະລັດປະຊາທິປະໄຕຫວຽດນາມ ໃນຖານະລັດເອກະລາດ ແລະ ຮັບຮູ້ການລ່າຖອຍຂອງກອງທັບຈີນ. ເພື່ອຕອບແທນ ລັດຖະບານໂຮ່ ຈິ ມິນ ກໍຍອມຮັບ ການເຂົ້າເປັນສະມາຊິກເຄືອສະຫະພາບຝຣັ່ງ (French Union), ຮູບແບບໃໝ່ທີ່ບໍ່ຈະ ແຈ້ງປານໃດຂອງ ເຄືອຈັກກະພັດຝຣັ່ງ, ແລະອະນຸຍາດໃຫ້ກອງທັບຝຣັ່ງ ຄວບຄຸມ ພາກເໜືອຫວຽດນາມເປັນເວລາ 5 ປີ. ໂຄສົກຂອງຫວຽດມິນຕີລາຄາວ່າ ສັນຍາລະ ຫວ່າງ ຫວຽດນາມແລະຝຣັ່ງ ໃນປີ 1946 ນີ້ ຄືກັນກັບສັນຍາລະຫວ່າງ ລັດເຊຍ ແລະ ເຢຍລະມັນ ເມື່ອປີ 1918 (Litovsk of 1918). ແຕ່ຝ່າຍຝຣັ່ງ ມີຄວາມ ຝັນວ່າ ຈະໃຊ້ໂກແຊ້ງຊິນ (Cochinchina ຫຼືກໍຄື ພາກໃຕ້ຫວຽດນາມ) ເພື່ອສ້າງ ສະຫະພັນອິນໂດຈີນ ເຊິ່ງຈະເຮັດໃຫ້ຝຣັ່ງສາມາດຄົງອຳນາດໄວ້ໃນອາຊີຕາເວັນອອກ ສຽງໃຕ້ໄດ້. ລະດູຮ້ອນ ປີ 1946 ໂຮ່ ຈິ ມິນ ເລີ່ມຕົ້ນຄວາມພະຍາຍາມ ທີ່ຈະໃຫ້ຝຣັ່ງ ຍອມມອບເອກະລາດ ແກ່ຫວຽດນາມຢ່າງສັນຕິ, ເພິ່ນໄດ້ໄປຢ້ຽມຢາມປະເທດຝຣັ່ງ

ຢ່າງເປັນທາງການ ໃນຖານະ ປະທານປະເທດ ຂອງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ພະຍາຍາມຊີ້ແຈງຢ່າງອິດທິນວ່າ ໂກແຊງຊິນ ແມ່ນສ່ວນໜຶ່ງຂອງຫວຽດ ນາມ ເຊັ່ນທີ່ ເບີຣຕາຍ (Brittany) ກໍແມ່ນສ່ວນໜຶ່ງຂອງປະເທດຝຣັ່ງ ນັ້ນເອງ. ການມອບເອກະລາດໃຫ້ຫວຽດນາມ ຈະເປັນການຕັດສິນໃຈອັນມີກຽດຍິ່ງ ຂອງຝຣັ່ງ. ຄວາມພະຍາຍາມຂອງເພິ່ນ ບໍ່ປະສົບຜົນສຳເລັດ ສົງຄາມລະຫວ່າງຝຣັ່ງແລະຫວຽດ ມິນ ເກີດຂຶ້ນທ້າຍປີ 1946 ແລະດຳເນີນໄປຮອດທ້າຍປີ 1954.

ລັດຖະບານຫົວເມືອງຂຶ້ນຂອງຝຣັ່ງ ກໍເລີຍຫຼິ້ມຈິມລົງໃນສົງຄາມຕໍ່ສູ້ກູ້ຊາດ ເຊິ່ງຝຣັ່ງເອງກໍບໍ່ເຄີຍເຂົ້າໃຈແຕ່ຢ່າງໃດ. ບົດນິພົນຕ່າງໆຂອງ ຫວໍ ຫງວຽນ ຢຸບ ມີ ການອະທິບາຍໄວ້ຢ່າງຫຼັກແຫຼມ ເຖິງແນວຄຶດດ້ານການທະຫານ ຂອງຝ່າຍກອມມູນິດ ຫວຽດນາມ ແນວຄຶດດັ່ງກ່າວໄດ້ວາງຫຼັກການ ໃນການໃຫ້ຄວາມສຳຄັນແກ່ການໂຈມ ຕີ ສ່ວງເຄື່ອງອຸປະໂພກຢ່າງຕໍ່ເນື່ອງ (ການໂຈມຕີດັ່ງກ່າວ ເຮັດໃຫ້ເກີດການຮັບຮູ້ ຂອງມວນຊົນຢ່າງເລິກເຊິ່ງ ຂະນະທີ່ການໂຈມຕີທີ່ຕັ້ງທາງທະຫານ ບໍ່ສາມາດເຮັດ ໄດ້) ການນຳໃຊ້ຊັບພະຍາກອນຂະໜາດນ້ອຍ, ການບໍລິຫານຈັດການທີ່ຖືກຕ້ອງ ສາ ມາດເອົາຊະນະກອງກຳລັງຂະໜາດໃຫຍ່ໄດ້; ການໂຈມຕີແບບກອງຫຼອນ, ການໝູນ ໃຊ້ກອງທະຫານຫຼາຍປະເພດ ຢ່າງບໍ່ຕາຍໂຕ, ຄື ຕັ້ງແຕ່ກອງທະຫານຫຼວງປະກອບ ອາວຸດທັນສະໄໝ ຮອດກອງກຳລັງທ້ອງຖິ່ນ ທີ່ອາດຈະມີພຽງແຕ່ ຈີກກັບສຽມເປັນ ອາວຸດ; ແລະສຳຄັນເໜືອສິ່ງອື່ນໃດ ໃນຂະບວນການຕໍ່ສູ້ຕ້ານສັດຕູ ແມ່ນກຳລັງມະຫາ ຊົນ ທັງຜູ້ໜຸ່ມ, ຜູ້ເຖົ້າ, ຍິງແລະຊາຍ,. ເພື່ອໃຫ້ໄດ້ມາເຊິ່ງການສະໜັບສະໜູນຂອງມະ ຫາຊົນ, ຫວຽດມິນ ສ້າງຂະບວນການລຶບລ້າງການກີກໜັງສືຂຶ້ນ. ຂະບວນການສອນ ໃຫ້ ອ່ານອອກ-ຂຽນເປັນ ຂະຫຍາຍແຕ່ເຂດທີ່ງພຽງຮອດພູດອຍ ແລະລົງເລິກ ແຕ່ ພະສົງ, ຊາວປະມົງ, ຊົນເຜົ່າສ່ວນໜ້ອຍ ຮອດໂສເພນີ. ການສຶກສານັ້ນ ແມ່ນເປັນ ທັງການໃຫ້ຂໍ້ມູນ ແລະການສຶກສາອົບຮົບແນວຄຶດໄປພ້ອມໆກັນ. ຫວຽດມິນ ມີຫ້ອງ ສະໝຸດຊຸມຊົນ ເຊິ່ງໃຫ້ການສຶກສາອົບຮົມປະຊາຊົນຫຼາຍໆດ້ານ ເຊັ່ນ ຄວາມໂຫດ ຮ້າຍຂອງລະບອບຜະເດັດການ, ຄວາມສຳຄັນແລະຈຳເປັນ ທີ່ຈະຕ້ອງມີສະພາແຫ່ງ ຊາດ, ທາງລົດໄຟ ແລະ ຄວາມເຊື່ອຖືທີ່ງົມງວາຍ ອັນໄຮ້ປະໂຫຍດ. ບໍ່ດົນ ຝຣັ່ງ

ກໍພົບວ່າ ໂຕເອງພວມຕົກຢູ່ໃນສົງຄາມກອງຫຼອນ ທີ່ບໍ່ເຄີຍພົບພໍ້ມາກ່ອນ ສົງຄາມທີ່ເດັກນ້ອຍຕາມບ້ານ ຜູ້ໃດກໍໄດ້ ອາດຈະເປັນສາຍລັບ ແລະ ແມ່ເຖົ້າທີ່ແຂ້ວຫຼ່ອນໝົດປາກແລ້ວ ອາດຈະແມ່ນນັກວາງລະເບີດມືສົງຫານ.

ປີ 1949 ລັດທິກອມມູນິດ ພາຍໃຕ້ການນຳຂອງ ເໝົາ ເຈ ຕຸງ ເອົາຊະນະ ລັດຖະບານ ຂອງ ຈຽງ ໄຄ ເຊັກ ແລະຂຶ້ນເປັນຜູ້ກຳອຳນາດ ຂອງປະເທດຈີນ ເຮັດໃຫ້ ຫວຽດມິນ ໄດ້ທ່າແຮງ ມີມິດທີ່ກ້າວໜ້າ. ໃນປີ 1953 ຝ່າຍຝຣັ່ງທີ່ພວມເສຍຂວັນ ແຮງ ໄດ້ພະຍາຍາມຫຼອກລໍ້ໃຫ້ ຫວຽດມິນ ເຂົ້າສູ່ສົງຄາມແບບປະຈັນບານ ເຊິ່ງເປັນ ວິທີທີ່ຊາດຕາເວັກຕົກລົ້ງເຄີຍ ແລະຈະເຮັດໃຫ້ ຝຣັ່ງສາມາດໃຊ້ອາວຸດ ແລະກຳລັງ ທາງອາກາດທີ່ມີຢູ່ຢ່າງໄດ້ປຽບ. ທີ່ ດຽນ ບຽນ ຟູ ເຂດລະຫວ່າງພູທາງພາກເໜືອ ຊາຍແດນຫວຽດນາມ-ລາວ ກອງທັບປະຊາຊົນຂອງ ຢຽບ ຈັດໃຫ້ກຳມະກອນລຳລຽງ ອາວຸດໜັກຈົນຮອດເຂົ້າ ໂດຍໃຊ້ກວຽນແລະລົດຖີບ ແລະສາມາດປິດລ້ອມປ້ອມຂອງ ທະຫານຝຣັ່ງ ຈົນຝຣັ່ງຕ້ອງຍອມຈຳນົນ ໃນລະດູບານໃໝ່ 1954. ດຽນ ບຽນ ຟູ ແມ່ນ ການປະລາໄຊ ທີ່ຂີ້ຮ້າຍສຸດ ເທົ່າທີ່ເຄີຍມີມາໃນປະຫວັດສາດຂອງຊາດເມືອງຂຶ້ນ ເຈ້າ ອານານິຄົມຕາເວັນຕົກ. ກອງປະຊຸມເພື່ອສັນຕິພາບສາກົນ ຢູ່ ເຊີແນວ ຖືກຈັດຂຶ້ນ ທັນ ທີ ຫຼັງບັ້ນຮົບ ດຽນ ບຽນ ຟູ, ລັດຖະບານ ກອມມູນິດຫວຽດນາມ ຈຳຕ້ອງຍອມຮັບ ໄຊຊະນະ ເຊິ່ງໜ້ອຍກວ່າທີ່ເຂົາເຈ້າຄວນຈະໄດ້ ຍ້ອນການກົດດັນຂອງພັນທະມິດ ຄື ສະຫະພາບໂຊວຽດແລະຈີນ. ສັນຍາເຊີແນວ ປີ 1954 ບັງຄັບໃຫ້ ຝຣັ່ງ ຕ້ອງຖອນ ກຳລັງທັງໝົດອອກຈາກອິນໂດຈີນ. ແຕ່ໃນສັນຍາ ຍັງລະບຸໃຫ້ຫວຽດນາມແບ່ງເປັນ 2 ພາກສ່ວນ ຢູ່ເສັ້ນຂະໜານທີ 17, ລັດຖະບານ ກອມມູນິດ ຫວຽດນາມ ຢູ່ຮ່າໂນ ຍ ຕ້ອງໄດ້ເຂົ້າຮ່ວມກັບລັດຖະບານ ທີ່ຕໍ່ຕ້ານກອມມູນິດຢູ່ ໄຊ່ງ ອນ ພາຍໃນເວລາ 2 ປີ. ຂະນະດຽວກັນ ສັນຍາເຊີແນວ ກໍຍອມຮັບຂໍ້ສະເໜີຂອງຈີນ ໃຫ້ຫຼຸດກຳລັງທະຫານ ສະຫະລັດໃນອິນໂດຈີນ ແລະຮັບວິທີການ ຂອງສະຫະພາບໂຊວຽດ ເພື່ອໃຫ້ຂະບວນ ການ ປະຕິວັດຊາດໃນອິນໂດຈີນ ເປັນໄປຢ່າງສັນຕິ, ມີການຄາດການເຖິງການເລືອກ ຕັ້ງ ເພື່ອສ້າງຄວາມເປັນເອກະພາບແຫ່ງຊາດຫວຽດນາມໃນປີ 1956, ແຕ່ການເລືອກ ຕັ້ງດັ່ງກ່າວ ບໍ່ໄດ້ເກີດຂຶ້ນ ຍ້ອນລັດຖະບານໄຊ່ງ ອນ ແລະ ສະຫະລັດຜູ້ເປັນນາຍ ປະ ຕິເສດການເຊັນສັນຍາເຊີແນວ ທັງຕໍ່ຕ້ານການເລືອກຕັ້ງນັ້ນ.

ລັດຖະບານຫວຽດນາມໃຕ້ ເຕີບໃຫຍ່ຂຶ້ນໃນໄລຍະ 5 ປີສຸດທ້າຍຂອງສົງຄາມ ມີຜູ້ນຳຊື່ ໂຫງ ດິນ ຢ້ຽມ ເປັນຜູ້ນັບຖືສາສະໜາກາໂຕລິກ (ພໍ່ເປັນພະນັກງານສານໃນເມືອງເວ້). ດ້ານປະສົບການທາງການເມືອງນັ້ນ ຢ້ຽມ ເຄີຍດຳລົງຕຳແໜ່ງລັດຖະມຸນຕີປະຈຳສຳນັກງານນາຍົກ (Cabinet minister) ເປັນເວລາສັ້ນໆ ໃນປີ 1933 ພາຍໃຕ້ ລາຊະການຂອງຈັກກະພັດ ບ້າວ ດ່ຳຍ. ສ່ວນວ່າສະຫະລັດນັ້ນ ໄດ້ໃຫ້ການສະໜັບສະໜູນດ້ານການເງິນແກ່ຝຣັ່ງ ມາຕັ້ງແຕ່ປີ 1950, ຍ້ອນສະຫະລັດ ຢ້ານກົວການແຜ່ຂະຫຍາຍອິດທິພົນຂອງລັດຖະບານກອມມູນິດຈີນລົງມາທາງໃຕ້. ໂດຍທີ່ກອງທັບຂະໜາດໃຫຍ່ຂອງຈີນ ແລະສະຫະລັດ ໄດ້ປະເຊີນໜ້າກັນມາແລ້ວ ໃນສົງຄາມເກົາຫຼີ ປີ 1950-1953 ແລະສະຫະລັດກໍເຊື່ອວ່າ ຈີນໃຫ້ການສະໜັບສະໜູນ ລັດຖະບານຫວຽດນາມໃນຮ່ຳໂນຍ ຢ່າງລັບໆ. ເວລານັ້ນສະຫະລັດ ຫວັງສ້າງໃຫ້ ຢ້ຽມ ເປັນຄືດັ່ງ ວິນສ໌ຕັນ ເຊີຊິນ (Winston Churchill) ຂອງອາຊີຕາເວັນອອກສ່ຽງໃຕ້ (ດັ່ງທີ່ ຮອງປະທານາທິບໍດີ ລິນດອນ ຈອນສັນ (Lyndon Johnson) ປະກາດຕໍ່ໜ້າສາທາລະນະຊົນ ໃນປີ 1961) ດັ່ງນັ້ນ ສະຫະລັດ ຈຶ່ງເລີ່ມປະຕິບັດການຜ່ານທາງ ຢ້ຽມ ເພື່ອສ້າງຄວາມສັບສົນທາງການເມືອງ ແກ່ປະຊາຊົນຫວຽດນາມ ເຊິ່ງສ່ວນໃຫຍ່ໄດ້ໃຫ້ການສະໜັບສະໜູນຝ່າຍກອມມູນິດ ແລະສັບສົນຕໍ່ກັບທັດສະນະຂອງ ລັດຖະບານ ວໍຊິງຕັນ. ປີ 1953 ໃນຄຳປາໄສຂອງປະທານາທິບໍດີ ໄອເຊັນຮາວ (Eisenhower) ໄດ້ບອກວ່າ "ມີສັດທາອັນດຽວກັນ ຄື ການຕໍ່ຕ້ານກອມມູນິດ ເພື່ອສັກສີຂອງທະຫານຝຣັ່ງທີ່ຕາຍຢູ່ໃນອິນໂດຈີນ ກັບຊີວິດຊາວອາເມລິກາທີ່ຕາຍຢູ່ເກົາຫຼີ" ໄອເຊັນຮາວ ໄດ້ປຽບທຽບຮູບຮ່າງຂອງປະເທດຫວຽດນາມວ່າ ຄືກັບ "ເຫຼັກຍົກນ້ຳໜັກ ທີ່ຄິດງໍ" ເຊິ່ງຖ້າຫາກຫວຽດນາມກາຍເປັນປະເທດກອມມູນິດຢ່າງສົມບູນແລ້ວ ປະເທດຕໍ່ໄປກໍ ອາດຈະແມ່ນ ໄທ, ພະມ້າ ແລະ ມາເລເຊ ເຊິ່ງມັນໝາຍຄວາມວ່າ ຈະເປັນການສູນເສຍທີ່ໃຫຍ່ຫຼວງ ຍ້ອນວ່າເປັນທັງ ບໍ່ກົ່ວ ແລະ ແຫຼ່ງສະໜອງເຂົ້າແລະຢາງ ທີ່ສຳຄັນຂອງສະຫະລັດ. ລັດຖະບານ ເຄນເນດີ (Kennedy) ສືບຕໍ່ນະໂຍບາຍຂອງ ໄອເຊັນຮາວ ເພື່ອບໍ່ໃຫ້ພາກໃຕ້ຫວຽດນາມກາຍເປັນລັດກອມມູນິດ ໃນຖານະວ່າ ເປັນທີ່ຕັ້ງຍຸດທະສາດທີ່ບໍ່ອາດຍອມເສຍໄປໄດ້. ດັ່ງທີ່ ລັດຖະມົນຕີຕ່າງປະເທດ ແລະ ລັດຖະມົນຕີປ້ອງກັນຊາດ ໄດ້ບອກກັບປະທານາທິບໍດີ ເຄນເນດີ ໃນປີ 1961 ວ່າ

"ຖ້າຫາກເສຽພາກໃຕ້ຫວຽດນາມແລ້ວ ກໍບໍ່ຕ້ອງເວົ້າກັນອີກວ່າ ພາກພື້ນອາຊີຕາເວັນ ອອກສຽງໃຕ້ນັ້ນ ສຳຄັນຕໍ່ໂລກເສລີຊໍ່າໃດ ເປັນທີ່ແນ່ນອນວ່າ ພາກສ່ວນອື່ນຂອງ ພາກພື້ນນີ້ ຮວມທັງອິນໂດເນເຊຍ ຈະກາຍເປັນລັດກອມມູນິດຢ່າງສົມບູນ."

ພ້ອມກັນນັ້ນ ບັນດາທີ່ປຶກສາອາເມລິກາ ນັບຕັ້ງແຕ່ ສາສະດາຈານດ້ານວິທະ ຍາສາດການເມືອງ, ເຈົ້າໜ້າທີ່ໜ່ວຍສືບຂ່າວ CIA (ເອັດເວີດ ແລນສເດລ - Edward Landsdale) ຮອດນັກຈັດສັນທີ່ດິນ (ວູຟ ເລດິຈິນສ໌ກີ - Wolf Ladejinsky) ຕ່າງເດີນທາງໄປ ໄຊ່ງ່ອນ ເພື່ອໂອ້ລົມເລື່ອງ "ແນວຄິດທາງການເມືອງ ຂອງສະຫະລັດ" ນຳ ໂຫງ ດິນ ຢັ້ງ ແລະກໍໃຫ້ຄວາມຊ່ວຍເຫຼືອດ້ານຕ່າງໆ ເຊັ່ນຈັດ ລະບົບບໍລິຫານລັດ, ກຳລັງຕຳຫຼວດ ແລະ ໂຮງຮຽນ, ໃຫ້ມີລັດຖະທຳມະນູນແບບ ສາທາລະນະລັດ (1956). ຢາກໃຫ້ທ່ານຜູ້ອ່ານຈື່ຈຳໄວ້ວ່າ ຝ່າຍກອມມູນິດບໍ່ໄດ້ມີ ປະຕິກິລິຍາຕໍ່ຕ້ານ ຫຼືທ້າທາຍໃດໆ ຕໍ່ການທີ່ ສະຫະລັດເຂົ້າມາສ້າງຖານອຳນາດ ໃນພາກໃຕ້ຫວຽດນາມ ຈົນຮອດທ້າຍປີ 1959 ຈຶ່ງເກີດຂະບວນການລຸກຮືຂຶ້ນ ຕໍ່ຕ້ານ ຢັ້ງ ແລະອາເມລິກາ ຢູ່ຕາມເຂດສາມຫຼ່ຽມແມ່ນ້ຳຂອງ ແລະ ພູສູງ ທາງພາກກາງ ຫວຽດນາມ. ແນ່ນອນ ໃນເບື້ອງຕົ້ນ ເບິ່ງຄືວ່າ ຄວາມພະຍາຍາມຂອງອາເມລິກາ ຈະດຳເນີນໄປດ້ວຍດີ, ແຕ່ເມື່ອ ຢັ້ງ ຂຶ້ນເປັນປະທານປະເທດຂອງຫວຽດນາມໃຕ້ ໃນປີ 1955 ດ້ວຍການສໍ້ໂກງການເລືອກຕັ້ງ ຢ່າງເປີດແປນ ສະຖານະການກໍເລີຍ ໜັກໜ່ວງກວ່າທີ່ ສະຫະລັດຈະໃຫ້ຄຳປຶກສາໄດ້. ຢັ້ງ ເປັນຜູ້ສ້າງຄວາມເຄັ່ງຄັດດ້ານ ວັດທະນະທຳ ແລະລະບຽບກ່ຽວກັບຊັ້ນຄົນໃນຫວຽດນາມ. ສ່ວນທີ່ດີທີ່ສຸດຂອງ ຢັ້ງ ແມ່ນ ການທີ່ລາວນິຍົມການເມືອງແບບລັດທິຂົງຈື້ ຫຼາຍກວ່າ ເສລີນິຍົມແບບອາເມ ລິກາ ຂະນະທີ່ ສະຫະລັດຮ້ອນໃຈ ກັບການຕ້ານກອມມູນິດ ຢັ້ງ ຜັດຕັ້ງຄຳຖາມ ກ່ຽວກັບເລື່ອງ ແນວຄິດດ້ານສັດຈະທຳຊີວິດຂອງຜູ້ປົກຄອງ ເຊິ່ງຄວນຈະປົກຄອງປະ ເທດ ດ້ວຍອຳນາດບາງຢ່າງທີ່ສູງສົ່ງກວ່າ. ສ່ວນຂີ້ຮ້າຍທີ່ສຸດຂອງຢັ້ງ, ເຊິ່ງໜ້າຈະ ມາຈາກນ້ອງຊາຍຂອງລາວ ຜູ້ມີຕຳແໜ່ງເປັນຜູ້ບໍລິຫານທາງການເມືອງ ແມ່ນການ ກະທຳຂອງຢັ້ງ ທີ່ຂັດກັບລັດທິຂົງຈື້ ຄືການພາປະເທດເຂົ້າສູ່ ລະບົບອຳນາດຂອງ ຕຳຫຼວດ ມີການຈັບກຸມແລະຂົ່ມຂູ່ນັກໂທດການເມືອງ ນັບສິບພັນຄົນ ຢ່າງບໍ່ມີເຫດ ຜົນ ເຊິ່ງນັກໂທດສ່ວນຫຼາຍ ບໍ່ໄດ້ເປັນກອມມູນິດ ອີກຊ້ຳ.

ດ້ວຍເຫດຜົນເຫຼົ່ານີ້ ເຮັດໃຫ້ ຢ້ງມ ບໍ່ສາມາດ ຈະເປັນຜູ້ສ້າງຄວາມຫວັງຂອງ ອາເມລິກາ ທີ່ຈະໃຫ້ພາກໃຕ້ຫວຽດນາມເປັນຖານທີ່ໝັ້ນໃນການຕໍ່ຕ້ານກັບກອມມູນິດ ເປັນຈິງໄດ້. ຢ້ງມ ທຳລາຍການເລືອກຕັ້ງ ເຈົ້າແຂວງ ແລະເຈົ້າຄອງນະຄອນລ້ຽ ແລະ ເຕົ້າໂຮມປະຊາຊົນ ເປັນກຸ່ມບ້ານໃຫຍ່ທີ່ເຂັ້ມແຂງ. ແລ້ວຢ້ງມກໍປ່ຽນລະບອບການ ປົກຄອງ ແບບປະທານປະເທດ ໄປສູ່ລະບອບ ລາຊະວົງຢ່າງບໍ່ເປັນທາງການ ດ້ວຍ ການສະໜັບສະໜູນເຄືອຂ່າຍຍາດພີ່ນ້ອງ (ລາຊະວົງທີ່ບໍ່ເປັນທາງການນີ້ ແມ່ນໜຶ່ງ ໃນມໍລະດົກທາງການເມືອງຂອງຢ້ງມ) ຫຼືບໍ່ ກໍແມ່ນຄົນຮັບໃຊ້ໃກ້ຊິດ (ມໍລະດົກອີກ ຢ່າງໜຶ່ງ) ບັນດາເຈົ້າທີ່ດິນຜູ້ຮັ່ງມີ ໃນພາກໃຕ້ຫວຽດນາມ ຖືກຮັບປະກັນຄວາມປອດ ໄພ ແລະຮັ່ງມີດ້ວຍນະໂຍບາຍປະຕິຮູບທີ່ດິນຂອງຢ້ງມ ໃນປີ 1956. ດ້ວຍຄວາມ ໝົດຫວັງທາງການເມືອງ ຢ້ງມ ສັ່ງໃຫ້ຕຳຫຼວດ ບຸກໂຈມຕີວັດພຸດຫຼາຍແຫ່ງ ໃນລະດູ ຮ້ອນ ປີ 1963, ສະແດງໃຫ້ເຫັນແນວຄິດຂັດແຍ່ງຢ່າງສຸດຂີດ ໃນຖານະທີ່ລາວເປັນ ກາໂຕລິກ ແລະຜູ້ນັບຖືລັດທິຂົງຈື້ ທີ່ຕໍ່ຕ້ານການເຕີບໃຫຍ່ຂຶ້ນຂອງສະມາຄົມ ຊາວ ພຸດຫວຽດນາມ(ສ້າງຕັ້ງປີ 1951), ເຊິ່ງຢ້ງມບໍ່ສາມາດຄວບຄຸມສະມາຄົມນີ້ໄດ້. ການ ໂຈມຕີນີ້ ເປັນຈຸດສິ້ນສຸດ ຄວາມສຳພັນຂອງ ຢ້ງມ ແລະສະຫະລັດ. ທູດສະຫະລັດ ປະຈຳໄຊ່ງອນ ເຈລະຈາລັບກັບຜູ້ນຳທາງທະຫານທີ່ ມີແຜນຈະຕໍ່ຕ້ານຢ້ງມ ເຖິງຂະ ໜາດສະເໜີ ດອນ ໄຊປັນ (Saipan) ເປັນສະຖານທີ່ໃນການ "ຖ່າຍໂອນອຳນາດ ຂອງບຸກຄົນສຳຄັນ".

ຝ່າຍກອມມູນິດ ໃນພາກເໜືອແລະໃຕ້ ຍັງບໍ່ໄດ້ເຄື່ອນໄຫວຕໍ່ຕ້ານກົງຈັກການ ເມືອງຂອງຢ້ງມ ຢ່າງເອົາແທ້ເອົາວ່າ ຈົນຮອດ ປີ 1959, ສ່ວນໜຶ່ງອາດຍ້ອນ ເຂົາ ເຈົ້າປະເມີນຝ່າຍຂອງຢ້ງມໄວ້ຕ່ຳ. ຝ່າຍເໜືອເອງ ກໍຕັດສິນໃຈຍາກ ເມື່ອທາງຈີນ ແລະໂຊວຽດ ກໍກົດດັນໃຫ້ມີການລຸກຮືຂຶ້ນ ທາງພາກໃຕ້ ໃນຂະນະທີ່ລັດຖະບານຮ່າ ໂນຍ ຫາກໍມີໂອກາດໄດ້ຟື້ນຟູເສດຖະກິດຂອງຕົນ. ແຕ່ເຂົາເຈົ້າກໍຢູ່ໃນຕຳແໜ່ງທີ່ໄດ້ ປຽບ ທີ່ຈະສ້າງຂະບວນການປະຕິວັດທາງສັງຄົມໃນພາກໃຕ້. ເຈົ້າທີ່ດິນເກືອບທັງໝົດ ອາໄສຢູ່ພາກໃຕ້. ໃນໄລຍະສົງຄາມຕໍ່ຕ້ານຝຣັ່ງ ຫວຽດມິນ ເອົາຊະນະໃຈປະຊາຊົນ

ດ້ວຍການແບ່ງປັນທີ່ດິນ 630,000 ເຮັກຕາ ໃຫ້ປະຊາຊົນຜູ້ທຸກຍາກ ຊາວນາທາງພາກໃຕ້ແມ່ນໄດ້ຮັບຜົນປະໂຫຍດຫຼາຍ. ຫຼັງປີ 1954 ເຈົ້າທີ່ດິນ ເຊິ່ງໃຫ້ການສະໜັບສະໜູນລັດຖະບານຂອງຢັ້ມ ໄດ້ຍຶດເອົາທີ່ດິນເຫຼົ່ານັ້ນຄືນ ສ້າງຄວາມຄຽດແຄ້ນຝັງແໜ້ນໃນໃຈຂອງຊາວນາ.

ເດືອນທັນວາ 1960 ຫວຽດມິນ ໄດ້ຟື້ນຄືນສາຂາຢູ່ພາກໃຕ້ ໂດຍໃຊ້ຊື່ວ່າ ແນວຮ່ວມເພື່ອເສລີພາບແຫ່ງຊາດ (National Liberation Front - NLF), ຝ່າຍສັດຕູໃສ່ຊື່ ເພື່ອສຽດສີ ວ່າ ວຽດກົງ (Viet Cong, ຄຳຫຍໍ້ຕາມສຳນຽງຫວຽດນາມ ຂອງ ກອມມູນິດຫວຽດນາມ). NLF ບໍ່ພຽງແຕ່ເຕົ້າໂຮມ ນັກກອມມູນິດເກົ່າໆ ເທົ່ານັ້ນ ແຕ່ຍັງໄດ້ຮັບການສະໜັບສະໜູນ ຈາກປັນຍາຊົນ ຝ່າຍເສລີນິຍົມ ເຊິ່ງເຫັນວ່າ ຝ່າຍລັດຖະບານຂອງຢັ້ມ ເອົາແຕ່ໃຈໂຕເອງໂພດ ຄົງບໍ່ສາມາດມີໄຊຊະນະໄດ້ ດ້ວຍຄວາມສາມາດໃນການຕໍ່ສູ້ແບບກອງໝອນ ວຽດກົງ ສາມາດສ້າງເຂດປົດປ່ອຍທາງພາກໃຕ້ໄດ້ຢ່າງໄວວາ, ເດືອນ ພະຈິກ 1962 ສະຫະລັດປະເມີນວ່າ ວຽດກົງ ສາມາດຄວບຄຸມ ຫຼື ມີອິດທິພົນ ໃນສອງສ່ວນສາມ ຂອງຈຳນວນບ້ານທັງໝົດໃນພາກໃຕ້. ລັດຖະບານຢັ້ມ ກັບມາໃຊ້ອຳນາດແບບລວມສູນປົກຄອງ ແລະ ອາໄສເກັບພາສີຄືສະໄໝເມືອງຂຶ້ນ (ພາສີຕະຫຼາດ, ພາສີການຄ້າ, ຄ່າທຳນຽມ ເອກະສານຮັບປະກັນຕ່າງໆ) ພວກເຂົາບໍ່ໄດ້ຕ່າງຈາກຝຣັ່ງ ແລະ ຜູ້ທີ່ເປັນເຫຍື່ອ ສ່ວນໃຫຍ່ແມ່ນຜູ້ທຸກຍາກ. ສ່ວນຝ່າຍ NLF ໃນຕອນຕົ້ນນັ້ນ ໄດ້ໃຫ້ອຳນາດ ໃນການປົກຄອງທ້ອງຖິ່ນ ແກ່ປະຊາຊົນໃນພື້ນທີ່, ຍົກເວັ້ນການເກັບພາສີ ແລະມີນະໂຍບາຍ ແບ່ງຊັບສິນ ຈຶ່ງເປັນທີ່ນິຍົມຂອງປະຊາຊົນຜູ້ທຸກຍາກ. ໃນຕົວເມືອງ ເກີດມີອົງກອນຍ່ອຍຂຶ້ນ ເຊັ່ນ "ຄະນະກຳມະການ ເພື່ອການອະນຸຮັກວັດທະນະທຳຂອງຊາດ" ມີສະມາຊິກເປັນຄູອາຈານ ແລະນັກສຶກສາ ໃນສະຖາບັນຕ່າງໆ ທາງພາກໃຕ້ ທີ່ຢ້ານວ່າ ຈະມີການ "ຫັນປ່ຽນເປັນອາເມລິກາ" ເຫັນໄດ້ຈາກ ບັນດາວິທະຍາໄລ ແລະ ໂຮງຮຽນ ການປົກຄອງແຫ່ງຊາດ ທີ່ໄດ້ຮັບການສະໜັບສະໜູນທາງການເງິນ ແລະ ທີ່ປຶກສາຈາກສະຫະລັດນັ້ນ ກຳລັງຈະປ່ຽນນັກສຶກສາຫວຽດນາມໃຫ້ເປັນ "ຊາວອາເມລິກາຜິວເຫຼືອງ". ໃນປີ 1969, ພາຍຫຼັງຜ່ານໄລຍະຫ້ອລ້ຽວຫ້ອຕໍ່ໄດ້, NLF ກໍສາມາດຕັ້ງ

"ລັດຖະບານປະຕິວັດຊ່ວຄາວ" ເຂົາເຈົ້າມີໂຮງຮຽນ, ໜັງສືພິມ ແລະ ລະບົບວິທະຍຸ ໂທລະພາບຂອງຕົວເອງ.

ເພື່ອຮັບມືກັບການເຄື່ອນໄຫວດັ່ງກ່າວ ອາເມລິກາ ເລີ່ມການເຄື່ອນທັບຂະ ໜາດໃຫຍ່ ພ້ອມກັບສ້າງຕັ້ງ "ໜ່ວຍສະໜັບສະໜູນທາງການທະຫານ ຫວຽດນາມ" (Military Assistance Command Vietnam - MACV) ໃນປີ 1961-1962. ເດືອນພະຈິກ ປີ 1962 ລັດຖະມົນຕີປ້ອງກັນປະເທດຂອງສະຫະລັດປະເມີນໄວ້ວ່າ ຫາກວ່າ ມີການໂຈມຕີຈາກຈີນແລະຮ່າໂນຍ ພ້ອມໆກັນ ຢ່າງເຕັມຮູບແບບ ກຳລັງ ທະຫານ ພາກພື້ນດິນທີ່ຈະຕ້ອງໃຊ້ ເພື່ອຮັບມືກັບເຫດການນັ້ນ ທົ່ວອາຊີຕາເວັນອອກ ສຽງໃຕ້ ຢ່າງໜ້ອຍທີ່ສຸດ ແມ່ນ 205,000 ຄົນ, ແຕ່ນັ້ນ ກັບກາຍເປັນພຽງຈຸດເລີ່ມຕົ້ນ ໃນປີ 1967 ມີທະຫານອາເມລິກາ ປະຈຳຢູ່ໃນຫວຽດນາມຮອດ 525,000 ຄົນ ໂດຍ MACV ເປັນຜູ້ສະເໜີຂໍກຳລັງດັ່ງກ່າວ. ເດືອນພະຈິກ 1963 ກອງກຳລັງທະຫານ ໄຊ່ງ່ອນ ພາຍໃຕ້ການສະໜັບສະໜູນຂອງສະຫະລັດ ເຮັດລັດຖະປະຫານ ແລະ ສັງ ຫານ ຢ້ຽມ. ນາຍພົນທີ່ຂຶ້ນກຳອຳນາດ ສະແດງອອກຢ່າງຈະແຈ້ງວ່າ ບໍ່ຢາກໃຫ້ມີທີ່ ປຶກສາຂອງສະຫະລັດ ປະຈຳການຢູ່ແຕ່ລະບ້ານ ເພາະເຮັດແນວນັ້ນ ເບິ່ງຄືກາຍເປັນ ເມືອງຂຶ້ນ, ນາຍພົນຜູ້ນັ້ນຖືກລັດຖະປະຫານຄັ້ງໃໝ່ ໃນເດືອນ ມັງກອນ 1964 ໂດຍສະຫະລັດຮູ້ລ່ວງໜ້າແລ້ວ ແຕ່ບໍ່ຂັດຂວາງເລີຍ. ປີ 1965 ພົນຕີ ຫງວຽນ ວັນ ຖ້ຽວ ຂຶ້ນເປັນຜູ້ນຳຂອງລັດຖະບານ ໄຊ່ງ່ອນ, ຜູ້ນຳກອງທັບໄຊ່ງ່ອນ ຄົນນີ້ ທັງດ້ອຍ ການສຶກສາ ແລະຂາດຄວາມເຂົ້າໃຈໃນປະເພນີດັ້ງເດີມ ແຕ່ກໍຢາກລອງໃຊ້ອຳນາດ ໂດຍເພິ່ງພາ ອຳນາດການເມືອງແລະເສດຖະກິດ ຂອງຕາເວັນຕົກຫຼາຍກວ່າ ຈຶ່ງສາ ມາດຍຶດອຳນາດການປົກຄອງໃນຫວຽດນາມໃຕ້ໄດ້. ອຳນາດການປົກຄອງໃໝ່ທີ່ເຂົ້າ ມາປ່ຽນແທນອຳນາດຂອງ ຢ້ຽມ ຈັດໃຫ້ມີການເລືອກຕັ້ງປະທານປະເທດ ທຸກສີ່ປີ ຄືກັບລະບົບທີ່ສະຫະລັດໃຊ້, ປີ 1967 ນາຍພົນ ຖ້ຽວ ຂຶ້ນດຳລົງຕຳແໜ່ງ ປະທານ ປະເທດ ຂອງສາທາລະນະລັດ ຫວຽດນາມໃຕ້ ແລະຢູ່ໃນຕຳແໜ່ງ ຮອດປີ 1975.

ຫຼັງການສັງຫານຢ້ຽມ, ສົງຄາມເລີ່ມຂະຫຍາຍຕົວ. ໄລຍະປີ 1965 ຮູບແບບຂອງສົງຄາມ ກາຍມາເປັນການປະເຊີນໜ້າແບບກົງໆ ລະຫວ່າງກຳລັງກອງທັບ ທີ່ເປັນລະບົບຂອງສະຫະລັດ ແລະກອງທັບທີ່ແໜ້ນໜຽວຂອງຫວຽດນາມເໜືອ. ໂດຍອີງຕາມຄຳເຫັນຂອງທູດສະຫະລັດ ປະຈຳໄຊ່ງ່ອນ ທີ່ວ່າ "ຖິ້ມລະເບີດຖະຫຼົ່ມຫວຽດນາມເໜືອ ໃຫ້ເສຍຂວັນ ແລະເຮັດໃຫ້ປະຊາຊົນຢູ່ທາງພາກໃຕ້ ມີຄວາມຮູ້ສຶກເປັນເອກະພາບ" ປະທານາທິບໍດີ ລິນດອນ ຈອນສັນ (Lyndon Johnson) ສະເໜີໃຫ້ສະພາຄອງເກຣສ (Congress) ອະນຸມັດໃຫ້ ລາວສາມາດ "ໃຊ້ມາຕະການທີ່ຈຳເປັນ" ກັບອິນໂດຈີນ. ການຖິ້ມລະເບີດຖະຫຼົ່ມຫວຽດນາມເໜືອຈຶ່ງເລີ່ມຂຶ້ນ ຢ່າງເປັນລະບົບ ໃນເດືອນ ກຸມພາ 1965. ນາຍພົນ ວິລລຽມ ເວສມໍແລນ (William Westmoreland) ຜູ້ບັນຊາການທະຫານສະຫະລັດ ໃນຫວຽດນາມໃຕ້ ໄດ້ຮັບອະນຸຍາດໃຫ້ນຳໃຊ້ ກອງກຳລັງຂະໜາດໃຫຍ່ ເພື່ອປະຕິບັດການ "ຄົ້ນຫາແລະທຳລາຍ" ກະຈາຍການໂຈມຕີໄປທົ່ວເຂດຊົນນະບົດຂອງພາກໃຕ້. ການໂຈມຕີດ້ວຍລະເບີດລູກບົມ ແລະລະເບີດນາປາມ ເຮັດໃຫ້ປະຊາຊົນຈຳນວນຫຼາຍ ຈຳຕ້ອງອົບພະຍົບເຂົ້າຕົວເມືອງ ການໃຊ້ກຳລັງໄຟເພື່ອຕັດການພົວພັນລະຫວ່າງຫວຽດກົງ ແລະ ປະຊາຊົນ ນັບວ່າໄດ້ຜົນດີ. ຝ່າຍເໜືອຕອບໂຕ້ໂດຍສົ່ງກອງທະຫານຫຼວງ ລົງພາກໃຕ້ ສົມທົບກັບກອງກຳລັງ NLF ເຊິ່ງແຂງແກ່ນຂຶ້ນຫຼາຍ. ໂດຍປະຕິບັດຕາມແບບແຜນຂອງ ໄຕຊົງ ທີ່ ຫຼອນຕີ ກອງທັບຈີນ ໃນປີ ຈັນທະຣະຄະຕິ ທີ 1789, ແລະແລ້ວໃນເດືອນ ກຸມພາ ປີ 1968 ກອງທັບກອມມູນິດຫວຽດນາມ ເທື່ອນີ້ ເຂົາເຈົ້າສາມາດບຸກເຂົ້າ ຮອດສະຖານທູດສະຫະລັດໃນໄຊ່ງ່ອນ ແລະຍຶດເມືອງຫຼວງເກົ່າເຫ້ ໄດ້. ປະຕິບັດການດັ່ງກ່າວ ເປັນທີ່ຮູ້ຈັກໃນຊື່ "ເຕັດ (ປີໃໝ່) ເດືອດ" (Tet offensive) ປະຕິບັດການ ເຕັດເດືອດ ຖືກເຜີຍແຜ່ທາງໂທລະພາບ ສູ່ຄອບຄົວອາເມລິການັບລ້ານ ແລະນັ້ນຄືຈຸດປ່ຽນຂອງສົງຄາມນີ້. ດ້ານໜຶ່ງ ມັນສະແດງໃຫ້ເຫັນຄວາມລົ້ມແຫຼວໃນການບໍລິຫານຂອງ ປະທານາທິບໍດີ ຈອນສັນ ແລະຂີດຈຳກັດ ໃນການເຮັດສົງຄາມຂອງອາເມລິກາ ຢູ່ອາຊີ. ອີກດ້ານໜຶ່ງ ຄວາມດຸເດືອດລະຫວ່າງການຕໍ່ສູ້ ເພື່ອທຳລາຍການສ້າງຂະບວນການລຸກຮືຂຶ້ນ ຂອງຝ່າຍກອມມູນິດ ຢູ່ຕາມຕົວເມືອງພາກໃຕ້ນັ້ນ ແມ່ນລົງຄ້ອຍແລ້ວ, ນອກນັ້ນ ກໍຍັງມີການເຄື່ອນໄຫວຂອງ ກຸ່ມທີ່ນິຍົມກອມມູນິດ ໃນກອງທັບໄຊ່ງ່ອນ

ນຳອີກ ນັ້ນພິສູດວ່າ ການກະຕວງຂອງຜູ້ນຳຝ່າຍຮ່າໂນຍ ກ່ຽວກັບກ້ອນກຳລັງປະຕິວັດພາກໃຕ້ ແມ່ນຖືກຕ້ອງ. ຕໍ່ມາ ຕົວແທນຈາກລັດຖະບານ ຮ່າໂນຍ ແລະ ວໍຊິງຕັນ ໄດ້ຕົກລົງກັນ ເພື່ອຈັດກອງປະຊຸມສັນຕິພາບຂຶ້ນ ຢູ່ປາຣີ ໃນປີ 1968.

ການເຈລະຈາຢູ່ປາຣີ ບໍ່ສາມາດສະຫຼຸບໄດ້ ຈົນຮອດປີ 1973. ໃນໄລຍະກວ່າສີ່ປີນັ້ນ ຊີວິດນັບບໍ່ຖ້ວນ ຖືກສັງເວີຍໃນສົງຄາມ. ປະທານາທິບໍດີ ຣິຊາດ ນິກສັນ (Richard Nixon) ແລະ ຫົວໜ້າທີ່ປຶກສາດ້ານນະໂຍບາຍການຕ່າງປະເທດ ເຮັນຣີ ຄິສຊິງເກີ (Henry Kissinger) ເຖິງຂະໜາດຍອມປ່ຽນນະໂຍບາຍສອງຂໍ້ ທີ່ເປັນການຕ້ານລັດຖະບານຈີນ ເໝົາ ເຈ ຕຸງ ແລກກັບການທີ່ມະຫາອຳນາດຝ່າຍກອມມູນິດ ເຊັ່ນ ຈີນ ຊ່ອຍກົດດັນ ໃຫ້ລັດຖະບານຮ່າໂນຍ ຍອມຮັບເງື່ອນໄຂສັນຕິພາບກັບສະຫະລັດ. ການກົດດັນນັ້ນ ເຮັດໃຫ້ສາຍສຳພັນລະຫວ່າງຈີນ ແລະຫວຽດນາມເກີດບັນຫາຂຶ້ນ. ແຕ່ກວ່າສະຫະລັດຈະຮູ້ເລື່ອງນີ້ ກໍຊ້າເກີນໄປແລ້ວ, ທີ່ສຳຄັນ ສະຫະລັດ ບໍ່ສາມາດສະກັດກັ້ນ ໄຊຊະນະຂອງຫວຽດນາມ ທີ່ມີຈຸດເລີ່ມຈາກສັນຍາສັນຕິພາບ ປີ 1973 ໄດ້.

ຂໍ້ສະເໜີຂອງສະຫະລັດ ໃນການເຈລະຈາສັນຕິພາບ ແມ່ນໃຫ້ກອງທະຫານຂອງສະຫະລັດ ແລະຫວຽດນາມເໜືອ ຖອນກຳລັງອອກຈາກຫວຽດນາມໃຕ້. ແນວຄຶດຂອງທາງ ວໍຊິງຕັນ ແມ່ນວ່າ ຫວຽດນາມໃຕ້ ແມ່ນລັດເອກະລາດໜຶ່ງ ທັງທະຫານອາເມລິກາ ແລະຫວຽດນາມເໜືອ ຈຶ່ງລ້ວນເປັນ “ຄົນນອກ” ທີ່ມາສູ້ກັນໃນດິນແດນຜູ້ອື່ນ. ຄຳເຫັນດັ່ງກ່າວຖືກປະຕິເສດຈາກຝ່າຍກອມມູນິດຫວຽດນາມ ເຊິ່ງຍົກເຫດຜົນວ່າ ນີ້ແມ່ນການຕໍ່ສູ້ເພື່ອປົດປ່ອຍປະເທດ. ດ້ວຍໄດ້ຮັບການສະໜັບສະໜູນຫຼາຍກວ່າຝ່າຍວໍຊິງຕັນ ຂໍ້ສະເໜີຂອງສະຫະລັດ ຈຶ່ງຕົກໄປ.

ສັນຍາປີ 1973 ເຮັດໃຫ້ຫວຽດນາມເໜືອສາມາດຄົງກຳລັງທະຫານໄວ້ໃນຫວຽດນາມໃຕ້ໄດ້ ຂະນະທີ່ ກຳລັງພາກພື້ນດິນຂອງສະຫະລັດຕ້ອງອອກໄປ. ມີບາງຢ່າງທີ່ ນິກສັນ ແລະ ຄິສຊິງເກີ ປະຕິເສດ ບໍ່ຮັບຮູ້ ແລະ ປະທານາທິບໍດີ ຖ້ຽວ

ໃນໄຊ່ອນ ກໍຄືວ່າຈະບໍ່ສັງເກດເຫັນ, ນັ້ນຄື ການມີເຂດຍຶດຄອງຢ່າງຖືກຕ້ອງຂອງ ຝ່າຍ ວຽດກົງ ທີ່ເອີ້ນວ່າ "ເຂດປົດປ່ອຍ" ຢູ່ໃນຫວຽດນາມໃຕ້ (ເຊິ່ງເປັນສ່ວນໜຶ່ງໃນ ສັນຍາທີ່ ຖ້ຽວ ເຊັນ) ບວກກັບການຄົງກຳລັງທະຫານຫວຽດນາມເໜືອ ແລະການ ຖອນກຳລັງທະຫານສະຫະລັດ ອອກຈາກຫວຽດນາມໃຕ້ ທັງໝົດເປັນສັນຍານວ່າ ເວລາຂອງລັດຖະບານຖ້ຽວໃກ້ໝົດແລ້ວ. ສະຫະລັດ ມອບອາວຸດຈຳນວນມະຫາສານ ໃຫ້ລັດຖະບານແລະກອງທັບຂອງຖ້ຽວ ແຕ່ນັ້ນຍັງຊ່ວຍຫຍັງບໍ່ໄດ້. ຝ່າຍຫວຽດນາມ ເໜືອ ທະຍອຍສົ່ງທະຫານຈາກຮ່າໂນຍ ລົງມາພາກໃຕ້ ຕັ້ງແຕ່ປີ 1973. ແລ້ວ ຂະບວນລຸກຮືຈຶ່ງລະເບີດຂຶ້ນ ໃນລະດູບານໃໝ່ ປີ 1975 ຂະນະນັ້ນ ມີທະຫານ ຝ່າຍຫວຽດນາມເໜືອ 264,000 ຄົນ ໃນພາກໃຕ້. ຝ່າຍກອມມູນິດສາມາດໂຄ່ນລົ້ມ ລັດຖະບານຫວຽດນາມໃຕ້ ແລະ ໂຮມປະເທດເປັນໜຶ່ງດຽວໄດ້ອີກ.

ນັ້ນຄືບົດສຸດທ້າຍ ຂອງປະຫວັດສາດແຫ່ງການຕໍ່ສູ້ຢ່າງນອງເລືອດ ໃນຫວຽດ ນາມ. ຊາວຫວຽດນາມຫຼາຍລ້ານຄົນ ບາດເຈັບແລະເສຍຊີວິດ ຝ່າຍສະຫະລັດ ສູນ ເສຍທະຫານປະມານ 58,000 ຄົນ. ຊາວຫວຽດນາມ ເອົາຊະນະກອງກຳລັງມະຫາ ອຳນາດ ກັບລັດທິລ່າເມືອງຂຶ້ນແບບໃໝ່ ສ່ວນຝ່າຍສະຫະລັດ ສູນເສຍກອງກຳລັງ ຢ່າງມະຫາສານ ແລະຈຳຕ້ອງປັບປ່ຽນທັດສະນະຄະຕິທີ່ຕົນເຄີຍມີຕໍ່ໂລກ. ເຖິງວ່າລັດ ຖະບານສະຫະລັດ ບໍ່ໄດ້ຄວບຄຸມລັດຖະບານໄຊ່ອນ ຢ່າງມີຜົນສັກສິດ ແຕ່ເປັນທີ່ ຈະແຈ້ງວ່າ ລັດຖະບານໃດໆໃນໄຊ່ອນ ກໍບໍ່ສາມາດຄົງຢູ່ໄດ້ ຖ້າບໍ່ໄດ້ຮັບການຊ່ວຍ ເຫຼືອ ອັນມະຫາສານ ທາງເສດຖະກິດ ແລະການທະຫານຈາກສະຫະລັດ. ຂະນະດຽວ ກັນ ລັດຖະບານໄຊ່ອນ ຜູ້ໃດຫາກເຮັດໃຫ້ສະຫະລັດ ບໍ່ໄວ້ໃຈ ກໍຈະຢູ່ໄດ້ບໍ່ດົນ.

ໃນເລື່ອງລາວທີ່ເກີດຂຶ້ນໃນຫວຽດນາມນັ້ນ ຍັງມີອີກດ້ານໜຶ່ງ ທີ່ສາມາດອະ ທິບາຍວ່າ ເປັນຫຍັງຄວາມຄຽດແຄ້ນ ທີ່ຖືກກະຕຸ້ນດ້ວຍສົງຄາມ ຈຶ່ງຍາກທີ່ຈະສະຫງົບ ລົງ. ລະບົບການເມືອງ ໃນພາກໃຕ້ ໄລຍະປີ 1967 ອຳນວຍໂອກາດໃຫ້ແກ່ການ ກຳເນີດ ຂອງລະບອບປະຊາທິປະໄຕແບບຫຼາຍພັກ ໃນຫວຽດນາມ, ເຖິງວ່າຜູ້ນຳໃນ ກອງທັບໄຊ່ອນ ຈະເຄີຍຕາງຕົສະແດງວ່າ ພໍມີຄວາມນັບຖື ໃນລະບົບການເມືອງ

ແບບເລນິນ ທີ່ໃຊ້ຢູ່ພາກເໜືອ, ເຖິງແມ່ນວ່າ ປະທານປະເທດ ຫ້ຽ ຈະສໍ້ໂກງການເລືອກຕັ້ງ, ຫຼັກການກະຈາຍອຳນາດ ຕາມແບບທີ່ລະບົບການເມືອງຄວນຈະເປັນ ແຕ່ຢູ່ໃນສັງຄົມທີ່ມີຄວາມຫຼາກຫຼາຍສູງນັ້ນ ບັນດານັກບວດກາໂຕລິກ, ນັກບວດສາສະໜາພຸດ, ນັກທິດສະດີນິກາຍຕ່າງໆ, ນັກກົດໝາຍ, ຄູ, ນັກເສດຖະສາດ ແລະຜູ້ນຳສະຫະພາບແຮງງານ ເຊິ່ງສ່ວນຫຼາຍອາໄສຢູ່ໃນຕົວເມືອງ ລ້ວນເຄື່ອນໄຫວຢ່າງຕັ້ງໜ້າ ເພື່ອໃຫ້ໄດ້ມາເຊິ່ງປະຊາທິປະໄຕ ອັນແທ້ຈິງ ໂດຍເບິ່ງບັນຫາຕ່າງໆ ຢ່າງສັດຈະທັດ. ລະບົບຕຳຫຼວດສະໄໝຝຣັ່ງປົກຄອງ ເຄີຍກີດກັນການເກີດພັກການເມືອງຂອງມວນຊົນ. ທ້າຍປີ 1970 ມີພັກການເມືອງທີ່ບໍ່ແມ່ນກອມມູນິດ 24 ພັກ ໃນ ໄຊ່ງ່ອນ. ລັດຖະບານຂອງ ຫ້ຽ ຜູ້ເພິ່ງເງິນຊ່ວຍເຫຼືອ ທາງເສດຖະກິດ ແລະເກືອບທຸກເລື່ອງຈາກຕ່າງປະເທດ ປະຕິເສດຄວາມຕ້ອງການດ້ານການເງິນ ແລະບຸກຄະລາກອນ ຈາກພັກການເມືອງເຫຼົ່ານັ້ນ ນັກການເມືອງຫຼາຍຄົນ ຍັງຄົງເຄື່ອນໄຫວ ເພື່ອເສລີພາບທາງການເມືອງ ດ້ວຍຄວາມຫວັງວ່າ ຈະໄປກະຕຸ້ນມະນຸດສະທຳ ທີ່ຝັງເລິກໃນວັດທະນະທຳຫວຽດນາມ ມາແຕ່ອະດີດພຸ້ນ ໃນມື້ໃດມື້ໜຶ່ງ.

ນັກປະຫວັດສາດທັ້ງຫຼາຍ ຄວນຈື່ຈຳໄວ້ນຳວ່າ ລະຫວ່າງ ປີ 1954-1975 ນັ້ນ ໄຊ່ງ່ອນ ແມ່ນແຫຼ່ງພູມປັນຍາ ແລະວັນນະຄະດີ ຫຼາກຫຼາຍສີສັນ, ເຫຼົ່າປັນຍາຊົນລຸກຂຶ້ນເຄື່ອນໄຫວ ເພື່ອອິດສະຫຼະພາບຂອງປະຊາຊົນຫວຽດນາມບັນດາເຜົ່າ. ນັກຂຽນນິຍາຍທີ່ເປັນແມ່ຍິງຫຼາຍຄົນ ພົ້ນເດັ່ນຂຶ້ນ ມີຊື່ສຽງ ໃນໄລຍະນີ້, ເຂົາເຈົ້າຂຽນເລື່ອງຂອງຍິງຂາຍບໍລິການ, ການຕໍ່ສູ້ກັບພວກເຈົ້າທີ່ດິນ ແລະ ເສດສ່ວນໜຶ່ງຂອງຊີວິດຄົນຂ້າງຖະໜົນ, ນະວະນິຍາຍຫຼາຍເລື່ອງ ສະທ້ອນໃຫ້ເຫັນຄວາມສິ້ນຫວັງ ເຊັ່ນ ເລື່ອງ “ຍຸກແຫ່ງຜີ (ghost raising)” ໂດຍນັກຂຽນຍິງ ຖຸ່ຍ ຮ໊ງ. ສຳລັບຊາດທີ່ຮັກຫອມວັນນະກຳເຊັ່ນນີ້ ເມື່ອມີນັກຂຽນຍິງ 3 ຄົນ ໄດ້ຮັບຮາງວັນດ້ານວັນນະກຳສູງສຸດ ຂອງຫວຽດນາມໃຕ້ ໃນປີ 1970 ນັ້ນ ເປັນສັນຍານຂອງຄວາມເຕີບໃຫຍ່ດ້ານສິດເສລີພາບຂອງແມ່ຍິງ. ຫຼັງປີ 1975 ຜູ້ນຳກອມມູນິດລະແວງ ແລະຈຳກັດນັກຂຽນຍິງເຫຼົ່ານັ້ນຫຼາຍເກີນໄປ ຫຼືແມ່ນແຕ່ ລະແວງນັກຂຽນໄຊ່ງ່ອນ ເຊັ່ນ ໂຫວ ພຽນ ຜູ້ມີຄວາມຊ່ຽວຊານກ່ຽວກັບກາມູສ ແລະ ກາຟກາ (Camus and Kafka) ແລະ ສະເຕຟານ

ຊວິກ (Stephan Zweig) ແລະ ບົດວັນນະຄະດີປະຕິວັດຂອງໄຊ.ງ. ການກົດດັນ ໃຫ້ປັນຍາຊົນລະດັບກາງ ຜູ້ມີຄວາມຄຶດເຫັນແຕກຕ່າງ ຈົນພວກເຂົາຈຳຕ້ອງບິນ ອົບ ພະຍົບຈາກຫວຽດນາມ ໄປເປັນກຳມະກອນແບກຫາມໃນທົ່ງນາຢູ່ການາດາ, ຫຼືໄດ້ ເປັນແຕ່ ສະໝຸນລັດ ຢູ່ອາເມລິກາ ຫຼື ນັກຂ່າວຕ່າງປະເທດ ຖືເປັນໄພອັນຕະລາຍ ລະດັບຊາດ. ເຖິງວ່າ ຄົນເຫຼົ່ານີ້ເປັນຝ່າຍສູນເສຍ ແຕ່ປະຫວັດສາດຫວຽດນາມ ກໍ ຕ້ອງບັນທຶກ ໃຫ້ຄວາມສຳຄັນ ຊໍ່ທີ່ໃຫ້ກັບນັກການເມືອງຝ່າຍຮ່າໂນຍ ແລະນາຍທະ ຫານໄຊ່ງອນ.

ສ່ວນວ່າຜູ້ຊະນະ ໄດ້ຄອບຄອງໝົດແຜ່ນດິນ ທີ່ຄັ້ງໜຶ່ງ ດິນນາມຫຼາຍແລ້ວ ເຄີຍຮັບເອົາລະບອບສັກດິນາ, ລາຊາທິລາດ ແລະ ປະທານາທິບໍດີ, ສຸດທ້າຍ ກໍ ແມ່ນລັດຖະບານກອມມູນິດ ທີ່ປົກຄອງຫວຽດນາມພາກເໜືອ ແຕ່ປີ 1954 ມາ ແລະປົກຄອງທົ່ວປະເທດ ແຕ່ປີ 1975 ໂດຍໃນເບື້ອງຕົ້ນ ຍັງຢູ່ຢ່າງປິດປະຕູຈາກພາຍ ນອກນັ້ນເອງ.

ລັດກອມມູນິດ ແມ່ນລັດທີ່ຈະຄົງຢູ່ໄດ້ ດ້ວຍການເຄື່ອນໄຫວຂອງກ້ອນກຳ ລັງມະຫາຊົນ ເພື່ອພັດທະນາເສດຖະກິດ ຕາມແຜນການຂອງລັດ. ໃນປີ 1980 ຫວຽດນາມໄດ້ວາງແນວທາງ "ພາລະກິດປະຫວັດສາດ" ເພື່ອນຳພາປະຊາຊົນ ເຮັດ ສຳເລັດ "ການປະຕິວັດສາມດ້ານ" (ການຜະລິດ, ວິທະຍາສາດ-ເຕັກໂນໂລຊີ ແລະ ວັດທະນະທຳ) ເພື່ອດັບສູນລະບອບສ່ວນຕົວ ເອກະເທດ ແລະ ຕ້ານກັບອິດທິກຳລັງ ປໍລະປັກ. ມະຕິດັ່ງກ່າວ ຖືກຈັດຕັ້ງປະຕິບັດດ້ວຍຫຼາຍຮູບການ ແຕ່ຂັ້ນກຳມາທິການ, ກະຊວງ; ມີລະບົບບໍລິຫານແຫ່ງລັດ, ຕຳຫຼວດລັບ ຫຼືໃນຊື່ "ກອງປ້ອງກັນຄວາມ ສະຫງົບ" (ສ້າງຕັ້ງຂຶ້ນໃນຕົ້ນເດືອນ ກຸມພາ 1946) ລະບົບເຄືອຂ່າຍຜູ້ແທນ ຜູ້ຕາງ ໜ້າອົງກອນຕ່າງໆ ແຕ່ລະດັບສະພາແຫ່ງຊາດ ຈົນຮອດ ກຳມະການຂັ້ນທ້ອງຖິ່ນ (ເຊິ່ງຊາດຕາເວັນຕົກ ຕີລາຄາວ່າ ບໍ່ເປັນປະຊາທິປະໄຕ ຕາມມາດຕະຖານຂອງຕົນ) ແລະ ບັນດາອົງການຈັດຕັ້ງມະຫາຊົນ ເຊັ່ນ ສະຫະພັນກຳມະບານ ແລະສະຫະພັນ ແມ່ຍິງ ເຊິ່ງສຳລັບພັກກອມມູນິດແລ້ວ ຖືວ່າອົງການຈັດຕັ້ງດັ່ງກ່າວ ເປັນດັ່ງສາຍພານ

ສິ່ງຜ່ານນະໂຍບາຍ ແລະ ຮຽກໂຮມ ການສະໜັບສະໜູນຈາກມະຫາຊົນ.

ພັກກອມມູນິດ ແມ່ນຜູ້ຈັດຕັ້ງແລະນຳພາກົງຈັກລັດ ແລະ ກຳລັງປະກອບອາວຸດ. ການຈັດຕັ້ງຂອງພັກ ກໍເບິ່ງຄ້າຍຄືກັບການຈັດຕັ້ງຂອງກອງທັບ. ປະກອບມີສາຍການຈັດຕັ້ງ ທີ່ຂຶ້ນກັບກຸ່ມຜູ້ນຳຂັ້ນສູງ ໃນຊື່ "ກົມການເມືອງ" ລະບົບດັ່ງກ່າວ ເລີ່ມຖືກໃຊ້ໃນສະຫະພາບໂຊວຽດ ໃນປີ 1919. ຕັ້ງແຕ່ກ່ອນການເສຍຊີວິດຂອງ ໂຮ ຈິ ມິນ ປີ 1969 ເລຂາທິການໃຫຍ່ ຂອງພັກກອມມູນິດຫວຽດນາມ ເລ ຢວນ ໄດ້ຍົກບົດບາດໃນການບໍລິຫານປະເທດ ຂອງກົມການເມືອງ ເຊິ່ງປະກອບມີ ຄະນະບຸກຄົນ ແຕ່ 10 ເຖິງ 15 ຄົນ. ແຮ່ງຜ່ານໄລຍະເວລາດົນນານເທົ່າໃດ ແຮ່ງເຫັນໄດ້ວ່າ ພັກກອມມູນິດຫວຽດນາມ ໂດຍລວມ ມີຄວາມຄ້າຍຄືກັນກັບ ລັດທິຂົງຈື້ ຜູ້ອາວຸໂສ ທີ່ເຄີຍປົກຄອງ ຫວຽດນາມ ເມື່ອສະໄໝບູຮານ. ປີ 1976 ສະມາຊິກພັກແມ່ນເທົ່າກັບ 3% ຂອງຈຳນວນປະຊາກອນຂອງປະເທດ ເກືອບບໍ່ມີຄົນໜຸ່ມນ້ອຍເລີຍ, ພາຍຫຼັງ 50 ປີ ຂອງການມີບົດບາດເປັນ "ແນວໜ້າຂອງມະຫາຊົນ" ສະມາຊິກພັກທີ່ເປັນກຳມະກອນ ຍັງມີໜ້ອຍກວ່າ 10% ແລະມີສະມາຊິກພັກເພດຍິງ ແຕ່ພຽງ 17%. ໃນຊຸມປີ 1980 ພີ່ນ້ອງໃກ້ຊິດຂອງ ເລ ຢວນ ກຳມະການກົມການເມືອງ ແລະ ກຳມະການອີກຜູ້ໜຶ່ງ ຊື່ ເລ ດຶກ ໂຖ ໄດ້ເປັນຫົວໜ້າຂອງຫ້ອງການຍຸດທະສາດ ເຊິ່ງຖືວ່າເປັນຕຳແໜ່ງໃກ້ຄຽງກັບກົມການເມືອງ. ສິ່ງນີ້ ເຮັດໃຫ້ຄຶດຄຶນເຖິງ ລະບອບລາຊະວົງຂອງຫວຽດນາມ, ເສັ້ນກັ້ນລະຫວ່າງ ການໄດ້ຕຳແໜ່ງດ້ວຍຄວາມສາມາດ ແລະ ໄດ້ຕຳແໜ່ງດ້ວຍຄວາມເປັນເຄືອຍາດ ຫົດຫາຍໄປ.

ແຕ່ຊຸມປີ 1941 ຫາ 1965, ຂະບວນການ ກອມມູນິດຫວຽດນາມ ບໍ່ໄດ້ມີສາຍພົວພັນແບບພິເສດ ກັບການປະຕິວັດ ກອມມູນິດ ຂອງ ເໝົາ ເຈ ຕຸງ ໃນຈີນ. ແຕ່ການເມີນເສີຍຕໍ່ທັດສະນະການເມືອງ ແລະ ປັດຊະຍາຂອງຈີນ ຜັດແມ່ນເງື່ອນໄຂໜຶ່ງ ທີ່ເຮັດໃຫ້ຂະບວນການກອມມູນິດຫວຽດນາມ ໄດ້ຮັບໄຊຊະນະ ຕໍ່ກັບການປະຕິບັດທີ່ໂຫດຮ້າຍຂອງຝຣັ່ງ (ເຊິ່ງກໍມີແຕ່ພັກການເມືອງທີ່ກຳອຳນາດເທົ່ານັ້ນ ທີ່ໄດ້ຮັບຜົນປະໂຫຍດ), ຊ່ອງຫວ່າງທາງຊົນຊັ້ນ ທີ່ເກີດຂຶ້ນກ່ອນປີ 1954 ກໍໃຫຍ່ໂຕພໍສົມຄວນຈົນ

ກໍ່ໃຫ້ເກີດພັກການເມືອງ ທີ່ຄ້າຍຄືກັບ ພັກສະພາປະຊາຊົນອິນເດຍ (Indian Congress Party), ແລະຄວາມຕື່ນຕົວຂອງປະຊາຊົນ ທີ່ຕ້ອງການໆປະຕິວັດສັງຄົມ. ເໝົາ ທີ່ຫຼັກໆ ເຊື່ອວ່າ ແຮງປາຖະໜາຂອງມະນຸດ ຈະນຳໄປສູ່ການປະຕິວັດໄດ້ ເຖິງ ແມ່ນວ່າ ລະບອບທຶນນິຍົມ ຫຼືຊົນຊັ້ນກຳມະກອນໃນສັງຄົມອຸດສະຫະກຳ ຈະບໍ່ທັນ ເກີດຂຶ້ນກໍຕາມ ການປະຕິວັດທີ່ສົມບູນແບບ ຕາມແນວຄຶດຂອງ ເໝົາ ແມ່ນການທີ່ ສາມາດທັນປ່ຽນແນວຄຶດຂອງບັນດາປັນຍາຊົນ. ໝາຍຄວາມວ່າ ໃຫ້ເຂົາເຈົ້າລົງມາ ຕິດແທດກັບຊາວນາ ຜູ້ທີ່ຖືກຖືວ່າ ເປັນກຳລັງແຮງຂອງການປະຕິວັດ. ນະໂຍບາຍ ປະຕິຮູບທີ່ດິນຂອງເໝົາ ເຮັດໃຫ້ເກີດຄວາມຂັດແຍ່ງພາຍໃນບ້ານຂອງບັນດາຊາວນາ ຍ້ອນຄວາມພະຍາຍາມທີ່ຈະປ່ຽນແປງຄວາມຄຶດທາງການເມືອງແຕ່ເດີມ ຂອງຊົນຊັ້ນ ທຸກຍາກ. ໃນຊຸມປີ 1940 ຜູ້ນຳກອມມູນິດຫວຽດນາມ ເຫຼືອງ ຈິນ (Truong Chin) ເຈົ້າຂອງສົມຍານາມ ທີ່ມີຄວາມໝາຍວ່າ "Long March" ໄດ້ພະຍາຍາມນຳທິດ ສະດີຂອງເໝົາ ເຂົ້າມາໃຊ້ໃນຫວຽດນາມ. ລາວຕ້ອງການທີ່ຈະສ້າງ "ປະຊາທິປະໄຕ ແບບໃໝ່" ໃນວັດທະນະທຳຫວຽດນາມ ທີ່ຈະຮັບໃຊ້ມວນຊົນໄດ້ດີ ໂດຍການນຳສະ ເໜີເລື່ອງ "ຊາດນິຍົມ, ວິທະຍາສາດ ແລະ ປະຊານິຍົມ" ເຊິ່ງເປັນທິດສະດີທີ່ເອົາມາ ຈາກ ເອກະສານ "ປະຊາທິປະໄຕໃໝ່" ຂອງເໝົາ ເຊິ່ງ ຕີພິມປີ 1940. ໃນປຶ້ມຂອງ ເຫຼືອງ ຊື່ "ລັດທິມາກ ແລະ ວັດທະນະທຳຫວຽດນາມ" (1948) ລາວໄດ້ຊີ້ແຈງວ່າ ການສາມັກຄີກັບປະຊາຊົນຜູ້ທຸກຍາກ ສຳຄັນກວ່າການຮ່ຳຮຽນມະຕິ ໂດຍບອກວ່າ ຫວຽດນາມ ບໍ່ຄວນຈະຮຽນເອົາແບບຢ່າງ ຂອງປະເທດທີ່ກ້າວໜ້າດ້ານອຸດສະຫະກຳ ແຕ່ຄວນຈະໝູນໃຊ້ "ກ້ອນກຳລັງຊາວຜູ້ອອກແຮງງານ" ເພື່ອຍົກລະດັບຄວາມຮູ້ທີ່ຍັງ ຈຳກັດ ຂອງ ນັກວິທະຍາສາດ ແລະນັກວິຊາການ ຜູ້ນຳພາ.

ປີ 1950 ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ໄດ້ ຈັດການປະຕິຮູບການສຶກສາ ຢູ່ພາຍໃນເຂດຄວບຄຸມຂອງຕົນ ໂດຍຫຼຸດການສອບເສັງ ຕ່າງໆລົງ, ປ່ຽນແທນບາງວິຊາ ເຊັ່ນ ພາສາຕ່າງປະເທດ ທິດແທນດ້ວຍວິຊາການເພີ່ມ ພູນຜະລິດຜົນ, ແລະ ໃຫ້ສິດແກ່ນັກຮຽນແລະຜູ້ປົກຄອງ ສົ່ງຂ່າວຕຳໜິຄູອາຈານໄດ້. ການປະຕິຮູບດັ່ງກ່າວ ຖືກເລີກລົ້ມ ຍ້ອນມີຄຳເຫັນວ່າ ບໍ່ແທດເໝາະໃນ "ພາວະສົງ ຄາມ" ເມື່ອປີ 1956.

ແຕ່ການປະຕິຮູບທີ່ດິນຂອງ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ໃນ ປີ 1953 ຖືເປັນອິດທິພົນສູງສຸດ ຂອງລັດທິເໝົາ ເພື່ອຮັບຜິດຊອບການແບ່ງປັນທີ່ດິນ ທີ່ເຄີຍຍຶດຄອງໂດຍ ເຈົ້າທີ່ດິນ ຫຼື "ອິດທິກຳລັງຕ້ານການປະຕິວັດ" ໃຫ້ກັບຊາວນາ ຈຳນວນກວ່າ ສອງລ້ານຄອບຄົວ. ລັດຖະບານຫວຽດນາມໄດ້ສ້າງຕັ້ງ "ຄະນະສານ ພິເສດຂຶ້ນ" ປະກອບດ້ວຍກຸ່ມຊາວນາ ຜູ້ທຸກຍາກ ເພື່ອປາບປາມກຸ່ມຕໍ່ຕ້ານ ແລະຂະ ນະດຽວກັນ ກໍປະຕິຮູບ ພັກກອມມູນິດໄປໃນຕົວ ໂດຍການລະດົມໃຫ້ພະນັກງານອາ ວຸໂສ ຈຳນວນຫຼາຍ ອອກໄປສ້າງເສດຖະກິດດ້ວຍການເປັນ "ຊາວນາແບບຢ່າງ" (ພັກກອມມູນິດມີສະມາຊິກ 20,000 ຄົນ ໃນປີ 1946 ຮອດປີ 1950 ຂະຫຍາຍເປັນ 700,000 ຄົນ ແລະຫຼຸດລົງມາເປັນ 500,000 ຄົນ ໃນປີ 1960 ເຊິ່ງເປັນຜົນມາຈາກການປະຕິຮູບ). ນະໂຍບາຍປະຕິຮູບທີ່ດິນດັ່ງກ່າວ ເຊິ່ງມີທີ່ມາ ຈາກພາບໂຄສະນາກ່ຽວກັບສັງຄົມຊົນນະບົດ ຂອງລັດທິເໝົາ ຖືກຕໍ່ຕ້ານ ຈົນເຖິງ ຂັ້ນເກີດຄວາມຮຸນແຮງຂຶ້ນ. ເຫຼືອງ ຈິນ ລາອອກຈາກຄະນະກົມການເມືອງ ລັດຖະ ບານສະແດງຄວາມເສຍໃຈ ຕໍ່ "ຄວາມຜິດພາດທີ່ຮ້າຍແຮງ ດັ່ງກ່າວ".

ແຕ່ລັດຖະບານຮ່ຳໂນຍ ກໍຍັງມີຄວາມຜູກພັນຢູ່ນຳການປະຕິວັດຂອງ ເໝົາ ຈົນຮອດຊຸມປີ 1960, ຈາກນັ້ນ ສົງຄາມລະຫວ່າງຫວຽດນາມເໜືອ ແລະສະຫະລັດ ອະເມລິກາ ເຮັດໃຫ້ ຝ່າຍຫວຽດນາມ ຕ້ອງໄດ້ຊອກຫາ ອາວຸດທີ່ທັນສະໄໝ ຈາກ ສະຫະພາບໂຊວຽດ. ລັດຖະບານຫວຽດນາມ ຈຶ່ງຫັນເຂົ້າຫາ ໂຊວຽດ ຢ່າງເຕັມໂຕ ແລະ ມີສັນຍາແບບພິເສດ ຮ່ວມກັນກັບຊາດມະຫາອຳນາດ ທາງວິທະຍາສາດ ແລະ ອຸດສະຫະກຳນັ້ນ, ການກະທຳດັ່ງກ່າວ ສ້າງຄວາມບໍ່ພໍໃຈໃຫ້ກັບຂະບວນການປະຕິ ວັດ ວັດທະນະທຳຂອງເໝົາ ເຊິ່ງແຜ່ອິດທິພົນ ເຂົ້າຮອດຫວຽດນາມ ດ້ວຍການສົ່ງ ທະຫານຈີນ ຈຳນວນ 30,000 ຄົນ ມາແຕ່ປີ 1965 ໃນຖານະຜູ້ມາສ້ອມແປງ ຖະໜົນ ແລະທາງລົດໄຟ ທີ່ຖືກສະຫະລັດ ຖິ້ມລະເບີດໃສ່. ກ່ອນໄລຍະດັ່ງກ່າວ ການຊ່ວຍເຫຼືອທາງເສດຖະກິດ ຂອງສະຫະພາບໂຊວຽດ ກໍໄດ້ເຂົ້າມາມີອິດທິພົນໃນ ຫວຽດນາມແລ້ວ, ໃນແຜນການແຫ່ງຊາດຫ້າປີ ສະບັບທຳອິດ (1961-1965) ໂຊ ວຽດກໍເຂົ້າມາຊ່ວຍສ້າງໂຮງງານຜະລິດໄຟຟ້າ ແລະ ຊ່ວຍຟື້ນຟູ ການຂຸດຄົ້ນຖ່ານ

ທີນ ຢູ່ພາກເໜືອຫວຽດນາມ. ການເຄື່ອນໄຫວດັ່ງກ່າວ ເປັນດັ່ງການຕໍ່ຕ້ານລັດທິເໝົາ ເຮັດໃຫ້ຫວຽດນາມ ຕ້ອງຫາຈຸດດຸ່ນດ່ຽງ ໃນຄວາມສຳພັນລະຫວ່າງ ສອງມະຫາອຳນາດກອມມູນິດ.

ລະຫວ່າງປີ 1958-1964 ຊາວນາຢູ່ພາກເໜືອຫວຽດນາມ ສ່ວນຫຼາຍ ໄດ້ມາເປັນລູກຈ້າງ ຂອງນິຄົມກະສິກຳ, ໂດຍສະເລ່ຍ ແຕ່ລະນິຄົມ ຈະມີຊາວນາ ເຂົ້າຮ່ວມ ປະມານ 83 ຄອບຄົວ ຈຳນວນນິຄົມທັງໝົດມີ 31,908 ແຫ່ງ. ຈຸດປະສົງຂອງການເຕົ້າໂຮມຊາວນານັ້ນ ແມ່ນເພື່ອທຳການຜະລິດຢ່າງມີແຜນການ ໃນແບບອຸດສະຫະກຳ ເພື່ອສ້າງພື້ນຖານໃຫ້ແກ່ການປະຕິວັດກະສິກຳໃນຫວຽດນາມເໜືອ. "ກຸ່ມນັກທຸລະກິດ" ຢູ່ຫວຽດນາມເໜືອ (ກຸ່ມຂອງຄອບຄົວຫົວໜ່ວຍທຸລະກິດປະມານ 1,500 ຄອບຄົວ) ຖືກສັ່ງໃຫ້ເຂົ້າຮ່ວມເຮັດທຸລະກິດ ໃນຮູບແບບທຸລະກິດປະສົມ ກັບພາກລັດ ຂະນະດຽວກັນ ປັນຍາຊົນຈຳນວນໜຶ່ງ ທີ່ບໍ່ເຫັນພ້ອມນຳລະບອບກອມມູນິດ ກໍໄດ້ເລີ່ມເຄື່ອນໄຫວ ສວຍໃຊ້ໂອກາດທີ່ເກີດຄວາມຂັດແຍ່ງ ໃນການປະຕິຮູບທີ່ດິນ, ໂດຍການນຳຂອງ ນັກຂ່າວຜູ້ມີຊື່ສຽງ ຟານ ໂກຍ (Phan Khoi) ຜູ້ມີຜົນງານການຂຽນກ່ຽວກັບ ການກ້າວຂຶ້ນສູ່ຍຸກສະໄໝໃໝ່ຂອງຫວຽດນາມ ມາແຕ່ຊຸມປີ 1920. ກຸ່ມປັນຍາຊົນດັ່ງກ່າວ ຕ້ອງການໃຫ້ຢຸດເຊົາການຮວມສູນອຳນາດ ແລະສະເໜີວ່າ ຫວຽດນາມ ຍັງບໍ່ພ້ອມທີ່ຈະກ້າວຂຶ້ນສູ່ສັງຄົມນິຍົມ ເພາະຕ້ອງໄດ້ສ້າງຄວາມຮັ່ງມີໃຫ້ປະເທດ ຜ່ານທຶນນິຍົມເສຍກ່ອນ. ກຸ່ມນັກຂຽນ ແລະປົດຂຽນເຫຼົ່ານັ້ນ ຖືກໂຈມຕີຢ່າງຮຸນແຮງໂດຍ ກຸ່ມ "ຊ້າຍຈັດ" ທີ່ນິຍົມລັດທິເໝົາ ແຕ່ກໍມີກຸ່ມ "ຝ່ຽງຂວາ" ພາຍໃນພັກ ທີ່ສະເໜີວ່າ ການສ້າງເປັນນິຄົມກະສິກຳຂອງຫວຽດນາມ ແມ່ນຍັງ "ໄວເກີນໄປ".

ເນື່ອງຈາກວ່າ ລັດກອມມູນິດຫວຽດນາມ ໄດ້ຂະຫຍາຍຕົວໂດຍປາສະຈາກການຕໍ່ຕ້ານແບບຈິງຈັງ, ລັດຈຶ່ງໄດ້ໃຫ້ຄວາມສຳຄັນກັບວຽກງານ ວັນນະຄະດີ ສຶກສາອົບຮົມແນວຄຶດ, ການກ້າວສູ່ຄວາມທັນສະໄໝ ແລະ ກະຈາຍລະບົບການຮັກສາສຸຂະພາບ ໃຫ້ກວ້າງຂວາງທີ່ສຸດ. ປີ 1946 ມີການສ້າງຕັ້ງສະຖາບັນສາທາລະນະສຸກ ກະຈາຍຕາມບ້ານຕ່າງໆ ທົ່ວພາກເໜືອ ເຊິ່ງເປັນເຫດການປະຫວັດສາດສຳຄັນຂອງ

ຫວຽດນາມ, ເຮັດໃຫ້ອາຍຸຍືນສະເລ່ຽ ຂອງຄົນຫວຽດນາມ ເພີ່ມຂຶ້ນຈາກ 35 ປີ ໃນ ປີ 1940 ເປັນ 58 ປີ ໃນປີ 1975. ລັດຖະບານຍັງພະຍາຍາມ ນຳແນວຄຶດແບບ ຝຶນຂົງຈື້ ເຂົ້າມາໃຊ້ ເພື່ອສ້າງຄວາມສະເໝີພາບໃຫ້ແກ່ແມ່ຍິງ ຜ່ານກົດໝາຍວ່າ ດ້ວຍການແຕ່ງດອງແລະຄອບຄົວ (ທັນວາ 1959) ການມີເມຽນ້ອຍ, ການບັງຄັບໃຫ້ ແຕ່ງດອງ ຫຼື ແຕ່ງດອງແຕ່ອາຍຸນ້ອຍ, ການເລື່ອນການແຕ່ງດອງ ຍ້ອນສະມາຊິກໃນ ເຮືອນເສຍຊີວິດ, ການປະຕິເສດບໍ່ໃຫ້ແມ່ໝ້າຍມີສິດໃນຊັບສິນ ຫຼືແຕ່ງດອງໃໝ່, ແລະ ວັດທະນະທຳຫຼ້າຫຼັງອື່ນໆ ຖືກເກືອດຫ້າມ ຕາມກົດໝາຍດັ່ງກ່າວ. ແຕ່ວ່າ ເຖິງຈະ ປະກາດໃຊ້ເປັນເວລາຫຼາຍສິບປີແລ້ວ ບົດບັນຍັດໃນກົດໝາຍສະບັບນີ້ ກໍຍັງມີຜົນ ສັກສິດໜ້ອຍກວ່າ ປະເພນີທີ່ປະຕິບັດສືບຕໍ່ກັນມາ.

ໃນປີ 1976 ບໍ່ຮອດໜຶ່ງປີ ຫຼັງຈາກສະຫະລັດ ຖອນຕົວອອກຈາກໄຊ່ງ່ອນ, ຜູ້ນຳກອມມູນິດຫວຽດນາມ ໄດ້ຮວມປະເທດຫວຽດນາມ ທັງສອງພາກສ່ວນເຂົ້າກັນ ຢ່າງເປັນທາງການ ສະຖາປະນາ ສາທາລະນະລັດ ສັງຄົມນິຍົມຫວຽດນາມຂຶ້ນ ແລະ ໄຊ່ງ່ອນກໍຖືກປ່ຽນຊື່ເປັນ ນະຄອນໂຮ່ຈິມິນ. ນັກສຶກສາຕາມຕົວເມືອງພາກໃຕ້ ທີ່ເຄີຍ ເຄື່ອນໄຫວຕໍ່ຕ້ານລັດຖະບານຫຸ່ນຂອງອາເມລິກາ ໄດ້ເຂົ້າຮ່ວມການຈັດຕັ້ງ ເພື່ອລຶບ ລ້າງ ລະບອບລ່າເມືອງຂຶ້ນແບບໃໝ່. ໃນເມືອງເຫວ້ ບ່ອນດຽວ, ມີຄຳສັ່ງໃຫ້ເຮືອນ ແຕ່ລະຫຼັງ ແລະບັນດາຮ້ານກາເຟ ຕ້ອງໄດ້ສົ່ງປຶ້ມແລະວາລະສານ ຂອງຝ່າຍຂວາ ໃຫ້ທ້ອງການຖະແຫຼງຂ່າວ ແລະ ວັດທະນະທຳ ແລ້ວປຶ້ມເຫຼົ່ານັ້ນກໍຖືກທຳລາຍໝົດ. ທ້ອງສະໝຸດມວນຊົນໃໝ່ໆຖືກຕັ້ງຂຶ້ນໃນຕົວເມືອງຕ່າງໆຢ່າງຮີບດ່ວນ ແລະປຶ້ມໃນນັ້ນ ແມ່ນປຶ້ມທີ່ຖືກຈັດພິມກຽມໄວ້ແລ້ວ ຢູ່ໃນເຂດຫວຽດນາມເໜືອ ແຕ່ກ່ອນປີ 1975 ສະໜອງຄວາມຕ້ອງການໆອ່ານຂອງມວນຊົນ ໃນລະຍະປ່ຽນຜ່ານ. ຊາວຫວຽດນາມ ໃຕ້ນັບແສນຄົນ ເຊິ່ງປະກອບດ້ວຍ ບັນດາທະຫານ ໃນອະດີດກອງທັບຝ່າຍໃຕ້, ຜູ້ ອຳນວຍການໂຮງໝໍ ຮອດພະສົງ ເຊິ່ງລວມມີຍາດພີ່ນ້ອງຂອງຝ່າຍວຽດກົງຢູ່ນຳ ຖືກ ພາໄປທີ່ “ຄ້າຍສຳມະນາ”. ຄະນະກຳມການເມືອງ ໃນຮ່າໂນ່ຍ ສາມາດສ້າງຕັ້ງ “ຄະ ນະປົກຄອງແຂວງ” ທາງພາກໃຕ້ຂຶ້ນຢ່າງໄວວາ ດັບຄວາມຝັນຂອງຜູ້ທີ່ຢາກໃຫ້ຫວຽດ ນາມ ປົກຄອງແບບສະຫະພັນທະລັດ ເພື່ອໃຫ້ຫວຽດນາມໃຕ້ຍັງຄົງມີອຳນາດ ໃນການ

ຕັດສິນບາງບັນຫາຢູ່. ຢູ່ໄຊ່ອນ ມີການສ້າງ ສຸສານລຳລຶກເຖິງທະຫານວຽດກົງ ໃສ່ ບ່ອນທີ່ ເມື່ອກ່ອນ ແມ່ນໂຮງເຕັ້ນລຳ ເຣັກສ (Rex).

ການປະຕິຮູບເຂດຊົນນະບົດທາງພາກໃຕ້ພາຍຫຼັງສົງຄາມ ຊ້ຳຜັດປະຕິບັດໄດ້ ແຕ່ໃນທາງທິດສະດີ, ເພື່ອການປະຕິຮູບດັ່ງກ່າວ ຮຽກຮ້ອງໃຫ້ມີສອງເງື່ອນໄຂ ຄື ເຈົ້າ ທີ່ດິນຜູ້ຂູດຮີດ ເຊິ່ງສືບທອດມາຍາວນານນັບສະຕະວັດ ເປັນຜູ້ທີ່ຊາວນາຽດຊັງທີ່ສຸດ ແລະ ນັກເຄື່ອນໄຫວຂອງພັກ ເຊິ່ງມີພື້ນຖານມາຈາກຊົນຊັ້ນຊາວນາ, ຫຼື ກໍເປັນຊາວ ນາເອງເລີຍ. ແຕ່ທັງສອງເງື່ອນໄຂໄດ້ຖືກທຳລາຍໄປແລ້ວ ໃນລະຫວ່າງສົງຄາມ. ໜ່ວຍ ສືບຂ່າວລັບຂອງສະຫະລັດ (CIA) ໄດ້ປະຕິບັດການກໍ່ການຮ້າຍ ເຊັ່ນ "ປະຕິບັດການ ຟີນິກ" (Operation Phoenix) ເລີ່ມດຳເນີນແຕ່ປີ 1967 ໂດຍເຂົ້າໂຈມຕີບ້ານທີ່ ຄາດວ່າ ມີຝ່າຍກອມມູນິດເຂົ້າມາເຄື່ອນໄຫວ. ສະມາຊິກພັກກອມມູນິດຂັ້ນຮາກຖານ ຫຼາຍໝື່ນຄົນ ຖືກສັງຫານ ຍ້ອນປະຕິບັດການດັ່ງກ່າວ. ໃນຊຸມປີ 1970 ລັດຖະບານ ກອມມູນິດ ຍັງບໍ່ສາມາດຈູງໃຈຊາວຊົນນະບົດ ທາງພາກໃຕ້ ໃຫ້ຍອມຮັບນັບຖືຕົນໄດ້ ເທົ່າທີ່ຄວນ ເພື່ອປ່ຽນແທນຜູ້ນຳເກົ່າໃນພາກໃຕ້ ຕັ້ງແຕ່ ລະບອບຂອງລັດຖະບານ ທີ່ ມາຈາກເຈົ້າທີ່ດິນ ຂອງ ຢັ້ງ ຖືກປ່ຽນແທນໂດຍລັດຖະບານທະຫານ ທີ່ມີສ່ວນແບ່ງ ມະຫາສານກັບຜົນປະໂຫຍດຂອງນັກທຸລະກິດ, ເຮັດໃຫ້ປະຊາຊົນເຂດນີ້ ໝົດສັດທາ ນຳການປ່ຽນແປງອຳນາດການປົກຄອງ. ໄດ້ມີກົດໝາຍປະຕິຮູບທີ່ດິນເທື່ອໃໝ່ ໃນປີ 1970 ຂອງຫວຽດນາມໃຕ້, ການທີ່ຊາວຫວຽດນາມຕ້ອງຕໍ່ສູ້ກັນເອງ, ການຖອກເທ ເງິນຊ່ອຍເຫຼືອຢ່າງບໍ່ອັ້ນຂອງຝ່າຍສະຫະລັດ ເພື່ອສ້າງລະບົບກະສິກຳແບບໂລກຫົນນິ ຍົມ ທັງພັນເຂົ້າປັບປຸງ ແລະ ເຄື່ອງຈັກການກະເສດ ເຊິ່ງແຈກຢາຍໃຫ້ ຈົນຊາວນາ ທຸກຄົນສາມາດນຳໃຊ້ໄດ້, ທັງໝົດເຫຼົ່ານີ້ ເຮັດໃຫ້ພື້ນຖານ "ວັດທະນະທຳດັ້ງເດີມ" ຂອງຊົນນະບົດພາກໃຕ້ຫວຽດນາມ ສູນຫາຍໄປ. ຫຼັງປີ 1975 ຜູ້ຖືກຳມະສິດທີ່ດິນ ສ່ວນໃຫຍ່ ໃນແຂວງເຂດສາມຫຼ່ຽມແມ່ນ້ຳຂອງ ແມ່ນຊາວນາເຊິ່ງມີຖານະດີ ເຂົາເຈົ້າ ຜະລິດເຂົ້າ ແລະສົ່ງເຂົ້າສູ່ຕະຫຼາດຢ່າງເສລີ, ເຂົາເຈົ້າບໍ່ຄ່ອຍສົນໃຈນຳການເຕົ້າໂຮມ ເປັນສະຫະກອນ, ບາງຄັ້ງ ກໍມີລັກສະນະຕໍ່ຕ້ານອີກຊ້ຳ. ລັດຖະບານກອມມູນິດ ແຈກ ຢາຍທີ່ດິນ 265,400 ເຮັກຕາ ຄືນໃຫ້ຄອບຄົວຊາວນາພາກໃຕ້ ກວ່າ 440,000

ຄອບຄົວ ລະຫວ່າງປີ 1975 ຫາ 1984. ແມ່ນຈະຜ່ານເວລາຮອດໜຶ່ງທົດສະວັດ ກໍຕາມ ແຕ່ລັດຖະບານ ກໍຍັງບໍ່ສາມາດຄວບຄຸມ ການຄ້າຂາຍຂອງປະຊາຊົນ ຕາມ ບ້ານຕ່າງໆ ໃນພາກໃຕ້ໄດ້, ບໍ່ຮອດເຄິ່ງໜຶ່ງຂອງຊາວນາເຫຼົ່ານັ້ນ ທີ່ເຂົ້າຮ່ວມ ກຸ່ມການ ຜະລິດທີ່ຄ້າຍຄືກັບສະຫະກອນ ເຊັ່ນ ກຸ່ມຮ່ວມນຳໃຊ້ເຄື່ອງຈັກກະສິກຳ ເປັນຕົ້ນ. ຍິ່ງ ກວ່ານັ້ນ ຂະບວນການເຄື່ອນໄຫວຂອງການປະຕິວັດ ໃນພາກໃຕ້ ກໍບໍ່ແຂງແຮງ, ສະ ມາຊິກພັກຂາດວິໄນ ເຮັດໃຫ້ມວນຊົນມີອະຄະຕິ ຕໍ່ພັກກອມມູນິດ. (ຂະນະທີ່ ມີພົນ ລະເຮືອນຢູ່ພາກໃຕ້ຫວຽດນາມຮອດ 9,500,000 ໃນປີ 1983 ແຕ່ສະມາຊິກພັກ ມີ ພຽງ 34,900 ຄົນ) ຊາວຄ້າຂາຍ ແລະຊາວນາ ສາມາດຊື້ຈ້າງພະນັກງານຂອງລັດ ໂດຍສະເໜີສ່ວນແບ່ງກຳໄລຈາກການຄ້າຂອງເຂົາເຈົ້າໃຫ້ ເປັນສະເໜີອນດັ່ງການກັບ ຄືນໄປສູ່ ສາຍພົວພັນລະຫວ່າງພໍ່ຄ້າ ແລະຂຸນນາງໃນອະດີດ.

ສົງຄາມໄລຍະສັ້ນໆແຕ່ຮຸນແຮງ ກັບຈີນ ໃນເດືອນກຸມພາ ປີ 1979 ແຮ່ງຊ້ຳ ຕື່ມຄວາມຫຍຸ້ງຍາກ ໃຫ້ກັບການປະຕິວັດຫວຽດນາມ. ກຳລັງທະຫານຈີນ 200,000 ຄົນ ບຸກເຂົ້າແຂວງຕາມຊາຍແດນພາກເໜືອຫວຽດນາມ ແລະສາມາດຍຶດເທດສະ ບານຂອງຫຼາຍແຂວງ ແຕ່ຈີນກໍຕ້ອງຍອມຈຳນົນ ໃນເດືອນມີນາ ປີດຽວກັນ ພາຍຫຼັງ ຖືກກອງທັບຫວຽດນາມຕີຄືນຢ່າງດຸເດືອດ. ກອງທັບຫວຽດນາມສະແດງໃຫ້ເຫັນວ່າ ບໍ່ ໄດ້ລະເລີຍຕໍ່ການປ້ອງກັນນະຄອນຮ່າໂນຍ ຄືທີ່ຈີນຫວັງເອົາໄວ້.

ມີຫຼາຍສາເຫດເຄັ່ງຮ້ອນ ເຮັດໃຫ້ເກີດສົງຄາມດັ່ງກ່າວ. ຈີນແລະຫວຽດນາມ ຊ່ວງເສັງກັນວ່າ ໃຜຈະໄດ້ເປັນຜູ້ມີບົດບາດສຳຄັນທີ່ສຸດ ຕໍ່ການປະຕິວັດໃນລາວ ແລະ ກຳປູເຈ. ແຕ່ພາຍຫຼັງປີ 1976 ລັດຖະບານ ໂປນ ປົດ (Pol Pot) ໃນກຳປູເຈ ໄດ້ສະແດງວ່າ ບໍ່ພໍໃຈຕໍ່ຫວຽດນາມ ໂດຍສົ່ງທະຫານບຸກເຂົ້າຊາຍແດນພາກໃຕ້ຫວຽດ ນາມ. ຫວຽດນາມຕອບໂຕ້ຄືນ ແລະ ບຸກເຂົ້າກຳປູເຈ ແລະ ຈັດຕັ້ງລັດຖະບານທີ່ຕົນ ເຊື່ອຖືໄດ້ ໃນພະນົມເປັນ (ເດືອນມັງກອນ 1979) ສະແດງໃຫ້ທົ່ວໂລກເຫັນ ອຳນາດ ຂອງຫວຽດນາມ, ອິດທິພົນຕໍ່ການເມືອງຂະເໝນ ແລະ ສ້າງຄວາມອັບປະຍົດໃຫ້ ໂປນ ປົດ ຜູ້ຝັກໃຝ່ຈີນ. ເຫຼືອງ ຈົນ ເຊິ່ງຄັ້ງໜຶ່ງ ແມ່ນຜູ້ສັດທາລັດທິເໝົາ ຍັງໄດ້

ຊີ້ແຈງຕໍ່ສາທາລະນະ ກ່ຽວກັບຍຸດທະສາດທີ່ໜ້າຍ້ານກົວຂອງ ຈີນ ໃນປີ 1979 ວ່າ ຈີນຫວັງຈະປິດລ້ອມຫວຽດນາມ ຈາກດ້ານຫຼັງ ແລະ ຢາກຈະກືນກິນຫວຽດນາມ ໂດຍການສົ່ງຊາວຈີນໃນຖານະຜູ້ອົບພະຍົບ ຈຳນວນຫຼາຍ ເຂົ້າສູ່ກຳປູເຈຍ ປະເທດເຊິ່ງ ໂປນ ປົດ ໄດ້ສັ່ງຫານເພື່ອນຮ່ວມຊາດຂອງຕົນ ຢ່າງຫຼວງຫຼາຍ.

ນອກຈາກກຳປູເຈຍແລ້ວ ຄວາມສຳພັນລະຫວ່າງຈີນແລະຫວຽດນາມ ທີ່ແຕກ ຫັກໄປ ພ້ອມກັບຄວາມຂັດແຍ່ງດັ່ງກ່າວ ໄດ້ເຂົ້າໄປປະສົມໃນຄວາມຂັດແຍ່ງຂອງ ສອງຂວັ້ນມະຫາອຳນາດຂອງໂລກ ຄື ສະຫະລັດ ແລະ ໂຊວຽດ. ຈີນຍ້ານກົວອຳນາດ ຂອງໂຊວຽດ ແລະ ຕ້ອງການສ້າງຄວາມສຳພັນທີ່ດີນຳ ສະຫະລັດ ຕັ້ງແຕ່ກ່ອນສົງ ຄາມ ຫວຽດນາມຈະສິ້ນສຸດ ຫວຽດນາມເປັນພັນທະມິດກັບສະຫະພາບໂຊວຽດ ນັ້ນ ເປັນສັນຍານເຕືອນຈີນ. ຍັງມີຄວາມຂັດແຍ່ງ ກ່ຽວກັບຊາຍແດນທາງບົກແລະທາງທະ ເລ, ຄວາມບໍ່ພໍໃຈຕໍ່ຊາວຈີນອົບພະຍົບ ທີ່ເຂົ້າມາອາໄສໃນຫວຽດນາມ ທີ່ໄດ້ສິດເປັນ ຄົນສອງສັນຊາດ ມາຈີນຮອດປີ 1978. ຊາວຈີນຕ່າງດ້າວ ທີ່ເຮັດການຄ້າຂາຍ ຢູ່ ຫວຽດນາມ, ບັດນີ້ ຢູ່ໃນສະຖານະພາບແກະດຳ ຍ້ອນວ່າລັດຖະບານ ຮ່າໂນຍເອງ ບໍ່ສາມາດສ້າງຄວາມເຊື່ອໝັ້ນ ໃນການປົກຄອງພາກໃຕ້ ຫຼັງປີ 1975. ໃນເມື່ອຄວາມ ຂັດແຍ່ງລະຫວ່າງ ຈີນ ແລະ ຫວຽດນາມເຄັ່ງຕຶງຂຶ້ນ, ຊາວອົບພະຍົບຈີນທີ່ເປັນຊົນ ເຜົ່າກຸ່ມນ້ອຍ ແລະທະຫານນັກຮົບເກົ່າ ໃນກອງທັບຫວຽດນາມ ພ້ອມທັງສະມາຊິກ ພັກກອມມູນິດ, ກຳມະກອນໂຮງງານ, ແພດ, ຄົນຂາຍປຶ້ມ ຮອດຊາວນາ ໄດ້ ອົບພະຍົບໜີຈາກຫວຽດນາມໄປ. ເຂົາເຈົ້າອົບພະຍົບໄປທາງຕາເວັນຕົກສຽງໃຕ້ຂອງ ຈີນ, ທາງທະເລຈີນ ສູ່ ຮົ່ງກົ່ງ ແລະ ປະເທດ ອາຊີອາຄະເນອື່ນໆ ທີ່ບໍ່ໄດ້ເປັນກອມມູນິດ, ໃນຖານະເປັນສ່ວນໜຶ່ງຂອງກະແສຂັດແຍ່ງນີ້ ເຂົາເຈົ້າຖືກເອີ້ນວ່າ “ຄົນຜູ້ມານຳເຮືອ”. ພາຍຫຼັງສົງຄາມ ປີ 1979 ບັນດາຜູ້ນຳຂອງຈີນ ຍັງມີຄວາມຄຶດກ່ຽວກັບຫວຽດນາມ ໃນຖານະ “ຊາວອານາມ” ຜູ້ຕິດໜີ້ຄວາມສີວິໄລຈາກຈີນ. ຝ່າຍຜູ້ນຳຫວຽດນາມ ກໍ ຍົກຍ້ອງ ເລ ໂລຍ (Le Loi) ຂຶ້ນມາ ຢ່າງບໍ່ມີຂໍ້ສົງໄສໃດໆ.

ຜົນຂອງສົງຄາມ ແມ່ນຄວາມເສົ້າ. ລັດທິມາກບອກວ່າ ສັງຄົມນິຍົມ ແມ່ນ ປາສະຈາກຄວາມເປັນທຶນນິຍົມ ແລະຈັກກະພັດນິຍົມ ຄືເປັນລັດທິແຫ່ງສັນຕິພາບ. ແຕ່ເຫດການຄັ້ງນັ້ນ ຢັ້ງຢືນວ່າ ມີສົງຄາມລະຫວ່າງສອງລັດກອມມູນິດ ເກີດຂຶ້ນເປັນ ຄັ້ງທຳອິດ ຢ່າງເປີດແປນ. ມີຄຳຖາມເກີດຂຶ້ນ ຖາມເຖິງຄວາມບໍລິສຸດດ້ານແນວຄຶດ ຂອງທັງສອງລັດຖະບານ, ຢ່າງໜ້ອຍກໍມາຈາກຊາວຈີນແລະຫວຽດນາມ ທີ່ມີຫົວຄຶດ ກອມມູນິດເຕັມຂັ້ນ, ແລະແນ່ນອນວ່າ ການປ່ຽນແປງໃນພັກ ຕ້ອງໄດ້ເກີດຂຶ້ນ. ຜູ້ທີ່ ຖືກຈັບຕາຫຼາຍທີ່ສຸດ ສຳລັບຫວຽດນາມແມ່ນ ຫວາ ວັນ ຮວນ (Hoang Van Hoan) ອະດີດຜູ້ຊ່ວຍຂອງ ໂຮ ຈິ ມິນ ແລະ ຢູ່ໃນຄະນະກົມການເມືອງ ຮອດປີ 1976. ເຊິ່ງເປັນຜູ້ລີ້ໄພທາງການເມືອງ ຂັ້ນສູງສຸດ ທີ່ເຂົ້າໄປໃນຈີນ ໃນປີ 1979. ເຫດການ ຕ່າງໆທີ່ເກີດຂຶ້ນ ໃນໄລຍະນັ້ນ ແລະການຕັດຄວາມສຳພັນ ກັບ ສະຫະລັດຢ່າງສົມບູນ ເຮັດໃຫ້ຫວຽດນາມ ຕ້ອງໄດ້ເພິ່ງພາ ສະຫະພາບໂຊວຽດ ແລະນັ້ນຍິ່ງຊ້ຳຕື່ມ ຄວາມ ຂັດແຍ່ງທີ່ມີກັບຈີນຢູ່ແລ້ວ. ລັດຖະບານຮ່າໂນຍ ເຊັນສັນຍາມິດຕະພາບ ກັບສະຫະ ພາບໂຊວຽດ ໃນເດືອນພະຈິກ 1978 ເຊິ່ງລວມມີການຮ່ວມມື ທາງການທະຫານນຳ. ກ່ອນໜ້ານັ້ນ ໃນເດືອນມິຖຸນາ 1978 ກໍໄດ້ເຂົ້າຮ່ວມ ຄະນະກຳມະການ ຮ່ວມມື ຊ່ວຍເຫຼືອທາງເສດຖະກິດ (COMECON) ເຊິ່ງແມ່ນກຸ່ມການຄ້າ ທີ່ສະຫະພາບໂຊ ວຽດເປັນປະທານ, ມູນຄ່າການຄ້າກັບກຸ່ມ COMECON ທຽບກັບ ມູນຄ່າການຄ້າກັບ ຕ່າງປະເທດ ທັງໝົດຂອງຫວຽດນາມ ເພີ່ມຂຶ້ນຈາກ ຕ່ຳກວ່າ 50% ໃນປີ 1976 ເປັນ 75% ໃນປີ 1985.

ນອກຈາກບັນຫາການເມືອງພາຍໃນ ແລະ ຄວາມຂັດແຍ່ງດຸເດືອດກັບຈີນ ແລ້ວ, ບັນຫາໃຈກາງອີກອັນໜຶ່ງ ຂອງຫວຽດນາມສະໄໝໃໝ່ ແມ່ນ ຈະນຳໃຊ້ຮູບ ແບບເສດຖະກິດ ຕາມລັດທິມາກ-ເລນິນ ໃຫ້ສາມາດຮັບໃຊ້ການພັດທະນາເສດຖະ ກິດ ຂອງ ກອມມູນິດ ທີ່ມີປະຊາກອນໜາແໜ້ນທີ່ສຸດ ເປັນອັນດັບສາມນີ້ ໄດ້ແນວໃດ (ປະຊາກອນຫວຽດນາມ ເພີ່ມຂຶ້ນເປັນສອງເທົ່າ ຈາກ 30 ລ້ານຄົນ ໃນປີ 1960 ເປັນ 60 ລ້ານຄົນ ໃນປີ 1985). ບັນຫາໃຫຍ່ຂອງການໝູນໃຊ້ ຮູບແບບເສດຖະກິດ ດັ່ງກ່າວ ຄື ລັດຈະຕ້ອງມີສ່ວນເກີນ ທີ່ສາມາດເອົາມາລົງທຶນໄດ້, ປັດໄຈສ່ວນເກີນດັ່ງກ່າວ

ແມ່ນເຄີຍຢູ່ໃນຄວາມຄອບຄອງຂອງຊົນຊັ້ນສູງ ກ່ອນການປະຕິວັດ, ລັດຈຳຕ້ອງມີ ປັດໄຈສ່ວນເກີນນີ້ ເມື່ອບວກກັບລາຍໄດ້ຈາກພາສີພາກກະສິກຳ ກໍຈະກາຍເປັນທຶນ ຮອນ ເພື່ອກໍ່ສ້າງອຸດສະຫະກຳທັນສະໄໝ ແລະເມື່ອຮວມເຂົ້າກັບລະບົບການອາງ ແຜນຈາກສູນກາງ ກໍຈະກາຍເປັນເຄື່ອງມືການຄຸ້ມຄອງເສດຖະກິດຂອງລັດໄດ້. ແຕ່ ລະບອບສັກດິນາໃນຫວຽດນາມ ບໍ່ໄດ້ສ້າງໃຫ້ມີປັດໄຈສ່ວນເກີນເຫຼົ່ານັ້ນ, ຊົນຊັ້ນສູງ ຂອງຫວຽດນາມ ກໍຈັດວ່າທຸກຍາກຫຼາຍ ທຽບໃສ່ບັນດາລັດກອມມູນິດທີ່ເກີດຂຶ້ນກ່ອນ. ເມື່ອຫວຽດນາມເໜືອ ເລີ່ມທີ່ຈະສ້າງລະບົບອຸດສະຫະກຳ ທີ່ທັນສະໄໝຂຶ້ນ ໃນປີ 1954 ປັດໄຈດ້ານອຸດສະຫະກຳຂອງຫວຽດນາມ ກໍຍັງຫຼ້າຫຼັງກວ່າຈີນ ແລະເກົາຫຼີເໜືອ. ແນວ ໃດກໍຕາມ ໄຊຊະນະທາງການເມືອງ ແລະການທະຫານຂອງຫວຽດນາມ ກໍນຳມາ ເຊິ່ງຄວາມປິຕິຍິນດີ ແລະມະໂນພາບດ້ານເສດຖະກິດທີ່ສິດໄສ ໃນຄວາມຄຶດຂອງ ຜູ້ ນຳປະເທດ.

ການຊ່ວຍເຫຼືອ ຈາກຈີນແລະໂຊວຽດ ໂດຍສະເພາະໃນໄລຍະ ປີ 1960-1975 ໄດ້ຊີດເຊີຍປັດໄຈຈຳເປັນ ທີ່ຫວຽດນາມເໜືອຕ້ອງການ ເພື່ອກ້າວຂຶ້ນເປັນປະ ເທດອຸດສະຫະກຳ. ການຊ່ວຍເຫຼືອດັ່ງກ່າວ ເຮັດໃຫ້ຫວຽດນາມເໜືອ ສາມາດລົງທຶນ ໃສ່ອຸດສະຫະກຳຕ່າງໆ ເຊັ່ນ: ໂຮງງານໄຟຟ້າ, ໂຮງງານຊີມັງ, ໂຮງງານຜະລິດເຄື່ອງ ຈັກ ແລະ ອື່ນໆ. ເກີດການເຄື່ອນຍ້າຍແຮງງານຫຼາຍລ້ານຄົນ ຈາກພາກກະສິກຳມາ ສູ່ພາກອຸດສະຫະກຳ ພາຍໃຕ້ພາບລັກທີ່ວ່າ ການເຄື່ອນຍ້າຍດັ່ງກ່າວ ເປັນເລື່ອງ ທຳມະດາ ໃນຂະບວນການກ້າວຂຶ້ນສູ່ຄວາມທັນສະໄໝ, ດັ່ງໄດ້ລະບຸໄວ້ໃນທິດສະດີ ກ່ຽວກັບເສດຖະສາດ ຂອງລັດທິມາກ-ເລນິນ (ທິດສະດີທຶນນິຍົມ ຂອງຕາເວັນຕົກ ກໍ ກ່າວໄວ້ຄືກັນ). ຫຼັງປີ 1975 ເມື່ອບໍ່ມີການຊ່ວຍເຫຼືອຈາກຕ່າງປະເທດ ປະກອບກັບ ການເພີ່ມຂຶ້ນຂອງປະຊາກອນຢ່າງກ້າວກະໂດດ ແລະຕໍ່ເນື່ອງ ເຮັດໃຫ້ເສດຖະກິດ ຫວຽດນາມ ຖືກຖອຍຢ່າງໜັກ. ໃນຂະນະທີ່ ລັດສືບຕໍ່ສຸມທຶນຮອນທີ່ມີຢ່າງຈຳກັດ ໃສ່ ຂະແໜງອຸດສະຫະກຳ ແຕ່ຜົດບໍ່ສາມາດຮັບຊື້ຜົນຜະລິດຈາກຊາວນາ ໃນລາຄາທີ່ ເໝາະສົມໄດ້ ຊາວນາຈຶ່ງສະແດງຄວາມບໍ່ພໍໃຈ.

ເມື່ອບໍ່ແມ່ນທັງລູກຈ້າງ ແລະຜູ້ເຊົ່າທີ່ດິນ ຈາກເຈົ້າທີ່ດິນ ຊາວນາກໍມີກຳລັງແຮງຂອງຕົນເຊັ່ນກັນ. ຊາວນາທີ່ບໍ່ພໍໃຈຕໍ່ຜົນທີ່ໄດ້ຮັບ ບາງຄົນກໍປະຖິ້ມທີ່ດິນ, ຫຼື ປົນຊາຍໃສ່ເຂົ້າ ທີ່ເຂົາເຈົ້າຕ້ອງການສົ່ງພັນທະໃຫ້ລັດ, ຫຼືບໍ່ກໍຂົນອ່ວຍກັບຄືນ ຈາກໂຮງງານ ເອົາໄປເຮັດເຫຼົ້າໄວ້ກິນເອງ. ລັດເກືອບຈະບໍ່ສາມາດເກັບພາສີໄດ້ເລີຍ ເຖິງຂະໜາດບໍ່ສາມາດສະໜອງອາຫານ ໃຫ້ແກ່ຜູ້ນຳຂັ້ນສູງໄດ້ຢ່າງພຽງພໍ, ບໍ່ມີເງິນເດືອນພໍຈ່າຍໃຫ້ພະນັກງານ, ເຂົາເຈົ້າຕ້ອງໄດ້ຂອກວຍກເສີມ ເພື່ອຈະໄດ້ມີເງິນຊື້ເຄື່ອງໃຊ້ທີ່ຈຳເປັນ, ການບໍລິຫານລັດ ຕົກຢູ່ໃນພາວະຢຸດຊະງັກ.

ການປະຕິຮູບໃນຊຸມປີ 1980 ໄດ້ຊ່ວຍໃຫ້ລັດຖະບານຫວຽດນາມ ລອດພົ້ນວິກິດການ. ການເພີ່ມຂຶ້ນຂອງຄ່າໃຊ້ຈ່າຍຂອງພາກລັດ ທີ່ລັດຖະບານຮ່ຳໂນຍຕ້ອງແບກຫາບ ລະຫວ່າງປີ 1960 ຫາ 1981 ແລະທຶນຊ່ວຍເຫຼືອຈຳນວນຫຼາຍ ໄດ້ສູນຫາຍໄປ. ຊາວນາບໍ່ຈຳເປັນຕ້ອງເຮັດວຽກທີ່ ລາຍໄດ້ຂຶ້ນກັບການແບ່ງປັນຈາກສູນກາງອີກຕໍ່ໄປ ເຂົາເຈົ້າສາມາດເຊົ່າທີ່ດິນຂອງສະຫະກອນ ເພື່ອທຳການຜະລິດ ແລະຂາຍຜົນຜະລິດຂອງເຂົາເຈົ້າໃນຕະຫຼາດຢ່າງເສລີ ເຮັດໃຫ້ມີລາຍຮັບສູງຂຶ້ນ. ຜົນຜະລິດເຂົ້າຮວມກັນທົ່ວປະເທດສູງຂຶ້ນ, ແລະລັດກໍມີລາຍຮັບສູງຂຶ້ນ ແລະປະເທດຫວຽດນາມຈຶ່ງສາມາດກຸ້ມໂຕເອງ ທາງດ້ານສະບຽງອາຫານ ໂດຍບໍ່ຕ້ອງເພິ່ງພາການນຳເຂົ້າຈາກຕ່າງປະເທດ ເປັນປີທຳອິດໃນປີ 1983. ແຕ່ກໍມີສອງຈິນຕະນາການ ກ່ຽວກັບ ກ້າວຕໍ່ໄປຂອງປະເທດຫວຽດນາມ ໃນໄລຍະທ້າຍໆ ທີ່ ເລ ຢວນ ປົກຄອງປະເທດ ດ້ານໜຶ່ງແມ່ນການຮວມສູນອຳນາດ, ການມີອຳນາດເດັດຂາດ, ເປັນຊາດປະຕິວັດ ປະກອບອາວຸດ ແລະອີກດ້ານໜຶ່ງ ແມ່ນການຄ່ອຍໆເປີດກວ້າງອອກ, ການກະຈາຍອຳນາດ, ສັງຄົມທີ່ມີຄວາມຫຼາກຫຼາຍ, ມີສັງຄົມເມືອງ, ຊົນນະບົດ, ມີຄວາມຫຼາກຫຼາຍທາງຄວາມຄຶດ ແລະຄວາມແຕກຕ່າງທາງລາຍໄດ້. ພາຍໃຕ້ການຊີ້ນຳຂອງພັກ, ນັກຄຶດ, ນັກວິເຄາະດ້ານເສດຖະກິດ ຜູ້ມີຄວາມຈົງຮັກພັກດີ ຕໍ່ລະບົບກົນການເມືອງຂອງ ເລ ຢວນ ກໍຍັງຕ້ອງເຮັດວຽກຢ່າງມີຂໍ້ຈຳກັດ (ໃນປີ 1985 ມີແຕ່ 26% ຈາກຈຳນວນຄູສອນທິດສະດີທັງໝົດ ໃນ 93 ມະຫາວິທະຍາໄລ ແລະ ສະຖາບັນການສຶກສາຊັ້ນສູງ

ທີ່ເປັນສະມາຊິກພັກ) ແຕ່ເຂົາເຈົ້າກໍຍັງພະຍາຍາມ ຊຸກຍູ້ຫວຽດນາມໃຫ້ໄປສູ່ ຈີນຕະ ນາການທີສອງ.

ການເປີດກວ້າງທາງເສດຖະກິດ ໃນຊຸມປີ 1980 ບໍ່ໄດ້ດຳເນີນໄປ ໂດຍປາສະ ຈາກຄວາມກັງວົນ ຂອງບັນດານັກຄິດເຫຼົ່ານັ້ນ ທີ່ຢ້ານວ່າ ການຫາແຫຼ່ງທຶນ ເພື່ອການ ຂະຫຍາຍຕົວທາງເສດຖະກິດຂອງຫວຽດນາມ ອາດຈະຍາກກວ່າຈີນ, ໂຊວຽດ ຫຼື ປະເທດເອີຣົບຕາເວັນອອກ. ເຂົາເຈົ້າວິຈານວ່າ ການທີ່ຫວຽດນາມໄດ້ຮັບການຊ່ວຍ ເຫຼືອຈາກຕ່າງຊາດມາດົນ ເຮັດໃຫ້ຄົນຫຼົງລືມຄວາມຈິງຂໍ້ນີ້ ແລະແນະນຳວ່າ ການທີ່ ຫວຽດນາມ ປະເຊີນກັບ "ຈຸດຕ່ຳສຸດທາງເສດຖະກິດ" ເຮັດໃຫ້ຕ້ອງໄດ້ດັດແກ້ມາດຕະ ຖານຂອງຄວາມເປັນລັດ ມາກ-ເລນິນ ຫຼາຍກວ່າທີ່ເຄີຍເປັນມາ.

34

ກຳປູເຈຽ ແລະ ລາວ

ກຳປູເຈຽ

ເດືອນພຶດສະພາ 1945 ລຸນຫຼັງ ທີ່ເຈົ້າຊີວິດ ນະໂຣດົມ ສີຫະນຸ ໄດ້ປະກາດ ເອກະລາດ ຂອງກຳປູເຈຽ ດ້ວຍການສະໜັບສະໜູນຂອງຍີ່ປຸ່ນ ສົນ ງ໊ອກ ທັນ ໄດ້ ເດີນທາງກັບຈາກຍີ່ປຸ່ນ ເພື່ອຮັບຕຳແໜ່ງ ລັດຖະມຸນຕີ ກະຊວງການຕ່າງປະເທດ ຂອງລັດຖະບານໃໝ່. ຮອດເດືອນກັນຍາ ເມື່ອຍີ່ປຸ່ນປະກາດຍອມຈຳນົນ ຕໍ່ກຸ່ມພັນ ທະມິດແລ້ວ ແລະກ່ອນຝຣັ່ງຈະເຂົ້າມາຍຶດຄອງອິນໂດຈີນອີກຄັ້ງນຶ່ງ ທັນ ຮັບຕຳແໜ່ງ ນາຍົກລັດຖະມຸນຕີ ເປັນເວລາສັ້ນໆ. ວັນທີ 15 ຕຸລາ ຝຣັ່ງບຸກເຂົ້າພະນົມເປັນ, ຈັບກຸມ ທັນ ແລະ ເນລະເທດໄປຢູ່ຝຣັ່ງ.

ການທີ່ຝຣັ່ງສູນເສຍອຳນາດໃນການປົກຄອງ ກຳປູເຈຽ ເປັນເວລາ ເຈັດເດືອນ ຄືແຕ່ ມີນາ ຫາຕຸລາ 1945 ເຮັດໃຫ້ຝຣັ່ງຍາກທີ່ຈະສາມາດຄວບຄຸມ ກຳປູເຈຽໄດ້ ຄືໄລຍະກ່ອນເດືອນມີນາ 1945. ຕົ້ນປີ 1945 ມີການເຊັນຂໍ້ຕົກລົງລະຫວ່າງ ເຈົ້າ ສີຫະນຸ ກັບຊົນຊັ້ນປົກຄອງທີ່ຝັກໃຝ່ຝຣັ່ງ, ເອກະສານດັ່ງກ່າວ ບໍ່ໄດ້ເວົ້າຈະແຈ້ງໃນ ເລື່ອງຄວາມເປັນອິດສະຫຼະພາບ ແຕ່ກໍເຮັດໃຫ້ມີການເລືອກຕັ້ງສະມາຊິກສະພາທີ່ປຶກ ສາ ເພື່ອຮ່າງລັດຖະທຳມະນູນ ແລະ ອະນຸຍາດໃຫ້ມີພັກການເມືອງເກີດຂຶ້ນ ເປັນຄັ້ງ ທຳອິດ ໃນປະຫວັດສາດຊາດກຳປູເຈຽ.

ສອງພັກການເມືອງສຳຄັນ ທີ່ສ້າງຕັ້ງຂຶ້ນໃນປີ 1946 ຜູ້ນຳຂອງທັງສອງພັກ ລ້ວນແມ່ນຣາຊະນິກຸນ (ຍາດພີ່ນ້ອງຂອງເຈົ້າຊີວິດ). ພັກປະຊາທິປະໄຕ ມີຂະໜາດ ໃຫຍ່ກວ່າ, ມີກຸ່ມສະໜັບສະໜູນເປັນຊົນຊັ້ນປົກຄອງລະດັບກາງ, ຊາວໜຸ່ມຜູ້ມີການ ສຶກສາ ແລະຜູ້ນຳສາສະໜາພຸດ ເຊິ່ງສ່ວນຫຼາຍແມ່ນຜູ້ສະໜັບສະໜູນ ສົນ ງ້ອກ ທັນ. ອີກພັກໜຶ່ງແມ່ນ ພັກເສລີພາບ ມີແນວຄຶດອະນຸຮັກນິຍົມ, ແລະຝັກໃຝ່ຝຣັ່ງ ບໍ່ຄ່ອຍ ຢາກປົດປ່ອຍປະເທດ.

ພັກປະຊາທິປະໄຕ ໄດ້ຮັບບ່ອນນັ່ງສອງສ່ວນສາມ ໃນການເລືອກຕັ້ງສະມາ ຊິກສະພາທີ່ປຶກສາ ສ່ວນພັກເສລີພາບ ໄດ້ບ່ອນນັ່ງທີ່ເຫຼືອ. ລັດຖະທຳມະນູນ ຖືກຮ່າງ ຂຶ້ນໂດຍພັກປະຊາທິປະໄຕ ໄດ້ບັນຍັດໄວ້ຢ່າງຊັດເຈນວ່າ ໃຫ້ມີລັດຖະບານ ແລະ ໃຫ້ ເຈົ້າຊີວິດດຳລົງຕຳແໜ່ງປະມຸກລັດ ເຊິ່ງມີລັກສະນະອຳນາດ ຄ້າຍຄືປະທານາທິບໍດີ ຂອງຝຣັ່ງ ໃນເວລານັ້ນ, ບໍ່ດົນ ຫຼັງຈາກຖືກຮັບຮອງ ລັດຖະທຳມະນູນກໍຖືກເຜີຍແຜ່ ສູ່ປະຊາຊົນ. ໃນປີ 1947 ໃນການເລືອກຕັ້ງສະມາຊິກສະພາຄັ້ງທຳອິດ ພັກປະຊາ ທິປະໄຕໄດ້ຮັບເລືອກຕັ້ງ 54 ຄົນ ໃນຈຳນວນສະມາຊິກສະພາທັງໝົດ 76 ຄົນ.

ໄລຍະຫຼັງຈາກນັ້ນ ພັກປະຊາທິປະໄຕ ໄດ້ເປັນແກນນຳ ໃນການຈັດຕັ້ງຫຼາຍ ລັດຖະບານ ເຊິ່ງເບິ່ງຄື ໄຮ້ອຳນາດ ເມື່ອທຽບໃສ່ອຳນາດຂອງຝຣັ່ງ ແລະເພີ່ມບັນຫາ ໃຫ້ກັບເຈົ້າຊີວິດ ສິຫະນຸ ເຊິ່ງພວມຖືກກົດດັນຢ່າງໜັກ ຈາກຊົນຊັ້ນປົກຄອງ ແລະ ກຸ່ມການເມືອງຝ່າຍຂວາ ເຊິ່ງບໍ່ໄດ້ຢູ່ໃນສະພາ.

ປີ 1951 ອຸນຫະພູມທາງການເມືອງ ຮ້ອນເຮັ່ງຂຶ້ນຕື່ມ ເມື່ອພັກປະຊາທິປະໄຕ ຊະນະການເລືອກຕັ້ງອີກ, ຂ້າຫຼວງຝຣັ່ງຖືກຄົນຮັບໃຊ້ຊາວຫວຽດນາມສັງຫານ, ຊາຍ ໜຸ່ມຜູ້ເຊິ່ງຕໍ່ມາ ໄດ້ຮັບນາມມະຍົດວ່າ ລະຊົນຈາກ ຫວຽດມິນ; ແລະ ສົນ ຫງ້ອກ ທັນ ກັບຄືນຈາກຝຣັ່ງ ຢ່າງຍິ່ງໃຫຍ່ ໂດຍຝ່າຍຝຣັ່ງປະເມີນວ່າ ມີປະຊາຊົນນັບແສນຄົນ ອອກມາຕ້ອນຮັບທັນ. ຫ້າເດືອນຕໍ່ມາ ທັນ ຢູ່ໃນນະຄອນຫຼວງພະນົມເປັນ ພ້ອມ ດ້ວຍຜູ້ສະໜັບສະໜູນຈຳນວນຫຼາຍ ແລະຈັດຕັ້ງຂະບວນການປະຕິວັດຕ້ານ ສິຫະນຸ

ແລະ ຝຣັ່ງ. ຫຼັງຈາກນັ້ນບໍ່ດົນ ເຈົ້າຊີວິດ ສີຫະນຸ ໄດ້ປະກາດຍຸບສະພາ ແລະ ຂຶ້ນ ປົກຄອງປະເທດເອງ.

ຍ້ອນເລັງເຫັນກຳລັງການເຄື່ອນໄຫວຂອງ ຝຣັ່ງ, ເຈົ້າສີຫະນຸ ຈຶ່ງໄດ້ເຄື່ອນ ໄຫວຕໍ່ຕ້ານຝຣັ່ງ ໂດຍໃຊ້ຊື່ວ່າ "ສົງຄາມສັກສິດເພື່ອເອກະລາດ" ແລະໄດ້ຮ້ອງຂໍການ ສະໜັບສະໜູນຈາກສາກົນ ທຸກຄັ້ງທີ່ມີໂອກາດປາໄສຢູ່ຕ່າງປະເທດ. ການເຄື່ອນໄຫວ ຂອງ ເຈົ້າສີຫະນຸ ຍັງໄດ້ຮັບຜົນດີຍ້ອນຄວາມອ່ອນແອຂອງກອງທະຫານໃນກຳປູເຈຍ. ກາງປີ 1953 ເກີດຂະບວນການປະຕິວັດຂຶ້ນ ໃນພື້ນທີ່ຊົນນະບົດກວ່າເຄິ່ງໜຶ່ງຂອງ ປະເທດ.

ໃນເດືອນພະຈິກ ຝຣັ່ງ ຍິນຍອມໃຫ້ອຳນາດຫຼາຍຢ່າງແກ່ ກຳປູເຈຍ ທັງ ອຳນາດບັນຊາການກອງທັບ ແລະ ສິດໃນການສົ່ງທູດຂອງຕົນໄປຕ່າງປະເທດ ກຳປູ ເຈຍ ໃກ້ຈະໄດ້ຮັບເອກະລາດແລ້ວ. ເຈົ້າຊີວິດສີຫະນຸ ແລະບັນດາທີ່ປຶກສາ ຕີລາຄາ ສອງສະຖານະການດັ່ງກ່າວວ່າ ເປັນການອະນຸຍາດໃຫ້ ພະອົງສາມາດປົກຄອງປະ ເທດໄດ້ ໂດຍບໍ່ຕ້ອງມີພັກການເມືອງ. ໃນກອງປະຊຸມເຊີແນວ ປີ 1954 ກຳປູເຈຍ ຢູ່ ໃນສະຖານະຜູ້ຊະນະ ສຳລັບຂະບວນການຕ້ານກອມມູນິດ, ສ່ວນໜຶ່ງແມ່ນ ຍ້ອນການ ປະຕິວັດໃນ ກຳປູເຈຍ ເປັນໄປຢ່າງອິດສະຫຼະ ກວ່າຂະບວນການໃນ ລາວ ແລະ ຫວຽດນາມ, ອີກສ່ວນໜຶ່ງ ແມ່ນລັກສະນະຂອງກອງທັບໃນກຳປູເຈຍ ບໍ່ມີລັກສະນະ ກອມມູນິດ ຄື ຊາດອິນໂດຈີນອື່ນ ແລະສ່ວນໜຶ່ງອີກ ຂະບວນການລຸກຮືຂຶ້ນຢູ່ ກຳປູເຈຍ ມີແນວທາງທີ່ເປັນຂອງໂຕເອງ ໃນຫຼາຍໆດ້ານ.

ເຈົ້າຊີວິດສີຫະນຸ ໄດ້ຮັບຄວາມຊອບໃນຜົນປະໂຫຍດຕ່າງໆ ທີ່ກຳປູເຈຍໄດ້ ແຕ່ສັນຍາເຊີແນວ ກໍໄດ້ລະບຸໃຫ້ ກຳປູເຈຍ ຕ້ອງມີການເລືອກຕັ້ງພາຍໃນ ປີ 1955. ຍ້ອນຢ້ານພັກປະຊາທິປະໄຕ ແລະ ຄວາມສັບສົນໃນສິດອຳນາດຂອງຕົນ ເຈົ້າຊີວິດ ສີຫະນຸ ໄດ້ສ້າງສະຖານະການ ທີ່ເຮັດໃຫ້ ໃນທ້າຍປີນັ້ນ ພະອົງມີອຳນາດຫຼາຍຂຶ້ນ.

ຂັ້ນທຳອິດ ພະອົງອ້າງຄວາມຊອບທຳ ຂອງ ສົງຄາມສັກສິດເພື່ອເອກະລາດ ເຈົ້າຊີວິດ ສີຫະນຸ ໄດ້ຈັດໃຫ້ມີການລົງຄະແນນສຽງ ໂດຍທີ່ບັດລົງຄະແນນ ຈະມີຫ້ອງ ໜຶ່ງເປັນສີຂາວ ພິມຮູບພາບຂອງພະອົງໃສ່ ແລະມີໂຕໜັງສື "ເຫັນດີ" ແລະ ອີກ ຫ້ອງໜຶ່ງເປັນສີດຳ ພິມໂຕໜັງສືວ່າ "ບໍ່ເຫັນດີ" ໃສ່, ໃນມື້ລົງຄະແນນ ປະຊາຊົນນັບ ລ້ານ ເຂົ້າຮ່ວມລົງຄະແນນ, ໂດຍອີງຕາມສະຖິຕິຂອງທາງການ ມີບໍ່ຮອດສອງພັນບັດ ທີ່ຖືກໝາຍໃສ່ເບື້ອງ "ບໍ່ເຫັນດີ" ທີ່ໝາຍເຖິງ ບໍ່ເຫັນດີນຳລະບອບກະສັດ.

ຂັ້ນທີສອງ ເຈົ້າຊີວິດສີຫະນຸ ຕ້ອງການຈະແກ້ໄຂລັດຖະທຳມະນູນ ເພື່ອໃຫ້ ຕົນເອງມີອຳນາດຢ່າງເດັດຂາດ, ຂໍ້ສະເໜີດັ່ງກ່າວຖືກຕໍ່ຕ້ານຢ່າງໜັກ ຈາກຜູ້ນຳຝ່າຍ ຕ່າງໆ ເຈົ້າສີຫະນຸ ຈຶ່ງວາງກົນລະຍຸດຄື ການສະຫຼະຣາຊະບັນລັງ ແລະ ເຂົ້າສູ່ການ ເມືອງ ໃນຖານະ "ປະຊາຊົນ" ລະບອບກະສັດຍັງຢູ່ ໂດຍແມ່ນພະບິດາຂອງເຈົ້າສີຫະນຸ ຄື ເຈົ້າສຸຣະມະຣິດ ຂຶ້ນນັ່ງບັນລັງແທນ ແລະ ຢູ່ໃນຕຳແໜ່ງເຈົ້າຊີວິດ ຈົນສິ້ນພະຊົນ ໃນປີ 1960.

ຂັ້ນສຸດທ້າຍ ແມ່ນການກ້າວຂຶ້ນສູ່ຕຳແໜ່ງ ຜູ້ນຳຂະບວນການທາງການເມືອງ ຊື່ວ່າ ສັງຄົມຮຽດນິຍົມ (Sangkum Reatr Niyum) ເຊິ່ງມີຄວາມໝາຍຢ່າງບໍ່ເປັນ ທາງການວ່າ "ປະຊາຄົມ ປະຊາຊົນ ສັງຄົມນິຍົມ (People's Socialist Community) ສະມາຊິກຂອງຂະບວນການດັ່ງກ່າວ ບໍ່ໄດ້ສັງກັດພັກການເມືອງໃດ ແຕ່ຜັດໄດ້ ຮັບເລືອກຕັ້ງເຂົ້າໃນສະພາ.

ໃນການເລືອກຕັ້ງປີ 1955, ສະມາຊິກຂອງກຸ່ມສັງຄົມ ເຊິ່ງເຈົ້າສີຫະນຸ ເລືອກ ກັບມີ ໄດ້ຄະແນນສຽງ 80% ແລະ ຍຶດຄອງບ່ອນນັ່ງໃນສະພາທັງໝົດ. ສະຖິຕິບອກວ່າ ພັກປະຊາທິປະໄຕໄດ້ຄະແນນ 12% ແລະກຸ່ມຝັກໄຝ່ກອມມູນິດ ໄດ້ 4% ເປັນທີ່ເຊື່ອ ກັນວ່າ ຄະແນນສຽງຕົວຈິງ ແມ່ນໜ້ອຍກວ່ານີ້. ສ່ວນໜຶ່ງ ແມ່ນມາຈາກການທີ່ຂະ ບວນການກອມມູນິດເລີ່ມມີບົດບາດຫຼາຍຂຶ້ນ ແລະ ຄວາມນິຍົມຕໍ່ ເຈົ້າສີຫະນຸ ກໍສະ ແດງອອກຢ່າງຈະແຈ້ງ ຜ່ານຜົນການເລືອກຕັ້ງ. ຜົນການເລືອກຕັ້ງດັ່ງກ່າວ ຍັງສົ່ງ

ສັນຍານເຖິງການສິ້ນສຸດ ຂອງລະບົບການເມືອງແບບຫຼາຍພັກ ໃນກຳປູເຈ. ຄວາມ ຂຸ່ນເຄືອງ ຕໍ່ການປ່ຽນຮູບປະຊາທິປະໄຕຂອງ ສີຫະນຸ, ຄວາມບໍ່ພໍໃຈຂອງນັກການ ເມືອງຜູ້ສະໜັບສະໜູນ ແລະຝັກໄຝ່ກອມມູນິດ ເຊິ່ງຖືກຕຳຫຼວດຍຸຍົງຕື່ມ ເຮັດໃຫ້ ຄວາມລັບຂອງ ເຈົ້າສີຫະນຸ ຖືກເປີດເຜີຍໃນຊຸມປີ 1960 ແລະນຳໄປສູ່ການລົງຈາກ ອຳນາດໃນທີ່ສຸດ.

ບັນດານັກວິຊາການແລະນັກຂ່າວ ທີ່ຂຽນກ່ຽວກັບກຳປູເຈ ໄລຍະປີ 1970 ຕ່າງຍອມຮັບໃນຄວາມສາມາດຂອງ ເຈົ້າສີຫະນຸ ໃນດ້ານການປະເມີນຄວາມນິຍົມ ຂອງມວນຊົນ ແລະ ການເປັນຜູ້ມີບົດບາດສຳຄັນຕໍ່ຂະບວນການ ກອມມູນິດກຳປູເຈ ໃນຖານະສາຂາຂອງຂະບວນການກອມມູນິດຫວຽດນາມ. ຍຸກຕໍ່ມາ ນັກວິຊາການທີ່ ຄົ້ນຄວ້າຊອກຫາຮາກເຫງົ້າຂອງລັດຖະບານກອມມູນິດ ທີ່ປົກຄອງກຳປູເຈ ໃນປີ 1975 ກໍຊ້ຳຜັດເຫັນວ່າ ຍັງແມ່ນຮູບພາບຂອງລະບົບທີ່ວົນກັບສູ່ "ຍຸກສີຫະນຸ" ຄືເກົ່າ.

ເມື່ອພັກກອມມູນິດອິນໂດຈີນ ເລີ່ມຕັ້ງສ້າງຕັ້ງຂຶ້ນໃນປີ 1930 ຢູ່ຮົ່ງກົ່ງ, ມີ ຊາວກຳປູເຈ ບໍ່ທ່ໃດຄົນເຂົ້າຮ່ວມ, ແຕ່ເມື່ອສົງຄາມອິນໂດຈີນ ເລີ່ມຕົ້ນຂຶ້ນໃນທ້າຍ ທົດສະຕະວັດທີ 1940 ຊາວກຳປູເຈ ຫຼາຍຮ້ອຍຄົນຈຶ່ງເຂົ້າຮ່ວມພັກດັ່ງກ່າວ. ໃນປີ 1951 ພັກກອມມູນິດຂອງຊາວກຳປູເຈເອງ ຖືກສ້າງຕັ້ງຂຶ້ນໂດຍການຊີ້ນຳຂອງຫວຽດ ນາມ. ເກີດມີຂະບວນການປະຕິວັດກອມມູນິດຂຶ້ນ ມວນຊົນຫຼາຍພັນເຂົ້າຮ່ວມ, ຫຼາຍ ຮ້ອຍຄົນແມ່ນສະມາຊິກພັກ, ເຂົາເຈົ້າຕໍ່ສູ້ຍົງຂ້າງຊາວຫວຽດນາມ ເພື່ອຂັບໄລ່ຝຣັ່ງ ອອກຈາກອິນໂດຈີນ.

ເມື່ອສົງຄາມສິ້ນສຸດ ພັກຜັດຕົກຢູ່ໃນສະພາບສັບສົນ. ສະມາຊິກພັກຫຼາຍຄົນ ເຫັນວ່າ ບໍ່ມີເຫດຜົນທີ່ຈະດຳເນີນການຕໍ່ສູ້ອີກຕໍ່ໄປ ເມື່ອຝຣັ່ງອອກໄປແລ້ວ, ອີກສ່ວນ ໜຶ່ງຢ້ານກົວວ່າ ຝຣັ່ງຈະກັບຄືນມາ ຈຶ່ງອົບພະຍົບໄປຢູ່ຫວຽດນາມເໜືອ ຂະນະທີ່ ອີກສ່ວນໜຶ່ງ ເຂົ້າຮ່ວມນຳຂະບວນການ "ສັງຄົມ". ການເມືອງແບບ ສີຫະນຸ ມັກຈະ ມີປະຕິກິລິຍາໂຕ້ຕອບ ເກີນຄວາມຈຳເປັນ ຕໍ່ສິ່ງທີ່ເປັນ ຫຼື ຄຶດວ່າຈະເປັນໄພຄຸກຄາມ

ຂະນະດຽວກັນກໍຂາດຈຸດຢືນຢ່າງຈະແຈ້ງ ເຊັ່ນ ການສະຫງວນໄວ້ຈຸດຢືນທາງອຸດົມຄະຕິ ລະຫວ່າງຂວັ້ນອຳນາດ ຊ້າຍ ແລະ ຂວາ, ສະນັ້ນພະອົງຈຶ່ງມັກສະແດງອອກວ່າເປັນຝ່າຍຕ້ານກອມມູນິດ ເວລາຢູ່ໃນປະເທດ ແຕ່ຜັດສະແດງອອກກັບຕ່າງປະເທດວ່າເປັນຜູ້ຝັກໄຝ່ກອມມູນິດ, ມີບັນດາທີ່ປຶກສານິຍົມຝ່າຍຂວາ, ມັກເຂົ້າແຊກແຊງກິດຈະການຂອງລັດ, ມີຄວາມເຊື່ອແບບ "ພຸທະສັງຄົມນິຍົມ (Buddhist Socialism) ແລະ ບໍ່ນິຍົມລັດທິທຸລະກິດເອກະຊົນ.

ນະໂຍບາຍການຕ່າງປະເທດຂອງເຈົ້າສີຫະນຸ, ຄວາມນິຍົມຂອງຄົນໃນປະເທດທີ່ມີໃຫ້ພະອົງ ແລະ ກຳລັງຕຳຫຼວດ ຂອງພະອົງ ເຮັດໃຫ້ວົງຈອນທາງການເມືອງຂອງກຳປູເຈ ໃນຊຸມປີ 1950 ເກີດການປ່ຽນແປງ ຫຼືປະຕິຮູບໄດ້ໜ້ອຍ. ປີ 1960 ພັກກອມມູນິດ ກັບຄືນມາໃຫ້ຄວາມຫວັງ ແກ່ສະມາຊິກພັກ, ດ້ວຍມີຜູ້ນຳພູມຫຼັງດີ, ສຳເລັດການສຶກສາຈາກປະເທດຝຣັ່ງ ແຕ່ຕົ້ນຊຸມປີ 1950. ປີ 1962 ສະລິດ ຊາ ຮັບຕຳແໜ່ງໃນກຳມະການສູນກາງພັກ ກອມມູນິດ ກຳປູເຈ, ລາວຢູ່ໃນຕຳແໜ່ງດັ່ງກ່າວກວ່າສິບປີ. ເມື່ອພັກຂອງລາວກຸມອຳນາດໃນປະເທດກຳປູເຈ ໃນປີ 1976, ສະລິດ ຊາ ຈຶ່ງເລີ່ມເອີ້ນໂຕເອງວ່າ ໂປນ ປົດ.

ໄລຍະປີ 1962, ຄວາມນິຍົມໃນໂຕ ເຈົ້າສີຫະນຸ ຂຶ້ນຮອດຈຸດສູງສຸດ ປະເທດມີສັນຕິພາບ ແລະມີຄວາມຈະເລີນ, ຊົນຊັ້ນປົກຄອງທີ່ອາຍຸຍັງໜຸ່ມ ສຳເລັດການສຶກສາຈາກຕ່າງປະເທດ ແລະ ກັບຄືນມາຮັບຕຳແໜ່ງໃນລັດຖະບານ. ການຊ່ວຍເຫຼືອຫຼັ່ງໄຫຼມາຈາກຫຼາຍແຫ່ງ ບໍ່ພຽງແຕ່ຈາກສະຫະລັດ ຍັງມີຈາກ ຈີນ, ຝຣັ່ງ ແລະ ສະຫະພາບໂຊວຽດ ປະລິມານເງິນຊ່ວຍເຫຼືອ ພຽງພໍທີ່ຈະດຸ່ນດ່ຽງໜີ້ພາກລັດ ໃນແຕ່ລະປີ. ໄຊຊະນະການເລືອກຕັ້ງສະມາຊິກສະພາ ໃນປີ 1968 ແລະ 1972 ຍັງໄດ້ຢືນຢັນເຖິງອຳນາດທາງການເມືອງຂອງ ເຈົ້າສີຫະນຸ.

ປີ 1963 ກ້ອນກຳລັງຕໍ່ຕ້ານລັດຖະບານສີຫະນຸ ເລີ່ມເປັນຮູບຮ່າງຂຶ້ນ. ຖານທີ່ໝັ້ນເພື່ອຕໍ່ຕ້ານສີຫະນຸ ເກີດຂຶ້ນຢູ່ ສຽມຣຽບ ກາຍເປັນກ້ອນກຳລັງສຳຄັນຂອງຝ່າຍ

ຊ້າຍໃນພະນົມເປັນ, ສະລິດ ຊາ ພ້ອມເພື່ອນອີກຈຳນວນໜຶ່ງ ໄດ້ເຂົ້າໄປລີ້ໄພຢູ່ທີ່ ໜັ້ນ, ລັດຖະມຸນຕີສາມຄົນ ເຊິ່ງເປັນຝ່າຍຊ້າຍ ໃນຄະນະລັດຖະບານ ເຊິ່ງເຄີຍຖືກ ສີຫະນຸ ດູໝິ່ນ ໄດ້ລາອອກ. ເວລານັ້ນເອງ ສີຫະນຸໄດ້ອອກມາໂຈມຕີສະຫະລັດ ໂດຍ ກ່າວຫາວ່າ ວໍຊິງຕັນຢູ່ເບື້ອງຫຼັງການຕໍ່ຕ້ານພະອົງ (ຕໍ່ມາພະອົງ ໄດ້ຂຽນປຶ້ມຊື່ "ສົງ ຄາມ ຕ້ານ CIA" ຂອງຂ້ອຍ). ໃນປີ 1963 ພະອົງບໍ່ຮັບການຊ່ວຍເຫຼືອ ທາງການ ທະຫານຈາກສະຫະລັດ ແລະຕັດຂາດຄວາມສຳພັນທາງການທູດ ໃນປີ 1965.

ໃນຊຸມປີ 1960 ຄວາມເຄັ່ງຕຶງຂອງສົງຄາມໃນຫວຽດນາມ ສົ່ງຜົນກະທົບ ສຳຄັນຫຼາຍປະການ ມາສູ່ກຳປູເຈຍ. ການຂາຍເຂົ້າໃຫ້ຝ່າຍກອມມູນິດ (ເຊິ່ງໄດ້ລາຄາ ດີກວ່າ ຂາຍໃຫ້ລັດຖະບານຫຼາຍ) ເຮັດໃຫ້ຊາວນາ ແລະຊາວຄ້າຂາຍຈຳນວນຫຼາຍ ຮັ່ງມີຂຶ້ນ ແຕ່ລັດຖະບານສູນເສຍລາຍໄດ້ ຈາກພາສີການສົ່ງອອກເຂົ້າ. ຕຳຫຼວດກຳປູ ເຈຍທີ່ເຂົ້າຮ່ວມ ຄະນະກຳມະການເພື່ອການສົ່ງສະບຽງ ຈາກທ່າເຮືອນ້ຳເລິກເມືອງ ສີຫະນຸ ຜ່ານດິນແດນກຳປູເຈຍ ໄປໃຫ້ກອງທັບຫວຽດນາມ ເຖິງວ່າເຂົາເຈົ້າຈະບໍ່ມີ ຕຳແໜ່ງໃຫຍ່ໂຕ ແຕ່ກໍໄດ້ກາຍເປັນໜຶ່ງໃນຈຳນວນຜູ້ຮັ່ງມີທີ່ສຸດໃນສັງຄົມ. ນະໂຍ ບາຍປະຢັດທີ່ ສີຫະນຸ ແລະ ເຫຼົ່າທີ່ປຶກສາ ສະເໜີຂຶ້ນ ມີຜົນກະທົບໜ້ອຍ ຕໍ່ຊົນຊັ້ນ ປົກຄອງ, ແຕ່ຜັດເຮັດໃຫ້ປະຊາຊົນທົ່ວໄປບໍ່ພໍໃຈ. ຂະບວນການຕໍ່ຕ້ານ ແຜ່ຂະຫຍາຍ ໃນກຸ່ມນັກສຶກສາ ຢ່າງກວ້າງຂວາງ.

ຕໍ່ກັບສາທາລະນະຊົນນັ້ນ ສີຫະນຸ ກ່າວເຖິງໄພອັນຕະລາຍ ຕາມຊາຍແດນ ທີ່ມາຈາກກອງທັບຫວຽດນາມໃຕ້ ແລະ ທະຫານອາກາດສະຫະລັດ, ຂະນະທີ່ໃນ ທາງສ່ວນຕົວ ເຈົ້າສີຫະນຸ ເປັນກັງວົນຕໍ່ການສອຍໃຊ້ດິນແດນຂອງຕົນ ໂດຍກຳລັງ ກອມມູນິດຫວຽດນາມ.

ປີ 1966 ເພື່ອສະແດງຄວາມຮັບຜິດຊອບຕໍ່ວິກິດການທີ່ເກີດຂຶ້ນ ເຈົ້າສີຫະນຸ ອະນຸຍາດໃຫ້ສະພາ ຈັດການເລືອກຕັ້ງຂຶ້ນ ໂດຍບໍ່ຕ້ອງຖ້າຄຳສະເໜີຂອງຕົນ. ຜົນ ການເລືອກຕັ້ງສະແດງໃຫ້ເຫັນ ການສະໜັບສະໜູນ ແລະຄວາມຊື່ສັດຂອງປະຊາຊົນ

ໃນຫຼາຍທ້ອງຖິ່ນ ຕໍ່ໂຕສີຫະນຸ. ແຕ່ການເລືອກຕັ້ງຂອງ ກຳປູເຈ ຕັ້ງແຕ່ ຊຸມປີ 1950 ມາ ເກືອບທຸກຄັ້ງ ຈະຖືກກ່າວຫາວ່າ ເປັນການເລືອກຕັ້ງທີ່ສົກກະປົກ. ຫຼັງຈາກການ ຈ່າຍເງິນຊື້ສຽງຈຳນວນຫຼາຍ ຄືດັ່ງທີ່ເຄີຍເຮັດມາ ນັກການເມືອງຝ່າຍຂວາ ກໍໄດ້ຮັບ ໄຊຊະນະ ແລະໄດ້ເຂົ້າມາຢູ່ໃນສະພາອີກ, ແນວໃດກໍຕາມ ນັກການເມືອງຝ່າຍຊ້າຍ ສອງຄົນ ຄື ຮູ ນິມ (Hu Nim) ແລະ ຮູ ຢູນ (Hou Youn) ຜູ້ເຊິ່ງຖືກສີຫະນຸໂຈມຕີ ຢ່າງບໍ່ລົດລະ ກໍຍັງໄດ້ຮັບເລືອກຕັ້ງເຂົ້າມາ ຈາກເຂດເລືອກຕັ້ງ ທີ່ປະຊາຊົນຖືກປຸກ ລະດົມໃຫ້ຊ່ອຍ ຝ່າຍກອມມູນິດຫວຽດນາມ.

ເຖິງແມ່ນວ່າ ການເຄື່ອນໄຫວຂອງພັກກອມມູນິດ ກຳປູເຈ ຈະຖືກປິດບັງ ເປັນຄວາມລັບ ບໍ່ໃຫ້ຄົນພາຍນອກຮັບຮູ້ ຈົນຮອດປີ 1977, ແຕ່ຮອດເວລານີ້ ການ ເຄື່ອນໄຫວຂອງເຂົາເຈົ້າ ກໍເປັນທີ່ຮູ້ກັນວ່າ ມີມາແຕ່ ຊຸມປີ 1960 ພຸ້ນແລ້ວ. ໄລຍະປີ 1966 ສະລົດ ຊາ ແລະຄະນະຍັງຄົງເຄື່ອນໄຫວປິດລັບ ແລະກະກຽມການລຸກຂຶ້ນ ຕໍ່ຕ້ານ ສີຫະນຸ ດ້ວຍກຳລັງອາວຸດ. ເຂົາເຈົ້າມີແຜນການທີ່ຈະຮຽນແບບ ການກໍ່ຈະ ລາຈົນຂອງພັກກອມມູນິດອິນໂດເນເຊ ໄລຍະປີ 1965-1966, ສະມາຊິກພັກຜູ້ອື່ນໆ ເຫັນວ່າ ແທນທີ່ຈະກໍ່ການປະຕິວັດຂຶ້ນພຽງລຳພັງ ຄວນຈະເຮັດໃຫ້ການປະຕິວັດກຳປູ ເຈ ເປັນສ່ວນໜຶ່ງຂອງຂະບວນການປະຕິວັດສາກົນ ເຊິ່ງໝາຍຄວາມວ່າ ການປະຕິ ວັດໃນກຳປູເຈ ຈະສຳເລັດໄດ້ ເມື່ອຫວຽດນາມເຮັດສຳເລັດກ່ອນ. ໃນຄວາມຄຶດຂອງ ສະລົດ ຊາ ນັ້ນ ທັງ ສີຫະນຸ ແລະ ຫວຽດນາມ ລ້ວນແມ່ນຜູ້ທີ່ບໍ່ຄວນຝ່າກອະນາຄົດ ຂອງກຳປູເຈ ໄວ້ນຳ. ສິ່ງທີ່ທັງ ສະລົດ ຊາ ແລະ ສະມາຊິກຜູ້ອື່ນໆເຫັນກົງກັນ ແມ່ນ ມີນັກການເມືອງ, ນັກສຶກສາ ແລະນາຍທະຫານ ຫຼາຍຄົນ ທີ່ຄວນຖືກກຳຈັດ.

ປີ 1967, ຂະບວນການລຸກຮືຂຶ້ນຂອງຊາວນາ ຢູ່ ສຳລວດ ທາງພາກຕາ ເວັນຕົກສຽງເໜືອ ຖືກກອງກຳລັງຂອງ ສີຫະນຸ ປາບປາມ, ປະເມີນກັນວ່າ ມີຄົນຮອດ ສິບພັນຄົນຖືກສັງຫານ.ການລຸກຮືຂຶ້ນສ້າງກຳລັງແຮງໃຫ້ແກ່ແຜນການຂອງສະລົດຊາ, ສາມປີຕໍ່ຈາກນັ້ນ ການກະບົດຕ້ານ ສີຫະນຸ ໄດ້ໂອກາດດີ ເມື່ອມີການປະທະລະຫວ່າງ ກອງທັບຫວຽດນາມ ແລະກອງທັບຂອງສີຫະນຸ, ການຕໍ່ຕ້ານ ແຜ່ລາມໄປທົ່ວປະເທດ ມີພາບພົດ “ທີ່ຄືກັນກັບເຫດການ ເມື່ອຕົ້ນຊຸມປີ 1950”.

ຂະນະທີ່ກຸ່ມຕໍ່ຕ້ານເຂັ້ມແຂງຂຶ້ນ ສີຫະນຸ ຊ້ຳສູນເສຍຄວາມກ້າຫານທາງການເມືອງຂອງຕົນໄປ, ພະອົງໃຊ້ເວລາໄປນຳການຜະລິດ ແລະສະແດງຮູບເງົາຂອງຕົນເອງ, ເດີນທາງໄປຕ່າງປະເທດ ແລະ ກ່າວໂຈມຕີກຸ່ມຕໍ່ຕ້ານ. ການກະທຳຂອງສີຫະນຸ ສ້າງຄວາມບໍ່ພໍໃຈໃຫ້ບັນດາຊົນຊັ້ນປົກຄອງ ຂະນະດຽວກັນ ສີຫະນຸ ເອງ ກໍບໍ່ໄດ້ດີໃຈນຳນະໂຍບາຍປະຢັດ ແລະ ລັດຖະມຸນຕີໃນຄະນະລັດຖະບານ ທີ່ຝັກໄຝ່ຝ່າຍສະຫະລັດ. ຕໍ່ກັບສາກົນ ສີຫະນຸ ຫັນມາຫາຝ່າຍຂວາ ໂດຍໄດ້ສານສຳພັນກັບສະຫະລັດຄືນຢ່າງເປັນທາງການ ໃນປີ 1969 ດ້ວຍເຫດຜົນວ່າ ເມື່ອກ່ອນ ພະອົງເຂົ້າໃຈຜິດ ແຕ່ບັດນີ້ ເປັນທີ່ຈະແຈ້ງແລ້ວວ່າ ຂະບວນການຕໍ່ຕ້ານທີ່ເກີດຂຶ້ນ ແມ່ນຝ່າຍຫວຽດນາມເປັນຜູ້ສະໜັບສະໜູນ.

ຫຼາຍເດືອນຕໍ່ມາ ອາດຈະໂດຍການອະນຸຍາດຂອງສີຫະນຸ, ແຕ່ຊ້ຳບໍ່ໄດ້ແຈ້ງໃຫ້ຊາວອະເມລິກາຮູ້, ສະຫະລັດເລີ່ມຖິ້ມລະເບີດທຳລາຍຖານທີ່ໝັ້ນຂອງຫວຽດນາມໃນດິນແດນກຳປູເຈຍ ຢ່າງເປັນລະບົບ ການໂຈມຕີດັ່ງກ່າວ ໄດ້ສັງຫານຊາວກຳປູເຈຍທີ່ບໍ່ຮູ້ເລື່ອງຫຍັງນຳ ແລະ ຍັງເຮັດໃຫ້ ທະຫານຫວຽດນາມ ເຂົ້າມາເຄື່ອນໄຫວລຶກເລິກໃນກຳປູເຈຍ ຫຼາຍກວ່າເກົ່າ.

ເດືອນມີນາ 1970, ຂະນະທີ່ ສີຫະນຸ ເດີນທາງໄປຕ່າງປະເທດ ພະອົງຖືກສະພາແຫ່ງຊາດຂອງຕົນເອງ ປົດອອກຈາກຕຳແໜ່ງຜູ້ນຳປະເທດ. ເຂົ້າໃຈວ່າ ສະຫະລັດມີສ່ວນກ່ຽວຂ້ອງນຳເຫດການນີ້ ແຕ່ແກນນຳຂອງການປະຕິວັດນີ້ ແມ່ນກຸ່ມຊົນຊັ້ນປົກຄອງ ແລະເຈົ້າໜ້າທີ່ຂັ້ນສູງຂອງກອງທັບ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ພັນທະມິດ ໃນອິນໂດເນເຊຍ ແລະຫວຽດນາມໃຕ້. ສີຫະນຸ ຕັ້ງລັດຖະບານພັດຖິ່ນຂຶ້ນທັນທີຢູ່ປັກກິ່ງ, ຜູ້ເຂົ້າຮ່ວມລັດຖະບານບາງຄົນ ແມ່ນກຸ່ມຕໍ່ຕ້ານທີ່ ສີຫະນຸ ພະຍາຍາມຈະກຳຈັດຫວ່າງບໍ່ເທົ່າໃດອາທິດກ່ອນນີ້. ໃນພະນົມເປັນ ລັດຖະບານໃໝ່ໂດຍການນຳຂອງ ນາຍພົນ ລົນ ໂນນ (Lon Nol) ອະນຸຍາດໃຫ້ກຸ່ມຜູ້ປະທ້ວງ ທຳລາຍທ້ອງການຂອງຝ່າຍກອມມູນິດຫວຽດນາມ, ຂະນະທີ່ໂຕເອງປະກາດວ່າ ເປັນກາງ ຕໍ່ສົງຄາມໃນຫວຽດນາມ. ທ່າທີອັນມຸມມິອນັ້ນ ບໍ່ອາດຢຸດຢັ້ງການໂຈມຕີ ຈາກຝ່າຍສະຫະລັດ

ແລະຫວຽດນາມໃຕ້ໄດ້, ໃນທີ່ສຸດ ໃນເດືອນພຶດສະພາ ທະຫານສະຫະລັດ ແລະ ຫວຽດນາມໃຕ້ ບຸກຍຶດແລະເຜົາທຳລາຍ ເຂດຊາຍແດນຂອງຂະເໝນ ກ່ອນຈະຖອຍ ກັບໄປຫວຽດນາມ ໃນອີກເດືອນໜຶ່ງຕໍ່ມາ.

ຜູ້ຮ່ວມລັດຖະບານພັດຖິ່ນກັບສີຫະນຸ ມາຈາກຫຼາຍກຸ່ມການເມືອງ ທີ່ເກີດຂຶ້ນ ໃນຕົ້ນຊຸມປີ 1950, ບາງຄົນແມ່ນສະມາຊິກພັກປະຊາທິປະໄຕ, ຫຼາຍຄົນມາຈາກກຸ່ມ ຕໍ່ຕ້ານລາຊະວົງ. ເດືອນຕຸລາ 1970 ກຳປູເຈຼ ປ່ຽນຊື່ປະເທດເປັນ ສາທາລະນະລັດ ຂະແມ. ການເມືອງແບບຫຼາຍພັກ ກັບຄືນມາມີຊີວິດ ໄດ້ໄລຍະໜຶ່ງ (ສິນ ງ໋ອກ ທັນ ຜູ້ສະໜັບສະໜູນການປະຕິວັດ ຈາກສຳນັກງານໃນໄຊ່ງ່ອນ ໄດ້ຂຶ້ນເປັນນາຍົກລັດຖະ ມຸນຕີ ແລະຢູ່ໃນຕຳແໜ່ງນີ້ເປັນເວລາຫຼາຍເດືອນ) ແຕ່ເຂົາເຈົ້າກໍຕ້ອງຍຸບເລີກໄປ ຍ້ອນ ລົນ ໂນນ ທຳການປາບປາມ ແລະສົງຄາມທີ່ເກີດຂຶ້ນຕາມເຂດຊົນນະບົດ ແຮ່ງເຮັດໃຫ້ ສະຖານະການ ຮ້າຍເຮັ່ງຂຶ້ນຕື່ມ.

ຈົນເມື່ອມີສັນຍາ ປາຣີ ແລະ ສັນຍາຢຸດຍິງໃນຫວຽດນາມ ປີ 1973 ກອງ ກຳລັງກອມມູນິດ ກຳປູເຈຼ ໄດ້ຮັບການເຝິກແອບຢ່າງສະໜ່ຳສະເໝີ ທັງໄດ້ຮັບການ ປະກອບອາວຸດ ຈາກຫວຽດນາມ ແລະ ພະນັກງານຊາວກຳປູເຈຼ ທີ່ເຂົ້າໄປອາໄສໃນ ຫວຽດນາມ ກໍຖືກສົ່ງກັບ. ຫຼັງປີ 1972 ການຊ່ວຍເຫຼືອດັ່ງກ່າວຖືກລະງັບ ຍ້ອນ ມີຫຼັກຖານວ່າ ກຳມະການສູນກາງພັກກອມມູນິດກຳປູເຈຼ ມີຄຳສັ່ງໃຫ້ລອບສັງຫານ ບັນດາພະນັກງານທີ່ກັບຄືນຈາກຫວຽດນາມ. ເຖິງຈະບໍ່ມີການຊ່ວຍເຫຼືອຈາກຫວຽດ ນາມ ກອງທັບກອມມູນິດກຳປູເຈຼ ກໍສາມາດບຸກຍຶດເອົາດິນແດນ ຫຼາຍກວ່າສອງ ສ່ວນສາມຂອງປະເທດ ຮວມທັງເຂດ ອັງກໍ ໃນທ້າຍປີ 1972.

ຕົ້ນປີ 1973 ກຳປູເຈຼເປັນປະເທດດຽວ ທີ່ມີ "ສົງຄາມກາງເມືອງ" ໃນສາຍ ຕາຂອງກອງທັບສະຫະລັດ ເພື່ອປ້ອງກັນ ສາທາລະນະລັດ ຂະແມ ໄວ້ ສະຫະລັດ ສົ່ງ ຍົນ B-52 ຖິ້ມລະເບີດແບບປູພົມ ຕາມເຂດຄວບຄຸມຂອງຝ່າຍກອມມູນິດ ເພື່ອຮັກ ສາອຳນາດການຄວບຄຸມຕົວເມືອງໃຫຍ່ ຂອງລັດຖະບານ ລົນ ໂນນ. ການຖິ້ມລະ

ເປີດຍຸຕິລົງ ຕາມມະຕິຂອງສະພາສູງ ໃນທ້າຍປີນັ້ນ, ຮອດເວລານັ້ນ B-52 ໄດ້ຖິ້ມລະເບີດ ເຄິ່ງລ້ານໂຕນ ລົງໃສ່ປະເທດທີ່ ສະຫະລັດບໍ່ໄດ້ເຮັດສົງຄາມນຳ ຈຳນວນດັ່ງກ່າວ ຫຼາຍກວ່າລະເບີດທີ່ສະຫະລັດຖິ້ມລົງໃສ່ຍີ່ປຸ່ນ ໃນໄລຍະສົງຄາມໂລກຄັ້ງທີ II ເຖິງສອງເທົ່າ.

ຜົນກະທົບ ຈາກການຖິ້ມລະເບີດ ທົ່ວເຂດຊົນນະບົດຂອງ ກຳປູເຈຍ ເຮັດ ໃຫ້ມີຜູ້ບາດເຈັບລົ້ມຕາຍ ຈົນບໍ່ສາມາດປະເມີນໄດ້ ຈະເຫັນພາບໄດ້ແຈ້ງກວ່າ ຈາກ ການເລົ່າຂອງຜູ້ລອດຊີວິດ. ຝ່າຍກອມມູນິດ ກຳປູເຈຍ ໄດ້ຖືເອົາການຖິ້ມລະເບີດດັ່ງ ກ່າວເປັນເງື່ອນໄຂ, ຮຽກໂຮມການສະໜັບສະໜູນ ຈາກບັນດາຜູ້ລອດຊີວິດ, ເຊິ່ງເມື່ອ ກ່ອນ ເຂົາເຈົ້າເຫຼົ່ານັ້ນ ບໍ່ເຄີຍຮູ້ ຫຼື ເຄີຍຮູ້ເລື່ອງກ່ຽວກັບສົງຄາມ ໜ້ອຍທີ່ສຸດ.

ໃນພະນົມເປັນ ລັດຖະບານທີ່ບໍ່ທັນເຂົ້າທີ່ເຂົ້າທາງຂອງ ລົນ ໂນນ ພວມປະ ສົບບັນຫາ ການຫຼັ່ງໄຫຼເຂົ້າມາຂອງຜູ້ອົບພະຍົບ ປະມານສອງລ້ານຄົນ ຈາກເຂດທີ່ ຖືກລະເບີດທຳລາຍ ເຮັດໃຫ້ເກີດບັນຫາຕາມມາຢ່າງຫຼວງຫຼາຍ. ລະບົບການບໍລິຫານ ສາທາລະນະບໍ່ສາມາດໃຫ້ບໍລິການ, ກອງທັບທີ່ເຖິງວ່າຈະມີການຊ່ວຍເຫຼືອຂອງສະຫະ ລັດ ແຕ່ກໍບໍ່ສາມາດມາຍວົງລ້ອມຂອງຝ່າຍກອມມູນິດ ທີ່ພວມປິດລ້ອມເມືອງຫຼວງຢູ່ ນັ້ນໄດ້. ຕົ້ນປີ 1975 ພະນົມເປັນ ຖືກຕັດຂາດຈາກພາກສ່ວນອື່ນຂອງປະເທດ ກອງ ທັບກອມມູນິດໃກ້ຈະຍຶດເມືອງຫຼວງໄດ້ແລ້ວ, ລົນ ໂນນ ພ້ອມຄະນະທີ່ປຶກສາຈຳ ນວນໜຶ່ງ ແລະພະນັກງານຂອງສະຖານທູດສະຫະລັດ ໄດ້ຂຶ້ນເຄື່ອງບິນໜີອອກນອກ ປະເທດ.

ຜູ້ມາຢູ່ໃໝ່ໃນ ພະນົມເປັນ ແລະ ພະຕະບອງ (ແຂວງໃຫຍ່ອັນດັບສອງ ຂອງ ກຳປູເຈຍ ຖືກຍຶດໃນເດືອນເມສາ 1975) ເຮັດໃຫ້ຊາວເມືອງເດີມ ຕົກໃຈ ຍ້ອນການດຳລົງຊີວິດແບບ ຊາວປ່າ, ເຂົາເຈົ້າມິດງຽບ, ແຕ່ງຊຸດດຳ, ຖືອາວຸດໜັກ ແລະສ່ວນຫຼາຍຍັງອາຍຸໜຸ່ມນ້ອຍ. ສິ່ງທີ່ເຂົາເຈົ້າເຮັດໃນເວລາຕໍ່ມາ ແຮ່ງໜ້າຕົກໃຈ ກວ່າ. ໂດຍໃຊ້ເວລາພຽງ ຊາວສີ່ຊົ່ວໂມງ ຢູ່ພະນົມເປັນ ແລະເຈັດວັນຢູ່ພະຕະບອງ

ເຂົາເຈົ້າສາມາດບັງຄັບໃຫ້ ທຸກໆຄົນທີ່ອາໄສຢູ່ໃນເມືອງທັງສອງ ປະມານ 3,5 ລ້ານ ຄົນ ອອກເດີນທາງດ້ວຍການຍ່າງ ເພື່ອໄປປະຈຳການອອກແຮງງານຢູ່ຊົນນະບົດ ມີຜູ້ ເສຍຊີວິດຈຳນວນຫຼາຍ ລະຫວ່າງການເດີນທາງ ແລະທັງສອງຂະບວນກໍດຳເນີນໄປ ຢ່າງບໍ່ມີການຄວບຄຸມ. ນີ້ແມ່ນແຜນການ ເຮັດໃຫ້ເປັນຊົນນະບົດທີ່ ສະລົດ ຊາ ແລະ ຄະນະໄດ້ວາງແຜນ ຕະຫຼອດໄລຍະສົງຄາມ ຫຼືອາດຈະຕັ້ງແຕ່ສະໄໝທີ່ຍັງລີ້ຊ້ອນຢູ່ ຮວມເປັນເວລາສິບປີ ຫຼື ດົນກວ່ານັ້ນ.

ຊາວກຳປູເຈຍຫຼາຍລ້ານຄົນ ຈຳຕ້ອງຍ້າຍທີ່ຢູ່ ຂ້າມພື້ນທີ່ປະເທດ ຈາກນັ້ນ ບໍ່ດົນ ລະບົບການເງິນ, ໄປສະນີ, ຕະຫຼາດ, ໂຮງຮຽນ, ໂຮມເຖິງວັດວາອາຮາມ ທັງໝົດ ຫຼົ້ມສະຫຼາຍລົງ. ເຫຼືອພຽງສິ່ງທີ່ເຂົາເຈົ້າຮູ້ຈັກໃນຊື່ "ອົງການຂັ້ນສູງ (Higher Organization - angkar loeu)" ເຊິ່ງອາດຈະແມ່ນອີກຊື່ໜຶ່ງຂອງ ກຳມະການສູນກາງ ພັກ. ຍັງມີການປະຕິຮູບອື່ນອີກ ທັງພາສາ, ການນຸ່ງຖື, ຊົງຜົມຂອງແມ່ຍິງ, ການ ຕົກແຕ່ງເຮືອນຊານ, ລະບົບສານ ແລະອີກຫຼາຍໆຢ່າງ. ໂດຍທົ່ວໄປແມ່ນແບບເຄັ່ງຄັດ ຕາມແບບຕາເວັນອອກ, ການປະຕິຮູບມີຜົນບັງຄັບໃຊ້ໃນທົ່ວປະເທດ ຢ່າງໄວວາ. ຕາມບ້ານຕ່າງໆ ມີການຮ່ຳຮຽນການເມືອງ ເຊິ່ງເນັ້ນທີ່ຄວາມໄວ ແລະຄວາມບໍລິສຸດ ຂອງການປະຕິວັດກຳປູເຈຍ ບໍ່ໄດ້ອີງໃສ່ຕົ້ນແບບໃດໆ ຈາກຕ່າງປະເທດ, ມີການຮຽນ ອາທິດໜຶ່ງຫຼາຍຊົ່ວໂມງ.

ຕົ້ນປີ 1976 ເມື່ອລັດຖະທຳມະນູນສະບັບທີສາມ ຂອງກຳປູເຈຍຖືກບັນຍັດ ຂຶ້ນ ປະເທດປ່ຽນຊື່ເປັນ ລັດປະຊາທິປະໄຕ ກຳປູເຈຍ (Democratic Kampuchea) ສີຫະນຸ ເຊິ່ງໄດ້ຊື່ວ່າເປັນປະມຸກປະເທດ ຈົນຮອດເວລານັ້ນ ຍອມລາອອກຢ່າງງ່າຍ ດາຍ ໂດຍຖືກກັກບໍລິເວນໄວ້ໃນວັງຂອງຕົນເອງ ໃນພະນົມເປັນ.

ລັດປະຊາທິປະໄຕ ກຳປູເຈຍ ມີແຜນການກ້າວໄປສູ່ການເປັນ ລັດສັງຄົມນິຍົມ ແຕ່ໂຕຂອງພັກນັ້ນ ຍັງຖືກປິດເປັນຄວາມລັບ, ເຊິ່ງພາຍຫຼັງມາ ຈຶ່ງໄດ້ຮູ້ວ່າ ພັກມີ ແຜນການທີ່ຈະເປີດເຜີຍຕົວເອງ ໃນມື້ສະຫຼອງ 25 ປີ ຂອງການສ້າງຕັ້ງພັກ ໃນເດືອນ

ກັນຍາ 1976, ແຕ່ງານສະຫຼອງດັ່ງກ່າວ ບໍ່ເຄີຍໄດ້ເກີດຂຶ້ນ. ແຜນການສີ່ປີສະບັບທຳອິດ ທີ່ຄາດການວ່າ ຈະຖະແຫຼງໃນມື້ນັ້ນ ກໍຖືກມ້ຽນໄວ້, ເອກະສານດັ່ງກ່າວຍັງຄົງຢູ່ ແລະ ເປີດເຜີຍໃຫ້ເຫັນ ເບື້ອງເລິກທີ່ໜ້າສົນໃຈ ຂອງຂະບວນການປະຕິວັດ ໃນກຳປູເຈຍ.

ແຜນການດັ່ງກ່າວ ໄດ້ຮຽກຮ້ອງເຖິງ "ການກ້າວກະໂດດ ຢ່າງອັດສະຈັນ" ເຊິ່ງໝາຍເຖິງການຂ້າມຜ່ານໄລຍະຕ່າງໆ ເພື່ອກ້າວຂຶ້ນສັງຄົມນິຍົມ ຢ່າງໄວວາ. ເງື່ອນໄຂສຳຄັນ ຂອງຂະບວນການນີ້ແມ່ນ ຄວາມເປັນເອກະລາດ ແລະການຖຸ້ມ ໂຕເອງ ເຊິ່ງຈະເຮັດໄດ້ ແມ່ນຕ້ອງເພີ່ມປະລິມານການຜະລິດກະສິກຳ ໃຫ້ຮອດຈຸດ ທີ່ວ່າ ມູນຄ່າການສົ່ງອອກທັນຍາຫານ, ເຊິ່ງສ່ວນໃຫຍ່ແມ່ນເຂົ້ານັ້ນ ຫຼາຍພໍທີ່ຈະຊື້ ເຄື່ອງກົນຈັກ ເພື່ອສ້າງເງື່ອນໄຂ ການກ້າວຂຶ້ນເປັນອຸດສະຫະກຳ. ຄາດໝາຍດັ່ງກ່າວ ຖືກວາງພາຍໃຕ້ອຸດົມຄະຕິທີ່ວ່າ ກຳລັງທີ່ເຕົ້າໂຮມ ໃນການປະຕິວັດ ສາມາດເຮັດ ທຸກສິ່ງຢ່າງໄດ້ດັ່ງປະຕິຫານ. ແຜນການດັ່ງກ່າວ ຮຽກຮ້ອງໃຫ້ຍອດການຜະລິດແລະ ການສົ່ງອອກ ຫຼາຍຂຶ້ນກວ່າສອງເທົ່າ ຂອງໄລຍະກ່ອນການປະຕິວັດ ພາຍໃຕ້ຄາດ ໝາຍ ໃນທ້າຍປີ 1977 ໝາຍຄວາມວ່າ ເກືອບຈະທັນທີຫຼັງສົງຄາມ ແຕ່ເງື່ອນໄຂຂອງ ປະເທດຂະນະນັ້ນ ແມ່ນມີແຕ່ແຮງງານທີ່ຂາດປະສົບການ (ກຳລັງທີ່ຖືກເອີ້ນວ່າ "ຄົນ ໃໝ່" ໝາຍເຖິງຄົນທີ່ຖືກອົບພະຍົບອອກມາຈາກຕົວເມືອງ), ທັງຍັງຂາດເຂີນແຮງງານ ສັດ, ແນວພັນພືດ, ຢາປາບສັດຕູພືດ ແລະເຄື່ອງມືອື່ນໆ.

ໃນກອງປະຊຸມການເມືອງ, ບັນດາສະມາຊິກພັກ ໄດ້ຍົກຄຳຂວັນ "ສາມໂຕນ ຕໍ່ເຮັກຕາ", ການຮົບໂຮມສະບຽງອາຫານ ແລະຊັບສິນອື່ນໆ ແມ່ນໃຫ້ສຳເລັດໃນຕົ້ນປີ 1977 ແຕ່ກໍມີການຜ່ອນຜັນຢູ່ໃນບາງພື້ນທີ່. ເກີດການຂາດສະບຽງອາຫານຂຶ້ນ ໂດຍ ສະເພາະຢູ່ເຂດພາກຕາເວັນຕົກ ແລະຕາເວັນຕົກສຽງເໜືອ ເຊິ່ງທີ່ນັ້ນ ເຈົ້າໜ້າທີ່ລັດ ໄດ້ຕັດອັດຕາອາຫານຂອງປະຊາຊົນ (ແຕ່ຮັກສາສ່ວນຂອງຕົນໄວ້) ເພື່ອສ້າງພາບຕໍ່ ສະມາຊິກພັກຂັ້ນສູງວ່າ ມີຜົນຜະລິດສ່ວນເກີນຢູ່ເຂດນັ້ນ. ການຮັກສາພະຍາບານ ກໍ ອີງໃສ່ຢາພື້ນເມືອງ, ຊາວກຳປູເຈຍຫຼາຍແສນຄົນທີ່ເສຍຊີວິດ ລະຫວ່າງປີ 1976-

1979 ແມ່ນຍ້ອນຂາດການດູແລ ແລະບໍ່ມີການວິເຄາະພະຍາດ ຫຼື ວິເຄາະຜິດ ເຊິ່ງ ບາງພະຍາດເຄີຍຄວບຄຸມໄດ້ແລ້ວ ເຊັ່ນ ມາເລເລງ (ໄຂ້ຍຸງ) ເປັນຕົ້ນ.

ມີຄົນຕາຍ ຍ້ອນການປະຫານຊີວິດ ອີກນັບໝື່ນຄົນ ໃນໄລຍະຕົ້ນຂອງລັດ ຖະບານ ໂປນ ປົດ, ເຫຍື່ອສ່ວນໃຫຍ່ ແມ່ນຊັ້ນຄົນຜູ້ມີການສຶກສາ ໃນສັງຄົມກ່ອນການ ປະຕິວັດກຳປູເຈ. ໃນນັ້ນ ມີທັງ ເຈົ້າໜ້າທີ່ການອງທັບ ພະນັກງານລັດ ແລະຄູອາຈານ ຈຳນວນຫຼາຍ. ການຂ້າລ້າງດັ່ງກ່າວ ຮ້ອາຍລົງ ສະມາຊິກພັກຫຼາຍຄົນ ເຊື່ອວ່າ "ສັດຕູພາຍໃນ" ຖືກກຳຈັດແລ້ວ. ດ້ວຍເຫດຜົນທີ່ໜ້າສົງໄສບາງຢ່າງ ໂປນ ປົດ ໄດ້ປະກາດລາອອກຈາກຕຳແໜ່ງນາຍົກລັດຖະມຸນຕີ ໃນເດືອນຕຸລາ 1976 ແລະ ເບິ່ງຄືວ່າ ລາວໄດ້ອອກໄປຈາກພະນົມເປັນ ປະມານໜຶ່ງເດືອນ, ເຊື່ອກັນວ່າບາງເທື່ອ ລາວອາດຈະໜີຈາກກຸ່ມກໍ່ກະບົດ ທີ່ກໍ່ກະບົດບໍ່ສຳເລັດ ຫຼື ເປັນເຕັກນິກເພື່ອຕິດຕາມ ເບິ່ງສັດຕູພາຍໃນພັກ. ເດືອນຕຸລາ ຫາພະຈິກ ສະມາຊິກພັກຫຼາຍຮ້ອຍຄົນ ຖືກຮຽກ ໃຫ້ມາເຕົ້າໂຮມກັນ ໃນສູນປະຊຸມຢູ່ ຕູນ ສະເລັງ (Toul Sleng) ໃນພະນົມເປັນ, ເຂົາເຈົ້າຖືກທໍລະມານ ແລະຖືກບັງຄັບ ໃຫ້ຍອມຮັບຂໍ້ຫາວ່າ ຕົນເປັນ "ກະບົດ" ກ່ອນ ຈະຖືກປະຫານຊີວິດ, ບັນທຶກການສືບສວນ ເຊິ່ງດຳເນີນໃນໄລຍະປີ 1976-1978 ຍັງຄົງຫຼົງເຫຼືອຢູ່ ຄະດີທີ່ເຂົາເຈົ້າຖືກກ່າວຫາ ມີລັກສະນະບໍ່ແນ່ນອນ ຈົນຍາກຈະເຊື່ອ ໄດ້, ເຍື່ອບາງຄົນຖືກກ່າວຫາວ່າ ເຮັດວຽກໃຫ້ທັງສະຫະລັດ, ສະຫະພາບໂຊວຽດ ແລະ ຫວຽດນາມ ໃນເວລາດຽວກັນ. ໃນທ້າຍປີດັ່ງກ່າວ ມີເອກະສານພັກ ທີ່ລະບຸວ່າ ໂປນ ປົດ ແລະຄະນະ ເຊື່ອວ່າ ເຂົາເຈົ້າມີສັດຕູ ຢູ່ທົ່ວທຸກບ່ອນ ແລະສ່ວນໃຫຍ່ ແມ່ນສະມາ ຊິກພັກ ຂັ້ນນ້ອຍ.

ໂຕປ່ຽນສຳຄັນອັນໜຶ່ງແມ່ນ ທ່າທີຕໍ່ຕ້ານຫວຽດນາມ ທີ່ລັດປະຊາທິປະໄຕ ກຳປູເຈ ມີເພີ່ມຂຶ້ນເລື້ອຍໆ. ຄວາມສຳພັນຂອງສອງປະເທດ ຍັງຄົງສະຫງົບຢູ່ຈົນ ຮອດ ທ້າຍປີ 1976. ຕົ້ນປີ 1977 ບາງເທື່ອອາດຍ້ອນມີການສະໜັບສະໜູນຂອງ ຈີນ ທະຫານກຳປູເຈເລີ່ມໂຈມຕີເຂົ້າ ຊາຍແດນຫວຽດນາມ ເຊິ່ງບັດນີ້ ເຮົາຮູ້ວ່າການ ໂຈມຕີດັ່ງກ່າວແມ່ນການຍຶດຄືນດິນແດນ ເຊິ່ງຫວຽດນາມຄອບຄອງມາ ຫຼາຍຮ້ອຍປີ

ແຕ່ປະຊາຊົນໃນເຂດນັ້ນ ແມ່ນຊົນເຜົ່າທີ່ເວົ້າພາສາຂະແມ. ສົງຄາມລະຫວ່າງສອງ ຝ່າຍຖືກປິດ ບ່ໃຫ້ພາຍນອກຮັບຮູ້ ເປັນເວລາຫຼາຍເດືອນ ຈຶ່ງໄດ້ເປີດເຜີຍອອກໃນປີ 1978 ເມື່ອກອງທະຫານຫວຽດນາມຫົກກອງ ຖືກຕີຖອຍ, ທັນທີ ພັກກອມມູນິດ ຫວຽດນາມ ເລີ່ມໃຫ້ການສະໜັບສະໜູນກຸ່ມຕ່ໍຕ້ານ ໂປນ ປົດ ພາຍໃນພັກຂອງກຳປູ ເຈຽ ເຊິ່ງສ່ວນໃຫຍ່ ຢູ່ໃນເຂດພາກຕາເວັນອອກ ໃກ້ຊາຍແດນຫວຽດນາມ.

ກາງປີ 1978 ລັດປະຊາທິປະໄຕກຳປູເຈຽ ຕ້ອງເຮັດສົງຄາມທັງກັບພາຍໃນ ແລະພາຍນອກປະເທດ. ຕ່ໍສາຍຕາສາກົນແລ້ວ ລັດຖະບານ ໂປນ ປົດ ເປັນດັ່ງຜູ້ກ່ໍ ການຮ້າຍ, ເປັນໄລຍະທີ່ຄົນຫຼາຍໜື່ນຄົນ ຖືກປະຫານ, ຫຼາຍລ້ານຄົນ ເສຍຊີວິດຍ້ອນ ພະຍາດລະບາດ, ຖືກບັງຄັບໃຫ້ເຮັດວຽກໜັກ ແລະຂາດອາຫານ, ຜູ້ເສຍຊີວິດມີທັງ ຜູ້ຊາຍ, ແມ່ຍິງ ແລະເດັກນ້ອຍ. ລັດຖະບານ ໂປນ ປົດ ເປັນລັດຖະບານທີ່ຂາດ ຄວາມຊອບທຳ ໃນສາຍຕາຂອງປະຊາຊົນ ເມື່ອກອງທັບຫວຽດນາມໂຈມຕີ ໃນປີ 1979, ນອກຈາກກອງທັບຂອງ ໂປນ ປົດ ແລ້ວ ກໍບ່ໍມີໃຜຕ່ໍຕ້ານເລີຍ. ຫວຽດນາມ ເຂົ້າຮອດພະນົມເປັນ ໃນເດືອນມັງກອນ 1979. ລັດຖະບານທີ່ຢູ່ຂ້າງຫວຽດນາມ ແລະ ສາທາລະນະລັດ ປະຊາຊົນ ກຳປູເຈຽ (People's Republic of Kampuchea) ໄດ້ຮັບການສະຖາປະນາຂຶ້ນ ໃນອີກເດືອນໜຶ່ງຕ່ໍມາ, ໂປນ ປົດ ແລະທະຫານ ເຂົ້າໄປ ລີ້ໃນເຂດປ່າຊາຍແດນໄທ.

ທ້າຍປີ 1979 ຫວຽດນາມ ແລະລັດຖະບານທີ່ສ້າງຕັ້ງຂຶ້ນໃໝ່ ສາມາດຄວບ ຄຸມພື້ນທີ່ເກືອບທົ່ວປະເທດໄດ້ ແຕ່ກໍໄດ້ໃຫ້ໂອກາດຝ່າຍຕ່ໍຕ້ານໃນການລີ້ໄພ, ປາກົດ ວ່າ ມີຊາວກຳປູເຈຽຫຼາຍແສນຄົນ ໄດ້ອົບພະຍົບໄປອາໄສຢູ່ຝຣັ່ງ, ການາດາ, ສະຫະ ລັດ ອາເມລິກາ ແລະປະເທດໂລກຕາເວັນຕົກອື່ນໆ. ກອງກຳລັງຂອງ ໂປນ ປົດ ເຊິ່ງ ໄດ້ຮັບການສະໜັບສະໜູນຈາກ ໄທແລະຈີນ ຍັງຄົງເປັນອັນຕະລາຍຕ່ໍຄວາມໝັ້ນຄົງ ຂອງລັດຖະບານໃໝ່, ຂະນະທີ່ລັດຖະບານກໍຍັງບ່ໍໄດ້ຮັບການຊ່ວຍເຫຼືອ ຫຼືໄດ້ຮັບການ ຮັບຮູ້ ຈາກສະຫະປະຊາຊາດ. ລັດຖະບານ ປະຊາທິປະໄຕ ກຳປູເຈຽ (ລັດຖະບານ

ໂປນ ປົດ) ເຂົ້າຮ່ວມກຸ່ມ ພັນທະມິດ ຕໍ່ຕ້ານກອມມູນິດ ໃນປີ 1982, ສະຫະປະຊາຊາດ ຮັບຮູ້ພຽງແຕ່ ລັດຖະບານຂອງ ໂປນ ປົດ ເປັນເວລາຫຼາຍປີ.

ສາທາລະນະລັດປະຊາຊົນກຳປູເຈຍ ຍັງບໍ່ສາມາດຄວບຄຸມລະບົບເສດຖະກິດ ແລະການເມືອງຂອງຕົນ ໄດ້ດີເທົ່າທີ່ຄວນ ແລະໄດ້ຮັບການຄຸ້ມຄອງ ຈາກກຳລັງ "ອາສາສະໝັກ" ຫວຽດນາມນັບແສນຄົນ, ນະໂຍບາຍພາຍໃນແລະຕ່າງປະເທດດຳ ເນີນໄປຕາມຄຳແນະນຳຂອງຫວຽດນາມ. ຍ້ອນຄວາມຂົມຂື່ນ ນຳລັດຖະບານຂອງ ໂປນ ປົດ ຫວຽດນາມຈຶ່ງໄວ້ວາງໃຈແຕ່ພະນັກງານກຳປູເຈ ທີ່ໄປອາໄສຢູ່ຫວຽດນາມ ໃນຊຸມປີ 1950 ແລະຄົນຄື ປະທານປະເທດ ເຮັງ ຊຳຣິນ (Heng Samrin) ຜູ້ລຸກຂຶ້ນຕໍ່ຕ້ານ ໂປນ ປົດ ເມື່ອປີ 1977-1978. ປີ 1986 ສູນກາງພັກກອມມູນິດ ກຳປູເຈ ມີສະມາຊິກຢ່າງໜ້ອຍ 20 ຄົນ (ເມື່ອກ່ອນມີ 40 ຄົນ) ເຂົາເຈົ້າທັງບໍ່ມີ ຄວາມສຳພັນກັບຫວຽດນາມ ແລະບໍ່ມີຄວາມກ່ຽວຂ້ອງກັບພັກກອມມູນິດ ກ່ອນປີ 1979. ກຳປູເຈ ກໍຄືກັນກັບລາວ ທີ່ໄດ້ຮັບຜົນປະໂຫຍດຈາກການມີ "ສາຍພົວພັນ ແບບພິເສດ" ກັບຫວຽດນາມ, ແຕ່ທັງທີ່ປຶກສາ ຈາກຫວຽດນາມ ແລະ ເຈົ້າໜ້າທີ່ ກຳປູເຈເອງ ຕ່າງບໍ່ຢາກຈະເຂົ້າໄປຄວບຄຸມ ລະບົບເສດຖະກິດຂອງຊາວ ກຳປູເຈ ຫຼາຍເກີນຄວນ.

ແນ່ນອນວ່າ ຜູ້ນຳຂອງລັດຖະບານປະສົມທີ່ສ້າງຕັ້ງຂຶ້ນໃໝ່ ແມ່ນ ເຈົ້າສີຫະນຸ, ລາວໄດ້ຮັບການປ່ອຍຕົວຈາກການກັກບໍລິເວນ ໃນມື້ສຸດທ້າຍ ກ່ອນກອງທັບຫວຽດ ນາມບຸກໄປຮອດພະນົມເປັນ. ນັ້ນໝາຍຄວາມວ່າ ຕັ້ງແຕ່ປີ 1941 ມາ ມີແຕ່ສອງປີເຄິ່ງ ເທົ່ານັ້ນ ທີ່ ເຈົ້າສີຫະນຸ ບໍ່ໄດ້ກຳອຳນາດ.

ลาว

ປະຫວັດສາດການເມືອງຂອງລາວ ຕັ້ງແຕ່ປີ 1945 ເຕັມໄປດ້ວຍການເຄື່ອນໄຫວຂອງກຸ່ມຕ່າງໆ ທັງຂອງຕ່າງປະເທດ ແລະໃນລາວເອງ ເຊິ່ງໄດ້ສ້າງລັດທີ່ຊື່ວ່າ "ລາວ" (Laos) ຂຶ້ນມາເປັນຄັ້ງທຳອິດ. ກ່ອນທີ່ລັດຖະບານກອມມູນິດ ຈະຍຶດອຳນາດທົ່ວປະເທດໄດ້ໃນປີ 1975, ກຸ່ມເຫຼົ່ານັ້ນ ເຄື່ອນໄຫວພາຍໃຕ້ເງື່ອນໄຂຂອງແນວຄຶດທ້ອງຖິ່ນນິຍົມ (Regionalism) ແລະລະບົບສາຍຍາດ ຂອງບັນດາຊົນຊັ້ນປົກຄອງ, ຄວາມລຳບາກໃນການຕິດຕໍ່ສື່ສານ ແລະຄວາມຫຼ້າຫຼັງ ເຊິ່ງມີຢູ່ທຸກພື້ນທີ່ທົ່ວປະເທດ, ແລະສິ່ງສຳຄັນທີ່ສຸດ ແມ່ນ ບັນຍາກາດທາງການເມືອງ ແລະເງື່ອນໄຂທາງກາຍະພາບ ເຊິ່ງເປັນຜົນຮັບຈາກສົງຄາມອິນໂດຈີນ ຄັ້ງທີສອງ.

ກຸ່ມຕ່າງໆ ທັງພາຍໃນແລະຕ່າງປະເທດ ເຄື່ອນໄຫວໂດຍສວຍໃຊ້ຄວາມແຕກຕ່າງກັນຂອງຊາວລາວ ຜູ້ນັບຖືສາສະໜາພຸດທີ່ມັກອາໄສຢູ່ຕາມທົ່ງພຽງ ແລະຊົນເຜົ່າສ່ວນໜ້ອຍທີ່ອາໄສຢູ່ເຂດພູສູງ ແລະຕາມປ່າດົງຂອງປະເທດ. ໃນພາກໃຕ້ ຊົນເຜົ່າສ່ວນນ້ອຍມັກຖືກເອີ້ນວ່າ "ຂ້າ" ເຊິ່ງໝາຍຄວາມວ່າ "ທາດ" ໃນພາສາລາວ, ສ່ວນທາງພາກເໜືອກໍມີຊົນເຜົ່າ ທີ່ປາກເວົ້າພາສາຕີເບດ ເຊັ່ນ ມົ້ງ ແລະ ຢ້າວ ເຊິ່ງຂ້ອນຂ້າງມີເອກະລາດຂອງຕົນເອງ, ມີການຄ້າຂາຍກັບຈີນ ແລະປູກຝິ່ນເປັນສິນຄ້າ, ຮອດຊຸມປີ 1960-1970 ເຂົາເຈົ້າກາຍມາເປັນທະຫານຮັບຈ້າງ ຂອງສະຫະລັດ ເພື່ອເຮັດສົງຄາມກັບຝ່າຍກອມມູນິດ.

ລາວ ກໍຄືກັບຂະເໝນ ແລະຫຼາຍພາກຂອງຫວຽດນາມ ທີ່ປະເທດໄດ້ຕົກເຂົ້າສູ່ວົງຈອນຂອງຄວາມຂັດແຍ່ງ ໂດຍມີປະຊາຊົນຈຳນວນໜ້ອຍດຽວ ທີ່ຮັບຮູ້ກ່ຽວກັບຄວາມຂັດແຍ່ງດັ່ງກ່າວ ແລະບໍ່ໄດ້ໃຫ້ການສະໜັບສະໜູນແກ່ຝ່າຍໃດຢ່າງຈິງຈັງ. ຜູ້ທີ່ຮັບຮູ້ ສ່ວນໃຫຍ່ໄດ້ໃຫ້ຄວາມສົນໃຈ ກັບພັກກອມມູນິດອິນໂດຈີນ ແລະ ພັກທີ່ແຍກອອກຈາກນັ້ນ ເຊິ່ງໃນກໍລະນີພັກກອມມູນິດຂອງລາວ ໄດ້ເຕີບໃຫຍ່ ຈາກຈຳນວນສະມາຊິກໜ້ອຍກວ່າຮ້ອຍຄົນ ເມື່ອປີ 1945 ເປັນຫຼາຍກວ່າສີ່ສິບພັນຄົນ ໃນ

ຊຸມປີ 1980. ພັກກອມມູນິດຂອງລາວ ໄດ້ຮັບການສະໜັບສະໜູນຈາກຫວຽດນາມ, ແຕ່ສິ່ງທີ່ເຮັດໃຫ້ພັກດັ່ງກ່າວ ແຕກຕ່າງຈາກບັນດາຄູ່ຕໍ່ສູ້ພາຍໃນປະເທດ ແມ່ນການມີແນວຄຶດທາງບວກ ເພື່ອການຂະຫຍາຍ ແລະກຳອຳນາດທາງການເມືອງຂອງປະເທດ. ເປັນເວລາເກືອບສີ່ສິບປີ ທີ່ແນວຄຶດດັ່ງກ່າວ ເກືອບຈະບໍ່ມີການປ່ຽນແປງ. ໃນຊຸມປີ 1940 ບັນດາຜູ້ສັງເກດການທີ່ບໍ່ແມ່ນກອມມູນິດ ຄາດບໍ່ເຖິງເລີຍວ່າ ພັກກອມມູນິດລາວ ຈະໄດ້ຮັບໄຊຊະນະ ໃນປີ 1975.

ເດືອນມີນາ 1945 ຍີ່ປຸ່ນໄດ້ແນະນຳ ເຈົ້າຊີວິດ ສີສະຫວ່າງວົງ ໃຫ້ປະກາດເອກະລາດ ແຕ່ຜູ້ສຳເລັດລາຊະການໃນເວລານັ້ນ ຄື ເຈົ້າສີສະຫວ່າງວັດທະນາ ປະຕິເສດ ແລະປະກາດວ່າ ລາວຈະຄົງເປັນເມືອງໃຕ້ອາລັກຂາ ຂອງຝຣັ່ງຕໍ່ໄປ, ພະອົງຈຶ່ງຖືກຍີ່ປຸ່ນຈັບກຸມ. ຈາກນັ້ນ ເຈົ້າມະຫາອຸປະຣາດ ເພັດຊະຣາດ (1890-1959) ຈຶ່ງໄດ້ເຕົ້າໂຮມ ຜູ້ນຳທີ່ຕ້ອງການເອກະລາດຂອງຊາດລາວ ແລະປະກາດວ່າ ລາວເປັນປະເທດເອກະລາດ. ເມື່ອຝຣັ່ງກັບຄືນເຂົ້າມາຍຶດຄອງ ກໍຍັງບໍ່ສາມາດຍຶດວຽງຈັນໄດ້ ຈົນຮອດເດືອນເມສາ 1946, ເຈົ້າເພັດຊະຣາດ ແລະຜູ້ຮ່ວມອຸດົມການ ໄດ້ເອີ້ນໂຕເອງວ່າ "ລາວອິດສະລະ" ແລະສາມາດຄວບຄຸມພື້ນທີ່ສ່ວນໃຫຍ່ຂອງພາກກາງ ແລະພາກເໜືອລາວໄວ້ໄດ້. ສ່ວນທາງພາກໃຕ້ ເຊື້ອສາຍຂອງເຈົ້າຜູ້ປົກຄອງນະຄອນຈຳປາສັກ ຊື່ ບຸນອຸ້ມ (ເກີດປີ 1900) ເຂົ້າກັບຝ່າຍຝຣັ່ງ. ເມື່ອຝຣັ່ງສາມາດຄວບຄຸມທົ່ວປະເທດ ໃນປີ 1946, ເຈົ້າສີສະຫວ່າງວົງ ໄດ້ຮັບຣາງວັນ ໂດຍໄດ້ຮັບນາມວ່າ ເຈົ້າຜູ້ຄອງ "ລາຊະອານາຈັກລາວ" ເຊິ່ງໝາຍເຖິງດິນແດນທີ່ຖືກອ້ອມດ້ວຍເຂດຄວບຄຸມຂອງຝຣັ່ງ ຮວມທັງຈຳປາສັກ. ເຈົ້າເພັດຊະຣາດ ໄປລີ້ໄພຢູ່ປະເທດໄທ ພ້ອມກັບນ້ອງຊາຍ ເຈົ້າສຸວັນນະພູມມາ ແລະເຈົ້າສຸພານຸວົງ ຜູ້ເປັນນ້ອງຕ່າງມານດາ.

ຝຣັ່ງໃຊ້ເວລາອີກກວ່າສີ່ປີຕໍ່ມາ ເພື່ອທຳການເຈລະຈາ ເລື່ອງຄວາມເປັນເອກະລາດ ກັບຜູ້ນຳຝ່າຍລາວອິດສະລະ ຮວມທັງ ເຈົ້າສຸວັນນະພູມມາ ເຊິ່ງກັບຄືນມາຈາກປະເທດໄທ. ເຈົ້າເພັດຊະຣາດ ເຊິ່ງບໍ່ນິຍົມ ຣາຊະວົງຫຼວງພະບາງ ຍັງຄົງຢູ່ໃນບາງກອກ ຈົນຮອດປີ 1957. ເຈົ້າສຸພານຸວົງ ກໍປະຕິເສດເງື່ອນໄຂຂອງຝຣັ່ງ ແລະ

ເລືອກເຂົ້າປ່າ ເພື່ອຮ່ວມສ້າງຕັ້ງກອງກຳລັງ "ປະເທດລາວ" ແລະຮ່ວມກັບຫວຽດມິນ ຕໍ່ສູ້ຕ້ານຝຣັ່ງ ຕາມເຂດພາກຕາເວັນອອກຂອງລາວ ແລະພາກຕາເວັນຕົກສຽງເໜືອ ຂອງຫວຽດນາມ.

ເຈົ້າສຸພານຸວົງ ແລະຄົນອື່ນໆ ທີ່ເຂົ້າຮ່ວມກອງກຳລັງ "ປະເທດລາວ" ໄດ້ກາຍ ມາເປັນຜູ້ທີ່ມີຕຳແໜ່ງສຳຄັນ ຂອງລັດຖະບານກອມມູນິດລາວ ໃນເວລາຕໍ່ມາ, ໃນນັ້ນ ມີ ທ່ານ ໄກສອນ ພົມວິຫານ (ເກີດປີ 1920) ເຊິ່ງຮັບຕຳແໜ່ງນາຍົກລັດຖະມຸນຕີ ໃນປີ 1975, ແລະ ທ່ານ ໜູຮັກ ພູມສະຫວັນ (ເກີດປີ 1913) ຜູ້ຮັບຕຳແໜ່ງຮອງ ນາຍົກລັດຖະມຸນຕີ. ທັງສາມຄົນນີ້ ແລະຜູ້ນຳຄົນອື່ນໆ ຂອງພັກກອມມູນິດ ລ້ວນມີ ຄວາມລຶ້ງແກ່ນ ແລະເຮັດວຽກໃກ້ຊິດກັບຫວຽດນາມ ເຊິ່ງພໍ່ຂອງ ທ່ານ ໄກສອນ ກໍ ແມ່ນຄົນຫວຽດນາມ.

ເດືອນຕຸລາ 1953 ຝຣັ່ງປະກາດຈະໃຫ້ເອກະລາດແກ່ລາວ ພາຍໃຕ້ແຜນປະ ຕິບັດງານ ຂອງ "ສະຫະພັນຝຣັ່ງ" ໂດຍຈະຍັງຄົງກຳລັງທະຫານຂອງຕົນໄວ້. ຝຣັ່ງ ຖືກບັງຄັບໃຫ້ປະຕິບັດຄຳສັນຍາທັນທີ ເມື່ອຝ່າຍປະເທດລາວ ແລະຫວຽດມິນ ບຸກຍຶດ ເຂົ້າຮອດພາກກາງ, ປະເທດລາວ ສ່ຽງທີ່ຈະຖືກຕັດເປັນສອງສ່ວນ ຝຣັ່ງຟ້າວເສີມກຳ ລັງຢູ່ດຽນບຽນຟູ ທາງພາກຕາເວັນຕົກສຽງເໜືອຫວຽດນາມ ເພື່ອຈະສູ້ຢັນກັບຝ່າຍ ຫວຽດມິນ ແລະປະເທດລາວ ທີ່ຄາດວ່າຈະບຸກເຂົ້າຫຼວງພະບາງ, ແຕ່ຫຼວງພະບາງກໍ ບໍ່ເຄີຍຖືກໂຈມຕີ ແມ່ນດຽນບຽນຟູເອງທີ່ແຕກ ຫຼັງຈາກຖືກໂຈມຕີຢ່າງໜັກ ໃນເດືອນ ພຶດສະພາ 1954, ເຮັດໃຫ້ກອງປະຊຸມເຊີແນວ ກ່ຽວກັບຕາເວັນອອກໄກ ຕ້ອງໄດ້ຫັນ ມາສົນໃຈຕໍ່ບັນຫາ ອິນໂດຈີນ.

ສັນຍາເຊີແນວ ອະນຸຍາດໃຫ້ກຳລັງຝ່າຍປະເທດລາວ ເຂົ້າມາເຕົ້າໂຮມກັນ ຢູ່ສອງແຂວງພາກເໜືອ ເຊິ່ງໄດ້ກາຍເປັນຖານທີ່ໝັ້ນຕໍ່ມາ ຈົນຝ່າຍກອມມູນິດຍຶດອຳ ນາດທົ່ວປະເທດ ໃນປີ 1975. ໃນໄລຍະນັ້ນ ກອງກຳລັງກອມມູນິດທີ່ມາເຕົ້າໂຮມ ຢູ່ສອງແຂວງ ມີໜ້ອຍກວ່າສອງພັນຄົນນັ້ນ ອາດຈະໜ້ອຍກວ່າກອງກຳລັງກອມມູນິດ

ໃນກຳປູເຈຍອີກຊ້ຳ ແຕ່ຄວາມອຸ່ນອາຍໃນ ຣາຊະສຳນັກລາວ, ການເສື່ອມຖອຍທາງ ອຳນາດການທະຫານຂອງຝຣັ່ງ ແລະ ຄວາມສຳພັນແໜ້ນແຟ້ນກັບຫວຽດນາມ ເຮັດ ໃຫ້ກຳລັງກອມມູນິດລາວ ມີທ່າແຮງສູງກວ່າ ຂະບວນການລຸກຮືຢູ່ພາກໃຕ້ຫວຽດນາມ ແລະກຳປູເຈຍ ໃນໄລຍະສິ້ນສຸດ ຂອງສົງຄາມອິນໂດຈີນກັບຝຣັ່ງ.

ໄລຍະຫຼັງຂອງຊຸມປີ 1950 ສະຫະລັດພະຍາຍາມຢ່າງບໍ່ລົດລະ ທີ່ຈະເຕົ້າ ໂຮມແລະອຸ້ມຊູລັດຖະບານລາວ ທີ່ຈະສາມາດຕ້ານທານຕໍ່ໄຊຊະນະຂອງຝ່າຍກອມ ມູນິດ ແຕ່ກໍປະສົບຜົນສຳເລັດໜ້ອຍຫຼາຍ. ທັງທີ່ລັດຖະບານເຫຼົ່ານີ້ ບາງລັດຖະບານມີ ທັດສະນະນິຍົມອາເມລິກາ ເປັນພິເສດ ແຕ່ກໍບໍ່ສາມາດຮຽກການສະໜັບສະໜູນຈາກ ມວນຊົນ ໂດຍສະເພາະຊາວຊົນນະບົດຂອງປະເທດໄດ້, ສ່ວນໜຶ່ງອາດຍ້ອນອາຍຸຂອງ ລັດຖະບານເຫຼົ່ານີ້ ສັ້ນຫຼາຍ ຈົນບໍ່ມີເວລາຈະເອົາໃຈໃສ່ກ່ຽວກັບ ບັນຫາໃນເຂດຊົນ ນະບົດ, ສ່ວນໜຶ່ງອາດຍ້ອນ ເງິນຊ່ວຍເຫຼືອດ້ານເສດຖະກິດຈາກອາເມລິກາ ເກືອບ ບໍ່ໄດ້ໃຊ້ກັບເຂດອື່ນນອກວຽງຈັນເລີຍ, ແລະອີກສ່ວນໜຶ່ງອາດຍ້ອນວ່າ ປະເດັນກ່ຽວ ກັບສົງຄາມເຢັນ ແລະນະໂຍບາຍຂອງ ວໍຊິງຕັນ ເປັນເລື່ອງໄກໂຕຫຼາຍ ສຳລັບປະຊາ ຊົນລາວ.

ປີ 1960 ໂດຍເຊື່ອວ່າມີການສະໜັບສະໜູນຈາກຝຣັ່ງ ນາຍທະຫານລາວ ຊື່ ກອງແລ ໄດ້ຈັດຕັ້ງກອງກຳລັງເປັນກາງຂຶ້ນ ແລະໄດ້ຮັບການສະໜັບສະໜູນຈາກ ມວນຊົນຢ່າງຫຼວງຫຼາຍ ເຮັດໃຫ້ທັງຝ່າຍສະຫະລັດ ແລະ ຝ່າຍກອມມູນິດ ຕ້ອງຄິດ ໜັກ, ມີຄວາມກັງວົນວ່າ ກອງກຳລັງດັ່ງກ່າວ ອາດສາມາດຂຶ້ນມາມີອຳນາດປົກຄອງ ລາວໄດ້. ຕໍ່ມາກອງກຳລັງກອມມູນິດ ຮ່ວມກັບກຳລັງກອງແລ ສາມາດຍຶດຫ້ອງການ ເພື່ອການຊ່ວຍເຫຼືອດ້ານການເງິນແກ່ກອງທັບລາວ ຂອງສະຫະລັດໄດ້. ສະຫະລັດ ຍອມເຂົ້າຮ່ວມກອງປະຊຸມເຊີແນວຄັ້ງທີສອງ ເຊິ່ງໄດ້ປະຊຸມກັນກ່ຽວກັບ ຄວາມເປັນ ກາງຂອງປະເທດລາວ ໂດຍມີນາໆຊາດເຂົ້າຮ່ວມ.

ເຖິງແມ່ນວ່າ ສະຫະລັດບໍ່ຢາກຈະເຂົ້າມາເຮັດສົງຄາມໃນລາວ ຢ່າງເຕັມຮູບແບບ ແຕ່ນະໂຍບາຍຂອງສະຫະລັດ ຫຼັງປີ 1962 ແມ່ນຫາວິທີລົ້ມລັດຖະບານເປັນກາງ ຂະນະດຽວກັນກໍພະຍາຍາມກໍາຈັດຝ່າຍກອມມູນິດ. ຍ້ອນດ້ານນີ້ດັ່ງກ່າວ ແລະມີເລື່ອງຂອງຜົນປະໂຫຍດມະຫາສານມາກ່ຽວຂ້ອງ ເຮັດໃຫ້ຂໍ້ຕົກລົງຕາມສັນຍາເຊີແນວ ຖືກທໍາລາຍຢ່າງໄວວາ, ປີ 1963 ລາວເຂົ້າສູ່ສົງຄາມ ເຊິ່ງດໍາເນີນໄປຄຽງຄູ່ກັບການຕໍ່ສູ້ໃນຫວຽດນາມ.

ການຊ່ວຍເຫຼືອທາງການທະຫານຈາກຫວຽດນາມ ຫຼັ່ງໄຫຼສູ່ຝ່າຍກອມມູນິດລາວ ແລະ ການທີ່ຫວຽດນາມໄດ້ນໍາໃຊ້ດິນແດນລາວ ເພື່ອເດີນທັບລົງທາງພາກໃຕ້ ຕັ້ງແຕ່ປີ 1965 ມານັ້ນ ເຮັດໃຫ້ສະຫະລັດ ຖິ້ມລະເບີດໃສ່ດິນແດນຂອງລາວຢ່າງໜັກໜ່ວງ. ປະມານການວ່າ ໃນປີ 1970 ມີທະຫານຫວຽດນາມເໜືອ 70,000 ຄົນ ເຂົ້າມາປະຈໍາການ ແລະລໍາລຽງພົນຜ່ານດິນແດນລາວ. ການຖິ້ມລະເບີດຂອງອະເມລິກາ ເຊິ່ງຮອດບໍ່ຈະແຈ້ງວ່າ ແມ່ນຖິ້ມໃສ່ທີ່ຕັ້ງຂອງຫວຽດນາມ ຫຼືບໍ່ ເຮັດໃຫ້ຊາຍ, ຍິງ ແລະເດັກນ້ອຍ ນັບລ້ານຄົນ ເຊິ່ງສ່ວນໃຫຍ່ເຄີຍອາໄສຢູ່ເຂດພື້ນທີ່ສູງ ຕ້ອງປະຖິ້ມບ້ານເກີດ ກາຍເປັນຜູ້ອົບພະຍົບ ມາອາໄສໃນຄ້າຍອົບພະຍົບທີ່ສະຫະລັດສ້າງຂຶ້ນ. ຕົ້ນຊຸມປີ 1970 ສໍາລັບໂລກຕາເວັນຕົກ ລາວຄ້າຍຄືວ່າເປັນພຽງລັດໜຶ່ງເທົ່ານັ້ນ.

ກອງປະຊຸມເພື່ອສັນຕິພາບ ລະຫວ່າງຫວຽດນາມແລະສະຫະລັດ ຢູ່ປາຣີ ເມື່ອປີ 1973 ຫວຽດນາມສາມາດກົດດັນ ໃຫ້ເກີດສັນຍາຢຸດຍິງໃນລາວ, ເຮັດໃຫ້ສະຖານະການໃນລາວ ໃກ້ຈະຮອດມື້ທີ່ສົງຄາມຍຸຕິແລ້ວ. ມີການສ້າງຕັ້ງລັດຖະບານປະສົມຂຶ້ນ, ເລີ່ມມີເຄົ້າວ່າ ລະບອບກະສັດທີ່ປົກຄອງດິນແດນນີ້ມາກວ່າຫ້າຮ້ອຍປີ ໃກ້ຈະສິ້ນສຸດແລ້ວ ແລະລະບອບໃໝ່ ກໍໜ້າຈະແມ່ນ ກອມມູນິດ. ພາຍຫຼັງໄຊຊະນະຂອງຫວຽດນາມຢູ່ພາກໃຕ້ ແລະໄຊຊະນະຂອງ ໂປນ ປົດ ຢູ່ກໍາປູເຈຍ ຝ່າຍກອມມູນິດໃນຄະນະລັດຖະບານປະສົມ ໄດ້ເພີ່ມຄວາມກົດດັນຕໍ່ສະມາຊິກລັດຖະບານ ຈົນນໍາໄປສູ່ການຍຸບຄະນະລັດຖະບານ ແລະການຍຸບເລີກລະບອບລາຊະອານາຈັກ ໃນທ້າຍປີ 1975. ບັນດານັກວິຊາການ ໄດ້ຊຽນເຖິງຄວາມຄ້າຍຄືກັນຂອງເຫດການໃນລາວ ກັບ

ຢູ່ ເຊັກໂກສະໂລວາກີ ໃນປີ 1948. ທັງສອງກໍລະນີ ຝ່າຍກອມມູນິດ ໄດ້ຂຶ້ນກຳອຳນາດ ໂດຍປາສະຈາກຄວາມຮຸນແຮງ ແລະສາມາດຮຽກໂຮມການສະໜັບສະໜູນຢ່າງກວ້າງຂວາງ. ໃນກໍລະນີຂອງລາວ ການສະໜັບສະໜູນດັ່ງກ່າວ ມາຈາກຄວາມເບື່ອໜ່າຍຕໍ່ຜູ້ປົກຄອງທີ່ເປີເປື້ອນ, ໂກງກິນ ແລະ ນຳເອົາສິ່ງຄາມເຂົ້າມາສ້າງຜົນກະທົບ ຕໍ່ທຸກຊັ້ນຄົນໃນສັງຄົມ ຂະນະທີ່ບໍ່ສາມາດປະຕິເສດຄວາມຈິງທີ່ວ່າ ລັດຖະບານກອມມູນິດ ໄດ້ປົກຄອງເຂດຄວບຄຸມຂອງຕົນ ຢ່າງຍຸດຕິທຳ ແລະເປັນທີ່ຍອມຮັບ.

ໃນຕົ້ນປີ 1976 ສະມາຊິກພັກກອມມູນິດຖືກສົ່ງລົງຮາກຖານຕາມເຂດທົ່ງພຽງ ເພື່ອການກໍ່ຕັ້ງສະຫະກອນ ແລະເຈົ້າໜ້າທີ່ຂອງລັດຖະບານເກົ່າ ຖືກເຕົ້າໂຮມເພື່ອເຂົ້າຮັບ "ການສຶກສາອົບຮົມ". ນັບແຕ່ໄລຍະດັ່ງກ່າວ ຮອດຊຸມປີ 1980 ມີຊາວລາວນັບແສນຄົນ ເຊິ່ງຮວມມີສະມາຊິກຂອງອະດີດຊົນຊັ້ນປົກຄອງ ໄດ້ຂ້າມແມ່ນ້ຳຂອງໄປຍັງປະເທດໄທ. ຊາວມົ້ງນັບໝື່ນຄົນ ທີ່ເຄີຍເປັນທະຫານຮັບຈ້າງຂອງສະຫະລັດ ກໍໄດ້ອົບພະຍົບໄປສູ່ປະເທດຕາເວັນຕົກ. ສະຖານະການດັ່ງກ່າວ ເຮັດໃຫ້ລັດຖະບານຕ້ອງແບກຮັບບັນຫາການຂາດບຸກຄະລາກອນ. ລັດຖະບານລາວປະຕິບັດນະໂຍບາຍການຕ່າງປະເທດ ໂດຍອີງໃສ່ຫວຽດນາມ ໂດຍສະເພາະໄລຍະຫຼັງປີ 1979 ຄວາມສຳພັນຂອງຊາດໃນອິນໂດຈີນ ແໜ້ນແຟ້ນເປັນພິເສດ. ໄລຍະດຽວກັນນັ້ນ ນະໂຍບາຍຫັນເປັນສະຫະກອນ ບໍ່ປະສົບຜົນສຳເລັດ ຢູ່ຫຼາຍເຂດ ເຮັດໃຫ້ລັດຖະບານໄດ້ຜ່ອນຄາຍການຄວບຄຸມ ແລະລະບົບເສດຖະກິດຕະຫຼາດ ໄດ້ເຂົ້າມາມີບົດບາດອີກຄັ້ງໜຶ່ງ.ສິ່ງທ້າທາຍໃຫຍ່ອັນໜຶ່ງ ແມ່ນການຟື້ນຟູຄືນຄວາມສຳພັນກັບ ໄທ ແລະຊາດສະມາຊິກຂອງ ASEAN ຄືນໃໝ່. ການເມືອງຂັ້ນສູນກາງຂອງປະເທດ ມີສະຖຽລະພາບ. ຈົນຮອດ ຊຸມປີ 1980 ທ່ານ ໄກສອນ ພົມວິຫານ ຍັງຄົງຮັກສາຄວາມເປັນຜູ້ນຳຜ່ານລະບົບການຈັດຕັ້ງຂອງພັກ ດັ່ງທີ່ເພິ່ນສາມາດຮັກສາມາຕະຫຼອດໄລຍະສີ່ສິບປີ. ປະເທດລາວ ຍັງຕ່າງກັບ ກຳປູເຈຍ ໃນຈຸດທີ່ ລາວ ໄດ້ມີສາຍສຳພັນຢ່າງເປັນທາງການກັບຫຼາຍປະເທດທີ່ບໍ່ແມ່ນກອມມູນິດ ເຮັດໃຫ້ລາວໄດ້ຮັບຜົນປະໂຫຍດຈາກການພົວພັນກັບຕ່າງປະເທດ ທີ່ກວ້າງຂວາງກວ່າ ແລະໄດ້ຮັບການຊ່ວຍເຫຼືອຫຼາຍກວ່າ, ສະຖາບັນສິ່ງໃນລາວ ກໍສາມາດເຄື່ອນໄຫວຢ່າງເປີດເຜີຍ ກວ່າຢູ່ກຳປູເຈຍ.

35

ພະຣາຊະອາມາຈັກໄທ

ນະໂຍບາຍຮ່ວມມືກັບຍີ່ປຸ່ນສະໄຫມສົງຄາມຂອງໄທ ໄດ້ສ້າງຜົນປະໂຫຍດໃຫ້ແກ່ຄົນໄທ ຕາບໃດທີ່ຍີ່ປຸ່ນຍັງເຮືອງອຳນາດຢູ່ເທົ່ານັ້ນ. ນະໂຍບາຍດັ່ງກ່າວຊ່ວຍໃຫ້ປະເທດໄທລອດພົ້ນຈາກຄວາມເສຽຫາຍອັນໃຫຍ່ຫຼວງ ແລະ ປ່ອຍໃຫ້ອຳນາດໃນມືລັດຖະບານດຳເນີນຕໍ່ໂດຍບໍ່ມີແນວຄິດຂວາງ. ເຖິງຢ່າງໃດກໍດີ ເມື່ອເຫດການສົງຄາມໄດ້ປ່ຽນໄປ ກາຍມາເປັນການຕໍ່ຕ້ານຍີ່ປຸ່ນ ນະໂຍບາຍຂອງໄທ ກໍຈຳເປັນໄດ້ປ່ຽນໄປນຳ. ດ້ວຍເຫດນີ້ ເມື່ອເດືອນສິງຫາ 1944 ລັດຖະສະພາ ຈຶ່ງບັງຄັບໃຫ້ຈອມພົນ ປ.ພິບູນສົງຄາມ ລາອອກ ແລະ ຕັ້ງລັດຖະບານໃໝ່ຂຶ້ນມາແທນ ໂດຍມີນັກການເມືອງທີ່ເປັນພົນລະເຮືອນ ຄື ທ່ານ ຄວງ ອະໄພວົງ ເປັນນາຍົກລັດຖະມົນຕີ ແລະ ມີ ທ່ານ ປຣີດີ ພະນົມຍົງ ເປັນຜູ້ຊີ້ແນະຢູ່ເບື້ອງຫຼັງ. ນັບຕັ້ງແຕ່ໄລຍະແຮກຕົ້ນຂອງສົງຄາມມາພຸ້ນແລ້ວ ທ່ານ ປຣີດີ ໄດ້ເຮັດໜ້າທີ່ ຜູ້ສຳເລັດຣາຊະການແຜ່ນດິນແທນເຈົ້າຊີວິດ ອານັນທະມະຫິດົນ ທີ່ຍັງຊົງພະເຍົາຢູ່ ໂດຍການຈັດຂະບວນການໃຕ້ດິນຕໍ່ຕ້ານຍີ່ປຸ່ນ ຄືຂະບວນການເສລີໄທ ທີ່ສັ່ງການອອກມາແຕ່ຫ້ອງການຜູ້ສຳເລັດຣາຊະການແຜ່ນດິນ ໂດຍໄດ້ຮັບການຊຸກຍູ້ຈາກກອງທັບອັງກິດໜ່ວຍທີ 136 ທີ່ກຳລັງປະຕິບັດການຢູ່ສີລັງກາ ແລະ ໂດຍສຳນັກງານອາເມລິກາ ຜະແນກຍຸດທະສາດຜ່ານຢູນນານ. ການຕິດຕໍ່ປະສານງານເຫຼົ່ານັ້ນ ຖືກໝຸນໃຊ້ເພື່ອ ໃຫ້ໄດ້ຮັບຄວາມປານີຈາກຝ່າຍພັນທະມິດ ໂດຍສະເພາະເມື່ອຄົນໄທບາງຄົນສະເໜີໃຫ້ມີການລຸກຮືຂຶ້ນຕໍ່ຕ້ານຍີ່ປຸ່ນ ໃນເດືອນພຶດສະພາ ປີ 1945 ແຕ່ຂໍ້ສະເໜີນັ້ນ ຖືກປະຕິເສດ ໃນເວລາຕໍ່ມາ.

ເມື່ອສົງຄາມໂລກຄັ້ງທີ II ຍຸຕິລົງ ໃນເດືອນສິງຫາ ສະຖານະພາບອັນໜັກໜ່ວງໃນລະດັບສາກົນຂອງປະເທດໄທ ໄດ້ຖືກເຜີຍແບອອກ ໂດຍຝ່າຍພັນທະມິດ

ຜູ້ມີໄຊ. ໃນເວລານັ້ນ ປະເທດໄທຍັງຄົງຍຶດຄອງດິນແດນສ່ວນໜຶ່ງ ຂອງປະເທດລາວ ແລະ ກຳປູເຈ ເຊິ່ງຜະໜວກເຂົ້າຕື່ມພາຍຫຼັງສົງຄາມອິນໂດຈີນ ປີ 1940-41 ເຊັ່ນດຽວກັນກັບ ສີ່ລັດຂອງມະລາຢູພາກເໜືອ ແລະ ສອງລັດຂອງພະມ້າ ເຊິ່ງຍີ່ປຸ່ນ ຍົກໃຫ້ ໃນປີ 1943. ອັງກິດໄດ້ຍັດຢູ່ສະຖານະພາບອັນໜຶ່ງ ເຊິ່ງໃກ້ຄຽງກັບຖານະ ລັດໃນອາລັກຂາໃຫ້ແກ່ປະເທດໄທ ໂດຍຍື່ນຂໍ້ຮຽກຮ້ອງ 18 ຂໍ້. ການຮັບເອົາຂໍ້ຮຽກ ຮ້ອງເຫຼົ່ານັ້ນ ອາດຈະໝາຍເຖິງການເຮັດໃຫ້ປະເທດໄທ ຖືກຄວບຄຸມທາງດ້ານການ ເສດຖະກິດ ການປົກຄອງ ແລະການທະຫານ ແລະ ທັງຮຽກຮ້ອງ ໃຫ້ປະເທດໄທ ສົ່ງເຂົ້າສານໃຫ້ແກ່ປະເທດພັນທະມິດ 1.5 ລ້ານໂຕນ ໂດຍບໍ່ ຄິດຄ່າ ໃນຖານະ "ມາຕະການພິເສດ ສຳລັບສ້າງຄວາມປອງດອງ ແລະ ການຊ່ວຍ ເຫຼືອຈາກປະເທດໄທ ຕໍ່ຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຍ້ອນປະເທດໄທ ປະຕິເສດບໍ່ສົ່ງ ເຂົ້າໄປໃຫ້ໃນລະ ຫວ່າງການເຮັດສົງຄາມ" ສະຫະລັດອາເມລິກາ ດຳເນີນການກົດດັນ ທາງການທູດ ຢ່າງແຮງ ແລະທ່ວງທັນ ຕໍ່ນາຍົກລັດຖະມຸນຕີຜູ້ໃໝ່ ຄື ທ່ານ ເສນີ ປຣາໂมด ເຊິ່ງ ໃນສະໄໝສົງຄາມ ເປັນເອກອັກຄະລາຊະທູດຢູ່ ສະຫະລັດ ອາເມລິກາ ແລະໄດ້ ຕັດສິນໃຈເອງ ບໍ່ແຈ້ງໃຫ້ທາງອາເມລິກາຮູ້ຢ່າງເປັນທາງການວ່າ ປະເທດໄທປະກາດ ສົງຄາມກັບອາເມລິກາ. ຂໍ້ຮຽກຮ້ອງທີ່ໜັກໜ່ວງເກີນໄປນີ້ ໄດ້ຮັບການຜ່ອນຜັນລົງ ແຕ່ ປະເທດໄທຍັງຈຳຕ້ອງຕົກລົງ ສົ່ງເຂົ້າສານໃຫ້ແກ່ປະເທດພັນທະມິດໃນລາຄາຕ່ຳ. ຂໍ້ ຮຽກຮ້ອງຂອງປະເທດຝຣັ່ງ ໃຫ້ໄທສົ່ງຄືນດິນແດນລາວກັບຂະເໝນນັ້ນ ແຮ່ງຖືກຕໍ່ ຕ້ານຮຸນແຮງກວ່າ ແຕ່ນັ້ນມັນກໍແມ່ນສິ່ງທີ່ມີຄຸນຄ່າທີ່ສຸດແລ້ວ ທີ່ຝຣັ່ງຮຽກຮ້ອງເອົາ ຈາກປະເທດໄທ ສຳລັບອະນຸຍາດໃຫ້ໄທ ເຂົ້າຢູ່ໃນອົງການສະຫະປະຊາຊາດ ອັນເປັນ ສັນຍະລັກແຫ່ງການເຄົາຣົບເຊື່ອຖືຂອງນາໆຊາດ ເຊິ່ງໄທມີຄວາມຕ້ອງການແຮງ ເພື່ອ ຮັບປະກັນປະເທດຂອງຕົນ. ຫຼັງຈາກລົງນາມໃນສົນທິສັນຍາ ກັບອັງກິດ ແລະ ຝຣັ່ງ ໃນເດືອນ ມັງກອນ ແລະພະຈິກ ປີ 1946 ແລ້ວ ປະເທດໄທ ກໍໄດ້ຮັບອະນຸມັດໃຫ້ເຂົ້າ ເປັນສະມາຊິກຂອງ ອົງການສະຫະປະຊາຊາດ ໃນເດືອນທັນວາ ນັ້ນເປັນການສະແດງ ອອກ ເປັນຄັ້ງທຳອິດ ເຖິງນະໂຍບາຍຕ່າງປະເທດ ແບບເທ່ຕາເວັນຕົກຂອງໄທ.

ການເມືອງພາຍຫຼັງສົງຄາມໃນປະເທດໄທ ຖືກກະທົບກະເທືອນຢ່າງແຮງຈາກ ການໃຫ້ຄວາມສຳຄັນສູງ ແກ່ກິດຈະການພາຍນອກຂອງປະເທດ ລະຍະລຸນຫຼັງການ

ສ້ຽງສຸດສິ້ງຄາມໃໝ່ໆ ໄດ້ຈັດວາງຮູບແບບທັ້ງຫຼາຍ ທີ່ຍັ້ງສືບຕໍ່ຄົ້ງຕ໊ອຢູ່ຕໍ່ມາ. ກອ້ງທັບ ເຊ່ິ່ງຍັ້ງມີຈຸດເດ່ັ່ນມາແຕ່ກ່ອນສິ້ງຄາມ ໄດ້ສະທ້ອນໃຫ້ເຫັນເຖ່ິ້ງຄວາມເປັນປ໊ກແຜ່ນ ຂອ້ງຂ້ັ້ນນ ຳ ທາ້ງກ ານທະຫ ານ ແລະ ບ່ົ້ງບອກເຖ່ິ້ງຄວາມອ່ອນແອ ຂອ້ງຝ ່ ຍສັດຕູທ ່ ີ ຖ ່ ິ ກ ແຍກອອກເປັນສ ່ ວນຍ ິ ບຍ ່ ອ ້ ຍ ແຕ ່ ຢ ່ ້ ງໜ ້ ອ ້ ຍກ ໍ ໄ ດ ້ ຮ ັ ບຄ ວ າ ມ ເ ຊ ່ ິ ອ ຖ ່ ິ ຢ ູ ່ ລ ະ ຍ ະ ໜ ່ ິ ້ ງ (ຍ ້ ອ ນ ວ ່ າ ໄ ດ ້ ໄ ປ ຮ ່ ວ ມ ມ ◌ ◌ ◌

ຝ່າຍກອມມູນິດ ມາເຖິງຂັ້ນນີ້ ທ່ານ ຄວງ ກໍຖືກບັງຄັບໃຫ້ລາອອກ ແລ້ວ ຈອມພົນ ປ.ພິບູນສົງຄາມ ກໍໄດ້ຄືນມາເປັນນາຍົກລັດຖະມຸນຕີ ອີກເທື່ອໜຶ່ງ.

ສຳລັບສາມປີທຳອິດຂອງການປົກຄອງ ຍຸກຈອມພົນ ປ.ພິບູນສົງຄາມ ກອງທັບຢູ່ໃນສະພາບສະຫງົບ ແລະ ລັດຖະບານເປັນລັດຖະບານແບບມີສະພາຜູ້ແທນຄືເກົ່າ. ເຖິງຢ່າງໃດກໍດີ ນັກການເມືອງທີ່ເປັນພົນລະເຮືອນ ກໍຖືກແບ່ງແຍກຈາກກັນ. ພວກຫົວຮຸນແຮງ ນຳພາໂດຍ ທ່ານ ປຣີດີ ສູນເສຍຊື່ສຽງໄປ ຍ້ອນການສຶບສວນຄະດີກໍລະນີການສະຫວັນນະຄົດຂອງ ເຈົ້າຊີວິດອານັນທະມະຫິດົນ ເຊິ່ງຍັງຄົງດຳເນີນໄປບໍ່ສຸດບໍ່ແລ້ວເປັນ ຂະນະທີ່ພັກປະຊາທິປັດ ເຊິ່ງ ນຳໜ້າໂດຍທ່ານ ຄວງ ອະໄພວົງ ກໍເກີດຄຸງດແຄ້ນຂຶ້ນມາ ເພາະຖືກຖອນອອກຈາກອຳນາດ. ກອງກຳລັງທະຫານປະຈຳການ ແຕກອອກເປັນສອງຝ່າຍ ສ່ວນກອງທັບເອງ ກໍແຕກແຍກ ແລະ ນາຍທະຫານຮຸ່ນໜຸ່ມຈຳນວນໜຶ່ງ ກໍຍັງບໍ່ໄວ້ເນື້ອເຊື່ອໃຈ ຈອມພົນ ປ.ພິບູນສົງຄາມ ລັດຖະບານຢາກໄດ້ການສະໜັບສະໜຸນ ແລະ ການຊ່ວຍເຫຼືອຈາກຕ່າງປະເທດ ແຕ່ກໍເປັນຫ່ວງກັງວົນວ່າ ຈະເຮັດໃຫ້ອາເມລິກາ ບໍ່ຮັບຮູ້ການຈັດຕັ້ງລັດຖະບານຂອງຕົນ. ໃນທີ່ສຸດ ຈອມພົນ ປ.ພິບູນສົງຄາມ ກໍຄ່ອຍໆໄດ້ຮັບການສະໜັບສະໜຸນ ຈາກອາເມລິກາຫຼາຍຂຶ້ນໆ ເມື່ອທ່ານນາຍພົນຕັດສິນໃຈ ສົ່ງກຳລັງທະຫານໄປຮ່ວມສົງຄາມ ທີ່ປະເທດເກົາຫຼີ ແລະ ສາມາດຮັກສາສະເຖຍລະພາບຂອງປະເທດໄວ້ໄດ້. ການລັດຖະປະຫານສີ່ຄັ້ງທີ່ປະລາໄຊໃນລະຫວ່າງປີ 1948 ແລະ 1952 ໄດ້ກຳຈັດສັດຕູຂອງ ຈອມພົນ ປ. ພິບູນສົງຄາມລົງ ເຫຼືອແຕ່ສອງຄົນ ຄື ພົນເອກ ເຜົ່າ ສຣິຍານົນ ອະທິບໍດີກົມຕຳຫຼວດ ແລະ ພົນເອກ ສະຫຣິດ ທະນະຣັດ ຜູ້ບັນຊາການກອງທັບທີ 1 ທີ່ ບາງກອກ. ເມື່ອຖືກໜີບຢູ່ລະຫວ່າງກາງຂອງສັດຕູທັງສອງ ທັງຂອງພວກລັດຖະສະພາ ຫຼວງພິບູນເອງກໍພົບວ່າ ອຳນາດໃນກຳມື ເລີ່ມຫຼຸດຜ່ອນຢ່ອນຍານລົງຫຼາຍ ເມື່ອຕົ້ນຊຸມປີ 1950.

ຄວາມສຳເລັດຂອງວຽດນາມເໜືອ (ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ) ໃນອິນໂດຈີນ ໃນປີ 1953 ແລະ ຕົ້ນປີ 1954 ບອກກັບຄວາມເປັນໄປໄດ້ຂອງ ລະບອບກອມມູນິດ ຢູ່ໃນກຳປູເຈຍ ແລະ ລາວ ເຮັດໃຫ້ລັດຖະບານຕອບສະໜອງ

ຕໍ່ຄວາມພະຍາຍາມຂອງລັດຖະມຸນຕີການຕ່າງປະເທດ ຂອງອາເມລິກາ ທ່ານ ຈອນ ຟອດສ໌ເຕີຣ ດັລເລສ (John Foster Dulles) ເພື່ອເສີມສ້າງຄວາມໝັ້ນຄົງ ທາງ ການທະຫານໃນພາກພື້ນນີ້ ໂດຍການຈັດຕັ້ງ ອົງການສົນທິສັນຍາປ້ອງກັນອາຊີຕາ ເວັນອອກສ່ຽງໃຕ້ ຫຼື ຊີອາໂຕ ຂຶ້ນໃນ ປີ 1954 ນອກຈາກນີ້ ການຊ່ອຍເຫຼືອທາງ ການທະຫານແລະເສດຖະກິດ ຈາກອາເມລິກາ ທີ່ໃຫ້ແກ່ປະເທດໄທ ກໍໄດ້ທະວີຂຶ້ນ ເປັນອັນມາກ. ພວກນັກການເມືອງທີ່ເປັນພົນລະເຮືອນ ຮູ້ສຶກກັງວົນໃນເລື່ອງທີ່ ການ ຊ່ອຍເຫຼືອອັນນີ້ໃຫ້ປຽບແກ່ກອງທັບຫຼາຍກວ່າ. ການຈັບກຸມຄຸມຂັງຝ່າຍສັດຕູ ທີ່ດຳ ເນີນການໂດຍພະລະການ ຂອງ ທ່ານ ເຜົ່າ ຮວມທັງການສໍ້ໂກງລັດ ຂອງພວກ ຂ້າລາຊະການ ທີ່ນັບມື້ນັບຫຼາຍຂຶ້ນ ເຮັດໃຫ້ລັດຖະບານຖືກໂຈມຕີ ຢ່າງໜັກໜ່ວງ. ຈອມພົນ ປ.ພິບູນສົງຄາມ ເດີນທາງໄປຢ້ຽມຢາມເອີລົບ ແລະ ອາເມລິກາ ໃນປີ 1955 ແລະ ກັບຄືນມາດ້ວຍຄວາມທ້າວທັນໝັ້ນໝາຍ ທີ່ຈະເຮັດໃຫ້ຕຳແໜ່ງຂອງຕົນໝັ້ນຄົງ ຍິ່ງຂຶ້ນ ດ້ວຍການເຮັດໃຫ້ມີປະຊາທິປະໄຕຫຼາຍຂຶ້ນ. ຈອມພົນ ປ.ພິບູນສົງຄາມ ໄດ້ ອອກກົດໝາຍຮັບຮອງ ເອົາພັກການເມືອງຕ່າງໆ ແລະ ຍົກເລີກການກວດກາໃນໜ້າ ໜັງສືພິມ ເພື່ອເປັນການກຽມຕົວ ສຳລັບການເລືອກຕັ້ງທົ່ວປະເທດ ໃນຕົ້ນປີ 1957. ພັກການເມືອງຂະໜາດໃຫຍ່ຂອງລັດຖະບານ ໃຫ້ຄຳໝັ້ນສັນຍາກັບ ຈອມພົນ ປ.ພິບູນ -ສົງຄາມ ດ້ວຍການເປີດບັ້ນໂຄສະນາຢ່າງເຂັ້ມຂຸ້ນ ດຳເນີນການໂດຍ ທ່ານ ເຜົ່າ ສຣິຍານົນ ຂະນະທີ່ຝ່າຍຄ້ານສ່ວນໃຫຍ່ມາຈາກ ພັກປະຊາທິປັດ ທີ່ອ່ອນແອ ກັບພັກ ການເມືອງອ່ຽງຊ້າຍຂະໜາດນ້ອຍຫຼາຍພັກ ຈາກເຂດທຸກຈົນ ດ້ານຕາເວັນອອກສ່ຽງ ເໜືອ. ເຖິງແມ່ນວ່າມີການຂີ້ຫລັກຂີ້ສໍ້ຢູ່ໃນການເລືອກຕັ້ງ ຢ່າງເປີດແປນກໍຕາມ ແຕ່ ພັກລັດຖະບານກໍຍາດໄດ້ໄຊຊະນະ ພໍແຕ່ຫວຸດຫວິດເທົ່ານັ້ນ. ຈອມພົນ ສະຫຣິດ ຜູ້ ຫາທາງຫຼີກເວັ້ນຈາກການເຂົ້າຮ່ວມການໂຄສະນາຫາສ່ຽງ ແລະການເລືອກຕັ້ງ ໄດ້ ເວົ້າຕຳນິຕິຕຽນການເລືອກຕັ້ງຢ່າງຮຸນແຮງ ຈຶ່ງໄດ້ກັບກາຍມາເປັນຈຸດສຸມແຫ່ງຄວາມ ວຸ່ນວາຍ ຕໍ່ຕ້ານພຶດຕິກຳຢູ່ໃນການເລືອກຕັ້ງ ແລະ ໃນວັນທີ 16 ເດືອນກັນຍາ ປີ 1957 ທ່ານຜູ້ນີ້ ກໍເຮັດລັດຖະປະຫານແບບບໍ່ຕ້ອງເສຍເລືອດ ທີ່ໄດ້ເຮັດໃຫ້ ອາຊີບທາງການເມືອງອັນຍາວນານຂອງ ຈອມພົນ ປ.ພິບູນສົງຄາມ ຍຸຕິລົງ.

ລັດຖະບານແບບມີສະພາຊຸດໃໝ່ ເລີ່ມຕົ້ນດຳເນີນການ ພາຍຫຼັງການເລືອກ ຕັ້ງໃນເດືອນທັນວາ ປີ 1957 ແຕ່ ກໍມີອາຍຸສັ້ນໜ້ອຍດຸງວ. ສະພາຜູ້ແທນ ສະທ້ອນ ໃຫ້ເຫັນວ່າ ມີການແຕກແຍກຢ່າງຮຸນແຮງ ຍ້ອນຄວາມອາຄາດບາດໝາງ ສ່ວນຕົວ, ຈາກຜົນປະໂຫຍດອັນແຕກຕ່າງກັນ ທາງອຸດົມຄະຕິ ກັບທາງເສດຖະກິດ ແລະ ຈາກ ການກະທົບກະເທືອນກັນລະຫວ່າງລີລາທາງການເມືອງແບບເກົ່າ ກັບແບບທັນສະໄໝ ແລະທ່າທີທັດສະນະໃນບັນດາຊົນຊັ້ນຂອງປະເທດໄທ. ເມື່ອລັດຖະບານໃໝ່ປ່ອຍໃຫ້ ກອງທັບເຫັນເຖິງ ຄວາມບໍ່ສາມາດໃນການຕັດສິນໃຈແກ້ໄຂບັນຫາ ດ້ານນະໂຍບາຍ ພາຍໃນປະເທດ ແລະຕ່າງປະເທດໄດ້ ທັນທີທີ່ກັບຄືນມາແຕ່ການປົ່ນປ່ວຢູ່ຕ່າງປະ ເທດ ຈອມພົນ ສະຫຣິດ ທະນະຣັດ ກຳນຳໃຊ້ລະບອບປົກຄອງ ໂດຍທະຫານອີກ ໃນເດືອນ ຕຸລາ ປີ 1958. ຈອມພົນ ສະຫຣິດ ບັນຊາການທາງການເມືອງໂດຍອີງ ໃສ່ແນວຄຶດຊາດ ຫຼາຍກວ່າຜູ້ນຳຄົນອື່ນໆ ທີ່ເຄີຍເຮັດມາ. ທ່ານໄດ້ຮັບການຍອມຮັບ ທົ່ວກອງທັບ ຕະຫຼອດທັງພວກຂ້າລາຊະການ ພົນລະເຮືອນຫົວຮີດເດີມ ກັບພວກນັກ ທຸລະກິດ ແລະຍັງໄດ້ເລື່ອນຕຳແໜ່ງຂ້າລາຊະການພົນລະເຮືອນຜູ້ຊຳນານ ຫຼາຍຄົນ ຂຶ້ນຮັບໜ້າທີ່ການສູງໆໃນຄະນະລັດຖະບານ. ຈອມພົນ ສະຫຣິດ ມຸ່ງໜ້າໄປຢ່າງ ໜັກແໜ້ນ ຕໍ່ຕ້ານກັບຝ່າຍຫົວຮຸນແຮງ ໂດຍສະເພາະ ພັກກອມມູນິດຂອງຊາວຈີນ ໃນປະເທດໄທ ແລະ ໃນເວລາດຽວກັນ ກໍໄດ້ພະຍາຍາມຫຼຸດຜ່ອນທາງສຽງຂອງຝ່າຍ ນິຍົງ ໂດຍການດຳເນີນນະໂຍບາຍອັນເຂັ້ມແຂງ ກ່ຽວກັບການພັດທະນາເສດຖະກິດ ການສະຫວັດດີການສັງຄົມ ແລະ ການສຶກສາ. ທ່ານ ຈອມພົນ ບໍ່ມີທ່າທີຕໍ່ຕ້ານ ລາຊາທິປະໄຕ ຄືກັບຮຸ່ນທີ່ເຮັດໃຫ້ຍຸກສົມບູນລະນາຍາສິດທິລາດ ສ້ຽງສຸດລົງໃນປີ 1932 ນັ້ນ ແຕ່ທ່ານຍັງໄດ້ເສີມສ້າງສິດອຳນາດຂອງລັດຖະບານ ໂດຍທູນຂໍໃຫ້ ເຈົ້າ ຊີວິດພູມີພົນ ອະດຸນຍະເດດ ສະແດງບົດບາດຫຼາຍຂຶ້ນຢູ່ໃນຊີວິດສັງຄົມຂອງຊາດ. ເມື່ອປະກາດໃຊ້ລັດຖະທຳມະນູນຊົ່ວຄາວ ທີ່ອີງເອົາລັດຖະທຳມະນູນສະບັບນິຍົມ ເດີໂກລ (De Gaulle) ກັບນິຍົມ ນັດແຊຣ໌(Nasser) ຂອງສາທາລະນະລັດອາຫຣັບເ ປັນພື້ນຖານ, ຈອມພົນ ສະຫຣິດ ໄດ້ແຕ່ງຕັ້ງສະພາຮ່າງລັດຖະທຳມະນູນຂຶ້ນ ປະກອບ ດ້ວຍຜູ້ແທນຈາກປະຊາຊົນທຸກຝ່າຍ ເພື່ອຮ່າງລັດຖະທຳມະນູນສະບັບຖາວອນ.

ເມື່ອ ຈອມພົນ ສະຫຣິດ ເຖິງແກ່ມໍລະນະກຳ ກ່ອນເວລາອັນຄວນໃນປີ 1963 ຍຸກສົງຄາມປະເທດໃກ້ຄຽງ-ຫວຽດນາມ ກໍເລີ່ມຂຶ້ນທັນທີ ແລ້ວກຳລັງຕ່າງໆທີ່ຂັດແຍ່ງກັນມາດົນກໍເລີ່ມເໜັ້ງຕົງ ດຳເນີນງານຢ່າງເລິກເຊິ່ງ ເພື່ອປ່ຽນແປງປະເທດໄທ. ນັບຕັ້ງແຕ່ ສົງຄາມໂລກຄັ້ງທີສອງສ້ຽງສຸດລົງ ຄວາມກັງວົນກ່ຽວກັບຄວາມໝັ້ນຄົງ ຂອງປະເທດໄທ ຕົ້ນຕໍແມ່ນສຸມໃສ່ບັນດາປະເທດໃນອະດີດອິນໂດຈີນ. ການຟື້ນຕົວຂອງ ຫວຽດນາມ ເຮັດໃຫ້ປະເທດໄທຫວັ່ນວິຕົກ ໃນເລື່ອງຊາຍແດນທາງທິດຕາເວັນອອກ ຂອງປະເທດ ໂດຍສະເພາະ ໃນເມື່ອປະເທດໄທຕີລາຄາວ່າ ຫວຽດນາມເໜືອຢູ່ ຮ່າໂນຍ ຄືວ່າຕໍ່ສູ້ແລະຄິດ ເພື່ອອິນໂດຈີນທັງໝົດ ບໍ່ແມ່ນແຕ່ເພື່ອຫວຽດນາມ ປະເທດດຽວ. ເປັນທຳມະດາຢູ່ແລ້ວ ກອງທັບໄທ ເຊິ່ງເປັນອົງປະກອບຕົ້ນຕໍ ຂອງລັດທິ ຊາດນິຍົມໄທ ເມື່ອສະໄໝສົງຄາມອິນໂດຈີນ ລະຫວ່າງປີ 1940-41 ນັ້ນ ບັດນີ້ໄດ້ ຄຳນຶງເຫັນໄພອັນຕະລາຍຈາກຫວຽດນາມ ຢ້ານວ່າ ຈະລ່ວງລ້ຳອະທິປະໄຕ ແລະ ດິນແດນຂອງລາວ ກັບ ກຳປູເຈຍ ໂດຍສະເພາະແລ້ວ ເມື່ອເສັ້ນຊາຍແດນທຳມະຊາດ (ທີ່ຢູ່ກົງກັບຊາຍແດນຂອງໄທ) ບໍ່ແມ່ນ ແມ່ນ້ຳຂອງ ເຊິ່ງເປັນຄືເສັ້ນທາງຫຼວງ ແຕ່ ຫາກແມ່ນສາຍພູສູງ ທີ່ແບ່ງແຍກຫວຽດນາມ ອອກຈາກຜືນແຜ່ນດິນໃຫຍ່ສ່ວນທີ່ເຫຼືອ ຂອງອາຊີຕາເວັນອອກສ່ຽງໃຕ້. ດັ່ງນັ້ນ ລັດຖະບານໄທ ທີ່ມີຄວາມກັງວົນມາແຕ່ດົນ ນານກ່ຽວກັບ "ຄວາມເປັນກາງ" ອັນມົວໆຂອງ ກຳປູເຈຍ ຍຸກເຈົ້າສີຫະນຸ ຈຶ່ງເກີດ ສົນໃຈຢ່າງແຮງ ຕໍ່ເຫດການທີ່ເກີດຂຶ້ນໃນປະເທດລາວ ບ່ອນທີ່ປະເທດໄທ ເຄີຍໃຫ້ ການສະໜັບສະໜຸນ ທາງການທະຫານແກ່ຝ່າຍຂວາ ມາແຕ່ຕົ້ນ. ປະເທດໄທຢູ່ບໍ່ເປັນ ສຸກ ຍ້ອນຊີອາໂຕ ໄຮ້ຄວາມສາມາດ ເມື່ອເກີດວິກິດການລະຫວ່າງປີ 1960-1962 ຢູ່ປະເທດລາວ ແລະ ໝາກຜົນກອງປະຊຸມ ເຊີແມວ ປີ 1962 ທີ່ນຳພາໄປເຖິງການ ສ້າງຕັ້ງ ລັດຖະບານເປັນກາງ ຢູ່ປະເທດລາວ, ທັງໝົດ ພາໄປສູ່ການຕົກລົງກັນຢ່າງ ລັບໆ ກັບລັດຖະບານອາເມລິກາ ໂດຍທີ່ສະຫະລັດໄດ້ຕັດສິນໃຈເຂົ້າມາເພື່ອຊ່ວຍ ປະເທດໄທປ້ອງກັນຕົນເອງ ຖ້າຫາກເມື່ອໃດ ຄວາມໝັ້ນຄົງປອດໄພຂອງປະເທດ ຖືກ ຄຸກຄາມ ແລະແລ້ວ ປະເທດໄທ ກໍໄດ້ບີນເຂົ້າມາຫຍຸ້ງກ່ຽວ ກັບການຂັດແຍ່ງໃນ ຫວຽດນາມ ເຖິງຂັ້ນໃຫ້ດິນແດນເປັນຖານທັບເພື່ອໂຈມຕີ ດ້ວຍການຖິ້ມລະເບີດ ໃສ່ ອິນໂດຈີນ ແລະ ສົ່ງກຳລັງໄປຮ່ວມຮົບ ໃນຫວຽດນາມໃຕ້ ແລະ ໃນປະເທດລາວ.

ແຕ່ຜົນສະທ້ອນຂອງສົງຄາມ ໃນຫວຽດນາມ ຕໍ່ປະເທດໄທ ບໍ່ມີແຕ່ທາງການທະຫານເທົ່ານັ້ນ ຍັງມີຜົນສະທ້ອນທາງເສດຖະກິດ ແລະສັງຄົມນຳ ໃນທີ່ສຸດ ສິ່ງທີ່ຕາມມາທັນທີ ກໍຍັງແມ່ນຜົນກະທົບໃນທາງການເມືອງນຳອີກ. ຜົນກະທົບທີ່ເຫັນໄດ້ຢ່າງຈະແຈ້ງໃນຂະນະນັ້ນ ແມ່ນການໃຊ້ຈ່າຍຂອງອາເມລິກາ ແລະ (ການລົງທຶນ) ຢູ່ໃນປະເທດໄທ ສູງຢ່າງມະຫາສານເຖິງຫຼາຍຮ້ອຍລ້ານໂດລາອາເມລິກາ. ພະນັກງານທາງການທະຫານຂອງອາເມລິກາ ສີ່ໝື່ນຄົນ ມາປະຈຳການໃນປະເທດ ໃຊ້ຈ່າຍເງິນຢ່າງຊະຊາຍ ຖ້າທຽບກັບມາດຕະຖານຂອງຄົນໄທ. ທະຫານອາເມລິກາ ຈາກຫວຽດນາມໃຕ້ ມາພັກຜ່ອນ ແລະຫາຄວາມມ່ວນຊື່ນໄດ້ ດ້ວຍການໃຊ້ຈ່າຍເງິນຄຳຊື້ບໍລິການ (ໂຮງແຮມ, ໂສເພນີ, ບາຣ໌ ແລະ ໂຮງເຕັ້ນລຳ) ໄດ້ເຮັດໃຫ້ເສດຖະກິດໄທດີຂຶ້ນ. ໂຮງແຮມ ແລະ ອາຄານຂະໜາດໃຫຍ່ ຕຶກສູງໆ ໂປໂລຂຶ້ນພຸ້ນພີ້ ໃນເມືອງບາງກອກ ເຮັດໃຫ້ຈອມເຈດີວິຫານໃນວັດວາອາຮາມ ຕ່ຳເຕ້ຍລົງໝົດ ແລະ ປະຊາກອນຂອງບາງກອກ ກໍທະວີຈຳນວນຫຼາຍຂຶ້ນ ພໍປານດອກເຫັດປົ່ງ ຈາກ 1.7 ລ້ານຄົນ ໃນປີ 1960 ມາເປັນເກືອບ 3 ລ້ານຄົນ ໃນປີ 1975 .

ເຮັ່ງກ່ວານີ້ ເຂດຊົນນະບົດກໍໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດຄືກັນ ຖານທັບອາກາດໃນຊົນນະບົດ ໄດ້ກະຕຸ້ນໃຫ້ຕົວເມືອງທີ່ຢູ່ໃກ້ຄຽງ ເຕີບໃຫຍ່ໄປນຳ ເຊັ່ນ: ເມືອງອຸດອນ, ນະຄອນລາດຊະສີມາ(ໂຄຣາດ), ອຸບົນ ແລະ ພິດສະນຸໂລກ. ຕາໜ່າງສາຍລົດໄຟຂະຫຍາຍອອກ ເພື່ອສະໜອງຄວາມຕ້ອງການ ທາງທະຫານ ຕາມຫົວເມືອງແຂວງຕ່າງໆ ແລະ ຖະໜົນຫົນທາງໄດ້ປັບປຸງຂຶ້ນ ເພື່ອອຳນວຍໃຫ້ທະຫານເຂົ້າມາເຖິງເຂດຊາຍແດນ ສາມາດນຳເອົາຜົນຜະລິດ ຂອງຊາວນາອອກສູ່ຕະຫຼາດ ຜົນທີ່ໄດ້ຮັບກໍຄືຄວາມຈະເລີນເຕີບໃຫຍ່ທາງເສດຖະກິດທີ່ໜ້າຈັບໃຈ ເຊິ່ງພໍມາຮອດປີ 1960 ອັດຕາການເຕີບໃຫຍ່ ທາງເສດຖະກິດ ກໍການ 7 ສ່ວນຮ້ອຍ ຕໍ່ປີ.

ຄວາມສຳເລັດທີ່ເຫັນໄດ້ຢ່າງຈະແຈ້ງຂອງ ຈອມພົນ ສະຫຣິດ ກັບ ຈອມ ບົງການຜູ້ສືບທອດຂອງເພິ່ນ ຄື ຈອມພົນ ຖະໜອມ ກິດຕິຂະຈອນ ບໍ່ໄດ້ຕິດຕາມ

ດ້ວຍການມີສະເຖຽລະພາບທາງການເມືອງ ໃນເມື່ອວ່າ ພວກເຂົາໄດ້ຕັ້ງເປົ້າໝາຍໄວ້. ກ່ອນໜ້ານີ້ຮຸ່ນຄົນໜຶ່ງ ຄືໃນຊຸມປີ 1950 ຈອມພົນ ປ. ມີຄວາມກັງວົນກ່ຽວກັບ ຄົນເຊື້ອສາຍຈີນໃນປະເທດໄທ ທີ່ມີການສອງລ້ານຄົນ ໂດຍສະເພາະເມື່ອ ທ່ານ ປຣີດີ ໄປລີ້ໄພການເມືອງ ຢູ່ປະເທດຈີນ ແລະ ໄດ້ເປັນຜູ້ນຳແນວໂຮມຂອງຜູ້ຮັກຊາດໄທ ແລະ ເມື່ອສະມາຊິກຂອງພັກກອມມູນິດ ໃນປະເທດໄທ ສ່ວນໃຫຍ່ປະກອບດ້ວຍ ຄົນເຊື້ອສາຍຈີນເກືອບທັງໝົດ. ເຖິງແນວໃດກໍດີ ມາຮອດຊຸມປີ 1960 ພວກຄົນຈີນ ໃນໄທກໍ້າອຍ່າງຢູ່ໃນເສັ້ນທາງ ແຫ່ງການປະສົມກົມກືນ ແລະ ພວກນັກປົກຄອງ ທະຫານແຫ່ງລາຊະອານາຈັກ ບັດນີ້ກໍເກີດຢ້ານກົວການແຕກແຍກທາງການເມືອງ ແລະ ການປະຕິວັດຈາກຊົນນະບົດ ຄືດັ່ງທີ່ພວກເຂົາໄດ້ເຫັນມັນເກີດຂຶ້ນໃນອິນໂດ ຈີນ. ໂດຍສະເພາະແລ້ວ ຢູ່ເຂດຕາເວັນອອກສຽງເໜືອບ່ອນກັນດານ ທີ່ມີປະຊາກອນ ເຊື້ອສາຍລາວຈຳນວນການສິບລ້ານຄົນ ນີ້ກໍເປັນຄວາມວິຕົກອັນຕົ້ນຕໍ ຂອງລັດຖະ ບານ. ກະໂຕ ທ່ານ ຈອມພົນ ສະຫຣິດ ເອງ ກໍເປັນຄົນ ຈາກພາກຕາເວັນອອກສຽງເໜືອ ລັດຈຶ່ງເລີ່ມລົງມືໃສ່ໂຄງການ ພັດທະນາເສດຖະກິດເປັນການໃຫຍ່ ສົ່ງເສີມການຜຼິດ ກະສິກຳ ການສ້າງຖະໜົນ, ເຂື່ອນຂັງນ້ຳ ແລະ ລະບົບຮ່ອງຊົນລະປະທານ ແລະ ການຂະຫຍາຍໂອກາດທາງການສຶກສາ. ວິທີການຂອງລັດຖະບານ ໃນການປົກຄອງ ປະເທດ ເບິ່ງຄືວ່າ ເປັນການຈັດຊື້ປະຊານິຍົມດ້ວຍ ເງິນຕາ ສຳລັບການປັບປຸງທາງ ສັງຄົມ ແລະ ເສດຖະກິດ. ລັດຖະບານສາມາດຊື້ໃສ່ຕົວເລກສະຖິຕິ ແລ້ວກໍຊົມເຊີຍ ຕົນເອງ ແຕ່ປານນັ້ນ ການທ້າທາຍຕໍ່ອຳນາດການປົກຄອງຂອງພວກເຂົາ ກໍລະເບີດ ຂຶ້ນຈົນໄດ້ ມາເຖິງທ້າຍຊຸມປີ 1960 ລັດຖະບານກໍປະເຊີນໜ້າກັບການລຸກຮືຂຶ້ນ ຢ່າງຈິງຈັງ ຢູ່ທາງພາກຕາເວັນອອກສຽງເໜືອ ພາກເໜືອ ແລະ ພາກໃຕ້ ໂດຍການ ນຳພາຂອງພັກກອມມູນິດ ແຫ່ງປະເທດໄທ ເຊິ່ງບັດນີ້ ມີຄົນເຊື້ອສາຍໄທ ເປັນສະມາ ຊິກຫຼາຍກວ່າໝູ່.

ລັດຖະບານ ຫາທາງນຳໃຊ້ແນວທາງການເມືອງຂອງຕົນ ເສີມສ້າງ ການເຕີບ ໃຫຍ່ທາງເສດຖະກິດ ແລະຂະຫຍາຍໂອກາດການ ສຶກສາໃຫ້ຫຼາຍຂຶ້ນຢູ່ໃນຕົວເມືອງ ຕ່າງໆ ເຮັດໃຫ້ຊົນຊັ້ນກາງທະວີຈຳນວນຂຶ້ນຢ່າງໄວວາ ແລ້ວລັດຖະບານ ກໍປະກາດ

ໃຊ້ລັດຖະທຳມະນູນໃໝ່ ໃນປີ 1968 ອັນອຳນວຍໃຫ້ມີການເລືອກ ຕັ້ງສະພາຂັ້ນລຸ່ມ. ການເລືອກຕັ້ງມີຂຶ້ນໃນຕົ້ນປີ 1969 ເປັນການລິເລີ່ມຍຸກສັ້ນໆ ສຳລັບໃຫ້ມີປະຊາທິປະໄຕຫຼາຍຂຶ້ນກ່ອນທີ່ ຖະໜອມ ຈະກັບເຂົ້າມາໃຊ້ລະບົບປົກຄອງແບບທະຫານອີກ ໃນປາຍປີ 1971 ເຊິ່ງບາງທີ ກໍເປັນຍ້ອນສະພາບທີ່ຊຸດໂຕລົງ ຂອງອິນໂດຈີນ ແລະ ການເລີ່ມຖອນທະຫານອອກຂອງອາເມລິກາ ປ່ອຍໃຫ້ປະເທດໄທ ປະເຊີນໜ້າກັບອັນຕະລາຍແຕ່ພຽງລຳພັງ. ແຕ່ຢູ່ໃນສະຖານະການເຊັ່ນນີ້ ຄວາມໝິດຫວັງຕໍ່ການມີປະຊາທິປະໄຕ ກໍລຸກຮືຂຶ້ນຢ່າງມີການຈັດຕັ້ງ ແລະ ຈັດການກັບຝ່າຍທະຫານ. ການເດີນຂະບວນຂອງນັກສຶກສາ ທີ່ກໍ່ຂະບວນຂຶ້ນໃນທ້າຍປີ 1960 ຢູ່ປະເທດໄທ ແລະ ແຫ່ງອື່ນໆໃນໂລກ ໄດ້ທະວີຄວາມຮຸນແຮງຂຶ້ນ. ນັກສຶກສາເປັນແສນໆຄົນ ລົງມາຍ່າງໃນຖະໜົນຢູ່ບາງກອກ ເມື່ອເດືອນຕຸລາ 1973 ຈົນກາຍເປັນການຈະລາຈົນຂັ້ນຮ້າຍແຮງ. ພວກຜູ້ນຳໃນວົງການທະຫານ ແລະ ວົງການອື່ນໆ ປະຕິເສດທີ່ຈະສົ່ງກອງກຳລັງທະຫານມາປາບປາມ ພວກເດີນຂະບວນ ເຊິ່ງໃນນັ້ນກໍມີທັງລູກຫຼານຂອງພວກເຂົານຳ. ຈາກນັ້ນ ຈອມພົນ ຖະໜອມ ກັບພັກພວກ ກໍຖືກບັງຄັບ ໃຫ້ໜີອອກຈາກປະເທດ ແລະ ມອບອຳນາດໃຫ້ແກ່ລັດຖະບານພົນລະເຮືອນ. ຢູ່ໃນຈຸດນີ້ ບາງທີເຫດການນີ້ ເບິ່ງຄືວ່າໃກ້ຄຽງກັບການປະຕິວັດ ເພາະວ່າມັນແມ່ນອຳນາດຂອງ ມະຫາຊົນ ທີ່ລະດົມກັນມາຢ່າງຫຼວງຫຼາຍ ແບບບໍ່ເຄີຍມີມາກ່ອນ ໃນປະຫວັດສາດປະເທດໄທ.

ຈຸດປະສົງອັນເຮັ່ງຮີບຂອງລັດຖະບານພົນລະເຮືອນໝາຍເຖິງ ອະວະສານຂອງອຳນາດການປົກຄອງ ຂອງທະຫານ. ມັນບໍ່ງ່າຍເລີຍທີ່ຈະບັນລຸໄດ້ ເຊັ່ນດຽວກັບເປົ້າໝາຍລະຍະຍາວ ຂອງພວກນັກສຶກສາ ທີ່ຢາກມີສະຖາບັນຂອງລັດຖະບານປະຊາທິປະໄຕ ທີ່ພາກັນເວົ້າຮອດມາແຕ່ດົນແລ້ວ ແຕ່ເຫັນໄດ້ໜ້ອຍ ໃນປະເທດໄທ ນັບແຕ່ປີ 1932 ມາ. ຕະຫຼອດເວລາບໍ່ເທົ່າໃດປີຕໍ່ມາ ປະເທດໄທກໍໄດ້ມີບົດຮຽນໃນເລື່ອງການປົກຄອງລະບອບປະຊາທິປະໄຕ ປະເພດທີ່ສຸດໂຕ່ງທີ່ສຸດ ມີທັງຄວາມອຸ່ນອາຍສັບສົນແບບປ່ວງບ້າ ຂອງພວກພັກການເມືອງ, ການເດີນຂະບວນປະທ້ວງ, ການນັດຢຸດວຽກ, ການອະພິປາຍໂຈມຕີ, ການຈັດກິດຈະກຳ ແລະ ຄວາມສັບສົນອຸ່ນອາຍ. ຕິວແບບທາງການເມືອງ ສະແດງອອກມາຫຼາກຫຼາຍ ນັບແຕ່ ນັກກອມມູນິດ ເຈ ເຄວາຣາ

(Che Quevara), ກິມ ອິລຊຸງ ແລະ ເໝົາ ເຈີ ຕຸງ ກາຍມາເປັນລາຊາທິປະໄຕ ຂວາຈັດ. ພວກນັກສຶກສາຈັດຕັ້ງກັນ ເພື່ອຮຽນເລື່ອງເສດຖະກິດຊາວນາ ຫຼືເພື່ອຊ່ວຍ ກຳມະກອນໂຮງງານນັດຢຸດງານ ແລະ ພວກຊາວໜຸ່ມທົ່ວທຸກແຫ່ງລຸກຂຶ້ນ ທ້າທາຍ ຕໍ່ພວກມີອະພິສິດ ຜູ້ມີຖານະໝັ້ນຄົງ ຜູ້ທີ່ມີຄົນເຊື່ອຖື. ນັກການເມືອງຝ່າຍຊ້າຍເຜີຍ ໂສມໜ້າອອກມາ ແລະ ຝ່າຍຂວານັບມື້ນັບຮູ້ຕື່ນຕົວຫຼາຍຂຶ້ນ ກໍອອກ ມາຕອບໂຕ້ຄືນ. ຄວາມໂມໂຫ ແລະ ການໃຊ້ຄວາມຮຸນແຮງພຸ່ງຂຶ້ນສູງ ໃນສັງຄົມ ເຊິ່ງ ກ່ອນໜ້ານີ້ ບໍ່ເທົ່າໃດປີ ເພິ່ນຄຶດວ່າ ເປັນສັງຄົມສຸກສະຫງົບ ບັດນີ້ ໄດ້ສະແດງອອກ ເຖິງການ ແຕກແຍກ ດ້ວຍມີຄວາມແຕກຕ່າງກັນຫຼາຍ ລະຫວ່າງຄົນຮັ່ງກັບຄົນທຸກ, ຄົນໃນເມືອງ ກັບ ຄົນຊົນນະບົດ, ລະຫວ່າງ ຜູ້ບໍລິຫານ ກັບ ຜູ້ອອກແຮງງານ, ພວກລາຊານິຍົມ ກັບ ນັກອະນາທິປະໄຕ, ນັກປະຕິວັດ ກັບ ຜູ້ນິຍົມຫົວຮີດເດີມ.

ວັນເວລາແຫ່ງການປ່ຽນແປງທາງການເມືອງ ເກີດຂຶ້ນຈົນໄດ້ ແບບຂີ້ຮ້າຍທີ່ ສຸດ. ເຫດການຂອງໂລກ ທີ່ປະເທດໄທເອງຄົງບໍ່ສາມາດຄວບຄຸມໄດ້ ກໍມາລາມລຸກ ໄໝ້ ສະຖານະການພາຍໃນປະເທດເອງ. ວິກິດການນ້ຳມັນເຊື້ອໄຟ ຂອງໂລກລະ ຫວ່າງ ປີ 1973 - 1974 ໄດ້ສະກັດກັ້ນຄວາມເຕີບໃຫຍ່ທາງເສດຖະກິດ ແລະ ກໍ່ໃຫ້ເກີດສະພາບເງິນເຟີ້ໄປທົ່ວ ໃນຂະນະທີ່ລາຄາເຄື່ອງອຸປະໂພກ-ບໍລິໂພກຂອງ ໂລກ ຂໍ້າຕົກຕ່ຳ. ເທົ່ານີ້ຍັງບໍ່ພໍ ເມື່ອຕົ້ນປີ 1975 ສົງຄາມອັນຍືດເຍື້ອໃນອິນໂດຈີນ ໃນທີ່ສຸດ ກໍມາເຖິງຈຸດອະວະສານ ເມື່ອຝ່າຍກອມມູນິດຍຶດອຳນາດໄດ້ ທັ້ງຢູ່ຫວຽດ ນາມ ກຳປູເຈຍ ແລະ ປະເທດລາວ. ທ່ານ ມ່ອມລາຊະວົງ ຄຶກຣິດ ປຣາໂມດ ກັບ ມ່ອມລາຊະວົງ ເສນີ ປຣາໂມດ ສອງອ້າຍນ້ອງເຊື້ອເຈົ້າ ທີ່ເປັນຫົວໜ້າພັກການເມືອງ ຄົນລະພັກ ຕ່າງກໍພະຍາຍາມປະສານກຳລັງ ອັນຈະສາມາດຄຸ້ມຄອງ ແລະ ຈັດການ ກັບບັນຫາຕ່າງໆ ທີ່ທະວີຄູນຂຶ້ນໃນປະເທດໄທ. ພາລະໜ້າທີ່ນັ້ນໜັກໜ່ວງເກີນທີ່ພວກ ເຂົາ ຫຼື ໃຜໆກໍບໍ່ອາດຈະສາມາດຈັດການໄດ້. ໃນ ວັນທີ 6 ເດືອນຕຸລາ 1976 ການ ເດີນຂະບວນ ເຊິ່ງເລີ່ມມາໄດ້ຫຼາຍອາທິດກ່ອນ ເພື່ອຄັດຄ້ານການກັບຄືນມາປະເທດ ໄທຂອງ ຈອມພົນ ຖະໜອມ ກິດຕິຂະຈອນ ໄດ້ລະເບີດຂຶ້ນ ກາຍເປັນການຈະລາຈົນ

ໃຫຍ່ ຢູ່ມະຫາວິທະຍາໄລທຳມະສາດທີ່ກຸງເທບ ອັນເປັນບ່ອນທີ່ຝ່າຍຂວາບາງຄົນຖືກ ນາຍຕຳໜວດກັບກອງທະຫານບາງກອກ ຍຸແຍ່ຈົນເກີດເປັນ ການປະທະກັນຢ່າງຮຸນ ແຮງ ມີການທຸບຕີທຳຮ້າຍກັນ ທັງຈູດເຜົາ ແລະເຂັ່ນຂ້ານັກສຶກສາຜູ້ມາເດີນຂະບວນ. ຈາກນັ້ນ ຝ່າຍທະຫານກໍຍຶດອຳນາດ ແລະ ນຳໃຊ້ລະບອບການປົກຄອງຜະເດັດການ ແບບບໍ່ເຄີຍມີມາກ່ອນ ອັນທີ່ເປັນໜ້າຫົວກໍຄື ມີການແຕ່ງຕັ້ງອາຈານຝ່າຍກົດໝາຍ ຄົນໜຶ່ງ ຂຶ້ນມາເປັນນາຍົກ ລັດຖະມຸນຕີ ຄື ທ່ານ ທານິນ ໄກວິຊຽນ. ໃນການ ປາບປາມຝ່າຍຊ້າຍ ໃນຂັ້ນຕໍ່ມາ ເຮັດໃຫ້ຊາວໜຸ່ມຫຼາຍພັນຄົນໂຕນໜີເຂົ້າປ່າ ໄປ ຮ່ວມຂະບວນການກອງໂຈນຢູ່ໃນປ່າ. ແຕ່ກ່ອນທີ່ເຫດການທາງການເມືອງອັນປັ່ນໄປ ອັນນີ້ ຈະດຳເນີນໄປຈົນສຸດໂຕ່ງ ກອງທັບກໍໄດ້ກ້າວເຂົ້າມາອີກ ໃນເດືອນຕຸລາ 1977 ພົນເອກ ກຽງສັກ ຊະມະນັນ ໄດ້ເຂົ້າມາແທນບ່ອນ ທານິນ ໄກວິຊຽນ. ຕະຫຼອດທົດ ສະວັດຕໍ່ມາ ມີນາຍົກຢູ່ໃນຕຳແໜ່ງພຽງຄົນດຽວ ຄື ພົນເອກ ເປຣມ ຕິນນະສຸລານົນ (1980) ບັດນີ້ ວົງການທະຫານໄທເອງ ເຊິ່ງກໍມີຄວາມເປັນອັນໜຶ່ງອັນດຽວກັນ ໜ້ອຍ ກວ່າໃນສະໄໝ ຈອມພົນ ປ. ຫຼື ຈອມພົນ ສະຫຣິດ ທະນະຣັດ ຫຼື ຈອມພົນ ຖະໜອມ ນັ້ນຊ້ຳ ກໍຈຶ່ງສາມາດ ສະແດງຕົວເປັນທະຫານມະນຸດເຫຼັກ ແລະໄດ້ພິສູດ ຕົນເອງວ່າ ຕ້ອງປັບປ່ຽນໄປຕາມ ຜົນປະໂຫຍດຕ່າງໆພາຍໃນສັງຄົມ ແລະ ມີການ ໂຍະຍານອະນຸໂລມຫຼາຍຂຶ້ນ ຕໍ່ພວກທີ່ໜີເຂົ້າປ່າ. ການລຸກຮືໃນຊົນນະບົດດັບມອດ ລົງ ແລະຊີວິດການເມືອງຄ່ອຍໆດຳເນີນໄປຕາມທາງຂອງມັນ, ແບບວ່າບໍ່ພິລຶກພິລ້ຳ ປານໃດ ບັດນີ້ ເປັນທີ່ຈະແຈ້ງຫຼາຍຂຶ້ນແລ້ວວ່າ ຫຼັກເກນການວິໄຈສັງຄົມໄທທີ່ເຄີຍໃຊ້ ມາກ່ອນນັ້ນ ໃຊ້ການບໍ່ໄດ້ອີກແລ້ວ. ກ່ອນໜ້ານີ້ພຽງຮຸ່ນຄົນດຽວ ຄົນໄທ ແລະນັກປາດ ອາຈານ ທີ່ສຶກສາສັງຄົມໄທ ໄດ້ພາກັນເວົ້າແຕ່ເລື່ອງເສົາຫຼັກຈຳນວນນຶ່ງ, ໂຄງສ້າງຈັດ ແບ່ງຕາມລຳດັບ ໃນສັງຄົມໄທ, ຄວາມສຳພັນລະຫວ່າງອົງປະກອບ ທີ່ສ້າງຮູບໂສມ ທາງການເມືອງ, ເສດຖະກິດ ແລະ ຊີວິດຂອງປັນຍາຊົນ. ຫວນຄືນຫາອະດີດເຖິງ ສະໄໝ ຈອມພົນ ສະຫຣິດ ພວກເຮົາອາດເວົ້າກ່ຽວກັບກອງທັບ ລະບອບລາຊາທິ ປະໄຕ ພະສົງ ໃນພະພຸດທະສາສະໜາ ລະບົບຂ້າລາຊະການ ທຸລະກິດຂອງຊຸມຊົນ ຊາວຈີນ ແລະ ຊົນຊັ້ນຊາວນາ ແລ້ວກໍສາມາດສະຫຼຸບໄດ້ວ່າ ພວກເຮົາໄດ້ເວົ້າຄົບ ທຸກເລື່ອງຂອງອົງປະກອບແຫ່ງສັງຄົມໄທ ທີ່"ເປັນຫົວຂໍ້ໃຫຍ່" ໃນເວລານັ້ນ. ພວກເຮົາ

ອະທິບາຍ ເຖິງການຄອບຄອງ ອຳນາດຂອງຝ່າຍທະຫານ ໂດຍອີງໃສ່ຄວາມເປັນເອ ກະພາບ ຂອງກອງທັບຢູ່ຕໍ່ໜ້າຄວາມແຕກແຍກ ຍິບຍ່ອຍ ຂອງພາກສ່ວນຕ່າງໆ ໃນ ໝູ່ປະຊາຊົນໃນເມືອງ (ພວກຢູ່ໃນລະບົບຂ້າລາຊະການ ກັບ ຊາວຈີນ) ແລະ ຊົນຊັ້ນ ຊາວນາ ທີ່ມີຮູບໂສມຈະແຈ້ງ ແລະ ຖືກຊັກຈູງໃຫ້ຜະລິດແຕ່ພໍຢູ່ໄດ້. ອົງປະກອບ ທັງໝົດເຫຼົ່ານີ້ ຖືກກຳນົດໃຫ້ມີໂຄງສ້າງແຂງກະດ້າງ ຕາມຄວາມນິຍົມຂອງຝ່າຍກຳ ອຳນາດ ໂດຍຜູ່ຢູ່ໃນຊຸດເຄື່ອງແບບຢູ່ເໜືອຜູ້ບໍ່ນຸ່ງເຄື່ອງແບບ ຜູ້ທີ່ມີຂີດຢູ່ບ່າໄຫຼ່ ອອກ ຄຳສັ່ງຕໍ່ຜູ້ມີຂີດໜ້ອຍກວ່າ ແລະ ເຈົ້າຊີວິດກັບພະສົງ ກໍມີອະມະຕະໜ້າທີ່ເປັນຜູ້ຮັກສາ ຄ່ານິຍົມ ອັນກາລະນານໄວ້ ຂະນະທີ່ຜູ້ອື່ນໆ ກໍສາມາດຊື້ຫາສິ່ງອຳນວຍຄວາມສະ ດວກຕ່າງໆ ຢ່າງງ່າຍດາຍ.

ສິ່ງທັງໝົດນັ້ນ ໄດ້ປ່ຽນໄປແລ້ວ ເພາະວ່າ ປະເທດໄທໄດ້ປ່ຽນໄປ. ສັງຄົມ ນ້ອຍໆ ຂອງຄົນຮຸ່ນກ່ອນ ໂດຍມີຊົນຊັ້ນສູງຈຳນວນໜ້ອຍດຽວ ແລະ (ຍ້ອນຄົນເຊື້ອ ສາຍຈີນກັບຂ້າລາຊະການ ເປັນຄົນຄຳຮູ້) ຊົນຊັ້ນກາງກໍມີຈຳນວນໜ້ອຍດຽວ ມາບັດ ນີ້ໄດ້ ຫຼາຍຂຶ້ນເປັນສອງທ່ໍ ຄືມີຈຳນວນຫ້າສິບລ້ານຄົນ. ອັດຕາສ່ວນຮ້ອຍຂອງປະຊາ ຊົນ ທີ່ຢູ່ໃນເມືອງຫຼາຍຂຶ້ນ ເປັນສອງທ່ໍ ຄື ຫຼາຍກວ່າສິບສ່ວນຮ້ອຍ ແຕ່ກ່ອນປະຊາຊົນ 85 % ເປັນຊາວນາ ປັດຈຸບັນມີຄອບຄົວທີ່ສາມາດລ້ຽງຕົນກຸ້ມ ດ້ວຍການກະສິກຳ ເກືອບບໍ່ຮອດເຄິ່ງ. ໃນປີ 1947 ມີຄົນຮຽນສຳເລັດຂັ້ນປະລິນຍາ ຈາກມະຫາວິທະ ຍາໄລທັງໝົດ ປະມານໜຶ່ງໝື່ນຄົນ ປັດຈຸບັນ ມີຫຼາຍກວ່າລ້ານຄົນ ບັດນີ້ ສັງຄົມໄທ ມີຂອບເຂດກວ້າງເກີນໄປ ຫຼາກຫຼາຍເກີນໄປ ມີການສຶກສາຫຼາຍເກີນໄປ ເປັນຄົນ ເມືອງໃຫຍ່ເກີນກວ່າຈະຍັດເຂົ້າໄວ້ໃນກັບນ້ອຍໆ ແຫ່ງລະບອບແບ່ງຊັ້ນຈະແຈ້ງ ຄື ໂຄງສ້າງສາຍຕັ້ງ ຫຼື ຈັດເຂົ້າໃນໂຄງສ້າງແຫ່ງຊົນຊັ້ນ ຕາມທາງນອນ.

ມື້ໜຶ່ງທາງໜ້າ ປະສົບການຂອງປະເທດໄທ ໃນກາງຊຸມປີ 1970 ອາດ ຖືກທົບທວນຄືນວ່າ ເປັນຄື ຢາຖ່າຍທ້ອງ ແຕ່ສຳລັບຜູ້ມີຊີວິດຜ່ານຍຸກນັ້ນມາໄດ້ ມັນເປັນໄລຍະເວລາແຫ່ງຄວາມເຈັບປວດ ອັນຮຸນແຮງ ແລະແຕກຕື່ນ. ປະຊາຊົນ ຕື່ນຂຶ້ນມາ ກໍພົບວ່າປະເທດໄທຂອງຕົນ ບັດນີ້ ເປັນແບບໃໝ່ແລ້ວ ປະເທດຊາດທີ່ເຕັມ

ໄປດ້ວຍຄວາມຂັດແຍ່ງ ການຕໍ່ສູ້ຊ່ວງເສັ້ງກັນ ຄວາມບໍ່ສຸພາບ ຄວາມເຄັ່ງຕຶງ ແລະ ຄວາມບໍ່ຍຸຕິທຳ ບໍ່ວ່າຈະເບິ່ງມາແຕ່ດ້ານຊ້າຍ ຫຼື ດ້ານຂວາ. ໜ້າທີ່ຂອງເຍົາວະຊົນ ຮຸ່ນຕໍ່ໄປ ຂອງປະເທດໄທ ທີ່ຈະໃຊ້ອຳນາດທາງການເມືອງ ຄວນຕ້ອງປະຕິບັດວຽກ ງານຂອງພວກຕົນຢ່າງມີສະຕິ ມີຄວາມເປັນມະນຸດສະທຳ ບໍ່ວ່າບາດແຜທີ່ຍັງຢູ່ຈະ ຍັງຫົມໜອງຢູ່ ຫຼື ແຫ້ງດີແລ້ວ ກໍຕາມ.

36

ສະຫະພາບພະມ້າ*

ລະບຽບການເມືອງຂອງພະມ້າ ທີ່ອັງກິດຊີ້ນຳມາ ໄດ້ຫຼົ້ມຈົມລົງຫຼັງຈາກກອງທັບຈັກກະພັດຍີ່ປຸ່ນບຸກພະມ້າ ເມື່ອເດືອນມັງກອນ ປີ 1942. ກອງທັບອັງກິດ-ອິນເດຍອ່ອນແອເກີນກວ່າທີ່ຈະຕ່ໍສູ້ ຈຶ່ງພຽງແຕ່ຕ່ໍຕ້ານພໍໃຫ້ແລ້ວມື ແລະ ໃນຂະນະທີ່ຖອຍຄືນໄປອິນເດຍ ໃນທ້າຍເດືອນມີນາ ຊາວອິນເດຍແລະອັງກິດ ຈຳນວນຫຼາຍໝື່ນຄົນທີ່ຢູ່ໃນພະມ້າ ພາຍໃຕ້ລັດຖະບານອານານິຄົມ ໄດ້ຫລົບໜີເອົາໂຕລອດ ທະຫານຍີ່ປຸ່ນ ກັບຊາວໜຸ່ມພະມ້ານຸ່ມນ້ອຍໆກຸ່ມໜຶ່ງ ຊຶ່ “ 30 ສະຫາຍ ” ນຳພາໂດຍ ຖະຂິ່ນ ອອງ ຊານ ຜູ້ໄດ້ຮັບການເຝິກແອບໂດຍທະຫານຍີ່ປຸ່ນ ເພື່ອສ້າງໜ່ວຍກຳລັງຂອງກອງທັບພະມ້າໃໝ່. ກອງກຳລັງໃໝ່ເປັນທີ່ຮູ້ຈັກໃນຂັ້ນຕົ້ນວ່າ “ ກອງທັບອິດສະລະພາບຂອງພະມ້າ ” (BIA) ເຕີບໃຫຍ່ຂຶ້ນມີກຳລັງຮອດ 23,000 ຄົນ ໃນຂະນະທີ່ເດີນທາງຜ່ານລົງໄປພະມ້າພາກໃຕ້ ຊາວໜຸ່ມເຫຼົ່ານີ້ຍັງບ່ທັນໄດ້ຮັບການເຝິກແອບ ແຕ່ກໍໄດ້ຮັບແຮງດຶງດູດຈາກການເມືອງ. ການເຂົ້າຮ່ວມໂດຍທີ່ຍັງບ່ທັນໄດ້ຮັບການເຝິກຝົນຂອງກອງທັບກູ້ອິດສະລະພາບ (BIA) ເພື່ອໂຈມຕີເອົາຊະນະລະບອບການປົກຄອງອານານິຄົມ ໄດ້ມອບສະຖານະພາບອັນຍິ່ງໃຫຍ່ ແລະ ຄວາມເຄົາລົບນັບຖືຈາກມະຫາຊົນ. ນັບເປັນຄັ້ງທຳອິດທີ່ພະມ້າ ຖືກເບິ່ງວ່າປະສົບຄວາມສຳເລັດ ໃນການໂຈມຕີອັງກິດ. ອຳນາດແລະຊື່ສຽງກຽດຕິຍົດຂອງກອງທັບກູ້ອິດສະລະພາບ ຊ່ຳລືອອກໄປຕື່ມອີກ ເມື່ອພະນັກງານຊາວໜຸ່ມກັບພວກໝູ່ເພື່ອນຮ່ວມງານ “ຖະຂິ່ນ” ຂອງພວກເຂົາໄດ້ຮັບໜ້າທີ່ນຳພາການບໍລິຫານທ້ອງຖິ່ນ ໂດຍສະເພາະໃນເຂດຊົນນະບົດ ຫຼັງຈາກ

* ຄຳວ່າ ພະມ້າ (Burma) ແມ່ນສຽງເອີ້ນຕາມສຽງອັງກິດ, ປະຊາຊົນເອີ້ນປະເທດຂອງຕົນວ່າ ມຽນມາ (ຜູ້ແປ)

ການຫລົ້ມຈົມ ຂອງການປົກຄອງອັງກິດ. ເຖິງຢ່າງໃດກໍດີ ມາຮອດເດືອນກໍລະກົດ ປີ 1942 ກອງທັບກູ້ອິດສະລະພາບຂອງພະມ້າ ສ່ວນໃຫຍ່ຖືກລະດົມໃຫ້ຢຸດເຄື່ອນໄຫວ ຕາມການຮ້ອງຂໍຂອງຍີ່ປຸ່ນ ຈາກນັ້ນ ໄດ້ປ່ຽນຊື່ມາເປັນກອງທັບປ້ອງກັນພະມ້າ (Burma Defense Army - BDA) ແລະ ມີຈຳນວນຫຼຸດລົງ ເຫຼືອແຕ່ 5,000 ຄົນ.

ຕໍ່ມາ ຍີ່ປຸ່ນໄດ້ຫາແນວທາງ ເພື່ອສ້າງກອງປົກຄອງທ້ອງຖິ່ນ ທີ່ຈະບໍ່ເຂົ້າຫຍຸ້ງກ່ຽວກັບວຽກງານການທະຫານ ແຕ່ຫາກຈະຊ່ວຍຄວບຄຸມປະຊາຊົນ ໃຫ້ຢູ່ໃນຄວາມສະຫງົບ. ດ້ວຍການສະໜັບສະໜຸນຂອງຍີ່ປຸ່ນ ດຣ. ບາ ມາວ (Ba Maw) ແລະ ນັກການເມືອງກ່ອນສະໄໝສົງຄາມອື່ນໆ ໄດ້ສ້າງຕັ້ງອົງການບໍລິຫານຂຶ້ນ ດ້ວຍຄວາມຮ່ວມມືກັບ ຖະຂິ່ນຂັ້ນນຳ ບາງຄົນ. ທ່ານ ອອງ ຊານ ໄດ້ຮັບແຕ່ງຕັ້ງເປັນລັດຖະມຸນຕີປ້ອງກັນປະເທດ ຖະຂິ່ນ ນູ ເປັນລັດຖະມຸນຕີຕ່າງປະເທດ ຕໍ່ມາເປັນນາຍົກລັດຖະມຸນຕີ, ແລະ ຖະຂິ່ນ ຖັນ ຕູນ ເປັນລັດຖະມຸນຕີກະສິກຳ ຕໍ່ມາເປັນຫົວໜ້າພັກກອມມູນິດ, ຍີ່ປຸ່ນໄດ້ອະນຸມັດໃຫ້ ລັດຖະບານຂອງ ດຣ. ບາ ມາວ ມີສິດອຳນາດໃນການບໍລິຫານຢ່າງຈຳກັດ ແລະ ຈາກນັ້ນ ໃນເດືອນສິງຫາ 1943 ຈຶ່ງມອບເອກະລາດໃຫ້ພໍເປັນພິທີ ໃນນາມວ່າເປັນພັນທະມິດຂອງຍີ່ປຸ່ນ. ຂອບເຂດທາດແທ້ອັນຈຳກັດຂອງເອກະລາດນີ້ ບໍ່ດົນກໍສະແດງຕົວອອກແຈ້ງ ແລະ ປະກອບກັບຄວາມຫຍຸ້ງຍາກທາງເສດຖະກິດ ໃນສະໄໝສົງຄາມ ແລະ ຄວາມຮຽກຮ້ອງຂອງກອງທະຫານຍີ່ປຸ່ນ ໃນເລື່ອງສິນຄ້າ ແລະ ການບໍລິການ ໃນນັ້ນ ຮວມທັງແຮງງານບັງຄັບ, ລັດຖະບານ ກັບ ພັນທະມິດ ຍີ່ປຸ່ນ ຈຶ່ງສູນເສຍຄວາມນິຍົມຈາກມະຫາຊົນ ນັບມື້ນັບຫຼາຍຂຶ້ນ.

ປີກຊ້າຍຂອງຂະບວນການ ຖະຂິ່ນ ປະຕິເສດການຮ່ວມມື ກັບ “ຟາສຊິດສ໌” ຍີ່ປຸ່ນ ແລະ ເມື່ອຕັ້ງແຮກເກີດສົງຄາມ ພວກເຂົາກໍຈັດຕັ້ງຂະບວນການຕໍ່ຕ້ານໃຕ້ດິນ. ຂະບວນການນີ້ ໄດ້ກາຍມາເປັນພັກກອມມູນິດ ເຊິ່ງ ຖະຂິ່ນ ໂຊເອ ຕັ້ງຂຶ້ນຢູ່ເຂດສາມຫຼ່ຽມ ໃນປີ 1943. ຜູ້ນຳກອມມູນິດຫຼາຍຄົນ ໄດ້ພົບປະກັບ ອອງ ຊານ, ຜູ້ນຳທາງການທະຫານຫຼາຍຄົນ ແລະ ຜູ້ນຳທີ່ເປັນນັກກອມມູນິດຜູ້ອື່ນໆ ເຊິ່ງຮູ້ກັນໃນນາມຂອງນັກສັງຄົມນິຍົມ ທັງນີ້ເພື່ອກໍ່ຕັ້ງອົງການຕໍ່ຕ້ານຟາດຊິດສ໌ຍີ່ປຸ່ນ ໃນເດືອນສິງຫາ

ປີ 1944. ຄວາມຕັ້ງໃຈຂອງພວກເຂົາ ກໍແມ່ນເພື່ອສະແຫວງຫາແນວທາງເພື່ອຂັບໄລ່ ພວກຍີ່ປຸ່ນອອກໄປ ໂດຍຮ່ວມມືກັບຝ່າຍພັນທະມິດ ແລ້ວຍາດເອົາເອກະລາດ ພະມ້າ ກັບຄືນມາ ໃຫ້ຢູ່ພາຍໃຕ້ລັດຖະບານຝ່າຍຊ້າຍແທ້ໆ. ໃນການພະຍາຍາມອັນນີ້ ພວກ ເຂົາໄດ້ຮັບການຊ່ວຍເຫຼືອຈາກກອງທັບອັງກິດ ແລະ ອົງການເຄື່ອນໄຫວໃຕ້ດິນພິເສດ ຊື່ວ່າ ກອງກຳລັງທີ 136 ໂດຍນັກກອມມູນິດ ຖະຂິ່ນ ອີກຄົນໜຶ່ງຊື່ວ່າ ເຕັ່ງ ເປ.

ດັ່ງນັ້ນ ເມື່ອກອງທະຫານອັງກິດໄດ້ໄຊຊະນະ ເໜືອກອງທັບພະມ້າ ໃນຊຸມ ເດືອນຕົ້ນ ປີ 1945 ພວກເຂົາກໍມີພົນທະຫານຈາກກອງທັບພະມ້າ ສ່ວນທີ່ຢູ່ພາຍ ໃຕ້ກອງບັນຊາການຂອງ ອອງ ຊານ ເຂົ້າມາສົມທົບນຳ ແລ້ວພວກເຂົາກໍໄດ້ຮັບ ການຊ່ວຍເຫຼືອ ຈາກໜ່ວຍຕໍ່ຕ້ານ ທີ່ຈັດຕັ້ງຂຶ້ນໂດຍ ນັກກອມມູນິດ. ທັງສອງກຸ່ມດຳເນີນ ການພາຍໃຕ້ການໃຫ້ສິດອຳນາດ ຂອງ ອົງການຕໍ່ຕ້ານຟາດຊິດສ໌ ເຊິ່ງໄດ້ ຕັ້ງຊື່ໃໝ່ວ່າ ສັນນິບາດອິດສະລະ ຂອງປະຊາຊົນຜູ້ຕໍ່ຕ້ານຟາດຊິດສ໌ (Anti-Fascist People's Freedom League - AFPFL) ຍ້ອນຮູ້ວ່າມີການສະໜັບສະໜຸນຢ່າງກ້ວາງຂວາງ ຂອງສັນນິບາດ AFPFL ຝ່າຍປົກຄອງກອງທັບອັງກິດ ຈຶ່ງພະຍາຍາມຫາວິທີການ ຮັບປະກັນວ່າ ພວກທະຫານພະມ້າ ຈະບໍ່ຫວນກັບມາໃຊ້ກຳລັງຕໍ່ຕ້ານອັງກິດ ກ່ອນ ທີ່ຍີ່ປຸ່ນຈະຖືກຕີໃຫ້ເສຍໄຊ ຢູ່ໃນພາກພື້ນອື່ນໆຂອງອາຊີ. ເຖິງວ່າອັງກິດປະຕິເສດ ບໍ່ຍອມຮັບການຮຽກຮ້ອງສິດທິຂອງສັນນິບາດ ໃນການກະກຽມຈັດຕັ້ງລັດຖະບານຊົ່ວ ຄາວ ແຕ່ໃນທີ່ສຸດ ທາງສັນນິບາດກໍໄດ້ຮັບການຮ່ວມມືກັບອັງກິດ ເພື່ອນະໂຍບາຍ "ການພັດທະນາຢ່າງສັນຕິ" ເຊິ່ງຖືກເຊີດຊູຂຶ້ນໂດຍນັກກອມມູນິດຂັ້ນນຳ ແລະການ ເຈລະຈາທີ່ກະກຽມຢ່າງຊຳນິຊຳນານກັບຝ່າຍຜູ້ນຳຂອງກອງທັບ ໂດຍຜູ້ບັນຊາການສູງ ສຸດ ຂອງອັງກິດຊື່ ນາຍພົນ ຫຼອດ ຫຼຸຍສ໌ ເມົາບັດຕັນ (Lord Louis Mountbatten).

ການປົກຄອງທະຫານອັງກິດ ຖອນຕົວອອກໃນເດືອນຕຸລາ 1945 ແລະ ອຳ ນາດກໍຖືກມອບຄືນ ຢ່າງເປັນທາງການໃຫ້ແກ່ ຂ້າຫຼວງຄົນສຸດທ້າຍສະໄໝກ່ອນສົງ ຄາມ ຄື ທ່ານ ເຊີ ຣ໌ ຣິຈິນາລ ດໍຣ໌ມານ ສະມິທ (Sir Reginald Dorman-Smith). ທັງທີ່ຂັ້ນນຳຂອງສັນນິບາດ ມີຊື່ສຽງໂດ່ງດັງ ແຕ່ ເຊີ ຣ໌ ດໍຣ໌ມານ ກໍປະຕິ

ເສດໃຫ້ສຽງສ່ອນຫຼາຍ ແກ່ສັນນິບາດ AFPFL ຢູ່ໃນສະພາກຳມາທິການທີ່ປຶກສາ ໂດຍອ້າງເຫດຜົນວ່າ ການພິຈາລະນາຮຽກຮ້ອງຂອງສັນນິບາດ ສຳລັບການຮັບປະກັນ ເອກະລາດໃນທັນທີ ພາຍໃຕ້ ລັດຖະບານຂອງສັນນິບາດ ຄວນຈະຕ້ອງເຍື້ອນເວລາ ອອກໄປ ຈົນກວ່າຈະ "ການໜົດເງື່ອນໄຂ" ທຸກຢ່າງໄວ້ຮຽບຮ້ອຍ. ຈາກນັ້ນ ເຊີຣ໌ ດໍຣ໌ມານ ກໍໄດ້ເປີດສາກນະໂຍບາຍ ຟື້ນຟູຄືນລະບຽບເສດຖະກິດກ່ອນສົງຄາມ ໂດຍ ນຳເອົາແຮງງານອິນເດຍ ແລະ ອັງກິດ ເຂົ້າມາ ແລ້ວກໍຟື້ນຟູກອບກູ້ຜົນປະໂຫຍດ ທາງທຸລະກິດຂອງອິນເດຍ ແລະ ອັງກິດໄວ້. ຫຼາຍເດືອນຕໍ່ມາ ສັນນິບາດ AFPFL ໄດ້ຈັດຕັ້ງການເດີນຂະບວນ ແລະ ນັດຢຸດງານຢ່າງມີລະບຽບ ໂດຍໄດ້ຮັບການສະ ໜັບສະໜຸນຈາກມະຫາຊົນທົ່ວພະມ້າ ຈົນເຖິງຂັ້ນ ພວກເຂົາເຮັດໃຫ້ ລັດຖະບານ ພັກແຮງງານ ຂອງອັງກິດ ຢູ່ລອນດອນ ເຫັນໄດ້ຈະແຈ້ງວ່າ ທ່ານ ດໍຣ໌ມານ ສະມິດທ໌ ບໍ່ສາມາດປະຕິບັດນະໂຍບາຍ ແລະ ຮັກສາຄວາມສະຫງົບຮຽບຮ້ອຍພາຍໃນປະເທດ ໄດ້. ໂດຍສະເພາະແລ້ວ ທ່າອ່ຽງຂອງການລຸກຮື ດ້ວຍກຳລັງອາວຸດກໍແຮງຂຶ້ນພ້ອມໆ ກັບແນວທາງອ່ຽງຊ້າຍຢູ່ພາຍໃນນະໂຍບາຍການເມືອງຂອງ ສັນນິບາດເອງ ບັງຄັບໃຫ້ ສິ່ງຕົວ ດໍຣ໌ມານ ກັບຄືນເມືອປະເທດ ໃນເດືອນ ກໍລະກົດ ປີ 1946 ແລ້ວ ການລິເລີ່ມ ປະຕິບັດນະໂຍບາຍປະນີປະນອມ ພາຍໃຕ້ຂ້າຫຼວງຜູ້ໃໝ່ ເຊີຣ໌ ຮ໊ອເບີດ ຣານຊ໌ (Sir Hubert Rance) ກໍເລີ່ມຂຶ້ນ.

ໂດຍບໍ່ທັນໄດ້ຮັບຄຳວ່າ ຈະໃຫ້ເອກະລາດໃນໄລຍະໄວໆນີ້ຊ້ຳ ທ່ານ ຣານຊ໌ ກໍໄດ້ສະເໜີຕຳແໜ່ງສຳຄັນໆ ຢູ່ໃນສະພາບໍລິຫານໃຫ້ແກ່ ອອງ ຊານ ກັບສະມາຊິກ ຂັ້ນຜູ້ນຳອື່ນໆ ທີ່ບໍ່ເປັນນັກກອມມູນິດ ຂອງ ສັນນິບາດ. ໃນຖານະປະທານຂອງສັນນິ ບາດ ທ່ານ ອອງ ຊານ ໄດ້ຮັບເປັນຮອງສະພາທີ່ປຶກສາ ແລະນາຍົກຜູ້ແທ້ຈິງ. ຢ່າງໃດ ກໍດີ ການຮັບຕຳແໜ່ງໃນກະຊວງ ຂອງຂັ້ນນຳສັນນິບາດບາງຄົນ ກໍໄດ້ພາໄປເຖິງການ ແຕກຫັກກັນ ຢູ່ໃນແນວໂຮມແຫ່ງຊາດ. ສະມາຊິກກອມມູນິດ ບໍ່ໄດ້ນ່ອນນັ່ງໃນສະພາ ເລີຍ ຍົກເວັ້ນຕຳແໜ່ງໃນເວລາສັ້ນໆ, ຄວາມສຳພັນລະຫວ່າງພວກເຂົາກັບຂັ້ນນຳທີ່ບໍ່ ແມ່ນກອມມູນິດ ເຄັ່ງຕຶງຂຶ້ນ. ກ່ອນຈະໜົດປີ 1946 ຂັ້ນນຳທີ່ບໍ່ເປັນນັກກອມມູນິດ ກັບ ພວກນິຍົມຮີດເດີມທີ່ເພີ່ມຫຼາຍຂຶ້ນນັບແຕ່ລະຍະກ່ອນຍຸກສົງຄາມພຸ້ນ ໄດ້ມາເຂົ້າຮ່ວມ ກັບສັນນິບາດ ແລ້ວ ນັກກອມມູນິດ ກໍຄ່ອຍໆຖືກປົດອອກຈາກຕຳແໜ່ງໄປ.

ຢ່າງໃດກໍຕາມ ພາຍຫຼັງການຂັບໄລ່ຖັນແຖວຜູ້ນຳການອມມູນິດ ອອກໄປແລ້ວ ສັນນິບາດ AFPFL ກໍເປີດບັ້ນເຈລະຈາ ກັບລັດຖະບານອັງກິດ ເຊິ່ງຜົນຮັບອອກມາໃນ ເດືອນມັງກອນ ປີ 1947 ແມ່ນຂໍ້ຕົກລົງ ທີ່ພາໃຫ້ມີການເລືອກຕັ້ງສະພາຮ່າງລັດຖະ ທຳມະນູນ ທີ່ຈະຕ້ອງຮ່າງລັດຖະທຳມະນູນ ແລະ ເອກະລາດທີ່ຈະຕ້ອງໄດ້ຮັບມອບ ພາຍໃນໜຶ່ງປີ. ໃນເດືອນເມສາ ສັນນິບາດ ເລືອກຕັ້ງໄດ້ 171 ບ່ອນນັ່ງຕໍ່ 182 ບ່ອນນັ່ງ ໃນສະພາ ແລະ ເປັນຝ່າຍຄວບຄຸມການຮ່າງລັດຖະທຳມະນູນສະບັບທຳອິດ ຂອງປະເທດພະມ້າເອກະລາດ. ບັນຫາສຳຄັນອັນໜຶ່ງ ທີ່ຜູ້ຮ່າງລັດຖະທຳມະນູນຕ້ອງ ຜະເຊີນ ແມ່ນຖານະຂອງ “ເຂດຍົກເວັ້ນ” ບ່ອນທີ່ປະຊາຊົນຫຼາຍຊົນຊາດຊົນເຜົ່າ ຍັງ ດຳລົງຊີວິດຢູ່ຫ່າງໄກ ນະໂຍບາຍຊາດນິຍົມ ແລະ ເສດຖະກິດສະໄໝໃໝ່ຂອງພະມ້າ ອານານິຄົມ. ກຸ່ມຊົນເຫຼົ່ານີ້ ຖືກປົກຄອງແບບທາງອ້ອມ ໂດຍອຳນາດການປົກຄອງ ຕາມປະເພນີ ຂອງພວກເຂົາ. ສະຖານະພາບ ຂອງຊາວກະຫຣ່ຽງທີ່ນັບຖືຄຣິຕ໌ ມີ ຄວາມແຕກຕ່າງ. ຜູ້ນຳຂອງພວກເຂົາ ຫວາດກົວອະນາຄົດ ທີ່ຕ້ອງຢູ່ໃນລັດປະຊາ ຊາດ ຄວບຄຸມໂດຍຄົນທ້ອງຖິ່ນ ຫຼາຍຄົນພະຍາຍາມຊອກຫາ ວິທີຮັກສາຕຳແໜ່ງ ພິເສດທີ່ພວກເຂົາເຄີຍໄດ້ ສະໄໝຢູ່ພາຍໃຕ້ການປົກຄອງອານານິຄົມ ແລະຮຽກຮ້ອງ ໃຫ້ມີ ລັດຖະບານຂອງພວກເຂົາຕ່າງຫາກ. ທ່າມກາງຄວາມຫຍຸ້ງຍາກແນວນີ້ ສະພາ ຈຶ່ງຮ່າງ ລັດຖະທຳມະນູນ ອະນຸຍາດໃຫ້ມີ ສະຫະພາບພະມ້າແບບ ເຄິ່ງສະຫະພັນ. ລັດສານ ກະຊິ່ນ ແລະ ກະຢໍ ຫຼື ກະຫຣ່ຽງ-ນີ ໄດ້ຮັບສິດປົກຄອງຕົນເອງ ແບບ ຈຳກັດ ສະເພາະລັດສານ ກັບ ກະຫຣ່ຽງ-ນີ ໄດ້ຮັບສິດ ໃຫ້ເລືອກວ່າ ຫຼັງສິບປີ ແລ້ວ ຈະຢູ່ເປັນສະຫະພັນ ຫຼື ແຍກອອກໄປ. ເຖິງຢ່າງໃດກໍດີ ຊາວກະຫຣ່ຽງ ໃນເຂດ ທີ່ງຮາບຈຳນວນຫຼາຍ ກໍຍັງດຳລົງຊີວິດຢູ່ປົນກັບຊາວພະມ້າ ດັ່ງນັ້ນ ການມີລະບົບ ບໍລິຫານຕ່າງຫາກ ສຳລັບພວກເຂົາ ຈຶ່ງເປັນເລື່ອງເປັນໄປບໍ່ໄດ້.

ໃນວັນທີ 19 ກໍລະກົດ 1947 ມີເຫດການໜຶ່ງ ຊຶ່ງທຳລາຍຄວາມຫວັງທັງຫຼາຍ ທີ່ວ່າ ລັດຖະບານແຫ່ງ ພະມ້າເອກະລາດຈະສາມາດຄວບຄຸມກອງກຳລັງຕ່າງໆ ທີ່ຂັດ ແຍ່ງກັນຢູ່ໃນສັງຄົມພະມ້າໄດ້. ການຄາຕະກຳ ທ່ານ ອອງ ຊານ ກັບເພື່ອນຮ່ວມງານ ອີກເຈັດຄົນ ໃນວັນນັ້ນ ຕາມຄຳສັ່ງຂອງ ອູ ສໍ ນາຍົກລັດຖະມຸນຕີ ຜູ້ກ່ອນ ໄດ້ລຶບຊື່ ນັກ

ການເມືອງຜູ້ໜຶ່ງ ອອກຈາກເວທີການເມືອງ ແລະ ນັກການ ເມືອງຜູ້ນັ້ນ ກໍເປັນຜູ້ໜຶ່ງ ຜູ້ດຽວ ທີ່ຈະສາມາດເຊື່ອມປະສານພັກຝ່າຍການເມືອງຕ່າງໆເຂົ້າກັນໄດ້. ທ່ານ ອູ ນຸ ຮອງ ປະທານ ອົງການສັນນິບາດ ໄດ້ຮັບການສະເໜີຊື່ ໃຫ້ຂຶ້ນມາແທນຕຳແໜ່ງຫົວໜ້າ ຜູ້ລ່ວງລັບໄປແລ້ວ. ທ່ານຜູ້ນີ້ ບໍ່ເຄີຍໄດ້ຮັບການສະໜັບສະໜຸນຈາກກອງທັບ ຫຼື ແມ່ນ ແຕ່ຄວາມໄວ້ເນື້ອເຊື່ອໃຈ ຈາກຝ່າຍກອມມູນິດ ດັ່ງທີ່ທ່ານ ອອງ ຊານ ມີ. ເຖິງປານນັ້ນ ການກະກຽມເພື່ອເອກະລາດ ກໍໄດ້ດຳເນີນຕາມກຳນົດການ.

ພາຍໃນລະຍະສາມເດືອນ ທີ່ພະມ້າໄດ້ເອກະລາດ, ໃນວັນທີ 4 ມັງກອນ ປີ 1948 ຜູ້ປົກຄອງທ້ອງຖິ່ນ ຄົນໃໝ່ ກັບພັກກອມມູນິດ ເຊິ່ງໃນຄັ້ງໜຶ່ງເປັນພັນທະມິດກັນ ຢູ່ໃນການຕໍ່ສູ້ ເພື່ອເອກະລາດ ກໍຖືກປິດລ້ອມຢູ່ໃນສົງຄາມກາງເມືອງ ດ້ວຍຂໍ້ອ້າງວ່າ ເພື່ອຄວບຄຸມປະເທດຊາດໄວ້. ການລຸກຮືຫຼາຍແຫ່ງເລີ່ມຂຶ້ນ ໃນຕົ້ນປີ 1946 ເມື່ອອົງ ກິດ ປະກາດວ່າ ພວກກອມມູນິດ "ທຸງແດງ" ພາຍໃຕ້ການນຳຂອງ ຖະຂິ່ນ ໂສເອະນັ້ນ ຜິດກົດໝາຍ. ໃນເດືອນມິນາ 1948 ພວກກອມມູນິດ "ທຸງຂາວ" ອອກໜ້າໂດຍ ຖັນ ຕູນ ສະຫາຍເກົ່າຂອງ ອອງ ຊານ ໄດ້ລົງມືໂຈມຕີ ສຳນັກເລຂາທິການລັດຖະບານ ອູ ນຸ ງວ ນຸ ໂດຍສັ່ງໃຫ້ຈັບກຸມພວກເຂົາໄວ້. ໃນເດືອນກໍລະກົດ ພວກທະຫານເກົ່າ ຂອງ ອອງ ຊານ ທີ່ມີຈຳນວນຫຼາຍກວ່າ ກໍເຂົ້າສົມທົບນຳ, ນອກນັ້ນ ຍັງມີອົງການອາສາສະໝັກ ປະຊາຊົນ "ທຸງຂາວ" ກັບ ກອງທະຫານເກົ່າ BIA ຈາກກອງທັບລັດຖະບານນຳອີກ.

ລັດຖະບານເກືອບຍັງບໍ່ທັນໄດ້ລົງມືປັບປຸງແຜນການ ເພື່ອຈັດການກັບການຕໍ່ ຕ້ານຈາກຝ່າຍຊ້າຍ ພວກກະທ່ຽງຜູ້ຂັດຂືນ ພາຍໃຕ້ການນຳພາຂອງ ສະຫະພາບກະ ທ່ຽງແຫ່ງຊາດ ຮວມທັງກອງທະຫານ ລັດຖະບານ ທີ່ແຕກໜີໄປບາງຄົນ ກໍໄດ້ໄຂບັ້ນ ກ່ຳກອນຂຶ້ນ ເມື່ອທ້າຍປີ 1948. ໃນປີ 1949 ລັດຖະບານ ພົບວ່າ ຕົນເອງສາມາດຄວບ ຄຸມສະຖານະການໄດ້ແຕ່ສະເພາະຢູ່ໃນໃຈກາງຕົວເມືອງ ຈຳນວນເລັກນ້ອຍເທົ່ານັ້ນ. ສົງຄາມກາງເມືອງຄັ້ງນີ້ ມີລັກສະນະພິເສດ ຢູ່ຊາຍແດນນະຄອນຢ່າງກຸ້ງ ພວກເດັກ ນ້ອຍປ່ຽນຜຽນກັນຍິງຕອບໂຕ້ກັນໄປມາ ແຕ່ຜູ້ຄົນຊ້ຳໄດ້ຮັບອະນຸຍາດ ຜ່ານຂ້າມໄປ ມາລະຫວ່າງ ເຂດດິນລະຫວ່າງກາງທີ່ບໍ່ເປັນຂອງໃຜ. ຕໍ່ມາກອງກຳລັງປະກອບອາວຸດ

ຂອງລັດຖະບານ ກໍຄ່ອຍໆຍຶດພື້ນທີ່ຄືນໄດ້ເຖິງຂັ້ນ ບຸກເຂົ້າໄປໃນເຂດແດນ ຂອງລັດ ສານ ເພື່ອນໍາປາບປາມກອງໂຈນກິກມິນຕັງ ເມື່ອລະຍະທ້າຍຂອງສົງຄາມກາງເມືອງ ທີ່ສັບສົນຍຶດເຍືອຂອງຈີນ. ຈົນມາຮອດປີ 1952 ສະພາບຈຶ່ງມີຄວາມໝັ້ນຄົງ ປອດໄພ ພຽງພໍເພື່ອໃຫ້ຈັດການເລືອກຕັ້ງໄດ້.

ລັດຖະບານ ກັບສະຫະພາບ ລອດພົ້ນຈາກສົງຄາມກາງເມືອງ ແຕ່ບໍ່ເຄີຍ ປາບປາມສັດຕູ ເຊິ່ງເກືອບສີ່ສິບປີຕໍ່ມາ ກໍຍັງຄົງສືບຕໍ່ປະຕິເສດການຄວບຄຸມຈາກລັດ ຖະບານກາງ ເທິງພື້ນທີ່ປະມານສິບສ່ວນຮ້ອຍ ຂອງດິນແດນທັງໝົດຂອງພະມ້າ. ລັດຖະບານ ສາມາດກັບມາຍຶດອໍານາດ ຄວບຄຸມພື້ນທີ່ໄດ້ເກືອບທົ່ວປະເທດດ້ວຍ ເຫດຜົນ ນາໆປະການ ໃນນັ້ນ ມີຮວມທັງການສ້າງຕັ້ງກອງທັບແຫ່ງຊາດທີ່ເຂັ້ມແຂງ ການຊ່ອຍເຫຼືອຈໍານວນເລັກນ້ອຍ ຈາກປະເທດອັງກິດ-ອິນເດຍ ກັບປະເທດອື່ນໆ, ການສະໜັບສະໜຸນ ຈາກພວກຕ້ານກອມມູນິດ ໃນລະບົບລາຊະການ ກັບຊົນຊັ້ນ ກາງ ອັນເຮັດໃຫ້ ຜູ້ນໍາສັງຄົມນິຍົມ ຂອງພັກ AFPFL ຜູ້ເຊິ່ງ ໃນລະຍະການຂັດ ແຍ່ງສູງສຸດ ໄດ້ປະລະຕໍາແໜ່ງນັ້ນໄປຢູ່ນໍາຝ່າຍທະຫານ. ນັກການເມືອງຫົວຮີດເດີມ ຫົວອຸດົມການ ຈົນບໍ່ເຂົ້າກັບກໍາລັງລຸກຮືເຫຼົ່ານັ້ນ ກໍເຮັດໃຫ້ພວກເຂົາບໍ່ສາມາດເຕົ້າ ໂຮມກັນ ເພື່ອມາຕໍ່ຕ້ານກັບ ຝ່າຍລັດຖະບານໄດ້ອີກ. ອີກຄັ້ງໜຶ່ງ ທີ່ຄວາມຄາດຫວັງ ທີ່ຈະກັບຄືນມາຍຶດຄອງ ຂອງ ນັກກອມມູນິດ ຫຼືວ່າ ພວກກະຫຣ່ຽງຈະແຍກອອກເປັນ ລັດໜຶ່ງຕ່າງຫາກໄດ້ພັງທະລາຍໄປແລ້ວ.ພັກກໍຄຸມອໍານາດໄດ້, ແຕ່ພໍມາຮອດຊຸມຕົ້ນປີ 1950 ປະສິດທິພາບຂອງພັກ ໃນຖານະເປັນອົງການທາງການເມືອງ ກໍເສື່ອມຖອຍລົງ ແລະ ການເປັນລັດຖະບານ ຢ່າງຖືກຕ້ອງຕາມກົດໝາຍ ນັບມື້ນັບຂຶ້ນກັບບາລະມີ ຂອງ ນາຍົກລັດຖະມຸນຕີ ພຸດທະມາມະກະ ຜູ້ເຄັ່ງຄັດ ຄື ທ່ານ ອູ ນຸ.

ພັກ AFPFL ໄດ້ຮັບການຈັດຕັ້ງຂຶ້ນມາ ໃນນາມແນວຮ່ວມຕໍ່ຕ້ານລັດທິຟາດ ຊິດຊ໌ ພໍຮອດ 1946-1947 ກໍໄດ້ກາຍເປັນກອງກໍາລັງປະສົມ ມີທັງຊາວນາ ແລະ ສະຫະພາບກໍາມະກອນ ອົງການຈັດຕັ້ງ ຂອງຊົນຊາດຊົນເຜົ່າ ພັກການເມືອງ ແລະ ສະມາຊິກອິດສະລະ ທັງໝົດຜູກຮັດເຂົ້າກັນ ດ້ວຍເປົ້າໝາຍດຽວ ຄື ຕໍ່ຕ້ານອັງກິດ ແລະ

ເພື່ອຄວາມເປັນເອກະລາດ. ເຖິງຢ່າງໃດກໍດີ ບໍ່ດົນ ແນວໂຮມດັ່ງກ່າວ ກໍແຕກແຍກກັນ. ການແຕກຫັກຄັ້ງທຳອິດເກີດຂຶ້ນຍ້ອນການຂັບໄລ່ນັກກອມມູນິດ "ທຸງແດງ" ກັບ "ທຸງຂາວ" ອອກໄປໃນປີ 1946-1947, ການສະໜັບສະໜຸນຫຼາຍຢ່າງ ສູນເສຍໄປອີກ ໃນ ປີ 1950 ພ້ອມກັບການຂັບໄລ່ ພັກກຳມະກອນພະມ້ານິຍົມໂຊຽດ ກັບ ພັກຊາວນາ ເມື່ອຝ່າຍນີ້ຂັດແຍ່ງ ກັບ ລັດຖະບານ ທີ່ຮັບຮອງເອົາການເຂົ້າຮ່ວມໃນສົງຄາມເກົາຫຼີ ຂອງ ອົງການສະຫະປະຊາຊາດ. ເຖິງວ່າ ພັກກັບສາຂາຂອງພັກ ຍາດໄດ້ຮອດ 200 ບ່ອນນັ່ງ ໃນສະພາ ຕ່ຳ 239 ຕັ່ງ ໃນການແຂ່ງຂັນເລືອກຕັ້ງ ປີ 1951-1952 ແຕ່ພັກຝ່າຍ ຄ້ານທັ້ງຫຼາຍໄດ້ຍາດເອົາສ່ຽງໄປຫຼາຍ. ຊື່ສ່ຽງກຽດສັກສີ ຂອງພັກຕົກຕ່ຳລົງ ອີກຫຼາຍ ຂະນະທີ່ ຄວາມຫວັງທີ່ມີມາກ່ອນເອກະລາດ ຍັງບໍ່ທັນສຳເລັດ, ເສດຖະກິດຕົກຕ່ຳບໍ່ ສາມາດຟື້ນຄືນຕົວໄດ້ໄວ ແລະ ຄວາມອຸ່ນອາຍພາຍໃນ ກໍຍັງຄົງດຳເນີນຢູ່ຕໍ່ໄປ. ຄວາມແຕກແຍກທາງການເມືອງຂັ້ນຮຸນແຮງທະວີຂຶ້ນໄປອີກ ຈົນແບ່ງແຍກການປົກ ຄອງແບບປະສົມນັ້ນ. ເພື່ອຮັກສາຕຳແໜ່ງຂອງຕົນໄວ້ຕໍ່ໄປ ເມື່ອການເລືອກຕັ້ງ ປີ 1956 ຫຍັບໃກ້ເຂົ້າມາ ທ່ານ ອູ ນຸ ກໍຖືກກົດດັນຫຼາຍຂຶ້ນ ເພື່ອຕອບສະໜອງຜົນປະ ໂຫຍດສະເພາະຢ່າງໃດຢ່າງໜຶ່ງເພື່ອສ້າງຄວາມມີຊີວິດຊີວາໃຫ້ແກ່ລະບົບລັດຖະການ ແລະ ເພື່ອຟື້ນຟູກຳລັງໃຈໃຫ້ແກ່ສາວົກຂອງເພິ່ນ. ທ່ານ ອູ ນຸ ກັບ ພັກພວກລັດຖະມຸນຕີ ນັກສັງຄົມນິຍົມຂອງເພິ່ນ ໄດ້ພະຍາຍາມປະສານຄ່ານິຍົມ ທາງພຸດທະສາສະໜາກັບ ລັດທິມາກສ໌ເຂົ້າກັນໃຫ້ເປັນ ອຸດົມຄະຕິແຫ່ງຊາດຢ່າງດຽວ. ສັງຄົມນິຍົມແບບພຸດ ດັ່ງທີ່ຊື່ບົ່ງບອກຢູ່ແລ້ວ ເປັນຕົວແທນແຫ່ງການກັບມາຂອງຫຼັກຄຳສອນທາງສິນທຳຂັ້ນ ພື້ນຖານ ແລະແມ່ນຄວາມພະຍາຍາມຫຼີກເວັ້ນການໃຊ້ກຳລັງ ເຊິ່ງລັດທິທຶນນິຍົມເຄີຍ ຖືກກ່າວຫ້ວງວ່າໄດ້ປະຕິບັດກັບປະຊາຊົນໃນປະເທດ ໃນຍຸກອະນານິຄົມມາແລ້ວ ແຕ່ ກໍບໍ່ຍອມໃຫ້ອຳນາດ ຕົກໄປໃສ່ມືຝ່າຍກອມມູນິດ.

ການເລືອກຕັ້ງໃນປີ 1956 ເຜີຍໃຫ້ເຫັນຄວາມເປື່ອຍເຍື່ອຍຂອງພັກ AF-PFL ທີ່ເຄີຍໄດ້ຮັບຄວາມນິຍົມ ຊົມຊອບໃນເມື່ອກ່ອນ. ພັກສັນນິບາດ AFPFL ແລະ ສະໝັກພັກພວກຂອງຕົນ ຍາດໄດ້ 173 ບ່ອນນັ່ງ ຈາກ ທັ້ງໝົດ 230 ຕັ່ງໃນສະພາ, ໃນ ຂະນະທີ່ພັກຝ່າຍຄ້ານທີ່ໃຫຍ່ທີ່ສຸດ ຄື ພັກແນວໂຮມສາມັກຄີແຫ່ງຊາດ (National

Union Federation) ຜູ້ສືບທອດຂອງ BWPP ໄດ້ແຕ່ 47 ບ່ອນນັ່ງ ແຕ່ພັກ AFPFL ກໍໄດ້ແຕ່48 % ຂອງຄະແນນສຽງທັງໝົດໃນສະພາ. ໃນຂະນະທີ່ພັກແນວໂຮມສາມັກຄີ ແຫ່ງຊາດ ໄດ້ຮອດ 30 % . ທ່ານ ອູ ນຸ ຮູ້ວ່າ ພັກກຳລັງປະເຊີນກັບອັນຕະລາຍນີ້ຢູ່ ດັ່ງນັ້ນ ເພິ່ນຈຶ່ງລາອອກຈາກຕຳແໜ່ງເປັນການຊົ່ວຄາວ ເພື່ອຈັດການເຄັ່ງລະບຽບຫຼັກ ການດ້ານການຈັດຕັ້ງ ຢູ່ໃນສັນນິບາດ. ເຖິງແນວໃດກໍຕາມ ຜົນກະທົບກໍແມ່ນການຕື່ມ ນ້ຳມັນເຊື້ອໄຟໃສ່ທ່າອ່ຽງແຕກແຍກ ຢູ່ພາຍໃນລັດຖະບານ ເພາະຄວາມພະຍາຍາມ ໃນການປະຕິຮູບຂອງເພິ່ນ ໄດ້ແຕະຕ້ອງພື້ນຖານອຳນາດຂອງຄູ່ຕໍ່ສູ້ທາງການເມືອງຢູ່ ໃນລັດຖະບານ. ດັ່ງນັ້ນ ບໍ່ດົນ ຫຼັງຈາກ ອູ ນຸ ກັບຄືນມາສູ່ຕຳແໜ່ງອີກ ໃນປີ 1958, ສັນນິບາດ ກໍເກີດແຕກແຍກກັນຢ່າງຮຸນແຮງ ຄື ຮອງນາຍົກລັດຖະມຸນຕີ ສອງຄົນ ອູ ບາ ສະເອ ກັບ ອູ ກະຍໍ ໜຸ່ມ ທີ່ເປັນນັກສັງຄົມນິຍົມ ໄດ້ໄປກໍ່ຕັ້ງ ແລະ ຮວມເອົາພັກພວກ ເຂົ້າມາຢູ່ໃນພັກ AFPFL “ທີ່ໝັ້ນຄົງ” ຂະນະທີ່ ອູ ນຸ ກັບ ຖະຂິ່ນ ທິນ ກັບ AFPFL ຜູ້ອື່ນໆ ພາກັນໄປກໍ່ຕັ້ງ ພັກ “ໂປ່ງໃສ” ຂຶ້ນ. ອູ ນຸ ກັບ ພັກພວກ ສາມາດຢູ່ໃນອຳນາດໄດ້ ກໍດ້ວຍການສະໜັບສະໜຸນຈາກຝ່າຍຄ້ານເກົ່າ ທັງຊ້າຍແລະຂວາ. ແຕ່ເພື່ອຮັກສາສຽງ ສ່ວນຫຼາຍຂອງຕົນເອົາໄວ້ ທ່ານ ອູ ນຸ ຕ້ອງໄດ້ຍິນຍອມຜ່ອນຜັນ ເພື່ອຜົນປະໂຫຍດ ຂອງຊົນຊາດຊົນເຜົ່າແດ່ ໃນນັ້ນ ລວມທັງ ປີກຂວາ ເຈົ້າປົກຄອງລັດຊານ ແລະ ນັກ ຊາດນິຍົມຜູ້ຮັ່ງມີ ຊາວອາຣະກັນ ນຳ ແຕ່ເມື່ອສັນຍາຍຸຕິສົງຄາມໄດ້ໃຫ້ຄຳໝັ້ນສັນຍາ ແກ່ຜູ້ກໍ່ຂະບົດທັງໝົດແລ້ວ ອູ ນຸ ຈຶ່ງໄດ້ຖະແຫລງການເຖິງຄວາມມຸ່ງມາດ ປາດຖະໜາ ຂອງຕົນ ທີ່ຢາກພິຈາລະນາກໍ່ຕັ້ງລັດອາຣະກັນ ກັບ ລັດຂອງຊາວມອນຕ່າງຫາກ. ຄວາມເຄັ່ງຕຶງທາງການເມືອງ ທະວີຂຶ້ນຮຸນແຮງ ເກີນກວ່າທີ່ຂະບວນການ ທາງລັດຖະ ສະພາ ຈະແກ້ໄຂໄດ້. ເມື່ອຖືກຂັດຂວາງໂດຍລະບົບລັດຖະການ ອັນແຂງກະດ້າງ ທີ່ເກີດຈາກ ການແຊກແຊງຂອງຝ່າຍການເມືອງ ຕ່ອງການບໍລິຫານຂອງລັດຖະບານ ບວກກັບຄວາມບໍ່ພໍໃຈຂອງ ບັນດາຊົນຊາດຊົນເຜົ່າ ແລະຍ້ອນການຂົ່ມຂູ່ຂອງສົງຄາມ ລະຫວ່າງກອງກຳລັງປະກອບອາວຸດຕ່າງໆ ຂອງລັດຖະບານເອງ ທ່ານ ອູ ນຸ ຈຶ່ງມອບ ສິ່ງອຳນາດປົກຄອງຂອງປະເທດ ໃຫ້ແກ່ຜູ້ບັນຊາການກອງທັບ ຄື ນາຍພົນ ເນ ວິນ ໃນເດືອນຕຸລາ ປີ 1958. ການປົກຄອງແບບ “ຄຸ່ມຄົມ” ດຳເນີນໄປເປັນເວລາ ຫົກເດືອນ ແລ້ວຂະຫຍາຍຕໍ່ເປັນສິບແປດເດືອນ ຈຶ່ງໄດ້ມີການກະກຽມສຳລັບການ ເລືອກຕັ້ງຄັ້ງໃໝ່ ໃນເດືອນກຸມພາ 1960.

ພວກທີ່ແຍກອອກໄປຈາກພັກ AFPFL ຂອງ ອູ ນຸ ຕັ້ງຊື່ພັກໃໝ່ຂອງຕົນວ່າ ພັກສະຫະພາບ ກໍຫວນຄືນມາສູ່ອຳນາດ ໂດຍໄດ້ສຸງສະໜັບສະໜຸນຢ່າງແຂງຂັນ ຈາກສະພາ. ຢ່າງໃດກໍດີ ການຜ່ອນຜັນກັນໃນທາງການເມືອງ ພໍພຸງເປັນສັນຍະລັກ ຮູບນອກເຊິ່ງ ອູ ນຸ ເຮັດໄວ້ ເມື່ອຄາວຫາສຸງເລືອກຕັ້ງ ແລະ ເພີ່ນກໍໄດ້ລົງມືປະຕິບັດນັ້ນ ກໍເລີຍເຮັດໃຫ້ຄວາມສາມັກຄີແຫ່ງຊາດ ຕົກຢູ່ໃນອັນຕະລາຍອີກ. ອູ ນຸ ຕໍ່ຕ້ານຊົນຊາດ ຊົນເຜົ່າຜູ້ຕ່າງສາສະໜາ ດ້ວຍການສະຖາປະນາພຸດທະສາສະໜາ ໃຫ້ເປັນສາສະໜາ ແຫ່ງຊາດ ຈາກນັ້ນ ກໍຜັດມາເປັນປໍລະປັກ ກັບນັກເຄື່ອນໄຫວຊາວພຸດອີກ ຍ້ອນການ ແກ້ໄຂລັດຖະທຳມະນູນທີ່ໃຫ້ເສລີພາບ ໃນການນັບຖືສາສະໜາ. ເມື່ອ ອູ ນຸ ປະກາດ ເຈຕະນາລົມຂອງຕົນ ທີ່ຈະລາອອກຈາກການເປັນຫົວໜ້າພັກ ໃນປີ 1962 ແລະ ອອກ ຈາກຕຳແໜ່ງນາຍົກລັດຖະມຸນຕີ ປີ 1964 ບັນດາຜູ້ສະໜັບສະໜຸນເພີ່ນ ກໍເລີ່ມຕໍ່ສູ້ກັນ ເພື່ອສືບທອດອຳນາດ. ພັກເລີ່ມແບ່ງແຍກກັນ ແລະ ການລຸກຮືຢູ່ລັດສານ ກໍລະເບີດຂຶ້ນ ທາງພາກຕາເວັນຕົກຂອງປະເທດ. ທ່ານ ອູ ນຸ ບໍ່ສາມາດນຳພາຢ່າງມີປະສິດທິພາບ ອີກຕໍ່ໄປ ແຕ່ຄູ່ສັດຕູ ທີ່ເປັນພົນລະເຮືອນຂອງເພີ່ນ ກໍບໍ່ສາມາດຮັບບົດບາດອັນນີ້ ກອງທັບເອງ ເຫັນວ່າ ພະມ້າກຳລັງຕ່າວຄືນ ໄປຫາການຂັດແຍ່ງອັນແສນຂົມຂື່ນ ຄືປີ 1958 ອີກ. ຍ້ອນວ່າລະຍະການປົກຄອງໂດຍທະຫານໃນຖານະລັດຖະບານຊົ່ວຄາວທີ່ "ຄຸ່ມຄົມ" ນັ້ນ ກໍໄດ້ມີຜົນງານດີເດັ່ນຫຼາຍຢ່າງ ເຊັ່ນ ການປາບປາມ ການສໍ້ໂກງ ແລະ ໄພເງິນເຟີ້ ໂດຍການຟື້ນຟູກົດໝາຍ ແລະ ລະບຽບການ ແລະ ດ້ວຍການສ້າງຄວາມ ເຕີບໃຫຍ່ທາງເສດຖະກິດ, ທາງກອງທັບ ແລະ ນາຍພົນ ເນ ວິນ ເອງ ບໍ່ສາມາດ ເບິ່ງຂ້າມສິ່ງທີ່ພວກເພີ່ນເຫັນວ່າ ມັນເປັນຄວາມຈຳທີ່ຈະຕ້ອງຫວນໄປ ນຳໃຊ້ລະບອບ ການປົກຄອງໂດຍທະຫານອີກ ເພື່ອຮັກສາຄວາມໝັ້ນຄົງທາງການເມືອງ ແລະ ເອກະ ລາດຂອງຊາດ. ພວກເຂົາເຮັດລັດຖະປະຫານ ໃນ ວັນທີ 2 ມີນາ 1962 ຈັບກຸມນັກ ການເມືອງຝ່າຍພົນລະເຮືອນຫຼາຍຄົນ ຢັບຢັ້ງການອອກລັດຖະທຳມະນູນ ແລະ ອີກຄັ້ງ ໜຶ່ງ ກໍ່ສ້າງຄືນໃໝ່ ປະເທດຊາດ ແລະ ສາຍພົວພັນກັບສັງຄົມພົນລະເຮືອນ ພາຍໃຕ້ ອຳນາດປົກຄອງ ຂອງສະພາປະຕິວັດ ຂອງກອງທັບ.

ກອງທັບເລີ່ມຕົ້ນ ດ້ວຍການຕັດຮອນໂຄງສ້າງທາງການເມືອງ ທີ່ກໍ່ຮ່າງສ້າງ ຕົວຂຶ້ນມາໃນລະຍະສິບສີ່ປີທຳອິດ ຂອງການເປັນເອກະລາດ ແລ້ວນຳເອົາໂຄງສ້າງ

ແບບອື່ນທີ່ສະພາປະຕິວັດສາມາດຊິ້ນຳໄດ້. ສະພານິຕິບັນຍັດທັ້ງສອງຖືກຍຸບ, ປະທານ ຖືກຍ້າຍ, ລັດຖະບານຂອງລັດທີ່ແຍກອອກໄປ ຖືກຍົກເລີກໄປ ແລະ ສານຕ່າງໆກໍຖືກ ຮວບເຂົ້າມາໄວ້ພາຍໃຕ້ອຳນາດ ຂອງສານສູງສຸດໃໝ່ແຫ່ງດຽວ ຍິ່ງໄປກວ່ານັ້ນ ການ ຈັດການບໍລິຫານຫຼາຍຢ່າງ ຖືກນຳເຂົ້າມາເປັນຄັ້ງທຳອິດໃນສະໄໝອານານິຄົມ ກໍຖືກ ຖອນຮາກຖອນເຫງົ້າໄປເລີຍ. ສະພາປະຕິວັດ ໄດ້ເປັນລັດຖະບານ ຕໍ່ມາອີກສິບສອງປີ ປະທານສະພາແມ່ນນາຍພົນ ເນ ວິນ ເປັນຜູ້ກຳອຳນາດຢ່າງເດັດຂາດທັ້ງໃນດ້ານ ນິຕິ ບັນຍັດ ແລະ ຕຸລາການ. ຢູ່ໃນລະດັບທ້ອງຖິ່ນ ການກວດກາການປະຕິບັດນະໂຍບາຍ ຂອງລັດຖະບານ ຖືກດຶງອອກຈາກມືອົງກອນປະຈຳການ ແລະ ສົ່ງຍື່ນໄປໃຫ້ຄະນະ ກຳມະການເພື່ອຄວາມໝັ້ນຄົງ ແລະ ການບໍລິຫານ ເຊິ່ງນຳພາໂດຍ ຜູ້ບັນຊາການ ທະຫານ ປະຈຳທ້ອງຖິ່ນ ມີການປະສານງານ ແລະ ຊີ້ນຳການເຄື່ອນໄຫວຂອງລະບົບ ຂ້າລັດຖະການພົນລະເຮືອນ ພ້ອມທັງກິດຈະກຳທາງການເມືອງ.

ຂັ້ນທຳອິດ ລັດຖະບານສະພາປະຕິວັດ ພະຍາຍາມຮ່ວມມືກັບຫົວໜ້າພັກການ ເມືອງຕ່າງໆ ເຊິ່ງໄດ້ເຮັດວຽກງານເອົາຈິງເອົາຈັງມາຕັ້ງແຕ່ ຊຸມປີ 1950, ເຖິງຢ່າງໃດກໍ ດີ ຍົກເວັ້ນແນວໂຮມສາມັກຄີແຫ່ງຊາດຝ່າຍຊ້າຍແລ້ວ ພວກເຂົາທັ້ງໝົດໄດ້ປະຕິເສດ ການຮ່ວມມືນັ້ນ ດ້ວຍເຊື່ອວ່າ ຝ່າຍທະຫານຈະມອບອຳນາດຄືນໃຫ້ແກ່ພວກເຂົາ ຄືດັ່ງ ທີ່ໄດ້ເຮັດໃນປີ 1960. ຄວາມເຊື່ອແບບນີ້ຜິດພາດຢ່າງເຫັນໄດ້ຄັກ. ບໍ່ມີນັກການເມືອງ ຂັ້ນນຳຄົນໃດໃນຊຸມປີ 1950 ໄດ້ກັບຄືນມາກຳອຳນາດອີກ ແລະ ເກືອບທັງໝົດ ຖືກ ລືມໄປໃນເວລາບໍ່ເທົ່າໃດປີ. ເມື່ອປະລາໄຊໃນການສະແຫວງຫາການຮ່ວມມືຈາກຂັ້ນ ນຳການເມືອງຝ່າຍພົນລະເຮືອນ ໃນປີ 1962 ສະພາປະຕິວັດ ຈຶ່ງໄດ້ຈັດຕັ້ງພັກການ ເມືອງຂອງຕົນຂຶ້ນ ໂດຍໃສ່ຊື່ວ່າ ພັກ ລານສິນ ຫຼື ພັກໂຄງການສັງຄົມນິຍົມ ພະມ້າ Burma Socialist Program Party (BSPP) ເພື່ອລະດົມການສະໜັບສະໜຸນ ໃຫ້ລັດຖະບານ ແລະ ຄອບງຳກຳລັງທາງການເມືອງ. ພັກຄູ່ແຂ່ງນີ້ ສ້າງຕັ້ງຂຶ້ນເມື່ອ ວັນທີ 4 ກໍລະກົດ 1962 ແລະ ກາຍເປັນພັກດຽວທີ່ຖືກຕ້ອງຕາມກົດໝາຍ ໃນປີ 1964 ແລະ ຍັງຄົງເປັນພັກ "ຝ່າຍເສນາທິການ" ມາຈົນຮອດ ຕົ້ນຊຸມປີ 1970 ຈຶ່ງ ປະກາດເປັນ ພັກມະຫາຊົນ. ມາເຖິງເວລານັ້ນ ການເປັນສະມາຊິກຂອງພັກກໍມີ

ຄວາມໝາຍອັນດຽວກັນກັບການເປັນສະມາຊິກສະພາປະຕິວັດນັ້ນເອງ. ມາຮອດ ປີ 1972 ມີສະມາຊິກສົມບູນຂອງພັກ ຢູ່ 79,459 ຄົນ ໃນນັ້ນ 58 % ມາຈາກກອງທັບ. ນັບແຕ່ນັ້ນມາ ຈຳນວນສະມາຊິກ ໄດ້ຂະຫຍາຍອອກໄປຢ່າງໄວວາ ແລະ ໃນປີ 1981 ມີສະມາຊິກເຖິງ ໜຶ່ງລ້ານເຄິ່ງ, ຄິດໄລ່ເປັນປະມານ 5 ສ່ວນຮ້ອຍ ຂອງປະຊາຊົນທັງໝົດ. ຄວາມກ້າວໜ້າໃນການຮັບຄົນເຂົ້າເຮັດວຽກ ໃນວົງການລັດຖະບານ ແລະ ການເລື່ອນຊັ້ນໃນເລື່ອງອື່ນໆ ເຊັ່ນ ການໃຫ້ທຶນການສຶກສາ ແລະ ຈ່າຍເງິນ ສຳລັບມື້ພັກຜ່ອນ ທັງໝົດນີ້ໄດ້ກາຍມາເປັນສິ່ງຜູກພັນ ກັບການເປັນສະມາຊິກພັກ ນັບມື້ນັບຫຼາຍຂຶ້ນ.

ສະພາປະຕິວັດ ລົງມືປະຕິບັດນະໂຍບາຍເສດຖະກິດ ອັນເຂັ້ມຂຸ້ນເຖິງຖອງ ຍິ່ງກວ່ານະໂຍບາຍ ຂອງຊຸມປີ 1950 ຫຼາຍ. ທຸລະກິດຕ່າງປະເທດ ແລະ ທຸລະກິດ ຂະໜາດໃຫຍ່ ພາຍໃນປະເທດທັງໝົດ ຖືກໂອນເປັນຂອງຊາດ ແລະ ຊາວອິນເດຍ ກັບ ຊາວປາກິດສະຖານຫຼາຍພັນຄົນ ໄດ້ກັບຄືນເມືອອາຊີໃຕ້ ເມື່ອວິທີທຳມາຫາກິນ ຖືກຖອນອອກຈາກມືພວກເຂົາ. ໃນປີ 1963-1964 ການຄ້າຂາຍພາຍໃນປະເທດ ທັງໝົດ ໂດຍສະເພາະ ເຄື່ອງອຸປະໂພກ ບໍລິໂພກ ເຊັ່ນ ເຂົ້າ ແລະ ທາດແປ້ງອື່ນໆ ຖືກ ປະກາດເປັນສິນຄ້າຜູກຂາດໂດຍລັດຖະບານ ດັ່ງນັ້ນ ທັງການຄ້າພາຍໃນ ແລະ ການ ຄ້າພາຍນອກ ຈຶ່ງຕົກຢູ່ໃນການຄວບຄຸມ ຂອງລັດຖະບານຢ່າງເປັນທາງການ. ເຖິງ ແມ່ນວ່າ ນະໂຍບາຍເສດຖະກິດ ຂອງ ສະພາປະຕິວັດ ຫຼາຍຢ່າງ ບໍ່ເປັນທີ່ນິຍົມ ຊົມຊອບຂອງປະຊາຊົນ ໂດຍສະເພາະ ໃນໝູ່ຊົນຊັ້ນກາງໃນເມືອງ ເຊິ່ງເປັນຜູ້ສູນເສຍ ຊັບສິນ ແລະ ຄວາມໝັ້ນຄົງ ແຕ່ຕາມໂຄງການຂອງລັດຖະບານ ໃນເບື້ອງຕົ້ນພວກ ຊາວນາກໍໄດ້ຮັບຜົນປະໂຫຍດດີ ເມື່ອລັດຖະບານປະກາດໃຫ້ຍົກເລີກ ໜີ້ສິນທັງໝົດ ຂອງຊາວນາໃນປີ 1963 ທັງຍົກເລີກຄ່າເຊົ່າດິນ ໃນປີ 1965. ເຖິງຢ່າງໃດກໍດີ ໃນ ເມື່ອວ່າ ສິດເປັນເຈົ້າກຳມະສິດ ຕໍ່ທີ່ດິນທັງໝົດ ເປັນຂອງລັດ ຊາວນາກໍຍັງຕົກຢູ່ພາຍ ໃຕ້ການຄວບຄຸມຂອງລັດຖະບານ ນັບມື້ນັບຫຼາຍຂຶ້ນ ແລະ ຍ້ອນວ່າ ລາຄາເຂົ້າ ທີ່ລັດຖະບານຊື້ຈາກຊາວນາ ຕົກຕ່ຳລົງ ການຜະລິດກໍຈຶ່ງເປັນໄປ ໃນທຳນອງດຽວກັນ ດັ່ງນັ້ນພະມ້າກໍເລີຍສູນເສຍ ຕຳແໜ່ງຜູ້ສົ່ງອອກເຂົ້າເປັນສິນຄ້າ ອັນດັບໜຶ່ງໃນໂລກ

ໄປ. ລາຍຮັບຈາກການຄ້າຕ່າງປະເທດ ກໍຫຼຸດລົງ ຕະຫຼອດຊຸມປີ 1960 ການເຕີບໃຫຍ່ທາງເສດຖະກິດຈຶ່ງມີແຕ່ໜ້ອຍຖອຍ.

ນະໂຍບາຍເສດຖະກິດອັນມີຫຼັກການ ແລະ ເຫດຜົນ ຂອງສະພາປະຕິວັດ ໄດ້ຈັດພິມອອກເຜີຍແຜ່ ໃນປີ 1962 ຢູ່ໃນຖະແຫຼງການສະບັບໜຶ່ງທີ່ຮູ້ກັນໃນນາມ "ເສັ້ນທາງສູ່ສັງຄົມນິຍົມ ຂອງພະມ້າ" ຖະແຫຼງການສະບັບນີ້ ໄດ້ຮັບການອະທິບາຍຕື່ມໃນປີ 1964 ໃນເອກະສານກ່ຽວກັບອຸດົມຄະຕິ ທີ່ເອີ້ນວ່າ "ສຳພັນທະພາບລະຫວ່າງມະນຸດກັບສິ່ງແວດລ້ອມຂອງຕົນ" ເອກະສານສະບັບນີ້ ຖືກສົມທົບເຂົ້າກັບແນວຄິດວິພາກແບບ ມາກ-ເລນິນ ແລະ ແນວຄຶດປັດຊະຍາພື້ນຖານ ຂອງພະພຸດທະສາສະໜາເຖລະວາດ ຮວມທັງເລື່ອງຂອງ ອະນິດຈັງ ແລະ ແນວຄຶດທີ່ວ່າ ບາບກັມໃນຊີວິດປັດຈຸບັນ ເກີດຈາກຄວາມມັກໂລບໂລພາ ທີ່ມະນຸດສືບທອດໃຫ້ກັນມາ ເຊິ່ງມີແຕ່ລັດທີ່ເຂັ້ມແຂງເທົ່ານັ້ນ ຈຶ່ງຈະສາມາດ ແລະ ຕ້ອງຄວບຄຸມ ໃນນາມເປັນຄວາມຕ້ອງການສູງສຸດທາງດ້ານຈິດໃຈຂອງມະນຸດ. ດັ່ງນັ້ນ ຮູບໂສມທາງນອກຂອງການສັ່ງສອນໃນເລື່ອງເສດຖະກິດ ຕາມລັດທິສັງຄົມນິຍົມແບບເຖິງຖອຍ ຂອງສະພາປະຕິວັດ ຈຶ່ງຕ້ອງອະທິບາຍຂະຫຍາຍຄວາມ ໃຫ້ແກ່ປະຊາຊົນພະມ້າ ໃນຄວາມໝາຍຂອງການອະນຸຮັກຄຳສອນທາງສິນທຳ ແລະ ສາສະໜາ ທີ່ສືບທອດຜ່ານປະຫວັດສາດ.

ການກໍ່ສ້າງລັດສັງຄົມນິຍົມ ແບບມີພັກການເມືອງດຽວ ບໍ່ໄດ້ຫຼຸດພົ້ນອອກຈາກຄວາມຂັດແຍ່ງ ດັ່ງທີ່ບົດ ພິງສາວະດານສະບັບນີ້ ຈະຊີ້ອອກໃຫ້ເຫັນ. ພວກນັກສຶກສາທີ່ເຄີຍມີບົດບາດກ້ວາງຂວາງ ສະໄໝເດີມຂະບວນຕໍ່ຕ້ານອັງກິດ ໃນຍຸກອານານິຄົມ ແລະ ມີຄຳຕຳນິວິຈານລັດຖະບານມາຕະຫຼອດໃນຊຸມປີ 1950 ນັ້ນ ສະແດງການຕໍ່ຕ້ານນະໂຍບາຍການເມືອງຂອງສະພາປະຕິວັດ ໃນເດືອນ ກໍລະກົດ ປີ 1962. ກອງທັບຕອບໂຕ້ດ້ວຍການໝຸນໃຊ້ອຳນາດ ກົດຂີ່ຈັບກຸມພວກຫົວໜ້ານັກສຶກສາ ແລະ ທຳລາຍສະໂມສອນນັກສຶກສາຢູ່ມະຫາວິທະຍາໄລ ເຊິ່ງເປັນສູນກາງ ແລະ ສັນຍະລັກແຫ່ງການເຄື່ອນໄຫວທາງການເມືອງ ມາເປັນເວລາຫຼາຍຮຸ່ນຄົນແລ້ວ. ພວກນັກສຶກສາພາກັນເດີນຂະບວນອີກໃນປີ 1974 (ສວຍໃຊ້ໂອກາດທີ່ ສົບຂອງທ່ານອະດີດເລຂາທິ

ການສະຫະປະຊາຊາດ ຖືກສົ່ງກັບປະເທດ) ເພື່ອສະແດງໃຫ້ເຫັນ ບໍ່ພຽງແຕ່ຄວາມບໍ່ພໍໃຈຂອງພວກເຂົາເທົ່ານັ້ນ ເມື່ອເຫັນວ່າ ບຸລຸດສຳຄັນລະດັບໂລກຄົນນີ້ ບໍ່ໄດ້ຮັບກຽດຈັດພິທີສົ່ງສະການໃຫ້ຢ່າງເປັນທາງການ (ທ່ານຜູ້ນີ້ເປັນເພື່ອນຮ່ວມງານ ຜູ້ໃກ້ຊິດກັບ ອູ ນຸ) ແຕ່ຍັງເພື່ອສະແດງຄວາມຮູ້ສຶກສ່ວນຕົວຂອງພວກເຂົາ ກ່ຽວກັບການຖືກຕັດຂາດ ແລະ ຂາດໂອກາດ. ການສຶກສາລະດັບມະຫາວິທະຍາໄລ ພາຍຫຼັງປີ 1962 ບໍ່ໄດ້ເປັນຂໍກຸນແຈ ໄປສູ່ຄວາມສຳເລັດຕໍ່ໄປອີກແລ້ວ ແລະ ການຫວ່າງງານຂອງຜູ້ມີການສຶກສາດີ ກໍນັບມື້ນັບສູງຂຶ້ນ ດ້ວຍວ່າເສດຖະກິດ ບໍ່ໄດ້ຂະຫຍາຍຕົວໄວພໍທີ່ຈະຮັບເອົາພວກຮຽນສຳເລັດໃໝ່ໆເຂົ້າເຮັດວຽກ. ຍິ່ງໄປກວ່ານີ້ ມາດຕະຖານການສຶກສາກໍຕົກຕ່ຳແດ່ ຍ້ອນວ່າການຕັດສິນໃຈ ເມື່ອກາງຊຸມປີ 1960 ບັງຄັບໃຫ້ໃຊ້ພາສາພະມ້າສອນໃນທຸກລະດັບການສຶກສາ. ປຶ້ມຕຳລາສຳລັບການຮຽນການສອນ ບໍ່ມີພຽງພໍ ແລ້ວບັນຍາກາດອັນມືດມົນກໍກໍ່ຕົວຂຶ້ນທຸ້ມມະຫາວິທະຍາໄລ ເຊິ່ງກ່ອນໜ້ານີ້ ຖືວ່າ ເປັນສະຖາບັນການສຶກສາຂັ້ນສູງນຳໜ້າແຫ່ງໜຶ່ງ ຂອງອາຊີຕາເວັນອອກສຽງໃຕ້.

ສຽງຮຽກຮ້ອງຂອງນັກສຶກສາ ສອດຄ່ອງ ແລະ ເຂົ້າກັນໄດ້ດີກັບຂອງຜູ້ອື່ນໆ. ໃນເວລາດຽວກັນ ພວກກຳມະກອນກໍພາກັນເດີນຂະບວນ ເພື່ອຮຽກຮ້ອງຄ່າແຮງງານສູງຂຶ້ນ ແລ້ວຕະຫຼອດເວລາແຕ່ຕົ້ນປີ 1975 ມາ ນະຄອນຢ່າງກຸ້ງ ກໍຕົກຢູ່ໃນພາຍໃຕ້ການໃຊ້ກົດໄອຍະການເສິກ. ໃນລະຍະນີ້ ຄວາມບໍ່ພໍໃຈ ຍັງເກີດຂຶ້ນອີກພາຍໃນຖັນແຖວກຳລັງປະກອບອາວຸດ ແລະ ມີການວາງແຜນໂຄ່ນລົ້ມ ນາຍພົນ ເນວິນ ກັບຜູ້ນຳຄົນອື່ນໆ ຫຼາຍຄັ້ງ. ຢ່າງໃດກໍຕາມ ຄວາມພະຍາມເຫຼົ່ານີ້ ບວກໃສ່ຄວາມພະຍາຍາມອື່ນໆ ເພື່ອປ່ຽນແປງ ກໍປະສົບຄວາມປະລາໄຊ ທັງນີ້ຍ້ອນວ່າຍັງມີຄວາມຈົງຮັກພັກດີ ອັນເລິກເຊິ່ງຂອງນາຍທະຫານສ່ວນໃຫຍ່ຕໍ່ຜູ້ນຳພາປະເທດ ທີ່ຢືນຍົງຢູ່ຍາວນານກວ່າໝູ່ ໃນພາກພື້ນອາຊີຕາເວັນສຽງໃຕ້ ສະໄໝຫຼັງສົງຄາມ.

ກອງທັບ ໄດ້ປະເຊີນໜ້າກັບສອງໜ້າທີ່ໃຫຍ່ ຕະຫຼອດລະຍະນັບແຕ່ປີ 1962 ມາ ອັນໜຶ່ງ ແມ່ນການກໍ່ສ້າງກົດລະບຽບທາງການເມືອງຂຶ້ນໃໝ່ ແລະ ຄືດັ່ງທີ່ໄດ້ບອກໄວ້ເທິງນີ້ ພະນັກງານກອງທັບ ທັງທີ່ຍັງປະຈຳການ ແລະ ອອກກິນບຳນານ ຕ່າງກໍໄດ້

ຮັບຖານະຕຳແໜ່ງຂັ້ນນຳພາ ຢູ່ໃນສະຖາບັນແຫ່ງສຳຄັນໆ ທາງການເມືອງ ການບໍລິ ຫານ ການເສດຖະກິດ ແລະ ການສຶກສາ ໃນທົ່ວປະເທດ. ອີກໜ້າທີ່ໜຶ່ງແມ່ນການ ເຮັດ ເສິກແບບຍືດເຍື້ອ ຕໍ່ສູ້ກັບກອງກຳລັງ ທີ່ລຸກຮືຂຶ້ນຂອງຊົນຊາດ ແລະ ນັກກອມມູນິດ ເຊິ່ງ ສູ້ຮົບກັນມານັບແຕ່ 1948. ດ້ວຍການປົກຄອງເພື່ອຜົນປະໂຫຍດຕົນເອງ ຂອງພັກ ໃນປີ 1981 ກອງທັບຈຶ່ງໄດ້ປະເຊີນໜ້າກັບກຸ່ມ ຕໍ່ຕ້ານປະກອບອາວຸດຂະໜາດໃຫຍ່ ຮອດສີ່ກຸ່ມ ແລະ ຂະໜາດນ້ອຍອີກ 11 ກຸ່ມ. ຍຸດທະສາດຂອງພັກຕໍ່ພວກເຂົາແມ່ນ ຍຸດທະສາດໜຶ່ງ ທີ່ປະສົມປະສານທັງການກົດດັນດ້ວຍກຳລັງອາວຸດຢ່າງຕໍ່ເນື່ອງ ດ້ານ ການເມືອງ ແລະ ວຽກງານດ້ານຈັດຕັ້ງ ເພື່ອບຸກເຈາະໃຫ້ເຂົ້າເຖິງຖານທີ່ໝັ້ນ ຂອງພວກ ເຂົາ. ມາເຖິງກາງຊຸມປີ 1980 ກຸ່ມຕ່າງໆເຫຼົ່ານີ້ຫຼາຍກຸ່ມ ໃນນັ້ນຮວມທັງກອງທັບປົດ ປ່ອຍແຫ່ງຊາດກະຫຣ່ຽງ ກັບພັກກອມມູນິດພະມ້າ (BCP) ໄດ້ຖືກທົດສອບ ຢ່າງໜັກ ໜ່ວງ. ກອງທັບປົດປ່ອຍແຫ່ງຊາດກະຫຣ່ຽງ (KNLA) ເຊິ່ງເປັນກອງກຳລັງປະກອບ ອາວຸດຂອງສະຫະພາບກະຫຣ່ຽງ ຍັງຄົງຢືນຢູ່ຕໍ່ສູ້ໄດ້ຍາວນານ ເພາະວ່າ ພວກເຂົາ ຄວບຄຸມພື້ນທີ່ໆເປັນປະຕູລັບ ຂົນສົ່ງຢາເສບຕິດລະຫວ່າງພະມ້າ ກັບປະເທດໄທ. ຢູ່ ບ່ອນນີ້ ກອງທັບໄດ້ເກັບພາສີ ສິນຄ້າຂາອອກ ແລະ ຂາເຂົ້າພະມ້າ ຮອດສິບເປີເຊັນ. ຢ່າງໃດກໍຕາມ ມາເຖິງປີ 1985 ຍ້ອນການຮ່ວມມື ທີ່ດີຂຶ້ນກັບລັດຖະບານໄທ ແລະ ການຄວບຄຸມທີ່ເຂັ້ມງວດຂຶ້ນ ໂດຍກອງທັບທາງດ້ານຊາຍແດນພະມ້າ ພວກກອງທັບ ປົດປ່ອຍກະຫຣ່ຽງ ໄດ້ສູນເສຍແຫຼ່ງຊັບພະຍາກອນເກືອບທັງໝົດໄປ ຈຶ່ງບໍ່ສາມາດ ຊື້ ອາວຸດ ແລະ ລູກປືນ ຮວມທັງຢາປົວພະຍາດ ແລະ ອາຫານ ຈາກປະເທດໄທໄດ້.

ທາງພາກເໜືອຂອງປະເທດ ຍ້ອນທ່າທີທີ່ປ່ຽນແປງ ຂອງພັກກອມມູນິດຈີນ ຕໍ່ພວກກອມມູນິດ ທີ່ຕໍ່ຕ້ານລັດຖະບານ ໃນບັນດາປະເທດອາຊີຕາເວັນອອກສຽງໃຕ້ ພັກກອມມູນິດພະມ້າໄດ້ອ່ອນແອລົງ. ພັກກອມມູນິດພະມ້າ ກໍຄືກັນກັບກອງກຳລັງຕໍ່ ສູ້ຊົນເຜົ່າ ທີ່ເປັນພັນທະມິດຂອງຕົນ ຄື ກອງທັບກູ້ຊາດກະຊິ່ນ (Kachin-KIA) ໄດ້ຮັບ ການສະໜັບສະໜຸນຈາກປະເທດຈີນ ໃນຍຸກປະຕິວັດວັດທະນະທຳ ເມື່ອຊຸມປີ 1960 ໂດຍປະເທດຈີນໄດ້ຂະໜານນາມ ລັດຖະບານ ເນ ວິນ ວ່າເປັນກຳລັງປະຕິການ ຄ້າຍຄື ກັບລັດຖະບານຈີນຄະນະຊາດ ຂອງ ຈຽງໄຄເຊັກ ໃນເມື່ອກ່ອນ. ຢ່າງໃດກໍຕາມເນື່ອງ

ຈາກຄວາມສຳພັນຂອງຈີນກັບພະມ້າ ຄ່ອຍໆດີຂຶ້ນ ນັບແຕ່ຊຸມປີ 1970 ມາ ການສະໜັບສະໜຸນຈາກພາຍນອກ ໃຫ້ແກ່ ພັກກອມມູນິດພະມ້າ ກັບກອງກຳລັງ ກູ້ຊາດກະຊິ່ນ ໄດ້ຫຼຸດໜ້ອຍລົງ ຢ່າງເຫັນໄດ້ຄັກ ແລະ ລັດຖະບານ ກໍສາມາດກັບມາຄອບຄຸມດິນແດນ ພາກເໜືອໄວ້ໄດ້ເກືອບໝົດ. ມາເຖິງກາງຊຸມປີ 1980 ຈີນກໍໄດ້ຫັນກັບມາຊ່ອຍເຫຼືອ ທາງເສດຖະກິດ ແກ່ລັດຖະບານຢ່າງກຸ້ງອີກ ຄືກັນກັບໃນຊຸມປີ 1950 ແລະ ຮ່ວມມືກັນ ໃນການປັກປັນເຂດແດນອັນຍາວໂຍດ ລະຫວ່າງຈີນ ກັບພະມ້າ ເຊິ່ງໄດ້ຕົກລົງກັນໄວ້ ເປັນຄັ້ງທຳອິດໃນປີ 1960.

ພາຍຫຼັງໄດ້ເອກະລາດປະມານໜຶ່ງປີ ນະໂຍບາຍຕ່າງປະເທດຂອງພະມ້າ ມີ ຈຸດສຳຄັນຢູ່ບ່ອນ ການວາງໂຕເປັນກາງຢ່າງໜຽວແໜ້ນ. ລັດຖະບານບໍ່ເຄີຍເຂົ້າຮ່ວມ ເປັນພັນທະມິດທາງການທະຫານໃດໆເລີຍ, ຮັບເອົາການຊ່ອຍເຫຼືອ ກໍຕໍ່ເມື່ອເຫັນວ່າ ບໍ່ມີຂໍ້ຜູກມັດເທົ່ານັ້ນ ແລະ ລັດຖະບານກໍພ້ອມປະຖິ້ມການຊ່ອຍເຫຼືອນັ້ນ, ດັ່ງທີ່ເກີດ ຂຶ້ນໃນປີ1963, ຖ້າຫາກປາກົດວ່າ ມັນຈະດຶງເອົາພະມ້າເຂົ້າໄປຜູກພັນກັບນາໆຊາດ. ນອກຈາກກຸ່ມກອມມູນິດ ແລະ ກຸ່ມຊົນຊາດຊົນເຜົ່າຕໍ່ຕ້ານ ທາງສ່ງທາງການເມືອງ ທຸກພາກສ່ວນເຫັນດີເຫັນງາມນຳນະໂຍບາຍນີ້. ຖະແຫຼງການສະບັບທີໜຶ່ງຂອງສະພາ ປະຕິວັດ ຫຼັງຈາກຍຶດອຳນາດໃນປີ 1962 ແມ່ນເພື່ອຢັ້ງຢືນຄຳໝັ້ນສັນຍາ ເລື່ອງການ ບໍ່ເຂົ້າຮ່ວມກຸ່ມ. ເມື່ອເສືອດສາຍຕາເບິ່ງແຜນທີ່ ແລະ ທົບທວນແບບລວກໆເຖິງ ທິດ ທາງນະໂຍບາຍການເມືອງຕ່າງປະເທດຂອງພະມ້າ ຕໍ່ປະເທດໃກ້ຄຽງທັ້ງຫຼາຍ ກໍເຫັນ ວ່ານະໂຍບາຍດັ່ງກ່າວ ມີເຫດຜົນເປັນຢ່າງດີ.

ປະເທດພະມ້າຕັ້ງຢູ່ຈຸດໜຶ່ງຂອງແຜນທີ່ທະວີບອາຊີ ບ່ອນທີ່ແຜ່ນດິນອາຊີຕາ ເວັນອອກ ທາງທິດໃຕ້ ແລະ ຕາເວັນອອກສ່ຽງໃຕ້ ຈຸກັນ, ມີຊາຍແດນຕໍ່ກັບປະເທດມະ ຫາອຳນາດໃຫຍ່ຫຼາຍປະເທດ ເຊັ່ນ ອິນເດຍ ແລະ ຈີນ ເຊິ່ງເຄີຍເປັນເສິກກັນມາແລ້ວ ລະຫວ່າງຊຸມປີ 1960 ແລະ ຕໍ່ມາໄດ້ພັດທະນາຄວາມສຳພັນອັນດີກັບ ອະພິມະຫາ ອຳນາດທີ່ເປັນສັດຕູກັນຄື ໂຊວຽດ ແລະ ສະຫະລັດອາເມລິກາ. ຖ້າຫາກພະມ້າຕ້ອງ ເລືອກເປັນພັນທະມິດກັບປະເທດໃກ້ຄຽງທີ່ຍິ່ງໃຫຍ່ປະເທດໃດປະເທດໜຶ່ງ ຫຼືວ່າ ກັບ

ອະພິມະຫາອຳນາດໃດໜຶ່ງໃນໂລກແລ້ວ ຜົນທີ່ໄດ້ຮັບ ຢ່າງໜ້ອຍສຸດ ກໍຄືງແມ່ນການ ສ້າງສັດຕູ ຜູ້ມີເຫງົ້າພະລັງສູງ ຕາມຊາຍແດນດ້ານໃດດ້ານໜຶ່ງ. ດິນແດນພະມ້າຕັ້ງ ຢູ່ຕາມບໍລິເວນສຳຄັນຂອງ "ສາຍເກາະຜິດ" ຂອງການເມືອງລະຫວ່າງຊາດຂອງປະ ເທດອາຊຽນ ແລະ ໄດ້ຫາວິທີການຫຼີກເວັ້ນຈາກການ ຖືກດຶງເຂົ້າໄປສູ່ວົງການສົງຄາມ ລະຫວ່າງທະວີບ ນັບແຕ່ປີ 1945 ມາ ໂດຍປະກາດຈະແຈ້ງວ່າ ພະມ້າຈະບໍ່ຊ່ວຍລັດ ໃດໆໃນການຫາທາງຕໍ່ຕ້ານ ກັບປະເທດໃກ້ຄຽງກັບພະມ້າ ປະເທດໃດປະເທດໜຶ່ງ. ຄວາມເຊື່ອເລິກໆຂອງລັດຖະບານພະມ້າ ຕໍ່ປະສິດທິພາບ ຂອງການບໍ່ເຂົ້າຮ່ວມກຸ່ມ ໄດ້ສະແດງອອກຈະແຈ້ງທີ່ສຸດ ເມື່ອພະມ້າ ຖອນຕົວອອກຈາກ ຂະບວນການບໍ່ຮ່ວມ ກຸ່ມ ໃນກອງປະຊຸມສຸດຍອດທີ່ ກຸງຮາວານາ ຍ້ອນວ່າສະມາຊິກຂອງຂະບວນການນັ້ນ ຫຼາຍປະເທດ ເຊັ່ນ ຄິວບາ ແລະ ຟິລິບປິນ ເປັນປະເທດ ທີ່ມີພັນທະມິດຢ່າງເປີດ ແປນໂພດ. ໃນທຳນອງຄ້າຍຄືກັນ ພະມ້າ ບໍ່ເຄີຍເຂົ້າຮ່ວມກັບກຸ່ມອາຊຽນ*. ເຖິງແມ່ນ ວ່າ ຍັງຄົງຢູ່ເປັນສະມາຊິກ ຂອງອົງການສະຫະປະຊາຊາດຢູ່ ແລະ ເປັນສະມາຊິກ ຂອງອົງກອນຕ່າງໆ ໃນພາກພື້ນນີ້ ຕາບໃດທີ່ອົງກອນເຫຼົ່ານີ້ ຍັງຮັກສາຄຸນສົມບັດ ແບບສາກົນຂອງຕົນຢູ່.

ຍ້ອນການບໍ່ເຂົ້າກ່ຽວຂ້ອງກັບບັນຫາຂັດແຍ່ງສຳຄັນໆ ລະຫວ່າງປະເທດຂອງ ອາຊີມາຫຼາຍປີ ໂດຍສະເພາະລຸນຫຼັງປີ 1962 ມາ, ຍ້ອນນະໂຍບາຍຂອງລັດຖະບານ ທີ່ພະຍາຍາມຫຼີກເວັ້ນການຕິດຕໍ່ໃກ້ຊິດ ກັບອົງການໜ່ວຍງານທາງເສດຖະກິດ ການ ສຶກສາ ແລະ ວັດທະນະທຳສາກົນ ໃນລະຫວ່າງຊຸມປີ 1960 ແລະ ຊຸມປີ 1970 ປະເທດພະມ້າ ຈຶ່ງມັກຖືກຕຳນິຕິຕຽນ ວ່າເປັນຊາດນິຍົມຜູ້ເຖົ້າຖອຍ ຖ້າບໍ່ແມ່ນພະ ຍາດຢ້ານຄົນຕ່າງຊາດ. ນັບເປັນເວລາຫຼາຍປີ ທີ່ການຂໍວີຊາຢູ່ໃນປະເທດຫຼາຍກວ່າ 24 ຊົ່ວໂມງ ເປັນເລື່ອງເຫຼືອວິໄສ ແລະ ແມ່ນແຕ່ມາຮອດກາງຊຸມປີ 1980 ການ ພັກຢູ່ໃນປະເທດ ເກີນກວ່າເຈັດວັນ ກໍເປັນເລື່ອງຫຍຸ້ງຍາກ. ບໍລິສັດຕ່າງປະເທດລະ ດັບນາໆຊາດ ບໍ່ສາມາດເຂົ້າໄປລົງທຶນໃນປະເທດໄດ້ ແລະ ກໍເປັນປະເທດໜຶ່ງ ທີ່ຫາ

* ປະເທດພະມ້າ ມີຊື່ຢ່າງເປັນທາງການວ່າ ສະຫະພາບມຽນມາ ເຂົ້າເປັນສະມາຊິກອາຊຽນ ໃນປີ 1997, ໃນປີ 2008 ປະເທດປ່ຽນຊື່ເປັນ ສາທາລະນະລັດ ສະຫະພາບ ມຽນມາ

ยากในโลก ที่เพิ่นบ่สามาดหาซื้ น้ำเปับซิ กับ โดดาโดลากินได้, เกือบบ่เห้น นักสึกสาพะม้าอู่ในมะหาวิทะยาไล ในต่างปะเทด และ นักค้นคว้าพะม้า ส่วนใหย่กำเกือบว่า บ่เข้าร่วมกอางปะชุมสากิน. เป้นอันจะแจ้งว่า การแยกปู่งอโดดดู่งอของตินเอง ของพะม้า ได้สร้างความหยุ้งยากให้แก่การรักสาละบิบการสึกสาแห่งชาดไว้ ซึ่ เการนำเข้าเตักโนโลซิ ซึ่ สินค้าบริโพก ที่ปะเทดอื่นๆในอาซิตาเวันออกสูงใต้ สามาดหามาซื้มใช้ได้ นับแต่เป้นเอกะลาด มาได้สี่สิบปีแล้อ.

ซายคินที่อู่ในพะม้า อาดโต้ถูงว่า จำเป้นต้องเป้นย่างนั้น เพื่อแลกกับความได้ปูบบางย่าง. ขะนะที่ชาวพะม้าส่วนใหย่ บ่ได้มิโอกาดงามๆ ซื้หาเข้าของเคื่องบริโพกต่างๆ ที่มิอู่แห่งอื่น ซึ่ ได้เบิ่งพาบพะยินม่วนๆจากรอนลิอูด แต่ว่า พวกเขาบ่ได้มิความกังวินนำที่ดินของติน อ่าจะถืกเจ้าหนี้ ซึ่ เจ้าที่ดินยึดไป, ในขะนะที่พวกเขาต้องสิ่งเข้าให้ลัดถะบาน ตามโควต้าในลาคาต่ำๆ พวกเขากำได้รับฝุ่นในลาคาที่ต่ำกว่าลาคาที่ชาวนาไท ซึ่ มาเลเขุ ต้องจ่ายรอดสี่เท่า. ในขะนะที่พวกเขา บ่อาดจะคึดหาหินทางสิ่งลูกเต้าไปรุ่นต่างปะเทด ซึ่ ว่า ไปพักผ่อนในต่างปะเทด แต่ว่า พวกเขาบ่ได้มิความกังวินว่า นาของพวกเขากำลังถืกรอบเข้าเป้นนาโธม และพวกพะนักงาน กำลังมาบอกว่า พวกเขาควนจะไปอู่ใส ซึ่ เอลาใดควนเธ็ดอุงก. ความสัดทา ต่สะถาบันพะพุดทะสาสะหนา ยังคึงจะเลินรุ่งเรืองๆ และคอบคัวทังซายกำยังเดินทางไปเอิาบุนอู่วัด และ ลิงตะซาดนัดในละดูแล้ว คืกันกับบันพะบูลุดของพวกเขาได้เธ็ดมา. ลัดถะบานจัดหายาปิ่นป้อมาตอบสะหนอง และ สร้างโธงหมำ ซายกว่าที่เคียมิในสะไหมอู่พายใต้การปิกคองของ อังกิด, เถิงแม่นว่า บ่มิความจำเป้นต้องให้ได้มาตะถานดุงอ กับของตาเวันติกาในปัดจุบัน แต่ลัดถะบาน กำทำการทิดลอง และ นำใช้ยาพื้นเมืองไปคอบคู่กัน.

ສຳລັບປະຊາຊົນໃນຕົວເມືອງ ກໍຄືກັນ ຄວາມໄດ້ທ່າດີກວ່າ ຂອງລະບົບການເມືອງ ນັບແຕ່ປີ 1962 ມາ ກໍບໍ່ມີໃຫ້ເຫັນຢູ່ໃນປະເພດສິນຄ້າອຸປະໂພກ ເຊັ່ນ ເຄື່ອງເຮັດອາກາດເຢັນ ແລະ ລົດໂອໂຕ ຍີ່ຫໍ້ BMW ປະຊາຊົນໃນຢ່າງກຸ້ງ ເກືອບທັງໝົດຍັງຄົງໄປເຮັດວຽກແຕ່ລະມື້ ດ້ວຍລົດໂດຍສານໃຫຍ່ ເຊິ່ງນຳມາໃຊ້ເປັນລົດຂົນສົ່ງຕັ້ງແຕ່ຊຸມປີ 1940 ແລະ ຊຸມປີ 1950 ແມ່ນແຕ່ນັກຕຳນິວິຈານລັດຖະບານກໍມັກຈະເວົ້າວ່າ ໃນຕອນກາງຄືນ ພວກເຂົາສາມາດນອນຫຼັບຢູ່ເທິງຕຽງໄດ້ຢ່າງເປັນສຸກແລະປອດໄພ. ໃນທ້າຍຊຸມປີ 1940 ແລະ ຕົ້ນຊຸມປີ 1950 ພະມ້າ ເປັນປະເທດໜຶ່ງທີ່ເຈັບສາຫັດເນື່ອງຈາກສົງຄາມກາງເມືອງ ແລະ ມາຮອດທ້າຍຊຸມປີ 1950 ແລະ ຕົ້ນຊຸມປີ 1960 ສ່ວນຫຼວງຫຼາຍຂອງປະເທດ ຍັງຄົງຖືກປົກຄອງ ດ້ວຍຜູ້ຄົນແບບຕ່າງໆ ທີ່ສາມາດສັ່ງການ ຊື້ຄວາມຈົງຮັກພັກດີຂອງພວກມືປືນຮັບຈ້າງໄດ້. ມາເຖິງປີ 1980 ບໍ່ແມ່ນວ່າ ປະເທດພະມ້າທັງໝົດ ຢູ່ໃນຄວາມສະຫງົບສຸກດອກ ແຕ່ໃນຂະນະນັ້ນ ປະຊາຊົນສ່ວນໃຫຍ່ຖືກປົກຄອງ ດ້ວຍປາກກາ ຫຼາຍກວ່າປາກປືນ. ຕາໜ່າງບໍລິຫານ ແລະ ໂຄງສ້າງທາງການເມືອງ ຖືກນຳມາບັງຄັບໃຊ້ ໃນທົ່ວປະເທດ ອັນໄດ້ເຮັດໃຫ້ບຸກຄົນເອກະຊົນມີບົດບາດ ແລະຖ້າຫາກວ່າ ສະຖາບັນເຫຼົ່ານີ້ມີທ່າທີທີ່ສະກັດກັ້ນການປະດິດສ້າງ ພວກເຂົາກໍຍັງສັນຫາຄວາມໝັ້ນຄົງ ແລະ ການຄາດຫວັງໄດ້ນຳຄວາມແນ່ນອນ ຂອງກົດລະບຽບທາງການເມືອງ ເບິ່ງຄືວ່າຈະແຈ້ງຫຼາຍ ຈົນວ່າແມ່ນແຕ່ ນັກວິຈານຜູ້ປາກກ້າຫຼາຍຄົນ ຊຶ່ງໄດ້ເຄີຍເປັນຝ່າຍຕໍ່ຕ້ານ ເຄື່ອນໄຫວໃຕ້ດິນ ຫຼືໄປຢູ່ຕ່າງປະເທດມາແລ້ວ ເມື່ອຊຸມປີ ລຸນຫຼັງ 1962 ໄດ້ກັບຄືນມາຢ່າງກຸ້ງ ໃນປີ 1980, ໄດ້ຮັບໜຶ່ງໃຊ ເປັນຮາງວັນ ສຳລັບການປະຕິບັດໜ້າທີ່ໃນເມື່ອກ່ອນຕໍ່ປະເທດຊາດ ແລະ ໄດ້ຮັບເງິນບຳເນັດຈາກລັດ.

ເມື່ອປຽບກັບປະເທດອື່ນໆ ໃນອາຊີຕາເວັນອອກສຽງໃຕ້ ປະຫວັດສາດຂອງພະມ້າ ນັບແຕ່ໄດ້ຮັບເອກະລາດມາ ເບິ່ງຄືວ່າ ແຕກຕ່າງກັບປະເທດອື່ນໆ ແຕ່ເບິ່ງໄປຫຼາຍທາງກໍເຫັນວ່າ ຄືກັນກັບສັງຄົມໃນປະເທດອື່ນໆ ຂອງອາຊີຕາເວັນອອກສຽງໃຕ້ ເຊັ່ນ ຫວຽດນາມ ຫຼື ອິນໂດເນເຊຍ ຫຼາຍກວ່າ. ຄວາມສະຫງົບສຸກທາງການເມືອງ

ໄດ້ມາດ້ວຍລາຄາສູງຫຼາຍ ເມື່ອທຽບໃສ່ກັບຄ່ານິຍົມອື່ນໆຂອງຄົນ. ການເຕີບໃຫຍ່ທາງ
ເສດຖະກິດ ຈຳຕ້ອງລໍຄອຍໄປກ່ອນ ຈົນກວ່າຄວາມສະຫງົບທາງການເມືອງຈະເກີດ
ຂຶ້ນ. ຜູ້ນຳທາງການເມືອງ ອາດໄດ້ເຮັດຜິດພາດມາຫຼາຍ. ແຜນການທີ່ສ້າງຂຶ້ນດ້ວຍ
ຄວາມຕັ້ງໃຈດີໆ ຖືກປະຖິ້ມໄປເມື່ອພວກຜູ້ນຳ ຕ້ອງມາປະເຊີນກັບຄວາມເປັນຈິງຂອງ
ມະນຸດ ເຊິ່ງໃນຂັ້ນຕົ້ນບໍ່ໄດ້ຮັບຮູ້ກັນ. ລັດຖະບານຈຳຕ້ອງໄດ້ ອອກແຮງຫຼາຍເພື່ອຊັ່ງ
ຊາການແຂ່ງຂັນ ແລະ ຄວາມຮຽກຮ້ອງອັນບໍ່ສອດຄ່ອງກັນ ເປັນຊຸດໆ ແລ້ວລັດຖະບານ
ກໍບັນລຸເຖິງສະເຖຍລະພາບ ດ້ວຍການແລກປ່ຽນ ກັບການພັດທະນາທາງເສດຖະກິດ.

37

ມເລເຊຍ, ສິງກະໂປ ແລະ ບຣູນາຍ

ມາເລເຊຍ

ເມື່ອອັງກິດກັບຄືນມາປະເທດມາເລເຊຍອີກ ໃນເດືອນກັນຍາ ປີ 1945 ປະຊາຊົນຊາວພື້ນເມືອງບາງຄົນຄຶດຄາດຫວັງວ່າ ຈະມີການປົດປ່ອຍອອກຈາກລະບອບອານານິຄົມຕັ້ງແຕ່ຫົວທີ ຂະນະທີ່ຜູ້ອື່ນໆຄຶດວ່າ ຄວາມມຸ່ງຫວັງແບບນັ້ນຍັງບໍ່ທັນສຸກງອມ. ດ້ວຍວ່າ ການເຂົ້າຍຶດຄອງໂດຍຍີ່ປຸ່ນນັ້ນ ໄດ້ຊ່ອຍທຸດຜ່ອນຄວາມເຄັ່ງຕຶງທາງສັງຄົມ ແລະ ທາງການເມືອງທີ່ມີມາແຕ່ຊຸມປີ 1930 ລົງຫຼາຍ. ເຖິງແມ່ນວ່າມັນໄດ້ທຳລາຍສາຍຜູກພັນທາງດ້ານຈິດຕະສາດຫຼາຍແນວ ອັນອຳນວຍໃຫ້ຊາດຕາເວັນຕົກຄອບງຳຢູ່ຕໍ່ໄປ. ໃນຄວາມຄຶດເຫັນຂອງຊາວມາເລ ເຖິງແມ່ນວ່າ ພວກທະຫານຍີ່ປຸ່ນເກືອບບໍ່ມີລັກສະນະເປັນບິດາປົກປ້ອງ ແຕ່ກໍຜ່ອນຜັນແບບໃດແບບໜຶ່ງ ໂດຍຕິດຕາມນຳເບິ່ງ ດັ່ງທີ່ພວກອັງກິດ ເຄີຍມີນະໂຍບາຍມຸ່ງເນັ້ນໃສ່ທຸດຜ່ອນການຮົບກວນສັງຄົມຊາວພື້ນເມືອງລົງທີ່ສຸດ ເພື່ອຜົນປະໂຫຍດຂອງການຂຸດຄົ້ນດ້ານເສດຖະກິດ. ໃນທຳນອງດຽວກັນ, ໃນຂັ້ນຕົ້ນ ຊາວຈີນກໍເຫັນວ່າທະຫານຍີ່ປຸ່ນຜູ້ບຸກຮຸກ ເປັນຄົນໂຫດຮ້າຍ ຍ້ອນຍັງຈົດຈຳສະໄໝຢູ່ນານຢາງ ໃນເລື່ອງການໃຫ້ຄວາມຊ່ອຍເຫຼືອແກ່ຈີນເມື່ອເກີດສົງຄາມຈີນ-ຍີ່ປຸ່ນ ຈັ່ງຊັ້ນ ພວກເຂົາຈຶ່ງບໍ່ໜ້າໄວ້ໃຈ ທັງເປັນຜູ້ມັກຂີ້ມຂູ່. ໃນທາງປີ້ນກັນ ຈີນກໍໄດ້ໃຫ້ການສະໜັບສະໜຸນທັງໝົດ ແກ່ພວກກອງໂຈນທີ່ຕໍ່ຕ້ານຍີ່ປຸ່ນ ຈັດຕັ້ງຂຶ້ນໂດຍຜ່ານກອງທັບປະຊາຊົນມາເລ ທີ່ຕໍ່ຕ້ານຍີ່ປຸ່ນ (Malayan Peoples Anti-Japanese Army - MPAJA) ເຊິ່ງແກນນຳກໍແມ່ນ ພັກກອມມູນິດມາລາຢູ ກ່ອນຍຸກສົງຄາມນັ້ນເອງ. ຊາວອິນເດຍບາງຄົນ ກໍຖືກດຶງເຂົ້າໄປຮ່ວມ ໃນກອງທັບແຫ່ງ

ຊາດອິນເດຍ (Indian National army - INA) ທີ່ພວມຕື່ນຕົວ ໃນຂະນະທີ່ ພວກອື່ນໆອີກຫຼາຍພັນ ຖືກສົ່ງໄປເຮັດວຽກ ແລະ ລົ້ມຕາຍລົງ ຍ້ອນການກໍ່ສ້າງ ທາງລົດໄຟໄປພະມ້າ. ໃນລະຍະສັ້ນໆນຶ່ງ ຊາວມາເລຈຳນວນຫຼາຍ ໄດ້ເຂົ້າໄປເຮັດ ວຽກໃນຕຳແໜ່ງການປົກຄອງພົນລະເຮືອນ ເຊິ່ງແຕ່ກ່ອນຊາວມາເລ ບໍ່ເຄີຍໄດ້ຮັບອະ ນຸຍາດໃຫ້ເຂົ້າໃກ້ເລີຍ ໃນສະໄໝອັງກິດປົກຄອງ. ຜູ້ທີ່ມາຈາກຄຸ້ມບ້ານຕ່າງໆທີ່ຮ່ວມ ມືກັບຜູ້ປົກຄອງໃໝ່ ຮູ້ສຶກວ່າຕົນເອງກາຍເປັນຝ່າຍປໍລະປັກຕໍ່ກອງທັບໄປໂດຍປະລິ ຍາຍ ແລະ ການຍອມຈຳນົນຂອງຍີ່ປຸ່ນ ໃນເວລານັ້ນ ກໍໄດ້ຊ່ວຍໃຫ້ແກ້ໄຂບັນຫາໃຫ້ ແກ່ທັງສອງຝ່າຍ. ຕະຫຼອດເວລາແຫ່ງການຍຶດຄອງຂອງຍີ່ປຸ່ນ ເກືອບທັງໝົດ ສິ່ງທີ່ໄດ້ ປະສົບພົບພໍ້ຢູ່ທົ່ວໄປກໍຄື ຄວາມທຸກຍາກ ຄວາມອຶດຢາກ ຄວາມເຈັບໄຂ້ ແລະ ຄວາມ ຮູ້ສຶກສູນເສຍຄຸນນະທຳ ທີ່ເກີດຂຶ້ນພ້ອມກັບຄວາມຕົກຕ່ຳ ຂອງມາດຕະຖານຄວາມ ເຊື່ອໝັ້ນທາງສັງຄົມ ແລະ ການສໍ້ໂກງ ທີ່ຫຼາຍຂຶ້ນ.

ການໄດ້ຮັບເອກະລາດເປັນຂັ້ນໆ ຂອງມາລາຢາ (Malarya) ໃນລະຍະທົດ ສະວັດຕໍ່ຈາກການຫວນກັບມາຂອງອັງກິດ ເປັນຜົນຜະລິດຂອງຄວາມເຂົ້າໃຈໃໝ່ ທີ່ ໄດ້ມາຢ່າງລຳບາກ ລະຫວ່າງບັນດາຜູ້ນຳຂອງຊຸມຊົນຕ່າງໆໃນມາລາຢາ ທີ່ຍອມຮັບ ກັນໃນເວລານັ້ນ ເຖິງແມ່ນວ່າລາງເທື່ອ ຈະຖືກເອີ້ນຢ່າງເສຍຫາຍວ່າ "ບໍ່ແມ່ນການປະ ຕິວັດ". ທາດແທ້ຂອງສູດສົມບູນ ມາຮອດຕົ້ນຊຸມປີ 1950 ແມ່ນການໃຫ້ຄວາມສຳຄັນ ບໍ່ພຽງແຕ່ດ້ານຮູບແບບທີ່ລັດໃໝ່ຈະຕ້ອງຍຶດຖືເອົາເທົ່ານັ້ນ ແຕ່ຍັງຮວມເອົາລັກສະນະ ທາງການເມືອງ (ແລະອັນອື່ນໆອີກ) ໃນລະຫວ່າງທົດສະວັດທຳອິດ ທີ່ໄດ້ເອກະລາດ ມາ. ມັນເປັນສູດສົມບູນ ທີ່ຕົກລົງກັນໃນລະຫວ່າງສອງກຸ່ມ ຄື ພວກທີ່ມີການສຶກສາ ແບບຕາເວັນຕົກ ເຊິ່ງສ່ວນຫຼາຍ ປະກອບດ້ວຍຂ້າລາຊະການ ກັບພະນັກງານພົນລະ ເຮືອນ ທີ່ມາຈາກຊົນຊັ້ນສູງເກົ່າ ກັບພວກບໍລິວານ ແລະ ອີກກຸ່ມໜຶ່ງ ຊາວຈີນທີ່ມີການ ສຶກສາແບບຕາເວັນຕົກກຸ່ມນ້ອຍໆ ເຊິ່ງສ່ວນຫຼາຍມາຈາກພວກນັກທຸລະກິດ ທີ່ເປັນ ຄົນມາເລ ໂດຍກຳເນີດ ແລະ ຮັ່ງມີ. ຕົ້ນຕໍແລ້ວ ທຸກຄົນຕ່າງກໍເຂົ້າໃຈວ່າ ສຳລັບຜົນ ປະໂຫຍດຂອງກຸ່ມຜູ້ນຳທັງສອງຝ່າຍ ແລະ ຂອງສັງຄົມທັງມວນ ການກຳນົດໃຫ້ຊາວ ມາເລມີສິດໄດ້ຮັບອຳນາດໜ້າທີ່ທາງການເມືອງ ແລະ ການປົກຄອງ ໂດຍຕັ້ງຂໍ້ສົມມຸດ

ເອົາການອ້າງສິດເປັນ “ລູກຂອງແຜ່ນດິນ” ຂອງພວກເຂົາຄວນຖືກຍອມຮັບ ໂດຍປາ ສະຈາກການສ່ຽງ ຢ່າງໜ້ອຍກໍໃນປັດຈຸບັນນີ້ ເພື່ອເປັນການຕອບແທນໃນຖານະທີ່ບໍ່ ເຂົ້າໄປແຊກແຊງໃນການຄວບຄຸມເສດຖະກິດຂອງຊາວຈີນ. ດ້ວຍຄວາມເຂົ້າໃຈແບບ ນີ້ ເປັນຈຸດເລີ່ມຕົ້ນ ຂະບວນການຜ່ອນຜັນດ້ານຜົນປະໂຫຍດ ກໍຄວນຕ້ອງດຳເນີນ ໃຫ້ເປັນໜາກຜົນໂດຍຈຸດມຸ່ງໝາຍອັນເປີດເຜີຍນັ້ນ ສຳລັບຊາວນາແລ້ວ ມັນເປັນ ມາດຕະການເລັ່ງໃສ່ປັບປຸງຄວາມດຸ່ນດ່ຽງດ້ານອຳນາດທາງເສດຖະກິດ ແຕ່ໃນນັ້ນ ສ່ວນເລິກແລ້ວ ສຳລັບຊາວຈີນ ມັນໝາຍເຖິງການອະນຸຍາດ ໃຫ້ຄົນຈີນມີສິດໃນການ ເລືອກຕັ້ງຜູ້ແທນເຂົ້າສະພາ ແລະ ໝາຍເຖິງອຳນາດທາງການເມືອງ ທີ່ເກີດມາຈາກ ການມີສ່ວນຮ່ວມໃນການເລືອກຕັ້ງນີ້. ບັນຫາທີ່ເກີດຂຶ້ນໃນຕໍ່ມາ ສຸມຢູ່ໃນສອງຈຸດ ໃຫຍ່ຄື ຂອບເຂດທີ່ສອງກຸ່ມຜູ້ນຳ ຍັງຄົງໄດ້ຮັບການຍອມຮັບສືບຕໍ່ໄປໃນຊຸມຊົນ ໂດຍ ທີ່ພວກຜູ້ນຳເຫຼົ່ານັ້ນສັນຍາວ່າ ຈະເປັນປາກສຽງແທນພວກເຂົາ ແລະ ຄວາມຈິງທີ່ວ່າ ການຕໍ່ຮອງຝ່າຍດຽວ (ການຕື່ມອຳນາດທາງການເມືອງໃຫ້ຊາວຈີນ) ໄດ້ດຳເນີນໄປ ຕາມເວລາທີ່ຜ່ານໄປ ເປັນສ່ວນໃຫຍ່ ໃນຂະນະທີ່ອີກຝ່າຍໜຶ່ງ (ການຕື່ມອຳນາດທາງ ເສດຖະກິດໃຫ້ຊາວມາເລ) ບໍ່ໄດ້ດຳເນີນການໃດໆ.

ໃນລະຫວ່າງເກີດສົງຄາມ ຂະນະທີ່ຊາວມາເລ ແລະ ຊາວຈີນ ກຳລັງກ້າວ ເຂົ້າສູ່ຄວາມຮູ້ສຶກປິຕິຍິນດີໃໝ່ກັບຄວາມສະຫຼັບສັບຊ້ອນແຫ່ງສາຍສຳພັນ ອັນຕໍ່ເນື່ອງ ຢູ່ນັ້ນ ພວກອັງກິດໄດ້ວາງແຜນການປົກຄອງລັດມາລາຢູສະບັບປັບປຸງໃໝ່ຂຶ້ນ. ຄວາມ ຕັ້ງໃຈຂອງອັງກິດ ທີ່ເປີດເຜີຍອອກຢູ່ທີ່ ນະຄອນລອນດອນ ໃນປຶ້ມປົກຂາວ ເມື່ອເດືອນ ມັງກອນ ປີ 1946 ແມ່ນການສ້າງຕັ້ງລັດມາລາຢູເອກະພາບໜຶ່ງດຽວ ຍົກເວັ້ນ ສິງກະໂປ ເຊິ່ງຍັງຄົງຢູ່ເປັນອານານິຄົມຕໍ່ໄປ ໂດຍການຍົກເອົາເຂດການປົກຄອງທີ່ ແຍກອອກຈາກລັດຂອງ ສຸນລະຕານ ໄປໃຫ້ເປັນລັດຂຶ້ນກັບອັງກິດ ແລະ ດ້ວຍການ ມອບສິດເປັນພົນລະເມືອງໃຫ້ກັບທຸກຄົນທີ່ເກີດຢູ່ທັ້ນ ຫຼື ຕັ້ງຖິ່ນຖານຢູ່ທັ້ນກ່ວາສິບປີ ຂຶ້ນໄປ ຫຼື (ໃນຕົວຈິງ) ຊຶ່ງປ່ຽນຈາກສິບເກົ້າປີຂຶ້ນໄປໃນເມື່ອກ່ອນ.

ແຜນການສ້າງຕັ້ງສະຫະພາບມາເລ ແບບນີ້ ເຮັດໃຫ້ຊາວມາເລ ຮູ້ສຶກເຈັບ ປວດຮຸນແຮງຫລາຍເພາະຈະຕ້ອງສູນເສຍຄວາມເປັນໃຫຍ່ ຂອງຊາວມາເລ ຍ້ອນ

ການຂະຫຍາຍສິດໃນການເຂົ້າຮ່ວມຢ່າງສົມບູນໃນລັດ ໃຫ້ແກ່ຜູ້ຄົນຫຼາຍແສນຄົນ ທີ່ມາພັກຊົ່ວຄາວ ຊຶ່ງມີຄວາມຈົງຮັກພັກດີແບບເອົາຫນ້າຊື່ໆ ຄືໃນຄວາມຈິງ ໃນຈຳນວນຊາວຈີນ 2,5 ລ້ານຄົນ ໃນມາເລຂະນະນັ້ນ ເທົ່າກັບ 38% ຂອງພົນລະເມືອງທັງຫມົດ ແລະ ໃນນັ້ນ 64% ເກີດ ແລະ ເຕີບໃຫຍ່ຢູ່ທັ້ນ ມີຄວາມຕັ້ງໃຈຈະຢູ່ທີ່ນັ້ນຕະຫລອດໄປ. ການຈັດພິມແຜນການນັ້ນໄດ້ເຈາະເລິກຄຳຕອບ ເລື່ອງການເມືອງອັນຫນ້າສົນໃຈ ອອກຈາກຊາວມາເລ ຊຶ່ງເມື່ອຕອນກ່ອນສົງຄາມ ຍັງຢູ່ຫ່າງໄກຫຼາຍກັບການສະແດງອອກຄວາມຮູ້ສຶກໃນຄວາມເປັນຊາດ. ພວກຜູ້ນຳມາເລ ທີ່ໂດ່ງດັງທີ່ສຸດໃນໝູ່ພວກເຂົາ ຄື ອອນ ບີ ຈາຟາ ແຫ່ງລັດ ຢະຮໍ (Onn b. Jaafar of Johore) ໄດ້ຟື້ນຟູສະມາຄົມ ແລະອົງການທີ່ຄ້າຍຄືກັນກັບໃນລັດມາເລ ສະໄໝກ່ອນສົງຄາມ ເຮັດໃຫ້ຂະບວນການມະຫາຊົນມາເລ ເກີດຂຶ້ນພາຍໃນບໍ່ເທົ່າໃດອາທິດ ຄື ອົງການແຫ່ງມາເລສາມັກຄີ (United Malays National Organization - UMNO) ເພື່ອຕໍ່ສູ້ກັບແຜນການກໍ່ຕັ້ງສະຫະພາບທີ່ວ່ານັ້ນ.

ພາຍໃນເວລາສິບແປດເດືອນ ແຜນການດັ່ງກ່າວຖືກປະຖິ້ມໄປ ແລ້ວລະບົບສະຫະພັນຂອງລັດຖະບານ ກໍໄດ້ຮັບການຮື້ຟື້ນຄືນມາໃຫມ່ ໂດຍອີງໃສ່ຄວາມຕໍ່ເນື່ອງຂອງໂຄງສ້າງດັ້ງເດີມຂອງລັດ, ມີຄວາມເຂັ້ມງວດກັບການໃຫ້ສິດເປັນພົນລະເມືອງຫຼາຍຂຶ້ນ ແລະທັນມານຳໃຊ້ສະພານິຕິບັນຍັດ ໂດຍບໍ່ມີການເລືອກຕັ້ງ ແລະ ຢູ່ໃນສະພານັ້ນ ພະນັກງານຂອງລັດຖະບານ ກັບຜູ້ປົກຄອງຊາວມາເລ ຮວມກັນແລ້ວ ມີຫລາຍກວ່າສະມາຊິກ ທີ່ບໍ່ເປັນພະນັກງານ. ສະຫະພັນທະລັດມາລາຢູໃຫມ່ ປະກາດການສ້າງຕັ້ງ ໃນວັນທີ 1 ກຸມພາ 1948 ໂດຍຍັງຄົງຮັກສາ ສິງກະໂປ ເປັນອານານິຄົມທີ່ຂຶ້ນໂດຍກົງກັບອັງກິດໄວ້ຕ່າງຫາກ.

ເມື່ອສົງຄາມໂລກສ້ຽງສຸດລົງ ກອງທັບປະຊາຊົນມາເລ ທີ່ຕໍ່ຕ້ານຍີ່ປຸ່ນ (MP-AJA) ກໍວາງອາວຸດ ແລະຖືກຂັບໄລ່ແຕກຊະຊາຍຈາກກັນໄປ, ເວລານັ້ນ ປາກົດວ່າພັກກອມມູນິດມາລາຢູ ໄດ້ກະກຽມໄວ້ແລ້ວ ຢ່າງຫນ້ອຍກໍຊົ່ວໄລຍະຫນຶ່ງ ເພື່ອດຳເນີນການຕາມແບບວິຖີລັດຖະທຳມະນູນ ໃນການຄັດຄ້ານການຮື້ຟື້ນການປົກຄອງອາ

ນານິຄົມ. ໃນເລື່ອງນີ້ ມີລັດຖະບານປະສົມ ລະຫວ່າງກຸ່ມປີກຊ້າຍ ທີ່ບໍ່ຫມັ້ນຄົງເທົ່າໃດ ທີ່ເຂົ້າມາຮ່ວມນຳກັບພັກກອມມູນິດມາລາຢູ ເຊິ່ງນຳໂດຍ ພັກສະຫະຊົນຊາດປະຊາທິປະໄຕມາລາຢູ ແລະພັກຊາດນິຍົມມາເລ ໃນອິນໂດເນເຊຍ (Multiracial Malayan Democratic Union and the pan-Indonesianist Malay Nationalist party) ການຜັນປ່ຽນທາງເສດຖະກິດ ລຸນຫລັງສົງຄາມ ແລະຄວາມບໍ່ສະຫງົບທາງສັງຄົມ ໂດຍສະເພາະຢູ່ ສິງກະໂປ ໄດ້ຊຸກດັນໃຫ້ພັກກອມມູນິດມາເລ ບ່ຽງຄວາມສົນໃຈໄປຫາ ສະຫະພາບແຮງງານອຸດສະຫະກຳ ແລະ ໃນລະຫວ່າງປີ 1946 ຫາຕົ້ນປີ 1947 ພັກກອມມູນິດມາເລ ໄດ້ສ້າງຕັ້ງຂະບວນການແຮງງານທີ່ຫນັກແຫນ້ນຂຶ້ນຢູ່ທີ່ນັ້ນ ແລະ ໃນກ່ວດອນ. ແຮງງານອຸດສາຫະກຳສ່ວນໃຫຍ່ຍັງຄົງເປັນຊາວຈີນ ແລະ ຄືກັນກັບກ່ອນສະໄຫມສົງຄາມ ພັກກອມມູນິດມາເລ ຕອນທຳອິດ ກໍແມ່ນເກີດຢູ່ໃນຊຸມຊົນຊາວຈີນ, ຊາວມາເລ ມີສ່ວນກ່ຽວຂ້ອງນຳແຕ່ກໍລະນີສະເພາະ. ກົດລະບຽບອັນເຂັ້ມງວດຂອງອັງກິດ ກ່ຽວກັບພາກປະຕິບັດ ຂອງສະຫະພາບ ບວກໃສ່ການຟື້ນໂຕທາງເສດຖະກິດ ແລະ ການແຕກແຍກກັນພາຍໃນພັກ ໄດ້ພາໃຫ້ພັກກອມມູນິດມາເລ ປະຖິ້ມລະບອບມີລັດຖະທຳມະນູນ ຫັນມາເປັນການຕໍ່ສູ້ດ້ວຍກຳລັງອາວຸດແທນ ໃນກາງປີ 1948. ຜົນກໍຄື "ພາວະສຸກເສີນ" ດັ່ງທີ່ຮູ້ຈັກດີໃນເວລານັ້ນ ໄດ້ຍືດເຍື້ອຢູ່ເຖິງສິບສອງປີ ເຖິງແມ່ນວ່າ ບ່ອນອີງຂອງຝ່າຍກະບົດ ໄດ້ແຕກຫັກໄປແລ້ວ ຕັ້ງແຕ່ກາງຊຸມປີ 1950 ກໍຕາມ.

ພັກກອມມູນິດມາເລ (MCP) ແລະ ກອງທັບກູ້ຊາດ ຂອງບັນດາຊົນຊາດມາເລ (Malayan Race Liberation Army - MRLA) ທີ່ພັກຈັດຕັ້ງຂຶ້ນໃນເວລາຕິດໆກັນ ໃນຂັ້ນຕົ້ນ ກໍມີຈຸດປະສົງທັບມ້າງເສດຖະກິດ ໂດຍການຍຸຕິປູກຢາງພາລາ ແລະການຂຸດຄົ້ນບໍ່ແຮ່ຊີນ ເຊິ່ງໄດ້ສ້າງຄວາມຮັ່ງມີເກືອບທັງຫມົດ ແກ່ ມາລາຢູ, ທັງນີ້ ເພື່ອທຳລາຍອຳນາດການປົກຄອງເກົ່າ ດ້ວຍການຕີຖອຍກອງກຳລັງປ້ອງກັນຄວາມສະຫງົບຂອງລັດຖະບານ ແລະ ເພື່ອໃຫ້ໄດ້ການສະຫນັບສະຫນຸນຈາກປະຊາຊົນພົນລະເມືອງທັງຫມົດ. ເຖິງແມ່ນວ່າ ໄດ້ມີຄວາມສຳເລັດບາງຢ່າງໃນຕອນຕົ້ນໆ ເຊັ່ນ ການລອບສັງຫານຫົວຫນ້າສອນຢາງແລະບໍ່ແຮ່ຊີນ ຊາວເອີລົບ ແລະ ຊາວຈີນ

ແລະ ການກໍ່ວິນາສະກຳຫລາຍເທື່ອ, ມາເຖິງປີ 1949 ກອງທັບປົດປ່ອຍຂອງຊົນຊາດມາເລ (MRLA) ກໍຖືກບັງຄັບໃຫ້ຖອຍເຂົ້າປ່າ ແລະ ດຳເນີນສົງຄາມແບບກອງໂຈນຢູ່ໃນປ່າເປັນລະຍະ. ເຖິງແມ່ນວ່າຕອນທຳອິດ ການຕໍ່ສູ້ໄດ້ຍຶດເຍື້ອແດ່ ແຕ່ກໍພິສູດໃຫ້ເຫັນວ່າ ເປັນການຕໍ່ສູ້ທີ່ບໍ່ມີໃຜຫຍຸມທັນໄດ້. ໃນຂະນະທີ່ຊາວຈີນຈຳນວນນຶ່ງກຽມພ້ອມທີ່ຈະໃຫ້ການຊ່ວຍເຫລືອ ແລະ ສະໜັບສະໜຸນ ແຕ່ກອງທັບປົດປ່ອຍຊົນເຜົ່າມາເລຜັດບໍ່ພໍໃຈ ທັງຢ້ານເປັນການແກ້ແຄ້ນ. ຊາວມາເລເກືອບທັງໝົດເຫັນວ່າ ສົງຄາມ ແມ່ນຄວາມພະຍາຍາມຂອງຊາວຈີນ ເພື່ອບັນລຸການຄວບຄຸມອຳນາດລັດ. ພວກເຂົາບໍ່ພຽງແຕ່ຈົງຮັກພັກດີຕໍ່ອຳນາດອານານິຄົມເທົ່ານັ້ນ ແຕ່ຫາກໄດ້ຕໍ່ສູ້ຢ່າງເອົາເປັນເອົາຕາຍກັບກອງທັບປົດປ່ອຍຂອງບັນດາຊົນຊາດມາເລນຳ. ໄຊຊະນະຂອງຝ່າຍລັດຖະບານ ໃນສະໜາມຮົບ ບວກໃສ່ເຈດຕະນາລົມອັນຈະແຈ້ງ ແລະຄວາມສາມາດໃນການປົກປ້ອງປະຊາກອນ ເກືອບທັງໝົດໄວ້ໄດ້ເກືອບຕະຫລອດມາ ໄດ້ສົ່ງເສີມໃຫ້ຊາວຈີນ ຕໍ່ຕ້ານຂໍ້ຮຽກຮ້ອງຂອງກອງທັບກອມມູນິດມາເລ (MCP) ແລະ ແຜນການ ບະຣິກສ໌ (Briggs plan) ກ່ຽວກັບການເຕົ້າໂຮມຊາວໄຮ່ຊາວນາຈີນຜູ້ອ່ອນແອ ທີ່ຢູ່ເປັນຊຸມຊົນບຸກຮຸກປ່າດົງ ອອກມາຢູ່ໃນ “ບ້ານຕັ້ງໃຫມ່” ກໍໄດ້ກຳຈັດການສະໜັບສະໜຸນ ແກ່ຝ່າຍຄອມມູນິດຫລາຍຂຶ້ນ. ໃນລະຫວ່າງ ປີ 1950 ຫາ 1952 ມີຄົນບໍ່ໜ້ອຍກວ່າເຄິ່ງລ້ານ ອອກມາຕັ້ງຖິ່ນຖານໃໝ່ ໃນຂົງເຂດຕ່າງໆ ຮອດ ສີ່ຮ້ອຍບ່ອນ ເວລາດຽວກັນ ກໍມີຄົນຈີນ ເກືອບໜຶ່ງລ້ານຄົນ ຖືກເນລະເທດ ສົ່ງໄປ ປະເທດຈີນແຜ່ນດິນໃຫຍ່.

ແຕ່ສິ່ງສຳຄັນກວ່າໝູ່ ມັນແມ່ນການເຮັດສົງຄາມທາງເມືອງ ແລະ ນັບມື້ນັບຈະແຈ້ງຂຶ້ນສຳລັບຊາວມາເລ ຊາວຈີນທີ່ບໍ່ເປັນກອມມູນິດ ແລະ ຊາວອັງກິດ ນຳ ທີ່ວ່າ ທິນທາງອັນແທ້ຈິງ ມີຢູ່ເສັ້ນດຽວເທົ່ານັ້ນ ເພື່ອປະຕິເສດການປ່າວອ້າງຂອງກອງທັບປົດປ່ອຍຊົນຊາດມາເລ ທີ່ຕ້ອງການເປັນກອງທັບປົດປ່ອຍ ກໍແມ່ນການມຸ່ງໜ້າສູ່ການປົກຄອງຕົນເອງ ແລະ ເປັນເອກະລາດ. ເຖິງຢ່າງນັ້ນ ອັງກິດ ກໍຍັງປະຕິເສດທີ່ຈະພິຈາລະນາ ເລື່ອງການປົກຄອງຕົນເອງ ຈົນຮອດເວລາທີ່ຊຸມຊົນຊາວມາເລ ແລະ ຊາວຈີນ ບັນລຸໄດ້ຄວາມເປັນອັນໜຶ່ງອັນດຽວກັນ. ການຄຸມຂັງທີ່ເຄັ່ງຄັດແລະມາດຕະ

ການຮັກສາຄວາມປອດໄພອື່ນໆໃນ "ພາວະສຸກເສີນ" ພາໃຫ້ດັບມອດບັນດາພັກ ສັງຄົມນິຍົມປະຊາທິປະໄຕນຳ ທັງທີ່ເປັນພັກຂອງຊາວມາເລເອງ ຫລື ຂອງບັນດາ ຊົນເຜົ່າອື່ນໆ ເຮັດໃຫ້ສາມາດສະກັດກັ້ນ ການເຄື່ອນໄຫວທາງການເມືອງແບບເປີດ ເຜີຍ ເກືອບທັງຫມົດ. ຂັ້ນນຳຂອງຈີນຮູ້ສຶກກັງວົນນຳເລື່ອງທີ່ວ່າ ຊຸມຊົນຊາວຈີນບໍ່ມີ ອົງການຈັດຕັ້ງທາງການເມືອງ ທີ່ພໍຈະຮັບເອົາໄດ້ຈັກອົງການ ທີ່ພໍທຽບກັບອົງການ ແຫ່ງຊາດເພື່ອຄວາມສາມັກຄີ ຊາວມາເລ ຫລື UMNO ໄດ້ ເພື່ອເປັນປາກເປັນສຽງ ໃຫ້. ໃນເດືອນກຸມພາ ປີ 1949 ຍ້ອນການຍຸຍົງສົ່ງເສີມຂອງອັງກິດ ຊາວຈີນຜູ້ຮັ່ງມີ ມີ ການສຶກສາແບບຕາເວັນຕົກຈຳນວນຫນຶ່ງ (ນຳໜ້າ ໂດຍເສດຖີຊີ ຕັນ ເຈັງ ລັອກ - Tan Cheng Lock ແລະ ເຮສ. ເອສ. ລີ - H. S. Lee) ກໍປະສົບຜົນສຳເລັດໃນການ ຈັດຕັ້ງສະມາຄົມຈີນ-ມາລາຢູຂຶ້ນ ຂະນະທີ່ກິດລະບຽບຂອງສະມາຄົມ ຈີນ-ມາລາຢູ (Malayan Chianese Association - MCA) ໄດ້ເນັ້ນເຖິງຈຸດປະສົງຂໍ້ທຳອິດຂອງ ຕົນວ່າ "ເພື່ອການສົ່ງເສີມ ແລະ ຮັກສາຄວາມສຳພັນອັນກົມກຽວລະຫວ່າງເຊື້ອຊາດ ຢູ່ໃນມາລາຢູ". ໃນການກ່າວຄຳປາໄສຄັ້ງທຳອິດຢູ່ ມາລາກາ ຕັນ ເຈັງ ລັອກ ເວົ້າວ່າ ພາລະໜ້າທີ່ອັນຕົ້ນຕໍຂອງສະມາຄົມ ແມ່ນແນໃສ່ການຮັບປະກັນຄວາມຍຸຕິທຳ ສຳ ລັບຊຸມຊົນຊາວຈີນ. ເຖິງວ່າ ຈຸດປະສົງອີກສອງຂໍ້ ບໍ່ໄດ້ເຂົ້າແກ໊ບເຂົ້າເກງກັນປານໃດກໍ ຕາມ ແຕ່ການຕິດຕາມໃນເວລາຕໍ່ມາ ກໍໄດ້ສ້າງບັນຫາໃຫ້ແກ່ການປອງດອງພໍສົມຄວນ.

ແຕ່ສິ່ງທີ່ແປກປະຫລາດກໍຄື ການຄົງຕົວຢູ່ຂອງຊຸມຊົນເຂັ້ມແຂງທັງສອງນັ້ນ ແມ່ນເພື່ອຊ່ວຍເຫລືອຂະບວນການສ້າງຄວາມປອງດອງ ເປັນຕົ້ນຕໍ. ນັບແຕ່ຕົ້ນປີ 1949 ພຸ້ນແລ້ວ ກ່ອນການກໍ່ຕັ້ງສະມາຄົມຈີນ-ມາເລ ບໍ່ດົນ ຄະນະກຳມະການສ້າງ ສາຍສຳພັນຊຸດຫນຶ່ງທີ່ອັງກິດອຸປະຖຳຢູ່ ໄດ້ເລີ່ມດຳເນີນບາດກ້າວທຳອິດ ເພື່ອປະນີ ປະນອມກັນທາງດ້ານຜົນປະໂຫຍດ ໂດຍຮ່າງຂໍ້ສະເຫນີ ດ້ານສິດທິພົນລະເມືອງ ທີ່ມີ ເສລີພາບຫລາຍຂຶ້ນໃຫ້ຊາວຈີນ ທັງນີ້ ເພື່ອເປັນການຕອບແທນຄຳສັນຍາ ກ່ຽວກັບ ການຊ່ວຍເຫລືອທາງດ້ານເສດຖະກິດແບບພິເສດແກ່ຊາວມາເລ. ໃນປີ 1952, ພ້ອມໆ ກັບການເລືອກຕັ້ງທົ່ວປະເທດ ແບບມີປະຊາທິປະໄຕ ເປັນຄັ້ງທຳອິດ ພາຍໃຕ້ລັດຖະ ທຳມະນູນ ສະຫະພັນທະນະລັດ ສຳລັບສະເພາະກຳແພງນະຄອນກົວລາລຳເປີ໊ເທົ່າ

ນັ້ນ, ສາຂາລັດ ເຊລັງກໍຣ໌ ຂອງອົງການແຫ່ງຊາດມາເລສາມັກຄີ (UMNO) ແລະ ສະມາຄົມຊາວຈີນ-ມາເລ (MCA) ໄດ້ຕົກລົງສ້າງກົດລະບຽບຊົ່ວຄາວຂຶ້ນ ໂດຍຫວັງຜົນປະໂຫຍດຢ່າງກວ້າງໆ ຈາກຄວາມປະລາໄຊຂອງ ພັກມາລາຢູເອກະລາດ (Independence of Malaya Party - IMP) ເຊິ່ງເປັນພັກທີ່ບໍ່ອີງໃສ່ຊຸມຊົນ ສ້າງຕັ້ງຂຶ້ນ ໂດຍ ອອນ ບີ ຈາຟາຣ໌ (Onn b. Jaafar) ຫລັງຈາກເຂົາແຍກອອກມາຈາກ ອົງການຢູເອມເອັນໂອ (UMNO) ແລະສະມາຄົມຊາວຈີນ-ມາລາຢູ ຍ້ອນບັນຫາຊຸມຊົນໃນປີຜ່ານມາ. ການອອກກົດລະບຽບການເລືອກຕັ້ງ ປະສົບຄວາມສຳເລັດຢ່າງສູງ ຄື ອົງການແຫ່ງຊາດມາເລສາມັກຄີ ແລະ ສະມາຄົມຊາວຈີນ-ມາເລ ທັງສອງ ໄດ້ບ່ອນນັ່ງທັງຫມົດ ລື່ນກັນແຕ່ສອງບ່ອນ ແລະການຈັດການຢ່າງວ່ອງໄວ ກໍພິສູດໃຫ້ເຫັນວ່າ ມີຜົນດີທາງການເມືອງ ຢູ່ໃນການລົອກຕັ້ງຄ້າຍຄືກັນນີ້ ຢູ່ ລັດ ຢະຮໍ, ບາຫາຣູ, ມູອາຣ, ແລະ ມາລາກາ (Johore Baharu, Muar ແລະ Malacca) ນັ້ນ ເປັນການຢັ້ງຢືນວ່າ ມັນສາມາດດຳເນີນໄດ້ຕໍ່ໄປ. ໃນເດືອນສິງຫາ 1953 ໄດ້ມີການສ້າງຕັ້ງພັນທະມິດແຫ່ງຊາດຂຶ້ນ ຢ່າງເປັນທາງການ ແລະອີກຫນຶ່ງປີຕໍ່ມາ ໃນເດືອນກັນຍາ "ກອງປະຊຸມໂຕ໊ະມົນ" ແບບມຸນວຽນ ເຊິ່ງໄດ້ຊ່ວຍເລື່ອງການເຈລະຈາພາຍໃນ ໄດ້ໄຂທາງໃຫ້ແກ່ ສະພາຜູ້ບໍລິຫານແຫ່ງຊາດ ທີ່ມີສະມາຊິກສາມສິບຄົນ. ໃນເດືອນຕຸລາ 1954 ສະພາຄອງແກຣສ ອິນເດຍ ມາລາຢູ ໄດ້ຕົກລົງເຂົ້າຮ່ວມພັນທະມິດແຫ່ງຊາດ ດັ່ງນັ້ນການແບ່ງແຍກຊຸມຊົນຈຶ່ງຍຸຕິລົງ.

ໃນການເລືອກຕັ້ງຂອງສະຫະພັນທະລັດຢ່າງສົມບູນຄັ້ງທຳອິດ ເມື່ອເດືອນກໍລະກົດ 1955 ນັ້ນ ພວກພັນທະມິດຍົກເອົາຄວາມຕ້ອງການອັນຮີບດ່ວນໃນເລື່ອງການປົກຄອງຕົນເອງ ແລະ ເອກະລາດ ມາເປັນການຫາສຽງ ໄດ້ໄຊຊະນະຮອດ 51 ບ່ອນນັ່ງ ຕໍ່ ທັງຫມົດ 52 ບ່ອນນັ່ງໃນສະພານິຕິບັນຍັດ ທີ່ຕັ້ງຂຶ້ນໃຫມ່ປະກອບດ້ວຍ ສະມາຊິກ 98 ຄົນ ເທົ່າກັບ 81% ຂອງ ຄະແນນສຽງທັງຫມົດ. ໃນຈຳນວນ 34 ບ່ອນນັ່ງຂອງ ພັນທະມິດ ຕົກໄປເປັນຂອງຊາວມາເລ ໃນອົງການ UMNO 15 ບ່ອນ ຕົກເປັນຂອງຊາວຈີນໃນສະມາຄົມຈີນ-ມາເລ (MCA) ແລະ ອີກສອງບ່ອນນັ່ງເປັນຂອງ ສະພາຄອງເກຣສ ມາລາຢູ. ເຕັ້ງກູ ອັບດຸລ ຣາມານ (Tenku Abdul Rahman)

ຜູ້ນຳຂອງຢູເອັມເອັນໂອ (UMNO) ແລະ ພັນທະມິດ ໄດ້ຮັບແຕ່ງຕັ້ງເປັນຫົວໜ້າຄະນະລັດຖະມຸນຕີ ແລະ ຈັດຕັ້ງຄະນະລັດຖະບານຂຶ້ນ.

ບັດນີ້ ເສັ້ນທາງສຳລັບເອກະລາດໂລ່ງແປນແລ້ວ. ລັກສະນະແລະຄວາມສົນໃຈ ຂອງພວກຜູ້ນຳໃນພັນທະມິດຊາວມາເລ ເປັນແບບກາງໆ-ມີຫົວບໍລິຫານແດ່ ແລະ ກັບນັກທຸລະກິດຊາວຈີນ ອິນເດ ຜູ້ຊຳນິຊຳນານນັ້ນ ໃນສາຍຕາຂອງອັງກິດ ເບິ່ງຄືວ່າ ຈະຮັບປະກັນຄວາມໝັ້ນຄົງທາງການເມືອງ ແລະເສດຖະກິດໃນອະນາຄົດ ແລະ ໃຫ້ຄວາມຮັບປະກັນທີ່ສົມເຫດຜົນ ສຳລັບການລົງທຶນຂອງພວກເຂົາ. ໃນການສົນທະນາ ກ່ຽວກັບລັດຖະທຳມະນູນ ຫລາຍຊຸດຕໍ່ໆກັນມາ ນຳພາໂດຍ ຄະນະກຳມະການ ເຣດ (Reid Commission) ນັ້ນເຫັນໄດ້ວ່າ ມີຄວາມຄຶດເຫັນແຕກຕ່າງກັນຫລາຍ ລະຫວ່າງຊຸມຊົນຕ່າງໆ ໃນບັນຫາສຳຄັນບາງອັນກ່ຽວກັບສິດທິພົນລະເມືອງ, ພາສາ, ສະຖານະພາບຂອງຊາວມາເລ ແລະອື່ນໆ. ອົງການ UMNO ແລະ ສະມາຄົມຊາວຈີນ-ມາເລ ເມື່ອເລັ່ງເຫັນວ່າ ບໍ່ມີຊຸມຊົນໃດສາມາດດຳເນີນການໄດ້ສຳເລັດໂດຍລຳພັງ ຈຶ່ງສະເໜີຕໍ່ອັງກິດ ດ້ວຍຂໍ້ສະເໜີຊຸດໜຶ່ງຂອງພັນທະມິດ ທີ່ມີລັກສະນະຜ່ອນຜັນປອງດອງ ແລະເຮັດຂຶ້ນໂດຍສອງຝ່າຍ. ອັງກິດຮັບເອົາຂໍ້ສະເໜີນັ້ນ ດ້ວຍການຕິຕ່ຽງແດ່ເລັກນ້ອຍ ແລ້ວໃນວັນທີ 31 ສິງຫາ 1957 ສະຫະພັນທະລັດມາລາຢູ ທີ່ເປັນເອກະລາດ ກໍຖືກຳເນີດຂຶ້ນ. ເວົ້າແບບຫຍໍ້ໆ ອົງປະກອບເນື້ອໃນສຳຄັນຂອງລັດຖະທຳມະນູນສະບັບນີ້ ມີດັ່ງນີ້: (1) ໃຫ້ມີ ສຸນລະຕານ ປະຈຳແຕ່ລະລັດຂອງມາເລຢູ່ຕໍ່ໄປ ໂດຍປະຕິບັດໜ້າທີ່ເປັນປະມຸກ (ລາຊາ) ພາຍໃຕ້ລັດຖະທຳມະນູນ ອົງຕາມການຊີ້ແນະຂອງຄະນະລັດຖະມຸນຕີ ທີ່ມາຈາກການເລືອກຕັ້ງຂອງພັກທີ່ໄດ້ສ່ຽງສ່ວນຫລາຍ ຢູ່ໃນສະພານິຕິບັນຍັດ, (2) ໃນທຸກໆຫ້າປີ ໃຫ້ເຈົ້າປົກຄອງທັ້ງຫລາຍ ເລືອກຕັ້ງກັນເອງຂຶ້ນເປັນລາຊາທິບໍດີ ຫລື ອາກຸງ (Agung) ເຊິ່ງກໍເຊັ່ນດຽວກັນ ອາກຸງຈະປະຕິບັດໜ້າທີ່ ຕາມການຊີ້ແນະ ຂອງຄະນະລັດຖະມຸນຕີທີ່ຮັບຜິດຊອບໂດຍສົມບູນຕໍ່ການເລືອກຕັ້ງສະພາແຫ່ງຊາດ, (3) ສະຖາປະນາສາສະໜາອິດສະລາມ ຂຶ້ນເປັນສາສະໜາແຫ່ງລັດ ຢູ່ພາຍໃນຂອບໂຄງເສລີພາບໃນການນັບຖືສາສະໜາສ່ວນບຸກຄົນ, (4) ຂະຫຍາຍການໃຫ້ສິດເປັນພົນລະເມືອງແກ່ທຸກຄົນທີ່ເກີດໃນແຜ່ນດິນສະຫະ

ພັນ ຕັ້ງແຕ່ບັດນີ້ເປັນຕົ້ນໄປ ແລະ ໃຫ້ທະວີຂຶ້ນເລື້ອຍໆ ໂດຍການຈັດທະບຽນ ຫລື ການປ່ຽນສັນຊາດໃຫ້ແກ່ຊາວຈີນ ແລະ ຊາວອິນເດຍ ຜູ້ຢູ່ກັບທີ່ ໃຫ້ຫລາຍຂຶ້ນໆ, (5) ກຳນົດເອົາພາສາມາເລ ເປັນພາສາແຫ່ງຊາດພາສາດຽວ ຕາມວັນທີ ທີ່ຈະກຳນົດຂຶ້ນພາຍຫລັງ ຫລັງຈາກສິບປີຜ່ານໄປ ພ້ອມໆກັບການໃຫ້ມີການໃຊ້ພາສາອັງກິດຄວບຄູ່ກັນໄປ, ແລະ (6) ຮັບຮູ້ ສະຖານະອັນພິເສດ ແລະ ຄວາມຕ້ອງການຂອງຊາວມາເລ ໂດຍສະຫງວນຈຳນວນກຳນົດ (ໂຄວຕ້າ) ໃນລະບົບລັດຖະການພົນລະເຮືອນ ທຶນການສຶກສາ ແລະ ໂອກາດທາງເສດຖະກິດ ບາງຢ່າງ.

ມາລາຢູເອກະລາດ ມີລັດຖະບານທີ່ຫມັ້ນຄົງ ມີສະຖຽລະພາບ ຢູ່ໄດ້ກວ່າໜຶ່ງທົດສະວັດ ພ້ອມດ້ວຍເສດຖະກິດ ທີ່ເຕີບໃຫຍ່ເກືອບຈະວ່າເປັນປົກກະຕິດີ ກ່ອນຈະເກີດຄວາມຂັດແຍ່ງບາງຢ່າງ ທີ່ເຊື່ອງຊ້ອນຢູ່ໃນກຸ່ມຜູ້ບໍລິຫານ ມາແຕ່ຍຸກກ່ອນປີ 1957 ພຸ້ນ ໄດ້ສະແດງຕົວຮຸນແຮງອອກ ແລະ ໃນທີ່ສຸດກໍລະເບີດອອກມາ. ໃນຕອນເລີ່ມຕົ້ນ ເກີດຂຶ້ນຈາກການຂະຫຍາຍເສດຖະກິດອອກເປັນຫລາຍຂະແຫນງ ໂດຍອີງໃສ່ລາຍໄດ້ຈາກການສົ່ງອອກ (ກ່ອນປີ 1957 ມີ 85%) ຢາງພາລາ ແລະ ຊຶ່ນ ແຕ່ປະສົບຄວາມສຳເລັດຫນ້ອຍກວ່າ ໃນເລື່ອງຫລຸດຜ່ອນຄວາມແຕກໂຕນທາງເສດຖະກິດລະຫວ່າງກຸ່ມຊົນຊາດຕ່າງໆ ແລະ ພາຍໃນກຸ່ມຊົນຊາດໃຫຍ່ໆຫລາຍກຸ່ມ. ມາເຖິງປີ 1966 ມາລາຢູ ກໍກາຍເປັນປະເທດຜູ້ຜະລິດນ້ຳມັນປາມ ລາຍໃຫຍ່ທີ່ສຸດຂອງໂລກ, ໄມ້ທ່ອນ ກໍກາຍເປັນສິນຄ້າສົ່ງອອກທີ່ສ້າງລາຍຮັບສູງຂຶ້ນໆ ແລະ ຍັງມີການເພີ່ມຂຶ້ນຢ່າງໜັກແໜ້ນ ໃນເລື່ອງການຜະລິດສິນຄ້າ ຈາກໂຮງງານອຸດສາຫະກຳອີກ. ເສດຖະກິດ ຂອງຊາວນາມາເລ ໄດ້ຮັບການອຸ້ມຊູ ໂດຍການຈັດຕັ້ງສະຖາບັນຕ່າງໆຂຶ້ນ ເຊັ່ນ ໂຄງການພັດທະນາທີ່ດິນຂອງ ສະຫະພັນ (Federal Land Development Authority - FELDA) ເຊິ່ງໄດ້ບຸກເບີກເນື້ອທີ່ຂະຫນາດໃຫຍ່ ເພື່ອໃຫ້ຊາວນາເຂົ້າໄປຕັ້ງຖິ່ນຖານ ດ້ວຍການປັບປຸງລະບົບສິນເຊື່ອ ແລະການຕະຫລາດຊົນນະບົດໃຫ້ດີຂຶ້ນ. ໄດ້ມີຄວາມພະຍາຍາມເພື່ອສົ່ງເສີມບໍລິສັດວິສາຫະກິດມາເລ ໃຫ້ເຂົ້າຮ່ວມໃນດ້ານການຂົນສົ່ງ ການຄ້າ ແລະ ອຸດສາຫະກຳ ດ້ວຍການຄຸ້ມຄອງໃບອະນຸຍາດ ແລະ ວິທີການອື່ນໆ ຄ້າຍຄືກັນ.

ຕະຫລອດເວລາ ໃນທົດສະວັດທຳອິດນີ້ ໄດ້ມີການປ່ຽນແປງທີ່ສຳຄັນຫລາຍແນວເກີດຂຶ້ນ ໃນດ້ານສິ່ງແວດລ້ອມທາງການເມືອງທັງພາຍນອກແລະພາຍໃນ, ກຸ່ມພັນທະມິດ ຍັງຄົງບໍ່ຖືກດຶງເຂົ້າມາຮັບຜິດຊອບກິດຈະການບ້ານເມືອງ. ເມື່ອໄດ້ຈົດທະບຽນໃນປີ 1958 ເປັນພັກການເມືອງຢ່າງເປັນເອກະລາດຈາກພັກ ໃນກຸ່ມດຽວກັນແລ້ວ ກຸ່ມພັນທະມິດ ໂດຍຜ່ານສະພາພາຍໃນຂອງຕົນ (ພາຍໃຕ້ການນຳພາ ອັນເຂັ້ມແຂງ ຂອງ ເຕັ່ງກູ ອັບດູລ ຣາມານ) ຈຶ່ງມີຄວາມສາມາດກຳນົດຕົວແທນລັດຖະສະພາ ໃນບັນດາກຸ່ມເລືອກຕັ້ງ ແລະ ຄວບຄຸມພາກສ່ວນໃຫຍ່ໆ ບ່ໃຫ້ບັນຫາກ່ຽວກັບການແບ່ງແຍກ ໂປໂລຂຶ້ນໄດ້ ໂດຍອາໄສຂະບວນການຫນຶ່ງ ເຊິ່ງນັກສັງເກດການຄົນຫນຶ່ງ ໄດ້ພັນລະນາໄວ້ວ່າ ເປັນ “ປະຊາທິປະໄຕ ໃນກ້ອງຖ່າຍຮູບ” ໃຈກາງຂອງ ບັນຫາເຫລົ່ານີ້ແມ່ນເລື່ອງກ່ຽວກັບເອກະລັກທາງວັດທະນະທຳ ແລະ ການເມືອງຂອງລັດໃຫມ່ ທີ່ສະແດງອອກໃນການອະພິປາຍກ່ຽວກັບການເຂົ້າເຖິງສິດເປັນພົນລະເມືອງ, ກ່ຽວກັບສິດທິພິເສດ ປະເພດຕ່າງໆ ແລະ ອັນທີ່ມີຄວາມສົນໃຈບ່ໜ້ອຍອີກເລື່ອງໜຶ່ງ ກໍແມ່ນການສຶກສາ ແລະ ນະໂຍບາຍກ່ຽວກັບພາສາ ເຊິ່ງເປັນເລື່ອງທີ່ຊາວມາເລກັບຊາວຈີນ ມີຄວາມກັງວົນສົນໃຈເທົ່າໆກັນ. ເຖິງວ່າຝ່າຍພັນທະມິດ ໄດ້ດຳເນີນການທາງການເມືອງຕໍ່ໄປຢ່າງມີຜົນສຳເລັດໃນການເລືອກຕັ້ງທົ່ວໄປໃນ ປີ 1959, 1964 ແລະ 1969 ກໍຕາມ ແຕ່ສ່ວນແບ່ງຂອງຄະແນນສຽງສ່ວນຫລາຍໄດ້ຫລຸດລົງ ແລະ ຝ່າຍຄ້ານຫລາຍໆພັກ ເຊິ່ງມີລັກສະນະເປັນຂອງຊຸມຊົນຫລາຍກວ່າ ເຊັ່ນ ພັກກິດຈະປະຊາທິປະໄຕ (Democratic Action Party - DAP) ກ່າຍແບບຈາກພັກກິດຈະປະຊາຊົນຂອງສິງກະໂປ, ກັບພັກອິດສະລາມມາເລເປີດກວ້າງ (Pan Malagan Islamic Party - PAS) ໄດ້ຮ່ວມມືກັນກວາດເອົາສຽງ ທັງພາຍໃນລັດ ແລະ ໃນສະພາຂອງສະຫະພັນ.

ໜ້ອຍບ່ໜ້ອຍ ຄວາມເຄັ່ງຕຶງທີ່ໂປໂລຂຶ້ນໃນຊຸມປີ 1960 ກໍມີຄວາມກ່ຽວຂ້ອງກັບຂະບວນການ ແລະ ເຫດການທັງຫລາຍທີ່ຢູ່ນອກແຫລມມາລາຢູ. ນັບແຕ່ຕົ້ນເດືອນພຶດສະພາ 1961 ເປັນຕົ້ນມາ ເຕັ່ງກູ ອັບດູລ ຣາມັນ ທີ່ໄດ້ຮ່ຳຮຽນມາຈາກອັງກິດ ແຕ່ບາງທີອາດຈະເປັນຄວາມຄຶດລິເລີ່ມຂອງຕົນເອງກໍໄດ້, ໄດ້ສະເໜີໃຫ້ຈັດຕັ້ງ ສະ

ທະພັນທະຣັດມາລາຢູ ທີ່ມີຢູ່ ເຂົ້າກັບ ສິງກະໂປ ແລະ ກັບອີກສາມອານາເຂດ ໃນການຄວບຄຸມຂອງອັງກິດ ທາງພາກເໜືອຂອງບໍນຽວ (Borneo) ຄື ຊາຣາວັກ (Sarawak) ຊາບາห์ (Sabah) ແລະ ບຣູນາຍ (Brunei) ເພື່ອສ້າງຕັ້ງເປັນ ມາເລເຊຍເອກະພາບ. ພຽງແຕ່ຈະຮວບເອົາ ສິງກະໂປ ກັບມາລາຢູເທົ່ານັ້ນ ກໍມີ ແຕ່ນັກການເມືອງສິງກະໂປ ທີ່ຮຽກຮ້ອງ ຍ້ອນຮັບຮູ້ວ່າທັງສອງລັດເຄີຍຂຶ້ນຕໍ່ກັນ ແລະ ກັນ ທັງທາງດ້ານເສດຖະກິດແລະການເມືອງ ທີ່ມີມາແຕ່ດົນນານ ແຕ່ສຳລັບຊາວ ມາເລ ໃນແຫລມມາລາຢູ ບໍ່ໄດ້ສົນໃຈພໍເທົ່າໃດ ທັງນີ້ ຍ້ອນມັນຈະເປັນການຕື່ມ ພົນລະເມືອງຫລາຍຂຶ້ນ ເຊິ່ງອາດຈະຫມາຍເຖິງພົນລະເມືອງຊາວຈີນນຳ. ໃນການ ສະເໜີຈັດຕັ້ງເປັນ ມາເລເຊຍ ນັ້ນ ອາດເປັນກຳລັງຊັ່ງຊາ ຂອງບັນດາຊົນເຜົ່າພື້ນ ເມືອງ ກັບ ຊາວມາເລ ໃນດິນແດນບໍນຽວ. ໃນເວລາດຽວກັນ ທັງລັດຖະບານມາລາຢູ ແລະ ລັດຖະບານອັງກິດ ຕ່າງກໍມີຄວາມຮູ້ສຶກວ່າ ພວກນິຍົມຊ້າຍໃນສິງກະໂປ ສາ ມາດຖືກຄວບຄຸມໄດ້ງ່າຍຂຶ້ນ ຖ້າຫາກວ່າລັດນັ້ນໄດ້ເຂົ້າມາຢູ່ ພາຍໃຕ້ຄວາມຮັບຜິດ ຊອບຂອງລັດຖະບານກາງ ທີ່ ກົວລາລຳເປີຣ໌ (Kuala Lumpur). ລະຍະສອງປີຕໍ່ມາ ນັບແຕ່ ເຕັ້ງກູ ອັບດູລ ຣາມານ ສະເໜີແຜນການຈັດຕັ້ງມາເລເຊຍ ກໍຖືກກາໝາຍ ດ້ວຍເຫດການຫຍຸ້ງເຫຍີງ ຂອງການເມືອງສາກົນ ໂດຍສະເພາະກ່ຽວກັບ ອິນໂດເນ ເຊຍ ເຊິ່ງກ້າວເຂົ້າສູ່ນະໂຍບາຍປະເຊີນໜ້າກັບ ມາລາຢູ ແລະ ຟີລິບປິນ ດ້ວຍວ່າ ອິນໂດເນເຊຍ ໄດ້ອ້າງກຳມະສິດເໜືອດອນຊາບາห์ ກ່ອນປະເທດອື່ນໆ. ທັງໆທີ່ມີ ການຄັດຄ້ານເຊັ່ນນີ້ ລັດໃຫມ່ ກໍເກີດຂຶ້ນຈົນໄດ້ ໃນເດືອນກັນຍາ ປີ 1963 ທັງນີ້ ຍັງບໍ່ໄດ້ຮວມເອົາ ບຣູນາຍ ທີ່ກໍຄິດຢາກແຍກຕົວຢູ່ຄືກັນ.

ໃນທັນທີ ການເມືອງພາຍໃນຂອງແຫລມມາລາຢູ ກໍຖືກກະທົບຈາກການ ປ່ຽນແປງໃຫມ່ ຍ້ອນວ່າພັກກິດຈະປະຊາຊົນສິງກະໂປ (PAP) ໄດ້ຕັດສິນໃຈເຂົ້າ ຮ່ວມໃນການເລືອກຕັ້ງທົ່ວໄປ ປີ 1964 ບົນພື້ນຖານຄຳຂັວນ “ປະເທດມາເລເຊຍ ເພື່ອຄົນມາເລເຊຍ” ໂດຍຄວາມຫມາຍວ່າ ບໍ່ຄວນໃຫ້ຊຸມຊົນຫນຶ່ງຊຸມຊົນດຽວ (ຊາວ ມາເລນັ້ນເປັນເປົ້າຫມາຍຈະແຈ້ງແລ້ວ) ຜູກຂາດການສ້າງຊາດ ແລະ ການອອກກົດ ບັງຄັບທັງຫລາຍຂອງຊາດ. ເຫດການນີ້ ສ້າງຄວາມກະທົບກະເທືອນຈິດໃຈ ຄະນະຜູ້

ຮ່ວມງານທີ່ບໍ່ເປີດເຜີຍຕົວ ຢູ່ໃນຫມູ່ພວກທີ່ເປັນພັນທະມິດ ທັງຊາວມາເລແລະຊາວ ຈີນ ແລະກໍ່ໃຫ້ເກີດການຕອບໂຕ້ຈາກຊາວມາເລຢ່າງທັນທີ. ໃນທີ່ສຸດ ຍ້ອນການຊັ່ງຊາ ອັນລະອຽດອ່ອນຂອງມາລາຢູເອງ ຢ້ານວ່າຄວາມບໍ່ພໍໃຈຂອງຊຸມຊົນຈະບໍ່ຢຸຕິໄດ້ ຖ້າ ຫາກວ່າເຫດການທັງຫລາຍຮ້າຍແຮງສືບຕໍ່ໄປ ກົວລາລໍາເປີ ຈຶ່ງຂໍຮ້ອງໃຫ້ສິງກະໂປ ຖອນຕົວອອກຈາກສະຫະພັນທະລັດ ໃນເດືອນສິງຫາ 1965 ແລະ ຫລັງຈາກນັ້ນ ດອນຫນ່ວຍນັ້ນ ກໍໄດ້ເປັນ "ນະຄອນລັດ" ເອກະລາດ. ເຖິງວ່າ ນັກອະພິປາຍໃນ ຍຸກນັ້ນໄດ້ເວົ້າເຖິງ "ການແຍກຕົວ ແຕ່ບໍ່ແມ່ນ ການຢ່າຮ້າງ", ແລະເວົ້າເຖິງການຮວມ ກັນຄືນອີກໃນພາຍຫລັງກໍຕາມ ນັບແຕ່ເວລານັ້ນມາ ວຽກງານຂອງທັງສອງປະເທດ ກໍ ດໍາເນີນໄປແບບແຍກຂາດຈາກກັນ.

ການໃຫ້ ສິງກະໂປ ອອກຈາກ ມາເລເຊຍ ແລະ ການປະຍຸກໃຊ້ເຫດການນັ້ນ ສໍາລັບບົດບາດອັນສໍາຄັນຂອງຊາວມາເລ ໃນເລື່ອງການເມືອງຂອງສະຫະພັນທະລັດ ໄດ້ນໍາໄປສູ່ເຫດການບໍ່ສະຫງົບບາງອັນໃນ ຊາຣາວັກ ແລະ ຊາບາຫ໌ ທີ່ຍັງຄົງເປັນ ສະມາຊິກໃຫມ່ຢູ່. ລັດທັງສອງ ມີປະຊາກອນຊາວພື້ນເມືອງຈໍານວນຫລາຍ ທີ່ບໍ່ເປັນ ຊາວມາເລ (ແລະບໍ່ເປັນມຸດສະລິມ) ເຊິ່ງໄດ້ກາຍເປັນຜູ້ຂັນແຂງທາງການເມືອງ. ຊາວ ອີບານ (Ibans) ໃນ ຊາຣາວັກ ແລະ ຊົນເຜົ່າໃກ້ຄຽງກັບພວກເຂົາ ຄື ຊາວກາ ດາຊານ (Kadazans) ໃນ ຊາບາຫ໌ ມີປະຊາກອນຮວມກັນ ຮອດ 30% ຂອງ ປະຊາກອນທັງຫມົດ ຂະນະຊາວມາເລ ມີຈໍານວນຫນ້ອຍກວ່າຫລາຍ ແລະຊາວຈີນ ກໍມີຫຼາຍກວ່າ. ເຖິງວ່າ ລັດທັງສອງເປັນເຈົ້າປົກຄອງຕົນເອງໃນລະດັບສູງກວ່າລັດອື່ນ ໃນແຫລມມາລາຢູ ໂດຍສະເພາະໃນເລື່ອງກ່ຽວກັບການອົບພະຍົບເຂົ້າມາ ກ່ຽວກັບ ພາສາ ແລະ ນະໂຍບາຍການສຶກສາ ກໍຍັງມີຄວາມຮູ້ສຶກກຽດຊັງ ຕໍ່ສິ່ງທີ່ເຫັນວ່າ ການລອກແບບການເມືອງແບບພັນທະມິດນີ້ ເປັນການເນັ້ນຍ້ໍາຈາກ ກົວລາລໍາເປີ. ການຮັບເອົາຄໍາ ວ່າ "ພູມິບຸດຕຣະ (ລູກຂອງແຜ່ນດິນ)" ໄປໃຊ້ໃນທົ່ວມາເລເຊຍ ແລະຂະຫຍາຍຄໍາສັບນັ້ນໄປເຖິງ ຊາວກາດາຊານ ອີບານ ແລະ ຊາວພື້ນເມືອງ ອື່ນໆ ຜູ້ໄດ້ຮັບການຄຸ້ມຄອງພິເສດ ຕາມລັດຖະທໍາມະນູນ ກໍບໍ່ໄດ້ເຮັດໃຫ້ຄວາມຮູ້ ສຶກກຽດຊັງນັ້ນ ຫລຸດຜ່ອນລົງໄດ້.

ແຕ່ສູນກາງແຮງດຶງດູດທາງການເມືອງຂອງມາເລເຊຍ ກໍຍັງຄົງຢູ່ໃນແຫລມມາ ລາຢູ ແລະ ກົວລາລໍາເປີ ດັ່ງທີ່ໄດ້ປາກົດຢ່າງຈະແຈ້ງ ໃນປີ 1969. ໃນການເລືອກ ຕັ້ງທົ່ວໄປ ເມື່ອເດືອນພຶດສະພາປີນັ້ນ ຝ່າຍພັນທະມິດ ເຊິ່ງມີສ່ວນແບ່ງຂອງຄະແນນ ສຽງທົ່ວໄປ ຕົກລົງຈາກ 58 ມາເປັນ 48 ໄດ້ສູນເສຍບ່ອນນັ່ງໄປຮອດ 23 ຕັ່ງ ໃນສະພາ ເດວັນ ຣັຄຍາດ (Dewan Rakyat) ໃຫ້ແກ່ຝ່າຍຄ້ານ ແລະເສຍສຽງ ສ່ວນຫລາຍໄປສອງສ່ວນສາມ ເຊິ່ງໃນອະດີດ ເຮັດໃຫ້ພັນທະມິດ ສາມາດຜ່ານການ ແກ້ໄຂກົດໝາຍລັດຖະທໍາມະນູນໄດ້. ສຽງທີ່ກວັດແກວ່ງແບບດຽວກັນນີ້ ໄດ້ເກີດ ຂຶ້ນໃນລະດັບລັດເຊັ່ນກັນ. ຜູ້ທີ່ໄດ້ຮັບຜົນປະໂຫຍດ ແມ່ນພັກອິດສະລາມມາເລເປີດ ກວ້າງ ຕື່ມຄວາມບໍ່ພໍໃຈຢ່າງແຮງຂອງຊາວມາເລຕໍ່ກັບນະໂຍບາຍຂອງພັກ UMNO ແລະ ພັນທະມິດ ແຕ່ຜູ້ໄດ້ຮັບຜົນປະໂຫຍດຕົ້ນຕໍ ແມ່ນພັກ DAP ກັບ ພັກ ເຈຣາກັນ (Gerakan) ເຊິ່ງຜູ້ລົງຄະແນນສຽງສ່ວນໃຫຍ່ເປັນຊາວຈີນ ໂດຍສະເພາະ ໃນຕົວເມືອງ, ສະມາຄົມ ເອັມ ຊີ ເອ (MCA) ຖືກປະໄວ້ທາງຫລັງ ແລະ ເລືອກຜູ້ສະໜັກຂອງພັກນັ້ນ ບໍ່ຕ່ໍາກວ່າ 21 ຄົນ ເຂົ້າສູ່ສະພາ ສະຫະພັນທະລັດ ແລະເລືອກເອົາອີກຫລາຍກວ່ານັ້ນ ເຂົ້າສູ່ສະພາແຫ່ງລັດ. ຂະບວນແຫ່ສະຫຼອງໄຊ ຊະນະ ຂອງພັກ DAP ແລະ ພັກ ເຈຣາກັນ ຢູ່ ກົວລາລໍາເປີ ໃນມື້ຕໍ່ມາມີ ລາຍງານວ່າ ຢ່າງໜ້ອຍ ລັດຖະບານຂອງລັດໜຶ່ງ ຫລື ອາດຈະສາມລັດ ອາດ ຕ້ອງຍຸບໄປ ເພາະຫົວໜ້າຄະນະລັດຖະມຸນຕີ ບໍ່ແມ່ນຄົນມາເລ ຈຶ່ງເກີດມີການເດີນ ຂະບວນປະທ້ວງ ໂດຍການສະໜັບສະໜຸນຂອງ ພັກ UMNO.

ໃນວັນທີ 13 ພຶດສະພາ ແລະ ຕໍ່ມາໄດ້ກາຍເປັນການຈະລາຈົນ ຕະ ຫລອດສີ່ມື້ ຢູ່ໃນຕົວເມືອງແລະອ້ອມຮອບເມືອງ (ແລະມີການລະເບີດ ຂຶ້ນອີກ ໃນ ອາທິດຕໍ່ໆມານັ້ນໂລດ) ມີຜູ້ຄົນເສຍຊີວິດເຖິງສອງຮ້ອຍຄົນ. ເຫດການໃນວັນທີ 13 ພຶດສະພາ ເຖິງວ່າ ເປັນເລື່ອງລະດັບທ້ອງຖິ່ນ ແລະເກີດຂຶ້ນອ່າວໄວວາແດ່ກໍຕາມ ມັນ ກໍໄດ້ເຮັດໃຫ້ຜູ້ຄົນຝ່າຍຕ່າງໆ ເກືອບທັງໝົດຂອງສັງຄົມມາເລເຊຍ ຕື່ນຕົກໃຈຫຼາຍ ແລະຫລາຍຄົນໄດ້ແນມເບິ່ງເຫດການນັ້ນດ້ວຍຄໍາຖາມແຂງກະດ້າງຂໍ້ໜຶ່ງ ວ່າຊີວິດ ທາງການເມືອງ ແລະ ເສດຖະກິດໄດ້ຖືກຊັກຈູງມາ ຕັ້ງແຕ່ ປີ 1957 ດ້ວຍ

ມູນຖານອັນໃດ. ດ້ວຍການປະກາດພາວະສຸກເສີນ ແລະລັດຖະສະພາ ກໍຖືກຍຸບໄປ ແລະ ມີສະພາປະຕິບັດການແຫ່ງຊາດ (National Operation Council - NOC) ຂຶ້ນມາແທນ ມີສະມາຊິກ ເປັນທັງທະຫານແລະຕຳຫລວດ ພ້ອມທັງຂ້າລາຊະການ ຝ່າຍການເມືອງແລະພົນລະເຮືອນ, ຫນ້າທີ່ວຽກງານທີ່ຕ້ອງລົງມືເຮັດ ແມ່ນການປະ ເມີນສະພາບການວ່າ ເປັນຫຍັງຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ຈຶ່ງພັງທະ ລາຍລົງ ແລະ ຈະຕ້ອງເຮັດຫຍັງແດ່ ເພື່ອແກ້ໄຂສະຖານະການນັ້ນ.

ການປະເມີນສະຖານະການ ມີຢູ່ຫລາຍດ້ານ ແຕ່ຢ່າງຫນ້ອຍ ໃນແວດວົງ ທາງການ ມີທ່າອຽງຢາກບອກວ່າ ຊາວມາເລຈຳນວນຫລາຍໄດ້ສູນເສຍຄວາມເຊື່ອຖື ຕໍ່ສະມັດຖະພາບຂອງຄະນະຜູ້ຈັດການ ຍຸກກ່ອນໄດ້ເອກະລາດ ກັບ ນະໂຍບາຍ ຂອງພວກເຂົາ ທີ່ໃຫ້ໄວ້ໃນຄຳຫມັ້ນສັນຍາ ເຊັ່ນວ່າ ຈະໃຫ້ສ່ວນແບ່ງຊັບສົມບັດຂອງ ຊາດຫລາຍລື່ນຫມູ່ ແລະ ແຕະຕ້ອງຫນ້ອຍທີ່ສຸດ ຕົວກຳນົດທາງວັດທະນະທຳທີ່ສຳ ຄັນ ຂອງສັງຄົມໃຫມ່ ເຊັ່ນ ພາສາ ເປັນຕົ້ນ. ສຳລັບຊາວຈີນ ເຊິ່ງມີຈຳນວນພົນຫລາຍ ກໍພາກັນແຄ້ນເຄືອງຂຶ້ນ ຍ້ອນການຮັບປະກັນໂດຍລັດຖະທຳມະນູນ ໃຫ້ຊາວມາເລ ມີອະພິສິດບາງຢ່າງ ຫລື ໂອກາດພິເສດ ແຕ່ຍ້ອນພົບວ່າ ມີກຳລັງໃຫມ່ເກີດຂຶ້ນຈາກ ການລົງຄະແນນສຽງ ຈຶ່ງເຮັດໃຫ້ສະພາບການ ຫັນມາສູ່ລັດທິຊາດໃຫຍ່ (Chauvinism) ຢູ່ໃນການສະແດງອອກທາງການເມືອງ ເພື່ອແກ້ໄຂສະຖານະການ. ການ ແກ້ບັນຫາ ສະເຫນີໂດຍລັດຖະບານ ແລະ ຄະນະປະຈຳການ ເຊິ່ງສ່ວນໃຫຍ່ເປັນ ຕົວແທນຂອງສະພາທີ່ປຶກສາແຫ່ງຊາດ (NCC) ສ້າງຕັ້ງຂຶ້ນປີ 1970 ເປັນຜົນໃຫ້ມີ ການປະກອບສ້າງລັດຖະບານ ໂດຍ ລັດຖະສະພາໃນເດືອນກຸມພາ 1971 ແຕ່ເປັນ ໄປຕາມນະໂຍບາຍຕ່າງ ທີ່ດຳເນີນມາແບບແຕກຕ່າງຢ່າງຂາດຂັ້ນກັບອັນເປັນມາໃນ ເມື່ອກ່ອນ.

ການປ່ຽນແປງສຳຄັນຫລາຍອັນ ຫຍໍ້ໃຈຄວາມລົງໄດ້ງ່າຍໆ ວ່າຢູ່ພາຍໃນຫົວ ເລື່ອງກ່ຽວກັບ ກົດຫມາຍລັດຖະທຳມະນູນ ເສດຖະກິດ ແລະ ການເມືອງ. ໃນດ້ານ ລັດຖະທຳມະນູນນັ້ນ ຫັນກັບມາຫາການມີລັດຖະບານແບບມີລັດຖະສະພາ ໂດຍມີ

ຂໍ້ກຳນົດກ່ຽວກັບການຜ່ານກົດໝາຍລັດຖະທຳມະນູນ ແກ້ໄຂດັດແປງຕື່ມ ເຊິ່ງເຖິງ ວ່າຊັບຊ້ອນ ແຕ່ກໍເຫັນໄດ້ວ່າມີຈຸດປະສົງໃຫຍ່ຢູ່ສອງອັນ ຄື: ນຶ່ງ-ບໍ່ໃຫ້ເວົ້າບັນຫາ ອັນສະດຸ້ງໄວບາງຢ່າງ ຢູ່ໃນການສົນທະນາຖົກຖຽງກັນໃນທີ່ສາທາລະນະ (ຮວມທັງຢູ່ ໃນສະພາ) ໂດຍບັນຈຸໄວ້ໃນ ລັດຖະທຳມະນູນແລ້ວຮຽບຮ້ອຍ (ໂດຍສະເພາະຕຳ ແໜ່ງພິເສດຂອງຊາວມາເລ ແລະ ສະຖານະພາບຂອງຜູ້ປົກຄອງ) ແລະ ສອງ-ເພື່ອ ເພີ່ມຈຳນວນຊາວມາເລ ກັບ "ລູກຊາຍຂອງແຜ່ນດິນ" ຜູ້ອື່ນໆ ໃຫ້ໄດ້ຮັບການສຶກສາ ລະດັບມະຫາວິທະຍາໄລຫລາຍຂຶ້ນ. ໃນດ້ານອຸດົມການ ຄະນະເອກະພາບແຫ່ງຊາດ ເຊິ່ງເປັນຄະນະໃຫມ່ ກໍໄດ້ວາງ "ຫລັກການແຫ່ງລັດ" ອອກມາຊຸດໜຶ່ງ ອັນປະກອບ ດ້ວຍການສິ່ງເສີມ ໃຫ້ມີຄວາມຊື່ສັດ ບໍລິສຸດໃຈ (ເຊັ່ນ ຄວາມເຊື່ອ ສັດທາ ໃນພະ ເປັນເຈົ້າ, ຄວາມຈົງຮັກພັກດີຕໍ່ກະສັດ ແລະ ປະເທດຊາດ, ຍົກສູງກົດໝາຍລັດຖະ ທຳມະນູນ, ກົດໝາຍບ້ານເມືອງ ແລະ ການປະພຶດໃນສິນທຳ), ຕ້ອງມີຄວາມພະຍາ ຍາມ ໃນການປະຕິບັດ ຜ່ານອົງການສະຖາບັນຕ່າງໆ ທັງຂອງລັດຖະການ ແລະ ນອກ ລັດຖະການ ເພື່ອປູກຝັງຄວາມຮູ້ສຶກອັນດຽວກັນ ກ່ຽວກັບເອກະລັກແລະເປົ້າໝາຍ ແຫ່ງຊາດ. ນອກຈາກນີ້ ຕ້ອງເຮັດໃຫ້ສະຖານະພາບຂອງພາສາມາເລ ທີ່ກາຍເປັນ ພາສາທາງການແຫ່ງຊາດ ພາສາດຽວ ຕາມລັດຖະທຳມະນູນແລ້ວນັ້ນ ເຂັ້ມແຂງຂຶ້ນ ແລະກາຍເປັນນະໂຍບາຍໃຫມ່ ເລັ່ງລັດໃຫ້ຮັບເອົາພາສານີ້ ໃນຖານະເປັນພາຫະນະ ແຫ່ງການສຶກສາ ນຳໃຊ້ຢູ່ໃນໂຮງຮຽນທຸກລະດັບ ໃຫ້ປາກົດເປັນຈິງ.

ການປ່ຽນແປງທີ່ຊັກຊ້າກວ່າໝູ່ ບາງອັນ ກໍໃຫ້ຜົນກະທົບລະຍະຍາວຕາມ ເຈດຕະນາລົມຂອງມັນນັ້ນແມ່ນ ຢູ່ໃນຂົງເຂດເສດຖະກິດ. ສິ່ງທີ່ຊາບຊຶມຢູ່ໃນເນື້ອໃນ ນັ້ນ ບັດນີ້ ໄດ້ກາຍມາເປັນ "ນະໂຍບາຍເສດຖະກິດໃຫມ່" (New Economic Policy - NEP) ແລະ ໄດ້ຈັດໄວ້ຢູ່ໃນແຜນພັດທະນາຢູ່ມາເລເຊຍຫລາຍຊຸດ ຊຸດລະ 4 ປີ, ນະໂຍບາຍເສດຖະກິດໃຫມ່ແຫ່ງຊາດ ມີຈຸດປະສົງສອງອັນ ຄື: ການຫລຸດ ຜ່ອນແລະລົບລ້າງຄວາມທຸກຍາກໃຫ້ຫມົດໄປ, ໂດຍບໍ່ຄຳນຶງວ່າຈະແມ່ນຊຸມຊົນໃດ ແລະ ການປັບໂຄງສ້າງໃຫມ່ຂອງສັງຄົມ ເພື່ອເຮັດໃຫ້ການຈຳແນກຊຸມຊົນ ຕາມບົດ ບາດທາງເສດຖະກິດ (ແລະ ຊາຕາກຳ) ຄ່ອຍໆຫລຸດຜ່ອນລົງ ຈົນຫມົດກ້ຽງໄປ.

ອົງປະກອບໃຈກາງ ຂອງຈຸດປະສົງທີສອງ ແມ່ນການກະຈາຍຄືນ ສິດເປັນເຈົ້າແລະ ການຄອບຄຸມເສດຖະກິດຂອງຊາວມາເລ. ໃນທິດທາງແບບນີ້ ເມື່ອຮອດປີ 1990 ຊາວມາເລ ກັບລູກຊາຍຂອງແຜ່ນດິນ ທຸກຄົນຕ້ອງໄດ້ເປັນເຈົ້າຂອງ ແລະເປັນຜູ້ຈັດ ຫົນການຄ້າ ແລະອຸດສາຫະກຳຂອງລັດເຖິງ 30% ຊາວມາເລອື່ນໆອີກ 40% ແລະ ຊາວຕ່າງດ້າວ 30%, ກົງກັນຂ້າມກັບອັນທີ່ຄາດຄະເນໄວ້ ຄື 1.9%, 22.5% ແລະ 60.7% ເປັນລຳດັບ ໃນປີ 1970. ເຖິງວ່າ ໄດ້ນຳເອົາຍຸດທະສາດແບບຕ່າງໆມາໃຊ້ ເພື່ອໃຫ້ບັນລຸຈຸດປະສົງເຫລົ່ານີ້ ເຊັ່ນການຈັດຂອບເຂດສິດອຳນາດຕາມສະຖານະມີ ລັດອຸປະຖຳ ເພື່ອຈັດຊື້ ແລະ ຖືຫຸ້ນ ໃນບໍລິສັດຂອງລັດ ຮວມທັງສ່ວນທີ່ເປັນຂອງຕ່າງ ດ້າວ ຈຳນວນຫລວງຫລາຍ ໃນນາມຂອງລູກຊາຍຂອງແຜ່ນດິນ (ພູມິບຸດຕຣະ) ແລ້ວ ກໍຕາມ ມາຮອດຊຸມກາງປີ 1980 ມັນກໍຍັງບໍ່ຈະແຈ້ງຢູ່ວ່າ ຍັງຕ້ອງໄປອີກໄກເທົ່າໃດ ຫລືວ່າ ສັງຄົມຍັງຈະຕ້ອງສູນເສຍຫຍັງອີກແດ່ ໃຫ້ກັບຄວາມບໍ່ເທົ່າທຽມກັນ ໃນຮູບການ ໃຫມ່ ທີ່ອາດຕ້ອງເກີດຂຶ້ນໄດ້.

ທາງດ້ານການເມືອງ ການພັດທະນາທີ່ສຳຄັນ ພາຍຫລັງກັບຄືນມາໃຊ້ລະ ບົບລັດຖະບານແບບມີສະພາ ສະແດງອອກໃຫ້ເຫັນຢູ່ໃນການເລືອກຕັ້ງໃຫຍ່ປະຈຳປີ 1974, 1978, 1982 ແລະ 1986, ແມ່ນວິວັດທະນາການຂອງຕົວແບບພັນທະມິດ ເພື່ອການປອງດອງທາງການເມືອງ ເຂົ້າຢູ່ໃນ ແນວໂຮມແຫ່ງຊາດ (Barisan Nasional) ເລີ່ມຕົ້ນປະຕິບັດໂດຍ ຕຸນ ອັບດຸລ ຣາຊັກ (Tun Abdul Razak) ຜູ້ສືບ ທອດທາງການເມືອງ ຂອງ ເຕັ້ງກູ ອັບດຸລ ຣາມານ ແລະເປັນນາຍົກລັດຖະມຸນຕີ ຈົນເສຍຊີວິດ ໃນປີ 1976 ທີ່ນຳໃຊ້ຍຸດທະສາດການເລືອກຕັ້ງ ໃນຕົ້ນຊຸມປີ 1970. ໃນນັ້ນ ບາງຢ່າງຄືກັນກັບສິ່ງທີ່ຝ່າຍພັນທະມິດ ໄດ້ເລີ່ມໄວ້ແຕ່ປີ 1951 ຄື ພັກ ແນວໂຮມແຫ່ງຊາດ ທີ່ເປັນການປະສົມພັກເລັກພັກນ້ອຍເຂົ້າກັນ ປະມານສິບພັກ (ຈຳນວນສະມາຊິກ ບໍ່ຢູ່ເກົ່າ) ໂດຍມີ UMNO ຄອບຄອງສ່ງສ່ວນຫລາຍ ເຊິ່ງສະໄໝ ກ່ອນນັ້ນ ໄດ້ເປັນຝ່າຍຄ້ານ ແຕ່ບັດນີ້ ມີໂອກາດໄດ້ເຂົ້າຮ່ວມເປັນພັກລັດຖະບານ. ທ່າດີອັນຕົ້ນຕໍຂອງຕົວແບບສະຫະກອນ ຂອງພັກແນວໂຮມແຫ່ງຊາດ ກໍຄື ມັນເຮັດ ໃຫ້ພັກກາຍເປັນຫຸ້ນສ່ວນກັບກຸ່ມພວກຫົວໜ້າຊາວຈີນ ຫລາຍກວ່າກຸ່ມທີ່ເປັນຕົວແທນ

ຂອງ MCA ທີ່ນັບມື້ນັບອ່ອນແອລົງ ເຊິ່ງກໍມີຜົນກະທົບທາງການເມືອງ ເຮັດໃຫ້ການສ້າງຄວາມແຕກຕ່າງພາຍໃນກະໂຕຊຸມຊົນມາເລເອງມິດລົງ ຢ່າງຫນ້ອຍກໍຊົ່ວລະຍະຫນຶ່ງ.

ມາເລເຊ ເມື່ອກ້າວເຂົ້າສູ່ເຄິ່ງທ້າຍຊຸມປີ 1980 ນັ້ນ ແຕກຕ່າງກັບ ມາເລເຊ ເມື່ອຊຸມກາງປີ 1940 ຫລາຍ, ເປັນສັງຄົມແບບໃນເມືອງຫລາຍຂຶ້ນ (ໂດຍສະເພາະ ຊາວມາເລ ດຳລົງຊີວິດໃນຕົວເມືອງ ມີອັດຕາສ່ວນສູງຂຶ້ນຫລາຍ) ແລະເຖິງວ່າລາຍໄດ້ສ່ວນຫລາຍຂອງປະເທດ ຍັງມາຈາກການຜະລິດຂັ້ນພື້ນຖານ ແຕ່ກໍມີພາກອຸດສະຫະກຳທີ່ສຳຄັນ ແລະ ກຳລັງເຕີບໃຫຍ່. ຜະລິດຕະພັນດ້ານນ້ຳມັນດິບ (ເປໂຕຣລຽມ) ເຂົ້າມາແທນບ່ອນການຜະລິດຢາງ ໃນຖານະເປັນແຫລ່ງລາຍຮັບຕົ້ນຕໍ ແລະ ແມ່ນແຕ່ພາຍຫລັງການຕົກຕ່ຳທາງດ້ານເສດຖະກິດໃນຕົ້ນຊຸມປີ 1980 ມາເລເຊ ກໍ ຍັງເປັນປະເທດທີ່ຮັ່ງມີກວ່າປະເທດໃກ້ຄຽງ ເກືອບທັງຫມົດ ເຖິງວ່າຍັງມີຄວາມທຸກຍາກອັນຍິດເຍື້ອ ຢູ່ໃນຊົນນະບົດແດ່ກໍຕາມ. ການເຂົ້າໄປແຊກແຊງຂອງລັດຫລາຍຂຶ້ນ ໃນເລື່ອງເສດຖະກິດ ເພື່ອເຂົ້າໄປເປັນເຈົ້າກຳມະສິດ ແລະ ຄວບຄຸມເປົ້າຫມາຍຂອງ ນະໂຍບາຍເສດຖະກິດໃຫມ່ (NEP) ໄດ້ມີຜົນໃຫ້ເກີດຊົນຊັ້ນ "ຂ້າລາຊະການນາຍທຶນນ້ອຍ" ຊາວມາເລ ເປັນຈຳນວນຫລາຍຂຶ້ນ ໃນເມື່ອບໍ່ໄດ້ໃຫ້ຄວາມຊ່ວຍເຫຼືອໂດຍກົງແກ່ປະຊາກອນຈຳນວນໃຫຍ່ທີ່ເປັນ ລູກຊາຍຂອງແຜ່ນດິນ ແລະ ຜູ້ບໍ່ເປັນ "ພູມິບຸດຕຣະ" ກໍເກີດຄວາມບໍ່ພໍໃຈເຊັ່ນກັນ. ບັນຫາເລື່ອງຊົນຊາດຊົນເຜົ່າ ຍັງຄົງເປັນກຳລັງຂັ່ງຊາທາງການເມືອງ ແລະ ພຶດຕິກຳທາງສັງຄົມ (ພ້ອມກັບການຟື້ນຟູຂະບວນການ ອິດສະລາມ ດາກວາທ ຢູ່ໃນຫມູ່ຊາວມາເລ) ທັງໆທີ່ ການຊົມໃຊ້ພາສາມາເລເປັນທາງການ ໄດ້ເຕີບໃຫຍ່ຂະຫຍາຍວົງກ້ວາງ ແລະ ບູລະນາການດ້ານວັດທະນະທຳອື່ນໆ ກໍມີຂຶ້ນຢ່າງປະຈັກຕາ. ຍັງມີບັນຫາອື່ນໆອີກຫລາຍຢ່າງຢູ່ ແຕ່ດ້ວຍວ່າ "ການສ້າງຊາດ" ໃນລະຍະ 40 ປີ ຜ່ານມານີ້ ໄດ້ຊີ້ໃຫ້ເຫັນວ່າ. "ຄົນມາເລເຊຍໃຫມ່" ມີທຶນແຮຢ່າງຫລວງຫລາຍໃນພາກການປະດິດສ້າງ ການອຸດສາຫະກຳ ແລະ ການປ່ຽນແປງ ເພື່ອນຳພາເຂົາເຈົ້າໄປສູ່ ອະນາຄົດ.

ປະເທດສິງກະໂປ

ສິງກະໂປ ຄືບຫນ້າໄປສູ່ຄວາມເປັນເອກະລາດຊັກຊ້າກວ່າ ມາລາຢູ ທັງນີ້ ດ້ວຍວ່າ ຕົ້ນຕໍແລ້ວ ແມ່ນຄວາມຢ້ານກົວຂອງອັງກິດ ຕໍ່ການທີ່ວ່າ ເກາະດອນ ທີ່ເຕັມແຕ່ຊາວຈີນແຫ່ງນີ້ ກັບຖານທັບຂອງຕົນ ອາດຈະຕ້ອງສູນເສຍໃຫ້ແກ່ຝ່າຍກອມມູນິດ. ໃນປີ 1951 ບັນດາສະຖາບັນທີ່ມີບໍລິສັດຕົວແທນ ໄດ້ເຂົ້າມາໃນປະເທດ ແລະ ສາມປີຕໍ່ມາ ຄະນະກຳມະການຮ່າງລັດຖະທຳມະນູນຊຸດຫນຶ່ງ ກໍໄດ້ຮັບຮອງເອົາມາຕະການອັນສຳຄັນໃນການມີສ່ວນຮ່ວມຫລາຍຂຶ້ນ ແລະການປົກຄອງຕົນເອງ. ຫລັງຈາກການເລືອກຕັ້ງ ປີ 1955 ພັກແນວໂຮມແຮງງານປົກຊ້າຍສາຍກາງ ນຳພາ ໂດຍ ເດວິດ ມາຣ໌ຊາລ (David Marshall) ທະນາຍຄວາມສິງກະໂປ ເຊື້ອສາຍຢິວ ກໍສາມາດຈັດຕັ້ງລັດຖະບານປະສົມ ຮ່ວມກັບສະມາຊິກພັກ UMNO ແລະ MCA ໄດ້. ໃນການໄປຢ້ຽມຢາມ ລອນດອນ ຢ່າງມີຜົນສຳເລັດຂອງ ເຕັງກູ ອັບດູລ ຣາມານ ເມື່ອຕົ້ນປີ 1956 ເຊິ່ງເຮັດໃຫ້ເຂົາໄດ້ຮັບການຢືນຢັນກ່ຽວກັບເອກະລາດສຳລັບມາລາຢູ ຊຸກຍູ້ໃຫ້ ມາຣ໌ຊາລຟ້າວຈັດການເດີນທາງແບບດຽວກັນໃນເດືອນຫັນວາ. ຕໍ່ມາ ມາຣ໌ຊາລຈຶ່ມວ່າ ເຂົາພໍພຽງແຕ່ໄດ້ຮັບ "ເຂົ້າຫນົມກອນບຸນຄຣິດສະມາດໃສ່ສານເບື່ອ" ເທົ່ານັ້ນ ຄື ເອກະລາດອັນຈຳກັດ ທີ່ມີອັງກິດຄວບຄຸມຢູ່ ທັງດ້ານການປ້ອງກັນຊາດ ແລະການຮັກສາຄວາມສະຫງົບພາຍໃນ. ການກ່ຄວາມວຸ່ນວາຍ ໃນໂຮງຮຽນມັດທະຍົມ ແລະ ຊາວຜູ້ອອກແຮງງານ ທີ່ແພ່ກະຈາຍອອກຢ່າງໄວວາ ແຮ່ງເຮັດໃຫ້ເຂົາຖືກເສຍຫາຍ. ມາຣ໌ຊາລ ລາອອກ ແລະ ມີຫົວຫນ້າລັດຖະມຸນຕີຄົນຈີນ ຜູ້ທຳອິດຂອງລະບອບອານານິຄົມ ຂຶ້ນມາແທນ ຄື ລິມ ຢູ ຮ໋ອກ (Lim Yew Hock) ຕະຫລອດເວລານຶ່ງປີ ເຂົາໄດ້ພະຍາຍາມຕໍ່ສູ້ຢ່າງແຂງຂັນເພື່ອຮຽກຮ້ອງ ກ່ຽວກັບການແຍກຕົວອອກ ແຕ່ຫາກມີການພົວພັນໃກ້ຊິດກັບອັງກິດ. ຈີນໃນທີ່ສຸດ ກໍໄດ້ຮັບຄຳຫມັ້ນສັນຍາອັນຫນັກແຫນ້ນກ່ຽວກັບເອກະລາດໃນປີ 1959.

ໃນການເລືອກຕັ້ງປີນັ້ນ ພັກແນວໂຮມແຮງງານ ສູນເສຍການສະຫນັບສະຫນຸນຂອງຜູ້ຄົນທີ່ຮຽນມາແຕ່ຈີນ ຈັ່ງຊັ້ນ ໄຊຊະນະກໍຈຶ່ງຕົກໄປເປັນຂອງ ພັກກິດຈະປະຊາ

ຊິນ (PAP) ດ້ວຍຄະແນນສຽງ ລົ້ນຢ່າງຖ້ວມລົ້ນ, ພັກກິດຈະປະຊາຊິນ ມີນັກກິດ ຫມາຍຜູ້ສຳເລັດການສຶກສາມາຈາກ ມະຫາວິທະຍາໄລ ແຄມບຣິຊ ຂອງອັງກິດ ຊຶ ລີ ກວນ ຢູ (Lee Kuan Yew) ເປັນຜູ້ນຳ, ພັກນີ້ ເປັນພັກສັງຄົມນິຍົມ ໃນພາກປະຕິບັດແທ້ ເຊິ່ງໃນປີຕ່ໆມາ ໄດ້ເຄື່ອນຫນ້າມາເປັນຂວາ ຢ່າງເຫັນໄດ້ຄັກ ໂດຍໄດ້ຮັບການສະຫນັບສະຫນຸນ ຢ່າງກ້ວາງຂວາງຈາກກຳມະກອນຈີນ ດ້ວຍການ ເຮັດວຽກຢ່າງໃກ້ຊິດກັບຝ່າຍຊ້າຍ ແລະ ກຸ່ມກອມມູນິດ ທີ່ເນັ້ນຫນັກເລື່ອງທິດສະດີ. ເຖິງຢ່າງໃດກໍດີ ຄວາມເປັນພັນທະມິດ ລະຫວ່າງປີກຂວາກັບປີກຊ້າຍຂອງພັກ ເຊິ່ງກໍ ຍາກລຳບາກຢູ່ແລ້ວນັ້ນ ເລີ່ມຫລຸດຜ່ອນລົງແດ່ ເມື່ອຂັ້ນນຳຂອງພັກເຫັນວ່າ ຄຳສອນ ສັງຄົມນິຍົມ ເຂົ້າກັນບໍ່ໄດ້ດີ ກັບການຕ້ອງໄດ້ເອື່ອຍອີງອາໄສເງິນທຶນທ້ອງຖິ່ນ ແລະ ສາກົນ ເພື່ອການດຳລົງຄົງຕົວຢູ່ຂອງລັດເອງ ຈົນໃນທີ່ສຸດ ກໍເຖິງບັ້ນແຕກຫັກກັນ ໃນ ປີ 1961. ບັນຫາການແຕກອອກຈາກກັນຢູ່ຂັ້ນນີ້ ແມ່ນເລື່ອງຂໍ້ສະເຫນີໃຫ້ເຂົ້າຮ່ວມ ກັບມາເລເຊຍ ເຊິ່ງ ລີ ກວນ ຢູ ກັບຜູ້ໃກ້ຊິດຂອງເຂົາ ເຫັນດີເຫັນງາມເປັນທີ່ສຸດ ແຕ່ ຖືກຄັດຄ້ານ ໃນຖານະວ່າເປັນແຜນທຳລາຍຂອງພວກອານານິຄົມໃຫມ່ຢ່າງຮຸນແຮງ ຈາກປີກຊ້າຍໃນພັກ ເຊິ່ງຕໍ່ມາ ໄດ້ແຍກຕົວອອກແລະສ້າງຕັ້ງພັກໃຫມ່ ຄື ພັກ ບາຣິ ສານ ສັງຄົມນິຍົມແນວໂຮມແຫ່ງຊາດ (Barisan Socialis) ເຖິງວ່າ ພັກກິດຈະ ປະຊາຊິນ ຍັງຢູ່ໃນອຳນາດກໍຕາມ ແຕ່ກໍໄດ້ຮຽນຮູ້ນຳໃຊ້ການຄວບຄຸມພາກສ່ວນຍິບ ຍ່ອຍ ທີ່ອຸບັດຂຶ້ນພາຍໃນພັກຢ່າງເຂັ້ມງວດຫນັກຂຶ້ນ ແລະເລີ່ມຈັດຕັ້ງອົງການຣາກ ຖານ ທີ່ສາມາດດຳເນີນການຄວບຄຸມດ້ານສັງຄົມໄດ້ເປັນຢ່າງດີ ເຊິ່ງຕະຫລອດຊຸມປີ 1980 ຍັງຄົງເປັນສັນຍະລັກແຫ່ງຄວາມສຳເລັດຢູ່.

ການຮອບສິດອຳນາດ ຂອງ PAP ໃນເວລານັ້ນ ເຂົ້າເປັນປີກແຜ່ນ ນຳພາ ໄປເຖິງການຮວມຕົວເຂົ້າກັບມາເລເຊຍ ເມື່ອເດືອນສິງຫາ 1963 (ແລະ ການເລືອກ ຕັ້ງ ໃນເດືອນຕໍ່ມາ ເຊິ່ງໃນໂອກາດນີ້ ພັກມີໄຊຊະນະ ໄດ້ 37 ບ່ອນນັ່ງຕໍ່ 57 ໃນ ສະພານິຕິບັນຍັດ) ໄດ້ມີເຫດການບັງເອີນເຂົ້າມາຊ່ວຍ ຢ່າງສຳຄັນ ຄືການຈັບກຸມ ຄຸມຂັງລະຍະຍາວ ພວກຜູ້ນຳສັງຄົມແຫ່ງຊາດ (ບາຣິສານ) ເມື່ອຕົ້ນປີ ໃນຂໍ້ຫາສົມ ຮູ້ຮ່ວມຄິດ ກັບພວກກະບົດໃນບຣູນາຍ ກ່ອນເດືອນທັນວາ ໂດຍມີການຮູ້ເຫັນເປັນໃຈ

ກັບນະໂຍບາຍແບບປະເຊີນໜ້າຂອງອິນໂດເນເຊ. ຢ່າງໃດກໍຕາມ ເຖິງວ່າການເປັນສະມາຊິກກະພາບຢູ່ໃນມາເລເຊ ແລະ ດ້ວຍຄວາມພະຍາຍາມ ຂອງ PAP ໝາຍເຖິງການນຳເອົາບັນຫາຕົນເອງເຂົ້າມາກ່ຽວພັນຢູ່ກັບ ການເມືອງຂອງສະຫະພັນ ໂດຍບໍ່ເອົາໃຈໃສ່ ຕໍ່ຄວາມຮູ້ສຶກສະດຸ້ງໄວໃນເລື່ອງບັນຫາຊົນເຜົ່າ ທີ່ຫລາກຫລາຍສັບສົນ ແລະ ສະພາບສັບປົນລະຫວ່າງ ຊົນນະບົດກັບເມືອງໃນແຫລມມາເລເຊ ກໍໄດ້ເຮັດໃຫ້ພັກ ສ້າງຄວາມເປັນປໍລະປັກກັບມາເລເຊຫລາຍຂຶ້ນ. ເຫດການຮຸນແຮງຂຶ້ນເຖິງຈຸດສູງສຸດ ສິງກະໂປຖືກຂັບໄລ່ອອກຈາກສະຫະພັນ ໃນເດືອນສິງຫາ ປີ 1965. ນະຄອນລັດ ເຊິ່ງບັດນີ້ເປັນເອກະລາດຢ່າງສົມບູນ (ປະຊາກອນ 1.75 ລ້ານຄົນ) ກໍໄດ້ມາປະເຊີນໜ້າກັບອະນາຄົດ ການເປັນປໍລະປັກຂອງປະເທດໃກ້ຄຽງ ທີ່ກວ້າງໃຫຍ່ ມີອຳນາດຫລາຍກວ່າ ແຕ່ຕົນເອງຊໍ້າມີຊັບພະຍາກອນແຕ່ພຽງໜ້ອຍດຽວ ທີ່ເປັນມູນມັງສືບມາຈາກການມີຖານະເປັນຄັງສາງມ້ຽນສິນຄ້າຂອງພາກພື້ນ ກັບ ຄວາມສະຫຼາດດຸໝັ່ນຂອງປະຊາກອນເທົ່ານັ້ນ.

ເພື່ອຊໍ້າເຕີມສິງກະໂປຂຶ້ນອີກ ອັງກິດໄດ້ປະກາດໃນປີ 1968 ວ່າ ນັບແຕ່ປີ 1970 ໄປ ອັງກິດ ຈະຍົກເລີກບົດບາດທາງການທະຫານຂອງຕົນໃນ ສິງກະໂປ ເຊິ່ງຖານທັບນີ້ແມ່ນຕົວເກື້ອກູນທີ່ສຳຄັນ ສຳລັບເສດຖະກິດຂອງສິງກະໂປ. ພັກກິດຈະປະຊາຊົນ ໄດ້ກ້າວເຂົ້າສູ່ການທ້າທາຍເຫລົ່ານີ້ ດ້ວຍການກຳນົດ “ແນວທາງການເມືອງ ເພື່ອຢູ່ລອດ” ແລະການວາງລະບຽບວິໄນໃຫ້ແກ່ຕົນເອງ ເພື່ອສ້າງ “ສັງຄົມຂອງຜູ້ບຸກບືນ” ໃຫ້ແກ່ລັດ ແລະ ວາງມາດຕະການຕ່າງໆຂຶ້ນມາ ເພື່ອແນໃສ່ ທັງປຸກລະດົມທົ່ວສັງຄົມ ຄວບຄຸມສັງຄົມ ເພື່ອຄວາມເຕີບໃຫຍ່ທາງເສດຖະກິດ ໂດຍອາໄສການດຶງດູດເອົາທຶນຮອນຈາກຕ່າງປະເທດ ມາພັດທະນາອຸດສາຫະກຳ ໂດຍສະເພາະ ໃນດ້ານເອເລັກໂຕຣນິກ ການສ້າງເຮືອ ແລະ ສ້ອມແຊມເຮືອ, ການກັ່ນນ້ຳມັນດິບ ແລະ ການຄົມມະນາຄົມ ທັງໃນພາກພື້ນ ແລະ ສາກົນ. ນັບເປັນສອງທົດສະວັດ ຕັ້ງແຕ່ 1965 ມາ ສິງກະໂປ ໄດ້ປະສົບກັບຄວາມສຳເລັດແບບບໍ່ຄາດຄິດ ທັງໃນດ້ານການເມືອງ ແລະ ເສດຖະກິດ.

ໃນການເລືອກຕັ້ງທຸກໆສີ່ປີ ແລະ ຫ້າປີ ນັບຈາກປີ 1968 ມາ ຫາກາງປີ 1980 ພັກກິດຈະປະຊາຊົນ (PAP) ກວາດເອົາບ່ອນນັ່ງໃນສະພາ ນັບມື້ນັບຫລາຍຂຶ້ນ ຈັ່ງຊັ້ນໃນຕົວຈິງ ສິງກະໂປກໍເລີຍກາຍເປັນປະເທດທີ່ມີພັກດຽວໄປໃນຕົວ. ຂະບວນການນີ້ ໄດ້ຮັບການສະໜັບສະໜຸນ ຕັ້ງແຕ່ແຮກ ດ້ວຍການຈັບກຸມຄຸມຂັງ ຫົວໜ້າພັກຝ່າຍຄ້ານສືບຕໍ່ມາ ແລະ ດ້ວຍການຂວ້ຳບາດລະບົບການເລືອກຕັ້ງ ຂອງພັກສັງຄົມນິຍົມແຫ່ງຊາດ ແລະດ້ວຍການຈັດແຈງຢ່າງລະມັດລະວັງ ກັບຄະນະກຳມະການທີ່ເປີກສາປະຊາຊົນ ຜູ້ບໍ່ສັງກັດພັກ ກັບສາມາຄົມປະຊາຊົນໃນທຸກລະດັບ, ດ້ວຍການປະຕິບັດໜ້າທີ່ຢ່າງມີປະສິດທິພາບ ແລະປາສະຈາກການສໍ້ໂກງກິນສິນບົນ ເມື່ອລັດຖະບານມີອຳນາດຫລາຍຂຶ້ນ ແລະ ດ້ວຍການອອກລັດຖະກຳນົດ ວ່າດ້ວຍການບໍລິຫານສັງຄົມທີ່ຂະຫຍາຍກ້ວາງ ແບບທີ່ບໍ່ເຄີຍມີຢູ່ທີ່ໃດໃນອາຊີຕາເວັນອອກສຽງໃຕ້.

ໃນດ້ານເສດຖະກິດ ພັກກິດຈະປະຊາຊົນ ໄດ້ເຮັດໃຫ້ສິງກະໂປ ກ້າວຂຶ້ນເປັນໜຶ່ງ ໃນເລື່ອງເສດຖະກິດເບ່ັງບານ ປະສົບຄວາມສຳເລັດຢ່າງສູງ ໃນເລື່ອງມາຕະຖານການດຳລົງຊີວິດ ເປັນຮອງທີສອງໃນອາຊີ ຕ່ຳຈາກ ຍີ່ປຸ່ນເທົ່ານັ້ນ ແລະ ຍັງກ້າວໜ້າກວ່າປະເທດໃກ້ຄຽງອື່ນໆ ໃນອາຊີຕາເວັນອອກສຽງໃຕ້ໃນທຸກດ້ານ. ການຜັນປ່ຽນຈາກການເປັນຄັງສາງສິນຄ້າ ມາເປັນອຸດສາຫະກຳ ຜະລິດເຄື່ອງ ແລະ ການບໍລິການ ພ້ອມກັບການຄວບຄຸມແຮງງານຢ່າງເຂັ້ມງວດ ໂດຍຜ່ານກົດໝາຍການວ່າຈ້າງ ແລະ ກົດໝາຍວ່າດ້ວຍ ສາຍພົວພັນທາງອຸດສາຫະກຳ ປີ 1968 ເຮັດໃຫ້ລັດສາມາດຄົງອັດຕາການເຕີບໃຫຍ່ ຜະລິດພັນມວນຮວມແຫ່ງຊາດ (GDP) ທີ່ສູງຂຶ້ນເປັນສອງເທົ່າ ເມື່ອເກີດວິກິດການທາງເສດຖະກິດໂລກຕົກຕ່ຳ ໃນຕົ້ນຊຸມປີ 1980 ຕະຫລອດລະຍະນັ້ນ ໃຫ້ຢຸດຢູ່ເກົ່າແລະໄດ້ຫລຸດລົງແດ່ໜ້ອຍໜຶ່ງ ພ້ອມໆກັບການເຕີບໃຫຍ່ນີ້ ທາງລັດຖະບານ ໄດ້ລົງທຶນຢ່າງຫລວງຫລາຍໃສ່ການຟື້ນຟູປະເທດ ໃນເຂດຕົວເມືອງ, ການວາງແຜນນຳໃຊ້ທີ່ດິນ ແລະການຮຽກຮ້ອງເອົາທີ່ດິນຄືນ, ການພັດທະນາໂຄງລ່າງດ້ານການຂົນສົ່ງຄົມມະນາຄົມ ແລະ ສາທາລະນູປະໂພກທັງຫລາຍ.

ລະຍະຂ້າມຜ່ານຂອງ ສິງກະໂປ ຈາກການເປັນອານານິຄົມ ໃນປີ 1945 ມາເປັນລັດຮຸ່ງເຮືອງທີ່ສຸດ ດ້ວຍລະບອບລັດວິສາຫະກິດ ໃນອາຊີຕາເວັນອອກສຽງໃຕ້ ແລະ ເປັນສູນກາງການຄົມມະນາຄົມທີ່ສຳຄັນຂອງໂລກ ໃນຊຸມປີ 1980 ໄດ້ນຳເອົາຜົນປະໂຫຍດອັນຍິ່ງໃຫຍ່ຫລວງຫລາຍ ມາໃຫ້ແກ່ພົນລະເມືອງຂອງຕົນ ເຖິງຈະມີການແລກ ກັບເສລີພາບສ່ວນບຸກຄົນ ແລະການສະແດງອອກແດ່ກໍຕາມ. ປະຊາຊົນປະມານສອງສ່ວນສາມ ອາໄສຢູ່ໃນອາຄານຂອງລັດທີ່ຈັດສັນຂຶ້ນ ດ້ວຍຂໍ້ສະດວກການບໍລິການ ທັງດ້ານສັງຄົມ ວັດທະນະທຳ ສຸຂະອະນາໄມຢ່າງຄົບຊຸດ. ລະບົບການສຶກສາແບບບູລະນາການ ໂດຍເນັ້ນໜັກພາສາອັງກິດແລະພາສາແມ່ ພ້ອມດ້ວຍການຕອບແທນດີສຳລັບຜູ້ປະຕິບັດໜ້າທີ່ໃນລະດັບສູງນັ້ນ ເປັນການກະກຽມພວກເຂົາເຈົ້າສຳລັບຕອບສະໜອງຄວາມຕ້ອງການທາງດ້ານແຮງງານ ໃນເລື່ອງເຕັກໂນໂລຊີ. ໂຄງການສຳລັບການວາງແຜນຄອບຄົວ ທີ່ມີຜົນສຳເລັດພໍສົມຄວນນັ້ນ ກໍສາມາດຄາດໝາຍວ່າຈະຢຸດການຂະຫຍາຍຕົວຂອງພົນລະເມືອງ ລົງມາສູ່ລະດັບທີ່ເໝາະສົມໄດ້ ໃນທ້າຍສະຕະວັດນີ້. ແຕ່ຄຳຖາມ ກໍຍັງມີຢູ່ ກ່ຽວກັບລັກສະນະການຂ້າມຜ່ານຈາກຍຸກ ລີ ກວນ ຢູ ຫົວໜ້າພັກ PAP ໄປສູ່ຄົນຮຸ່ນໃໝ່ ແລະ ຄວາມພະຍາຍາມໃນເລື່ອງສ້າງສະຕິສຳນຶກຊາດ ເມື່ອລະຫວ່າງຊຸມປີ 1980 ເພື່ອຮັກສາທີ່ຕັ້ງຂອງ ລັດທິຂົງຈື້ ໄວ້ພາຍໃນວັດທະນະທຳຂອງຊາດນັ້ນ ຈຸງໃຈໃຫ້ ມີຜູ້ຕັ້ງຂໍ້ສັງເກດວ່າ ເອກະລັກ ແລະ ທິດທາງທາງສັງຄົມຂອງ ສິງກະໂປ ຈະເປັນແນວໃດແທ້? ແຕ່ ໃນດ້ານວັດຖຸ ສິງກະໂປ ຍັງສືບຕໍ່ ຄົງຄວາມເປັນຍອດໄວ້ ໃນເລື່ອງຂອງຄວາມສຳເລັດ.

ປະເທດ ບຣູນາຍ

ການປົກຄອງຂອງອັງກິດ ທີ່ຄືນກັບມາຫາ ບຣູນາຍ ໂດຍບໍ່ມີໃຜແຂ່ງຂັນນຳ ພາຍຫຼັງທີ່ຍີ່ປຸ່ນຍຶນຍອມ ໃນປີ 1945 ນັ້ນ ມີຈຸດປະສົງຕົ້ນຕໍ ຄື ການຟື້ນຟູການ ປົກຄອງແບບລັດໃນອາຮັກຂາຂອງອານິຄົມໃນນາມຂອງ ສຸລະຕານໂອມາ ອາລີ ຊາຍຟຸດດິນ ທີ 3 (Sultan Omar Ali Saifuddin III) ແລະການຟື້ນຟູ ບ່ໍນ້ຳມັນ ເຊຣິສ (Seris) ມາເຖິງປີ 1950 ບ່ໍນ້ຳມັນແຫ່ງນີ້ ກໍຜະລິດນ້ຳມັນອອກໄດ້ ຮອດ 100,000 ບາເຣນ ຕໍ່ມື້ ສ້າງລາຍຮັບເຖິງປີລະ 7 ລ້ານ ໂດລາສະຫະລັດ. ພຽງແຕ່ ສາມສິບປີຕໍ່ມາເທົ່ານັ້ນ ທັງທີ່ລັງເລໃຈໃນການທີ່ຈະຮັບເອົາເອກະລາດ ບຣູນາຍ (ເຊິ່ງ ເວລານັ້ນ ມີປະຊາກອນແຕ່ປະມານ ສອງແສນກວ່າຄົນ) ກໍມີເງິນທຶນແຮ ເປັນເງິນຕາ ຕ່າງປະເທດ ຮອດ 9 ຕື້ (ພັນລ້ານ) ໂດລາ ອັນເຮັດໃຫ້ ບຣູນາຍກາຍເປັນປະເທດທີ່ ຮ່ັງມີທີ່ສຸດໃນໂລກປະເທດຫນຶ່ງ ໂດຍສະເລ່ຍລາຍຮັບຕໍ່ຄົນ ແມ່ນແຕ່ໃນກຸ່ມປະເທດ ຜູ້ຜະລິດນ້ຳມັນທີ່ຮ່ັງມີຄືກັນ. ບຣູນາຍ ເມື່ອສະໄຫມຍັງບ່ໍທັນເປັນອິດສະລະນັ້ນ ກໍເປັນ ປະເທດຫນຶ່ງ ທີ່ມີປະຊາທິປະໄຕຫນ້ອຍທີ່ສຸດ.

ບົດບັນຍັດ ໃນລັດຖະທຳມະນູນ ປີ 1959 ເຊິ່ງມີສະພາເລືອກຕັ້ງມາສ່ວນ ຫນຶ່ງນັ້ນ ແມ່ນແຮງກະຕຸ້ນ ໃຫ້ເກີດມີການສະແດງຄວາມຄິດທາງການເມືອງອອກ ຫຼາຍຂຶ້ນ ຕົ້ນຕໍແລ້ວ ແມ່ນຜ່ານປີກຊ້າຍ ໃນພັກປະຊາຊົນ (People's Party) ເຊິ່ງ ນຳພາ ໂດຍ ເອ. ເອັມ. ອາຊາຮາຣິ (A.M. Azahari) ເຖິງວ່າ ພັກການເມືອງພັກນີ້ ໄດ້ບ່ອນນັ່ງທັງຫມົດ 16 ບ່ອນ ໃນການເລືອກຕັ້ງ ເມື່ອເດືອນສິງຫາ 1962 ແຕ່ພັກ ການເມືອງນີ້ ກໍຍັງແຕກຕ່າງກັນຢ່າງຂາດຂັ້ນກັບສຸນລະຕານ ໃນເລື່ອງແຜນການໃນ ອະນາຄົດຂອງດິນແດນ ຄືພັກມັກທີ່ຈະເລືອກເອົາການຮວມເຂົ້າກັບລັດ ຊາບາຫ໌ ແລະ ຊາຣາວັກ ຫລາຍກວ່າ ຮວມເຂົ້າກັບ ມາເລເຊ ຕາມທີ່ສະເໜີໄວ້. ເມື່ອຕຳສະດຸດ ກັບຈຸດນີ້ ພັກກໍເລີຍປະຕິວັດ ດ້ວຍກຳລັງທະຫານ ໃນເດືອນ ທັນວາປີ 1962 ແຕ່ ກໍຖືກປາບປາມຢ່າງຮາບຄາບໄວວາ ໂດຍກອງທະຫານອັງກິດຈາກສິງກະໂປ.

ການຮ່າງລັດຖະທຳມະນູນໃນເວລາຕໍ່ມາ ຊັກຊ້າຂຶ້ນ ເຖິງວ່າທາງອັງກິດໄດ້ເລັ່ງລັດຢູ່ກໍຕາມ ແລ້ວ ບຣູໄນກໍໄດ້ເປັນລັດເອກະລາດ ຢ່າງສົມບູນໃນວັນທີ 1 ມັງກອນ 1984 ພາຍໃຕ້ການເປັນປະມຸກ ຂອງ ສຸລະຕານ ຮາດຊານານ ໂບນເກ Hassanal Bolkiah (ສຸລະຕານ ໂອມາ ໄດ້ສະຫລະບັນລັງ ໃຫ້ລາຊະບຸດໃນປີ 1967) ໂດຍບໍ່ມີສະພານິຕິບັນຍັດ ທີ່ມາຈາກການເລືອກຕັ້ງ ຫລື ລັດຖະບານ ທີ່ຮັບຜິດຊອບຕໍ່ປະຊາຊົນ.

38

ສາທາລະນະລັດ ອິນໂດເນເຊຍ

ເມື່ອສົງຄາມລະເບີດຂຶ້ນໃນປີ 1941 ໝູ່ເກາະດອນອິນດີສ ຂອງເນເທີແລນ ເກືອບຢູ່ໃນສະພາບທີ່ຊາວໂຮນລັງ ເອີ້ນວ່າ ສະຫງົບຮຽບຮ້ອຍດີ. ການປ່ຽນແປງຢ່າງ ໄວວາໃນຊຸມທົດສະວັດທີ່ຜ່ານມາ ສ້າງຄວາມເຄັ່ງຕຶງທາງສັງຄົມໄວ້ຫຼາຍ ແຕ່ກໍບໍ່ໄດ້ ສັ່ນຄອນຄວາມໝັ້ນຄົງ ຂອງອານານິຄົມເລີຍ. ການປົກຄອງຂອງໂຮນລັງ ໃນຕອນຕົ້ນ ສະຕະວັດນັ້ນ ຖືກຮົບກວນຢູ່ເປັນບາງຄັ້ງຄາວ ບັດນີ້ມີຄວາມປອດໄພ ແລະບໍ່ມີການ ທ້າທາຍໃດໆຈາກພາຍໃນ. ສັງຄົມຂອງໝູ່ເກາະອິນດີສ ຊຸມຊົນເມືອງທີ່ແຍກອອກ ເປັນຊົນຊາດຊົນເຜົ່ານ້ອຍໆ ແລະສັງຄົມຂັ້ນບ້ານຈຳນວນຫຼາຍ ບໍ່ຖືກຮົບກວນ ດ້ວຍ ກົດລະບຽບທີ່ສະຫຼັບຊັບຊ້ອນຂອງສັງຄົມ, ພວກຊົນຊັ້ນສູງຂອງ “ອິນໂດເນເຊຍ” ທີ່ ໄດ້ຮັບການສຶກສາແບບໂຮນລັງ ມີຈຳນວນໜ້ອຍດຽວ ໄດ້ສ້າງເປັນຊຸມຊົນເມືອງອີກ ພວກໜຶ່ງ ທີ່ຢູ່ຮ່ວມກັບພວກໂຮນລັງ, ພວກລູກຊອດ ເອີຣົບ-ອາຊີ (ຢູເຣຊຽນ - Eurasian) ແລະພວກທີ່ເກີດໃນຕ່າງແດນ ແລະເປັນເລືອດຕ່າງດ້າວແທ້ (ໂຕະຕົກ) ກັບພວກຈີນ ທີ່ເກີດໃນອິນໂດເນເຊຍ (ເປຣານາການ - Paranakan) ຊາວລູກຊອດຈີນ ໂຕະຕົກ ແລະ ເປຣານາກັນ ທັງໝົດຢູ່ນຳກັນ ພາຍໃຕ້ຂອບເຂດຂອງໂຄງສ້າງເກາະ ດອນອິນດີສ ທີ່ຫຼາກຫຼາຍວັດທະນະທຳ.

ການຍຶດຄອງຂອງຍີ່ປຸ່ນ ເຮັດໃຫ້ລະບຽບການປົກຄອງເກົ່າ ສ້ຽງສຸດລົງ ມັນໄດ້ ໂຄ່ນລົ້ມພວກຊົນຊັ້ນສູງທີ່ມີອຳນາດທາງການເມືອງແລະເສດຖະກິດລົງ ກວາດຕ້ອນ ເອົາພວກໂຮນລັງທີ່ເກີດຢູ່ຕ່າງແດນເຂົ້າໄປຢູ່ຄ້າຍຄຸມຂັງ ແລະ ກົດຂີ່ຂົ່ມເຫັງຊາວຈີນ ກັບພວກລູກຊອດ ເອີຣົບ-ອາຊີ ດ້ວຍວິທີຕ່າງໆ ທີ່ຄິດຂຶ້ນຢ່າງຮີບຮ້ອນ. ພວກຍີ່ປຸ່ນ

ໄດ້ແກ້ໄຂໂຄງສ້າງທາງການເມືອງ ທີ່ມີຫຼາຍຮູບແບບຂອງໝູ່ດອນອິນດີສ ແລະ ອັນ ສຳຄັນກວ່າໝູ່ ແມ່ນການແກ້ໄຂລະບົບການສຶກສາທີ່ມີຫຼາຍຮູບແບບ ໃຫ້ງ່າຍດາຍຂຶ້ນ ຫຼາຍ. ຍີ່ປຸ່ນໄດ້ນຳເອົາລະບົບການສຶກສາແບບດຽວ ດ້ວຍການນຳໃຊ້ພາສາອິນໂດເນ ເຊຍ ມາເປັນສື່ການສອນ. ອຸດສະຫະກຳການສົ່ງອອກ ລົ້ມລະລາຍ ລະບົບການເງິນ ທີ່ບໍ່ມີອາຊີບໜຸນ ກໍ່ໃຫ້ເກີດເງິນເຟີ້ຢ່າງຮຸນແຮງ ແລະການແບ່ງປັນສ່ວນ ກຳພາໃຫ້ເກີດ ຕະຫຼາດມືດ ແລະການສໍ້ໂກງ ທີ່ແຜ່ລາມຢ່າງກວ້າງຂວາງ. ຊາວນາຫຼາຍແສນຄົນຖືກ ກວາດຕ້ອນໄປເປັນຂ້ອຍຂ້າ ເຈັບເປັນລົ້ມຕາຍລົງ ຢູ່ຫຼາຍແຫ່ງໃນພາກພື້ນອາຊີຕາ ເວັນອອກສຽງໃຕ້.

ໃນຄວາມໝາຍໜຶ່ງ ກໍຄື ການປົກຄອງຂອງຍີ່ປຸ່ນ ພຽງແຕ່ໄດ້ປ່ຽນອຳນາດ ຂອງອານານິຄົມ ທີ່ມີຖານະຢູ່ພາຍນອກ ມາເປັນອີກແບບໜຶ່ງ. ພວກຍີ່ປຸ່ນຮັກສາລະ ບົບການປົກຄອງຢູ່ຕໍ່ໄປ ໂດຍຜ່ານຄົນຊັ້ນສູງ ທີ່ມີຮາກຖານໝັ້ນຄົງ ເຊັ່ນ ພວກຊົນຊັ້ນ ສູງຊະວາ (ປຣິຍາຍິ - Priyayi) ແຕ່ໂດຍພື້ນຖານ ລີລາທາງການເມືອງຂອງພວກເຂົາ ແຕກຕ່າງກັນຢ່າງຂາດຂັ້ນ. ບ່ອນໃດພວກໂຮມລັງ ເປັນພວກຫົວຮີດເດີມ ແລະມີເປົ້າ ໝາຍທີ່ຈະຮັກສາຜູ້ຄົນໃນປົກຄອງ ໃຫ້ຢູ່ຢ່າງສະຫງົບ ພວກຍີ່ປຸ່ນ ຊ້ຳໄປຮອບອຳນາດ ໄວ້ແຕ່ຜູ້ດຽວ ແລະສະແຫວງຫາແນວທາງຍຸແຍ່ປະຊາຊົນ ໃຫ້ປັ່ນປ່ວນ. ພວກຍີ່ປຸ່ນດຳ ເນີນການໂຄສະນາຊັກຊວນໃຫ້ປະຊາຊົນລຸກຮືຂຶ້ນ ໂດຍຫວັງເກັບກຳບັນຊີຊາຍສະກັນ ເຂົ້າໃນການປົກຄອງຂອງຕົນ ໃນການສົງຄາມທີ່ພວມໝົດຫວັງຢູ່ແລ້ວ. ທີ່ເກາະດອນ ຊະວາ ບ່ອນການຍຶດຄອງຂອງຍີ່ປຸ່ນ ສ້າງຜົນສະທ້ອນແຮງທີ່ສຸດນັ້ນ ພວກຍີ່ປຸ່ນເລີ່ມ ດຳເນີນການຂຶ້ນບັນຊີຊາວມຸດສະລິມ ແລະ ຊົນຊັ້ນນຳຊາດນິຍົມສຸດໂຕ່ງ ໃຫ້ມາຊ່ວຍ ເຮັດສົງຄາມ. ໂດຍສະເພາະແລ້ວ ການສົບທອດອົງການມະຫາຊົນ ທີ່ຍີ່ປຸ່ນຄວບຄຸມ ຢູ່ແລະທັງໂຄສະນາອອກໃຫ້ຮູ້ກັນຢ່າງກວ້າງຂວາງນັ້ນ ໄດ້ໃຫ້ໂອກາດແກ່ພວກປັນຍາ ຊົນຊາດນິຍົມ ສ້າງຄວາມສຳພັນ ແລະເຂົ້າຫາປະຊາຊົນທົ່ວໄປ ເຊິ່ງບໍ່ເຄີຍມີແນວ ນີ້ ໃນສະໄໝການປົກຄອງຂອງໂຮມລັງ. ພວກຜູ້ນຳ ທີ່ໄດ້ຮັບແຕ່ງຕັ້ງມາກ່ອນຍຸກສົງ ຄາມ ເຊັ່ນ ຊູກາຣ໌ໂນ (Sukarno), ໂມຮາເມັດ ແຮັດຕາ (Mohammed Hatta) ໄດ້ ສະໜັບສະໜູນຍີ່ປຸ່ນຢ່າງເປີດເຜີຍ ເພື່ອກະຈາຍແນວຄວາມຄຶດຊາດນິຍົມທົ່ວອິນໂດ

ເນເຊ. ພວກຍີ່ປຸ່ນ ໄດ້ເຝິກອົບຮົມເຍົາວະຊົນ ຢູ່ໃນໂຮງຮຽນ ແລະອົງການ ໜ່ວຍງານພິເສດຕ່າງໆ ຢ່າງເຂັ້ມຂຸ້ນ. ໃນທີ່ສຸດຢູ່ໃນ ພີ ຕາ (PETA - Pembela Tanah Air, ຜູ້ປົກປ້ອງປະຕູພູມ) ຍີ່ປຸ່ນກໍໄດ້ສ້າງກອງທັບ ປະກອບດ້ວຍທະຫານຄົນ ອິນໂດເນເຊ ທີ່ໄດ້ຜ່ານການເຝິກຝົນຢ່າງດີ ຈຳນວນ 65,000 ຄົນ ໃຫ້ເຂົ້າປະຈຳ ການ ເຖິງລະດັບກອງພັນ. ມັນເປັນພັດທະນາການໜຶ່ງ ເຊິ່ງບໍ່ເຄີຍເກີດຂຶ້ນມາກ່ອນ ໃນສະໄໝອານານິຄົມ.

ການປົກຄອງໂດຍຍີ່ປຸ່ນ ສ້ຽງສຸດລົງ ໃນເດືອນສິງຫາ 1945 ແບບກະທັນຫັນ ຄືກັບຕອນມັນເລີ່ມຕົ້ນ ແລະກ່ອນທີ່ໝູ່ເກາະດອນອິນດີສເກືອບທັງໝົດ ຈະຖືກຝ່າຍ ພັນທະມິດກັບມາຍຶດເອົາຄືນ. ກອງກຳລັງທີ່ຂ່ວງເສ້ັງກັນເຄື່ອນໄປຢ່າງວ່ອງໄວ ເພື່ອ ອັດປ່ອງຫວ່າງ ລະຫວ່າງອຳນາດທີ່ເກີດຂຶ້ນມານັ້ນ. ຜູ້ທຳອິດທີ່ລົງມື ແມ່ນ ນັກຊາດ ນິຍົມຮຸ່ນເກົ່າກວ່າໝູ່ ເຊິ່ງໄດ້ສ້າງກຳລັງຊ້ອນໃນຂອງການນຳ ຢູ່ໃນລະຫວ່າງການຍຶດ ຄອງຂອງຍີ່ປຸ່ນ. ຢູ່ ຈາກາຣຕາ ເມື່ອວັນທີ 17 ສິງຫາ, ສອງມື້ກ່ອນຍີ່ປຸ່ນປະກາດຍອມ ຈຳນົນ ຊູກາຣໂນ ແລະ ແຮັຕຕາ ໄດ້ປະກາດເອກະລາດຂອງອິນໂດເນເຊ. ສອງອາ ທິດຕໍ່ມາ ຄະນະກຳມະການນ້ອຍໆຄະນະໜຶ່ງ ໄດ້ຮ່າງໂຄງສ້າງ ລັດອິນໂດເນເຊ ໃໝ່ ຂຶ້ນ ຄືມີ ລັດຖະທຳມະນູນ, ກະຊວງ ທະບວງກົມ ແລະ ຊູກາຣໂນ ເປັນປະທານປະເທດ ແລະ ແຮັຕຕາ ເປັນຮອງປະທານ. ການຕອບໂຕ້ຈາກຝ່າຍອານານິຄົມ ມາໄວພໍສົມ ຄວນ: ໃນ ວັນທີ 29 ກັນຍາ ກອງທັບອັງກິດໜ່ວຍທຳອິດ ໄດ້ຍົກພົນຂຶ້ນບົກ ຢູ່ ຈາກາຣຕາ ແລະ ສູມາຕຣາ. ພວກເຂົາເປັນຕົວແທນຂອງພັນທະມິດ ຜູ້ມີໄຊ ພວກ ເຂົາສະໜັບສະໜຸນ ພວກນັກບໍລິຫານຊາວໂຮນລັງ ທີ່ ໜ້າທີ່ອັນສຳຄັນຂອງພວກເຂົາ ແມ່ນການຟື້ນຊີບລະບອບອານານິຄົມ ຂອງໂຮນລັງ.

ການປະທະກັນ ໃນລະດັບຕ່ຳມາ ໄດ້ໄຂບັ້ນຮົບອັນຍືດເຍື້ອ ແລະ ເຂັ້ມຂຸ້ນ ແຮງຈົນວ່າ ອິນໂດເນເຊຍໄດ້ຮັບເອກະລາດທາງການເມືອງ ໃນເດືອນທັນວາ 1949. ໂດຍສະເພາະແລ້ວ ຢູ່ໃນເດືອນ ກັນຍາ ປີ 1945 ການປະທະກັນໄດ້ເຮັດໃຫ້ເກີດ ຂະບວນການມະຫາຊົນຢ່າງໄວວາ, ເຫດຈະລາຈົນທີ່ລະເບີດຂຶ້ນ ໄດ້ນຳຄວາມເສຍ

ທາຍໃຫຍ່ຫຼວງມາສູ່ເກືອບທົ່ວເກາະດອນ ຊະວາ ແລະ ສູມາຕຣາ ເຊິ່ງເປັນແຫຼ່ງທີ່ຢູ່ອາໄສ ຂອງຊາວອິນໂດເນເຊຍທັງໝົດ ປະມານສາມສ່ວນສີ່ ແລະໄດ້ຍູ້ດັນຢ່າງຮຸນແຮງ ໃຫ້ທະຫານອັງກິດກັບພະນັກງານຄົນໂຮນລັງ ອອກໄປຕັ້ງຖິ່ນຖານຕາມຊາຍຝັ່ງທະເລ. ມັນແມ່ນຄວາມອຸ່ນອາຍທາງການເມືອງຄັ້ງນີ້ເອງ ທີ່ຍົກລະດັບຂຶ້ນເປັນການຕໍ່ສູ້ ທາງການເມືອງບໍແມ່ນເພື່ອເອກະລາດເທົ່ານັ້ນ ແຕ່ໄດ້ເຮັດໃຫ້ການປະຕິວັດອິນໂດເນເຊຍ ກາຍເປັນເຫດການສຳຄັນ ແລະ ປະສົບການໜຶ່ງ ໃນປະຫວັດສາດຍຸກໃໝ່ຂອງອິນໂດເນເຊຍ.

ຂະບວນການມະຫາຊົນລະເບີດຂຶ້ນຄັ້ງທຳອິດ ຍ້ອນການສາບສູນໄປໃນທັນທີ ຂອງລັດຖະບານທີ່ມີສະມັດຖະພາບ. ການປົກຄອງຂອງຍີ່ປຸ່ນ ຫຼົ້ມຈົມລົງໃນລະຍະຂ້າມຄືນ, ອັງກິດຍັງມີກອງທະຫານເຫຼືອຢູ່ເລັກນ້ອຍ ແຕ່ມີຄວາມສົນໃຈພຽງແຕ່ໜ້ອຍດຽວເທົ່ານັ້ນ, ພວກໂຮນລັງ ເຄີຍມີເຫດຈູງໃຈແລະບົດບາດປົກຄອງມາກ່ອນ ແຕ່ມາຮອດ ປີ 1947 ກໍມີກອງທະຫານແຕ່ໜ້ອຍດຽວເທົ່ານັ້ນ, ຈັ່ງຊັ້ນ ໃນທີ່ສຸດ ຄວາມຄຶດທຳອິດ ຈຶ່ງແມ່ນການສ້າງຕັ້ງສາທາລະນະລັດ ໂດຍປາສະຈາກກົນໄກເກືອບທຸກຢ່າງທີ່ເສີມພະລັງໃຫ້ແກ່ຄວາມມຸ່ງຫວັງນັ້ນ. ໃນສັງຄົມໃດກໍຕາມ ການບໍ່ມີລັດຖະບານຍ່ອມກໍ່ໃຫ້ເກີດຄວາມກົວຢ້ານເປັນທີ່ສຸດ ແລະກໍ່ໃຫ້ເກີດແຮງສົ່ງອັນມີອຳນາດ ທີ່ມຸ່ງໝາຍຢາກຟື້ນຟູກອບກູ້ເອົາລະບອບສະຫະເຄືອຈັກກະພົບ ທີ່ສາບສູນໄປແລ້ວ ຄືນມາອີກ. ຢູ່ອິນໂດເນເຊຍ ເມື່ອເດືອນກັນຍາ 1945 ຄວາມຮູ້ສຶກຕື່ນສະດຸ້ງເຫຼົ່ານັ້ນ ຖືກກຳນົດຂຶ້ນເກືອບໃນທັນທີ ແລະ ໃນທ່ອມະຫາຊົນ ໃນເລື່ອງກ່ຽວກັບສັນຍະລັກຂອງສາທາລະນະອິນໂດເນເຊຍ ແລະຂະບວນການມະຫາຊົນ ທີ່ລະເບີດຂຶ້ນຢ່າງໄວວາໜ້າອັດສະຈັນນັ້ນ ກໍຕັ້ງຢູ່ບົນພື້ນຖານແຫ່ງລັດທິຊາດນິຍົມອິນໂດເນເຊຍ ອັນເຂັ້ມຂຸ້ນ.

ຍິ່ງກວ່ານີ້ ຜູ້ຄົນບໍ່ວ່າຍິງຊາຍ ໃນໄວໜຸ່ມອາຍຸສິບປີຂຶ້ນໄປ ຫາຊາວປີປາຍ ກໍຕອບສະໜອງແນວທາງນີ້ຢ່າງທັນທີ. ການລະເບີດຂອງມວນຊົນ ໄດ້ຮັບການຂະໜານນາມວ່າ ຂະບວນການ ເປມຸດາ (Pemuda) ແປຕາມໂຕແມ່ນ ຂະບວນການຊາວໜຸ່ມ ແຕ່ໃນການປະຕິວັດ ມັນມີຄວາມໝາຍເລິກເຊິ່ງກວ່ານີ້ ຄືມັນໝາຍເຖິງ ການເຂົ້າ

ຮ່ວມໃນ ລັດທິກິດຈະກຳນິຍົມ ການຕໍ່ສູ້ດ້ວຍກຳລັງ ແລະລັດທິຮັກຊາດ ຂະບວນການ ໄດ້ປັດກວາດເອົາຊາວໜຸ່ມທຸກຊົນຊັ້ນ ແລະຊົນເຜົ່າເຂົ້າຮວມກັນ ຢູ່ໃນຄວາມເສຍສະ ຫຼະຕັ້ງໃຈອັນໜຶ່ງອັນດຽວກັນ ເພື່ອພາລະກິດເອກະລາດ ແລະ ອຳນາດອັນສົມບູນ ເພື່ອການປົດປ່ອຍ ແລະອຸດົມຄະຕິ. ພວກ ປຣິຍາຍິ ເປມຸດາ (Priyayi Pemuda) ຊາວໜຸ່ມເກີດໃນຕ່າງແດນ ພາກັນປະຖິ້ມນາມສະກຸນ ແລະຊື່ຂອງຕົນ ແລ້ວໃຊ້ຊື່ຫຍໍ້ ຈາກນາມສະກຸນເຊື້ອສາຍຊຸນນາງຂອງເຂົາ ພວກຜູ້ຊາຍປະຕິຍານຕົນວ່າ ຈະບໍ່ຕັດ ຜົມ ຈົນກວ່າຈະເປັນອິດສະຫຼະ ພວກຍິງສາວອອກຈາກບ້ານເຮືອນ ໄປເຮັດວຽກນຳ ອົງການກາແດງ ຂອງອິນໂດເນເຊຍ, ລັດທິວິລະຊົນລະເບີດຂຶ້ນ. ຍິ່ງກວ່ານີ້ ກຳລັງ ທາງການເມືອງເຫຼົ່ານີ້ ຍັງໄດ້ຂະຫຍາຍຕົວ ແຕກໜໍ່ແໜງອອກໄປ ຢູ່ໃນຫຼາຍຂົງເຂດ ກໍ່ໃຫ້ເກີດການສ້າງສິລະປະກິດຈິດຕະກຳ ການປະພັນນິຍາຍ ແລະບົດກະວີ ແບບ ເອກະລັກສະເພາະຂອງອິນໂດເນເຊຍ ທີ່ບໍ່ເຄີຍມີມາກ່ອນໃນຊຸມປີຜ່ານມາ.

ອີກດ້ານໜຶ່ງຂອງລັດທິອຸດົມຄະຕິນິຍົມ ແມ່ນ ຄວາມປ່ວງບ້າ (ຟານາຕິຊິສ - Fanaticism) ຄວາມສຳຄັນທາງການເມືອງຂອງຂະບວນການຊາວໜຸ່ມ (ເປມຸດາ) ນອນຢູ່ນຳການໃຊ້ຄວາມຮຸນແຮງ ໃນການລະດົມແລະລົງໂທດກຳ. ຂະບວນການເລີ່ມ ຂຶ້ນເມື່ອກາງເດືອນກັນຍາ ພ້ອມໆກັບການຍ່າງສວນສະໜາມ ແລະປະທ້ວງຢ່າງກວ້າງ ຂວາງ ແບບບໍ່ເຄີຍມີມາກ່ອນ, ໄດ້ປ່ຽນປີ້ນມາເປັນການບຸກໂຈມຕີ ບ່ອນເຮັດວຽກ ທ້ອງການສຳນັກງານ ແລະຄ້າຍທະຫານຂອງຍີ່ປຸ່ນ ແລະກ້າວຕໍ່ໄປ ເພື່ອຕໍ່ສູ້ກັບອັງກິດ ແລະພຸ່ງສູ່ລະດັບແຕກຫັກ ຢູ່ໃນບັ້ນຮົບ ສຸຣາບາຢາ (Surabaya) ເມື່ອຕົ້ນເດືອນ ພະຈິກ. ໃນບັ້ນສູ້ຮົບນີ້ ກອງທະຫານອັງກິດ ສ່ວນໃຫຍ່ ຄົງຈະຕ້ອງຖືກຢຽບມຸ່ນໄປ ເລີຍ ຖ້າຫາກວ່າ ຊູການໂນ ບໍ່ເຂົ້າມາຂັດຂວາງກ່ອນ. ເຖິງຢ່າງໃດກໍດີ ຜົນສະທ້ອນ ທາງການເມືອງຂອງຂະບວນການນັ້ນ ມີຄວາມສຳຄັນຍິ່ງກວ່າ. ຢູ່ໃນຖ້າມກາງຄວາມ ວຸ່ນວາຍຮ້າຍແຮງທີ່ຂະບວນການໄດ້ກໍ່ຂຶ້ນ ໃນທົ່ວເກາະດອນຊະວາ ແລະ ສຸມາຕຣາ, ອົງໃສ່ຄວາມຮຽກຮ້ອງ ໃຕ້ການນຳພາທາງການເມືອງ ແລະ ສັງຄົມທີ່ມີຢູ່ແລ້ວນັ້ນ ທັງໝົດໄດ້ພິສູດຕົນເອງຢ່າງຈິງຈັງ. ຜູ້ທີ່ບໍ່ສາມາດພິສູດຕົນເອງໄດ້, ຜູ້ທີ່ບໍ່ສາມາດປັບ ປ່ຽນຕົວເຂົ້າກັບສະພາບເງື່ອນໄຂການປະຕິວັດ ຫຼືບໍ່ສາມາດປົກປ້ອງຕົນເອງ ກໍຖືກທຳ

ຮ້າຍ, ຖືກຂັບອອກ ຫຼື ຖືກຂ້າຕາຍ. ບັນດາເຊື້ອຊາດກຸ່ມນ້ອຍໆ ເຊັ່ນ ພວກດັດຊ໌ (ໂຮນລັງ), ຊາວຈີນ, ພວກລູກຊອດເອີຣິບ-ອາຊີ, ແລະຊາວອຳບອນ (Ambonese) ທົນທຸກທໍລະມານໜັກໜ່ວງເປັນພິເສດ ຈາກການປຸ້ນສະດົມ ແລະ ທຸບຕີທໍລະມານ. ກະແສຟອງຂອງ "ການປະຕິວັດທາງສັງຄົມ" ໃນທ້ອງຖິ່ນ ຂະຫຍາຍແຜ່ລາມອອກໄປ ທົ່ວເຂດ ອາເຈ ແລະ ຊູຣາກາຕາ (Aceh and Surakata), ທ້າທາຍກັບຊົນຊັ້ນນຳ ເຈົ້າກົກເຈົ້າເຫຼົ່າທ້ອງຖິ່ນ ເຊິ່ງເປັນບ່ອນອີງໃຫ້ແກ່ການປົກຄອງຂອງ ໂຮນລັງ-ຍີ່ປຸ່ນ ແລ້ວລະບົບສາທາລະນະລັດ ກໍໄດ້ດຳລົງຢູ່ ພາຍຫຼັງທີ່ໄດ້ທຳລາຍຜູ້ຄົນຈຳນວນໜຶ່ງ ແລະຂັບໄລ່ພວກເຂົາໃຫ້ລ່າຖອຍໄປຢູ່ບ່ອນທີ່ປອດໄພ.

ຂັ້ນຕອນຂອງຂະບວນການ ເປມຸດາ ທີ່ຮຸນແຮງແລະມີຄວາມໝາຍສຳຄັນທີ່ສຸດໃນທາງການເມືອງ ດຳເນີນຍືດເຍື້ອ ມາແຕ່ເດືອນກັນຍາ ປີ 1945 ເຖິງກາງປີ 1946. ໃນລະຍະນີ້ ແລະຕໍ່ມາອີກດົນ ພາຍຫຼັງຂະບວນການຊາວໜຸ່ມ ໄດ້ຮວມຕົວເຂົ້າກັນແບບຫຼີມໆ ໃນຮູບແບບຂອງອົງການທີ່ຊື່ວ່າ "ບາດານ ເປີຈວງກັນ" (Badan Perjuangan), ການເຕົ້າຮວມກັນເປັນກຸ່ມແບບກະທັນຫັນຢູ່ໃນທ້ອງຖິ່ນ ກໍ່ຕົວຂຶ້ນຢູ່ອ້ອມຮອບຕົວຜູ້ແທນທີ່ມີບຸນບາລະມີ. ກຸ່ມຜູ້ຄົນປະເພດນີ້ ເປັນຮ້ອຍໆກຸ່ມ ເກີດຂຶ້ນ ແລ້ວກໍຍຸບຕົວໄປ ແລ້ວກໍເຕົ້າໂຮມກັນຄືນແບບອົງການ ບາດານ ເປີຈວງກັນ ເປັນໜຶ່ງ ໃນບັນດາສະຖາບັນຂໍກຸນແຈ ຂອງຊຸມປີແຫ່ງການປະຕິວັດ, ເປັນການສະແດງເອກະລັກຂອງຂະບວນການ ເປມຸດາ. ໃນລະຍະດຽວກັນນັ້ນ ພວກຫົວໜ້າຂອງ ເປມຸດາ ຈຳນວນໜຶ່ງພ້ອມກັບກຸ່ມ ກໍໄດ້ພ້ອມກັນສ້າງກອງທັບແຫ່ງຊາດຂຶ້ນ. ໃນບາງກໍລະນີ ພວກອົງການ ພີຕາ ເຊິ່ງຖືກຍີ່ປຸ່ນຂັບໄລ່ກະຈັດກະຈາຍໄປ ພາຍຫຼັງໄດ້ກັບມາຮວມກັນຄືນ, ສ່ວນໃນກໍລະນີອື່ນໆ ພະນັກງານຂອງ ພີຕາ ຫຼື ກໍໄດ້ຈັດໜ່ວຍກອງຂອງຕົນເອງຂຶ້ນ. ຫຼາຍປີຕໍ່ມາ ຂະນະທີ່ກອງຕ່າງໆຮວບເຂົ້າກັນ ເປັນກອງພັນໃຫຍ່ ແລະ ກອງພົນ ນັ້ນມັນກໍໝາຍຄວາມວ່າ ກອງທັບໄດ້ຄ່ອຍໆກໍ່ສ້າງຕົນເອງຂຶ້ນແລ້ວ.

ອຳນາດອັນມະຫາສານຂອງຂະບວນການຊາວໜຸ່ມ ໄດ້ສ້າງອິດທິພົນຕໍ່ ພັດທະນາການທາງການເມືອງ ໃນລະດັບຊາດຢ່າງຂາດຂັ້ນ. ມັນໄດ້ນຳເອົາສິ່ງທີ່ຖືກັນວ່າ

ເປັນການຕໍ່ສູ້ ລະຫວ່າງຊົນຊັ້ນສູງສອງກຸ່ມນ້ອຍໆ ຄື ນັກຊາດນິຍົມໂຮນລັງ ກັບ ນັກຊາດນິຍົມອິນໂດເນເຊ ຜູ້ມີການສຶກສາ ແບບດັດຊ໌ ຢູ່ນອກຂອບເຂດເວທີການເມືອງມະຫາຊົນ. ໂດຍສະເພາະແລ້ວ ຂະບວນການ ໄດ້ທະວີຄວາມສະຫຼັບຊັບຊ້ອນໃຫ້ແກ່ກິດຈະການຂອງກຸ່ມນັກຊາດນິຍົມເກົ່າແກ່ ກຸ່ມນ້ອຍໆ ຜູ້ໄດ້ສະຖາປະນາລະບອບສາທາລະນະລັດຂຶ້ນ. ຜູ້ຄົນເຫຼົ່ານີ້ ໄດ້ປະກາດເອກະລາດ ແລະ ສ້າງຕັ້ງສາທາລະນະລັດ ແຕ່ພວກເຂົາຂາດເຂີນ ອົງການຈັດຕັ້ງມະຫາຊົນ ເຊິ່ງຕ່າງຈາກຢູ່ຫວຽດນາມເໜືອ. ພວກເຂົາຖືກແຍກປ່ຽວໃຫ້ຫ່າງເຫີນກັບມະຫາຊົນ ຍ້ອນການກຳນົດຮູບແບບຂອງພວກໂຮນລັງ ກັບ ຍີ່ປຸ່ນ ແລະກະໂຕພັດທະນາການທາງການເມືອງ ແລະ ວັດທະນະທຳ ທີ່ສຸກກ່ອນເຫີ່ມຂອງພວກເຂົາເອງ ຫຼືເປັນຍ້ອນວ່າ ພວກເຂົາບໍ່ມີຄວາມຮູ້ ໃນເລື່ອງການຈັດຕັ້ງທາງທະຫານເລີຍ. ໃນລະຍະຊຸມເດືອນທຳອິດ ຂອງການປະຕິວັດ ພວກເຂົາບໍ່ໄດ້ພະຍາຍາມຈັດຕັ້ງກອງທັບແຫ່ງຊາດເລີຍ ນັ້ນເປັນການໄຂປະຕູກວ້າງສ້າງໂອກາດແກ່ຂະບວນການຊາວໜຸ່ມ ເປນູດາ. ໃນຖານະເປັນກຸ່ມຜູ້ກໍ່ຕັ້ງ ແລະ ຜູ້ນຳຂອງລະບອບສາທາລະນະລັດ ຂະເຈົ້າຜັດເປັນນັກການເມືອງຢູ່ໃນເມືອງ ຄືເປັນຄະນະກຳມະການ ຫຼື ເປັນນັກປາຖະກະຖາເທົ່ານັ້ນ. ເບິ່ງໃນດ້ານເອກະລັກແລ້ວ ພວກເຂົາ ຈັດຕັ້ງກັນຂຶ້ນໃນຮູບແບບພັກການເມືອງ ທີ່ເຕີບໃຫຍ່ຂຶ້ນຫຼາຍໃນທ້າຍປີ 1945 ແລະ ຕໍ່ໆມາ. ໃນເມື່ອພັກການເມືອງຂອງພວກເຂົາ ບໍ່ໄດ້ຮັບການສະໜັບສະໜຸນຈາກມະຫາຊົນ ໃນລະຍະປະຕິວັດ ຄືກັບພວກຜູ້ນຳຮຸ່ນກ່ອນໆ ໃນພັກຍຸກກ່ອນສົງຄາມແລ້ວ ພວກເຂົາສ່ວນໃຫຍ່ ກໍໄດ້ກາຍເປັນພຽງເຄື່ອງມືໃຫ້ແກ່ການເມືອງຂອງຊົນຊັ້ນນຳພາຍໃນ ເທົ່ານັ້ນ.

ໃນລະຍະເວລາແຫ່ງການປະຕິວັດນັ້ນ ຄະນະລັດຖະບານຕັ້ງຂຶ້ນ ແລ້ວກໍຫຼົ້ມໄປ ເປັນປົກກະຕິ ໂດຍບໍ່ມີການປ່ຽນແປງນະໂຍບາຍພື້ນຖານ ຂອງລະບອບສາທາລະນະລັດ. ນະໂຍບາຍນັ້ນ ແມ່ນວິທີການທາງທູດເທົ່ານັ້ນ (Diplomasi - ດິໂປລມາຊີ) ຄືເປັນແຜນງານເພື່ອບັນລຸເອກະລາດ ດ້ວຍການເຈລະຈາ ກັບ ຝ່າຍດັດຊ໌ ແລະດ້ວຍການອຸທອນຕໍ່ຫາງສຽງສາກົນ. ດິໂປລມາຊີ ເປັນວິທະຍານິພົນຄັດຄ້ານ ກັບ ອຸດົມຄະຕິ ຂອງຂະບວນການ ເປນຸດາ ຝ່າຍ ເປີຈວງກັນ ໄດ້ກາຍເປັນບັນຫາຄອບ

ງວຳ ຢູ່ເໜືອເລື່ອງການເມືອງທ້ອງຖິ່ນ ຕະຫຼອດເວລາແຫ່ງການປະຕິວັດ, ຄະນະລັດ ຖະບານແຕ່ລະຊຸດໃນຫ້າຊຸດທີ່ລົ້ມໄປ ລາວອກຍ້ອນປະຊາຊົນຮ້ອງໂຮຄັດຄ້ານ ການ ໃຫ້ສິດສຳປະທານແກ່ ພວກໂຮນລັງ, ມັນແມ່ນການປະທ້ວງ ທີ່ມັກໄດ້ຮັບການສະ ໜັບສະໜຸນ ຈາກພັກການເມືອງ ກັບພວກທີ່ໝົດອຳນາດໄປແລ້ວ. ຄະນະລັດຖະບານ ຊຸດຕ່ໆມາທຸກຊຸດ ດຳເນີນການຕາມນະໂຍບາຍ ດິໂປລມາຊີ ພື້ນຖານອັນດຽວກັນ ດ້ວຍການຊຸກຍູ້ຂອງນັກປົກປ້ອງ ເປີຈວງກັນ ທີ່ຍັງຢູ່ໃນອຳນາດ ແລະ ຈາກ ທ່ານ ແຮຕຕາ ກັບ ຊູກາຣໂນ ຢູ່ເລີຍໆ.

ມາເຖິງກາງປີ 1947 ທັງພວກໂຮນລັງ ແລະຝ່າຍສາທາລະນະລັດ ຈຶ່ງປະ ກາດຂໍເຈລະຈາ, ປະເທດໂຮນລັງ ໝົດກຳລັງຍ້ອນການເຂົ້າຍຶດຄອງຂອງ ເຢຸງລະມັນ. ຊາວດັດຊ໌ ຍັງໂຊກດີ ທີ່ໄດ້ຮັບການຊ່ອຍເຫຼືອຈາກອັງກິດ ແລະ ກະໂຕກຸ່ມສາທາ ລະນະລັດເອງ ພວກເຂົາສາມາດຕີຜ່າການປິດລ້ອມຂອງຂະບວນການ ເປມຸດາ ໃນ ຕົວເມືອງໃຫຍ່ໆ ຢູ່ດອນຊະວາແລະສຸມາຕຣາ (Java and Sumatra) ໄດ້. ການ ເຈລະຈາໄດ້ຍືດເຍື້ອມາຈົນເຖິງເດືອນ ພະຈິກ ປີ 1946 ເມື່ອມີຜົນອອກມາວ່າ ມີຂໍ້ ຕົກລົງຜ່ອນຜັນທີ່ທັງສອງພັກຝ່າຍຕ່າງກໍບໍ່ພໍໃຈ. ໃນຂະນະດຽວກັນ ພວກໂຮນລັງ ກໍ ໄດ້ຄືນມາຍຶດຄອງ ໝູ່ເກາະດອນຕ່າງໆ ທີ່ມີຜູ້ຄົນອາໄສຢູ່ແຕ່ໜ້ອຍດຽວ ນອກດອນ ຊະວາ ກັບ ສຸມາຕຣາ ໂດຍມີການຕໍ່ຕ້ານແຕ່ພຽງໜ້ອຍດຽວ. ໃນເດືອນ ທັນວາ ປີ 1946 ພວກເຂົາໄດ້ສະຖາປະນາ ລັດອິນໂດເນເຊ ຕາເວັນອອກຂຶ້ນ ປະກອບດ້ວຍດອນ ເຊເລແບສ (Celebes), ບາຫຼີ (Bali) ແລະ ໝູ່ເກາະດອນອື່ນໆພາກຕາເວັນອອກ ທາງທີ່ເຫຼືອຢູ່ ໃຫ້ເປັນລັດທຳອິດໃນບັນດາສະມາຊິກອື່ນໆໃນພາກພື້ນ ພາຍໃຕ້ລະ ບົບການປົກຄອງແບບປະເທດໃນອາລັກຂາ ຂອງສະຫະພັນ ທີ່ພວກເຂົາຫວັງວ່າ ຈະ ສາມາດຄວບຄຸມໄດ້ ດ້ວຍຄຳສັ່ງຈາກສູນກາງ.

ມາເຖິງເດືອນກໍລະກົດ ປີ 1947 ພວກໂຮນລັງ ໄດ້ຮວບຮວມກຳລັງໄດ້ຫຼາຍພໍ ເພື່ອລົງມືໃສ່ວຽກໜຶ່ງ ທີ່ເອີ້ນວ່າ "ປະຕິບັດການຂອງຕຳຫຼວດ" ພວກເຂົາ ສາມາດ ຍຶດເອົາຊະວາຕາເວັນຕົກ ແລະຕາເວັນອອກ ແລະເຂດປູກຝ້າ ກັບບໍ່ນ້ຳມັນຂອງສຸມາ

ຕຣາ ຕາເວັນອອກແລະພາກໃຕ້ໄດ້ຢ່າງງ່າຍດາຍ. ເຖິງວ່າ ໃນຈຸດນີ້ ອົງການສະຫະ ປະຊາຊາດ ໄດ້ເລີ່ມເຂົ້າມາແຊກແຊງແລ້ວກໍຕາມ, ໃນເດືອນມັງກອນ ປີ 1948 ພວກໂຮນລັງກໍຍັງສາມາດ ບັງຄັບລັດຖະບານສາທາລະນະລັດ ໃຫ້ຢູ່ຊື່ໆ ຕໍ່ໜ້າການ ຍຶດຄອງເຫຼົ່ານີ້. ຢູ່ໃນເຂດຍຶດຄອງ ພວກໂຮນລັງ ໄດ້ຈັດຕັ້ງລັດສະມາຊິກສະຫະພັນ ໃໝ່ຂຶ້ນຢ່າງໄວວາ ໃນທາງການເມືອງ ພວກເຂົາໄດ້ອີງໃສ່ກຸ່ມສັງຄົມທີ່ອະນຸລັກເດີມກ່ວາ ໝູ່ ທີ່ສືບທອດມາແຕ່ຊົນຊັ້ນນຳ, ນັກຊາດນິຍົມ ຜູ້ເຄີຍຮ່ວມມືມາແຕ່ກ່ອນ, ຊາວ ຈີນ, ພວກລູກຊອດ ເອີຣົບ-ອາຊີ ແລະຜູ້ອື່ນໆ ເຊິ່ງຖືກກະທົບຢ່າງແຮງຈາກ ຂະບວນ ການຊາວໜຸ່ມ. ບາດກ້າວຕໍ່ມາ ມີເຫດມີຜົນຂຶ້ນ: ໃນເດືອນທັນວາ ປີ 1948 ພວກ ໂຮນລັງ ລົງມືເຮັດສິ່ງທີ່ເອີ້ນວ່າ "ປະຕິບັດການຂອງຕຳຫຼວດ" ອີກເປັນຊຸດທີສອງ ຄັ້ງ ນີ້ ພວກເຂົາສາມາດຍຶດຄອງຢ່າງໄວວາ ດິນແດນທີ່ຍັງເຫຼືອຢູ່ຂອງສາທາລະນະລັດ ແລະ ຈັບກຸມ ຊູກາໂນ ແລະ ແຮັຕຕາ.

ຄວາມສຳເລັດຂອງການໂຄສະນາປຸກລະດົມ ຊີ້ບອກວ່າ ມັນແມ່ນຄວາມເປັນ ຄວາມຕາຍສຳລັບ ພວກໂຮນລັງ. ກອງທັບຂອງຊາວອິນໂດເນເຊຍ ປົດປ່ອຍຕົນເອງ ອອກຈາກແຮງໜີບຂອງນະໂຍບາຍ ດິໂປລມາຊີ ທັນມາໃຊ້ຍຸດທະວິທີແບບກອງໂຈນ, ອົງການສະຫະປະຊາຊາດປ່ຽນມາຕໍ່ຕ້ານກັບນະໂຍບາຍຂອງພວກໂຮນລັງ ຢ່າງແທ້ຈິງ ຄົມ ແລ້ວພວກຜູ້ນຳຂອງລັດສະຫະພັນ ທີ່ໂຮນລັງ ຕັ້ງແຕ່ງໄວ້ ຜູ້ມີຫົວຊາດນິຍົມ ທັນ ມາຍຶດເອົາແນວທາງເປັນເອກະລາດຫຼາຍຂຶ້ນເຊັ່ນກັນ. ປະເທດໂຮນລັງ ຈຳຕ້ອງໄດ້ ຍິນຍອມ ພວກຜູ້ນຳຝ່າຍສາທາລະນະລັດ ກໍຍິນດີ ກຽມທີ່ຈະເຈລະຈາຄືກັນ. ຂໍ້ຕົກລົງ ທີ່ ກຸງເຮກ ໃນ ວັນທີ 2 ເດືອນພະຈິກ ໄດ້ພາມາເຖິງການຕົກລົງກັນໃນສອງຂໍ້ ດັ່ງນີ້ ຄື ເອກະລາດທາງການເມືອງ ຂອງອິນໂດເນເຊຍ, ການຍຶດຄອງຊົ່ວຄາວພາກຕາເວັນຕົກ ຂອງນິວກີເນຍໂດຍພວກໂຮນລັງ, ແລະການຮັບປະກັນ ການລົງທຶນ ຂອງ ດັດຊ໌ ຢູ່ ໃນ ອິນໂດເນເຊຍ. ໃນວັນທີ 27 ທັນວາ ປີ 1949 ທຸງຊາດຂອງ ໂຮນລັງ ກໍ ຖືກຊັກລົງເປັນຄັ້ງສຸດທ້າຍ.

ໃນລະຫວ່າງເກີດຄວາມຫຍຸ້ງເຫຍີງ ໃນລະຍະປະຕິວັດນັ້ນ ພວກຊາວເມືອງ ເກືອບທັງໝົດທີ່ກຸ່ມຊາດນິຍົມຮຸ່ນກ່ອນໄດ້ປ່ຽນໃຫ້ເປັນ "ອິນໂດເນເຊຍ" ຄຣິດສະຕຽນ

ນັ້ນ ໄດ້ພາກັນຄຶດພ້ວ່າຕົນເອງ ມີຖານະເປັນຄົນອິນໂດເນເຊ ທີ່ເປັນຊົນເຜົ່າຍິ່ງໃຫຍ່ ມີເອກະລັກແຫ່ງຊາດ ທີ່ບໍ່ສາມາດພົບເຫັນໄດ້ ໃນພາກພື້ນອື່ນຂອງອາຊີຕາເວັນອອກ ສ່ງໃຕ້ ຍົກເວັ້ນໃນ ຟີລິບປິນ. ໃນລະຫວ່າງຊຸມປີດຽວກັນ ພາສາອິນໂດເນເຊຍ ເຊິ່ງ ກໍເປັນພາສາຊົນເຜົ່າຜູ້ຍິ່ງໃຫຍ່ຄືກັນ ກໍເກີດມີຄວາມສຳຄັນໃໝ່ ໃນຈິດສຳນຶກ ຂະນະ ທີ່ລະບົບການຮຽນການສອນ ແບບໃຊ້ພາສາອິນໂດເນເຊເອກະພາບ ກໍຖືກກໍ່ຕັ້ງຂຶ້ນ ໃຫ້ເປັນການຖາວອນ. ມັນອາດຈະຍາກຢູ່ ທີ່ຈະປະເມີນຄວາມສຳຄັນຂອງພັດທະນາ ການເຫຼົ່ານີ້ ຢ່າງເກີນຄວາມຈິງ ຢູ່ໃນລະຍະຍາວ ສຳລັບອະນາຄົດຂອງປະເທດຊາດ ອິນໂດເນເຊ ທີ່ອຸດົມສົມບູນໄປດ້ວຍຫຼາກຫຼາຍຊົນຊາດຊົນເຜົ່າ.

ເຖິງຢ່າງໃດກໍຕາມ ໃນລະຍະສັ້ນ ສາທາລະນະລັດ ທີ່ມີອະທິປະໄຕໃໝ່ໆ ກໍ ຕ້ອງປະເຊີນກັບຄວາມຫຍຸ້ງຍາກອັນແສນສາຫັດໃນທຸກແນວຮົບ. ໃນດ້ານເສດຖະກິດ, ອິນໂດເນເຊ ຍັງຕົກຢູ່ໃນຄວາມໂກລາຫົນ ຫຼັງຈາກຖືກ ຍີ່ປຸ່ນ ແລະ ໂຮນລັງ ຢຽບ ຍ່ຳຢູ່ແປດປີ ຂໍ້ກຳນົດທາງເສດຖະກິດ ໃນຂໍ້ຕົກລົງທີ່ ກຸງເຮກ (Hague Agreement) ເຊິ່ງຜູ້ແທນອິນໂດເນເຊ ໄດ້ຍອມຮັບເອົາຢ່າງງ່າຍດາຍຜິດປົກກະຕິນັ້ນ ໝາຍ ເຖິງການຄົງຕົວຢູ່ຕໍ່ໄປ ຂອງເສດຖະກິດແບບອະນານິຄົມກ່ອນສະໄໝສົງຄາມ. ເປັນ ຄວາມຈິງວ່າ ລະຫວ່າງຕົ້ນຊຸມປີ 1950 ນັ້ນ ພວກໂຮນລັງ ກັບຊາວຈີນ ຍັງຄົງດຳ ເນີນທຸລະກິດຂອງພວກເຂົາໄປຄືກັນກັບຕອນກ່ອນເກີດສົງຄາມເລີຍ. ໃນດ້ານສັງຄົມ, ການປົ້ນປ່ຽນໃນສະໄໝປະຕິວັດ ໄດ້ກໍ່ໃຫ້ເກີດຄວາມຄາດຫວັງແບບໃໝ່ ແລະເລື່ອງ ເກົ່າໆທີ່ຕ້ອງແກ້ໄຂ. ພວກອະດີດທະຫານຜ່ານເສິກຂອງ ເປຈອງກັນ ຄາດຫວັງເຖິງ ຄວາມສຸກສົມບູນສ່ວນຕົວ ທີ່ຈະໄດ້ຄວາມເປັນເອກະລາດ ທີ່ພວກເຂົາຮູ້ສຶກວ່າຕ້ອງ ການມີຢ່າງແນ່ນອນ. ຜູ້ຮຽນສຳເລັດຈາກລະບົບໂຮງຮຽນທີ່ຂະຫຍາຍຕົວຢ່າງວ່ອງໄວ ໃນຊຸມປີ 1950 ຮີບຮ້ອນຢາກເຂົ້າໄປເຮັດວຽກໃນລະບົບລັດຖະການ ທີ່ເຕີບໃຫຍ່ຂະ ຫຍາຍໂຕອອກໄວເທົ່າໆກັນ. ໃນຂະນະດຽວກັນ ການປະຕິວັດເນັ້ນຍ້ຳເຖິງການແບ່ງ ວຽກງານພາຍໃນ ຢ່າງຈະແຈ້ງ. ຊາວຈີນແລະຊາວອິນໂດເນເຊ ຕ່າງກໍມີເຫດຜົນ ໜັກແໜ້ນ ທີ່ຈະບໍ່ໄວ້ເນື້ອເຊື່ອໃຈກັນ ຄືດັ່ງທີ່ເຄີຍມີມາເມື່ອຫ້າປີກ່ອນ. ສະຖາບັນ ຕ່າງໆ ຂອງອິນໂດເນເຊໃໝ່ ເຊັ່ນ ກອງທັບ, ພັກການເມືອງ ແລະ ກະຊວງທະບວງ

ກົມຕ່າງໆຂອງລັດຖະບານ ປາກົດຕົວຂຶ້ນ ແຕ່ມີຜົນປະໂຫຍດຂັດກັນ. ໃນບາງຂົງເຂດ ເຊັ່ນພາກຕາເວັນອອກຂອງ ສຸມາຕຣາ ຄວາມແຕກຕ່າງທາງດ້ານຊົນເຜົ່າກາຍມາເປັນປໍລະປັກທາງຊົນເຜົ່າຢ່າງເປີດເຜີຍ ພາຍຫຼັງການປະທະກັນ ໃນສະໄໝເຮັດການປະຕິວັດ. ຢູ່ພາກຕາເວັນຕົກຂອງຊະວາ, ໝູ່ດອນ ເຊເລເບສ ພາກໃຕ້ ກັບ ອາເຈ ທີ່ເປັນກຸ່ມອິດສະລາມ ມີຄວາມຄຽດແຄ້ນຕໍ່ກັນ ຍ້ອນການປະຕິວັດ ແລະ ຄວາມເປັນປໍລະປັກກັບ ລັດອານາຈັກຜູ້ມີໄຊ ໄດ້ພາກັນລຸກຮືຂຶ້ນເພື່ອລັດອິດສະລາມ. ກຸ່ມຂະບົດ ມາດິອຸນ ກອມມູນິດ (The Communist Madiun Rebellion) ໃນ ປີ 1948 ທີ່ສ່ວນໃຫຍ່ລຸກຮືຂຶ້ນຢູ່ນອກພັກການເມືອງ ໃນລະດັບຊາດນັ້ນ ໄດ້ພາໄປ ເຖິງການຕໍ່ສູ້ອັນໂຫດຫ້ຽມ ລະຫວ່າງຊາວ ສັນຕຣີ (Santri) ຊະວາ ກັບພວກ ອາບັງ ກັນ (Abagan) ໃນບ້ານຕ່າງໆ.

ໃນທາງການເມືອງ ໃນຊຸມປີທຳອິດ ແຫ່ງການມີເອກະລາດ ພວກຊາດນິຍົມ ຜູ້ຄອງອຳນາດດົນ ນຳໜ້າໂດຍ ຊູການໂນ ກັບ ແຮັຕຕາ ຍຶດຈ່ອງໄມ້ງັດອຳນາດ ທາງການເມືອງທັງໝົດ ຄື: ພັກການເມືອງທັງຫຼາຍ, ສະພາຜູ້ແທນລາສະດອນຊົ່ວຄາວ, ຕຳແໜ່ງປະທານປະເທດ ແລະ ລະບົບການປົກຄອງລັດຖະການຂັ້ນສູງ ແລະຂັ້ນສູນກາງ. ແຕ່ສະຖາບັນເຫຼົ່ານີ້ ຈຸ້ມກັນຢູ່ໃນ ຈາກາຣ໌ຕາ. ພາຍນອກນະຄອນຫຼວງອອກໄປ ພວກຊົນຊັ້ນສູງທ້ອງຖິ່ນປະເພດຕ່າງໆ ທັງທີ່ສືບທອດກັນມາຕາມສາຍເລືອດ ຫຼື ວ່າຕາມແບບອື່ນໆ ແບບຂຸນນາງ ຫຼື ພໍ່ບ້ານ ມີຄຳຕໍ່ວ່າຕໍ່ຂານຫຼາຍຢ່າງໃຫ້ລັດຖະບານປະຈຸບັນ. ທັງໃນ ຈາກາຣ໌ຕາ ແລະ ພາຍນອກຂອງພາກພື້ນ, ກອງທັບເຊິ່ງເປັນຄວາມພາກພູມໃຈຂອງ ເປີຈວງກັນ ທີ່ບໍ່ເອົາຫົວຊານຳນະໂຍບາຍ ດິໂປລມາຊີ ຂອງຊົນຊັ້ນນຳຊາດນິຍົມ ໄດ້ຮັບການສະໜັບສະໜຸນແບບຂາດໆເຂີນໆ ແລະທັງບໍ່ໄດ້ຮັບຄວາມສົນໃຈຈິງຈັງຈາກຊົນຊັ້ນນຳພົນລະເຮືອນນັ້ນ ໄດ້ສະສົມຄວາມຄຽດແຄ້ນຂອງຕົນໄວ້.

ໃນຊຸມປີຕົ້ນໆຂອງຍຸກເອກະລາດໃໝ່ ໂດຍການເຮັດວຽກຜ່ານລັດຖະສະພາ ຊົ່ວຄາວ ຄະນະລັດຖະມຸນຕີແຕ່ລະຊຸດ ໄດ້ເລີ່ມລົງມືສ້າງຕັ້ງລັດຖະບານທີ່ແທ້ຈິງ ເຕັມ

ແບບອອກມາ ໂດຍເອົາແບບຢ່າງຂອງປະເທດຕາເວັນຕົກແດ່ເລັກນ້ອຍ ແລະເພື່ອ ຊ້ອມແຊມຄວາມເສຍຫາຍ ຈາກຍຸກອຸ່ນອາຍຕະຫຼອດເວລາສິບປີ ນັ້ນຄືນ. ພາລະ ພວກເຂົາເປົ້າບາງລົງ ເມື່ອສາທາລະນະລັດເກີດໃໝ່ ມີທັດສະນະເບິ່ງໃນແງ່ດີເອົາ ໄວ້. ການອຸປະກາລະທີ່ພວກເຂົາຮຽກຮ້ອງເອົາ ໃນການກໍ່ຕັ້ງອົງກອນຂອງລັດໃໝ່ ແລະ ການເກີດສົງຄາມເກົາຫຼີ ກໍອຳນວຍເປັນຢ່າງດີ ໃຫ້ແກ່ການສົ່ງອອກສິນຄ້າຂອງອິນໂດ ເນເຊຍ.

ສະຖານະການອັນເອື້ອອຳນວຍເຫຼົ່ານີ້ ມາເຖິງຈຸດອະວະສານ ເມື່ອປາຍປີ 1952 ແລະຄວາມຮຸນແຮງໃນການຂັດແຍ່ງກໍ່ຍິ່ງທະວີຂຶ້ນຢ່າງຕໍ່ເນື່ອງ ຕະຫຼອດເວລາ ສາມປີຕໍ່ມາ. ການເມືອງຂອງພັກ ກາຍເປັນເລື່ອງຂົມຂື່ນ ແລະແຕກແຍກຫຼາຍຂຶ້ນ, ນັກປະຕິຮູບມຸດສະລິມ ແລະນັກຈາຣີດນິຍົມ ແຕກກັນອອກເປັນສອງພັກການເມືອງ, ສ່ວນພັກກອມມູນິດອິນໂດເນເຊຍ (PKI) ກໍຟື້ນຕົວຄືນຢ່າງໜ້າສົນໃຈ ຈາກຄວາມ ຫຼົ້ມຈົມເສຍຫາຍຢູ່ ມາດົນ. ອັນສຳຄັນກວ່ານີ້ ກໍແມ່ນ ພັກການເມືອງຕ່າງໆ ເຊິ່ງມາຮອດຈຸດນີ້ ໄດ້ເປັນພຽງຕົວແທນຊົນຊັ້ນສູງໃນເມືອງຈຳນວນເລັກນ້ອຍ ໄດ້ ອອກແຮງພະຍາຍາມຢ່າງຈິງຈັງເພື່ອດຶງເອົາການສະໜັບສະໜຸນຈາກມະຫາຊົນເພື່ອ ການເລືອກຕັ້ງ ທີ່ຈະມີຂຶ້ນ ໃນປີ 1955, ດັ່ງນັ້ນ ພວກເຂົາຈຶ່ງໄດ້ນຳເອົາຄວາມຂັດ ແຍ່ງທາງການເມືອງຂອງຊຸມຊົນໃນຕົວເມືອງ ເຂົ້າມາສູ່ຊີວິດຂອງຊາວບ້ານໂດຍກົງ. ຂະນະດຽວກັນລັດຖະບານຕ່າງໆ ເຊິ່ງປະເຊີນໜ້າກັບລາຍຮັບທີ່ຕົກຕ່ຳຈາກການສົ່ງ ອອກ ແລະ ຄວາມຕ້ອງການທີ່ສູງຂຶ້ນ ຂອງຂາສະໜັບສະໜຸນຂອງຕົນທີ່ຢູ່ໃນເມືອງ ຈຶ່ງໄດ້ຫັນໄປຫາເສດຖະກິດແບບຊາດນິຍົມ ເພື່ອແກ້ໄຂການຂາດດຸນທາງການເງິນ ທັງຕໍ່ຕ້ານຕ່າງປະເທດ ໂດຍສະເພາະ ການຕ້ານຊາວຈີນ.

ການເລືອກຕັ້ງແຫ່ງຊາດ ທີ່ຄອງຄອຍມາດົນນານຈົນຮອດ ປີ 1955 ເຖິງວ່າ ໄດ້ປະສົບຄວາມສຳເລັດຍິ່ງໃຫຍ່ ດ້ວຍວ່າ ມີຄົນອອກມາໃຊ້ສິດເປັນຈຳນວນຫຼາຍ ກໍຫາກນຳໄປສູ່ ອະວະສານຢ່າງໄວວາ ແຫ່ງລະບອບປະຊາທິປະໄຕ ແບບມີລັດຖະ ສະພາໃນອິນໂດເນເຊຍ ລະຫວ່າງປີ 1956 ແລະ 1958 ພັກການເມືອງຕ່າງໆ

ລັດຖະສະພາ ແລະຄະນະລັດຖະມຸນຕີ ຫຼົ້ມສະລາຍລົງ ບ່ໄດ້ມີຖານະເປັນສະຖາບັນ ທາງການເມືອງທີ່ສຳຄັນອີກຕ່ໄປ ແລະ ກຳລັງທາງການເມືອງໃໝ່ໄດ້ເກີດຂຶ້ນມາແທນ. ໃນໝູ່ດອນສຸມາຕຣາ ແລະ ເຊເລແບສ ທີ່ເປັນແຫຼ່ງສິນຄ້າສົ່ງອອກ ລາຍໄດ້ຈາກ ການແລກປ່ຽນສິນຄ້າກັບຕ່າງປະເທດ ຢູ່ທີ່ນີ້ ຕົ້ນຕໍແລ້ວ ຖືກນຳໄປລ້ຽງຊະວາ ກັບ ໄປ ຊຸກຍູ້ພວກຊິນຊັ້ນນຳໃນເມືອງທີ່ສຸມຈຸ້ມກັນຢູ່ທີ່ນັ້ນ, ຜູ້ບັນຊາການກອງທັບທ້ອງຖິ່ນ ປະກາດການປົກຄອງຕົນເອງ ໃນລະດັບທ້ອງຖິ່ນດ້ວຍການເຮັດລັດຖະປະຫານຫຼາຍ ຄັ້ງ ເລີ່ມແຕ່ເດືອນ ທັນວາ ປີ 1956 ມາ. ພໍເຖິງຕົ້ນປີ 1958 ຂະບວນການໄດ້ ປະກາດຕົນເປັນລັດຖະບານອິນໂດເນເຊ່ຍຕ່ຕ້ານ ເຮັດໃຫ້ກຸງຈາກາຕ້ຕາ ຕ້ອງໃຊ້ເວ ລາປາບປາມຢູ່ຫຼາຍປີ. ໃນຂະນະດຽວກັນ ພັກກອມມູນິດ ອິນໂດເນເຊ່ຍ ກໍເຕີບໃຫຍ່ ຢ່າງໄວວາ ແລະກອງທັບໄດ້ຍຶດອຳນາດບໍລິຫານໄວ້ຢ່າງກວ້າງຂວາງ ພ້ອມກັບປະ ກາດໃຊ້ກົດໄອຍະການເສິກ ໃນເດືອນມີນາ 1957. ລຸນຫຼັງເດືອນທັນວາ ປີ 1957 ເມື່ອສະຫະປະຊາຊາດ ປະຕິເສດການອ້າງສິດ ຂອງ ອິນໂດເນເຊ່ຍ ເໜືອດິນແດນ ດອນນີວກີເນ ພາກຕາເວັນຕົກ ລັດວິສາຫະກິດທັງໝົດຂອງໂຮນລັງໃນອິນໂດເນເຊ່ຍ ກໍຖືກໂອນຄືນ ກອງທັບໄດ້ຍຶດແລະຄວບຄຸມ ແຫຼ່ງອຸປະຖຳອັນກວ້າງຂວາງແຫ່ງໃໝ່ ໄວ້ໄດ້.

ໃນຂະນະທີ່ອິນໂດເນເຊ່ຍ ເລີ່ມມາຍຂອດບັນຫາທາງການເມືອງນັ້ນ ປະທານ ປະເທດ ຊູກາຣ໌ໂນ ຜູ້ເປັນສັນຍະລັກອັນໜຽວແໜ້ນແລະໝັ້ນຄົງ ແຫ່ງຄວາມສາມັກຄີ ຂອງອິນໂດເນເຊ່ຍ ກໍກ້າວຜ່ານເຂົ້າສູ່ສູນກາງການເມືອງແຫ່ງຊາດ ຢ່າງໜັກແໜ້ນ. ໃນກາງປີ 1959 ຊູກາຣ໌ໂນ ປະກາດຍົກເລີກລັດຖະທຳມະນູນສະບັບຊົ່ວຄາວທີ່ໃຊ້ ຢູ່ໃນຂະນະນັ້ນ ແລະນຳເອົາລະບອບການມືອງໃໝ່ເຂົ້າມາແທນ ຄື ລະບອບປະຊາ ທິປະໄຕແບບຊີ້ນຳ (Guided Democracy) . ຕະຫຼອດ ຫົກປີຕໍ່ມາ ອຳນາດທາງ ການເມືອງຂອງອິນໂດເນເຊ່ຍ ໄດ້ອີງໃສ່ພັນທະມິດທີ່ສູ້ຢັນກັນ ລະຫວ່າງ ກອງທັບຜູ້ມີ ກົນໄກເກືອບທັງໝົດຢູ່ໃນກຳມື ກັບ ປະທານ ຊູກາຣ໌ໂນ ຜູ້ມີບາລະມີ ພ້ອມດ້ວຍການ ສະໜັບສະໜຸນອັນໝັ້ນຄົງຊື່ສັດ ຈາກພັກກອມມູນິດອິນໂດເນເຊ່ຍ. ຂວັ້ນການເມືອງ ທີ່ສ້າງຂຶ້ນມາຢ່າງແປກປະຫຼາດນີ້ ຍັງຄົງດຳລົງຢູ່ໄດ້ຢ່າງໝັ້ນຄົງ ຢ່າງໜ້າອັນສະຈັນ

ແມ່ນແຕ່ໃນຂະນະທີ່ກຳລັງລົງຄ້ອຍໄປສູ່ການເກີດຈະລາຈົນ.ການສົ່ງອອກຫຼຸດລົງເມື່ອ ພວກນາຍທະຫານ ກວາດເອົາພືດຜົນຈາກສວນເກົ່າຂອງພວກໂຮນລັງ ອອກໄປ, ຊະ ວາເອງ ບໍ່ສາມາດສະໜອງອາຫານ ຢ່າງພຽງພໍຕໍ່ຄວາມຕ້ອງການຂອງພົນລະເມືອງ ທີ່ນັບມື້ນັບຫຼາຍຂຶ້ນ, ອັດຕາເງິນເຟີ້ສູງຂຶ້ນຢ່າງໄວວາ. ລັດຖະບານ ລົງມືປະຕິບັດແ ຜນການປະຈັນບານສຳຄັນສອງຊຸດ, ອັນທີໜຶ່ງ (1960-1962) ຕໍ່ຕ້ານພວກໂຮນລັງ ເພື່ອທວງເອົາ ດອນນິວກີເນ ຕາເວັນຕົກຄືນ ເຊິ່ງກໍປະສົບຄວາມສຳເລັດ ໃນປີ 1962, ອັນທີສອງ (ເລີ່ມໃນປີ 1963) ເພື່ອຕໍ່ຕ້ານລັດໃໝ່ອ່ຽມມາເລເຊ. ເພື່ອເຮັດການໂຄສະ ນາປຸກລະດົມເຫຼົ່ານີ້ ລັດຖະບານ ຊູກາຣ໌ໂນ ໄດ້ນຳເອົາອຸປະກອນທາງການທະຫານ ຈາກ ສະຫະພາບໂຊວຽດເຂົ້າມາຢ່າງຫຼວງຫຼາຍ ດ້ວຍເຫດຜົນຕ່າງໆ. ໃນເວລາອັນ ເໝາະສົມ ລັດຖະບານໄດ້ດຳເນີນການເພື່ອໂອນຄືນຊັບສົມບັດຂອງອັງກິດ ແລະ ອິນ ເດ ຕື່ມໃສ່ອັນທີ່ເປັນຂອງ ໂຮນລັງ ໃນຕອນຕົ້ນໆນຳ, ກະໂຕ ຊູກາຣ໌ໂນ ເອງ ໄດ້ ອອກເຜີຍແຜ່ກະແສຄຳຂວັນໃໝ່ໆ ທີ່ໄດ້ກາຍມາເປັນ ສ່ວນໜຶ່ງຂອງອຸດົມຄະຕິຢ່າງ ເປັນທາງການ ເຊິ່ງໃນນັ້ນ ພະນັກງານພົນລະເຮືອນ ກັບນັກສຶກສາ ກໍໄດ້ຮ່ຳຮຽນ ຮັບເອົານຳ. ໃນປີ 1964 ພັກກອມມູນິດ (PKI) ເຊິ່ງໄດ້ຮັບການສະໜັບສະໜຸນຢ່າງ ເປີດເຜີຍຫຼາຍຂຶ້ນຈາກ ຊູກາຣ໌ໂນ ໃນການເປັນພັນທະມິດຕໍ່ຕ້ານທະຫານ ກໍໄດ້ ສ້າງຄວາມຕື່ນຕົກໃຈໃຫ້ແກ່ການນຳຂອງຊະວາໃນຊົນນະບົດ ໂດຍສະເພາະ ພວກ ສັນຕຣິ ເຊິ່ງເປັນສ່ວນໜຶ່ງຂອງພັກນີ້ ດ້ວຍການປະກາດການປະຕິຮູບທີ່ດິນອັນເຂັ້ມ ງວດ ແລະການຫຼຸດຄ່າເຊົ່າທີ່ດິນ.

ຂະນະທີ່ລະບອບປະຊາທິປະໄຕແບບຊີ້ນຳ ເຄື່ອນເຂົ້າສູ່ ປີ 1965 ນັ້ນ ພາ ວະເງິນເຟີ້ ທີ່ນັບມື້ນັບສູງຂຶ້ນເປັນຈອມສ້ວຍ ກໍພຸ່ງຂຶ້ນຈົນສຸດໂຕ່ງ (hyperinflation) ກອງທັບມີຄວາມກັງວົນ ໃນສິ່ງທີ່ ຊູກາຣ໌ໂນ ອາດລົງມືເຮັດໃນຕໍ່ໜ້າ ເພື່ອພັກກອມມູ ນິດ ກອງທັບຈຶ່ງກຽມອາວຸດຢ່າງພ້ອມພຽງ. ຝ່າຍກອມມູນິດເອງ ເຊິ່ງກໍໄດ້ອອກແຮງ ໂຄສະນາຊຸດໃໝ່ ປຸກລະດົມໃຫ້ມີກອງທັບປະຊາຊົນ ເຊິ່ງອາດໝາຍເຖິງການໃຫ້ອາ ວຸດແກ່ຝ່າຍສະໜັບສະໜຸນພັກ ສ່ວນໃດສ່ວນໜຶ່ງ ໂດຍຍຶດແໜ້ນຢູ່ກັບ ຊູກາຣ໌ໂນ

ຍິ່ງກວ່າເກົ່າອີກ, ສ່ວນ ຊູກາຣ໌ໂນເອງ ກໍປາກົດວ່າ ໄດ້ນຳໃຊ້ພິກໄຫວອັນພິເສດສຸດທີ່ ມີຢູ່ ຈີນໝົດແລ້ວຄືກັນ.

ວິກິດການລະເບີດຂຶ້ນ ກ່ອນຮຸ່ງເຊົ້າ ຂອງວັນທີ 1 ຕຸລາ 1965 ເມື່ອນາຍ ທະຫານຊັ້ນກາງກຸ່ມໜຶ່ງ ໄດ້ລອບສັງຫານນາຍທະຫານອາວຸໂສ 6 ຄົນ ແລະ ປະກາດ ຍຶດອຳນາດ ພາຍໃຕ້ຄັນຕະລະບັດ ຊູກາຣ໌ໂນ. ຢູ່ ອິນໂດເນເຊ ການເຮັດລັດຖະປະ ຫານ ມັກຖືກປະກາດຢ່າງເປັນທາງການວ່າ ເປັນຜົນງານຂອງ ພັກກອມມູນິດ, ແຕ່ ນັກວິຊາການຕ່າງປະເທດ ຜັດພາກັນແປຄວາມໝາຍ ແຕກຕ່າງກັນໄປ. ເຖິງຢ່າງໃດ ກໍດີ ມັນກໍເປັນພຽງຜົນຮັບສຳຮອງ ຂອງການລັດຖະປະຫານ ທີ່ຖືກປາບປາມລົງພາຍ ໃນມື້ດຽວ ໂດຍ ກຳລັງຂອງ ນາຍພົນ ຊູຮາຣ໌ໂຕ (Suharto).

ທັງ ຊູກາຣ໌ໂນ ທັງພັກກອມມູນິດ ຕ່າງກໍຖືກສະເນີອນຍ້ອນການສົມຮູ້ຮ່ວມ ຄຶດກັນ ເຮັດລັດຖະປະຫານ ຂອງນາຍພົນອາວຸໂສຫົກຄົນ. ຕາມສຽງຮຽກຮ້ອງ ຂອງ ປະຊາຊົນທີ່ມາໂຮມຊຸມນຸມ ກອງທັບຈຶ່ງທຳລາຍພັກກອມມູນິດ (PKI) ຢ່າງຣາບຄາບ ໄປເລີຍ. ໃນທ້າຍເດືອນຕຸລາ ຫຼັງຈາກທີ່ຢູ່ຢ່າງງຽບສະຫງົບມາສາມອາທິດ ການສັງ ຫານໝູ່ ກໍເລີ່ມຂຶ້ນ ໃນຊະວາພາກກາງ ແລະໄດ້ລຸກລາມໄປເຖິງຊະວາຕາເວັນອອກ ກັບ ດອນບາຫລີ. ກອງກຳລັງຂອງທະຫານເອງ ປາກົດວ່າ ໄດ້ເຂັ່ນຂ້າປະຊາຊົນໄປ ແຕ່ໜ້ອຍດຽວ ພວກເຂົາໃຫ້ການສະໜັບສະໜຸນ ຈັດຫາອາວຸດໃຫ້ ແຕ່ສ່ວນໃຫຍ່ແລ້ວ ແມ່ນຄົນໃກ້ຄຽງ ກັບ ຝູງຊາວໜຸ່ມພຸ້ນ ລົງມືເຂັ່ນຂ້າ ມີຄົນຫຼາຍແສນຄົນຖືກຂ້າ ຢ່າງ ອະເຫຍີອງ ໂດຍບໍ່ມີການຕໍ່ຕ້ານເລີຍ (ຄາດຄະເນວ່າ ຈຳນວນຜູ້ເຄາະຮ້າຍ ອາດຈະມີ ໜ້ອຍກວ່າແສນ ຫຼືຮອດ ລ້ານຄົນຂຶ້ນໄປ. ການສັງຫານທີ່ປະຕິບັດຢູ່ນອກເຂດຊະວາ ກັບ ບາຫລີ ເກີດຂຶ້ນໃນເຂດ ສຸມາຕຣາ ພາກເໜືອ. ຢູ່ ອາເຈ ກັບ ບໍນຽວພາກຕາເວັນ ຕົກ ຊາວຈີນຈຳນວນຫຼາຍ ກໍຖືກດັບສູນເຊັ່ນກັນ).

ຖ້າມກາງຄວາມໂຫດຫ້ຽມເຫຼົ່ານີ້ ໃນວັນທີ 11 ມີນາ 1966 ຊູກາຣ໌ໂນ ຖືກ ບັງຄັບໃຫ້ມອບສິ່ງອຳນາດສິດຂາດໃຫ້ແກ່ ຊູຮາຣ໌ໂຕ ແລ້ວອິນໂດເນເຊກໍໄດ້ຜ່ານຜ່າ

ສິ່ງທີ່ເອີ້ນກັນວ່າ "ລະບຽບການເມືອງເກົ່າ" ໄປສູ່ "ລະບຽບການເມືອງໃໝ່". ໃນອີກ ດ້ານໜຶ່ງ ຊູຮາຣ໌ໂຕ ກໍຮີບເຮັ່ງດຳເນີນນະໂຍບາຍເສດຖະກິດ ແລະການຕ່າງປະເທດ. ດ້ານພາຍໃນປະເທດ ເມື່ອຮູ້ດີວ່າ ຕົນເອງບໍ່ສາມາດເຮັດຫຍັງໄດ້ຫຼາຍ ກ່ຽວກັບສະ ພາວະເງິນເຟີ້ ທີ່ສູງຜິດປົກກະຕິ ເຂົາຈຶ່ງໄດ້ສ້າງຄວາມສຳພັນຢ່າງແໜ້ນແຟ້ນກັບກຸ່ມ ນັກເສດຖະສາດ ຜູ້ຜ່ານການສຶກສາຈາກອາເມລິກາ ຄືພວກນັກວິຊາການ "ເຕັກໂນ ກຣາດ" ຜູ້ມີອາຍຸລະຫວ່າງ 60, 70 ແລະ 80 ກໍມີ. ດ້ານຕ່າງປະເທດ ເຂົາຟ້າວຍົກເລີກ ນະໂຍບາຍຕ່າງປະເທດທີ່ສຳຄັນສອງຢ່າງ ທີ່ ຊູການ໌ໂນ ໄດ້ລິເລີ່ມໄວ້ແລ້ວໃນເວລາ ນັ້ນ ຄື ການປະເຊີນໜ້າທາງທະຫານ ກັບ ມາເລເຊຍ. ບາດກ້າວເຫຼົ່ານີ້ ໄຂປ່ອງທາງ ໄປສູ່ຄວາມສຳພັນອັນໃກ້ຊິດກວ່າເກົ່າກັບປະເທດຕາເວັນຕົກ ແລະ ຍີ່ປຸ່ນ ດັ່ງນັ້ນ ຈຶ່ງເປັນການເບີກທາງໄປສູ່ ການຮັບການຊ່ວຍເຫຼືອທາງເສດຖະກິດ ຂອງອິນໂດເນ ເຊຍ. ເມື່ອກຸ່ມນາຍທຶນຕື່ນຕົວຕໍ່ການຮຽກຮ້ອງເຫຼົ່ານີ້ ຊູຮາຣ໌ໂຕ ກັບນັກວິຊາການຂອງ ເຂົາ ກໍດຳເນີນບາດກ້າວຕໍ່ໄປ ເພື່ອໂອນຄືນຊັບສິນໃຫ້ແກ່ ພວກດັດຊ໌ ກັບຊາດອື່ນໆ ແລະເພື່ອປະກາດໃຊ້ກົດໝາຍ ທີ່ດຶງດູດການລົງທຶນຂອງຕ່າງປະເທດ. ນັບແຕ່ນັ້ນມາ ຄວາມຊ່ວຍເຫຼືອຈາກຕ່າງປະເທດກໍໄຫຼມາ ເທມາເຂົ້າປະເທດ.

ໃນດ້ານອື່ນໆ ໂດຍສະເພາະເລື່ອງການເມືອງພາຍໃນປະເທດ ຊູຮາຣ໌ໂຕ ເຄື່ອນໄຫວຢ່າງຊ້າໆ ດ້ວຍຄວາມລະວັງເປັນພິເສດ. ເຂົາເຂົ້າໃຈໃນເລື່ອງຄວາມດູດ ດຶ່ມອັນເລິກເຊິ່ງໃນນະໂຍບາຍດ້ານພາສາ ແລະບຸກຄະລິກອັນພິເສດຂອງ ຊູການ໌ໂນ ຈຶ່ງຫຼີກເວັ້ນທີ່ຈະກ່າຍເອົາແບບຢ່າງຂອງເຂົາ ຜູ້ນີ້. ຊູຮາຣ໌ໂຕ ຫັນຫຼັງໃຫ້ແກ່ການປະ ເຊີນໜ້າໂດຍກົງກັບ ຊູການ໌ໂນ ໃນໄລຍະການໝູນໃຊ້ລັດຖະທຳມະນູນສະບັບເລິກ ລັບ ຂອງປີ 1966 ຫາປີ 1968. ຈົນມາເຖິງເດືອນມີນາ 1968 ຊູຮາຣ໌ໂຕ ຈຶ່ງໄດ້ ຮັບເລືອກເປັນປະທານປະເທດ ແລະມາເຖິງເດືອນມິຖຸນາ ເຂົາຈຶ່ງສາມາດຕັ້ງຄະນະ ລັດຖະມຸນຕີຂຶ້ນໄດ້.

ເມື່ອແຕ່ງຕັ້ງລັດຖະມຸນຕີຮຽບຮ້ອຍແລ້ວ ປະເທດອິນໂດເນເຊຍຂອງຊູຮາຣ໌ໂຕ ກໍດຳເນີນໄປໃນທິດທາງດຽວກັນກັບ ສິງກະໂປ ຄືກັບວ່າເປັນບໍລິສັດ ຫຼາຍກວ່າການ

ເປັນປະເທດໜຶ່ງ. ຕົວຢ່າງທີ່ຮູ້ຈັກກັນດີກວ່າໝູ່ກໍແມ່ນ ຄວາມເປັນເອກະພາບ ເກືອບ ສົມບູນແບບ ຂອງຄະແນນສຽງເລືອກຕັ້ງ ຂອງພັກລັດຖະບານ ໃນການເລືອກຕັ້ງ ສາມຄັ້ງ ຄື ໃນປີ 1971, 1977ແລະ 1982 ຄືໄດ້ 62% ຫາ 64%. ດັ່ງນັ້ນ ຈຶ່ງເປັນການ່ງ່າຍ ທີ່ຈະບັນຍາຍເຖິງການສ້າງສາປະເທດຊາດຂອງອິນໂດເນເຊຍ ຫຼາຍ ກວ່າການບັນຍາຍປະຫວັດສາດຂອງອິນໂດເນເຊຍ ໃນລະບຽບການໃໝ່ ທີ່ອາດເລີ່ມ ຕົ້ນດ້ວຍເລື່ອງການເມືອງ.

ການເມືອງຂອງລະບອບການປົກຄອງໂດຍທະຫານ ຂອງ ຊູຮາຣ໌ໂຕ ມີຈຸດໃຈ ກາງ ຢູ່ໃນຊັ້ນນາຍທະຫານ ຂອງກອງທັບ ອິນໂດເນເຊຍ. ເມື່ອນາຍທະຫານ ເກືອບທັງໝົດ ມີຄວາມພໍໃຈ ຄືດັ່ງພວກເຂົາເຄີຍເປັນມາ ນັບແຕ່ປີ 1967 ໂດຍ ປະມານ ລະບຽບການໃໝ່ກໍດຳເນີນໄປຕາມແບບທີ່ມັນຖືກກຳນົດມາ. ບໍ່ເປັນເລື່ອງ ແປກປະຫຼາດແຕ່ຢ່າງໃດທີ່ ຊູຮາຣ໌ໂຕ ຕ້ອງໄດ້ເອົາໃຈໃສ່ເຮັດວຽກງານນີ້ ຢ່າງລະມັດ ລະວັງ ເຂົາໄດ້ຮັບມໍລະດົກຕົກທອດເປັນກອງທັບ ທີ່ຍິ່ງໃຫຍ່ກວ່າ ມີຄວາມສຳຄັນ ດ້ານການເມືອງຫຼາຍກວ່າ ແລະຮັ່ງມີກວ່າ ກອງທະຫານອື່ນໆ ດັ່ງນັ້ນ ຈຶ່ງຖືກເບິ່ງດ້ວຍ ແສງຕາຢ້ານລົ້ນແດ່. ຫຼາຍປີຕໍ່ມາ ເຖິງວ່າຍັງຕ້ອງອີງອາໄສໃສ່ກອງທັບເປັນສ່ວນໃຫຍ່ ກໍຕາມ ຊູຮາຣ໌ໂຕ ກໍໄດ້ຫຼຸດຜ່ອນກຳລັງສູ້ຮົບທີ່ບໍ່ຈຳເປັນລົງຢ່າງແນບນຽນ ແລະຄ່ອຍໆ ດຶງກັນເຂົ້າໄປຢູ່ໃນກຳລັງກອງທັບອັນດຽວ ເພື່ອໃຫ້ຄວບຄຸມໄດ້ງ່າຍຂຶ້ນ. ຫຼັງຈາກແກ່ ຍາວມາໄດ້ໄລຍະໜຶ່ງແລ້ວ ຊູຮາຣ໌ໂຕ ໄດ້ຕັດງົບປະມານສຳລັບການທະຫານລົງຫຼາຍ ແລະເຮັດໃຫ້ເຫັນຢ່າງຈະແຈ້ງວ່າ ໜ້າທີ່ຂອງກອງທັບ ແມ່ນການປ້ອງກັນຄວາມສະ ຫງົບພາຍໃນ ບໍ່ແມ່ນການປ້ອງກັນປະເທດຊາດ. ໃນທີ່ສຸດ ດ້ວຍການຈັດຕັ້ງຄືນໂຄງ ສ້າງ ແລະ ພາລະກອນ ຂອງກອງທັບ ຢ່າງເປັນປະຈຳ ເຂົາກໍສາມາດກຳບັງຫຸ້ມໄວ້ໃນ ມື ຢ່າງໝັ້ນຄົງ.

ການເມືອງທີ່ເຫັນໄດ້ໃນລະບົບການເມືອງໃໝ່ ຂອງອິນໂດເນເຊຍ ແມ່ນລະ ບົບລັດຖະສະພາອັນຊັບຊ້ອນ ມີຫຼາຍຫຼືບຊັ້ນ ມີການເລືອກຕັ້ງໃຫຍ່ ແລະການເລືອກ ຕັ້ງປະທານປະເທດແບບພິເສດ ເປັນພຽງການສະແດງອ້ອຍຕ້ອຍ. ປະເທດອິນໂດເນ

ເຊຍ ບໍລິຫານ " ພັກ " ການເມືອງຂອງຕົນເອົາເອງ ໃນການໂຄສະນາຫາສຽງເລືອກ ຕັ້ງ. ໂກນຄາຣ (Golkar) ເປັນຄຳຫຍໍ້ມາຈາກຄຳວ່າ "ກຸ່ມປະຕິບັດໜ້າທີ່" (Functional Group) ໃນພາສາອິນໂດເນເຊຍ ເຊິ່ງທຳອິດຈັດຂຶ້ນ ໂດຍກອງທັບໃນສະໄໝ ປະຊາທິປະໄຕຊີ້ນຳ ເພື່ອສູ້ກັບສະຫະພາບ ແລະ ສະມາຄົມຈຳນວນຫຼວງຫຼາຍ ຂອງ ພັກກອມມູນນິດອິນໂດເນເຊຍ. ເມື່ອມາຢູ່ໃນລະບຽບການໃໝ່ ມັນໄດ້ກາຍເປັນສາຂາ ພັກການເມືອງພາກບັງຄັບ ສຳລັບໃຫ້ພະນັກງານເຂົ້າສັງກັດລັດ. ໃນຊຸມປີເລືອກຕັ້ງ ກົງຈັກຂອງຝ່າຍບໍລິຫານພົນລະເຮືອນ ພາຍໃຕ້ກະຊວງພາຍໃນ ພ້ອມກັບນາຍທະ ຫານລະດັບຊັ້ນຕ່າງໆ ເບື່ອໜ່າຍການໃຫ້ຄະແນນສຽງ ດ້ວຍວ່າພັກການເມືອງຝ່າຍ ກົງກັນຂ້າມ ຕ້ອງໄດ້ປະເຊີນໜ້າກັບເລ່ລ່ຽມຢ່າງເປັນທາງການ ຫຼື ບໍ່ເປັນທາງການ ຂອງລັດ ເຊັ່ນ ອະນຸຍາດໃຫ້ມີການຫາສຽງໂຄສະນາ ຢູ່ໃນຂັ້ນບ້ານໄດ້ ບໍ່ໃຫ້ກາຍ ສອງອາທິດ ສຳລັບການເລືອກຕັ້ງແຕ່ລະຄັ້ງ ທັງນີ້ ເພື່ອບໍ່ໃຫ້ຮົບກວນຄວາມສະຫງົບ ສຸກ ຂອງຊາວນາທີ່ເປັນ "ມະຫາຊົນລອຍໆ" ຫຼາຍເກີນໄປ.

ໃນລະບຽບການໃໝ່ນີ້ ມີການເວົ້າຮອດນະໂຍບາຍຕ່າງປະເທດ ແຕ່ໜ້ອຍ ດຽວ ຂະນະທີ່ ໃນສະໄໝ ຊູການໂນ ມັນໜ້າຕື່ນເຕັ້ນດີ. ລະບອບ ຊູຮາກ໌ໂຕ ເຊິ່ງ ອາແຂນກອດເອົາຕາເວັນຕົກກັບຍີ່ປຸ່ນ ຢ່າງພົບພັບ ໃນປີ 1966 ບໍ່ໄດ້ເຫັນຄວາມຈຳ ເປັນໃນການປ່ຽນແປງມິດຕະພາບຂອງຕົນ. ລະບອບການເມືອງໃໝ່ນັ້ນເປັນປໍລະປັກ ກັບຈີນ ບໍ່ແມ່ນຍ້ອນວ່າປະເທດຈີນກໍເປັນກອມມູນິດ ແຕ່ຍ້ອນວ່າຄົນຈີນກໍຄືຄົນຈີນ. ດ້ວຍເຫດນີ້ ລະບອບການປົກຄອງນີ້ ຈຶ່ງແຕກຕ່າງກັບລະບອບອື່ນ ໃນທົ່ວພາກພື້ນ ອາຊຽນ ດ້ວຍການສະແຫວງຫາທາງຜູກສຳພັນອັນດີກັບຫວຽດນາມ ແລະຢາກຕ້ອນ ຮັບຫວຽດນາມໃຫ້ດີທີ່ສຸດ ໃນຖານະເປັນໄມ້ຂວາງທາງ ຕໍ່ທ່າອ່ຽງນິຍົມຈີນທຸກຢ່າງ ທີ່ ທຳທ່າວ່າຈະຂະຫຍາຍລົງມາທາງພາກໃຕ້. ດ້ວຍວ່າ ປະເທດອິນໂດເນເຊຍເປັນປະ ເທດເກາະດອນທັງໝົດ ຈຶ່ງພໍເປັນທີ່ເຂົ້າໃຈໄດ້ດີວ່າ ທ່ານລັດຖະມຸນຕີກະຊວງຕ່າງປະ ເທດ ມອກຕາຣ ກຸສຸມາອັດມັດຢາ (Mochtar Kusumaatmadja) ໄດ້ສະແດງບົດ ບາດຢ່າງໃຫຍ່ ໃນການອະພິປາຍທົ່ວໂລກ ກ່ຽວກັບການກຳນົດອານາເຂດນ່ານນ້ຳ ແຫ່ງຊາດ. ຄວາມແຕກແຫງອັນຈະແຈ້ງອັນໜຶ່ງ ຂອງລີລາມະໂຍບາຍອັນເຍືອກເຢັນ

ເກີດຂຶ້ນໃນປີ 1975 ພາຍຫຼັງສິດອຳນາດຂອງ ປອກຕຸຍການ ຫຼົ້ມຈົມຢ່າງໄວວາ ຢູ່ໃນດອນຕິມໍຣ ຕາເວັນອອກ ທີ່ຕັ້ງປາຍສຸດຂອງໝູ່ເກາະດອນທີ່ ເນັ່ງໄປທາງກ້ຳຕາເວັນອອກ ຈາກຊະວາ ແລະ ບາຫລີ. ດ້ວຍເຫດຜົນທີ່ບໍ່ຈະແຈ້ງ ແລະ ທັງໆທີ່ອິນໂດເນເຊຍປະກາດແລ້ວປະກາດອີກ ເປັນເວລາເກືອບສາມທົດສະວັດກ່ວາ ວ່າ ອິນໂດເນເຊຍ ບໍ່ໄດ້ຮຽກຮ້ອງທວງທາວເອົາຕິມໍຣ ຕາເວັນອອກ, ແຕ່ ຊູຮາຣ໌ໂຕ ກໍໄດ້ສັ່ງການໃຫ້ທະຫານບຸກເຂົ້າໄປໃນດິນແດນນັ້ນ. ຜົນທີ່ໄດ້ຮັບ ຍັງແມ່ນ ແລະຍັງຄົງແມ່ນ ຂະບວນການໜຶ່ງ ຮ້າຍແຮງກ່ວາການລຸກຮືຂຶ້ນຕໍ່ຕ້ານ ຈົນເທົ້າເຖິງທົດສະວັດທີສອງ.

ໃນທັນທີ ທີ່ມີການສະເໜີເຈລະຈາຂອງລະບຽບການເມືອງໃໝ່ ຕໍ່ຕາເວັນຕົກ ຊູຮາຣ໌ໂຕ ກັບນັກວິຊາການເຕັກນິກຂອງເຂົາ ກໍເລີ່ມກໍ່ສ້າງເສດຖະກິດຂອງອິນໂດເນເຊຍຄືນໃໝ່ ໂລດ. ມີຂໍ້ສະດວກພໍສົມຄວນ ທີ່ຈະເລີ່ມຈາກບ່ອນໜ້ີກ່ອນໝູ່ດ້ວຍກົນໄກທາງການເມືອງ ເສດຖະກິດທີ່ ຕົ້ນຕໍແລ້ວ ປະດິດສ້າງໄວ້ ໂດຍ ຊູຮາຣ໌ໂຕ ແລະ ຕໍ່ມາ ຈຶ່ງທັນກັບມາຫານະໂຍບາຍເສດຖະກິດ ຄັບແຄບກ່ວາ ຂອງພວກນັກວິຊາການເຕັກນິກທີ່ໂດ່ງດັງ ໃນຊຸມປີ 1970 ນະໂຍບາຍເສດຖະກິດນີ້ ມີຜົນກະທົບຕໍ່ປະຊາຊົນທົ່ວໄປ ດັ່ງປະກົດ ພາຍໃຕ້ຫົວຂໍ້ ການພັດທະນາສັງຄົມ ໃນລະບຽບການເມືອງໃໝ່.

ໃນປີ 1965 ຫາ 1966, ຊູຮາຣ໌ໂຕ ຍຶດອຳນາດ ຖ້າມກາງສະພາວະເງິນເຟີ້ ແລະການສໍ້ລາດ ບັງຫຼວງຢ່າງກ້ວາງຂວາງ ເທົ່າໆກັບການເຂັ່ນຂ້າປະຊາຊົນຢ່າງຫຼວງຫຼາຍ ທີ່ເຂົາສັ່ງການເອງ ແຕ່ເຂົາກໍໄດ້ພະຍາຍາມສ້າງສະເຖຽລະພາບ ທັງສຳລັບຕົນເອງ ແລະ ສຳລັບລະບຽບການເມືອງໃໝ່ ໄປພ້ອມໆກັນ. ໃນຂະນະທີ່ເຂົາໃຊ້ເຫຼ່ຽມຮ້ອຍແປດພັນແນວ ເພື່ອຄວບຄຸມຢູ່ເໜືອຊົນຊັ້ນນາຍທະຫານໃນກອງທັບ ທີ່ແຕກແຍກກັນຢ່າງບໍ່ເປັນທ່ານັ້ນ, ເຂົາສະຫຼຸບໄດ້ວ່າ ເຂົາມີຄວາມຕ້ອງການເງິນຈຳນວນມະຫາສານ ເພື່ອຊ່ວຍກອບກູ້ພວກທະຫານໄວ້ ໃຫ້ຢູ່ໃນຖັນແຖວການເມືອງ ແລະ ມີຄວາມພໍໃຈ ນຳມາດຕະຖານການດຳລົງຊີວິດຂອງພວກເຂົາ. ຊູຮາຣ໌ໂຕ ນຳໃຊ້ໄຂຄວງທີ່ເຂົາຖະໜັດ ແຕ່ເຄື່ອງກົນຈັກທາງເສດຖະກິດການເມືອງຂອງເຂົາ ກວ້າງຂວາງພິລຶກ ແລະສ້າງມາໄດ້ດີຫຼາຍ. ເຖິງວ່າ ໃນການຈັດຫາກົນໄກເຄື່ອງມືນັ້ນ ຊູຮາຣ໌ໂຕ

ໄດ້ອາໄສຫຼາຍແຫຼ່ງທຶນຕ່າງກັນ ໃນນັ້ນ ມີທັງ ລັດວິສາຫະກິດກັ່ນນ້ຳມັນ ເປີຕາມິນາ (Pertamina) ແລະທ້ອງການຂອງກະຊວງ ກໍໄດ້ຮັບມອບໝາຍໃຫ້ຮັກສາລາຄາເຂົ້າ ໃຫ້ຄົງທີ່ ຊຶ່ງແມ່ນ ເງິນທຶນບ້ວງສຳຄັນແລະແນ່ນອນກວ່າໝູ່ ທີ່ມາຈາກ ນັກທຸລະກິດ ອິນໂດເນເຊຍ-ຈີນ ກັບ ບໍລິສັດຮ່ວມທຶນຫຼາຍຊາດທຸກປະເພດ. ທ່ານຊູຮາຣ໌ໂຕ ກັບ ພວກນັກວິຊາການຂອງເພິ່ນ ມັກມີການປະເມີນຄ້າຍຄືກັນກັບໃນສະໄໝ ຊູການ໌ໂນ ແລະ ແຮັດຕາ ກ່ຽວກັບ ຄວາມສາມາດທາງເສດຖະກິດ ຂອງປະຊາຊົນຊາວພື້ນເມືອງ ອິນໂດເນເຊຍ ວ່າເຂົາເຈົ້າບ່ອາດຈະແຂ່ງຂັນກັບຊາວຈີນພາຍໃນປະເທດ ຫຼືຊາວຕ່າ ເວັນຕົກໃນຕ່າງປະເທດໄດ້. ຢ່າງໃດກໍດີ ນັກການເມືອງທັງສອງຮຸ່ນກໍແຕກຕ່າງກັນ ຫຼາຍໃນເລື່ອງຄວາມສາມາດ ແລະ ຄວາມປາຖະໜາຂອງພວກເຂົາ ເພື່ອເກັບພາສີ ຈາກທຸລະກິດຊາວຕ່າງປະເທດ ແລະຊາວຈີນ. ໃນຕົ້ນຊຸມປີ ຫາກາງຊຸມປີ 1950 ພວກຊົນຊັ້ນສູງ ແລະ ລັດຖະບານຫຼາຍຊຸດຂອງຄົນຮຸ່ນກ່ອນ ເກັບພາສີນຳບໍລິສັດ ໃຫຍ່ຂອງໂຮນລັງໄດ້ໜ້ອຍຫຼາຍ ແລະເມື່ອ ຊູການ໌ໂນ ໂອນບໍລິສັດຄືນໃຫ້ ໂຮນລັງ ໃນປີ 1957 ພາຍໃຕ້ການໃຊ້ກົດໄອຍະການເສິກ ຊັບສິນທັງຫຼາຍ ໄດ້ຕົກໄປຢູ່ນຳ ກອງທັບ ເປັນສ່ວນໃຫຍ່ ຫຼາຍກວ່າຕົກໄປຢູ່ນຳລັດຖະບານ ດັ່ງທີ່ຄວນເປັນ. ກົງກັນ ຂ້າມ ລະບຽບການເມືອງໃໝ່ ໄດ້ສົ່ງເສີມ ໃຫ້ນາໆຊາດມາລົງທຶນຢູ່ ອິນໂດເນເຊຍ ແລະ ເກັບພາສີແບບທຳມະດາກັບພວກເຂົາ. ແທ້ແລ້ວ ມັນກໍເປັນໄປຕາມກົນໄກທຸ ລະກິດ ທີ່ພວກເຂົາພໍໃຈນຳ ອັນໄດ້ເຮັດໃຫ້ເງິນທຶນຈາກບໍລິສັດຕ່າງປະເທດ ໄຫຼມາເທ ມາ ເພື່ອໄປຮັບໃຊ້ໃຫ້ພວກນາຍທະຫານ ທີ່ກາຍເປັນເສືອນອນກິນ.

ພວກຜູ້ນຳ ກັບລັດຖະບານຮຸ່ນກ່ອນ ກໍຮັບເງິນເລັກນ້ອຍຈາກພໍ່ຄ້າຊາວຈີນ ທັງຈາກພາສີຕາມກົດໝາຍ ເຊິ່ງມີການຈັດຕັ້ງກັນຂີ້ຮ້າຍຫຼາຍ ຫຼືຈາກຄ່າຈ້າງ(ລາຍ ຈ່າຍ) ເຊິ່ງສ່ວນໃຫຍ່ມັກຕົກຫາພວກພະນັກງານພົນລະເຮືອນຂັ້ນກາງ ແລະຂັ້ນຕ່ຳ. ພາຍໃຕ້ການປົກຄອງໃໝ່ ການໃຫ້ສິນບົນຊື້ຈ້າງເລັກໆນ້ອຍໆ ໄດ້ທະວີຂຶ້ນຢ່າງເຫັນ ໄດ້ຄັກ ແຕ່ວ່າສິນບົນເຫຼົ່ານັ້ນ ບ່ໄດ້ຕົກໃສ່ມືພະນັກງານພົນລະເຮືອນຂັ້ນນ້ອຍ ທີ່ດຳ ລົງຊີວິດວິດຢ່າງຫຍຸ້ງຍາກ ແຕ່ຊ້ຳຜັດແລ່ນໄປເກີດຢູ່ຂັ້ນສູງຂຶ້ນໄປຂອງລະບົບ. ໃນຊຸມ ປີ ຂອງປະຊາທິປະໄຕແບບມີສະພາ, ມັນບ່ເປັນເລື່ອງຜິດປົກກະຕິເລີຍ ສຳລັບພະນັກ

ງານຊາວອິນໂດເນເຊຍແຕ່ລະຄົນ ທີ່ຈະແລກລາຍເຊັນກັບຜົນແບ່ງປັນມະຍິບມະຍ່ອຍ ຈາກການລົງທຶນຂອງຊາວຈີນ. ຄວາມຫຍຸ້ງເຫຍິງທາງເສດຖະກິດໃນຍຸກປະຊາທິປະໄຕຊົ້ນຳ ໄດ້ເຮັດໃຫ້ມາດຕະຖານຕົກຕ່ຳ ແລະ ທະວີຄ່າຈ້າງຂຶ້ນ ແຕ່ກໍໄດ້ ປ່ອຍໃຫ້ເປັນໄປຕາມການຈັດການກັນເອງລະຫວ່າງບຸກຄົນ. ດັ່ງທີ່ເຄີຍເປັນມາ ລະບຽບການເມືອງໃໝ່ ເຊິ່ງມັກຈະຂັນແຂງ ສາຍຕາຫຼັກແຫຼມ ຢູ່ແຕ່ໃນບ່ອນທີ່ຜົນປະໂຫຍດໂດຍກົງຂອງຕົນກ່ຽວຂ້ອງນຳນັ້ນ ຜັດໄດ້ຂະຫຍາຍການຈັດແຈງຊັບຊ້ອນຂອງຕົນອອກຢ່າງກ້ວາງຂວາງ ໃຫ້ເປັນລະບົບຍິ່ງຂຶ້ນ. ເລື່ອງນີ້ເປັນທີ່ຮູ້ດີໃນນາມ ລະບົບຄູກົງ(Cukong) ຈຳນວນອັນຈຳກັດຂອງ ຄູກົງ ຄືນັກທຸລະກິດຈີນ-ອິນໂດເນເຊຍ ຄວບຄຸມບໍລິສັດໃຫຍ່ໆ ສອດຄ່ອງກັບນາຍທະຫານຜູ້ສຳຄັນທີ່ຢາຍກັນຂຶ້ນເປັນລະດັບສູງ ໄຕ່ຂຶ້ນເປັນຊົ້ງສ້ວຍແຫຼມ (ປິຣາມິດ) ເລີ່ມຈາກຈອມສຸດມາ ຄື ປະທານ ຊູຮາຣ์ໂຕ. ດ້ວຍການປ້ອງກັນທີ່ມີຄຸນນະພາບສູງສຸດ ແຕ່ລະຄູກົງ ສ້າງຮັ່ງຄູນມີຂຶ້ນ ໃຫ້ແກ່ຕົນເອງ ແລະ ຜູ້ອຸປະຖຳຂອງຕົນ.

ການຈັດລະບຽບ ເລື່ອງເສດຖະກິດການເມືອງເຫຼົ່ານີ້ ມີບົດບາດຢ່າງກ້ວ້າງຂວ້າງ ໃນການຮັກສາຄວາມໝັ້ນທ່ຽງທາງການເມືອງອັນໂດດເດັ່ນໄວ້ໄດ້ ຢູ່ໃນ ອິນໂດເນເຊຍ ກວ່າສອງທົດສະວັດ. ຂະນະດຽວກັນ ໃນຊຸມປີ 1970 ດ້ວຍການຊ່ວຍເຫຼືອຢ່າງເຂັ້ມຂຸ້ນຕໍ່ເນື່ອງ ຈາກກຸ່ມລັດຖະບານນາໆຊາດ ເພື່ອອິນໂດເນເຊຍ (ຍີ່ປຸ່ນ, ອາເມລິກາ, ປະເທດຕ່າງໆໃນເອີຣົບ) ແລະການລົງທຶນຈາກປະເທດຕ່າງໆ ປະກອບດ້ວຍລາຄານ້ຳມັນທີ່ສູງຂຶ້ນຫຼາຍກວ່າເກົ່ານັ້ນ ຈຶ່ງເຮັດໃຫ້ ເສດຖະກິດຂອງອິນໂດເນເຊຍ ຂະຫຍາຍໂຕຂຶ້ນຮອດ ປະມານ 8% ຕໍ່ປີ. ລະບອບການເມືອງ ຄວບຄຸມລາຄາເຂົ້າໄວ້ຢ່າງແນບນຽນ ໂດຍສະເພາະຢູ່ໃນເຂດຊົນນະບົດທີ່ຍັງມີບັນຫາທາງການເມືອງ ແລະໃນທີ່ສຸດ ກຳນຳພາປະເທດອິນໂດເນເຊຍ ກ້າວຂຶ້ນມາເຖິງມືເຂົ້າກຸ້ມຕົວເອງ. ເມື່ອ ບໍລິສັດຜະລິດນ້ຳມັນຍັກໃຫຍ່ ເປີຕາມີນາ ເກີດແຕກແຍກກັນຢ່າງເປີດແປນ ໃນປີ 1975 ພວກນັກວິຊາການເຕັກໂນກຣາດ ໄດ້ບີອລະບັດລ້ຽງດູມັນໄວ້ ຜ່ານຜ່າວິກິດການນັ້ນໄປ ແລ້ວກໍຫັນຄືນມາຫາລັດທີ່ສະອາດ ປອດໃສກວ່າເກົ່າ. ພວກເຂົາເຮັດຢ່າງດຽວກັນ ສຳລັບເສດຖະກິດທັງມວນ ຂອງປະເທດ ໃນຕົ້ນຊຸມປີ 1975. ໂດຍທົ່ວໄປແລ້ວ

ຊຸມປີ 1980 ເປັນວັນເວລາທີ່ມືດມົນທີ່ສຸດ ຂອງອິນໂດເນເຊຍ ແລະ ທຸກທົນແຫ່ງໃນ ອາຊີຕາເວັນອອກສຽງໃຕ້ ກໍເຊັ່ນດຽວກັນ, ແລະເສັ້ນທາງເດີນຂອງອິນໂດເນເຊຍ ໃນ ທ້າຍສະຕະວັດນີ້ ກໍຍັງບໍ່ຈະແຈ້ງເລີຍ ຍ້ອນຄັງນ້ຳມັນແຮ ໄດ້ຫຼຸດລົງຢ່າງແຮງ ພ້ອມໆ ກັບຈຳນວນປະຊາກອນທີ່ສູງຂຶ້ນເລື້ອຍໆ.

ລະບຽບການເມືອງໃໝ່ ຍັງໄດ້ນຳເອົາການປ່ຽນແປງອັນຟິດຮ້ອນມາສູ່ວົງຊີ ວິດສັງຄົມອີກ ໃນນັ້ນ ມີສອງຢ່າງເຊິ່ງສຳຄັນເປັນພິເສດ ໃນລະຍະຍາວ. ອັນໜຶ່ງ ແມ່ນ ຄວາມຫຼົ້ມຈົມໃນທັນທີ ຂອງຂໍ້ຜູກພັນສັນຍາທາງສັງຄົມ ລະຫວ່າງຜູ້ຮັ່ງມີ ກັບຜູ້ຂາດ ເຂີນ ຢູ່ໃນຊົນນະບົດຊະວາ ເຊິ່ງມີປະຊາກອນເກືອບເຄິ່ງໜຶ່ງ ຂອງອິນໂດເນເຊຍ. ອີກ ອັນໜຶ່ງ ແມ່ນການສ້າງກ້ອນກຸ່ມ ຊົນຊັ້ນຂ້າລັດຖະການຂັ້ນກາງຂຶ້ນມາ.

ພາຍຫຼັງປີ 1900 ປຣິຍາຍິ ຄົນໃນຕະກຸນຂຸນນາງຂອງຊະວາ ກັບພວກເຈົ້າ ທີ່ດິນ ໃນໝູ່ເກາະເຂດນອກ ກໍໄດ້ສູນເສຍກຽດສັກສີຂອງພວກເຂົາໄປ ເມື່ອພວກເຂົາ ຫັນມາປ່ຽນແປງການນຸ່ງຖື ມັດຜ້າກຣາວັດໃສ່ຄໍເສື້ອ ແລະເວົ້າພາສາດັດຊ໌ ແບບບໍ່ຜິດ ເລີຍ. ລັດທິສະໝັຍນິຍົມ ຂອງການປະຕິວັດ ປີ 1945 ມາເສີມຕື່ມການປ່ຽນ ແປງໃຫ້ຄົບຖ້ວນ ຄື: ຄົນທີ່ເກີດມາເພື່ອປົກຄອງ ກໍມີຊົນຊັ້ນກາງຄອຍຕິດຕາມແຫ່ນຳ. ທຳອິດ ແມ່ນພວກຊາດນິຍົມຂອງຊຸມປີ 1920 ທີ່ ມີຕຳແໜ່ງສູງໆ ລະຫວ່າງປີ 1945 ຫາ 1959 ຢູ່ໃນປະເທດອິນໂດເນເຊຍ (ໃນກໍລະນີ ຊຸກາຣ໌ໂນ ມາຮອດ ປີ 1966). ຕໍ່ມາ ແມ່ນພວກນາຍທະຫານຂອງກອງທັບ ທີ່ສ້າງຕັ້ງຂຶ້ນເອງ ຂອງອິນໂດເນເຊຍ ເຊິ່ງໄດ້ສຳຜັດກັບອຳນາດ ເປັນຄັ້ງທຳອິດ ໃນປີ 1957 ແລະຍຶດກຳໄດ້ທັງໝົດໃນປີ 1966. ຫຼາຍທົດສະວັດຕໍ່ມາ ຜູ້ທີ່ບໍ່ຄວນຖືກເບິ່ງຂ້າມ ເພາະວ່າ ພວກເຂົາບໍ່ໄດ້ກຳ ອຳນາດຈັກເທື່ອ ກໍແມ່ນ ພວກພະນັກງານພົນລະເຮືອນຈຳນວນສີ່ແສນຄົນ ໃນປີ 1957 ແລະ ຫຼາຍຂຶ້ນເປັນ 1,4 ລ້ານ ໃນປີ 1968. ການສ້າງຮັ່ງຄູນມີແບບກ້າວກະໂດດ ໃນຊຸມປີ 1970 ໃນຕົວເມືອງ, ຫຼາຍກວ່າໝູ່ ແມ່ນໃນກຸງຈາກາຕາເອງ ໄດ້ສ້າງ ຄວາມໝັ້ນຄົງ ໃຫ້ແກ່ພວກຊົນຊັ້ນກາງໃໝ່ໆ ເກີດຄວາມເຊື່ອໝັ້ນຕົນເອງ ພາກັນຫັນ ມານິຍົມຊົມຊອບ ການໃຊ້ລິດໂອໂຕ ແລະລິດຈັກ, ໂທລະພາບ ຫຼື ຕູ້ເຢັນ ພ້ອມໆກັບ ນຳເອົາການສຶກສາທີ່ສຳຄັນແລະກ້າວໜ້າ ມາໃຫ້ພວກລູກໆຂອງພວກເຂົາ.

ຫຼາຍໆປີຕໍ່ມາ ສະມາຊິກ ຂອງຊົນຊັ້ນລັດຖະການຜ້ານກາງ ໂດຍສະເພາະ ນັກສຶກສາໃນກຸງຈາກາຕາ ແລະ ບັນດຸງ ໄດ້ຈັດຕັ້ງການປະທ້ວງຂຶ້ນຫຼາຍຄັ້ງ. ແຕ່ການ ປະທ້ວງເຫຼົ່ານີ້ ມັກງຸບຫາຍໄປສະເໝີ ເມື່ອກອງທັບໃຊ້ກຳລັງກົດດັນໃສ່ ແລະແມ່ນ ແຕ່ ລະບອບ ຊູຮາຮ໌ໂຕ ທີ່ມີຄວາມລະອຽດລະອໍເປັນພິເສດ ກໍປາກົດວ່າບໍ່ໄດ້ວິຕົກ ກັບເລື່ອງນີ້ພໍເທົ່າໃດ. ລະບອບຮູ້ດີວ່າ ນັ້ນແມ່ນແຫຼ່ງສຳຄັນ ສຳລັບວ່າຈ້າງແຮງງານ ສຳລັບຄົນຊັ້ນກາງ ທີ່ເປັນຊົນພື້ນເມືອງອິນໂດເນເຊຍ. ລັດຖະບານຍັງຮູ້ດີອີກວ່າ ຕົນ ສາມາດເອື່ອຍອີງໃສ່ ຊົນຊັ້ນກາງຊາວພື້ນເມືອງ ເພື່ອແບ່ງຮັບເອົາຄວາມເປັນປໍລະປັກ ທາງເຊື້ອຊາດຂອງພວກເຂົາເອງ ກັບ ພວກຊົນຊັ້ນກາງຜູ້ມີຖານະທາງເສດຖະກິດດີ ພວກດຽວ ໃນອິນໂດເນເຊຍ ນັ້ນຄື ຊາວຈີນ. ເວົ້າສັ້ນໆ ຊົນຊັ້ນກາງໃນອິນໂດເນເຊຍ ທີ່ພວມຮຸ່ງເຮືອງຂຶ້ນນັ້ນ ໃນທາດແທ້ແລ້ວ ກໍແມ່ນພັນທະມິດຂອງ ລະບອບນັ້ນເອງ. ເບິ່ງອີກແບບຄື ລະບອບການປົກຄອງນີ້ ກໍຫາກໄດ້ສ້າງຄະແນນດີ ເຊັ່ນ ອັນເດັ່ນທີ່ສຸດ ແມ່ນ ການມີສ່ວນຮ່ວມ ໃນການພັດທະນາຢ່າງມີຊີວິດຊີວາ ໃນເລື່ອງການຄົມຕິ, ກະ ວິນິພິນ ແລະ ການສະແດງລະຄອນເວທີ ນັບແຕ່ຊຸມປີ 1970 ມາ.

ມາເຖິງທ້າຍຊຸມປີ 1960 ແລະ ຕົ້ນຊຸມປີ 1970 ຂະນະທີ່ຊົນຊັ້ນກາງທີ່ ເປັນລັດຖະບານ ກຳລັງກ້າວເຂົ້າສູ່ເວທີໃນຕົວເມືອງຕ່າງໆຢ່າງຟົດຟື້ນກັນນັ້ນ ໃນທັນ ທີ ພວກຊາວນາທີ່ບໍ່ມີທີ່ດິນທຳການຜະລິດຈຳນວນຫຼາຍລ້ານຄົນ ຕາມບ່ອນຮາບພຽງ ຂອງຊົນນະບົດຊະວາ ກໍລັບຫາຍຈາກສາຍຕາ. ກຳລັງແຮງອັນສຳຄັນຢູ່ເບື້ອງຫຼັງການ ພັດທະນາອັນນີ້ ແມ່ນ ການທະວີຈຳນວນປະຊາກອນຢ່າງສະໜ່ຳສະເໝີ ຂອງປະຊາ ກອນຕາມເກາະດອນ ເຊິ່ງເປັນບ່ອນຢູ່ ທີ່ມີປະຊາກອນໜາແໜ້ນທີ່ສຸດຂອງໂລກແຫ່ງ ໜຶ່ງ ຄື 42 ລ້ານ ໃນ ປີ 1930 ແລະ 63 ລ້ານ ໃນ ປີ 1961 ແລະອາດຮອດ 100 ລ້ານ ໃນປີ 1990, ຍ້ອນຄວາມໜາແໜ້ນຂອງປະຊາກອນໃນຊົນນະບົດ ທະວີຂຶ້ນໃນຊຸມປີ 1950 ແລະ ຊຸມປີ 1960 ບາງຄອບຄົວຈຶ່ງຂົນຂວາຍຫາດິນນາ ເພື່ອປູກເຂົ້າຕື່ມໃສ່ທີ່ ດິນທີ່ມີຢູ່ແລ້ວ ເຊິ່ງສ່ວນຫຼາຍກໍບໍ່ຫຼາຍກວ່າ 1 ເອເຄີຣ (Acre) ຂະນະທີ່ ມີຫຼາຍຄອບ ຄົວ ໄດ້ສູນເສຍທີ່ດິນຕອນສຸດທ້າຍຂອງພວກເຂົາໄປ. ຕາບໃດທີ່ຊົນຊັ້ນນຳ ທາງການ ເມືອງ ຍັງໃຫ້ຄວາມສົນໃຈແຕ່ເລັກນ້ອຍ ຕໍ່ພວກຊາວນາຊະວາ ດັ່ງທີ່ເຄີຍເປັນມາ

ນັບແຕ່ປີ 1945 ເຖິງປີ 1964/65, ຮີດຄອງປະເພນີເກົ່າ ທີ່ໄຂຊ່ອງທາງໃຫ້ຜູ້ທຸກຜູ້ຍາກ ຮຽກຮ້ອງຂໍຄວາມຊ່ອຍເຫຼືອ ເພື່ອເປັນການຕອບແທນສຳລັບການສະໜັບສະໜຸນທີ່ໃຫ້ໄປແລ້ວ ກັບຄວາມເຄົາລົບນັບຖືອັນສົມມາພາຄອນ ທີ່ມີໃຫ້ແກ່ຜູ້ອຸປະຖຳ ກໍອາດພຽງພໍ ທີ່ຈະປ່ອຍໃຫ້ຊາວຊົນນະບົດ ຢູ່ຕາມວິຖີທາງຂອງພວກເຂົາເອງ ໂດຍ ບໍ່ໃຫ້ໃຜມາແຕະຕ້ອງ.

ແຕ່ພໍກອງທັບຄວບຄຸມອຳນາດທາງການເມືອງຊົນນະບົດ ຢ່າງສົມບູນ ພາຍ ຫຼັງການສົງຫານໝູ່ ປີ 1965 ຊາວບ້ານ ທີ່ເປັນຄົນຊະອາ ບໍ່ວ່າແນວຄຶດການເມືອງ ພວກເຂົາເປັນແບບໃດ ກໍບໍ່ໄດ້ມີເສລີພາບໃນການດຳເນີນກິດຈະການຂອງພວກເຂົາ ໃນບ້ານຢູ່ຂອງຕົນອີກ. ລັດເຂົ້າມາແຊກແຊງ ແລະ ຕັ້ງຖານທີ່ໝັ້ນຢູ່ນຳ. ພວກຊາວ ນາທີ່ບໍ່ມີດິນທຳການຜະລິດ ອາດຫັນໄປຫາການໃຊ້ຄວາມຮຸນແຮງອີກ ຖ້າຫາກວ່າ ພວກເຂົາບໍ່ໄດ້ຮັບການຊ່ອຍເຫຼືອ ແບບທີ່ເຄີຍໄດ້, ແຕ່ພວກຊາວນາທີ່ຮັ່ງມີແດ່ ບໍ່ມີ ເຫດຜົນທີ່ຈະໄປຮຽກຮ້ອງເອົາຄວາມຊ່ອຍເຫຼືອ ຄືບ້ານໃກ້ເຮືອນຄຽງ ຜູ້ເປັນຊາວນາ ທຸກຈົນ. ໃນເວລາດຽວກັນ, ໂດຍເລີ່ມຈາກແຜນພັດທະນາ 5 ປີ ຊຸດທຳອິດ ໃນປີ 1969 ຢ່າງເປັນທາງການ, ລັດຖະບານຕັ້ງໜ້າໃສ່ເຮັດໃຫ້ປະເທດອິນໂດເນເຊ ມີເຂົ້າ ກຸ້ມກິນ. ລັດຖະບານ ນຳເຂົ້າແນວພັນຕ່າງໆ ແລະ ຊຸກຍູ້ການປູກເຂົ້າທີ່ໃຫ້ຜົນຜະ ລິດສູງຈາກ ສະຖາບັນຄົ້ນຄວ້າເຂົ້າສາກົນ ຫຼື ອີຣີ (International Rice Research Institute - IRRI) ຈາກ ປະເທດຟີລິບປິນ. ຢ່າງໃດກໍດີ ເຖິງວ່າ ໄດ້ຮັບ ເອົາຄວາມສາມາດບິ່ມຊ້ອນມາຢ່າງເຕັມປ່ຽມ ຈາກແນວພັນຂອງ ອີຣີ ລັດກໍຍັງ ຕ້ອງລົງທຶນຢ່າງມະຫາສານ ສຳລັບໄປຊື້ຝຸ່ນ ແລະ ຢາປາບສັດຕູພືດເຊິ່ງເປັນເລື່ອງທີ່ ຊາວນາ ສາມາດຈັດຫາມາເອງໄດ້ ແລະ ສາມາດສ້າງກຳໄລໄດ້ ແຕ່ມັນຊ້ຳຢູ່ເໜືອ ຄວາມສາມາດຂອງຊາວນາຜູ້ທຸກຈົນ ທັງນີ້ ຍັງບໍ່ທັນເວົ້າຮອດຊາວນາ ຜູ້ບໍ່ມີດິນເທື່ອ.

ເມື່ອຮວມເອົາກຳລັງທັງສອງ ຄື ທາງການເມືອງແລະເສດຖະກິດເຂົ້າກັນ ແລະ ບໍ່ພຽງແຕ່ ດ້ວຍຈຳນວນປະຊາກອນທີ່ສູງຂຶ້ນເລື້ອຍໆນັ້ນ ມັນກໍໄດ້ນຳເອົາການປ່ຽນ ແປງແບບໄວວາ ມາສູ່ຊົນນະບົດຂອງຊະອາ. ພວກເຈົ້າຂອງດິນ ບໍ່ມັກໃຫ້ຊາວນາຜູ້

ທຸກຍາກທີ່ຢູ່ໃກ້ຄຽງ ເຂົ້າຮ່ວມກິດຈະການຂອງຕົນ. ພວກເຂົາບໍ່ມັກວິທີຈັດການແບບແບ່ງປັນຜົນຜະລິດກະສິກຳ ຖ້າຫາກວ່າ ພວກເຂົາບໍ່ສາມາດເຮັດວຽກທີ່ຈຳເປັນ ດ້ວຍຕົນເອງແລ້ວ ພວກເຂົາກໍວ່າຈ້າງຄົນງານ ແລະຈ່າຍເປັນເງິນສົດ ດີກວ່າຈະແບ່ງປັນຜົນລະປູກໃຫ້. ຕາມປະເພນີແລ້ວ ເມື່ອພວກເຈົ້າຂອງນາ ໃຫ້ພວກແມ່ຍິງມາກ່ຽວເຂົ້າໃຫ້ໃນຍາມເຂົ້າສຸກ ຫຼັງຈາກຮວບຮວມເຂົ້າທັງໝົດໄວ້ແລ້ວ ພວກເຂົາກໍຍັງມີເຂົ້າເຫຼືອໄວ້ ຫຼາຍກວ່າທີ່ເຄີຍໄດ້ ເປັນປົກະຕິໃນເມື່ອກ່ອນ. ອີກພວກໜຶ່ງ ດ້ວຍວ່າຢາກກຳຈັດການອ້າງສິດຕາມປະເພນີ ຂອງຊາວນາຜູ້ທຸກຍາກໃນບ້ານ ທີ່ຢາກມີສ່ວນແບ່ງເປັນຜົນເກັບກ່ຽວ ໃຫ້ໝົດໄປຢ່າງເດັດຂາດ ແຕ່ກໍບໍ່ຢາກມີເລື່ອງກະທົບກະເທືອນໃຫ້ເປັນທີ່ຂັດກັບຮີດຄອງ ຈຶ່ງຂາດພຶດຜົນລະປູກຂອງຕົນ ໃຫ້ແກ່ຄົນບ້ານອື່ນໆ. ໃນລະດູກ່ຽວເຂົ້າ ຊາວບ້ານຈາກບ້ານອື່ນໆ ກໍນຳເອົາຄົນຂອງຕົນເອງມານຳ ເປັນໝູ່ນ້ອຍໆ ເຊິ່ງບັດນີ້ ເປັນຊາຍຫຼາຍກວ່າແມ່ຍິງ ເຂົ້າມາກ່ຽວເຂົ້າດ້ວຍກ່ຽວ ທີ່ມີປະສິດທິພາບສູງຫຼາຍກວ່າໃຊ້ ມີດ ອະນິອະນິ (Ani-Ani) ທີ່ເປັນມີດຄົມ ດວງຍາວ ກວ້າງປະມານນິ້ວນຶ່ງ ເພື່ອຕັດຮວງເຂົ້າອອກຈາກລຳຕົ້ນ.

ໃນຊຸມຕົ້ນປີ 1970 ດຽວກັນນີ້ ເຈົ້າຂອງນາ ກໍເລີ່ມຕັດຜ່ອນຄ່າຈ້າງແຮງງານໂດຍກົງນີ້ລົງ ດ້ວຍການຫັນມາຊົມໃຊ້ເຄື່ອງກົນຈັກ ເຊັ່ນ ຈັກຟາດເຂົ້າ ລົດໄຖ ແລະເຄື່ອງຄາດດິນ ສຳລັບກະກຽມດິນ ແລະ ຂ້າຫຍ້າ ພ້ອມທັງຈັກສີເຂົ້າ. ໂຮງສີເຂົ້າແຜ່ກະຈາຍອອກຢ່າງໄວວາ ແລະ ກວ້າງຂວາງ, ພາຍໃນເວລາສອງສາມປີ ກໍໄດ້ເຮັດໃຫ້ແຫຼ່ງເງິນສຳລັບຈ້າງແຮງງານຄົນ ໂດຍສະເພາະແມ່ຍິງຈາກຄອບຄົວທຸກຍາກໝົດໄປ. ໃນບົດຂຽນຂອງ ເບັນຈະມິນ ໄວທ໌ (Benjamin White) ຊື່ "Population Involution and Employment in Rural Java" : ເມື່ອນາງ ມາຊຣີ ສິງກາຣິມບູນ ຖາມສຳພາດແມ່ຍິງຫ້າຄົນ ໃນໝູ່ພວກເຂົາວ່າ ພວກເຂົາຍາກຈະມີວຽກງານແບບອື່ນແນວໃດເຮັດ ຄຳຕອບຂອງພວກເຂົາ ກໍຄື ບໍ່ມີວຽກງານຢ່າງອື່ນໃດສຳລັບພວກເຂົາ "ຊັ້ນພວກເຈົ້າຈະເຮັດແນວໃດ" ນາງຖາມຕໍ່ ແລະພວກເຂົາກໍຕອບວ່າ "ພວກເຮົາກໍຄົງຕ້ອງກິນໜ້ອຍລົງ"

ການນຳໃຊ້ເຄື່ອງຈັກແທນແຮງງານຄົນ ທີ່ກ່າວມາຂ້າງຕົ້ນ ຕົກຢູ່ໃນບ້ານທີ່ມີປະຊາຊົນໜາແໜ້ນຂອງດອນຊະວາ ກາຍເປັນຈຸດເລີ່ມຕົ້ນແຫ່ງການເດີນໄປຕາມເສັ້ນທາງອື່ນໆ. ຊາວນາທີ່ເປັນເຈົ້າຂອງດິນ ປະຖົ້ມອຸດົມຄະຕິເກົ່າໆ ໃນເລື່ອງການຜະລິດເຂົ້າພໍກຸ້ມກິນ ແລະຮັກສາກຽດຊື່ສຽງໄວ້ ໃນນາມເປັນຍາພໍ່ຜູ້ໃຈບຸນ ກາຍມາເປັນຜູ້ຢາກມີທີ່ດິນຫຼາຍຂຶ້ນ ຊື້ລົດຈັກ ຊື້ໂທລະພາບ. ຂະນະທີ່ຊາວນາຜູ້ທຸກຈົນ ຕ້ອງກິນມັນຕົ້ນຕື່ມ ຊ່ວງເສັ້ຽຍາດແຍ່ງກັນຫາວຽກໃນທົ່ງນາ ທີ່ຍັງມີຢູ່ໜ້ອຍດຽວ ແລະ ໃຊ້ເວລາສ່ວນໃຫຍ່ໄປຍ່າງທ່ຽວຂາຍເຄື່ອງສິນຄ້າເລັກໆນ້ອຍໆ ເຊັ່ນ ນ້ຳຕານ. ໃນຕົ້ນຊຸມປີ 1970 ຜູ້ຄົນເຫຼົ່ານີ້ ຈຳນວນມະຫາສານ ໄດ້ອົບພະຍົບເຂົ້າໄປຢູ່ຕົວເມືອງໃຫຍ່ ຂອງຊະວາ ໂດຍສະເພາະ ຈາກາຕາ ເພື່ອເຮັດວຽກຕ່າງໆ ເຊັ່ນ ຖີບສາມລໍ້ ໂສເພນີ ເລາະຂາຍເຄື່ອງ ແລະ ກວາດທາງ.

ໃນເລື່ອງນີ້ ຝ່າຍລັດຖະບານເອງ ກໍບໍ່ໄດ້ຢາກໃຫ້ມະຫາຊົນຜູ້ທຸກຍາກຈຳນວນຫຼວງຫຼາຍ ຫຼລັ່ງເຂົ້າມາຢູ່ໃນເມືອງ ຈຶ່ງພະຍາຍາມຫາວິທີຈຳກັດຈຳນວນຜູ້ອົບພະຍົບ. ລັດຖະບານ ລ້ຽມີສິ່ງເສີມໂຄງການຄຸມກຳເນີດ ຢູ່ໃນຊົນນະບົດຊະວາ ແຕ່ວ່າ ຈຳນວນປະຊາກອນ ກໍຍັງສືບຕໍ່ຫຼາຍຂຶ້ນ ບໍ່ຕ່ຳກວ່າປີລະສອງລ້ານຄົນ. ລັດຖະບານຈຳເປັນກັບຄືນມາຫາຄວາມຄຶດຝັນ ທີ່ພວກດັດຊ໌(ໂຮນລ້ຽ) ຄຶດໄວ້ ແຕ່ຕອນຕົ້ນສະຕະວັດແລ້ວ ຢ່າງຫຼີກບໍ່ໄດ້ ນັ້ນກໍຄື ການສົ່ງມະຫາຊົນຊາວຊະວາ ອອກໄປຢູ່ເກາະດອນທີ່ຍັງບໍ່ມີຜູ້ຄົນຢູ່ຫຼາຍ ນັ້ນເອງ. ມັນອາດຈະຕ້ອງໃຊ້ເວລາອີກດົນ ທີ່ລັດຖະບານຊຸດໃດຊຸດໜຶ່ງ ຈະສາມາດເຕົ້າໂຮມຊະວາເຂົ້າກັນຄືນອີກ.

39

ສາທາລະນະລັດ ຟິລິບປິນ

ເມື່ອສົງຄາມໂລກລະເບີດຂຶ້ນ ປະທານາທິບໍດີ ມານຸເອລ ເກຊອນ (Manuel Quezon) ແຫ່ງເຄືອຈັກກະພົບສັ່ງການໃຫ້ປະເທດຂອງຕົນ ຕໍ່ສູ້ກັບຍີ່ປຸ່ນ ໂດຍຍ້ຳວ່າ "ບໍ່ມີປະເທດໃດຈະໄດ້ຫຍັງນຳ ນອກຈາກການຮຽນຮູ້ວິທີອົດທົນຕໍ່ຄວາມທຸກຍາກ ແລະ ວິທີຕາຍ". ແຕ່ໄຊຊະນະຂອງຍີ່ປຸ່ນ ແບບສາຍຟ້າແລບ ເຮັດໃຫ້ການປ້ອງກັນຂອງ ນາຍພົນເອກ ດັກລາສ ແມັກອາເທີ ຣ໌ (Douglas MacArthur) ແຫ່ງສະຫະລັດອາເມລິກາມຶດມົນລົງ ແລະກອງທັບເຮືອກູ້ໄພຂອງອາເມລິກາ ກຳມຸ່ນເປັນເສດເຫຼັກຢູ່ຖານທັບເຮືອ ອ່າວ ເພີລ ຮາເບີ ຣ໌. ໃນເວລາພຽງແຕ່ໜ້ອຍດຽວ ກ່ອນທີ່ກອງກຳລັງທະຫານ ຟິລ-ອາເມລິກາ (Fil-American Force) ປະກາດຍອມຈຳນົນ, ແມກອາເທີ ຣ, ເກຊອນ ແລະ ເຊີ ຈິ ໂອ ອອສເມຍາ (Sergio Osmeña) ກໍອົບພະຍົບອອກໄປ. ແມກອາເທີ ຣ໌ ວາງແຜນເພື່ອຕີຍຶດເອົາຄືນ ສ່ວນ ເກຊອນ ກັບ ອອສເມຍາ ອອກໄປ ເພື່ອສ້າງຕັ້ງລັດຖະບານພັດຖິ່ນຊຸດໜຶ່ງຂຶ້ນ.

ໃນເວລາດຽວກັນ ພວກຍີ່ປຸ່ນ ເຊິ່ງເຂົ້າມາຄອບຄອງ ກຸງ ມະນີລາ (Manila) ໃນວັນທີ 2 ມັງກອນ 1942 ກໍສາມາດຊັກຊວນອ່ອນໃຈເອົານັກການເມືອງ ໃນມະນີລາ ສະໄໝກ່ອນສົງຄາມເກືອບທັງໝົດ ໃຫ້ຮ່ວມມືກັບພວກເຂົາໄດ້ ຍົກເວັ້ນ ຫົວໜ້າສານຍຸຕິທຳ ຊື່ ໂຈເຊ ອາບາສ ຊັນໂຕສ (José Abad Santos). ຫົວຝ່າຍຄ້ານ ຊື່ ຮວນ ຊູມູລອງ (Juan Samulong) ກັບຊິນຊັ້ນສູງອີກຈຳນວນໜຶ່ງ, ໄດ້ເຂົ້າສົມທົບກັບ ຊອກເຊ ວາຣກາສ (Jorge Vargas) ອະດີດເລຂານຸການບໍລິຫານຂອງ ເກຊອນ ສ້າງຕັ້ງຄະນະກຳມາທິການ ບໍຫານຟິລິບປິນ ແລະຕໍ່ມາ ລັດຖະບານ ສາທາລະນະລັດຟິລິບປິນ ທີ່ຍູ້ໜຸນໂດຍຍີ່ປຸ່ນ ໂດຍມີຜູ່ນຳຊື່ ໂຮເຊ ພີ ລໍເຣລ (José P. Laurel). ຢ່າງໃດກໍຕາມ ຄົນຟິລິບປິນສ່ວນໃຫຍ່ ກໍໄດ້ສະໜັບສະໜຸນ ຫຼື ເຂົ້າຮ່ວມກັບຂະບວນການກອງໂຈນຕໍ່ຕ້ານ ຢ່າງແຂງຂັນ.

ພວກທະຫານກອງໂຈນ ບໍ່ພຽງແຕ່ຖືກຊຸກຍູ້ ດ້ວຍອຸດົມການອັນສູງສົ່ງເທົ່ານັ້ນ, ປະຊາຊົນເຂົ້າຮ່ວມດ້ວຍເຫດຜົນສັບສົນຕ່າງກັນ ໃນນັ້ນ ຮວມທັງການປົ້ນປ່ຽນທາງເສດຖະກິດຢ່າງໜັກໜ່ວງ, ຄວາມອຶດຢາກ ແລະຂາດເຂີນສາລະພັດ ຕະຫຼອດທັງການສໍ້ໂກງ ແລະໂອກາດທາງການເມືອງ. ຄວາມອາຄາດບາດໝາງແຕ່ເກົ່າກ່ອນ ແລະການໃຊ້ຄວາມຮຸນແຮງຢ່າງໂຫດຫ້ຽມ ແບບເກົ່າໆ ສາມາດຊ້ອນເຊື່ອງໄວ້ເບື້ອງຫຼັງເສື້ອຄຸມຮັກຊາດ ແລະ ຕະຫຼອດທັງຄວາມແບ່ງແຍກ ເປັນພາກສ່ວນຍິບຍ່ອຍ ມີບົດບາດສຳຄັນໃນການຕັດສິນທາງການເມືອງ ວ່າແມ່ນໃຜຈະເຂົ້າຮ່ວມຂະບວນກອງໂຈນ ແລະ ວ່າໃຜຈະຮ່ວມມືນຳ. ຢ່າງໃດກໍດີ ຄວາມຕ້ອງການທີ່ຈະສູ້ກັບຍີ່ປຸ່ນ ແລະ ນ້ຳໃຈເສຍສະຫຼະ ຂອງຜູ່ທີ່ຢືນຢູ່ແນວໜ້າ ກໍເປັນເລື່ອງທີ່ມີຢູ່ແທ້ໆ.

ຊາວຟີລິບປິນ ໄດ້ຮັບໄຊຊະນະ ແຕ່ກໍແລກມາດ້ວຍລາຄາແພງຫຼາຍ. ເມື່ອສົງຄາມສ້ຽງສຸດລົງ ຜູ້ຄົນຈຳນວນຫຼວງຫຼາຍກາຍເປັນຜູ້ບ່ໍມີເຮືອນຢູ່ ແລະປະຊາຊົນເກືອບທັງໝົດອຶດຫິວ. ເຄື່ອງມືທາງການແພດ ແລະ ສຸຂະອະນາໄມ ຂາດແຄນ, ການຂົນສົ່ງເປັນອຳມະພາດ, ຜົນຜະລິດທາງອຸດສາຫະກຳ ຢຸດຊະງັກໄປ. ກຸງມະນີລາ ຕົກຢູ່ໃນສະພາບພັງທະລາຍ. ນັບຕັ້ງແຕ່ຂະແໜງການສະໄໝໃໝ່ ຂອງເສດຖະກິດໄປຕົກຢູ່ກັບເຂດຊຸມຊົນໃນເມືອງເກືອບທັງໝົດ, ສູນເສຍແຫ່ງຊັບພະຍາກອນອັນມີຄ່າ ແລະບຸກຄະລາກອນຜູ້ຊຳນານ . ຊາວຟີລິບປິນ ຖືກປ່ອຍໃຫ້ລົ້ມລຸກຄຸກຄານຢູ່ຜູ່ງອ ຖ້າມກາງຊາກເພພັງຂອງບ້ານເມືອງ ທີ່ພວກເຂົາໄດ້ສ້າງມາ ແຕ່ປີ 1901 ຫາ 1941.

ສົງຄາມໄດ້ນ້ຳງເພຄວາມໂດດດ່ຽວ ທີ່ລັດທິອານານິຄົມສ້າງແຕ່ງໄວ້ ແລະ ມັນກໍໄດ້ເຮັດໃຫ້ຊາວຟີລິບປິນ ເກີດຄວາມສຳນຶກໃນສະຖານະຂອງຕົນ ຢູ່ໃນອາຊີ. ການໃຊ້ພາສາ ຕາກາລອກ(Tagalog) ໃນສະໄໝສົງຄາມ ແລະການຍົກຍ້ອງສະຖາບັນທ້ອງຖິ່ນທັງຫຼາຍ ໄດ້ກໍ່ໃຫ້ເກີດຄວາມພາກພູມໃຈແບບໃໝ່. ໃນປີ 1935 ປິໂອ ດູຣານ (Pio Duran) ຜູ້ຂໍອະໄພຍະໂທດແທນຍີ່ປຸ່ນ ໄດ້ຖືກພິຈາລະນາ ວ່າເປັນຄົນນອກຮີດ ຍ້ອນໄດ້ປົກປ້ອງແນວຄວາມຄຶດທີ່ວ່າ ຟີລິບປິນ ໄດ້ “ຖືກຜູກມັດຢ່າງເໜັ້ນຕີງບ່ໍໄດ້” ໃສ່ກັບອາຊີແລ້ວ, ແລະຫຼັງຈາກ ສົງຄາມຍຸຕິລົງ ສານຄວາມຄຶດຂອງເຂົາ

ກໍໄດ້ກາຍເປັນອົງປະກອບສຳຄັນ ຢູ່ໃນແນວຄວາມຄຶດແຫ່ງການສ້າງຜູ້ນຳ ເຊັ່ນ ກຣາ ໂຣ ເຣັກໂຕ (Claro Recto), ເຟີດີນັນ ມາກອສ (Ferdinand Marcos) ແລະ ຄາລອສ ພີ ໂຣມູໂລ (Carlos P. Romulo)

ນອກຈາກນີ້ ສົງຄາມຍັງໄດ້ທະວີຄວາມເຄັ່ງຕຶງທາງສັງຄົມ ການເມືອງ ແລະ ເສດຖະກິດ ລະຫວ່າງຜູ້ເຊົ່າທີ່ດິນ ກັບ ເຈົ້າທີ່ດິນ, ນາຍຈ້າງ ກັບ ລູກຈ້າງ, ລະຫວ່າງ ຜູ້ຫຼົບລີ້ໜີໄພ ກັບ ຜູ້ຖືກຈັບກຸມຄຸມຂັງ, ຜູ້ຄົນຊາວໃນເມືອງ ກັບຊາວນາບ້ານນອກ ທີ່ເອີ້ນຕາມພາສາຟີລິບປິນວ່າ ຕາໂອ (Tao) ແລະ ພວກສາມາຊິກກອງໂຈນ ກັບ ຜູ້ໃຫ້ການຮ່ວມມື. ດັ່ງນັ້ນຂະບວນການຮຸກບາລາຮັບ (Hukbalahup) ເຊິ່ງໝາຍ ຄວາມວ່າ ກອງທັບປະຊາຊົນຕໍ່ຕ້ານຍີ່ປຸ່ນ ກັບກອງໂຈນຕໍ່ຕ້ານຂະບວນໜຶ່ງ ຢູ່ໃນ ພາກກາງຂອງ ລູຊອນ(Luzon) ທັ້ງສອງຂະບວນການ ຕ່າງກໍເປັນຄວາມພະຍາຍາມ ຂອງຊົນຊັ້ນຊາວນາ ເພື່ອແກ້ບັນຫາຄວາມຂັດຂ້ອງ ກັບພວກເຈົ້າທີ່ດິນ. ບໍ່ແມ່ນວ່າ ສະມາຊິກກອງໂຈນທັ້ງໝົດ ເປັນພວກຫົວຮຸນແຮງ, ບໍ່ແມ່ນວ່າ ຜູ້ມີຫົວຮີດເດີມທັ້ງໝົດ ກາຍເປັນຜູ້ຮ່ວມມືທຸກຄົນດອກ, ບໍ່ແມ່ນວ່າ ຊາວນາທຸກຄົນ ເປັນພວກຮຸກບາລາຮັບ ໝົດ ແລະກະບໍ່ແມ່ນວ່າ ເຈົ້າທີ່ດິນທຸກຄົນ ຈະບໍ່ອາໄສຢູ່ໃນດິນດອນຂອງໂຕເອງ, ແຕ່ ການຍຸຕິສົງຄາມແລະການຍຶດຄອງ ກໍໃຫ້ໂອກາດດີເປັນພິເສດແກ່ພວກຮຸກບາລາຮັບ.

ສົງຄາມໄດ້ທຳລາຍພັກ ນາຊິໂອນາລິສຕາ (Nacionalista) ທີ່ເຄີຍມີອຳນາດ ຄອບງຳເໜືອພັກອື່ນ. ຫຼັງຈາກ ເກຊອນ ເສຍຊີວິດ ໃນປີ 1944 ແລ້ວ ອອສເມຍາ ເຊິ່ງມາເປັນປະທານນາທິບໍດີແທນໄດ້ກັບຄືນໄປໝູ່ເກາະດອນ ທີ່ຕົກເປັນພາລະ ຂອງ ອາເມລິກາ ໂດຍຮັບຜິດຊອບໃນເລື່ອງກວາດລ້າງພວກຂຸນນາງທີ່ໄປຮັບໃຊ້ ສາທາລະ ນະລັດຟີລິບປິນ ສະໄໝຍີ່ປຸ່ນ ອຸ້ມຊູ. ຕຳແໜ່ງຂອງ ອອສເມຍາ ເປັນໜ້າຢາກຫົວ ເຂົາຖືກອາເມລິກາ ບັງຄັບໃຫ້ເປັນຫົວໜ້າຜູ້ພິພາກສາ ເລື່ອງຂໍ້ອະໄພຍະໂທດ. ບັນຫາ ທັ້ງຫຼາຍ ທີ່ເຂົາໄດ້ປະເຊີນ ມີທັ້ງຄວາມບໍ່ຖືກຕ້ອງຕາມກົດໝາຍ ຂອງການແຕ່ງຕັ້ງ ສະພານິຕິບັນຍັດ ປີ 1941, ຄວາມເໝາະສົມໃນການແຕ່ງຕັ້ງຄະນະລັດຖະມຸນຕີ ຂອງ ເກຊອນ, ຄວາມຕ້ອງການ ໃນການມີສານປະຊາຊົນ ເພື່ອພິຈາລະນາຄະດີ ກໍ

ລະນີຜູ້ໃຫ້ການຮ່ວມມື, ບຸລິມະສິດ ໃນການຟື້ນຟູເສດຖະກິດຄືນ ພາຍຫຼັງສົງຄາມກັບ ການກອບກູ້ ແລະ ບັນຫາການແຕກເປັນພັກຝ່າຍຍິບຍ່ອຍ ທີ່ມີອະດີດຍ້ອນຫຼັງໄປ ຮອດໜຶ່ງທົດສະວັດຫຼືຫຼາຍກວ່ານັ້ນ. ເມື່ອນາຍພິນ ແມກ ອາເທີຣ໌ ເອງ ໄດ້ຢັ້ງຢືນວ່າ ມານູແອລ ໂຣຊາສ (Manuel Roxas) ເປັນອິດສະຫຼະຈາກໂທດອາຊະຍາກອນ ສົງຄາມແລ້ວ ເຂົາກໍໄດ້ແຕ່ງຕັ້ງ ໂຣຊາສ ຂຶ້ນເປັນຄູ່ແຂ່ງຂອງ ອອສເມຍາ ໃນການ ເລືອກຕັ້ງປະທານາທິບໍດີ.

ການເລືອກຕັ້ງ ປີ 1964 ເປັນຄວາມຂົມຂື່ນຢ່າງໜຶ່ງ. ໂຣຊາສ ມີໄຊໃນການ ເລືອກຕັ້ງ ດ້ວຍຄະແນນສຽງພໍຫາຈຸດວິດ. ເບິ່ງຄືວ່າ ເງິນເດືອນປະຈຳຕຳແໜ່ງນັ້ນ ສູງ ເໜືອໜີ້ສິນຂອງ ບໍລິສັດມະຫາຊົນອີກ. ພວກນັກການເມືອງ ກັບຂ້າລັດຖະການ ບໍ່ວ່າ ພວກເຂົາຈະເປັນຜູ້ເຄີຍຮ່ວມມື ຫຼືພວກໄປຫຼົບໄພມາ ຫຼື ຫົວໜ້າກອງໂຈນ ລ້ວນແຕ່ ກາຍເປັນຜູ້ສໍ້ໂກງ ເປັນນັກສວຍໂອກາດກັນໄປໝົດ.

ບັນຫາເລື່ອງການຮ່ວມມື ສັບສົນຂຶ້ນ. ເປັນໄປໄດ້ຢ່າງໃດທີ່ ປະເທດຊາດຈະ ສາມາດເຊື່ອໝັ້ນໄດ້ ຢ່າງບໍ່ມີຄວາມສົງໄສວ່າ ຫຼັງຈາກຄວາມອຶດທົນຜ່ານມານັ້ນ ປະ ເທດຊາດໄດ້ກ້າວມາເຖິງເວລານາທີ ອັນດີເລີດຂອງຕົນແລ້ວ, ໃນເມື່ອວ່າ ຊົນຊັ້ນນຳ ຂອງປະເທດເອງ ຜູ່ທີ່ມີກຽດສັກສີ ແລະ ການສຶກສາດີທີ່ສຸດ ຕົກເປັນຜູ້ຕ້ອງຫາວ່າ ທໍລະຍົດຕໍ່ຊາດ, ເຮັດແນວໃດ ຄວາມທຸກທໍລະມານຂອງຊາວຟີລິບປິນ ໃນເປົ້າສົງຄາມ ຈຶ່ງຈະກາຍເປັນບົດຮຽນຂອງຄົນຮຸ່ນໃໝ່ໄດ້ ຖ້າຫາກວ່າ ຜູ້ທີ່ໄດ້ຮັບພາລະກິດປ້ອງກັນ ອຸດົມການແຫ່ງຊາດເຫຼົ່ານັ້ນ ບໍ່ພຽງແຕ່ ໄດ້ໝິ່ນປະມາດອຸດົມການຊຶ່ງ ຫາກຍັງໄດ້ຢູ່ ໃນອຳນາດອີກຕໍ່ໄປພາຍຫຼັງສົງຄາມ. ປະສົບການໃນສະໄໝສົງຄາມ ເຮັດໃຫ້ປະເທດ ຊາດ ຖືເອົາວ່າ ການເຊື່ອຟັງໝາຍເຖິງການປະຖິ້ມການຕໍ່ສູ້ອັນດີງາມ ແລະ ການຕໍ່ ຕ້ານກົດໝາຍແມ່ນເລື່ອງຂອງຄວາມກ້າຫານ. ປະຊາຊາດ ທີ່ຖືກແຫຍ້ໃຫ້ຕົກເຂົ້າຢູ່ ໃນສະຖານະການອັນຮ້າຍຮົນນີ້ ໄດ້ຄົ້ນພົບວ່າ ພວກເຂົາບໍ່ສາມາດເຄົາລົບຕໍ່ກົດໝາຍ ເມື່ອມັນເປັນຄືກັບ ນ້ຳທີ່ໄຫຼອອກຈາກແກ້ວເຖິງຈະມີດອນອັດຢູ່. ຢູ່ບ່ອນໜີ້ ການໃຊ້ ຄວາມຮຸນແຮງ ກາຍເປັນເຄື່ອງມືຂອງສະຖາບັນ ແລະ ການໃຊ້ອາວຸດສົງຄາມ ບໍ່ວ່າ

ຈະດ້ວຍເຫດຜົນໃດກໍຕາມ ຖືວ່າ ແມ່ນຄວາມຖືກຕ້ອງ ໃນນາມຂອງຜູ່ຮັກຊາດ. ສົງຄາມໄດ້ແຜ່ກະຈາຍ ຜູ່ຄົນຖືອາວຸດແລະກຽມຕົວສະເໝີທີ່ຈະໃຊ້ກຳລັງ ກາຍເປັນລັກສະນະທົ່ວໄປ ຢູ່ໃນການດຳລົງຊີວິດຂອງຊາວຟີລິບປິນ ສະໄໝຫຼັງເອກະລາດ. ຜູ້ທີ່ຖືກຟ້ອງຮ້ອງ ຍ້ອນຂໍ້ຫາໃຫ້ການຮ່ວມມືກັບກອງໂຈນ ກໍໄດ້ຮ້ອງທຸກວ່າ ພວກຕົນຖືກຝ່າຍຂອງ ໂຮຊາສ ແກ້ແຄ້ນຄືນ. ບັນຫາຍັງສືບຕໍ່ຍືດເຍື້ອມາອີກຫຼາຍທົດສະວັດ ພາຍຫຼັງການປະກາດໃຫ້ອະໄພຍະໂທດ ແກ່ຜູ້ໃຫ້ການຮ່ວມມືທາງການເມືອງ ໂດຍປະທານາທິບໍດີ ໃນຕົ້ນປີ 1948.

ພາວະສົງຄາມ ທີ່ແກ່ຍາວເປັນເວລາຫຼາຍປີ ຍັງໄດ້ພາໄປເຖິງການຍຸຕິຄວາມໄວ້ວາງໃຈຕໍ່ ສະຫະລັດອາເມລິການຳ. ຄວາມບໍ່ພໍໃຈ ເລີ່ມຂຶ້ນໃນຕົ້ນໆປີ 1942, ເມື່ອ ເກຊອນ ໄດ້ຕໍ່ວ່າຕໍ່ຂານຢ່າງຂົມຂື່ນນຳ ຊາກເລີ ວິນລູກບີ (Charles Willough-by) ວ່າ ອາເມລິກາ ທ່ວງໃຍນຳຊາຕາກຳ ຂອງພີ່ນ້ອງທ່າງໆຂອງເພິ່ນ ຄື ເອີຣົບພຸ້ນ ຂະນະທີ່ ລູກສາວຂອງເພິ່ນ ຄື ຟີລິບປິນ ກຳລັງຖືກຂົ່ມຂືນ ຢູ່ໃນຫ້ອງຫຼັງເຮືອນນີ້ເອງ. ຊາວຟີລິບປິນ ເກືອບທັງໝົດຮູ້ສຶກວ່າ ສະຫະລັດອາເມລິກາ ເປັນໜີ້ບຸນຄຸນ ຟີລິບປິນ ໃນເລື່ອງການສະໜັບສະໜຸນອັນເອື້ອອາລີ ສະໄໝຫຼັງສົງຄາມ, ບໍ່ພຽງແຕ່ຍ້ອນວ່າ ພວກເຂົາໄດ້ເປັນພາຄີນຳເທົ່ານັ້ນ ແຕ່ໂດຍສະເພາະແລ້ວ ຍ້ອນວ່າພວກເຂົາໄດ້ບັນລຸພັນທະຜູກພັນອັນສະຫງ່າງາມແຫ່ງ ອູຕັງ ນາ ລູບ (utang na loop) ທີ່ໄດ້ຕິດເຊື່ອມ "ຄວາມສຳຄັນພິເສດ" ຕໍ່ກັນ. ໃນທຳນອງດຽວກັນ ຊາວຟີລິບປິນ ກໍສຸດແສນຊອກຊ້ຳ ເມື່ອພົບວ່າ ສະຫະລັດອາເມລິການັ້ນ ເບິ່ງຄືວ່າ ບໍ່ມີເວລາສົນໃຈ ຫຼື ມີຄວາມຮູ້ສຶກ ທ່ວງໄຍໃດໆຊ້ຳ. ການຊ່ວຍເຫຼືອທາງດ້ານເສດຖະກິດ ດ້ານເລັກນ້ອຍພາຍຫຼັງສົງຄາມ ໂດຍສະເພາະ ເມື່ອປຽບໃສ່ການຊ່ວຍເຫຼືອອັນມາກມາຍຫຼວງຫຼາຍຂອງ ຍີ່ປຸ່ນ ກັບ ເຢຍລະມັນ ແລະວິທີການອັນຫຍາບກະດ້າງ ທີ່ສະຫະລັດຜູກມັດການຊ່ວຍເຫຼືອຂອງຕົນໄວ້ກັບການປະນີປະນອມ ຫຼັງຍຸກສົງຄາມນັ້ນ ເຮັດໃຫ້ຊາວຟີລິບປິນຫຼາຍຄົນຮູ້ສຶກຂົມຂື່ນເປັນທີ່ສຸດ. ພວກເຂົາຫວັງວ່າ ອາເມລິກາ ຈະສຳນຶກໃນບຸນຄຸນ ແຕ່ແທນທີ່ຈະເປັນແບບນັ້ນ ອາເມລິກາ ຊ້ຳພິສູດຕົນເອງວ່າ ເປັນຍາພໍ່ຂີ້ຖີ ຫວັງແຕ່ກອບໂກຍຜົນປະໂຫຍດ ແລະ ເປັນເຈົ້າອານານິຄົມແບບໃໝ່.

ສະຫະລັດອາເມລິກາ ຍັງຄົງຖານທັບຂະໜາດໃຫຍ່ຂອງຕົນໄວ້ ໃນອ່າວ ຊູບິກ (Subic) ກັບ ຖານທັບອາກາດ ຄລາກ (Clark Air Field) ໃນກຳນົດສັນຍາເຊົ່າ 99 ປີ. ຖານທັບເຫຼົ່ານີ້ກັບການກ່າວອ້າງຂອງອາເມລິກາ ທີ່ວ່າຈະເຮັດໃຫ້ ປະເທດຟີລິບປິນ ເປັນກໍລະນີຕົວຢ່າງສຳລັບລະບອບປະຊາທິປະໄຕຖືກຄຸກຄາມຈາກການກໍ່ຂະບົດຂອງ ຮຸກບາລາຮັບ. ຂະນະທີ່ລັດທິກອມມູນິດ ໄດ້ຮັບໄຊຊະນະຢູ່ຈີນແລະຫວຽດນາມນັ້ນ, ອາເມລິກາ ກໍຮູ້ສຶກຢ້ານກົວແຮງຂຶ້ນວ່າ ລັດທິກອມມູນິດ ອາດສາມາດເຂົ້າມາມີໄຊຢູ່ ໃນ ຟີລິບປິນ ໄດ້ຄືກັນ. ດັ່ງນັ້ນ "ອຸດົມຄະຕິກໍ່ສົງຄາມເຢັນ" ຈຶ່ງເຂົ້າມາກຳນົດຮູບໂສມ ຂອງການແຊກແຊງ. ຄວາມວິຕົກກັງວົນທາງການທະຫານ ແລະ ທາງພູມສາດ ໄດ້ ກາຍມາເປັນບຸລິມະສິດຢູ່ໃນຫົວຜູ້ນຳຂອງ ວໍຊິງຕັນ ເຮັດໃຫ້ພວກຊາດນິຍົມຟີລິບປິນ ເຊັ່ນ ສະມາຊິກວຸທິສະພາ ຄລາໂຣ ເອັມ ເຣັກໂຕ (Claro M. Recto) ເປັນຟືນເປັນໄຟ ຂຶ້ນ, ຄວາມວິຕົກດັ່ງກ່າວຈຶ່ງແກ່ດຶງໃຫ້ ອາເມລິກາ ດຳເນີນລະບອບປົກຄອງ ແບບ ຄະນາທິປະໄຕ (oligarchy) ແລະຕັດສິນແກ້ໄຂບັນຫາສັງຄົມເສດຖະກິດ ດ້ວຍວິທີ ທາງການທາງທະຫານ.

ການສໍ້ລາດບັງຫຼວງ ສິນລະທຳຕົກຕ່ຳ ພາວະເງິນເຟີ້ ແລະຄວາມຕົກຕ່ຳທາງ ເສດຖະກິດ ເຮັດໃຫ້ລັດຖະບານມະນິລາ ບໍ່ສາມາດຜາບແພ້ ພວກຮຸກ ໄດ້, ກ່ອນເສຍ ຊີວິດໃນຕຳແໜ່ງເມື່ອປີ 1948, ໂຣຊາສ ກັບຜູ້ສືບທອດຂອງເຂົາຊື່ ເອລປິດິໂອ ຄວີຣິໂນ (Elpidio Quirino) ຂາດເຂີນກຳລັງແຮງ ຫຼື ແຮງຈູງໃຈເພື່ອທັບມ້າງການ ລຸກຮືຂຶ້ນຂອງຊາວນາ ນຳພາໂດຍຊາວນາຜູ້ມີອິດທິພົນຜູ້ໜຶ່ງ ຊື່ ລູອິສ ຕາຣັຄ (Luis Taruc) ທັ້ງໆທີ່ສະຫະລັດອາເມລິກາ ໃຫ້ການຊ່ວຍເຫຼືອ ທາງການທະຫານ ແລະ ເສດຖະກິດຫຼາຍຂຶ້ນ. ການເລືອກຕັ້ງປະທານາທິບໍດີ ໃນປີ 1949 ເຊິ່ງ ຄວີຣິໂນ ໄດ້ຮັບໄຊຊະນະເໜືອ ອະດີດປະທານປະເທດສະໄໝສົງຄາມ ໂຣເຊ ໂລເຣລ ດ້ວຍ ການໃຫ້ສິນບົນ ຈອບຈ້າງ ສໍ້ໂກງ ຂີ້ຫລັກ ແລະໃຊ້ກຳລັງຂົ່ມຂູ່ ອັນໄດ້ເຮັດໃຫ້ລະ ບອບປະຊາທິປະໄຕອ່ອນແອລົງ. ໃນປີ 1950 ປະເທດຊາດ ກໍເຂົ້າສູ່ວິກິດການທາງ ເສດຖະກິດ ສິນລະທຳການເມືອງ ແລະການທະຫານ. ໃນເດືອນຕຸລາ ຂອງປີດຽວ ກັນນີ້ ທະນາຄານກາງ ຈຳຕ້ອງໄດ້ກູ້ຢືມເງິນມາໃຫ້ພຽງພໍກັບ ຄວາມຕ້ອງການງົບປະ ມານຂອງ ລັດຖະບານ.

ການປາກົດຕົວຂອງ ຣາມອນ ແມກໄຊໄຊ (Ramon Magsaysay) ໄດ້ ປ່ຽນແປງປະຫວັດສາດຂອງ ປະເທດຟີລິບປິນ, ບຸລຸດຜູ່ເກີດໃນເຮືອນຕູບໄມ້ໄຜ່ ເປັນ ລູກຂອງຄູສອນ ທີ່ປ່ຽນອາຊີບມາເປັນຊ່າງຕີເຫຼັກ, ທັງບໍ່ໄດ້ເປັນ ເຊື້ອສາຍຂອງຊົນຊັ້ນ ສູງຮັ່ງມີ. ແມກໄຊໄຊ ເຊິ່ງເປັນຜູ້ນຳພາທະຫານກອງໂຈນໃນສະໄໝສົງຄາມ ໄດ້ຂຶ້ນ ມາເປັນ ລັດຖະມຸນຕີກະຊວງປ້ອງກັນປະເທດ ໃນລັດຖະບານຂອງ ຄວີຣິໂນ. ເຂົານຳ ການປ່ຽນແປງອັນສຳຄັນສາມຢ່າງເຂົ້າມາ ຂະນະດຳລົງຕຳແໜ່ງລັດຖະມົນຕີ. ອັນ ທີໜຶ່ງ ເຂົາໄດ້ຈັດການສວ່າຍລ້າງກອງທັບ ໃຫ້ໝົດສິ້ນຈາກການສໍ້ໂກງ ແລະ ຄວາມ ໄຮ້ສີນທຳ ດ້ວຍການກຳນົດຄວາມໝາຍອັນໃໝ່ແກ່ຈຸດປະສົງ ແລະ ແກ່ນແທ້ຂອງ ກອງທັບ. ອັນທີສອງ ໜ່ວຍສອດແນມຂອງ ແມກໄຊໄຊ ຊ່ວຍໃຫ້ເຂົາສາມາດຈັບກຸມ ຄະນະກຳມການເມືອງຂອງພັກກອມມູນິດ ແລະຍຶດເອກະສານບັນຊີຊື່ຂອງພວກຮູ້ເຫັນ ເປັນໃຈນຳ. ອັນທີສາມ ແລະສຳຄັນກວ່າໝູ່ ເຂົາໃຫ້ກອງທັບຮັບປະກັນວ່າການເລືອກ ຕັ້ງຜູ້ແທນໃນປີ 1951 ຈະຕ້ອງຊື່ສັດປອດໃສ. ໂດຍໃຫ້ການຄຸ້ມຄອງປ້ອງກັນທີ່ບັດ ເລືອກຕັ້ງ, ເຂົາໄດ້ຟື້ນຟູລະດັບຄວາມເຊື່ອໝັ້ນ ຕໍ່ຂະບວນການການເລືອກຕັ້ງ ໄດ້ຂັ້ນ ໜຶ່ງ. ໃນການເລືອກຕັ້ງປະທານາທິບໍດີ ໃນປີ 1953 ເຂົາຈຶ່ງໄດ້ຮັບໄຊຊະນະຢ່າງງ່າຍ ດາຍ. ເມື່ອຮວບຮວມເອົາຄົນໜຸ່ມຂັ້ນຫົວກະທິມາໄວ້ໄດ້ແລ້ວ ເຂົາກໍສາມາດທຳລາຍ ການລຸກຮືຂອງ ຂະບວນການຮຸກບາລາຮັບ ດ້ວຍການປະສານແຮງກົດດັນທາງການ ທະຫານ ຕໍ່ຜູ້ຂັດຂືນບໍ່ຍອມຈຳນົນ ແລະໃຫ້ອະໄພໂທດແກ່ຜູ້ທີ່ຍອມຈຳນົນ, ແລະ ດຳເນີນໂຄງການຕັ້ງຖິ່ນຖານຖາວອນເປັນຊຸດໆ ເພື່ອຫຼຸດຜ່ອນການຍຶດຄອງຢູ່ໃນເຂດ ຂອງພວກຮຸກ. ກ່ອນຈະເສຍຊີວິດດ້ວຍອຸບັດເຫດທາງເຮືອບິນໃນປີ 1957 ແມກໄຊໄຊ ໄດ້ເຮັດຫຼາຍສິ່ງຫຼາຍແນວ ເພື່ອຟື້ນຟູຄວາມມີຊີວິດຊີວາ ແລະ ຄວາມເປັນປຶກແຜ່ນ ຂອງຄົນໃນຊາດ.

ຢ່າງໃດກໍດີ ຜູ້ສືບທອດຂອງເຂົາຕໍ່ໆມາ ກໍຂາດວິໄສທັດ ແລະ ອຳນາດທາງ ການເມືອງ ເພື່ອຄົງພະລັງພາຍໃນອັນນີ້ໄວ້. ຄາລອສ ກາເຊຍ (Carlos Garcia) ຜູ້ ເປັນຮອງປະທານາທິບໍດີໃນຍຸກ ແມກໄຊໄຊ ໄດ້ຮັບເລືອກຕັ້ງເປັນປະທານາທິບໍດີ ໃນ ປີ 1957 ແລະ ດິໂອສສະດາໂດ ແມກຄາປາກາລ (Diosdado Macapagal) ກໍ

ເປັນຜູ້ຕໍ່ມາໃນປີ 1961. ໃນຍຸກນີ້ ເຊິ່ງຕໍ່ມາເອີ້ນກັນວ່າ “ລະບຽບການເມືອງເກົ່າ”(Old Order) ຄວາມຂັດແຍ່ງ ທາງດ້ານໂຄງສ້າງຂອງສັງຄົມລະບອບຄະນາທິປະໄຕ ໃນຍຸກເປັນເອກະລາດແລ້ວ ໄດ້ເຜີຍແບອອກມາຢ່າງຈະແຈ້ງ. ມັນແມ່ນລະບອບປະຊາທິປະໄຕ ທີ່ພໍດຳເນີນໄປໄດ້ ໃນແງ່ທີ່ວ່າຜູ້ຄົນປະຊາຊົນທີ່ບໍ່ມີຕຳແໜ່ງ ສາມາດຍາດແຍ່ງອຳນາດມາໄດ້ ໂດຍຜ່ານຂະບວນການເລືອກຕັ້ງ. ຢ່າງໃດກໍຕາມ ລະບອບນີ້ກໍ ຫາກຖືກຄອບງຳໂດຍຄົນຜູ້ດຽວ ເຊິ່ງສະມາຊິກຂອງເຂົາ ໂດດອອກໂດດເຂົ້າພັກ ຕ່າງໆຈົນຫົວປັ່ນວິນວຽນໄປ. ມັນແມ່ນຍຸກຂອງກອງທັບເອກະຊົນ, ປະສິດທິພາບໃນ ການໃຊ້ກົດໝາຍຫລຸດລົງໆ ແລະ ການພັດທະນາເສດຖະກິດ ກໍເປັນໄປແບບບໍ່ສະ ໝ່ຳສະເໝີ.

ມີການເວົ້າເຖິງການປະຕິຮູບທີ່ດິນຫຼາຍ ແຕ່ບໍ່ໄດ້ລົງມືປະຕິບັດຈັກເທື່ອ. ຊົນ ຊັ້ນສູງ ບໍ່ໄດ້ມີເຈດຕະນາໂຄ່ນລົ້ມ ແຫຼ່ງສ້າງຮັ່ງຄູນມີຂອງພວກເຂົາ ເຖິງວ່າ ຢາກຈະ ເຮັດແນວນັ້ນ ພວກເຂົາກໍຂາດເຂີນຊັບພະຍາກອນທາງເສດຖະກິດ ເພື່ອສະໜັບສະ ໜຸນແຜນວຽກນັ້ນ. ໃນຂະນະດຽວກັນ ມັນກໍແມ່ນຍຸກແຫ່ງການຕີບໃຫຍ່ຂອງທຸລະກິດ ກະແສຫຼັກ. ມີບໍລິສັດໃຫຍ່ໆຂອງຫຼາຍຊາດເຂົ້າມາ ຟິລິບປິນ ເປັນຈຳນວນຫຼວງຫຼາຍ ຂະນະທີ່ຄວາມຈະເລີນຮຸ່ງເຮືອງຂອງໂລກ ຖືກພັດເປົ່າຂຶ້ນຕື່ມ ຍ້ອນເສດຖະກິດຂອງ ອາເມລິກາ ທີ່ກຳລັງສະແຫວງຫາຕະຫລາດ ແລະໂອກາດໃໝ່ໆ. ແມ່ນຍຸກນີ້ເອງ ທີ່ ພາກສ່ວນທັນສະໄໝຂອງສັງຄົມ ໄດ້ຍ້າຍອອກໄປຢູ່ ມາກາຕິ (Makati) ອັນເປັນ ເມືອງສ້າງຂຶ້ນໃໝ່ອ້ອມໆ ກຸງມະນີລາ ນັ້ນເອງ.

ພາຍໃຕ້ການຈັດການແບບມອບໝາຍຂອງຄອບຄົວ ໂຊແບລ (Zobel) ເຮືອນ ຕຶກສູງໆ, ຖະໜົນເສັ້ນກວ້າງໆ, ສູນການຄ້າ ແລະ ເຮືອນຢູ່ອາໄສ ກໍໂປໂລຂຶ້ນ ເຕັມ ຜືນແຜ່ນດິນ ເຊິ່ງແຕ່ກ່ອນ ເປັນທົ່ງລ້ຽງຄວາຍ. ຄຳເວົ້າຂອງມາກສ໌ (Marx) ມັກຖືກ ອ້າງແບບຜິດໆ, ຖ້າວ່າຄົນຮັ່ງ ຍິ່ງຮັ່ງຂຶ້ນ ແລະ ຜູ້ທຸກຈົນ ຍິ່ງມີລູກຫຼາຍຂຶ້ນ ໃນນັ້ນກໍ ຫາກມີລັກສະນະສຸຂະທັດແຝງຢູ່ນຳ ຄືມັນຈະມີຄົນໜຸ່ມສາວຈຳນວນ ຫຼວງຫຼາຍ ທີ່ພະ ຍາຍາມຊອກຮູ້ຊອກຮຽນຂັ້ນວິທະຍາໄລ ໄວ້ເປັນພາຫະນະ ໄປສູ່ການມີຊີວິດທີ່ດີໃນ

ອະນາຄົດ. ໜັງສືພິມເສລີໄດ້ສ່ອງແສງໃຫ້ເຫັນ ຄວາມໂພດເຫຼືອບາງຢ່າງຂອງລະບົບ ແລະ ເກີດມີຄວາມຮູ້ສຶກກ່ຽວກັບກຽດສັກສີແຫ່ງຊາດຂຶ້ນມາ, ມີຄວາມຕື່ນຕົວຫຼາຍຂຶ້ນ ໃນເລື່ອງຄວາມເປັນອາຊີ ຂອງຊາວຟີລິບປິນ.

ໃນປີ 1963 ສະມາຊິກວຸດທິສະພາ ຜູ້ທັນທ້າວຄົນໜຶ່ງ ຊື່ ເຟີດິນັນ ມາຄອສ ປະສົບຄວາມສຳເລັດໃນການທ້າທາຍກັບ ນັກຄະນາທິປະໄຕຍຸກກ່ອນສົງຄາມ ຊື່ ຢູ ໂລຈິໂອ ອາມັງ ໂຣດຣິເກສ (Eulogio Amang Rodriguez) ດ້ວຍການສະໜັກ ຊ່ວງເສັງເອົາຕຳແໜ່ງປະທານວຸດທິສະພາໄດ້. ສອງປີຕໍ່ມາ ມາກອສ ໄດ້ກະໂດດຂ້າມ ໜ້າພັກອື່ນໆ ກາຍເປັນນັກຊາດນິຍົມ ແລະ ໄດ້ໄຊຊະນະໃນການເລືອກຕັ້ງ ເປັນ ປະທານາທິບໍດີ ດ້ວຍຄະແນນສຽງຖ້ວມລົ້ນ. ໃນການກ່າວປາໄສຄັ້ງທຳອິດ ໃນປີ 1965 ເຂົາໄດ້ກ່າວວ່າ "ເບິ່ງຄືວ່າຊາວຟີລິບປິນ ໄດ້ສູນເສຍຈິດວິນຍານ ກຽດສັກສີ ແລະ ຄວາມກ້າຫານ ຂອງຕົນໄປແລ້ວ. ປະຊາຊົນ ຂອງພວກເຮົາ ກ້າວມາເຖິງຂັ້ນໝົດ ສ້ຽງເຊິ່ງຄວາມຫວັງ. ພວກເຮົາຢຸດຈົ້ງ ເພື່ອປະເມີນຄ່າລະບຽບບ້ານເມືອງ" ມາກອສ ຍັງເວົ້າຕໍ່ມາ ໂດຍນັ້ນຍ້ຳວ່າ "ລັດຖະບານ ກຳລັງສ້ໂກງກິນສິນບົນກັນຢ່າງອຶກກະທຶກ ຄັງເງິນຂອງລັດຫວ່າງເປົ່າ, ຊັບພະຍາກອນຂອງລັດ ຖືກຊົມໃຊ້ຈົນກ້ຽງ ການບໍລິຫານ ປະເທດອຶດອາດຊັກຊ້າ ແລະ ບໍ່ມີຫຍັງຟົດຟື້ນ ກອງທະຫານຂອງລັດຖະບານຂາດ ລະບຽບວິໄນ ແລະທີ່ເປີກສາສະພາອົງຄະມຸນຕີຂອງລັດຖະບານ ກໍເປັນໝັນໄປແລ້ວ"

ມາກອສ ຜູ້ສ້າງຕັ້ງ "ລະບຽບການເມືອງເກົ່າ" ປ່າວປະກາດວ່າຕົນເປັນຜູ້ ມາກອບກູ້ຊາດ. ໃນປີ 1969 ເມື່ອປະຕິບັດຕາມຄຳຂວັນ "ເຂົ້າກິນ ແລະ ຖະໜົນ" ແລະເມື່ອຊົມໃຊ້ເງິນໃນຄັງຫຼວງ ໄປຢ່າງເສລີໝົດກ້ຽງແລ້ວ ມາກອສ ກໍໄດ້ຮັບເລືອກ ຕັ້ງເປັນປະທານາທິບໍດີອີກ, ເຂົາເປັນຜູ້ທຳອິດ ທີ່ມີໄຊຊະນະໃນການເລືອກຕັ້ງຮອບທີ ສອງ. ການກ່າວອ້າງຂອງ ມາກອສ ທີ່ວ່າຕົນເປັນວິລະບຸລຸດສົງຄາມຜູ້ໂດດເດັ່ນນັ້ນ ໄດ້ຕື່ມສະເໜໃນໂຕເຂົາ ແລະຄວາມງົດງາມມີສະຫງ່າລາສີຂອງ ນາງ ອິເມນດາ (Imelda) ຜູ້ເປັນພັນລະຍາ ຂຶ້ນຕື່ມ. ທັງໝົດນີ້ ເຮັດໃຫ້ພວກເຂົາຖືກເບິ່ງຄືກັບວ່າເປັນ ເຄເນດີ ຂອງ ຟີລິບປິນ. ນັ້ນເປັນຍຸກ ແຫ່ງຄວາມຮຸ່ງເຮືອງຍຸກໜຶ່ງ ທີ່ຖືກພັດຍູ້ຂຶ້ນຕື່ມ ດ້ວຍການເຂົ້າມາໃນອິນໂດຈີນ ຂອງອາເມລິກາ.

ສິ່ງທີ່ເຮັດໃຫ້ ເຟີດິນັນ ມາກອສ ແຕກຕ່າງກັບນັກການເມືອງຮຸ່ນກ່ອນໆກໍຄື ເຂົາມີຄວາມສົນໃຈອຸດົມການທາງການເມືອງໃໝ່ ສຳລັບປະເທດຟີລິບປິນ. ມາກອສ ເບິ່ງລະບອບປະຊາທິປະໄຕວ່າ ບໍ່ເປັນພຽງສິ່ງໄຮ້ຄ່າເທົ່ານັ້ນ ແຕ່ຍັງເປັນການລະເມີດ ສິດນຳ ເພາະວ່າມັນບໍ່ພຽງແຕ່ສໍ້ໂກງກັນທໍ່ນັ້ນ ແຕ່ຍັງເຮັດໃຫ້ເປັນອຳມະພາດໄປນຳ. ໃນທັດສະນະຂອງເຂົາ "ການໃຊ້ສິດອຳນາດຕາມລັດຖະທຳມະນູນ ຄວນເຂົ້າມາແທນ ບ່ອນ ລະບຽບການເມືອງເກົ່າ". ສັນຊາດຕະຍານໃນເລື່ອງສິດອຳນາດ ເຄີຍຖືກຍົກ ຂຶ້ນມາເນັ້ນຍ້ຳ ໂດຍ ອາໂປລິນາຣິໂອ ມາບີນີ (Apolinario Mabini) ຢູ່ໃນກອງ ປະຊຸມສະພາຮ່າງລັດຖະທຳມະນູນ ຢູ່ ມາໂລໂລສ (Malolos) ໃນຊຸມປີ 1890. ໃນເປັ່ງສົງຄາມໂລກຄັ້ງທີ II ໂຮເຊ ໂລເຮລ, ພີ່ລ້ຽງຂອງ ມາກອສ ກໍໄດ້ເຂົ້າຮັບ ຕຳແໜ່ງປະທານາທິບໍດີ ດ້ວຍຄວາມເຊື່ອວ່າ ປະເທດຟີລິບປິນ ຕ້ອງການໆສັບຊ້ອນ ຄືນໃນໂຄງສ້າງພື້ນຖານ ເພື່ອໃຫ້ຖ່ວງທັນກັບທ່າອ່ຽງໃນທົ່ວໂລກ "ລັດທິຮອບອຳນາດ ໃນມືດຽວ ກຳລັງຄ່ອຍໆ ກ້າວເຂົ້າມາແທນບ່ອນ ລະບອບປະຊາທິປະໄຕ".

ຕະຫຼອດເວລາໃນອາຊີບນີ້ ເຟີດິນັນ ມາກອສ ສຸມເວລາໃສ່ແຕ່ເລື່ອງລັດຖະ ທຳມະນູນ. ຈົນເຖິງວັນສຸດທ້າຍທີ່ຢູ່ໃນຕຳແໜ່ງ ເຂົາຍັງຄົງຍຶດຕິດກັບແນວຄຶດທີ່ວ່າ ຄວນຕ້ອງມີກົດໝາຍ ເພື່ອຕັດສິນພຶດຕິກຳ. ສິ່ງນີ້ເຮັດໃຫ້ລະບອບຂອງເຂົາຄ້າຍຄືກັບ ວິທີການປົກຄອງ ຂອງ ລາຊິນີແຫ່ງດວງໃຈ (Queen of Hearts) ໃນເທບນິຍາຍເລື່ອງ ອາລິຊ ໃນແດນມະຫັດສະຈັນ (Alice in the Wonderland) ຫຼາຍຂຶ້ນໆ.

ໃນເດືອນກັນຍາ ປີ 1972 ມາກອສ ປະກາດໃຊ້ກົດໄອຍະການເສິກ. ໂດຍ ອ້າງວ່າ ກຳລັງໃຊ້ອຳນາດຂອງຕົນ "ເພື່ອປົກປ້ອງ ສະຫາລະນະລັດແຫ່ງ ຟີລິບປິນ ແລະ ລະບອບປະຊາທິປະໄຕຂອງພວກເຮົາ". ມາກອສ ບຸກໄປໜ້າຍ່າງວ່ອງໄວ ເພື່ອ ຍຸຕິພວກແບ່ງແຍກ ແລະການຄັດຄ້ານທຸກໆຮູບແບບ. ມີຄົນຖືກຈັບຫຼາຍພັນ, ການ ອອກໝາຍຈັບ ຖືກລະງັບໄປ, ສື່ສານມວນຊົນ ຖືກຄວບຄຸມຢ່າງເຄັ່ງຄັດ, ການເຮັດ ວຸງກຂອງສານ ອ່ອນແອລົງຢ່າງເຫັນໄດ້ຄັກ, ແລະກອງທັບໄດ້ກຳລັງເສີມແຂງຂັນຂຶ້ນ. ມາກອສ ອ້າງເຫດອ້າງຜົນສຳລັບຄຳປະກາດຂອງຕົນ ໂດຍປ່າວຮ້ອງວ່າ ມີໄພຄຸກຄາມ

ອັນຮ້າຍແຮງ ຈາກການຍຶດອຳນາດຂອງພວກກອມມູນິດ ທີ່ນຳພາໂດຍກຸ່ມນັກສຶກສາ ຫົວຮຸນແຮງ ນິຍົມ ເໝົາ ເຈ ຕຸງ ໃນນັ້ນ ມີນັກສຶກສາຫຼາຍຄົນ ທີ່ມາຈາກຊົນຊັ້ນສູງ.

ຄວາມຈິງ ມາກອສ ຖືກຊັກຈູງ ດ້ວຍບັນຫາທີ່ກວ້າງຂວາງກວ່ານີ້ຫຼາຍເລື່ອງ. ເຂົາເບິ່ງກອງປະຊຸມສະພາລັດຖະທຳມະນູນ ເຊິ່ງໃນເວລານັ້ນ ກຳລັງຖົກຖຽງ ເລື່ອງ ອະນາຄົດຂອງໂຄງສ້າງ ລັດຖະບານ ວ່າເປັນດັ່ງໄພຄຸກຄາມຢ່າງໜຶ່ງ ຕໍ່ສັງຄົມ. ເວລານັ້ນ ເຂົາຢູ່ໃນຕຳແໜ່ງປະທານປະເທດ ເປັນປີທີເຈັດແລ້ວ, ຕາມກົດໝາຍລັດຖະທຳມະນູນ ເຂົາຖືກຫ້າມສະໝັກເລືອກຕັ້ງເປັນຄັ້ງທີສາມ. ຍິ່ງໄປກວ່ານີ້ ໃນຂະນະທີ່ ອຳນາດຂອງເຂົາ ກຳລັງຫັນເຫອອກນອກທາງນັ້ນ ເຂົາກໍຖືກທ້າທາຍ ໂດຍສະມາຊິກ ໃນ ຄະນາທິປະໄຕ ຂອງຕົນເອງ ໃນນັ້ນຮວມທັງ ຄອບຄົວຜູ້ທີ່ມີອິດທິພົນ ໂລເປສ (Lopez), ເຈົ້າຂອງໜັງສືພິມ ຂ່າວສານມະນີລາ (Manila Chronicle), ສະຖານີ ໂທລະພາບ ຫຼາຍບ່ອນ ແລະ ບໍລິສັດໄຟຟ້າມະນີລາ. ສະມາຊິກວຸທິສະພາໜຸ່ມຜູ້ໜຶ່ງ ຊື່ ເບນິໂຍ ອາຄວິໂນ (Benigno Aquino) ທຳທ່າວ່າ ຈະໄດ້ເປັນປະທານາທິບໍດີ ຜູ້ຕໍ່ມາ. ວາລະສານສະບັບສຸດທ້າຍ ຂອງ ຂ່າວເສລີ (Free Press) ທີ່ເປັນ ວາລະ ສານນຳໜ້າ ໃນເລື່ອງສະແດງຄວາມຄຶດເຫັນ ໃນສະໄໝນັ້ນ ລົງພິມຮູບຂອງ ອາຄວິ ໂນ ໃນຖ້ວຍກາງທ່າກະສຸນປີນເປັນໜ້າປົກ ພ້ອມດ້ວຍຄຳບັນຍາຍວ່າ "ສະມາຊິກວຸທິ ສະພາ ເບນິໂຍ ແອສ ອາຄວິໂນ ເປັນເປົ້າໝາຍບໍ?".

ການປະກາດເລີກໃຊ້ກົດໄອຍະການເສິກໄດ້ຮັບການສະໜັບສະໜຸນຢ່າງແຂງ ຂັນຈາກມວນຊົນ ນັກທຸລະກິດໃໝ່ ແລະ ຈາກປະທານາທິບໍດີ ສະຫະລັດອາເມລິກາ ຣິຊາດ ນິກສັນ. ໃນລະຍະສາມປີທຳອິດ ທຸລະກິດການທ່ອງທ່ຽວ ແລະ ລາຍຮັບຈາກ ພາສີອາກອນເຂົ້າລັດ ຫຼາຍຂຶ້ນເປັນສາມເທົ່າ ແລະ ເສດຖະກິດກໍເຕີບໃຫຍ່ ໃນອັດ ຕາສະເລ່ຽ 7% ຕໍ່ປີ. ກອງທັບສ່ວນຕົວ ຂອງ ນັກຄະນາທິປະໄຕ ຖືກກວາດລ້າງ ແລະ ອາວຸດປືນໃນການຄອບຄອງຂອງເອກະຊົນປະມານ 500,000 ກະບອກ ຖືກຍຶດ. ໃນ ຊຸມປີຕໍ່ມານີ້ ມາກອສ ມັກຖືກຍົກຂຶ້ນປຽບທຽບກັບ ລີກວນ ຢູ ຂອງສິງກະໂປເລື້ອຍໆ. ຖ້າຫາກວ່າ ເຂົາໄດ້ລະເມີດສິດທິມະນຸດ ແລ້ວບໍ່ໄດ້ຮັບໂທດໃດໆ ກໍຍ້ອນລະບອບຜະ

ເດັດການຂອງເຂົາ ບໍ່ໂຫດຫ້ຽມທໍ່ກັບຂອງຫຼາຍຄົນ ຍັງມີແນວເວົ້າອີກຫຼາຍຢູ່ ແລະ ຍັງມີຄົນຟິລິບປິນອີກຫຼາຍຄົນ ທີ່ເບິ່ງວ່າຊຸມປີເຫຼົ່ານີ້ ເປັນຍຸກແຫ່ງຄວາມກ້າວໜ້າ ແລະເບິ່ງຄືວ່າ ຍັງຕ້ອງມີການປ່ອຍໄຫ້ມີເສລີພາບຫຼາຍກວ່ານີ້ ເພື່ອການພັດທະນາ ເສດຖະກິດ.

ມາກອສ ໄດ້ຂະຫຍາຍບົດບາດຂອງກອງທັບ ອອກໃນທົ່ວສັງຄົມຢ່າງກວ້າງ ຂວາງ ໂດຍເພີ່ມຂະໜາດຂຶ້ນເປັນສາມເທົ່າ ພວກນາຍທະຫານ ມີໂອກາດກອບໂກຍ ຕັກຕວງຊັບສິນມະຫາສານ, ແລະປະເພນີໃນເລື່ອງບໍ່ໃຫ້ທະຫານ ມາກ່ຽວກັບການ ເມືອງ ກໍສາບສູນໄປ. ມາກອສ ປະກາດໃຊ້ລັດຖະທຳມະນູນໃໝ່ ແທນສານດີກາ (ສູງ ສຸດ) ແລະປ່ຽນແປງລະບົບສານ, ສ້າງຕັ້ງອົງກອນປະຊາຊົນ ຂຶ້ນເປັນ ອົງການມະຫາ ຊົນ ແລະ ອົງການໃນລະດັບທ້ອງຖິ່ນ, ສ້າງຕັ້ງພັກການເມືອງໃໝ່ ຄື ພັກ ກິລູຊັ່ງ ບາ ກອງ ລິປູນັນ (Kilusang Bagong Lipunan) ດ້ວຍການຈັບສັນຍານລະບົບອຸປະຖຳ ແລະ ອຳນາດລັດຢ່າງມີປະສິດທິຜົນ ທ້ຽນໃຊ້ ວິທີລົງຄະແນນໂດຍກົງ, ແກ້ໄຂກົດ ໝາຍລັດຖະທຳມະນູນ ແລະ ວິທີການອື່ນໆແລ້ວ ມາກອສ ຈຶ່ງສ້າງອົງການຈັດຕັ້ງ ທາງການເມືອງເໜືອໜ່ວຍຂຶ້ນອົງການໜຶ່ງ ມາຈັດການກັບຄວາມແຕກແຍກທັ່ງໝົດ. ໃນປີ 1976 ຂະນະທີ່ກຳລັງແກ້ໄຂກົດໝາຍລັດຖະທຳມະນູນຢູ່ນັ້ນ ມາກອສ ໄດ້ຕື່ມມາດ ຕາທີຫົກ ເຊິ່ງເປັນມາດຕາ ທີ່ໃຫ້ອຳນາດທາງການເມືອງສູງສຸດແກ່ເຂົາ ບໍ່ວ່າຈະແມ່ນ ໂຄງສ້າງແບບໃດ ເຂົ້າມາແທນບ່ອນ.

ຢ່າງໃດກໍດີ ມາເຖິງປີ 1975 ຄວາມປ່ວງບ້າດ້ານອຸດົມການ ໄດ້ຂະຫຍາຍ ອອກໄປ ແລະ ມັນກໍຈະແຈ້ງຂຶ້ນວ່າ ລະບຽບການເມືອງໃໝ່ ແມ່ນພາຫະນະໜຶ່ງຂອງ ມາກອສ ເພື່ອສ້າງຄວາມຍິ່ງໃຫຍ່ສ່ວນຕົວເທົ່ານັ້ນ. ລັດທິທຶນນິຍົມ ອັນເກົ່າແກ່ ໄດ້ ໃຫ້ໂອກາດທາງເສດຖະກິດອັນກວ້າງໃຫຍ່ ແກ່ໝູ່ຄູ່ຜູ້ໃກ້ຊິດຂອງ ຕະກູນມາກອສ. ມີ ການຍົກເວັ້ນພື້ນທີ່ສຳລັບການປູກໝາກພ້າວ ແລະ ອ້ອຍ ອອກຈາກການປະຕິຮູບທີ່ ດິນທີ່ເລີ່ມຂຶ້ນ. ໃນທຳນອງໂອ້ອວດແບບດຽວກັນ, ຄວາມໂລບ ທີ່ນັບມື້ນັບຫຼາຍຂຶ້ນ ຢ່າງເຫັນໄດ້ຄັກ ໃນພວກໝູ່ເກົ່າແກ່ ແລະ ຂອງນາງ ອີເມນດາ ມາກອສ ການຮັກສາ

ຜິນປະໂຫຍດ ມາແທນການມີອຸດົມການ. ຍຸກນີ້ ເປັນທີ່ຮູ້ກັນດີວ່າ ຍຸກຜະເດັດການຄູ່ ຜົວເມຍ (Conjugal Dictatorship) ດ້ວຍເຄື່ອງເພັດນິນຈິນດາ ແລະ ໝູ່ເພື່ອນຜູ້ ຊົງອິດທິພົນ ແລະ ໂຄງການອັນຫຼວງຫຼາຍ ນາງ ອີເມລດາ ມາກອສ ໄດ້ກາຍເປັນ ສັນຍະລັກ ແຫ່ງການສໍ້ລາດບັງຫລວງ. ເປັນທີ່ຮູ້ກັນດີໃນນາມ ຍາແມ່ນະຄອນມະນີລາ (Nuestra Señora de Metro Manila) ຍ້ອນວ່າ ນາງກຶນຕຳແໜ່ງຕ່າງໆຢູ່ຫຼາຍ ບ່ອນແລ້ວ ແຕ່ໃນນັ້ນມີຕຳແໜ່ງເຈົ້າແຂວງ ກຳແພງນະຄອນມະນີລາ ແລະ ລັດຖະ ມຸນຕີກະຊວງຕັ້ງຖິ່ນຖານຂອງປະຊາຊົນ ທັງຍັງເປັນປະທານສະພາ ໜ່ວຍງານ ອົງ ການ ບໍລິສັດຕ່າງໆ ຂອງລັດຖະບານອີກບໍ່ຕ່ຳກ່ວາຊາວສາມບ່ອນ. ປີໜຶ່ງໆ ນາງ ມາກອສ ຄຸ້ມຄອງເງິນຫຼາຍຮ້ອຍລ້ານໂດລາເອເມລິກາ ໂດຍຜ່ານງົບປະມານຂອງ ໂຄງການຕ່າງໆ ແລະແມ່ນຍຸກນີ້ເອງ ທີ່ນາງໄດ້ປຸກສ້າງ ໂຮງແຮມຂະໜາດຫ້າດາວ ສິບເອັດບ່ອນຂຶ້ນມາ, ສູນວັດທະນະທຳແຫ່ງມະນີລາ, ສູນຫ້ອງປະຊຸມໃຫ່ຍສາກົນ ຂະໜາດ 5,000 ບ່ອນນັ່ງ, ສູນກາງພາບພະຍົນ ມູນຄ່າ 21 ລ້ານໂດລາອາເມລິກາ ແລະ ອາຄານຜູ້ໂດຍສານຂາເຂົ້າ ທີ່ຍາວຢຽດ ໃສ່ສະໜາມບິນ. ນັບມື້ ນາງນັບກາຍ ເປັນໃບໜ້າຂອງລະບອບການປົກຄອງ ແລະໂດດເດັ່ນຫຼາຍຂຶ້ນ, ມີການຄາດຄະເນ ວ່າ ນາງຈະເປັນຜູ້ສືບທອດຕຳແໜ່ງປະທານາທິບໍດີ ຫລັງຈາກຜູ້ສາມີ ເຈັບປ່ວຍ ຫຼື ເສຍຊີວິດລົງ. ການປັບປ່ຽນລັດຖະບານ ມາກອສ ຢ່າງໄຮ້ຈຸດໝາຍ ຖືກສັງລອມໄວ້ ຢ່າງຄົບຖ້ວນ ໃນລະຫວ່າງ ກອງປະຊຸມຄັ້ງໜຶ່ງນຳຍາແມ່ ມາກອສ ໃນປີ 1982 ເມື່ອນາງເວົ້າວ່າ “ປະເທດຟິລິບປິນ ຕັ້ງໃນຕຳແໜ່ງຍຸທະສາດແບບໜຶ່ງ ເປັນຕາເວັນ ອອກ ແລະ ຕາເວັນຕົກ, ເປັນທັງຊ້າຍ ເປັນທັງຂວາ, ທັງຮັ່ງມີ ແລະທຸກຈົນ” ຫລັງຈາກ ຢຸດໄປໜ້ອຍໜຶ່ງນາງເວົ້າຕໍ່ວ່າ “ພວກເຂົາບໍ່ໄດ້ຢູ່ທັງທີ່ນີ້ ຫຼື ທີ່ນັ້ນ”

ຂະນະທີ່ກຸ່ມມາກອສ ກັບພວກພ້ອງໝູ່ຄູ່ ພາກັນຮັ່ງມີຂຶ້ນໆ ທັງພໍໃຈຍິ່ງຂຶ້ນນັ້ນ ຜູ້ອື່ນໆໃນສັງຄົມຊໍ້າບໍ່ພໍໃຈປານໃດ. ຢູ່ເຂດ ມິນດານາວ ແລະ ຊູລູ ຂອງ ຟິລິບປິນ ພາກໃຕ້ ການລຸກຮື (ກໍ່ຂະບົດ) ໄດ້ລະເບີດຂຶ້ນ ໃນຊຸມຊົນຟິລິບປິນມຸສະລິມ. ສາເຫດ ຂອງການລຸກຮືຕໍ່ຕ້ານນີ້ ມີຄວາມເລິກເຊິ່ງຫຼາຍ ມັນຍ້ອນຄືນໄປຫາຄວາມເປັນປໍລະ ປັກກັນ ເມື່ອຫຼາຍສັດຕະວັດກ່ອນ ລະຫວ່າງ ຊາວຄຣິດສ ກັບຊາວມຸສະລິມ (ໂມໂຣສ

- Moros) ຢູ່ໃນຟີລິບປິນ ແລະຢູ່ໃນທົ່ວໂລກ ແລະ ມັນຮຸນແຮງຂຶ້ນ ຍ້ອນນະໂຍບາຍ ໜຶ່ງ ທີ່ຊາວອາເມລິກາເລີ່ມຕົ້ນຂຶ້ນ ແລະສືບຕໍ່ໂດຍ ແມັກໄຊໄຊ ໃນເລື່ອງກ່ຽວກັບ ການໄປຕັ້ງຖິ່ນຖານໃໝ່ ຂອງຊາວຄຣິດສ໌ຟີລິບປິນ ຜູ້ບໍ່ມີດິນໃນເຂດທີ່ງຮາບ ໃສ່ດອນ ມິນດານາວ. ນະໂຍບາຍນີ້ ໄດ້ປ່ຽນແປງຄວາມໜາແໜ້ນທາງປະຊາກອນ ຂອງພາກ ພື້ນໄປ, ຊາວຄຣິດສ໌ ກາຍເປັນຝ່າຍຈຳນວນຫຼາຍກ່ວາ. ການກຳເນີດ ຂອງລັດທິຊາດ ນິຍົມ ໃນໝູ່ຄົນອາຊີຕາເວັນອອກສຽງໃຕ້ ກັບ ຊາວອາຫຣັບ, ຄວາມຮັ່ງມີຈາກບໍ່ນ້ຳ ມັນ ຂອງ ຊາວມຸສະລິມໃໝ່ ແລະ ການແຕກແຍກທາງການເມືອງໃນທ້ອງຖິ່ນ ໄດ້ ຕື່ມເຕີມເຊື້ອໄຟ ໃຫ້ແກ່ການລຸກຮືຂຶ້ນນີ້.

ໃນປີ 1968 ຜູ້ນຳຊາວມຸສະລິມກຸ່ມໜຶ່ງ ໄດ້ຈັດຕັ້ງ ແນວໂຮມປົດປ່ອຍແຫ່ງ ຊາດໂມໂຣ (Moro) ໂດຍກຳນົດຈຸດໝາຍ ຢູ່ທີ່ການມີເອກະລາດສົມບູນ ແຕ່ຄ່ອຍໆ ທະວີຄວາມເປັນເຈົ້າຕົນເອງໃນການປົກຄອງ ເປັນເປົ້າໝາຍອັນແທ້ຈິງຂອງພວກເຂົາ. ກອງປະຊຸມສະພາຮ່າງລັດຖະທຳມະນູນ ໃນປີ 1972 ໃຊ້ເວລາຫຼາຍສົມຄວນ ໃນການ ຖົກຖຽງກ່ຽວກັບບົດບາດຂອງເຂດຊາວມຸສະລິມ. ຫຼັງຈາກເຫດການບໍ່ຄາດຝັນກ່ຽວກັບ ນ້ຳມັນ ໃນປີ 1973 ແລະ ການປະກາດໃຊ້ກົດໄອຍະການເສິກ, ຊາວໜຸ່ມມຸສະລິມ ໄດ້ເຂົ້າມາສັງກັດໃນ ແນວໂຮມປົດປ່ອຍແຫ່ງຊາດ (Moro National Liberation Front - MNLF) ນັບມື້ນັບຫຼາຍຂຶ້ນ ແລະມາເຖິງຈຸດສຸດຍອດແລ້ວ ພວກຕໍ່ຕ້ານ ກໍສາ ມາດຈັດຕັ້ງທະຫານກອງໂຈນ ປະຈຳສະໜາມທີ່ມີກຳລັງເຖິງຫ້າຫົກໝື່ນຄົນ. ຫົວໜ້າ ຜູ້ສຳຄັນຂອງຊາວມຸສະລິມ ຊື່ ນູຣະ ມິຊຸອາຣິ (Nur Misuari) ເຊິ່ງຕະຫຼອດເວລານີ້ ລີ້ໄພຢູ່ຕ່າງແດນ, ແຕ່ ມາກອສ ໄດ້ຊື້ຈ້າງຜູ້ນຳຂັ້ນທ້ອງຖິ່ນໄວ້ຢ່າງແນບນຽນ ແລະ ໃນທັນທີທັນໃດ ກໍໄດ້ຕົກລົງຜ່ອນຜັນ ຕາມຄຳຮຽກຮ້ອງ ເພື່ອປົກປ້ອງການມີສິດປົກ ຄອງຕົນເອງຂອງພວກເຂົາ. ມາເຖິງປີ 1981 ແນວໂຮມປົດປ່ອຍແຫ່ງຊາດ ມີຈຳນວນ ສະມາຊິກທະຫານກອງໂຈນຕົກຕ່ຳລົງ ເປັນປະມານໜຶ່ງໝື່ນຄົນ. ມາກອສ ໝຸນເງິນ ກ້ອນໃຫຍ່ເພື່ອພັດທະນາມາໃຫ້ເຂດຊຸມຊົນມຸສະລິມ ໃນນັ້ນໂຮມທັງໂຄງການພັດທະ ນາເຂດລ່ອງແມ່ນ້ຳ ໂກຕາບາໄຕ ອາກູຊັນ (Cotabato-Agusan).

ຖ້າວ່າ ເງິນ ແລະການປະນີປະນອມທາງການເມືອງ ໄດ້ດັບມອດຄວາມປ່ວງ ບ້າຂອງຊາວມຸສະລິມ ຜູ້ນິຍົມການແບ່ງແຍກໄປແດ່ ແຕ່ມັນກໍບໍ່ໄດ້ເຮັດຫຍັງເລີຍ ເພື່ອ ປິດຕັນການເຕີບໃຫຍ່ຂອງ ກອງທັບປະຊາຊົນໃໝ່ (New People Army - NPA), ເຊິ່ງກໍແມ່ນ ແຂນຂາ(ເສດເຫຼືອ)ທະຫານກອງໂຈນ ຫົວຮຸນແຮງຂອງ ພັກກອມມູນິດ ຟິລິບປິນ ທີ່ຈັດຕັ້ງກັນຄືນໃໝ່ນັ້ນເອງ, ມາກອສ ເຊິ່ງອ້າງເອົາໄພຄຸກຄາມຈາກກອມ ມູນິດ ມາເປັນເຫດຜົນການນຳໃຊ້ກົດໄອຍະການເສິກ ເປັນນັກລະດົມກຳລັງຜູ້ດີເລີດ ຄົນໜຶ່ງ ທີ່ກອງທັບປະຊາຊົນໃໝ່ບໍ່ເຄີຍມີມາກ່ອນ. ການຈັດການອັນຜິດພາດທາງດ້ານ ເສດຖະກິດຂອງເຂົາກໍດີ, ຄວາມໂລບມາກຂອງໝູ່ຄູ່ຂອງເຂົາກໍດີ, ຄວາມຂັດແຍ່ງໃນ ສັງຄົມຟິລິບປິນ ທີ່ນັບມື້ນັບຫຼາຍຂຶ້ນ ທັງໝົດນີ້ ຊັກດຶງເອົາຜູ້ຄົນທີ່ອຶດຫິວ ຂາດບ່ອນ ພັກອາໄສ ແລະ ຜູ້ອັບຈົນໝົດຫວັງທັງຫຼາຍ ເຂົ້າມາຫາ ກອງທັບປະຊາຊົນໃໝ່. ໃນ ຂັ້ນຕົ້ນ ກອງທັບປະຊາຊົນໃໝ່ ປະຕິບັດການຢູ່ໃນເຂດຊົນນະບົດຫ່າງໄກ ແລະ ການ ໝຸນໃຊ້ຄວາມເຈັບປວດ, ຄວາມເຄັ່ງຕຶງ ແລະ ຄວາມມຸ່ງຫວັງ ຂອງທ້ອງຖິ່ນຢ່າງມີ ສິລະປະ. ກອງທັບປະຊາຊົນໃໝ່ ໄດ້ສະຖາປະນາໜ່ວຍປະກອບອາວຸດ ແລະ ສ້າງ ຕາໜ່າງ ຂອງຜູ້ສະໜັບສະໜຸນຂຶ້ນ. ຕະຫຼອດເວລາສິບຫ້າປີ ທະຫານກອງໂຈນແກ່ນ ກາງປະມານ 12,000 ຫາ 15,000 ຄົນ ຖືກລະດົມເຂົ້າມາ ແລະພໍເຖິງ ປີ 1985 ຜູ້ ສັງເກດການທາງທະຫານຂອງອາເມລິກາ ແລະ ຟິລິບປິນ ກໍຮູ້ສຶກວ່າ ກອງທັບປະຊາ ຊົນໃໝ່ ໄດ້ບັນລຸເຖິງຂັ້ນຕອນພັດທະນາສຳຄັນທີ່ສຸດ ອັນຈະອຳນວຍໃຫ້ກອງທັບດັ່ງ ກ່າວ ສາມາດລົງມື ດຳເນີນການທາງທະຫານ ທີ່ໃຫຍ່ຫຼວງກວ່າເກົ່າ ໂດຍເລັ່ງໃສ່ການ ຄຸກຄາມໂດຍກົງ ຕໍ່ຄວາມຢູ່ລອດຂອງລັດຖະບານ.

ໃນເດືອນມັງກອນ ປີ 1981 ມາກອສ ໄດ້ສັ່ງຍົກເລີກການໃຊ້ກົດໄອຍະການ ເສິກ ໃນດ້ານເຕັກນິກ ທັງນີ້ ເພື່ອຫຼຸດຜ່ອນທາງສຽງຕຳນິວິຈານຈາກທົ່ວໂລກ. ເຂົາຍັງ ຮູ້ສຶກໝັ້ນໃຈ ໃນຕຳແໜ່ງທາງການເມືອງຂອງຕົນຢູ່. ແຕ່ກໍເຂົ້າໃຈດີຄືກັນວ່າ ເຂົາຈຳ ເປັນຕ້ອງໄດ້ຮັບການຊ່ອຍເຫຼືອ ທາງການທະຫານ ແລະເສດຖະກິດ ຈາກອາເມລິກາ ຫຼາຍຂຶ້ນ ຖ້າຢາກຜາບແພ້ກອງທັບປະຊາຊົນໃໝ່. ການທີ່ປະທານາທິບໍດີ ຈິມມີ ຄາຣ໌ເຕີ (Jimmy Carter) ສຸມຄວາມສົນໃຈໃສ່ເລື່ອງສິດທິມະນຸດ ແລະ ຄວາມສົນໃຈຂອງ

ສົ່ມວນຊົນທີ່ມີຫຼາຍຂຶ້ນ ຕໍ່ການລະເມີດສິດທິມະນຸດ ໄດ້ເຮັດໃຫ້ກົດໄອຍະການເສີກ ກາຍເປັນຄືສິ່ງຖ່ວງດຶງໜັກໜ່ວງ ເຊິ່ງບໍ່ຈຳເປັນ. ມາກອສ ຕ້ອງການໃຫ້ ອາເມລິກາ ເຊີນໄປຢ້ຽມຢາມ ວໍຊິງຕັນ ຢ່າງເປັນທາງການ ແລະໄດ້ຄຶດໄລ່ໄວ້ວ່າ ການຍົກເລີກ ກົດໄອຍະການເສີກ ອາດຊ່ວຍໃຫ້ເຂົາໄດ້ຮັບ ການສະໜັບສະໜຸນຢ່າງແຂງຂັນຈາກ ໂຣນານ ເຣແກນ (Ronald Reagan) ເພື່ອນເກົ່າແກ່. ແຕ່ໂລກໃນປີ 1981 ແຕກ ຕ່າງຢ່າງຫຼວງຫຼາຍ ກັບໂລກໃນປີ 1972 ດ້ວຍວິທີການອອກສຽງໂດຍມອນຊົນຫຼາຍ ເທື່ອ ແລະການຈັດແຈງຕ່າງໆນໆ ທາງລັດຖະທຳມະນູນແລ້ວ ມາກອສ ກໍມີຄວາມ ໝັ້ນໃຈໃນການສືບຕ່ໍຢູ່ໃນອຳນາດ ທີ່ເຂົາຮູ້ສຶກວ່າຕົນເອງຮຽກຮ້ອງໄດ້. ດັ່ງນັ້ນ ໃນ ເດືອນມິຖຸນາ ປີ 1981 ເຂົາຈຶ່ງຈັດໃຫ້ມີການເລືອກຕັ້ງປະທານາທິບໍດີຂຶ້ນ ໂດຍການ ໂຄສະນາຫາສຽງແຂ່ງຂັນ ກັບຜູ້ຮັບສະໝັກຄົນໜຶ່ງ ເຊິ່ງທັ້ງອ່ອນແອ ແລະບໍ່ມີຊື່ສຽງຄື ອາເລໂຈ ຊານໂຕສ (Alejo Santos). ບາງທີ ອາດມີຄວາມໝາຍໃດໜຶ່ງຢູ່ ໃນການທີ່ ບາກໂຕລົມ ກາບັງບັງ (Bartolom Cabangbang) ຜູ້ສະໝັກນ້ອຍໆຄົນໜຶ່ງ ໄດ້ ຄະແນນໄປ 4% ດ້ວຍການຍົກນະໂຍບາຍ ສະໜັບສະໜຸນການເຂົ້າເປັນລັດໜຶ່ງ (St-atehood) ຂອງ ສະຫະລັດອາເມລິກາ. ຫຼັງຈາກການເລືອກຕັ້ງ ທີ່ເຕັມໄປດ້ວຍການ ຂີ້ໂກຂີ້ສໍ້ຄັ້ງນີ້ແລ້ວ ຮອງປະທານາທິບໍດີ ຈອດຊ໌ ບູຊ (George Bush) ໄດ້ກ່າວຊຶມ ເຊີຍ ມາກອສ ໂດຍເວ້ົາວ່າ “ພວກເຮົາມັກຄວາມຍຶດໝັ້ນ ໃນຫຼັກການປະຊາທິປະໄຕ ແລະຂະບວນການປະຊາທິປະໄຕ ຂອງທ່ານ”.

ເຖິງວ່າ ປະທານາທິບໍດີ ມາກອສ ໄດ້ຄອບຄອງຟິລິບປິນ ແຕ່ໃນຄວາມຈິງ ລະບອບການປົກຄອງ ຂອງເຂົາ ຖືກຂີ້ໝັ້ງກັດຢ່າງໜັກໜ ່ວງ ດ້ວຍການສວຍໃຊ້ອຳ ນາດຂອງກອງທັບ, ການແຜ່ກະຈາຍລັດທິວິລະຊົນສິງຄາມ ການສໍ້ລາດບັງຫຼວງ ທີ່ ນັບມື້ນັບຫຼາຍຂຶ້ນ ແລະ ກະໂຕສຸຂະພາບຮ່າງກາຍ ທີ່ເຊື່ອມໂຊມລົງເປັນລຳດັບນັ້ນ ເອງ. ປະທານາທິບໍດີ ມາກອສ ເຈັບປ ່ວຍເປັນພະຍາດຜິວໜັງ ເຊິ່ງໃນກໍລະນີຂອງເຂົາ ພະຍາດໄດ້ແຊກຊຶມໄປຄຸກຄາມໝາກໄຂ່ຫຼັງ ເຖິງຂັ້ນສາຫັດ. ເມື່ອເປັນທີ່ຈະແຈ້ງວ່າ ເຂົາເຈັບປ ່ວຍໜັກແລ້ວ ການຊ ່ວງເສັງຍາດແຍ ່ງອຳນາດ ແລະ ການມີອຳນາດຫຼາຍ ຂຶ້ນຂອງນາງ ອີເມລດາ ມາກອສ ໄດ້ກໍ່ໃຫ້ເກີດແຜນລັບ ຄືກັບຢ ູ່ໃນລາຊະອ ັງຈ ີນ

ສະໄໝລາຊະວົງຊິງ (Ch'ing) ລັດຖະມຸນຕີປ້ອງກັນປະເທດ ຮວນ ພອນເຊ ເອນຣິນ (Juan Ponce Enrile) ແລະລັດຖະມຸນຕີໃນຄະນະລັດຖະບານອີກຫຼາຍຄົນ ໄດ້ເສຍຕຳແໜ່ງ ຂອງເຂົາໃຫ້ແກ່ ນາຍພິນ ຟາບຽນ ເວີຣ໌ (Fabian Ver) ພີ່ນ້ອງຄົນໜຶ່ງຂອງ ມາກອສ ແລະ ຜູ້ສະໜັບສະໜຸນທີ່ຈົງຮັກພັກດີ. ວິກິດການນ້ຳມັນ ປີ 1973 ແລະ 1979, ການຕົກຕ່ຳຂອງລາຄາເຄື່ອງອຸປະໂພກໃນທົ່ວໂລກ ແລະ ຊົນຊັ້ນນຳ ແຫ່ກັນ ສົ່ງເງິນອອກໄປໄວ້ຕ່າງປະເທດ ທັງໝົດນີ້ ເຮັດໃຫ້ໜີ້ສິນຕ່າງປະເທດຂອງຊາດ ທະວີຂຶ້ນເປັນສອງເທົ່າ ໃນລະຫວ່າງ ປີ 1979 ຫາ 1983. ພາວະເງິນເຟີ້ ພຸ່ງສູງຂຶ້ນ ແລະ ພວກນັກວິຊາການກັບນັກທຸລະກິດຮັບເໝົາ ຫັນໜ້າມາໃສ່ ມາກອສ ກັບພັກພວກ ໃນຖານະເປັນໂຕບັນຫາ ບໍ່ແມ່ນຜູ່ຈະແກ້ໄຂບັນຫາ.

ຢ່າງໃດກໍຕາມ ຍ້ອນມີຄວາມໝັ້ນໃຈໃນຕົນເອງວ່າ ສາມາດຍຶດສັງຄົມໄວ້ໃນກຳມື ແລະຍັງຕ້ອງການຫຼີກເວັ້ນການຕຳນິຕິຕຽນຈາກທາງສ່ຽງໂລກ ມາກອສ ຈຶ່ງອະນຸຍາດໃຫ້ໜັງສືພິມຝ່າຍຄ້ານລົງພິມ ແລະ ສົ່ງກະຈາຍສຽງ ໃນນັ້ນ ຮວມທັງສະຖານີວິທະຍຸ ເວຣິຕາສ (Veritas) ເຊິ່ງເປັນສະຖານີຂອງ ສາສະນະຈັກ ໂຣມັນຄາໂທລິກ. ໃນລະຍະດຽວກັນນີ້ ມາກອສ ເຊິ່ງຖືກບີບຢ່າງແຮງຈາກອາເມລິກາ ອະນຸຍາດໃຫ້ ປ່ອຍຄູ່ສັດຕູຂອງເຂົາຄື ເບນິໂຍ ອາຄວິໂນ ອອກຈາກຄຸກ ແລະເມລະເທດໄປຢູ່ ເມືອງບອສຕັນ (ອາເມລິກາ) ພ້ອມດ້ວຍຄອບຄົວລູກເມຍ. ອາຄວິໂນ ເປັນບຸກຄົນດຽວໃນຝ່າຍຄ້ານ ທີ່ສາມາດເຕົ້າໂຮມເອົາຝ່າຍຄ້ານ ທີ່ກະແຈກກະຈາຍເຂົ້າກັນ ເປັນແນວໂຮມທາງການເມືອງກ້ອນດຽວກັນ. ໃນປີ 1978 ຂະນະທີ່ຍັງຖືກຄຸມຂັງໂດດດ່ຽວຢູ່ໃນຄຸກ ອາຄວິໂນ ກໍໄດ້ວາງແຜນສ້າງ ພັກລາບານ (Laban) ຂຶ້ນແລ້ວ ແລະໄດ້ລົງສະໝັກຮັບເລືອກຕັ້ງ ຍາດເອົາຕັ່ງນັ່ງໃນສະພາ ແລະ ແນ່ນອນວ່າ ຄົງໄດ້ຮັບເລືອກ ຖ້າຫາກວ່າ ການເລືອກຕັ້ງເປັນໄປຢ່າງຍຸຕິທຳ ປອດໃສ.

ໃນເດືອນສິງຫາ 1983 ອາຄວິໂນ ຕັດສິນໃຈກັບຄືນປະເທດ ຟີລິບປິນ ເພາະເຊື່ອວ່າ ມາກອສ ກຳລັງຈະເຂົ້າປິ່ນປົວປ່ຽນໝາກໄຂ່ຫຼັງ ແລະ ສ່ຽງຕໍ່ຄວາມຕາຍຫຼາຍ. ເຂົາຮູ້ສຶກວ່າ ເວລານີ້ ແມ່ນລະຍະເໝາະສົມທີ່ສຸດ ແລະ ການມາປາກົດຕົວຂອງເຂົາ

ຢູ່ມະນິລາ ກໍຄືງເປັນສິ່ງດຽວທີ່ພໍຈະດຶງເອົາ ນາຍພິນ ເວີຣ໌ ກັບ ນາງ ອີເມລດາ ມາກອສ ອອກຈາກການຍຶດອຳນາດໄດ້.

ອາຄວີໂນ ຖືກສັງຫານຢ່າງໂຫດຫ້ຽມ, ຖືກຍິງໃສ່ທາງງ່ອນຫົວ ໂດຍທະຫານ ຍາມຄົນໜຶ່ງ ທີ່ຕິດຕາມຂະບວນມາ ຕັ້ງແຕ່ອອກຈາກສະໜາມບິນສາກົນມະນິລາ. ຂ່າວຄາວຈາກຝ່າຍກອງທັບ ກ່ຽວກັບສິ່ງທີ່ເກີດຂຶ້ນ ເປັນຄວາມເທັດອ້ອຍຕ້ອຍ. ບໍ່ວ່າ ມາກອສ ເອງຈະໄດ້ຮູ້ເລື່ອງນຳຫຼືບໍ່ ຫຼືວ່າ ມັນແມ່ນຄຳສັ່ງຂອງ ນາງ ອີເມລດາ ມາກອສ ກັບ ນາຍພິນເວີຣ໌ ກໍຕາມ ມັນໄດ້ກາຍເປັນເລື່ອງທີ່ຖືກວິຈານຢ່າງເຜັດຮ້ອນ. ຢ່າງໃດກໍດີ ການເສຍສະຫຼະເພື່ອອຸດົມການທາງການເມືອງ ຂອງຜູ້ນຳຝ່າຍຄ້ານຄົນນີ້ ກໍກາຍເປັນຈຸດເລີ່ມຕົ້ນອັນຮ້ອນແຮງ ຂອງຊຸມປີສຸດທ້າຍແຫ່ງ ຄວາມເຊື່ອມໂຊມ. ພາຍໃຕ້ການກົດດັນໜັກໜ່ວງ ທັງຈາກພາຍໃນ ແລະນອກປະເທດ ມາກອສ ໄດ້ແຕ່ງ ຕັ້ງກຳມະການສອບສວນຂຶ້ນຊຸດໜຶ່ງ ໃນເດືອນຕຸລາ 1983 ເພື່ອຄົ້ນຫາຄວາມຈິງ. ຫຼັງ ຈາກການສືບປາກຄຳຫຼາຍຫຼົບຫຼາຍຕ່າວ ຄະນະກຳມາທິການ ອາກຣາວາ (Agrava) ໄດ້ອອກບົດລາຍງານສະບັບໜຶ່ງ ທີ່ບົ່ງຊີ້ວ່າ ບໍ່ເຊື່ອຖືໃນເລື່ອງທີ່ກອງທັບແຕ່ງຂຶ້ນ ໂດຍ ຕູ່ຫາວ່າ ເກີດມາຈາກການຄຶດໂຄ່ນລົ້ມຂອງພວກນາຍທະຫານ ໃນກອງທັບບົກ ກັບ ກອງທັບອາກາດ ໃນນັ້ນ ໂຮມທັງນາຍພົນ ຟາບຽນ ເວີຣ໌ ນຳ. ເຖິງແນວໃດກໍຕາມ ຢູ່ໃນການພິຈາລະນາຄະດີ ທີ່ຈັດຕັ້ງຢູ່ໃນສານທະຫານນັ້ນ ກໍປາກົດວ່ານາຍທະຫານ ທັງໝົດ ກັບຜູ້ມີຊື່ໃນບັນຊີ ບໍ່ມີຄວາມຜິດປະການໃດ. ການໝິ່ນປະມາດຂະບວນການ ຍຸຕິທຳຢ່າງຈະແຈ້ງແນວນີ້ ກາຍເປັນສັນຍານບອກເຕືອນ ໃຫ້ຊາວຟິລິບປິນຈຳນວນ ນັບມື້ນັບຫຼາຍຂຶ້ນ ຫັນໜ້າໜີຈາກລັດຖະບານ ມາກອສ. ໃນທັນທີ ພາຍຫຼັງການ ຄາຕະກຳ ອາຄວີໂນ ກໍເກີດກະແສເງິນໄຫຼອອກຈາກປະເທດ ໃນນັ້ນ ທັງຊົນຊັ້ນນາງ ແລະພວກເສດຖີ ໄດ້ພາກັນໂອນເງິນຂອງພວກເຂົາ ໄປໄວ້ຕ່າງປະເທດ. ໃນເດືອນ ມິຖຸນາ ປີ 1983 ຄ່າເງິນເປໂຊ ຕົກຕ່ຳລົງ ເປັນ ຫົກເປໂຊ ຕໍ່ 1 ໂດລາອາເມລິກາ, ອັດຕາແລກປ່ຽນ ສືບຕໍ່ຕົກລົງອີກ ເປັນ 20 ເປໂຊ ຕໍ່ 1 ໂດລາ. ຍິ່ງໄປກວ່ານີ້ ຄົນ ຟິລິບປິນ ບໍ່ວ່າຜູ້ໃດກໍພະຍາຍາມອອກຈາກປະເທດ. ໃນຍຸກຂອງ ມາກອສ ມີຄົນປະ ມານ 300,000 ອົບພະຍົບອອກຈາກ ຟິລິບປິນ ໄປຢູ່ສະຫະລັດອາເມລິກາ ແລະ

ຊາວຟີລິບປິນ ກໍໄດ້ກາຍເປັນຊຸມຊົນຄົນອາຊີ ທີ່ໃຫຍ່ເປັນອັນດັບສອງ ໃນອາເມລິກາ. ທັງໝົດ ມີຄົນຟີລິບປິນ ອົບພະຍົບ ຢູ່ 1.5 ລ້ານຄົນ ກະແຈກກະຈາຍກັນຢູ່ຕັ້ງແຕ່ ໃນປະເທດອາຫຼັບອ້ອມໆອ່າວເປີເຊ ຂ້າມທະວີບອາຊີ ໄປສະຫະລັດອາເມລິກາ, ກາ ນາດາ ແລະ ເອີຣົບ.

ການໄຫຼອອກຂອງ ມັນສະໝອງ ແລະ ເງິນ ສະແດງອອກເຖິງການໝົດສັ້ງ ຄວາມເຊື່ອໝັ້ນ ໃນລະບອບການເມືອງ ແລະສະຖາບັນການເງິນສາກົນເອງ ກໍໝົດ ຄວາມອົດທົນ ໃນນັ້ນ ນັບທັງທະນາຄານໂລກນຳ ອັນໄດ້ເລັ່ງລັດຄວາມຫຼົ້ມຈົມທາງ ເສດຖະກິດໃຫ້ໄວຂຶ້ນ. ຜົນກະທົບກໍຄື ປະເທດຊາດຟີລິບປິນໄດ້ຫຼົ້ມສະຫຼາຍນັ້ນເອງ. ອັດຕາເງິນເຟີ້ແລ່ນຈີ້ວຂຶ້ນ ບໍ່ມີກອງທຶນພຽງພໍ ສຳລັບໃຊ້ໜີ້ ແລະ ເພີ່ມຄວາມສ່ຽງຕໍ່ ລະບົບການເງິນຂອງໂລກ ຍ້ອນຄວາມຫຼົ້ມຈົມຂອງລະບົບທະນາຄານຟີລິບປິນ. ດັ່ງ ທີ່ວາລະສານ ເອໂກໂນມິດສ໌ (Economist) ໄດ້ຄາດຄະເນໄວ້ ໃນປີ 1985 ວ່າ "ບັດນີ້ ເສດຖະກິດຂອງປະເທດ ອາດຖືກກັກໃຫ້ຢູ່ໃນສະພາບລົ້ງຄ້ອຍ ເຊິ່ງມີແຕ່ການ ປ່ຽນແປງແບບເລິກເຊິ່ງເຖິງຖອງເທົ່ານັ້ນ ຈຶ່ງຈະສາມາດກອບກູ້ ບໍ່ໃຫ້ມັນຍຸຕິລົ້ງ ແບບ ຈົບຫາຍວາຍວອດໄດ້". ເສດຖະກິດຂອງປະເທດຕົກຕ່ຳລົ້ງ 15%, ພາຍໃນລະຍະ ສາມປີ ແຫ່ງຄວາມຫຍຸ້ງຍາກນີ້ ກະໂຕຄົນຟີລິບປິນເອງ ກໍຖືກກະທົບຢ່າງໜັກໜ່ວງ. ລັດຖະບານ ຖືກບັງຄັບໃຫ້ຂາຍກິດຈະການຂອງລັດຫຼາຍກວ່າ 150 ແຫ່ງ ເພື່ອສ້າງ ລາຍຮັບ ແຕ່ກໍບໍ່ປະສົບຜົນສຳເລັດແຕ່ຢ່າງໃດ.

ດ້ວຍໜີ້ສິນຂອງລັດ ທີ່ສູງຂຶ້ນເຖິງ 27 ພັນລ້ານ(ຕື້) ໂດລາອາເມລິກາ, ທະນາ ຄານເຈົ້າໜີ້ 483 ບ່ອນ ກັບສະຖາບັນການເງິນສາກົນ ໄດ້ເລັ່ງລັດໃຫ້ທຳການປະຕິຮູບ ກ່ອນທີ່ຈະອອກເງິນສົດມາໃຫ້ລ່ວງໜ້າ. ໂຮງງານນ້ຳຕານ 14 ແຫ່ງ ທີ່ປຸກສ້າງຂຶ້ນໃນ ຍຸກຕົ້ນລະບອບ ມາກອສ ລົ້ມລະລາຍ ແລະ ຢຸດກິດຈະການໄປ, ໂຮງງານປົດໝາກ ພ້າວ ຫວ່າງເປົ່າ, ໂຮງງານຊີມັງ ໂຮງງານລົດໂອໂຕ ແລະໂຮງງານຕ່ຳແຜ່ນ ຖືກລັດ ຖະບານຍຶດ ໂດຍຖືວ່າ ໜີ້ສິນຂອງໂຮງງານເຫຼົ່ານີ້ ເປັນຕົວການທຳລາຍກະໂຕລັດ ຖະບານເອງ. ທະນາຄານພັດທະນາ ຂອງຟີລິບປິນ ແລະ ທະນາຄານແຫ່ງຊາດຂອງ ຟີລິບປິນ ມີຊັບສິນທີ່ບໍ່ສ້າງຜົນກຳໄລ ຫຼື ຈັດການບໍ່ໄດ້ ມູນຄ່າ 100 ຕື້ ເປໂຊ.

ຂໍຍົກຕົວຢ່າງ ໃນປີ 1981 ໂຮງງານຕໍ່າແຜ່ນ ຊື່ ດີວີ ດີ (Dewey Dee) ຫາຍໂຕໄປພ້ອມກັບໜີ້ສິນ ມູນຄ່າ 80 ລ້ານ ໂດລາສະຫະລັດ. ຮູບການນີ້ ເລັ່ງຈ້າວຂຶ້ນອີກ ເມື່ອ ກຸ່ມບໍລິສັດ ກໍ່ສ້າງແລະພັດທະນາ ຂອງຟີລິບປິນ (CDCP) ຖືກຍຶດ ພ້ອມໜີ້ສິນ ແບກຫາບໄວ້ 5 ຕື້ (ພັນລ້ານ) ເປໂຊ ແລະ ບໍລິສັດ ແດນຕາ ມໍເຕີຣ (Delta Motor Corperation) ກໍຖືກໂອນເປັນຂອງລັດ ພ້ອມກັບໜີ້ສິນ 2 ຕື້ ເປໂຊ. ແນ່ນອນ ແລ້ວວ່າ ບໍລິສັດທັ້ງສອງນີ້ ເປັນຂອງໝູ່ຄູ່ໃກ້ຊິດຂອງທ່ານປະທານາທິບໍດີເອງ. ປະຊາຊົນ 20,000 ຄົນ ທີ່ເຮັດວຽກຢູ່ ໃນກຸ່ມບໍລິສັດ CDCP ເຄີຍມີລາຍໄດ້ ເປັນເງິນຕາຕ່າງປະເທດ ສູງກວ່າຢູ່ບໍລິສັດອື່ນໆໃນປະເທດຟີລິບປິນ.

ໃນຂະນະທີ່ວິກິດການທາງເສດຖະກິດ ກຳລັງທະວີຄວາມຮຸນແຮງຂຶ້ນນີ້ ການຍາດແຍ່ງອຳນາດກໍເຄັ່ງຮ້ອນຂຶ້ນນຳ. ມາກອສ ເຊິ່ງເຈັບປ່ວຍຢູ່ເປັນລະຍະໆ ກໍຫາຍໂຕໄປຈາກສາຍຕາປະຊາຊົນ ແລະ ປາກົດໂຕອີກ ເມື່ອສຸຂະພາບດີຂຶ້ນ. ນາຍພົນ ເວີຣ໌ ເອງ ກໍຕົກຢູ່ພາຍໃຕ້ໂງ່ນເຝື້ອອັນດຳມືດຂອງການເມືອງ, ເຖິງວ່າທ່ານປະທານາທິບໍດີ ໄດ້ເອື່ອຍອີງໃສ່ເຂົາແລະກອງທັບ ຢ່າງຈະແຈ້ງເດັດຂາດຢູ່ແລ້ວກໍຕາມ. ຄົນອື່ນໆ ຕ່າງກໍບິນວົນວຽນໄປມາຄືແມງໄມ້ ບິນອ້ອມແສງໄຟຮຸ່ງຂອງຕະກຽງ.

ໃນຂະນະດຽວກັນ ພວກຝ່າຍຄ້ານ ກໍກຳລັງພະຍາຍາມຮວບຮວມກຸ່ມບຸກຄົນທີ່ຕິດຕາມຂະບວນການທີ່ລອບສັງຫານ ອາຄວີໂນ. ໃນເດືອນກຸມພາ 1984 ມາກອສ ຮຽກຮ້ອງໃຫ້ມີການເລືອກຕັ້ງສະມາຊິກສະພາ. ຝ່າຍຄ້ານຫົວປານກາງ ແຕກກັນເປັນສອງກຸ່ມຄືຝ່າຍຜູ້ສະໜັບສະໜຸນການຂວ້ຳບາດ ແລະຝ່າຍທີ່ຢາກເຂົ້າຮ່ວມການເລືອກຕັ້ງ.ນ້ອງຊາຍຂອງອາຄວີໂນຕ້ອງການຂວ້ຳບາດ ແຕ່ພັນລະຍາໝ້າຍຄົນງາມ ໂຄຣາຊອນ ອາຄວີໂນ ຊ້ຳຜັດສະໜັບສະໜຸນການເລືອກຕັ້ງຢ່າງແຂງຂັນ. ການແຕກໜໍ່ຈໍ່ດອກ ຂອງ ຂະບວນການແຫ່ງຊາດ ເພື່ອການເລືອກຕັ້ງຢ່າງເສລີ (National Movement for Free Election-NAMFREL) ການປ່າວຮ້ອງໂຄສະນາຂອງສາສະນະຈັກໂຣມັນ ຄາໂທລິກ ຮຽກຮ້ອງໃຫ້ເຂົ້າຮ່ວມການເລືອກຕັ້ງ ແລະການປາກົດຕົວຂຶ້ນ ຂອງນາງໝ້າຍ ອາຄວີໂນ ໄດ້ພິກປັ້ນຜົນຮັບໄປໝົດ ເຖິງວ່າ ມາກອສ ມີລະດັບການເມືອງ

ແລະກຳລັງທາງການເງິນ ທີ່ເຂັ້ມແຂງກວ່າ ເຂົາກໍຍັງປະສົບກັບຄວາມປະລາໄຊຢ່າງ ເຈັບແສບ. ຝ່າຍຄ້ານໄດ້ບ່ອນນັ່ງໃນສະພາ ຮອດໜຶ່ງສ່ວນສາມ, ຖ້າວ່າການເລືອກຕັ້ງ ເປັນໄປຢ່າງຍຸຕິທຳ ຝ່າຍຄ້ານອາດໄດ້ສ່ຽງສ່ວນຫຼາຍກໍໄດ້.

ມາເຖິງເວລານີ້ ລັດຖະບານອາເມລິກາ ກາຍມາເປັນຜູ້ຕໍ່ຕ້ານລັດຖະບານ ມາກອສ ຫຼາຍຂຶ້ນ. ທຳອິດແມ່ນພວກສະມາຊິກ ພັກດີໂມແຄຣັດ (Democrat) ໃນສະພາ ຜູ້ແທນ ນຳໜ້າໂດຍ ສະມາຊິກສະພາຜູ້ໜຶ່ງ ຊື່ ສະເຕເຟນ ໂຊລາກສ໌ (Stephen Solaz) ຕໍ່ມາ ກະຊວງການຕ່າງປະເທດ ກະຊວງປ້ອງກັນປະເທດ ແລະໜ່ວຍສືບຂ່າວລັບ (CIA) ກໍໄດ້ບ່ຽງສາຍຕາມາເບິ່ງ ຟີລິບປິນ ຄືວ່າ ຖືກຄຸກຄາມດ້ານຄວາມໝັ້ນຄົງ ເຖິງ ຂັ້ນພາໃຫ້ຕົນສູນເສຍຖານທັບໄປ ແລະວ່າ ກອມມູນິດອາດໄດ້ໄຊຊະນະ. ຖ້າເປັນ ແນວນັ້ນ ອາເມລິກາ ກໍຈະສູນເສຍ ຜົນປະໂຫຍດໄປຢ່າງຫຼວງຫຼາຍ.

ໃນຍຸກຂອງ ມາກອສ ສາສະນະຈັກ ໂຣມັນຄາໂທລິກ ເອງ ກໍໄດ້ແຕກແຍກ ກັນອອກເປັນສອງສ່ວນ. ພວກອະນຸລັກຫົວຮີດເດີມ ຍອມຮັບສະຖານະພາບ ຢ່າງບໍ່ມີ ເງື່ອນໄຂ ແລະ ບໍ່ໄດ້ເຂົ້າແຊກແຊງ "ໃນເຫດການປັດຈຸບັນ". ພວກຫົວຮຸນແຮງ ເຂົ້າ ຮ່ວມກິດຈະກຳທາງສັງຄົມ ຂະນະທີ່ພວກສາຍກາງ ພະຍາຍາມຫຼີກເວັ້ນ ເລື່ອງເທວະ ສາດການປົດປ່ອຍ(Liberation Theology) ຢ່າງໃດກໍດີ ທາງສາສະນະຈັກ ກໍໄດ້ ເປັນປາກເປັນສຽງຮ່ວມກັນໃນເລື່ອງການປົກປ້ອງ ສິດທິມະນຸດ. ແມ່ນແຕ່ແມ່ຊີ ແລະ ຄຸນພໍ່ເອງ ກໍຖືກຈັບກຸມ ທຸບຕີທໍລະມານ ແລະຂ້າຕາຍ ຂະນະທີ່ ອີກພວກໜຶ່ງ ຖືກບັງຄັບໃຫ້ໜີອອກຈາກປະເທດ. ພາຍຫຼັງການຄາຕະກຳ ອາຄວີໂນ ແລ້ວ ທາງສາ ສະນະຈັກ ໄດ້ຮວມຕົວກັນເຂົ້າຢູ່ເບື້ອງຫຼັງ ສັງຄະລາດ ຂອງ ມະນີລາ ຊື່ວ່າ ເຈມ ຄາຣ໌ດິນາລ ຊີນ (Jaime Cardinal Sin) ທີ່ເປັນລູກຊອດຈີນ(ແມສຕິໂຊ) ພ້ອມ ກັບເພື່ອນຮ່ວມງານ ຂອງທ່ານອີກຜູ້ໜຶ່ງຊື່ ຄາຣ໌ດິນາລ ໄວດາລ (Cardinal Vidal) ເພິ່ນຜູ້ນີ້ ໄດ້ເປັນໜຶ່ງໃນຝ່າຍຄ້ານທີ່ຖືກໝາຍຫົວ ແລະ ມາກອສ ບໍ່ອາດປາບປາມ ຫຼືແມ່ນແຕ່ ເຮັດໃຫ້ມິດປາກລົງໄດ້.

ນາງ ໂຄຣາຊອນ ອາຄວິໂນ ໄດ້ກາຍເປັນກຳລັງທາງການເມືອງ ທີ່ ມາກອສ ບໍ່ສາມາດ ແມ່ນແຕ່ຈະເດົາໃຈ ຫຼື ຄວບຄຸມໄດ້. ນາງເປັນແມ່ຍິງຂີ້ອາຍ, ອອກຫົນເບ້ຍ ບຳນານແລ້ວ, ເກີດໃນຕະກູນຮັ່ງມີ ເຊື້ອສາຍລູກຊອດຈີນແມສຕິໂຊ ຂອງພາກກາງ ລູຊອນ ຄື ຕະກູນ ໂກຮວນໂກສ (Cojuancos), ເປັນຄູ່ຊີວິດຜູ້ໃຈບຸນຂອງຜົວ ຜູ້ອຸທິດ ຊີວິດເພື່ອອຸດົມການ. ຢ່າງໃດກໍດີ ຫຼັງຈາກຜູ້ຜົວເສຍຊີວິດແລ້ວ ນາງພົບວ່າ ພະລັງ ພາຍໃນຂອງຕົນ ໄດ້ພັດທະນາຂຶ້ນຫຼາຍ ໃນໄລຍະແປດປີ ທີ່ນາງກັບຜົວຖືກບັງຄັບ ໃຫ້ ສູ້ທົນຜ່ານຜ່າ ການໝິ່ນປະໝາດຢຽບຢ່ຳ ຢ່າງຫຼວງຫຼາຍນັ້ນ. ດ້ວຍທ່າທີບໍລິສຸດສະອາດ ນາງຖືກດຶງເຂົ້າມາສູ່ເວທີ ເປັນຜູ້ນຳທາງການເມືອງ ຢ່າງລັ່ງໆເລໆ.

ດ້ວຍຄວາມຄຶດອອດອົ່ງຈອງຫອງ ຍ້ອນເປັນນັກຜະເດັດການຜູ່ຍິນຍົງມາຢ່າງ ຍາວນານ ເຟີຣດິນັນ ມາກອສ ເຊື່ອວ່າ ເຂົາມີກົນຈັກທາງການເມືອງ ມີອຳນາດຂອງ ລັດຖະບານ ແລະມີຊື່ສຽງໃນໝູ່ມະຫາຊົນ ພ້ອມທີ່ຈະຕ້ານທານກັບພາຍຸລົມຝົນ ທ່າ ໃດກໍໄດ້. ເມື່ອຖືກຊຸທ້ວງ ດ້ວຍການຢັ່ງມຢາມຫຼາຍຄັ້ງ ຂອງພະນັກງານຂັ້ນສູງ ຂອງ ອາເມລິກາ ແລະ ຖືກສຳພາດທາງໂທລະພາບຫຼາຍເທື່ອ ໃນວັນທີ 3 ພະຈິກ ປີ 1985 ປະທານາທິບໍດີຈຶ່ງສັ່ງໃຫ້ມີການເລືອກຕັ້ງຢ່າງຮີບດ່ວນ. ໃນວັນທີ 2 ທັນວາ ນາຍພົນ ເວີຣ໌ ກັບພັກພວກອີກ 25 ຄົນ ຖືກຕັດສິນພົ້ນໂທດ. ໃນທັນທີທັນໃດ ປະທານາທິບໍດີກໍ ແຕ່ງຕັ້ງ ນາຍພົນເວີຣ໌ ເຂົ້າຮັບຕຳແໜ່ງເກົ່າ ຄືຫົວໜ້າຄະນະລັດຖະບານ. ໃນມື້ຕໍ່ມາ ນັ້ນເອງ ນາງອາຄວິໂນ ກໍໄດ້ປະກາດວ່າ ນາງຈະດຳເນີນການຕໍ່ຕ້ານ ມາກອສ. ຂະ ບວນການແຫ່ງຊາດເພື່ອການເລືອກຕັ້ງເສລີ (NAMFREL) ນຳໂດຍ ນັກທຸລະກິດມາ ກາຕິ ແລະສັງຄະລາດ ຟໍຕິຊ ແຫ່ງ ເນກຣອສ (Bishop Fortich of Negros) ໄດ້ຈັດຕັ້ງ ກຸ່ມເພື່ອກວດກາການເລືອກຕັ້ງ ໃຫ້ມີຄວາມປອດໃສຍຸຕິທຳ, ປາກົດວ່າ ໄດ້ຈັດສົ່ງຜູ້ສັງ ເກດການເບິ່ງການປ່ອນບັດ ໄດ້ເຖິງ 500,000 ຄົນ ຜູ້ຄົນເຫຼົ່ານີ້ ເປັນຜູ້ສ່ຽງອັນຕະ ລາຍຫຼາຍ ດ້ວຍວ່າ ປະທານາທິບໍດີ ໄດ້ໝຸນໃຊ້ ເຫຼ່ກົນທຸກແນວ ເພື່ອຂີ້ຫຼັກການເລືອກ ຕັ້ງ. ອາດຍ້ອນການຊີ້ແນະແບບພໍແລ້ວຮີ້ດວ່າ ການຕິດຕາມຂອງສື່ໜັງສືພິມ ອາດ ຊ່ວຍຢັ້ງຢືນຄວາມຊອບທຳຂອງຕົນ ມາກອສ ຈຶ່ງອະນຸຍາດໃຫ້ສື່ມວນຊົນເຂົ້າມາສັງ ເກດການເລືອກຕັ້ງ, ບໍ່ພຽງແຕ່ເຊື້ອເຊີນເອົາຜູ້ສື່ຂ່າວຈາກຕ່າງປະເທດ ເປັນຮ້ອຍໆຄົນ

ເທົ່ານັ້ນ ເຂົ້າມາໃນປະເທດ ແຕ່ຍັງໃຫ້ໂອກາດແກ່ຝ່າຍຄ້ານນຳ ໃນນັ້ນ ໂຮມທັງ ສະຖານີວິທະຍຸ ເວຣິຕັສ ເຊິ່ງແຕ່ລະມື້ ຈະມີບົດກ່າວປະນາມໂຈມຕີເຂົາ ແລະ ຄະ ນະລັດຖະບານ ກ່ຽວກັບການສໍ້ລາດບັງຫຼວງ ທີ່ກະທຳມາຕະຫຼອດຊາວປີ. ຄາຣດິນາລ ຊິນ ມີບົດບາດເປັນໃຈກາງ ຫຼາຍຂຶ້ນເລື້ອຍໆ ໃນນາມຂອງຝ່າຍຄ້ານ ໂດຍຊຸກຍູ້ ໃຫ້ ກຸ່ມນັກການເມືອງທີ່ເຂົ້າມາສົມທົບກັບ ນາງອາຄວິໂນ ແລະ ສັດຕູຄູ່ແຂ່ງຂອງນາງ ຄື ສະມາຊິກສະພາ ຊັນວາດໍຣ໌ ດອຍ ໂລແຣລ (Salvador Doy Laurel). ຍິ່ງໄປກວ່ານີ້ ເຂົາຍັງໝຸນໃຊ້ອຳນາດຂອງ ໃບຂ່າວສານທ້ອງຖິ່ນ ເພື່ອຖ່ວງດຸນ ກັບອຳນາດຂອງ ລະບົບອຸປະຖຳ ການໃຫ້ສິນບົນ ແລະການນາບຂູ່ ຈາກຝ່າຍປະທານາທິບໍດີ ນຳອີກ.

ກະໂຕການເລືອກຕັ້ງເອງ ເຊິ່ງຈັດຂຶ້ນໃນວັນທີ 7 ກຸມພາ 1986 ນັ້ນ ສ່ວນ ໜຶ່ງ ເປັນພຽງການຈັດສາກອອກໂທລະພາບ. ຄວາມຊຳນານໃນການກຳກັບການສະ ແດງຂອງ ມາກອສ, ການຊື້ສຽງດ້ວຍເງິນມະຫາສານ ແລະການຂົ່ມຂູ່ຕໍ່ສູ້ກັນລະຫວ່າງ ນັກຮົບວິລະຊົນສົງຄາມຂອງ ມາກອສ ກັບ ກອງທັບປະຊາຊົນກວ່າເຄິ່ງລ້ານ ຂອງ ຂະບວນການ NAMFREL ຄວາມຫ່ວງໃຍທາງດ້ານການເມືອງ ອັນໜ້າສະທ້ານໃຈ ຂອງຊາວຟິລິບປິນ ຈຳນວນຫຼວງຫຼາຍນັ້ນ ໄດ້ດຶງດູດຄວາມສົນໃຈຈາກຊາວໂລກ ຜ່ານ ສື່ໂທລະພາບ. ເປັນອັນຈະແຈ້ງວ່າ ນາງ ອາຄວິໂນ ໄດ້ຮັບໄຊຊະນະ ແຕ່ເຄື່ອງກົນ ຈັກຂອງ ມາກອສ ປະກາດວ່າ ຝ່າຍຕົນເປັນຜູ້ມີໄຊ. ການສໍ້ໂກງຍິ່ງປາກົດຈະແຈ້ງຂຶ້ນ ກວ່າເກົ່າ ດ້ານໜຶ່ງ ຍ້ອນວ່າການຄິດໄລ່ຕົ້ນຕໍຜິດພາດຂອງ ມາກອສ ທີ່ໄດ້ອະນຸຍາດ ໃຫ້ສື່ມວນຊົນ ປະຕິບັດໜ້າທີ່ຢ່າງເສລີ, ວິກິດການທາງການເມືອງ ຈຶ່ງດຶ່ງເລິກລົງໄປ ອີກ. ສາສະນະຈັກ ຈຶ່ງເປັນບ່ອນຫຼົບລີ້ໄພ ແລະ "ອຳນາດປະຊາຊົນ" ກາຍເປັນການ ຢັ້ງຢືນ ເຖິງສັດທາອັນແຮງກ້າ ແຫ່ງການຕໍ່ສູ້ເຂັ້ມຂຸ້ນ ທີ່ບໍ່ສັ່ງສຸດເປັນ. ໜ້ອຍເທື່ອ ທີ່ ຄວາມດີ ແລະຄວາມຊື່ອ ໃນເລື່ອງການເມືອງ ຈະຖືກພັນລະນາໃຫ້ເຫັນພາບຈະແຈ້ງ ເທົ່າຄັ້ງນີ້ ແລ້ວຫຼາຍໆອາທິດຕໍ່ມາ ຫຼັງການເລືອກຕັ້ງ ຈຶ່ງປາກົດວ່າ ມີຄວາມກົດດັນ ແຮງຂຶ້ນໆ ເພື່ອໃຫ້ ມາກອສ ຍິນຍອມ ຫຼື ລາອອກຈາກຕຳແໜ່ງ. ກອງທຶນການເງິນສາ ກົນ ແລະຂອງອາເມລິກາ ຫຼາຍບ່ອນ ກັບປະຊາຄົມໂລກ ໄດ້ຕິດຕາມເບິ່ງດ້ວຍ ຄວາມຕື່ນຕົກໃຈ ເມື່ອສັງຄົມຟິລິບປິນ ຕົກເຂົ້າສູ່ລະບອບອະນາທິປະໄຕ. ກອງທັບປະ

ຊາຊິນໃໝ່ ເຊິ່ງສະໜັບສະໜຸນ ມາກອສ ຢ່າງເປີດເຜີຍ ໂດຍຫວັງວ່າ ກະໂຕລະບອບ ອະນາທິປະໄຕອັນນີ້ເອງ ຈະຍູ້ດັນພວກເຂົາຂຶ້ນສູ່ອຳນາດ ຄື ກາຍເປັນຜູ້ກຳໄຊຊະນະ ທີ່ຍິ່ງໃຫຍ່ ຂະນະທີ່ພວກນັກປະຕິຮູບ ສັງຄົມສາຍກາງ ຈະຖືກເບິ່ງຄືວ່າ ເປັນຝ່າຍເສຍ ໄຊໄປ.

ທັງນາງ ອາຄວິໂນ ທັງ ມາກອສ ຕ່າງກໍວາງແຜນ ໄຂບັ້ນຊ່ວງເສັງກັນ ຂະນະ ທີ່ພາກສ່ວນນັກປະຕິຮູບໃນກອງທັບ ໄດ້ແຕກຄໍກັບລັດຖະບານ. ຮວມ ປົງເຊ ເອັນຣິລ (Juan Ponce Enrile) ກັບນາຍພົນທະຫານອັນດັບສອງ ຂອງກອງທັບ ຄື ນາຍພົນ ຟິແດລ ຣາມອສ (Fidel Ramos) ໂຕນໜີໄປເປັນກະບົດຢູ່ຖານທີ່ໝັ້ນແຫ່ງໜຶ່ງ. ຄາຣ໌ ດິນາລ ຊິນ ປະກາດໃຫ້ມວນຊົນລົງສູ່ຖະໜົນ ເຕົ້າໂຮມກັນ.

ກອງທັບບໍ່ໂຈມຕີ ຂະບວນປະທ້ວງ ແລະ ອາເມລິກາກໍສາມາດເກ້ຍກ່ອມໃຫ້ ມາກອສ ອອກຈາກປະເທດໄດ້ ແລ້ວມາໃນວັນທີ 25 ກຸມພາ ປີ 1986 ການໂອນ ສິ່ງອຳນາດ ແບບສະຫງົບຮຽບຮ້ອຍກໍເລີ່ມຕົ້ນຂຶ້ນ ດ້ວຍການອອກລະບຽບການເມືອງ ໃໝ່ ເພື່ອແກ້ໄຂບັນຫາຄ້າງຄາ, ໃນນັ້ນ ໂຮມທັງເລື່ອງຂາດໂພຊະນາການ, ການ ໄດ້ຄ່າຈ້າງຕ່ຳ ແລະການຫວ່າງງານ. ປະຊາຊົນຂັ້ນລຸ່ມ ປະມານ 20% ຂອງປະເທດ ມີລາຍຮັບເທົ່າກັບ 5.5% ຂອງລາຍໄດ້ມວນລວມຂອງຊາດ ໃນຂະນະທີ່ຊົນຊັ້ນສູງ ເຊິ່ງມີແຕ່ 2% ຂອງປະຊາກອນ ມີລາຍຮັບເທົ່າກັບ 53%. ປະຊາຊົນມີໜີ້ສິນຢູ່ 27,000 ຕື້ ໂດລາອາເມລິກາ, ມາດຕະຖານຄ່າຄອງຊີບ ຂອງຊາວຟີລິບປິນແຕ່ລະ ຄົນຕົກລົງ 5% ຕໍ່ປີ ໃນຍຸກປາຍໆ ຂອງລະບອບ ມາກອສ.

ນາງ ອາຄວິໂນ ໄຂປະຕູຄຸກ ໃຫ້ອະໄພໂທດ ແກ່ກອງທັບປະຊາຊົນແຫ່ງຊາດ ແລະ ພະຍາຍາມໄຂການເຈລະຈາເລື່ອງການເມືອງ ບໍ່ພຽງແຕ່ກັບຝ່າຍທີ່ແຕກແຍກ ອອກໄປເທົ່ານັ້ນ ແຕ່ກັບກອງທັບເອງ ກໍເຮັດ ໂດຍສະເພາະ ກັບພວກທີ່ໄດ້ຊື່ວ່າ "ນັກ ປະຕິຮູບນິຍົມ" ແລະ ພາກສ່ວນອື່ນໆຂອງສັງຄົມ ຮວມທັງຜູ້ຈົງຮັກພັກດີຕໍ່ ມາກອສ ນຳ. ການຕັດສິນໃຈ ໃນເລື່ອງການເມືອງອັນໄວທີ່ສຸດຂອງນາງ ແມ່ນເລື່ອງ ຄວາມຈຳ

ເປັນໃນການຈັດຕັ້ງລັດຖະບານ ທີ່ຈະກວມເອົາທັງບຸກຄົນສຳຄັນ ທີ່ຍັງຍຶດໝັ້ນຢູ່ນຳ ມາກອສ ໂດຍສະເພາະ ຜູ້ຈຳເປັນກວ່າໝູ່ ຄື ຣວນ ປົງແຊ ເອນຣິລ ກັບ ນາຍພົນ ຟີແດລ ຣາມອສ. ຄວາມໄຝ່ຝັນສ່ວນຕົວ ຂອງເອນຣິລ ແລະຄວາມວິຕົກກັງວົງອັນ ເລິກເຊິ່ງຂອງທະຫານ ກ່ຽວກັບນະໂຍບາຍສະໜາມໄມຕີ ແລະ ການປະນີປະນອມ ກັບພວກກວມມູນິດ ເຮັດໃຫ້ນາງຕົກເຂົ້າຢູ່ໃນສະຖານະການສັບສົນ. ສະຖຽລະພາບ ຂອງລັດຖະບານ ຖືກທ້າທາຍຈາກຝ່າຍຊ້າຍ ແລະຝ່າຍຂວາ. ຄວາມໄຝ່ຝັນສ່ວນຕົວ ຖືກມາສັ່ງຊາ ກັບບຸລິມະສິດຂອງຊາດ. ຄຳຖາມຂໍກຸນແຈ ກໍຄື: ສູນກາງສາມາດ ຍຶດອຳນາດໄວ້ໄດ້ບໍ່ ຈະມີການປະຕິວັດສັງຄົມບໍ່ ເພື່ອຈັດລຳດັບສຳຄັນຂອງບຸລິມະສິດ ແຫ່ງຊາດ ແລະເຮັດໃຫ້ສັງຄົມ ຄົງຕົວຕໍ່ໄປ ພໍພຽງແຕ່ ເພື່ອພິສູດຕົນເອງນຳ.

ໃນປີ 1974 ເບນິກໂຍ ອາຄວີໂນ ໄດ້ແຕ່ງກະວີບົດໜຶ່ງຊື່ວ່າ “ມາເຮຽ ໂຄຣາ ຊອນ” ໂດຍເລີ່ມຕົ້ນວ່າ “ເຈົ້າເປັນຄວາມຮັກ ເປັນນາງຟ້າ ຜູ້ທ້າວທັນອົດທົນ ໃຈດີ ຊື່ສັດ ແມ່ຍິງຜູ້ໄຮ້ເຊິ່ງຄວາມໄຫວຫວັ່ນທັງປວງ ບໍ່ຫວັ່ນກົວຕໍ່ຄວາມລຳບາກ ຫຼືພາລະ ແບກຫາບ ອັນໜັກໜ່ວງໃດໆ” ເຂົາຄົງບໍ່ຮູ້ວ່າ ຄຳບັນຍາຍເຖິງນາງທີ່ວ່າ “ເຈົ້າເປັນ ຮິ່ມໂພໄຊ ຂອງຜູ້ທຸກຍາກລຳບາກ ຜູ້ໄຮ້ຫວັງ ຜູ້ຢ້ານກົວ” ໄດ້ກາຍເປັນພາລະໜຶ່ງ ທີ່ນາງຕ້ອງແບກຫາບໄວ້ ໃນຖານະທີ່ນາງເປັນຜູ້ນຳພາປະເທດຊາດ ມຸ່ງໜ້າສູ່ ສະຕະ ວັດທີຊາວເອັດ.

40

ອາຊີຕາເວັນອອກສຽງໃຕ້ ທີ່ພອມປ່ຽນຮູບໂສມ

ນັບຕັ້ງແຕ່ສົງຄາມໂລກຄັ້ງທີ II ມາ ພາຍຫຼັງປົດປ່ອຍຈາກການເປັນ ອານານິຄົມ ການປ່ຽນແປງທາງດ້ານການເມືອງ ສ່ວນຫຼາຍ ໄດ້ເກີດຂຶ້ນ ແລະ ດຳ ເນີນໄປຢ່າງເຂົ້າແກ໊ບເຂົ້າເກັ່ງກັນດີ ກັບການປ່ຽນແປງທາງດ້ານສັງຄົມ ເສດຖະກິດ ແລະວັດທະນະທຳ. ສະພາບແວດລ້ອມສາກົນ ເຊິ່ງໃນນັ້ນ ຄວາມສຳພັນທາງການ ເມືອງ ແລະ ເສດຖະກິດ ທີ່ຊາວອາຊີຕາເວັນອອກສ່ຽງໃຕ້ ດຳເນີນມາ ພາຍຫຼັງປີ 1945 ໄດ້ຜ່ານຜ່າການຜັນປ່ຽນຫຼາຍຫລີບຫຼາຍຕ່າວໄດ້ ຢ່າງໜ້າອັດສະຈັນ. ໃນແວດ ວົງການເມືອງ ການຜັນປ່ຽນເຫຼົ່ານີ້ ມີຜົນກະທົບຕໍ່ຄວາມສຳພັນລະຫວ່າງລັດຕ່າງໆ ໃນອາຊີຕາເວັນອອກສ່ຽງໃຕ້ ແລະ ກັບເຈົ້າອານານິຄົມເກົ່າ ຂອງແຕ່ລະລັດເຫຼົ່ານັ້ນ, ຕໍ່ການຍອມຮັບ ຫຼື ການປະຕິເສດຄວາມຊ່ອຍເຫຼືອຈາກມະຫາອຳນາດ ແລະ ຕໍ່ ຄວາມສຳພັນລະຫວ່າງລັດ ໃນອາຊີຕາເວັນອອກສ່ຽງໃຕ້ນຳກັນເອງ ຕະຫຼອດຈົນເງື່ອນ ໄຂພາຍໃນສັງຄົມ ທີ່ແຕກຕ່າງຫຼາກຫຼາຍເຫຼົ່ານີ້.

ລະຫວ່າງປີ 1945 ແລະ 1960 ລັດຕ່າງໆໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ຕອບຮັບການຈາກໄປຂອງມະຫາອຳນາດ ດ້ວຍທ່າທີທີ່ແຕກຕ່າງກັນ. ການຕອບ ຮັບຢູ່ບາງປະເທດ ມີລັກສະນະຮຸນແຮງແດ່ ຕົວຢ່າງ ພະມ້າ ທີ່ໄດ້ປະຕິເສດການເຂົ້າ ຮ່ວມ ໃນເຄືອຈັກກະພົບອັງກິດມາຕັ້ງແຕ່ ປີ 1947 ເຖິງແມ່ນວ່າ ຈະຍັງຄົງຢູ່ໃນປະ ເທດທີ່ໃຊ້ເງິນສະກຸນ ປອນສະເຕີລິງ ຕໍ່ມາຢູ່ດົນເຕັບກໍຕາມ. ການຕອບຮັບອື່ນໆ ຖືກ

ໃສ່ສີ ຍ້ອນສົງຄາມຕໍ່ຕ້ານອານານິຄົມອັນຍືດເຍື້ອ ເພື່ອຂັບໄລ່ມະຫາອຳນາດເອີຣົບ ອອກໄປ. ຄວາມສຳພັນລະຫວ່າງອິນໂດເນເຊ ກັບ ເນເທີແລນ, ລະຫວ່າ ຫວຽດ ນາມ ກັບຝຣັ່ງ ເປັນອຸທາຫອນສອນໃຈອັນສຳຄັນ. ຢູ່ປະເທດອື່ນໆ ຮວມເຖິງ ມາລາຢູ ປະເທດລາວ ແລະ ກຳປູເຈ ຄວາມສຳພັນລະຫວ່າງລັດຖະບານ ຕໍ່ລັດຖະບານ ຍັງຄົງ ເປັນໄປໃນລັກສະນະມິດຕະພາບຕໍ່ກັນ ໃນບາງລະຍະ ພາຍຫຼັງການປົດປ່ອຍຈາກ ການເປັນອານານິຄົມ, ສ່ວນໜຶ່ງ ເປັນຍ້ອນການຊ່ອຍເຫຼືອຂອງອັງກິດ ກັບຝຣັ່ງ ຕໍ່ຜູ້ ປົກຄອງຮຸ່ນໃໝ່ ໃນການປະເຊີນໜ້າກັບການລຸກຮືຕໍ່ຕ້ານ. ຢູ່ ຟີລິບປິນ ຄວາມສຳພັນ ແບບອານານິຄົມ ກັບ ສະຫະລັດອາເມລິກາໄດ້ປັບປ່ຽນມາ ຢູ່ໃນລະດັບທາງການ ເປັນ ຕາໜ່າງຂອງສົນທິສັນຍາ ແລະ ພັນທະມິດທາງການທະຫານ.

ການທັກທັນທາງການເມືອງຂອງໂລກ ພາຍຫຼັງສົງຄາມໂລກຄັ້ງທີ II ບັງຄັບ ໃຫ້ ຊາດໃນອາຊີຕາເວັນອອກສ່ຽງໃຕ້ ຮັບເອົາຖານະເປັນກາງ ຫຼື ຫັນໄປເຂົ້າກັບຝ່າຍ ສະຫະລັດອາເມລິກາ ກັບປະເທດພັນທະມິດຂອງສະຫະລັດ ຫຼື ອີກສ່ວນໜຶ່ງ ກຳຫັນໄປ ເຂົ້າກັບສະຫະພາບສັງຄົມນິຍົມໂຊວຽດ ແລະ ປະເທດພັນທະມິດຂອງໂຊວຽດ ໃນນັ້ນ ຮວມທັງປະເທດຈີນ ພາຍຫຼັງປີ 1949 ນຳ. ໃນປີ 1945 ປະເທດໄທ ກັບ ຟີລິບປິນ ຕັດ ສິນໃຈເຂົ້າຮ່ວມໃນອົງການສົນທິສັນຍາປ້ອງກັນອາຊີຕາເວັນອອກສ່ຽງໃຕ້ ຫຼື ຊີອາໂຕ (SEATO) ເຊິ່ງອາເມລິກາ ໃຊ້ເປັນເຄື່ອງມືສຳລັບຕອບໂຕ້ ຕໍ່ກັບການປະລາໄຊຂອງ ຝຣັ່ງ ໃນອິນໂດຈີນ ແລະ ອົງການນີ້ ໄດ້ຢູ່ລອດມາຮອດ ປີ 1976. ມີແຕ່ປະເທດໃນ ອາຊີຕາ ເວັນອອກສ່ຽງໃຕ້ເທົ່ານັ້ນ ທີ່ເຂົ້າຮ່ວມອົງການນີ້ ສ່ວນ ສາທາລະນະລັດ ປະຊາທິປະໄຕຫວຽດນາມ ເລືອກຢູ່ໃນສາຍຈີນ ແລະ ສະຫະພາບໂຊວຽດ.

ສ່ວນຫຼວງຫຼາຍຂອງປະເທດໃນອາຊີຕາເວັນອອກສ່ຽງໃຕ້ ຮວມທັງປະເທດທີ່ ຫຼຸດພົ້ນ ຈາກການເປັນອານານິຄົມຢູ່ບ່ອນອື່ນໆນຳ ຕ່າງກໍຕອບຮັບການປ່ຽນແປງທາງ ການເມືອງສາກົນ ໂດຍເລືອກ "ບໍ່ເຂົ້າຂ້າງຝ່າຍໃດ" ໃນສົງຄາມເຢັນ. ນະໂຍບາຍນີ້ ໄດ້ກາຍເປັນນະໂຍບາຍສາກົນ ທີ່ສະຖາປະນາຂຶ້ນ ພາຍຫຼັງກອງປະຊຸມທີ່ ບັນດຸງ ປີ 1955 ຢູ່ ອິນໂດເນເຊ ໂດຍມີຜູ້ນຳ ປະເທດອາຊີ ຫຼາຍປະເທດ ໃນນັ້ນຮວມທັງ

ຊຸກາຣ໌ໂນ ສີຫະນຸ ອູນຸ ເນຫຣູ ແລະ ຈູແອນໄຫລ. ພະມ້າ, ອິນໂດເນເຊ ແລະ ກຳປູເຈ ໄດ້ດຳເນີນນະໂຍບາຍເປັນກາງ ມາຢ່າງເຂັ້ມແຂງ ຈົນລັດຖະມຸນຕີຕ່າງປະເທດຂອງ ອາເມລິກາ ເຫັນວ່າເປັນເລື່ອງ "ໄຮ້ສິນທຳ" ມາເກືອບຕະຫຼອດເວລາ. ຢູ່ປະເທດລາວ ແລະ ຫວຽດນາມ ຜູ້ຄົນທັງຊາຍແລະຍິງ ຜູ້ທີ່ພໍໃຈນຳການບໍ່ເຂົ້າຂ້າງ ຝ່າຍໃດຫຼາຍ ກວ່າ ການເປັນສັດຕູກັນລະຫວ່າງນາໆຊາດ ທີ່ເຂົາເຈົ້າຮູ້ຈັກແຕ່ໜ້ອຍດຽວນັ້ນ ກໍຖືກ ດຶງເຂົ້າ ສູ່ຄວາມຂັດແຍ່ງ ອັນຮ້າຍແຮງຂອງບັນດາລັດຖະບານ ທັງທີ່ຢູ່ພາຍໃນ ແລະ ພາຍນອກ ອາຊີຕາເວັນອອກສຽງໃຕ້ ທີ່ມີທັດສະນະໃນເລື່ອງກິດຈະການສາກົນ ແບບ ຄຳພີຕາຍຕົວ.

ການປ່ຽນແປງສຳຄັນອີກຢ່າງໜຶ່ງ ຫຼັງຈາກພົ້ນຈາກການເປັນອານານິຄົມແລ້ວ ກໍແມ່ນການສະຖາປະນາ ຄວາມສຳພັນລະຫວ່າງປະເທດ ພາຍໃນອາຊີຕາເວັນອອກ ສຽງໃຕ້. ໃນບາງກໍລະນີ ການໄດ້ເອກະລາດມານັ້ນ ໄດ້ໄຂເສັ້ນທາງແຫ່ງການເປັນ ສັດຕູ ແລະ ຂໍ້ຂັດແຍ່ງທີ່ມີມາແຕ່ກ່ອນຍຸກອານານິຄົມ. ສ່ວນຫຼາຍແລ້ວ ຄວາມຂັດ ແຍ່ງເຫຼົ່ານັ້ນ ກ່ຽວກັບເສັ້ນຊາຍແດນ ທີ່ຊາດມະຫາອຳນາດຍຸກອານານິຄົມ ກຳນົດໃຫ້ ແກ່ປະເທດອາຊີຕາເວັນອອກສຽງໃຕ້. ຟີລິບປິນ ກໍຄ້າຍຄືກັນ ອ້າງສິດເໜືອດິນແດນ ຊາບາຫ໌, ກຳປູເຈ ອ້າງສິດເໜືອດິນແດນບາງສ່ວນຂອງ ຫວຽດນາມ ແລະ ໄທ ກໍທວງເອົາດິນແດນ ບາງສ່ວນໃນພາກຕາເວັນຕົກສຽງເໜືອ ກຳປູເຈ, ນອກຈາກນີ້ ຍັງມີສຽງສະທ້ອນຈາກ ຊາວມາເລ ຜູ້ເກີດຄວາມຮູ້ສຶກຫວງແຫນດິນແດນ ໃນພາກໃຕ້ ໃນປະເທດໄທ. ການປະເຊີນໜ້າທາງການທະຫານ ທີ່ລະເບີດຂຶ້ນ ລະຫວ່າງ ມາເລເຊ ກັບ ອິນໂດເນເຊ ໃນຊຸມຕົ້ນປີ 1960 ຫຼື ເອີ້ນວ່າ ກົງຟຼົງຕາຊີ (konfrontasi) ສ່ວນໜຶ່ງ ກໍແມ່ນ ມາຈາກກະໂຕເລື່ອງຊາຍແດນນັ້ນເອງ.

ຄວາມສຳພັນຂອງຫວຽດນາມກັບໄທ ຕໍ່ປະເທດລາວ ໃນຕົ້ນຊຸມປີ 1950ແລະ ຊຸມປີ1960 ກໍຖືກແຕ່ງແຕ້ມໄປໃນທິດທາງດຽວ ກັບອັນທີ່ເປັນໃນລະຫວ່າງສະຕະວັດ ທີ19 ທີ່ເຈົ້າປົກຄອງຂອງ ຫວຽດນາມ ກັບໄທ ປະພຶດຕໍ່ກັນໃນພາກພື້ນນີ້, ອີກຄັ້ງໜຶ່ງ ທີ່ລັດກັນຊົນ (ຢູ່ກາງ) ໄດ້ກາຍເປັນສະໜາມຮົບໄປ ຄວາມພະຍາຍາມຂອງຝ່າຍ

ທ່ວງດນາມທີ່ຈະເຮັດໃຫ້ຊາຍແດນ ດ້ານຕາເວັນຕົກ ກັບມາເປັນ ຄືກັບໃນສະຕະວັດທີ 19 ເລີ່ມດຳເນີນການອີກດ້ວຍບາງວິທີການ ໃນຂອບເຂດທີ່ກວ້າງໃຫຍ່ກວ່າອີກ. ຄວາມເປັນປຶກແຜ່ນໝັ້ນໜຽວຂອງຈີນ ພາຍໃຕ້ລະບອບກອມມູນິດ ມາຕັ້ງແຕ່ປີ 1949 ນັ້ນ ກໍ ໄດ້ຢັ້ງຢືນອອກມາຢ່າງເປັນທາງການວ່າ ຈີນ ມີຄວາມສົນໃຈຕໍ່ອາຊີຕາເວັນອອກສຽງ ໃຕ້ ບໍ່ພຽງແຕ່ໃນບໍລິເວນຊາຍແດນຂອງຕົນ ໂດຍສະເພາະລະຫວ່າງ ລາວ ກັບ ພະມ້າ ເທົ່ານັ້ນ ແຕ່ຍັງໄດ້ຂະຫຍາຍອອກໄປໄກກວ່ານັ້ນ ພິເສດແລ້ວ ແມ່ນກັບບັນດາຊາດ ທີ່ບໍ່ເຂົ້າຝ່າຍໃດ ແລະ ໃນບັນດາຊົນເຜົ່າຂອງຈີນ ທີ່ຕັ້ງຖິ່ນຖານຢູ່ໃນເຂດນັ້ນ ມາຫຼາຍ ເສັ່ນຄົນແລ້ວ.

ໃນຊຸມປີ 1950 ແລະ 1960 ການເຂົ້າສູ່ໂລກທີ່ກວ້າງໃຫຍ່ຂອງ ອາຊີຕາເວັນ ອອກສຽງໃຕ້ ມີຜົນໃຫ້ການແຊກແຊງຮຸກຮານ ຂອງຕ່າງປະເທດ ຢູ່ໃນອາຊີຕາເວັນ ອອກສຽງໃຕ້ ຕິດຕາມເຂົ້າໄປນຳ. ໃນຂັ້ນຕອນນີ້ ການແຊກແຊງໃນ ແບບນີ້ຕົ້ນຕໍແລ້ວ ມັກຈະເຂົ້າມາ ໃນຮູບການຊ່ວຍເຫຼືອທາງການທະຫານ ແລະ ເສດຖະກິດ ໃຫ້ແກ່ ພັກການເມືອງ ທີ່ມະຫາອຳນາດພາຍນອກໃດໜຶ່ງພໍໃຈ. ຊາວອາຊີຕາເວັນອອກສຽງໃຕ້ ຈຳນວນຫຼາຍ ເບິ່ງແລະເຂົ້າໃຈເຫດການນີ້ວ່າ ເປັນວິທີທາງໜຶ່ງ ຂອງການຄວບຄຸມອຳ ນາດ ໃນຮູບແບບໜຶ່ງ ຂອງລັດທິອານານິຄົມໃໝ່, ແນ່ນອນວ່າ ແຜນງານໃຫຍ່ກວ່າໝູ່ ແມ່ນຂອງ ອາເມລິກາ ແລະມັນກໍນອນຢູ່ໃນຂອບເຂດເລື່ອງການເມືອງ ແລະເລື່ອງ ຍຸດທະສາດ ທີ່ເບິ່ງເປັນຄືການຊ່ວຍເຫຼືອອັນແທ້ຈິງ. ໃນທ່ວພາກພື້ນ ສະຫະລັດ ອາເມລິກາ ກັບສະຫະພາບໂຊວຽດ ແລະຈີນ ຕ່າງກໍຊ່ວງເສັງກັນຍາດແຍ່ງເອົາບັນດາ ລັດຖະບານເປົ້າໝາຍໄວ້ເປັນຝ່າຍຂອງຕົນ. ມາເຖິງປາຍຊຸມປີ 1950 ປະເທດລາວ ໄດ້ຮັບການຊ່ວຍເຫຼືອຫຼາຍຂຶ້ນ ຕົກປະມານ 1,500 ໂດລາ/ຄົນ ເຊິ່ງເປັນຈຳນວນ ຫຼາຍກວ່າຢູ່ປະເທດອື່ນໆໃນໂລກເວລານັ້ນ ເພາະລາຍໄດ້ຕໍ່ຫົວຂອງຄົນລາເວລນັ້ນ ມີ ພຽງ 800 ໂດລາຕໍ່ປີ. ຂະນະດຽວກັນ ພະມ້າ ອິນໂດເນເຊຍ ແລະ ກຳປູເຈຍ ກໍ ມີຄວາມສາມາດສະແດງຕົວ ເປັນມະຫາອຳນາດໃສ່ກັນແລະກັນ ໂດຍຮັບເອົາການ ຊ່ວຍເຫຼືອຈາກທຸກທິດທຸກທາງ ເອົາແຕ່ມັນຈະມາ ທະແນມວ່າບໍ່ມີຂໍ້ຜູກມັດທີ່ເຫັນ ແຈ້ງເກີນໄປ. ການເຂົ້າມາໂດຍກົງຂອງກອງທະຫານອາເມລິກາ ຫຼາຍກວ່າເຄິ່ງລ້ານ

ໃນສະໄໝສົງຄາມຫວຽດນາມ ເມື່ອຊຸມປີ 1960 ໄດ້ນຳເອົາມິຕິໃໝ່ ມາສູ່ໂຄງສ້າງ ຂອງການເຂົ້າມາແຊກແຊງ ໂດຍອະພິມະຫາອຳນາດ ໃນພາກພື້ນນີ້.

ສົງຄາມໃນຫວຽດນາມ ແລະຄວາມປະລາໄຊ ຂອງສົນທິສັນຍາປ້ອງກັນອາຊີ ຕາເວັນອອກສຽງໃຕ້ ຫຼື ຊີອາໂຕ (SEATO) ເພື່ອຕອບໂຕ້ກັບສົງຄາມນີ້ ຕາມທີ່ ສະຫະລັດອາເມລິກາປາຖະໜາ ໄດ້ຊັກຈູງ ລັດຖະບານວໍຊິງຕັນ ໃຫ້ສົ່ງເສີມປະເທດ ຕ່າງໆໃນອາຊີຕາເວັນອອກສຽງໃຕ້ ຈັດຕັ້ງສະມາຄົມປະຊາຊາດອາຊີຕາເວັນອອກສຽງ ໃຕ້ ຫຼື ອາຊຽນ (Association of Southeast Asian Nation - ASEAN) ຂຶ້ນໃນປີ 1967. ປະເທດສະມາຊິກເວລານັ້ນມີ ປະເທດໄທ ສິງກະໂປ ມາເລເຊຍ ຟີລິບປິນ ອິນໂດເນເຊຍ ແລະ (ແຕ່ປີ 1985 ມາ) ບຣູໄນ. ໂດຍທົ່ວໄປແລ້ວ ລັດ ສະມາຊິກອາຊຽນ ມັກເຫັນດີ ຮັບເອົາການແຊກແຊງ ທາງການເມືອງ ແລະ ເສດຖະ ກິດ ຈາກປະເທດຕາເວັນຕົກ. ພະນ້າເລືອກເອົາການບໍ່ເຂົ້າຮ່ວມໃນສະມາຄົມ ແລະ ໃນເວລາດຽວກັນ ກໍຖອນໂຕອອກຈາກ ຂະບວນການບໍ່ຮ່ວມກຸ່ມ (Non-Aligned Movement - NAM) ຍ້ອນເຫດຜົນວ່າ ໃນຕົວຈິງ ສະມາຊິກຂອງຂະບວນການນີ້ ມັກບໍ່ມັກ ກໍເຂົ້າທາງຝ່າຍໃດຝ່າຍໜຶ່ງຢູ່ແລ້ວ ໃນໂລກຂອງການເມືອງ.

ສາທາລະນະລັດ ສັງຄົມນິຍົມຫວຽດນາມ ເຊິ່ງບໍ່ເຂົ້າຮ່ວມໃນສະມາຄົມອາ ຊຽນ ແລະ ບໍ່ສາມາດຮັບເອົາການຊ່ວຍເຫຼືອຈາກສະຫະລັດອາເມລິກາ ແລະ ຈາກ ກອງທຶນສາກົນນັ້ນ ໄດ້ເລືອກເຂົ້າໄປຜູກພັນ ກັບສະຫະພາບໂຊວຽດ ໃນປີ 1978 ເຊິ່ງໄດ້ພາເຂົ້າເຖິງ ສະພາຊ່ວຍເຫຼືອທາງເສດຖະກິດເຊິ່ງກັນແລະກັນ (Council for Mutual Economic Assistance) ໂດຍມີສະມາຊິກ ຄື ສະຫະພາບໂຊວຽດ ແລະ ລັດອື່ນໆໃນເອີຣົບຕາເວັນອອກ ແລະ ຄິວບາ ກັບ ມົງໂກເລຍ. ນັບແຕ່ປີ 1979 ມາ ປະເທດຈີນໄດ້ປະຕິເສດ ໃຫ້ການຊ່ວຍເຫຼືອທາງດ້ານເສດຖະກິດ ແກ່ຫວຽດນາມ.

ດັ່ງນັ້ນ ໃນເງື່ອນໄຂແວດລ້ອມການເມືອງສາກົນ ອັນສະຫຼັບຊັບຊ້ອນຢ່າງນັ້ນ ປະເທດຕ່າງໆໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໃນລະຍະ 40 ປີ ຫຼັງມານີ້ ຈຶ່ງ

ພັດທະນາໄປຕາມສະຕິສຳນຶກຂອງຕົນເອງ ຕາມສະພາບຕົວຈິງ, ກ້າວອອກໄປຫາ ມະຫາອຳນາດທີ່ຍິ່ງໃຫຍ່ກວ່າ ຍົກເວັ້ນ ພະມ້າ, ນອກນັ້ນ ມັກອະນຸຍາດໃຫ້ມະຫາ ອຳນາດທີ່ໃຫຍ່ກວ່າ ເຂົ້າມາມີອິດທິພົນ ຕໍ່ການເຂົ້າເປັນພັນທະມິດກັບຊາດຕ່າງໆ ຂອງຕົນ. ໃນທຳນອງດຽວກັນ ໃນລະຍະຊຸມປີເຫຼົ່ານີ້ ກໍໄດ້ມີການ ປ່ຽນແປງຂັ້ນພື້ນຖານ ໃນຄວາມສຳພັນທາງເສດຖະກິດ ຂອງພາກພື້ນນີ້ ກັບໂລກພາຍນອກ. ລັດຖະບານ ຂອງປະເທດເຫຼົ່ານັ້ນ ຈຳຕ້ອງສະແຫວງຫາຕະຫຼາດຢູ່ບ່ອນອື່ນ. ອຳນາດທາງເສດຖະ ກິດຂອງສະຫະລັດອາເມລິກາ ພາຍຫຼັງຍຸກສົງຄາມ ເອື້ອອຳນວຍໃຫ້ປະເທດນີ້ເຂົ້າມາ ແທນບ່ອນເອີຣົບ ໃນຖານະເປັນຄູ່ຮ່ວມງານທາງເສດຖະກິດ ຂອງຫຼາຍໆປະເທດ ເຊິ່ງ ໃນອາຊີຕາເວັນອອກສຽງໃຕ້ ເບິ່ງໃນແງ່ຂອງການຄ້າການ, ການລົງທຶນ ແລະການ ຊ່ວຍເຫຼືອແລ້ວ ກໍມີລາຄາແພງເທົ່າໆກັນ ກັບການຮັກສາສາຍສຳພັນພິເສດ ກັບ ປະເທດຟີລິບປິນ.

ພາຍຫຼັງຊຸມປີ 1970 ມາ ປະເທດຍີ່ປຸ່ນໄດ້ກາຍມາເປັນຄູ່ຮ່ວມງານທາງ ເສດຖະກິດ ຂອງຫຼາຍໆປະເທດໃນອາຊີຕາເວັນອອກສຽງໃຕ້. ຮອດໃກ້ໆຈະໝົດປີ 1982, ມູນຄ່າການລົງທຶນຕ່າງປະເທດທັງໝົດ ຂອງຍີ່ປຸ່ນ ປະມານ 20 % (1/5) ໄຫຼມາສູ່ ປະເທດສະມາຊິກອາຊຽນ; ປະເທດຍີ່ປຸ່ນນຳເຂົ້າສິນຄ້າປະເພດ ແຮ່ທາດ ແລະ ໄມ້ແປຮູບຈຳນວນມະຫາສານ ຕະຫຼອດທັງນ້ຳມັນ ແລະ ແກັສທຳມະຊາດ ຈາກອາຊີຕາເວັນອອກສຽງໃຕ້ ແລະ ເກືອບເຄິ່ງໜຶ່ງ ຂອງການຄ້າໃນທົ່ວໂລກ ຂອງ ຍີ່ປຸ່ນ ແມ່ນນອນຢູ່ໃນພາກພື້ນນີ້. ໃນເວລາດຽວກັນ ການຂຶ້ນກັບຍີ່ປຸ່ນ ຂອງເສດຖະກິດ ປະເທດໃນອາຊຽນ ກໍເປັນໜ້າອັດສະຈັນເທົ່າໆກັນ: ໃນຊຸມປີ 1980 ການຜະລິດນ້ຳ ມັນຫຼາຍກວ່າເຄິ່ງ ກັບການຜະລິດແຮ່ທອງແດງ ຂອງ ຟີລິບປິນ ກາຍກວ່າສອງສ່ວນ ສາມ ຖືກສົ່ງອອກໄປ ປະເທດຍີ່ປຸ່ນ.

ຍີ່ປຸ່ນ ອຽງໄປອຽງມາ ລະຫວ່າງ ທັດສະນະທາງເສດຖະກິດຂອງພາກພື້ນ ທີ່ ເຫັນວ່າ ພາກພື້ນນີ້ແມ່ນແຫຼ່ງວັດຖຸດິບ ແລະເປັນຕະຫຼາດສຳລັບສິນຄ້າຂອງຍີ່ປຸ່ນ ກັບ ຄວາມສຳນຶກທາງສິລະທຳ ທີ່ວ່າ ອາຊີຕາເວັນອອກສຽງໃຕ້ ເປັນບ່ອນທີ່ຍີ່ປຸ່ນ ມີຄວາມ

ຮັບຜິດຊອບນຳເປັນພິເສດ ເພື່ອແກ້ໄຂຮອຍຮ້າວ ລະຫວ່າງປະເທດ "ພັດທະນາແລ້ວ" ກັບປະເທດ "ກຳລັງພັດທະນາ". ຄວາມເຫັນກ່ຽວກັບອາຊີຕາເວັນອອກສຽງໃຕ້ ຂອງ ຍີ່ປຸ່ນ ຍັງເປັນເຄິ່ງໆກາງໆຢູ່. ໃນລະຫວ່າງປີ 1970 ແລະ ປີ 1975 ນັກສຶກສາ ໃນປະເທດຕ່າງໆ ໄດ້ເດີນຂະບວນຕໍ່ຕ້ານຍີ່ປຸ່ນ ແລະ ໃນຊຸມປີ 1980 ຜູ້ນຳຂອງ ອິນໂດເນເຊ ກັບ ຟີລິບປິນ ໄດ້ຈີ່ມວ່າ ກ່ຽວກັບແຮງບີບດັນຂອງອາເມລິກາ ຕໍ່ຍີ່ປຸ່ນ ເພື່ອຂະຫຍາຍກຳລັງປ້ອງກັນທາງການທະຫານ ກັບອຳນາດທາງຍຸດທະສາດຂອງຕົນ ໃນພາກພື້ນນີ້. ເຖິງຢ່າງໃດກໍດີ ຢູ່ມາເລເຊ ນາຍົກລັດຖະມຸນຕີ ມະຫາເທ ຣ໌ ໄດ້ເປີດ ບັ້ນໂຄສະນາທີ່ເອີ້ນກັນວ່າ "ເບິ່ງໄປທາງຕາເວັນອອກ" ແລະ ສະແດງຄວາມຊື່ນຊົມ ລະບົບເສດຖະກິດຍີ່ປຸ່ນ ເຊິ່ງໃນນັ້ນ ລັດຖະບານມາເລເຊເອງ ໄດ້ຊີ້ວ່າເປັນ "ອ້າຍ ລ້ຽງ" ຂອງກະໂຕລັດທິທຶນນິຍົມແຫ່ງຊາດ ຫຼາຍກວ່າ ການເປັນແຕ່ພຽງ "ກຳມະການ (Referee)" ຄືເອີ້ນກັນຢູ່ໃນປະເທດທີ່ເວົ້າພາສາອັງກິດ, ຫຼືວ່າເປັນ "ຜູ້ຈັດການ" ຄືມີ ຢູ່ໃນເຂດເສດຖະກິດກ້າວຂຶ້ນ ສັງຄົມນິຍົມ ແລະ ກອມມູນິດນັ້ນ. ຄວາມສຳພັນແບບ ຂຶ້ນຕໍ່ກັນ ຂອງບັນດາປະເທດໃນອາຊີຕາເວັນອອກ ກັບຍີ່ປຸ່ນ ຫຼືກັບ ສະຫະລັດອາເມ ລິກາ ເຈັບແສບຂຶ້ນຕື່ມ ຍ້ອນການຄອບງຳ ຂອງສະຖາບັນເສດຖະກິດສາກົນຂອງ ປະເທດທັງສອງນີ້ ຄື ທະນະຄານໂລກ (World Bank) ກັບ ທະນະຄານພັດທະນາ ອາຊີ (Asian Development Bank - ADB) ເຊິ່ງຕັ້ງຂຶ້ນມາ ເພື່ອໃຫ້ເງິນກູ້ຢືມ ແລະ ອຳນວຍຄວາມສະດວກໃຫ້ແກ່ການໂອນສິ່ງ ເຕັກໂນໂລຊີ ໄປສູ່ພາກພື້ນນີ້.

ເປົ້າໝາຍອັນດຽວ ທີ່ຊົນຊັ້ນສູງມີຄືກັນ ພາຍຫຼັງປົດປ່ອຍອອກຈາກອານານິ ຄົມ ກໍແມ່ນການຫັນປ່ຽນເປັນສັງຄົມອຸດສາຫະກຳໂດຍໄວ. ການທີ່ເສດຖະກິດ ຂອງ ອາຊີຕາເວັນອອກສຽງໃຕ້ ຕ້ອງຂຶ້ນຕໍ່ການສົ່ງອອກສິນຄ້າອັນພື້ນຖານ ເຊັ່ນ ເຂົ້າ, ແຮ່ ຊົນ ແລະ ຢາງພາຣາ ເພື່ອແລກປ່ຽນກັບ ສິນຄ້າສຳເລັດຮູບອຸດສະຫະກຳ ເຊັ່ນ ຢາຖູແຂ້ວ ລິດໂອໂຕ ແລະ ແຜ່ນແພນັ້ນ ໄດ້ນຳເອົາ ລັດຖະບານທັງໝົດ ໃນພາກ ພື້ນນີ້, ຍົກເວັ້ນປະເທດລາວ, ໃຫ້ຂຶ້ນແຜນດຳເນີນການຫັນປ່ຽນເປັນ ອຸດສະຫະກຳ ແບບເກີນຈິງ ໃນຊຸມປີ 1950 ແລະ ຕົ້ນໆຊຸມປີ 1960. ດ້ວຍຄວາມຫວັງວ່າ ຈະ ສາມາດຢຸດການນຳເຂົ້າເຄື່ອງຂອງປະເພດ ເຈ້ັ ເສື້ອຜ້າ ແລະ ອື່ນໆ, ທຳອິດ

ແຜນການເຫຼົ່ານີ້ ໄດ້ສຸມໃສ່ການພັດທະນາອຸດສາຫະກຳ ການຜະລິດທົດແທນເຄື່ອງ ນຳເຂົ້າ. ໃນຮູບການຄ້າຍຄືກັນ ການເງິນເພື່ອການພັດທະນານີ້ ຊ້ຳຕ້ອງໄດ້ມາຈາກ ລາຍຮັບຕົ້ນຕໍ ຂອງການສົ່ງອອກວັດຖຸດິບພື້ນຖານ. ເບື້ອງຫຼັງອຸປະສັກ ອັນແມ່ນການ ກຳນົດລາຄາສູງ ທີ່ອອກແບບໄວ້ ເພື່ອປົກປ້ອງອຸດສະຫະກຳ ທີ່ກຳລັງຈ່ເກີດໃໝ່ ແລະ ດ້ວຍການໃຫ້ຄ່າຈ້າງແຮງງານຕ່ຳ ປະເທດຕ່າງໆໃນພາກພື້ນນີ້ ກໍໄດ້ບັນລຸມາດຕະ ຖານຂອງຄວາມສຳເລັດ ທັງອຸດສະຫະກຳ ຂອງພາກເອກະຊົນ ແລະທີ່ລັດເປັນເຈົ້າ ຂອງ ໄດ້ພັດທະນາຂຶ້ນ ດ້ວຍການຮ່ວມມືກັບບໍລິສັດຕ່າງປະເທດ ເປັນສ່ວນຫຼາຍ. ຢ່າງໃດກໍດີ ໃນປາຍຊຸມປີ 1960 ແລະ ຊຸມປີ 1970 ເພື່ອຕອບໂຕ້ຄວາມກົດດັນ ຈາກຜົນກຳໄລ ຢູ່ສະຫະລັດ ອາເມລິກາ ແລະ ໃນຍີ່ປຸ່ນ ແລະຄວາມປາຖະໜາທີ່ຈະ ພັດທະນາຂະແໜງການອຸດສະຫະກຳ ໃຫ້ວ່ອງໄວຂຶ້ນກວ່ານີ້ ເຊິ່ງອາດດູດຮັບເອົາຄົນ ງານຜູ້ຫວ່າງງານ ກັບຜູ້ຮັບຄ່າຈ້າງຕ່ຳໄດ້ຫຼາຍຂຶ້ນ ການນຳເຂົ້າທົດແທນ ໄດ້ໄຂປ່ອງ ທາງໃຫ້ແກ່ ຍຸດທະສາດການຜະລິດອຸດສາຫະກຳເພື່ອສົ່ງອອກ ຢູ່ໃນບັນດາປະເທດ ອາຊຽນ. ໄດ້ມີການນຳເອົາທຶນຮອນຈາກຕ່າງປະເທດ ເຂົ້າມາໃນປະເທດ ເພື່ອສ້າງ ໂຮງງານ ເພື່ອຜະລິດສິນຄ້າສຳເລັດຮູບສົ່ງອອກໂດຍສະເພາະ. ໃນຂັ້ນຕົ້ນ ປະເທດ ເຫຼົ່ານັ້ນໄດ້ພັດທະນາໂຮງງານຕ່ຳແຜ່ນ ແລະ ໂຮງງານຜະລິດເກີບ ກ່ອນຈະຫັນມາ ຫາການຜະລິດໜ່ວຍວິທະຍຸ, ເຄື່ອງໂທລະພາບ ສານເຄມີ ແລະ ຊິລິຄອນຊິບ. ສິງກະໂປ ເປັນຜູ່ອອກໜ້າພາທາງໃນເລື່ອງນີ້ ໃນຂະນະທີ່ລາຍໄດ້ຂອງປະເທດ ໃນ ຖານະເປັນຄັງສາງສິນຄ້າ ແລະເປັນຖານທັບເຮືອຂອງອັງກິດ ໄດ້ຕົກຕ່ຳລົງ. ມາເຖິງ ຊຸມປີ 1970 ປະເທດອາຊຽນອື່ນໆ ກໍຮັບເອົາຍຸດທະສາດ ແບບດຽວກັນນີ້ມາໃຊ້ ແລ້ວຜະລິດຕະພັນຜ້າແພ ເກີບ ເຄື່ອງນຸ່ງຫົ່ມ ຈາກອິນໂດເນເຊຍ ຟິລິບປິນ ມາເລເຊຍ ແລະ ໄທ ກໍກາຍເປັນສິນຄ້າວາງຂາຍເດຸ່ລະດາດ ຢູ່ໃນຫ້າງສັບພະສິນຄ້າປະເທດ ຕາເວັນຕົກ. ຢ່າງໃດກໍດີ ການລົງທຶນຈາກຕ່າງປະເທດຈຳນວນຫຼາຍ ໃນເສດຖະກິດ ອາຊຽນ ເຊັ່ນການລົງທຶນຂອງຍີ່ປຸ່ນ ຕາມທີ່ໄດ້ເຫັນຜ່ານມາ ກໍຍັງຄົງສຸມໃສ່ແຕ່ການ ຜະລິດສິນຄ້າສຳເລັດຮູບ ແລະ ການແປຮູບວັດຖຸດິບ ເຊັ່ນ ໄມ້ທ່ອນ ຢາງພາຣາ ແຮ່ຊິນ ນ້ຳມັນກ໊າດ ແລະ ແກ໊ສທຳມະຊາດ. ການທີ່ລາຄາເຂົ້າ ນ້ຳມັນພືດ ໄມ້ ສັກ ໝາກພ້າວແຫ້ງ ແລະ ຜົນຜະລິດກະສິກຳອື່ນໆ ໃນທົ່ວໂລກ ຂຶ້ນໆລົງໆ ໄດ້

ເຮັດໃຫ້ປະຊາຊາດໃນອາຊີຕາເວັນອອກສ່ຽງໃຕ້ ຫຼາຍລ້ານຄົນ ຕົກເປັນເຫຍື່ອຂອງ ໂລກພາຍນອກ ຫຼາຍເທົ່າໆກັບທີ່ ພວກເຂົາເຄີຍເປັນມາ ໃນຍຸກອານານິຄົມຮຸ່ງເຮືອງ ສຸດຂີດ ນັ້ນເອງ.

ການເຕີບໃຫຍ່ທາງເສດຖະກິດຂອງປະເທດອາຊຽນ ໃນລະຫວ່າງຊຸມປີ 1970 ແລະ ຊຸມປີ 1980 ຂຶ້ນກັບຄວາມສາມາດຂອງປະເທດຕົນເອງ ໃນເລື່ອງການຈັດການ ໃຫ້ມີບັນຍາກາດທຸ່ນທ່ຽງ ເພື່ອການມາລົງທຶນ; ທຶນຮອນຂອງຕ່າງປະເທດຊ່ວງເສັງກັນ ຫຼາຍ ຢ່າງໃດກໍຕາມ ບໍ່ວ່າໃຜ ກໍສາມາດໄປລົງທຶນ ບ່ອ່ຍູ່ໃສກໍໄດ້ໃນໂລກນີ້. ຄວາມ ຕ້ອງການດ້ານຄວາມໝັ້ນຄົງແບບນີ້ ໄດ້ສົ່ງເສີມໃຫ້ຊົນຊັ້ນນຳຂອງວົງການເມືອງ ໃນ ປະເທດອາຊຽນທັ້ງຫຼາຍ ພະຍາຍາມຮັກສາ ອັດຕາຄ່າຈ້າງໃຫ້ຕ່ຳ ແລະຮັກສາຄວາມ ສະຫງົບທາງການເມືອງໄວ້, ຄວາມຈິງກໍແມ່ນ ການຮັກສາຖານະຂອງຕົນໄວ້ນັ້ນເອງ ບ່ວ່າກໍລະນີໃດ, ທັງນີ້ ເພື່ອບ່ໃຫ້ນັກລົງທຶນຕ່າງປະເທດກົວຢ້ານ ແລະ ເປີດໜີໄປ. ນະໂຍບາຍແບບນີ້ ຖືກໂຈມຕີວິຈານຢ່າງໜັກ ວ່າເປັນການກີດກັນສິດທິຂອງສະຫະ ພາບແຮງງານ ແລະ ນຳໄປສູ່ການຂູດຮີດແຮງງານຢູ່ໃນພາກພື້ນນີ້. ດັ່ງທີ່ໄດ້ເຫັນຢູ່ ໂດຍສະເພາະໃນປະເທດມາເລເຊ ໄທ ແລະ ສິງກະໂປ ການນຳເອົາແມ່ຍິງຊາວ ນາຫຼາຍພັນຄົນ ເຂົ້າມາເຮັດວຽກຢູ່ໃນໂຮງຈັກໂຮງງານ ແລະແມ່ນແຕ່ການໃຊ້ແຮງ ງານເດັກ ກໍໄດ້ກາຍເປັນເລື່ອງໜ້າຫ່ວງໃຍ ສຳລັບຝ່າຍຄ້ານ ຢູ່ໃນຫຼາຍໆປະເທດ ຂອງອາຊຽນ.

ເຖິງວ່າ ຜົນສະທ້ອນໃສ່ພາກສ່ວນພິເສດຂອງສັງຄົມໃດໜຶ່ງ ຈະເປັນຢ່າງໃດ ກໍຕາມ ການພັດທະນາເສດຖະກິດ ຂອງປະເທດໃນອາຊີຕາເວັນອອກສ່ຽງໃຕ້ ສ່ວນຫຼາຍກໍເປັນໜ້າປະທັບໃຈ. ໃນຖານະເປັນຕະຫຼາດແຫ່ງໜຶ່ງຂອງໂລກ ພາກພື້ນນີ້ ໄດ້ຊື້ສິນຄ້າຈາກປະເທດຕາເວັນຕົກ ໃນຊຸມປີ 1980 ຫຼາຍກວ່າທີ່ປະເທດຈີນ ຫຼື ອິນເດຍ ຊື້. ຕະຫຼອດຊຸມປີ 1970 ແລະ ຕົ້ນຊຸມປີ 1980 ປະເທດຕ່າງໆມີອັດຕາເຕີບ ໃຫຍ່ທາງດ້ານເສດຖະກິດ ປະຈຳປີ ສູງເຖິງ 8%. ຜົນຜະລິດມວນຮວມແຫ່ງຊາດຕໍ່ຄົນ (GNP) ໃນສິງກະໂປ ເທົ່າກັບ 5,910 ໂດລາອາເມລິກາ ໃນປີ 1982 ເຮັດໃຫ້

ສິງກະໂປ ກາຍເປັນປະເທດຮັ່ງມີກວ່າບາງປະເທດ ໃນປະຊາຄົມເອີຣົບ. ໃນປີດຽວກັນ ມາເລເຊຍ ມີຜົນຜະລິດມວນຮວມແຫ່ງຊາດເທົ່າກັບ 1,860 ໂດລາອາເມລິກາຕໍ່ຄົນ ສ່ວນປະເທດໄທ ແລະ ອິນໂດເນເຊຍ ຕີກເປັນ 790 ແລະ 580 ໂດລາ ຕາມລຳດັບ. ການພັດທະນາເສດຖະກິດຂອງ ປະເທດຟີລິບປິນ ກ້າວໄປຊັກຊ້າແດ່ ຍ້ອນການບໍລິຫານຜິດພາດ ແລະ ຄວາມວຸ່ນວາຍທາງການເມືອງ ເມື່ອຕົ້ນຊຸມປີ 1980 ທັງທີ່ໄດ້ເປັນປະເທດນຳໜ້າໝູ່ໃນພາກພື້ນນີ້ ໃນບາງດ້ານ ຢູ່ຫຼາຍປີ. ໃນທາງກົງກັນຂ້າມ ປະເທດພະມ້າ ລາວ ກຳປູເຈຍ ແລະ ຫວຽດນາມ ເມື່ອວັດແທກເອົາມູນຄ່າຜະລິດຕະພັນມວນຮວມແຫ່ງຊາດ ຕໍ່ຄົນແລ້ວ ປາກົດວ່າຖືກຈັດຢູ່ໃນຖັນແຖວປະເທດຍາກຈົນທີ່ສຸດໃນໂລກ. ຂໍ້ມູນທີ່ສາມາດນຳມາປຽບທຽບໄດ້ ສຳລັບປະເທດກອມມູນິດທັງຫຼາຍ ມີຢູ່ໜ້ອຍ ແຕ່ຜະລິດພັນມວນຮວມແຫ່ງຊາດຕໍ່ຄົນ ຂອງປະເທດພະມ້າ ໃນປີ 1982 ຕີກເປັນ 190 ໂດລາອາເມລິກາ.

ທັງທີ່ມີການເຕີບໃຫຍ່ທາງເສດຖະກິດ ປະເທດຕ່າງໆໃນພາກພື້ນນີ້ ຍັງຄົງ ອາໄສກຳລັງທາງການຕະຫຼາດສາກົນ ແລະ ເງິນທຶນຈາກຕ່າງປະເທດສູງຫຼາຍ ຈົນບໍ່ສາມາດຄວບຄຸມໄດ້. ລາຍໄດ້ແລະຄວາມໝັ້ນຄົງຂອງລັດຖະບານ ແລະ ເອກະຊົນ ໃນອາຊີຕາເວັນອອກສຽງໃຕ້ ຍັງຖືກກຳນົດ ໂດຍການຕັດສິນໃຈ ທີ່ດຳເນີນການໃນ ຫ້ອງປະຊຸມຂອງກະນະກຳມະການທະນາຄານສາກົນ ແລະ ຂອງຕະຫຼາດອຸປະໂພກ ໃນ ນິວຢອກ ຫຼື ລອນດອນ ແລະ ຫ້ອງປະຊຸມກຳມະການນາໆຊາດໃນໂຕກຽວ ແຟຮງເຟີຕ ແລະບ່ອນອື່ນໆ. ຄວາມຕົກຕ່ຳຂອງລາຄາແຮ່ຊົ່ນ ເຂົ້າສານ ແລະນ້ຳມັນດິບ ໃນຕະຫຼາດສາກົນ ເກີດຂຶ້ນເມື່ອກາງຊຸມປີ 1980 ໄດ້ສ້າງຄວາມໜັກອົກໜັກໃຈ ໃຫ້ແກ່ລັດຖະບານຕ່າງໆໃນພາກພື້ນນີ້ ຢ່າງແຮງ ທັງຢ້ານເກີດຜົນສະທ້ອນທາງການເມືອງຕິດຕາມມາ ຍ້ອນເງື່ອນໄຂການດຳລົງຊີວິດຂອງປະຊາຊົນ ຕົກຕ່ຳລົງຫຼາຍ ຍ້ອນວ່າລັດຖະບານເອງ ເຄີຍໄດ້ໃຫ້ຄຳໝັ້ນສັນຍາມາຫຼາຍປີແລ້ວວ່າ ການເສຍສະຫຼະຂອງພວກເຂົາເຈົ້າ (ປະຊາຊົນ) ຈະໄດ້ຮັບການຕອບແທນ ໃນອະນາຄົດ ດ້ວຍເງື່ອນໄຂການດຳລົງຊີວິດທີ່ດີກວ່າ ທັງສຳລັບພວກເຂົາເຈົ້າເອງ ແລະພວກລູກຫຼານ ສ່ວນບາງຄົນ ກໍເລີ່ມຫຼົງເຫັນແລ້ວວ່າ ຖານະຂອງພວກເຂົາເຈົ້າຈະຄ່ອຍໆດີຂຶ້ນ. ການປ່ຽນແປງ

ເຫຼົ່ານີ້ ມີຜົນກະທົບຕໍ່ຫຼາຍປະເທດຕົວຢ່າງເຊັ່ນ ລາຄານ້ຳມັນທີ່ຕົກຕ່ຳ ມີທ່າອ່ຽງເຮັດ ໃຫ້ ອິນໂດເນເຊຍ ແລະ ມາເລເຊຍ ຕື່ນຕົວ ເພາະມີແຫຼ່ງນ້ຳມັນດິບສຳລັບຂຸດຄົ້ນ ຢູ່ແລ້ວ ເຊິ່ງກໍເປັນທີ່ຍິນດີຕ້ອນຮັບ ສຳລັບປະເທດໄທ ແລະ ຟີລິບປິນ ກັບລັດຕ່າງໆ ໃນອິນໂດຈີນ ທີ່ຕ້ອງນຳເຂົ້ານ້ຳມັນ.

ຄວາມໜັກໃຈອີກອັນໜຶ່ງຂອງລັດຖະບານ ກໍແມ່ນ ເລື່ອງໜີ້ສິນແຫ່ງຊາດຫຼາຍ ຂຶ້ນ ທັງໜີ້ຂອງລັດເອງ ທັງໜີ້ຂອງພາກເອກະຊົນ ຕໍ່ທະນາຄານຕ່າງປະເທດ ແລະ ອົງ ກອນໃຫ້ເງິນກູ້ຢືມນາໆຊາດ. ໃນຊຸມປີ 1980 ບັນຫາໜີ້ສິນເຫຼົ່ານີ້ ຍັງບໍ່ຮ້າຍແຮງຄື ກັບຢູ່ໃນບາງພາກຂອງອາເມລິກາໃຕ້ ຍົກເວັ້ນກໍແຕ່ປະເທດຟີລິບປິນ ທີ່ການບໍລິຫານ ຈັດສັນຜິດພາດ ທັງເຫຼ່ລ່ຽມສ້ໍໂກງ ໄດ້ກໍ່ໃຫ້ປະເທດຊາດມີໜີ້ສິນເຖິງ 27 ຕຼ້ໂດລາ ອາເມລິກາ (27,000,000,000,000) ໃນປີ 1986 ກ່ອນຍຸກລະບອບມາກ້ອສ ຈະ ຫຼົ້ມຈົມລົງ. ດ້ວຍມີພັນທະທີ່ຕ້ອງສົ່ງອອກສິນຄ້າປະເພດວັດຖຸດິບ ແລະສິນຄ້າສຳເລັດ ຮູບຈາກໂຮງງານຮອດ 30 ຫາ 40 % ເພື່ອໃຊ້ໜີ້ ແທນທຶນແລະດອກເບ້ຍຂອງເງິນກູ້ຢືມ ອັນທີ່ເອີ້ນວ່າ ອັດຕາສ່ວນການບໍລິການດ້ານໜີ້ສິນນັ້ນ ອາດສົ່ງຜົນກະທົບທາງລົບຕໍ່ ເສດຖະກິດຂອງອາຊຽນ ໃນອະນາຄົດກໍເປັນໄດ້. ເຖິງວ່າ ເສດຖະກິດຢູ່ໃນບ່ອນທີ່ອັດ ຕາສ່ວນການບໍລິການດ້ານໜີ້ສິນ ສູງຮອດແຕ່ປະມານ 25% ໃນລະຫວ່າງກາງຊຸມ ປີ 1980 ເຊັ່ນ ປະເທດໄທ, ໂຄງການພັດທະນາທັງຫຼາຍ ກໍໄດ້ຢຸດສະງັກໄປ ຈົນກວ່າ ຈະສາມາດຕົກລົງເລື່ອງ ການຈັດສັນທາງດ້ານການເງິນ ກັບອົງການຜູ້ໃຫ້ກູ້ຢືມຕ່າງ ປະເທດໄດ້.

ໃນຂະນະທີ່ສະແດງອອກເຖິງຄວາມຕັ້ງໃຈຢ່າງເດັດດຽວ ໃນການຮ່ວມມືນັ້ນ ປະເທດສະມາຊິກຂອງສະມາຄົມອາຊຽນທັງຫຼາຍ ຍັງບໍ່ໄດ້ໄຂກວ້າງ ເລື່ອງເສດຖະກິດ ຂອງຕົນ ຕໍ່ກັນແລະກັນ. ກົງກັນຂ້າມ ປະເທດເຫຼົ່ານັ້ນ ຕ່າງກໍຊ່ວງເສັງກັນ ຢ່າງເອົາເປັນ ເອົາຕາຍ ເພື່ອກ້າວເຂົ້າສູ່ຕະຫຼາດທີ່ເຫຼືອຢູ່ຂອງໂລກ. ເລື່ອງນີ້ ກໍເກືອບບໍ່ເປັນໜ້າປະ ຫຼາດໃຈເລີຍ ຍ້ອນວ່າ ປະເທດເຫຼົ່ານີ້ ມີຊັບພະຍາກອນທີ່ຄ້າຍຄືກັນ ແລະ ຄວາມ ສາມາດຂອງຜູ້ຄົນ ກໍຄ້າຍຄືກັນ ແລະທຸກປະເທດ ກໍລ້ວນແຕ່ປາຖະໜາຢາກພັດທະນາ

ສະມັດຖະພາບ ທາງອຸດສາຫະກຳຂອງຕົນ ໃຫ້ມີອິດສະຫຼະ ເຊັ່ນດຽວກັນ.

ຕະຫຼອດຊຸມປີ 1970 ແລະ 1980 ລັດຖະບານພະມ້າ ໄດ້ດຳເນີນຍຸດທະສາດ ເພື່ອການພັດທະນາ ແຕກຕ່າງກັບປະເທດອື່ນໆໃນສະມາຄົມອາຊຽນ. ໃນລະຍະຊຸມປີ 1950 ນັ້ນ ໄດ້ມີການສົ່ງເສີມການຮ່ວມທຶນກັບຕ່າງປະເທດ ແຕ່ຕົ້ນມາພາຍຫຼັງປີ 1962 ແລ້ວ ໃນສາຍຕາລັດຖະບານພະມ້າ ເຫັນວ່າ ການກຸ້ມຕົນເອງ ເປັນພຽງເສັ້ນທາງດຽວ ເພື່ອຮັກສາເອກະລາດທາງເສດຖະກິດຂອງຕົນໄວ້ ໃນຂະນະດຽວກັນ ກໍຕ້ອງເຮັດໃຫ້ ຊາວນາແລະກຳມະກອນ ມີເສດຖະກິດເທົ່າກັບຊົນຊັ້ນອື່ນ ຫຼາຍຂຶ້ນ. ແຕ່ຜົນທີ່ໄດ້ແມ່ນ ອັດຕາການຂະຫຍາຍຕົວດ້ານເສດຖະກິດ ຊັກຊ້າກວ່າປະເທດອື່ນໆໃນອາຊຽນ ແລະ ມີການປ່ຽນແປງແຕ່ໜ້ອຍດຽວ ຢູ່ໃນໂຄງສ້າງຂອງເສດຖະກິດ. ການຫັນເປັນອຸດສະ ຫະກຳ ເຊິ່ງສ່ວນໃຫຍ່ໄດ້ຮັບການສະໜັບສະໜຸນດ້ານການເງິນຈາກຍີ່ປຸ່ນ ເພື່ອປົວ ແປງບາດແຜສົງຄາມ ແລະ ການຊ່ວຍເຫຼືອ ກັບການກູ້ຢືມຈາກອົງກອນການເງິນ ສາກົນ ທັງໝົດນີ້ ໄດ້ພາໄປເຖິງການຜະລິດເຄື່ອງອຸປະໂພກບາງຊະນິດຫຼາຍຂຶ້ນ ແຕ່ ເຄື່ອງອຸປະໂພກອີກຫຼາຍຊະນິດ ກໍຍັງຂາດເຂີນຢູ່ ໃນຊຸມປີ 1980 ສິ່ງສຳຄັນທີ່ເກີດ ຂຶ້ນຄຽງຄູ່ກັນ ຄື "ຕະຫຼາດມືດ" ນັ້ນ ໄດ້ເຕີບໃຫຍ່ຂຶ້ນໃນຊຸມປີ 1960 ແລະ 1970 ຢູ່ຕໍ່ໜ້າຕະຫຼາດ ທີ່ລັດຖະບານຄວບຄຸມ ເພື່ອຈັດຫາສິນຄ້າງາມໆແລະລາຄາແພງ ເຊິ່ງ ສ່ວນຫຼາຍ ເປັນເຄື່ອງໜີພາສີ ນຳເຂົ້າປະເທດ ດ້ວຍລາຄາສູງລິບນັ້ນເອງ.

ປະເທດກອມມູນິດທັງຫຼາຍໃນອິນໂດຈີນ ທີ່ແຍກຕົວອອກຈາກໂອກາດທາງ ການຄ້າອັນສຳຄັນ ກັບປະເທດບ້ານໃກ້ເຮືອນຄຽງໃນກຸ່ມອາຊຽນ ແລະ ສະຫະລັດ ອາເມລິກາ ໄດ້ວິວັດຜັນປ່ຽນເຂົ້າສູ່ກຸ່ມກ້ອນເສດຖະກິດ ຕາມແບບສະບັບຂອງຕົນເອງ. ປະເທດຫວຽດນາມທີ່ມີທ່າດີກວ່າ ທັງດ້ານຂະໜາດອັນກວ້າງໃຫຍ່ກວ່າ ແລະ ໂອກາດ ເຂົ້າເຖິງສິ່ງອຳນວຍຄວາມສະດວກທາງດ້ານການສຶກສາ ແລະ ເສດຖະກິດຫຼາຍກວ່າ ມາແຕ່ສະໄໝອານານິຄົມ ໄດ້ສ້າງຄວາມສຳພັນພິເສດກັບປະເທດລາວ ພາຍຫຼັງປີ 1975 ແລະ ກຳປູເຈ ພາຍຫຼັງປີ 1979. ທັງທີ່ເປັນປະເທດໜຶ່ງໃນບັນດາປະເທດທຸກ ຈົນຫຼາຍທີ່ສຸດໃນໂລກ ຫວຽດນາມ ຍັງໄດ້ໃຫ້ເງິນກູ້ຢືມແກ່ລາວ ແບບບໍ່ມີດອກເບ້ຍ

ເມື່ອຊຸມທ້າຍປີ 1970. “ການແຮກສ່ງອ ລະຫວ່າງຕົວເມືອງຂອງຫວຽດນາມ ກັບ ເມືອງໃນກຳປູເຈ” ແລະ ລະຫວ່າງແຂວງຕໍ່ແຂວງ (ເຊັ່ນວ່າ ນະຄອນໂຮຈິມິນ ກັບ ພະນົມເປັນ) ໄດ້ກາຍເປັນສັນຍະລັກ ຂອງຄວາມຍິ່ງໃຫຍ່ຂອງຫວຽດນາມໃນຍຸກນັ້ນ. ແລະແນ່ນອນວ່າ ໃນເວລາດຽວກັນນີ້ ຫວຽດນາມເອງ ກໍໄດ້ເອື່ອຍອີງເສດຖະກິດຂອງ ສະຫະພາບໂຊວຽດຄືກັນ, ເຊັ່ນ ການນຳເຂົ້ານ້ຳມັນ ເຫຼັກ ແລະ ເຫຼັກກ້າ ເກືອບທັງ ໝົດຂອງຕົນ ແລະ ແມ່ນແຕ່ຝຸ່ນເຄມີ ກັບເສັ້ນຝ້າຍ. ໜີ້ສິນຂອງຫວຽດນາມຕໍ່ສະຫະ ພາບໂຊວຽດ ຫຼວງຫຼາຍມະຫາສານ ຈົນຫວຽດນາມ ໄດ້ຕົກລົງໃຊ້ໜີ້ບາງສ່ວນ ດ້ວຍ ການສົ່ງແຮງງານຫຼາຍພັນຄົນ ໄປເຮັດວຽກຢູ່ໂຮງຈັກໂຮງງານ ແລະ ບໍ່ແຮ່ ໃນສະຫະ ພາບໂຊວຽດ.

ການປ່ຽນແປງທາງເສດຖະກິດໃນອາຊີຕາເວັນອອກສຽງໃຕ້ ນັບແຕ່ສົງຄາມ ໂລກຄັ້ງທີ II ມາ ສ້າງຜົນກະທົບຢ່າງເລິກເຊິ່ງຮຸນແຮງ ຕໍ່ລະບົບນິເວດຂອງພາກພື້ນ. ຕົວຢ່າງ ການຂະຫຍາຍຕົວຢ່າງໄວວາ ຂອງອຸດສະຫະກຳປ່າໄມ້ ໂດຍສະເພາະ ຢູ່ ອິນໂດເນເຊຍ ໄທ ມາເລເຊຍ ຟີລິບປິນ ແລະ ຫວຽດນາມ ມັນໄດ້ປັດກວາດປ່າດົງອັນ ກວ້າງໃຫຍ່ໃຫ້ແປນເປົ່າ ກໍ່ໃຫ້ເກີດບັນຫາດິນເຊາະເຈື່ອນ ແລະແຫຼ່ງນ້ຳບົກແຫ້ງ. ຄາດ ກັນວ່າ ປ່າໄມ້ຂອງຫວຽດນາມປະມານ ໜຶ່ງສ່ວນສາມ ຖືກທຳລາຍໃນລະຫວ່າງ ປີ 1945 ຫາ 1980 ດ້ວຍເຫດຜົນຄ້າຍຄືກັນກັບທີ່ພົບໃນ ອິນໂດເນເຊຍ ນັ້ນຄື ການ ຂຸດຄົ້ນໂດຍໜ່ວຍງານທາງການ ບວກໃສ່ການຊົມໃຊ້ປ່າແບບຄວບຄຸມບໍ່ໄດ້ ຂອງປະ ຊາຊົນທ້ອງຖິ່ນ. ການນຳໃຊ້ຝຸ່ນເຄມີ ແລະ ຢາປາບແມງໄມ້ທີ່ບໍ່ລະມັດລະວັງ ບັງ ຄັບໃຫ້ຕ້ອງຫາແນວເຂົ້າປູກຊະນິດໃໝ່ ທີ່ເອີ້ນກັນວ່າແນວ “ມະຫັດສະຈັນ” ປັດໄຈນຳ ພາໄປສູ່ຄວາມເປັນໄປໄດ້ ສຳລັບຫຼາຍປະເທດໃນພາກພື້ນນີ້ ໃນການສົ່ງອອກທັນຍະ ພືດ ເຖິງວ່າມີປະຊາກອນເພີ່ມຂຶ້ນຫຼາຍກໍຕາມ, ທັງໝົດນີ້ ພາໃຫ້ເກີດພະຍາດລະບາດ ໃນໜອງປາ ແລະທ້ອຍນ້ຳລຳທານຕ່າງໆ. ການພັດທະນາໂຮງງານອຸດສະຫະກຳ ແບບ ປາສະຈາກການຈັດສັນ ສ້າງແອ່ງໂຕ່ງຮັບສິ່ງເສດເຫຼືອ ມີຜົນໃຫ້ແມ່ນ້ຳລຳທານເກີດ ເປື້ອນເປີ (ມີມົນລະພິດ) ແລະ ສ້າງບັນຫາ ໃສ່ແຫຼ່ງນ້ຳບາດານນຳ ການພັດທະນາ ເສດຖະກິດແບບບໍ່ຄວບຄຸມ ມີຜົນກະທົບຕໍ່ປະຊາຊົນ ເຊິ່ງບັນດາປະເທດທີ່ໄດ້ພັດທະ

ນາມາກ່ອນ ກໍຮູ້ດີ ແລະບັດນີ້ ກຳລັງຖືກປະຊາຊາດອາຊຽນ ກ່າວປະນາມວ່າ ເປັນ ຜູ້ສົ່ງອອກສານເຄມີອັນເປັນພິດ ແລະ ອຸດສະຫະກຳມີນລະພິດຢູ່ໃນພາກພື້ນ. ໃນຊຸມ ປີ 1980 ກຸ່ມອະນຸຮັກສິ່ງແວດລ້ອມ ນັບມື້ນັບມີບົດບາດສູງຂຶ້ນຫຼາຍ ຢູ່ໃນວົງການ ເມືອງຂອງ ມາເລເຊຍ, ປະເທດໄທ ແລະ ຟີລິບປິນ ບ່ອນທີ່ການກໍ່ສ້າງໂຮງໄຟຟ້າ ນິວເຄລັ່ງ ເກືອບສຳເລັດແລ້ວ ຢູ່ ບາຕາອັນ (Bataun) ໄດ້ກາຍເປັນເປົ້າໝາຍຂອງ ການປະທ້ວງຄັດຄ້ານເລື້ອຍໆ ໃນຍຸກອະວະສານ ຂອງລະບອບມາກັອສ.

ດັ່ງທີ່ພວກເຮົາໄດ້ເຫັນມາແລ້ວ ການເມືອງພາຍໃນທົ່ວອາຊີຕາເວັນອອກສ່ຽງ ໃຕ້ ໄດ້ປ່ຽນແປງໄປຫຼາຍ ໃນຫຼາຍທົດສະວັດ ຫຼັງການສ່ຽງສຸດສົງຄາມໂລກຄັ້ງທີ II. ໃນທົ່ວພາກພື້ນ ລັດທິຄຳສອນກ່ຽວກັບການເມືອງຫຼາຍຮູບຫຼາຍສີ, ການປະນີປະນອມ ແລະ ສະຖາບັນທັ້ງຫຼາຍ ໄດ້ຖືກນຳໃຊ້ ທົດສອບ ປັບປ່ຽນ ປະຕິເສດ ຫຼື ຄັດຄ້ານ ໂດຍລັດຖະບານປະເທດຕ່າງໆໃນອາຊີຕາເວັນອອກສ່ຽງໃຕ້ ແຕ່ໃນຄວາມໝາຍທົ່ວໆ ໄປແລ້ວ ໃນທ້າຍຊຸມປີ 1980 ຍຸກນີ້ ອາດຖືກເບິ່ງວ່າ ມີຈຸດພິເສດຢູ່ບ່ອນວ່າ ມີ ການປັ່ນປ່ຽນມາສູ່ ຜະເດັດການຫຼາຍຂຶ້ນ. ໃນຊຸມປີ 1940 ແລະຕົ້ນຊຸມປີ 1950 ສະຖາບັນການເມືອງແບບຕາເວັນຕົກ ພຽງແຕ່ຫາກໍ່ກໍ່ຕົວຂຶ້ນ ແຕ່ແລ້ວກໍມາເຕີບໃຫຍ່ ຂຶ້ນ ຢ່າງໄວວາແບບບໍ່ຄັກປານໃດ ກັບບັນດາຜູ້ນຳ ທີ່ບຸນໜັກສັກໃຫຍ່ ໜ້ອຍຫຼືຫຼາຍ ແດ່ນັ້ນ ບັດນີ້ ໄດ້ຂຶ້ນມາມີອຳນາດ ຕອນໄດ້ຮັບເອກະລາດ. ບຸກຄົນສຳຄັນເຊັ່ນ ອູ ນຸ, ຊູກາຣ໌ໂນ ແລະ ສີຫະນຸ ໄດ້ພະຍາຍາມປົກຄອງໂດຍອາໄສ ພະລັງແຫ່ງບຸກຄະລິກ ກະພາບຂອງຕົນເອງ ໂດຍໃຫ້ຄວາມໄວ້ເນື້ອເຊື່ອໃຈແກ່ກຸ່ມທີ່ເປີກສານ້ອຍໆ ແລະ ກາຍເປັນຄວາມເຄັ່ງຕຶງຂຶ້ນ ຍ້ອນອຸດົມການທາງສາສະໜາ ເຊັ່ນ ອຸດົມກະຕິກ່ຽວກັບ ປະຊາທິປະໄຕຊົ້ນຳຂອງ ຊຸກາຣ໌ໂນ ຫຼືສິ່ງທີ່ ສີຫະນຸ ເອີ້ນວ່າ ສັງຄົມນິຍົມແບບພຸດ. ໂຫງ ດິງ ດຽມ ກໍເປັນອີກຜູ້ໜຶ່ງ ທີ່ມີລັກສະນະຄ້າຍຄືກັນ ແລະ ປັດຊະຍາຂອງເຂົາ ກ່ຽວກັບລັດທິບູຊາບຸກຄົນ ກໍໄດ້ຮັບອິດທິພົນພຽງເລັກນ້ອຍ ຈາກການເມືອງຂອງເອີຣົບ ຕາເວັນຕົກ ຫຼື ສະຫະລັດອາເມລິກາ.

ໃນລະຍະໜຶ່ງ ຊົນຊັ້ນນຳທາງການເມືອງ ໂດຍສະເພາະພວກຜູ້ນຳຝ່າຍການ

ທະຫານ ລ້ວນແຕ່ເຮັດວຽກດ້ວຍຄວາມພະຍາຍາມ ເພື່ອຍູ້ໜຸນໃຫ້ບັນດາລັດທີ່ເປັນເອກະລາດໃໝ່ ຫັນໄປສູ່ສິ່ງໜຶ່ງ ເຊິ່ງພິລຶກພິລ້ຳ ຍິ່ງກວ່າການເຕົ້າໂຮມມວນຊົນຈຳນວນມະຫາສານເຂົ້າກັນ ໂດຍການຂີດເສັ້ນອ້ອມພວກເຂົາຢູ່ໃນແຜນທີ່. ຢ່າງໃດກໍດີ ສຳລັບຜູ້ນຳຝ່າຍທະຫານທັ້ງຫຼາຍ ໂດຍມີຜູ້ນຳ ທີ່ມີບຸນຫັກສັກໃຫຍ່ ຂຶ້ນມາປົກຄອງປະເທດແລ້ວເຮັດພໍປານວ່າ ກຳລັງບໍລິຫານວຽກງານສ່ວນຕົວ. ອັນນີ້ກໍເປັນເລື່ອງໜ້າເສົ້າໃຈຢ່າງໜຶ່ງ ເພາະວ່າ ບໍ່ຊ້າກໍໄວ ປະເທດເຫຼົ່ານັ້ນ ຕ້ອງຕົກຢູ່ໃນລະບອບການປົກຄອງຂອງທະຫານ ເຊິ່ງມັກອ້າງເຫດຜົນວ່າ ເພື່ອຜົນປະໂຫຍດຂອງປະເທດຊາດ. ໃນທາງກົງກັນຂ້າມ ສຳລັບປະເທດໃນອາຊີຕາເວັນອອກສ່ຽງໃຕ້ທີ່ເຫຼືອ ຄວນຕ້ອງກ່າວໄວ້ເປັນພິເສດວ່າ ການເມືອງໃນຟີລິບປິນ ສິງກະໂປ ແລະ ມາເລເຊຍ ຍັງຄົງໄຂກວ້າງຢູ່ຕະຫຼອດເວລາ ໃນຊຸມປີ 1960 ຍ້ອນລັດຖະບານຂອງປະເທດເຫຼົ່ານັ້ນ ບໍ່ຕ້ອງສ່ຽງຕໍ່ອຳນາດສູນກາງ ຄືກັບທີ່ເກີດຂຶ້ນຢູ່ໃນ ພະມ້າ ອິນໂດເນເຊຍ ແລະ ຫວຽດນາມ ແລະ ພວກຜູ້ນຳ ກໍມີຄວາມຮູ້ສຶກໝັ້ນໃຈ ໃນຕຳແໜ່ງຂອງພວກເຂົາ.

ໃນຊຸມປີ 1970 ຫຼັງຈາກປະກາດໃຊ້ກົດໄອຍະການເສິກໃນ ຟີລິບປິນ ກໍມີການສະຖາປະນາ ຄ້າຍຄືວ່າລະບອບພັກການເມືອງດຽວ ຢູ່ອິນໂດເນເຊຍ ແລະ ໄຊຊະນະຂອງຝ່າຍກອມມູນິດ ຢູ່ອິນໂດຈີນ. ການຫັນປ້ຽນໄປສູ່ລະບອບຜະເດັດການ ທີ່ບໍ່ສາມາດເຫັນໄດ້ໃນແຕ່ກ່ອນໆ ບັດນີ້ກໍເລັ່ງຈ້າວຂຶ້ນ. ປະທານາທິບໍດີ ເຟີດີນັນ ມາກັອສ (Ferdinand Marcos) ແຫ່ງ ຟີລິບປິນ ໄດ້ກ່າວປະໂຫຍກສັ້ນໆທີ່ບົ່ງບອກລັກສະນະຂອງຍຸກນັ້ນ ເມື່ອເຂົາອ້າງເຖິງ “ລັດທິຜະເດັດການ ພາຍໃຕ້ລັດຖະທຳມະນູນ (constitutional authoritarianism)”. ທົ່ວພາກພື້ນ ພວກລັດຖະບານຜູ້ມັກຍຶດຕິດ ຫຼື ສະແດງຕົວວ່າ ຍຶດຕິດກັບແນວຄວາມຄິດທີ່ວ່າ ພວກເຂົາຂຶ້ນກັບກົດໝາຍລັດຖະທຳມະນູນ ໄດ້ພາກັນຊົມໃຊ້ເອກະສານເອງ ສ່ວນໃຫຍ່ໄດ້ປັບປ່ຽນ ຫຼືບໍ່ ກໍຂຽນຂຶ້ນໃໝ່ ເພື່ອຮັບປະກັນການຍຶດຖານະຕຳແໜ່ງອອກໄປ. ຄຳວ່າ “ເອກະພາບແຫ່ງຊາດ” ມັກຖືກນຳມາໃຊ້ເປັນເຫດຜົນ ສຳລັບພຶດຕິກຳອັນນີ້. ປະເທດຟີລິບປິນແຕ່ປີ 1972 ຫາ ປີ 1986 ອາດເປັນຕົວຢ່າງທີ່ຈະແຈ້ງທີ່ສຸດ ຂອງລະບອບຜະເດັດການພາຍໃຕ້ລັດຖະທຳມະນູນ ແຕ່ຄຳນີ້ ກໍສາມາດນຳໄປໃຊ້ກັບຂະບວນການ ໂກນຄາຣ໌ (Golkar)

ຂອງ ຊູຮາຣ໌ໂຕ (Suharto) ກັບລັດຖະບານໄທ ຫຼາຍໆຊຸດ ແລະ ກັບພັກ ລານຊິນ (Lansin) ໃນພະມ້າ ນຳ. ພຶດຕິກຳຂອງລັດຖະບານມາເລເຊ ພາຍຫຼັງປີ 1969 ທີ່ສວຍໃຊ້ສຽງສ່ວນຫຼາຍໃນສະພາ ເພື່ອແກ້ໄຂລັດຖະທຳມະນູນ ທັງເພື່ອເປັນການຈຳກັດເສລີພາບໃນການປາກເວົ້າ ແລະ ເພື່ອຕື່ມອຳນາດຂອງຝ່າຍບໍລິຫານ ໃນການຕ໋ານອຳນາດຂອງຝ່າຍຕຸລາການ ອາດເບິ່ງຄືວ່າ ສອດຄ່ອງກັນດີ ກັບແບບຢ່າງລະບອບຜະເດັດການອັນນີ້.

ມາເຖິງຊຸມປີ 1980 ພັກການເມືອງຂອງຝ່າຍທະຫານ ໄດ້ຄວບຄຸມລັດຖະບານຂອງພະມ້າ ແລະ ຫວຽດນາມໄວ້ ສ່ວນກອງທັບທີ່ມີອຳນາດທາງການເມືອງ ກໍໄດ້ຄອງອຳນາດໃນປະເທດໄທ ແລະ ອິນໂດເນເຊ. ການເປີດປະເທດຂອງ ຟີລິບປິນ ພາຍຫຼັງຄວາມຫລົ້ມຈົມຂອງລະບອບ ມາກ໋ອສ ໃນປີ 1986, ຄ້າຍຄືກັບ ການໄຂສາກການເມືອງລະຍະສັ້ນໆ ຂອງປະເທດໄທ ໃນລະຫວ່າງປີ 1973 ຫາ 1976 ຖືວ່າເປັນຂໍ້ຍົກເວັ້ນ. ປະຫວັດສາດຂອງພາກພື້ນນີ້, ມາຮອດຊຸມທ້າຍປີ 1980 ໄດ້ບັນທຶກໄວ້ວ່າ ຊີວິດປະຈຳວັນ ຂອງຜູ້ຄົນທັງຊາຍ ແລະ ຍິງ ໃນປະເທດອາຊີຕາເວັນອອກສຽງໃຕ້ ຖືກກະທົບກະເທືອນຫຼາຍຂຶ້ນ ແລະກໍໄດ້ຮັບຄວາມໃສ່ໃຈ ຫຼາຍຂຶ້ນ ຈາກອົງກອນ ແລະໜ່ວຍງານຕ່າງໆຂອງລັດຖະບານ ທີ່ເວົ້າຢ່າງນີ້ ບໍ່ໄດ້ໝາຍຄວາມວ່າການພັດທະນາ ຄວນຖືກເບິ່ງວ່າ ເປັນການປະກາດຂາລົງຂອງວົງການການເມືອງ ຢູ່ໃນອາຊີຕາເວັນອອກສຽງໃຕ້ ຫຼາຍກວ່າທ່າອ່ຽງອັນດຽວກັນ ທີ່ສັງຄົມຕາເວັນຕົກ ຄົງຕ້ອງເຮັດ. ເຫດຜົນອັນໜຶ່ງກໍແມ່ນ ປະຊາຊາດໃນອາຊີຕາເວັນອອກສຽງໃຕ້ ບໍ່ໄດ້ເປັນວັດຖຸໃຫ້ລັດຖະບານຊູດຮີດອີກແລ້ວ ແຕ່ ພວກເຂົາເປັນເນື້ອແທ້ ແຫ່ງປະຫວັດສາດຂອງພວກເຂົາເອງ ດ້ວຍການຕັດສິນໃຈຂອງບຸກຄົນ ຫຼື ແບບຮ່ວມກັນ ໂດຍບໍ່ຈຳເປັນວ່າ ແມ່ນເພື່ອຜົນປະໂຫຍດຂອງຜູ້ທີ່ພວກເຂົາເລືອກຂຶ້ນມາ ຫຼືວ່າ ທີ່ເລືອກຕົນເອງມາ ເພື່ອປົກຄອງປະເທດຕ່າງໆໃນພາກພື້ນນີ້ ຫຼາຍກວ່າ.

ເສັ້ນທາງໜຶ່ງທີ່ປະຊາຊາດໃນອາຊີຕາເວັນອອກສຽງໃຕ້ ໄດ້ສ້າງສັນຮູບໂສມຊີວິດຂອງພວກເຂົາບາງຄັ້ງຄາວ ທີ່ຝືນກັບຄວາມຄາດໝາຍຂອງລັດຖະບານ ກໍແມ່ນ

ການຂະຫຍາຍສະມາຊິກ ໃນຄອບຄົວຂອງເຂົາເຈົ້າ. ນັບຕັ້ງແຕ່ສົງຄາມໂລກຄັ້ງທີ II ມາ ບໍ່ມີປະເທດໃດ ຫຼີກພົ້ນຈາກປາກົດການອັນນີ້. ຕົວຢ່າງປະຊາກອນຂອງຂົງເຂດ ເຊິ່ງບັດນີ້ປະກອບເປັນມາເລເຊຍ ໃນປີ 1947 ນັ້ນມີປະຊາກອນແຕ່ 5.78 ລ້ານຄົນ ແຕ່ມາເຖິງຊຸມປີ 1980 ຫຼາຍຂຶ້ນເປັນ 13.75 ລ້ານຄົນ. ມາຮອດກາງຊຸມປີ 1980 ປະຊາກອນຂອງອາຊີຕາເວັນອອກສ່ຽງໃຕ້ ຫຼາຍຂຶ້ນເປັນ 400 ລ້ານຄົນ, ເທົ່າກັບ ປະມານ 10 % ຂອງປະຊາກອນໂລກ ເຖິງວ່າສັດສ່ວນປະຊາກອນຂອງແຕ່ລະປະ ເທດ ຍັງແຕກຕ່າງກັນຫຼາຍກໍຕາມ. ປະເທດບຣູນາຍ ເຊິ່ງເປັນປະເທດນ້ອຍໆ ມີປະ ຊາກອນບໍ່ຮອດໜຶ່ງສ່ວນສີ່ຂອງລ້ານ ແລະ ສິງກະໂປ ກໍມີພຽງ 2.5 ລ້ານຄົນ ສ່ວນ ອິນໂດເນເຊຍ ເປັນປະເທດກວ້າງໃຫຍ່ ມີປະຊາກອນຫຼາຍເປັນອັນດັບທີຫ້າຂອງໂລກ ຄື ຫຼາຍກວ່າ 162 ລ້ານຄົນ.

ການທີ່ປະຊາກອນໃນພາກພື້ນນີ້ ທະວີຂຶ້ນຢ່າງວ່ອງໄວນີ້ ເປັນຍ້ອນເຫດປັດ ໄຈຫຼາຍອັນ ແລະ ໜຶ່ງໃນນັ້ນ ທີ່ສຳຄັນສຸດ ແມ່ນເລື່ອງສຸຂະພາບທີ່ໄດ້ຮັບການດູແລປັບ ປຸງດີຂຶ້ນຕັ້ງແຕ່ຊຸມປີ 1940 ເປັນຕົ້ນມາ, ທຸກປະເທດໃນພາກພື້ນນີ້ ຍົກເວັ້ນສິງກະໂປ ແລະ ກຳປູເຈຍ, ຍ້ອນວ່າມີສົງຄາມແລະການຂ້າລ້າງເຜົ່າພັນ, ອັດຕາສະເລ່ຍການເຕີບ ໃຫຍ່ຂອງປະຊາກອນຕໍ່ປີ ນັບແຕ່ 1976 ເຖິງ 1983 ມີຮອດ 2% ຫຼື ຫຼາຍກວ່າໜ້ອຍ ໜຶ່ງ. ຖ້າເປັນໄປຕາມອັດຕານີ້ ປະຊາກອນໃນຫຼາຍໆປະເທດໃນເອເຊຍຕາເວັນອອກ ສ່ຽງໃຕ້ ສ່ວນໃຫຍ່ ກໍຈະທະວີຂຶ້ນເປັນສອງເທົ່າໃນອີກ 30 ປີ ຂ້າງໜ້າ.

ການຂະຫຍາຍຕົວໃນອັດຕານີ້ ມີຜົນໃຫ້ປະຊາກອນຍິ່ງອາຍຸ ລະຫວ່າງ 14 ຫາ 40 ປີ ມີອັດຕາສ່ວນບໍ່ສົມດຸນ ຢູ່ໃນຈຳນວນປະຊາກອນທັງໝົດຂອງຊາດ, ເຊິ່ງເປັນອາການກົງກັນຂ້າມ ກັບຢູ່ໃນປະເທດອຸດສະຫະກຳ ທີ່ມີອັດຕາເກີດຕ່ຳ ອັນ ເຮັດໃຫ້ອັດຕາເຕີບໃຫຍ່ຂອງປະຊາກອນ ຫຼຸດລົງຢ່າງໄວວາ, ບໍ່ວ່າລັດຖະບານຈະເຮັດ ແນວໃດກໍຕາມ ມັນກໍເປັນເລື່ອງຍາກຫຼາຍ. ຍົກເວັ້ນ ສິງກະໂປ ທຸກປະເທດໃນພາກ ພື້ນນີ້ ໃນກາງຊຸມປີ 1980 ມີປະຊາກອນອາຍຸຕ່ຳກວ່າ 15 ປີ ຢູ່ຢ່າງໜ້ອຍ 37%. ສະເພາະຢູ່ອິນໂດເນເຊຍ ແລະ ຟີລິບປິນ ແມ່ນສູງກວ່າ 60% ອັດຕາການເສຍຊີວິດ

ຂອງເດັກເກີດໃໝ່ ຫຼຸດລົງຕ່ຳກວ່າ 100ຄົນ/1000ຄົນ ໃນທຸກໆປະເທດ ຍົກເວັ້ນ ກຳປູເຈ ອິນໂດເນເຊ ແລະ ລາວ, ແລະ ອາຍຸໄຂຂອງຄົນກໍສູງກວ່າ 60 ປີ ຢູ່ທຸກປະເທດ ຍົກເວັ້ນປະເທດທີ່ກ່າວມາແລ້ວ ກັບ ພະມ້າ, ອັນນີ້ ມັນຊີ້ໃຫ້ເຫັນວ່າ ທີ່ຢາກໃຫ້ເປົ້າ ໝາຍອັດຕາການເຕີບໃຫຍ່ຂອງປະຊາກອນ ເປັນສູນນັ້ນ ຄົງຈະຍັງເປັນໄປບໍ່ໄດ້ ສຳ ລັບໃນຫຼາຍໆປີຕໍ່ໜ້າ.

ຢ່າງໃດກໍດີ ຕົວເລກແບບລວມໆເຫຼົ່ານີ້ ບໍ່ໄດ້ບອກແຈ້ງ ວ່າມີບັນຫາຫຼາກ ຫຼາຍອັນໃດແດ່ ກ່ຽວກັບປະຊາກອນ ທີ່ປະຊາຊາດຕ່າງໆ ໃນອາຊີຕາເວັນອອກສຽງ ໃຕ້ພວມປະເຊີນໜ້າ. ຄວາມໜາແໜ້ນຂອງການຕັ້ງຖິ່ນຖານ ແຕກຕ່າງກັນຫຼາຍ ແມ່ນ ແຕ່ຢູ່ພາຍໃນປະເທດໜຶ່ງ ແລະລະຫວ່າງປະເທດນຳກັນ. ຕົວຢ່າງ ຢູ່ໃນສະເພາະເກາະ ດອນ ຊະວາ ມີປະຊາກອນກວ່າ 60 ລ້ານຄົນ ໃນກາງຊຸມປີ 1980. ເພື່ອໃຫ້ຮັບຮູ້ໄດ້ວ່າ ຄວາມສຳພັນຂອງປະຊາກອນຫຼາຍຂະໜາດນັ້ນ ມີຜົນແນວໃດ ຕໍ່ກັບແຜ່ນດິນທີ່ພວກ ເຂົາຕ້ອງດຳລົງຊີວິດຢູ່ ອັນນີ້ຕ້ອງວາດພາບເຖິງອັດຕາສ່ວນຄົນກັບດິນ ເຊິ່ງອາດໃກ້ ຄຽງກັບສະພາບໃນບໍລິເວນຮອບນອກຂອງເມືອງ ບັອສຕັນ (Boston) ກັບ ວໍຊິງຕັນ (Washington) ໃນສະຫະລັດອາເມລິກາ ຫຼືວ່າໃນບໍລິເວນຊານເມືອງອຸດສະຫະກຳ ໃຫຍ່ໆໃນບາງແຫ່ງ ທາງຕາເວັນຕົກ. ໃນທາງກົງກັນຂ້າມ ພາກພື້ນອື່ນໆ ສ່ວນໃຫຍ່ ຜັດບ່ຄ່ອຍມີປະຊາກອນຢູ່ອາໄສຫຼາຍ ເຊັ່ນ ໃນເຂດພູດອຍທຸລະກັນດານ ທາງພາກ ເໜືອຂອງພະມ້າ ເກາະດອນກາລິມັນຕັນ ບໍນຽວພາກເໜືອ ຫຼື ໃນບໍລິເວນປ່າດົງດິບ ທີ່ເປັນຊາຍແດນລະຫວ່າງລາວ - ກຳປູເຈ ແລະ ຫວຽດນາມ.

ຄວາມພະຍາຍາມໃນການຄວບຄຸມປະຊາກອນ ກໍມີອັນແປກຕ່າງກັນໃນແຕ່ ລະປະເທດ. ຕົວຢ່າງ ປະເທດໄທ ໃນຊຸມປີ 1970 ແລະ ຊຸມປີ 1980 ໄດ້ມີການ ໂຄສະນາຢ່າງຈິງຈັງ ແລະກວ້າງຂວາງຂອງສັງຄົມ ເພື່ອຄວບຄຸມຈຳນວນສະມາຊິກ ຄອບຄົວ. ລັດຖະບານສິງກະໂປ ໄດ້ປະດິດສ້າງລະບົບສະກັດກັ້ນ ໃຫ້ເປັນແຮງຈູງໃຈ ຢ່າງຖືກຕ້ອງຕາມກົດໝາຍ ໃຫ້ມີລູກບໍ່ເກີນສອງຄົນຕໍ່ຄອບຄົວ ໂດຍການປະຕິເສດສິດ ຜົນປະໂຫຍດດ້ານສັງຄົມແລະການສຶກສາ ແກ່ເດັກທີ່ມີເກີນກຳນົດນັ້ນ. ຢູ່ຫວຽດນາມ

ແລະ ອິນໂດເນເຊ ພະນັກງານຂອງລັດຖະບານ ແລະ ອົງການຈັດຕັ້ງທາງການເມືອງ ຖືກສັ່ງສອນ ຊັກຈູງ ໃຫ້ປະຕິບັດຕາມແຜນການຄວບຄຸມການເກີດ ຂະນະທີ່ຢູ່ໃນພະມ້າ ລັດຖະບານຮູ້ສຶກວ່າ ຕົນເອງໂດດດ່ຽວຫຼາຍ ຂະນະທີ່ປະເທດໃກ້ຄຽງ ຄື ຈີນ ແລະ ອິນເດຍ ມີປະຊາກອນລົ້ນລົ້ນຕົນຢູ່ແລ້ວ ການວາງແຜນຄອບຄົວ ຈຶ່ງບໍ່ໄດ້ຮັບການສົ່ງເສີມ. ແຕ່ພວກຜູ້ຊາຍແມ່ຍິງໃນປະເທດນີ້ ໄດ້ຊອກຫາຊ່ອງທາງ ຫຼຸດຜ່ອນຂະໜາດຂອງຄອບຄົວເອົາເອງ. ໃນເດືອນກັນຍາປີ 1982 ນາຍົກລັດຖະມຸນຕີ ຂອງ ມາເລເຊ ໄດ້ສ້າງຄວາມຕື່ນເຕັ້ນໂກລາຫົນພໍສົມຄວນ ເມື່ອປະກາດວ່າ ປະເທດຊາດຂອງເຂົາ ຄວນວາງຈຸດໝາຍໃຫ້ມີປະຊາກອນຢ່າງຫຼາຍສຸດບໍ່ກາຍ 70 ລ້ານ ຄື ຫຼາຍກວ່າທີ່ມີຢູ່ປັດຈຸບັນຫ້າເທົ່າ ແລະນີ້ ກໍໄດ້ກາຍເປັນເປົ້າໝາຍໜຶ່ງໃນນະໂຍບາຍ ແລະບັນຈຸຢູ່ໃນແຜນການພັດທະນາ ທີ່ຕ້ອງບັນລຸໃຫ້ໄດ້ໃນປີ 2100.

ປະຊາກອນຂອງ ອາຊີຕາເວັນອອກສ່ຽງໃຕ້ ບໍ່ພຽງແຕ່ຂະຫຍາຍຕົວຢ່າງວ່ອງໄວ ນັບຕັ້ງແຕ່ ສົງຄາມໂລກຄັ້ງທີ II ເປັນຕົ້ນມາ ແຕ່ເຂົາເຈົ້າຍັງເຄື່ອນໄຫວໄປມາຫຼາຍຂຶ້ນໆນຳ. ໃນສະໄໝອານານິຄົມ ມີຜູ້ຄົນພຽງໜ້ອຍດຽວເທົ່ານັ້ນ ຍ້າຍອອກຈາກບ້ານເກີດຂອງເຂົາໄປ ທັງນີ້ຍັງບໍ່ເວົ້າເຖິງຂັ້ນເຂດແຂວງ ເກາະດອນ ຫຼື ປະເທດເທື່ອ ຍົກເວັ້ນຢູ່ໃນ ຟີລິບປິນ ບ່ອນທີ່ຂັ້ນຕອນການຫັນປ່ຽນເປັນຕົວເມືອງ ກຳລັງດຳເນີນໄປໂດຍດີ ໃນຍຸກອາເມລິກາມາຄອງເມືອງ. ເຖິງຢ່າງໃດກໍດີ ຢູ່ແຫ່ງອື່ນໆຂອງພາກພື້ນນີ້ ໃນປີທຳອິດຂອງການໄດ້ເອກະລາດນັ້ນ ຮູບແບບທີ່ຄອບງຳຢູ່ ໄດ້ປ່ຽນແປງແຕ່ພຽງເລັກນ້ອຍ ແຕ່ມາໃນລະຍະມໍ່ໆນີ້ ຜູ້ຄົນເປັນລ້ານໆໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ອົບພະຍົບໜີຈາກຊົນນະບົດ ເຂົ້າມາຢູ່ໃນເມືອງ. ພວກເຂົາຍັງເດີນທາງແລະໂຍກຍ້າຍຖິ່ນຖານອອກໄປຢູ່ຕ່າງປະເທດນຳອີກ. ມາເຖິງປີ 1985 ຜູ້ອອກແຮງງານຊາວອາຊີຕາເວັນອອກສ່ຽງໃຕ້ ຫຼາຍແສນຄົນ ສ່ວນໃຫຍ່ຈາກຟີລິບປິນ, ແຕ່ຈາກປະເທດໄທ ແລະ ອິນໂດເນເຊ ກໍມີຫຼາຍຄືກັນ, ກຳລັງເຮັດວຽກຕາມສັນຍາຈ້າງ ຢູ່ໃນປະເທດທາງຕາເວັນອອກກາງ ແລະ ເງິນສົດທີ່ພວກເຂົາໄດ້ຮັບ ກໍມີບົດບາດສຳຄັນ ຢູ່ໃນຫຼາຍເຂດຊຸມຊົນເມືອງຂອງຟີລິບປິນ ທັງກໍເຮັດໃຫ້ປະລິມານການແລກປ່ຽນເງິນຕາ ມີຄວາມສຳຄັນຂຶ້ນ ສຳລັບລັດຖະບານ.

ໃນທຳນອງດຽວກັນ ໃນບໍ່ດົນມານີ້ ຊາວອາຊີຕາເວັນອອກສຽງໃຕ້ ໂດຍສະເພາະ ມາຈາກປະເທດສະມາຄົມອາຊຽນ ໄດ້ເດີນທາງໄປຕ່າງປະເທດເພື່ອການສຶກສາ ຫຼື ເພື່ອທັດສະນາຈອນທ່ອງທ່ຽວ. ຕົວຢ່າງ ມີນັກສຶກສາລະດັບມະຫາວິທະຍາໄລ ປະມານສາມໝື່ນກວ່າຄົນ ຈາກມາເລເຊຍ ສຶກສາຕໍ່ຢູ່ຕ່າງປະເທດ ໃນປີ 1982 ຂະນະທີ່ຢູ່ໃນສະຫະລັດອາເມລິກາແຫ່ງດຽວ ກໍມີນັກສຶກສາໄທ ປະມານ 5,000 ຄົນ ເຂົ້າເຈົ້າສຶກສາຢູ່ໃນ ວິທະຍາໄລ ມະຫາວິທະຍາໄລ. ຍົກເວັ້ນປະເທດພະມ້າປະເທດດຽວ, ບັນດາປະເທດໃຫຍ່ໆ ຂອງອາຊຽນ ຕ່າງກໍມີນັກສຶກສາລະດັບມະຫາວິທະຍາໄລຫຼາຍພັນຄົນ ຂົນຂວາຍຫາທາງ ໄປຮຽນຢູ່ຕ່າງປະເທດຄືກັນ.

ຊັບສິນທີ່ມີຫຼາຍຂຶ້ນ ບວກກັບພາຫະນະຄົມມະນາຄົມ ທີ່ໄດ້ຮັບການປັບປຸງຂຶ້ນ ໃນລະຫວ່າງຊຸມປີ 1980 ນັ້ນ ໝາຍເຖິງວ່າ ມີຊາວອາຊີຕາເວັນອອກສຽງໃຕ້ຈຳນວນຫຼາຍ ເດີນທາງເຄື່ອນຍ້າຍ ໃນພາກພື້ນນີ້ຫຼາຍກວ່າແຕ່ກ່ອນ. ຕົວຢ່າງ ນັກທ່ອງທ່ຽວທີ່ໄປສິງກະໂປ ເກືອບເຄິ່ງໜຶ່ງ ມາຈາກປະເທດໃນອາຊີຕາເວັນອອກສຽງໃຕ້ ແລະ ອີກປະມານໜຶ່ງສ່ວນສີ່ ຫຼື ສອງລ້ານຄົນ ທີ່ມາປະເທດໄທນັ້ນ ກໍແມ່ນຂ້າມຊາຍແດນມາຈາກມາເລເຊຍ ນັ້ນເອງ.

ແນ່ນອນວ່າ ການອົບພະຍົບແລະການທ່ອງທ່ຽວ ເປັນໄປເອງຕາມຄວາມສະໝັກໃຈຂອງຄອບຄົວ ຫຼື ຂອງແຕ່ລະຄົນ. ໂຄງການອົບພະຍົບ ຍ້າຍຖິ່ນຖານຢູ່ ອິນໂດເນເຊຍ ຈັດໄດ້ເປັນຫຼາຍປະເພດ ນັບແຕ່ຊຸມປີ 1960 ມາ ມີຊາຍຍິງກວ່າໜຶ່ງລ້ານຄົນ ມາຈາກປະມານສາມແສນກວ່າຄອບຄົວ ໄດ້ຍົກຍ້າຍຖິ່ນຖານ ໂດຍແມ່ນລັດຖະບານຮັບຜິດຊອບຄ່າໃຊ້ຈ່າຍ ໃຫ້ອອກຈາກເກາະດອນ ທີ່ມີປະຊາກອນໜາແໜ້ນ ເຊັ່ນ ຊະວາ ບາຫຼີ ໄປຢູ່ເຂດຫ່າງໄກກວ່າ ຫຼື ບ່ອນມີປະຊາກອນໜ້ອຍຕາມໝູ່ເກາະດອນອື່ນ ເຊັ່ນ ກາລິມັນຕັນ (Kalimantan) ແລະ ໄອຽນ ຈາຢາ (Iriean Jaya) ເຖິງວ່າລັດຖະບານອິນໂດເນເຊຍ ໄດ້ໃຫ້ຄວາມສຳຄັນອັນດັບໜຶ່ງແກ່ໂຄງການນີ້ ແຕ່ກໍມີອຸປະສັກຫຼາຍຢ່າງອຸບັດຂຶ້ນ ໃນນັ້ນ ຮວມເຖິງຄວາມລັງເລໃຈຂອງຊາວອິນໂດເນເຊຍຈຳນວນຫຼວງຫຼາຍ ທີ່ອົບພະຍົບໄປຈາກບ້ານເດີມຂອງຕົນ, ຄ່າ

ໃຊ້ຈ່າຍທີ່ສູງຂຶ້ນຂອງໂຄງການ ແລະ ຫວ່າງມໍ່ໆມານີ້ ກໍມີກະແສຕໍ່ຕ້ານຜູ້ຍ້າຍເຂົ້າ ມາໃໝ່ ຈາກປະຊາຊົນທ້ອງຖິ່ນ ໂດຍສະເພາະໃນດອນ ອີຮຽນ ຈາຢາ. ຢູ່ປະເທດ ຟີລິບປິນ ການອົບພະຍົບຢູ່ພາຍໃນ ບໍ່ພຽງແຕ່ເຮັດໃຫ້ບໍລິເວນຊາຍແດນ ຢູ່ດອນມິນ ດານາວ (Mindanao) ອັ່ງອໍໄປດ້ວຍຜູ້ຄົນເທົ່ານັ້ນ ແຕ່ຍັງໄດ້ກໍ່ໃຫ້ເກີດສະພາບການ ມົ່ນມໍ່ຫຼາຍຢ່າງ, ດັ່ງຈະເຫັນວ່າ ມາຮອດ ກາງຊຸມປີ 1980 ຢູ່ເທິງດອນ ມີປະຊາກອນ ທີ່ເປັນຄຣິສ ຫຼາຍກວ່າ ມຸດສະລິມອີກ.

ຂະບວນການ ເຄື່ອນຍ້າຍປະຊາຊົນ ທີ່ໜ້າຕົກໃຈກວ່າໝູ່ໃນປະຫວັດສາດ ແຫ່ງອາຊີຕາເວັນອອກສຽງໃຕ້ ຫວ່າງບໍ່ດົນມານີ້ ແມ່ນການຫຼັ່ງໄຫຼອອກໄປຂອງຊາວ ອົບພະຍົບຈາກ ກຳປູເຈຍ ລາວ ແລະ ຫວຽດນາມ ຕັ້ງແຕ່ປີ 1975 ມາ. ໃນທົດສະ ວັດໜຶ່ງ ພາຍຫຼັງທີ່ລະບອບກອມມູນິດ ຍຶດອຳນາດ ຢູ່ໃນປະເທດເຫຼົ່ານີ້ໄດ້ ມີປະຊາ ຊົນທັ້ງຍິງຊາຍ ຫຼາຍກວ່າໜຶ່ງລ້ານຄົນ ຫຼົບໜີອອກຈາກປະເທດ ໂດຍທາງບົກ ທາງ ທະເລ ແລະ ທາງອາກາດໜ້ອຍໜຶ່ງ ເພື່ອໄປສະແຫວງຫາບ່ອນຕັ້ງຖິ່ນຖານໃໝ່ ສ່ວນ ຫຼວງຫຼາຍໄປເອີຣົບ ອົສເຕຣເລຍ ແລະ ອາເມລິກາເໜືອ. ສ່ວນໃຫຍ່ ຊາວອົບພະຍົບ ເຄີຍເປັນຜູ້ທີ່ມີສາຍສຳພັນກັບ ອາເມລິກາ ມາແຕ່ກ່ອນປີ 1975, ມີທັງຊາວຈີນທີ່ຕົ້ນ ຍ້ານ ຕໍ່ນະໂຍບາຍຂອງລັດຖະບານ ຫວຽດນາມ ນັບແຕ່ປີ 1979 ມາ ແລະ ຜູ້ອື່ນໆ ທີ່ມີແນວຄຶດໃນແງ່ລົບ ກ່ຽວກັບໂອກາດຂອງພວກເຂົາເຈົ້າ ພາຍໃຕ້ລະບອບ ສັງຄົມນິຍົມ. ມາເຖິງປາຍຊຸມປີ 1980 ການຫຼັ່ງໄຫຼອອກຈາກປະເທດທັ້ງສາມໄດ້ ຫຼຸດຜ່ອນລົງ ສ່ວນໜຶ່ງຍ້ອນວ່າ ບໍ່ມີປະເທດໃດຕ້ອນຮັບພວກເຂົາອີກ, ການສູນເສຍຜູ້ ຄົນທີ່ມີການສຶກສາດີຈຳນວນຫຼາຍ ກໍມີຜົນສະທ້ອນທາງດ້ານເສດຖະກິດແລະວັດທະ ນະທຳຢ່າງຮ້າຍແຮງ ຕໍ່ປະເທດໃນອິນໂດຈີນ. ຂະບວນການອົບພະຍົບຢູ່ພາຍໃນອາ ຊີຕາເວັນອອກສຽງໃຕ້ເອງ ກໍທະວີຂຶ້ນເຊັ່ນກັນ. ປະຊາຊົນຊາວກະຫຼ່ຽງ ຫຼາຍພັນ ໄດ້ ໂຕນໜີມາຢູ່ປະເທດໄທໃນຊຸມປີ 1980 ແລະ ຊາວກຳປູເຈຍ ຫຼາຍໝື່ນ ກໍເຊັ່ນກັນ. ສ່ວນຢູ່ທັ້ງໃນປະເທດລາວ ແລະ ກຳປູເຈຍເອງ ກໍມີຊາວອົບພະຍົບຈາກຫວຽດນາມ ເຂົ້າມາຊອກຄ້າຂາຍ ນັບເປັນຈຳນວນຫຼາຍຂຶ້ນໆ ມາຮອດກາງຊຸມປີ 1980 ຄາດວ່າ ມີຢູ່ປະມານຫຼາຍພັນຄົນ.

ການເປີດກວ້າງປະເທດ ແລະ ຂະຫຍາຍໂອກາດປະກອບອາຊີບ ກໍຍ່ອມ ຕິດຕາມດ້ວຍການ ໂຍກຍ້າຍຂອງປະຊາກອນຫຼາຍຂຶ້ນ ເປັນທຳມະດາ ນັ້ນແມ່ນພຽງ ສ່ວນໜຶ່ງຂອງປະສົບການໃໝ່ ທີ່ຊາວອາຊີຕາເວັນອອກສຽງໃຕ້ໄດ້ພົບຜ່ານ ນັບມື້ນັບ ຫຼາຍຂຶ້ນ ໂດຍສະເພາະ ຊາວໜຸ່ມ ທີ່ເຄີຍຊື່ນຊົມມາແລ້ວ ໃນຊຸມປີ 1960, 1970 ແລະ 1980. ນອກຈາກນີ້ ການຂະຫຍາຍໂອກາດທາງດ້ານການສຶກສາ ແລະ ເຄື່ອງ ອຳນວຍຄວາມສະດວກຕ່າງໆ ຢູ່ໃນອາຊີຕາເວັນອອກສຽງໃຕ້ ຍັງແມ່ນການປ່ຽນແປງ ອັນໃຫຍ່ຫຼວງກວ່າໝູ່ ທີ່ສ້າງຜົນກະທົບໃສ່ພາກພື້ນນີ້ ນັບແຕ່ສົງຄາມໂລກຄັ້ງທີ II ຍຸຕິລົງ. ໃນທາງປຶ້ນກັນ ການຂະຫຍາຍຕົວອັນນີ້ ໄດ້ຍົກລະດັບການຮູ້ໜັງສື ແລະ ຄວາມຊຳນານດ້ານເຕັກນິກວິຊາການຂຶ້ນ ໃນທົ່ວພາກພື້ນ ຕະຫຼອດເຖິງ ຄວາມຄາດ ຫວັງຂອງພວກຊາວໜຸ່ມໃນດ້ານວັດຖຸກໍສູງຂຶ້ນນຳ. ເມື່ອປະເຊີນໜ້າກັບການຂະຫຍາຍ ຕົວ ຂອງປະຊາກອນທີ່ໜຸ່ມກວ່າເກົ່າ ຫຼາຍໆປະເທດກໍໄດ້ຮັບການຕອບຮັບ ດ້ວຍການ ຈັດສັນອັດຕາງົບປະມານ ເພື່ອການສຶກສາຫຼາຍຂຶ້ນໆ. ຕົວຢ່າງ ພະມ້າ ໄດ້ອຸທິດງົບ ປະມານ 17% ຂອງງົບໃຊ້ຈ່າຍທັງໝົດ ຂອງລັດຖະບານ ໃສ່ການສຶກສາ ເມື່ອກາງຊຸມ ປີ 1980 ເປັນອັນດັບສອງ ຮອງຈາກງົບປະມານ ຂອງກະຊວງປ້ອງກັນປະເທດ.

ໃນຍຸກອານານິຄົມ ປະເທດໂຮມລັງ ກັບ ຝຣັ່ງ, ຕາມທີ່ເຮົາໄດ້ຮູ້ມາ, ເປັນຜູ້ ປະຢັດລະອຽດລະອໍພິເສດ ໃນການໃຊ້ຈ່າຍເພື່ອການສຶກສາ. ອັງກິດ ຄິ່ວ່າໃຈກວ້າງ ກວ່າຕໍ່ມາເລເຊຍ ແລະ ພະມ້າ ເຖິງວ່າການສຶກສາລະດັບສູງກວ່າປະຖົມຂຶ້ນໄປ ຖືກ ສະຫງວນໄວ້ສະເພາະຄົນໃນເມືອງ ແລະ ຜູ້ຮັ່ງມີໃນສັງຄົມ ເປັນສ່ວນໃຫຍ່ ຢ່າງໃດກໍ ດີ ໃນປະເທດຟີລິບປິນ ອາເມລິກາໃຫ້ຄວາມສຳຄັນ ຕໍ່ການຂະຫຍາຍເຄື່ອງອຳນວຍ ຄວາມສະດວກ ແລະ ການເຂົ້າເຖິງມັນ ຈົນວ່າ ມາຮອດປີ 1945 ໝູ່ເກາະດອນ ເຊິ່ງໃນເວລານັ້ນ ມີມະຫາວິທະຍາໄລທີ່ເກົ່າແກ່ກວ່າໝູ່ໃນພາກພື້ນອາຊີຕາເວັນອອກ ສຽງໃຕ້ຢູ່ແລ້ວ ໄດ້ກາຍເປັນປະເທດໜຶ່ງ ເຊິ່ງມີສະຖາບັນການສຶກສາຫຼາກຫຼາຍສາຂາ ກວ້າງຂວາງທີ່ສຸດ ແລະເປັນແຫຼ່ງເຕົ້າໂຮມຍິງຊາຍຜູ້ມີການສຶກສາ ທີ່ໃຫຍ່ພໍສົມຄວນ. ທ່າອຽງອັນນີ້ ຍັງຄົງສືບຕໍ່ເປັນ ມາຮອດຫວ່າງມໍ່ໆນີ້ ຢູ່ໃນປີ 1982 ຢູ່ປະເທດຟີລິບປິນ ນັກສຶກສາລະດັບວິທະຍາໄລ ແລະ ມະຫາວິທະຍາໄລ ມີ 1.3 ລ້ານຄົນ ປຽບໃສ່

ກັບ ອິນໂດເນເຊ ເຊິ່ງມີແຕ່ 616.000 ຄົນ ເທົ່ານັ້ນ ເຖິງວ່າອິນໂດເນເຊ ມີປະຊາ ກອນຫຼາຍກວ່າ ຟີລິບປິນ ຮອດສອງເທົ່າເຄິ່ງກໍຕາມ.

ການໃຊ້ຈ່າຍ ເພື່ອການສຶກສາໃນລະດັບປະຖົມ ຢູ່ອາຊີຕາເວັນອອກສ່ຽງໃຕ້ ໃນຍຸກຫຼັງສົງຄາມໂລກຄັ້ງທີ II ມີຄວາມສຳຄັນທີ່ສຸດ ດ້ວຍວ່າປະຊາກອນ ທີ່ຢູ່ໃນ ໄວຮຽນ ໂດຍສະເພາະໃນເຂດຊົນນະບົດ ມີຫຼາຍກວ່າເຄິ່ງ ໃນເວລານັ້ນ ມີທ່າອ່ຽງ ວ່າຢາກຮຽນຕໍ່ຂັ້ນມັດທະຍົມ. ຕົວເລກຂອງຜູ້ເຂົ້າຮຽນຂັ້ນປະຖົມ ໃນປະເທດທີ່ມີປະ ຊາກອນເທົ່າໆກັນ ໃກ້ຄຽງກັນຫຼາຍ ໃນຊຸມປີ 1980, ມີເດັກນ້ອຍຍິງຊາຍ ປະມານ ແປດລ້ານຄົນ ເຂົ້າໂຮງຮຽນປະຖົມ ຢູ່ປະເທດຟີລິບປິນ ປະເທດໄທ ແລະ ຫວຽດ ນາມ. ຈຳນວນນັກຮຽນຂັ້ນມັດທະຍົມ ຢູ່ຫວຽດນາມ (3.7 ລ້ານ) ສູງກວ່າຢູ່ໃນສອງ ປະເທດນັ້ນ (ປະເທດລະ 2.3 ລ້ານຄົນ) ແລະ ຄວາມແຕກຕ່າງນີ້ ຍິ່ງຈະແຈ້ງຂຶ້ນອີກ ໃນລະດັບອຸດົມສຶກສາ (ມະຫາວິທະຍາໄລ). ປະເທດໄທ ມີນັກສຶກສາເທົ່າກັບປະມານ ເຄິ່ງໜຶ່ງຂອງ ຟີລິບປິນ ແລະ ຫວຽດນາມ ກໍມີໜ້ອຍກວ່າ ເຄິ່ງໜຶ່ງຂອງປະເທດໄທ.

ທຸກໆປະເທດມີສ່ວນໃນການເຮັດໃຫ້ວຽກງານການສຶກສາ ເບ່ັງບານເຕີບໃຫຍ່ ຈົນກາຍເປັນເອກະລັກ ຂອງລະຍະເຄິ່ງສຸດທ້າຍຂອງສະຕະວັດທີຊາວ. ຕົວຢ່າງ ຢູ່ ຫວຽດນາມ ໃນປີ 1985 ປະຊາຊົນຫຼາຍກວ່າ 13 ລ້ານຄົນ ຫຼື ປະມານໜຶ່ງ ສ່ວນສີ່ຂອງປະຊາກອນທັງໝົດ ພວມຮຽນໜັງສືຢູ່: ປະມານ 130.000 ຄົນ ກຳລັງ ຮຽນໃນລະດັບວິທະຍາໄລ ຫຼື ມະຫາວິທະຍາໄລ ແບບໃດແບບໜຶ່ງ. ກຸງຮ່າໂນຍ ໃນປີ 1954 ມີສະຖາບັນການສຶກສາລະດັບສູງ ຢູ່ພຽງສອງແຫ່ງເທົ່ານັ້ນ ຕໍ່ມາອີກ 30 ປີ ມີສະຖາບັນການສຶກສາຊັ້ນສູງ ເຖິງ 31 ແຫ່ງ. ເພື່ອຕອບສະໜອງຄວາມຕ້ອງການ ດ້ານຄວາມສະເໝີພາບ ທາງການສຶກສາຢູ່ໃນທຸກພາກພື້ນ ຂອງປະເທດ ລັດຖະບານ ຫຼາຍຊຸດ ຍັງໄດ້ພະຍາຍາມກະຈາຍການສຶກສາອອກສູ່ຊົນນະບົດ, ຕົວຢ່າງ ຢູ່ໃນປະ ເທດພະມ້າ ໄດ້ພັດທະນາ ລະບົບການຮຽນອອກທາງກວ້າງ ໂດຍທາງໄປສະນີ. ໂທລະ ພາບກໍຖືກຊົມໃຊ້ ເປັນສື່ການຮຽນການສອນ ເຊັ່ນດຽວກັນ.

ຢູ່ຕາມເກາະດອນຂອງຟິລິບປິນ ໂຮງຮຽນສາສະໜາຄາໂທລິກ ຍັງສືບຕໍ່ມີບົດບາດສຳຄັນຢູ່. ການຂະຫຍາຍການສຶກສາໃນອາຊີຕາເວັນອອກສຽງໃຕ້ ມີທ່າອຽງວ່າຈະຕົກໄປຢູ່ໃນມືຂອງໜ່ວຍງານລັດ ນີ້ໝາຍຄວາມວ່າ ອຸດົມຄະຕິທີ່ວ່າ ໃຫ້ລັດອຸ້ມຊູນັ້ນ ໄດ້ຖືກເນັ້ນໜັກຢູ່ໃນຫຼັກສູດການສອນໃນໂຮງຮຽນ ອັນເປັນການເສີມທ່າແຮງໃຫ້ ມຸ່ງສູ່ລັດທິຜະເດັດການ ແລະໃຫ້ມີຄວາມເປັນເອກະພາບ ແລະຄວາມຮູ້ສຶກສະເໝີພາບກັນ ໃນທ່ວປະເທດ. ຕົວຢ່າງ ໃນມາເລເຊຍ ຊົນເຜົ່າມາເລ ໄດ້ຮັບການສະໜັບສະໜຸນ ໃຫ້ຮຽນສູງຂຶ້ນໆ ເພື່ອປະຕິບັດຕາມກົດໝາຍລັດຖະທຳມະນູນ ແລະເພື່ອແກ້ໄຂຄວາມບໍ່ສົມດຸນໃນອະດີດ ຂະນະທີ່ລັດທິຂົງຈື້ ກໍໄດ້ເກີດໂດດເດັ່ນຂຶ້ນ ໃນການສອນການຮຽນພາສາອັງກິດ ໃນໂຮງຮຽນຢູ່ສິງກະໂປ. ມາຮອດຊຸມປີ 1990 ລັດທິມາກສ໌ ເລນິນ (Marxism-Leninism) ໄດ້ຖືກນຳເຂົ້າມາສິດສອນຢູ່ໃນທ່ວໂຮງຮຽນມັດທະຍົມຂອງປະເທດໃນອິນໂດຈີນ. ຢູ່ອາຊີຕາເວັນອອກສຽງໃຕ້ ກໍຄ້າຍຄືກັບຢູ່ພາກອື່ນໆຂອງໂລກສະໄໝໃໝ່, ທຳອິດ ລັດຖະບານມັກຫັນໄປຫາການສຶກສາ ເພື່ອໃຊ້ເປັນເຄື່ອງມືປັບປຸງສັງຄົມເພື່ອ “ແກ້ໄຂ” ບັນຫາຄວາມບໍ່ເທົ່າທຽມກັນ ທາງດ້ານສັງຄົມແລະເສດຖະກິດ ດ້ວຍການເປີດໂອກາດໃຫ້ກຸ່ມຕ່າງໆ ເຊິ່ງໃນເມື່ອກ່ອນ ຖືກຈຳແນກແບ່ງຊັ້ນ ຫຼື ເພື່ອອົບຮົມສຶກສາ ເອົາກຸ່ມແຕກແຍກຍົບຍ່ອຍທັງຫຼາຍ ເຂົ້າສູ່ວັດທະນະທຳແຫ່ງຊາດ ຢ່າງເປັນທາງການ ອັນດຽວກັນ.

ຢ່າງໃດກໍດີ ເມື່ອຕົ້ນຊຸມປີ 1970 ຢູ່ປະເທດໄທ ກຳປູເຈຍ ແລະ ອິນໂດເນເຊຍ ຄວາມສອດຄ່ອງ ລະຫວ່າງ ອຸດົມການຂອງລັດ ແລະ ຫຼັກສູດການຮຽນການສອນ ຂາດສະບັ້ນຈາກກັນ, ນັກສຶກສາມະຫາວິທະຍາໄລ ອອກມາເດີນປະທ້ວງລັດຖະບານຂອງຕົນ. ຢູ່ປະເທດໄທ ພວກເຂົາເຈົ້າປະສົບຄວາມສຳເລັດ ໃນການຈັດຕັ້ງເງື່ອນໄຂເພື່ອໂຄ່ນລົ້ມລັດຖະບານ. ສິ່ງທີ່ຖືກບິດເບືອນຫຼາຍ ກໍແມ່ນ ເລື່ອງນັກສຶກສາມີສ່ວນພົວພັນກັບ ດາກວາທ໌ (dakwah) ຫຼື ຂະບວນການຟື້ນຟູສາສະໜາອິດສະລາມຢູ່ມາເລເຊຍ (ໂດຍສະເພາະແລ້ວ ແມ່ນຜ່ານຂະບວນການຊາວໜຸ່ມອິດສະລາມມາເລເຊຍ, Malaysia Islamic Youth Movement - ABIM) ມັນໄດ້ກາຍເປັນກຳລັງແຮງອັນສຳຄັນ ແຫ່ງຂະບວນການນັ້ນ ໃນການຕຳນິຕິຕຽນນະໂຍບາຍຕ່າງໆ

ຂອງລັດຖະບານ. ພວກນັກສຶກສາໄດ້ລົງມືຕໍ່ຕ້ານໂດຍກົງ ເພື່ອໂຄ່ນລົ້ມ ເຟີດິນັນ ມາກັອສ ຢູ່ປະເທດຟີລິບປິນ ເມື່ອປີ 1986 ແຕ່ເມື່ອເບິ່ງລວມແລ້ວ ການທີ່ລັດຖະບານ ຈະຍຸຕິຂະບວນການຂອງນັກສຶກສາ ຫຼື ຂັບໄລ່ນັກສຶກສາອອກຈາກມະຫາວິທະຍາໄລ ຫຼື ຮ້າຍໄປກວ່ານັ້ນ ແມ່ນທຳລາຍອະນາຄົດດ້ານວຽກເຮັດງານທຳຂອງພວກເຂົາ ກໍ ພຽງແຕ່ຈ່ອງດຶງຫ້າມລໍ້ ຂອງຂະບວນນັກສຶກສາໄວ້ຊົ່ວຄາວ ທ່ໍນັ້ນເອງ.

ການພັດທະນາດ້ານສະຕິປັນຍາທີ່ສຳຄັນ ເຂັ້ມຂຸ້ນຂຶ້ນ ພາຍຫຼັງປີ 1970 ຫຼື ທີ່ຖືວ່າ ແມ່ນການເຕີບໃຫຍ່ລະດັບຊາດຂອງປະຫວັດສາດ ແລະ ວິທະຍາສາດການ ເມືອງ ແລະ ຜູ້ຄົນທີ່ອາໄສຢູ່ປະເທດໃນອາຊີຕາເວັນອອກສຽງໃຕ້ແຫ່ງນີ້, ສາມາດເຮັດ ໃຫ້ເຫັນໄດ້ວ່າ ທິດສະດີດ້ານການພັດທະນາເສດຖະກິດ ໄດ້ກາຍເປັນຂອງທ້ອງຖິ່ນ. ຊາວອາຊີຕາເວັນອອກສຽງໃຕ້ຫຼາຍໝື່ນຄົນ ໄດ້ໄປສຶກສາຮ່ຳຮຽນລະດັບປະລິນຍາໂທ ໃນປະເທດຕາເວັນຕົກ ສ່ວນອີກຫຼາຍພັນຄົນຈາກຫວຽດນາມ ລາວ ແລະ ກຳປູເຈຍ (ແລະອີກຫຼາຍຮ້ອຍຄົນຈາກພະມ້າ ໃນຊຸມປີ 1960 ແລະ 1970) ກໍໄປສຶກສາທີ່ອະດີດ ສະຫະພາບໂຊວຽດ ຣັດເຊຍ ແລະ ເອີຣົບຕາເວັນຕົກ. ເມື່ອໄດ້ກັບມາຮັບຕຳແໜ່ງໃນ ມະຫາວິທະຍາໄລ ນັກສຶກສາເຫຼົ່ານີ້ ບາງຄົນກໍໄດ້ເປັນອາຈານສອນ ຫຼື ບາງຄົນກໍ ເປັນນັກຄົ້ນຄວ້າ ໄດ້ພັດທະນາໂຄງການຫຼັກສູດ ສຳລັບລະດັບປະລິນຍາຕີ ແລະ ໂທ ໃນສາຂາມະນຸດສາດ ແລະ ສັງຄົມສາດ ທີ່ຕອບສະໜອງຄວາມຕ້ອງການຂອງທ້ອງ ຖິ່ນ ແລະ ເລືອກເຟັ້ນເອົາທິດສະດີຕ່າງປະເທດ ເຂົ້າມາໝູນໃຊ້ໃນປະເທດຂອງພວກ ເຂົາເຈົ້າ. ຕົວຢ່າງ ໃນຊຸມປີ 1970 ແລະ ຊຸມປີ 1980 ໄດ້ເກີດມີຄວາມສົນໃຈ ໃນປະຫວັດສາດໄທ ຄືນມາໃໝ່ ຢູ່ມະຫາວິທະຍາໄລຕ່າງໆຂອງໄທ ແລະ ພັດທະນາ ການຄ້າຍຄືກັນນີ້ ກໍມີໃຫ້ເຫັນຢູ່ໃນມະຫາວິທະຍາໄລຂອງຫວຽດນາມ ຟີລິບປິນ ແລະ ຢູ່ ອິນໂດເນເຊຍ ເຖິງວ່າຈະບໍ່ເຂັ້ມຂຸ້ນປານໃດກໍຕາມ. ຢ່າງໃດກໍດີ ຄວາມຕື່ນຕົວທາງ ສະຕິປັນຍາ ຂອງບັນດາມະຫາວິທະຍາໄລໃນບາງປະເທດ ເຖິງວ່າ ບໍ່ໄດ້ສິ່ງປະກາຍ ວັບແວບຂຶ້ນກໍຕາມ ເຊັ່ນວ່າ ຢູ່ໃນພະມ້າ ແລະ ມາເລເຊຍ ແຕ່ການສຶກສາດ້ານ ປະຫວັດສາດ ກໍປ່ຽນແປງໄປ ເຖິງວ່າຊ້າໆ ແຕ່ກໍປ່ຽນໄປຈາກຮູບແບບຂອງຍຸກຊຸມປີ 1950.

ການຂຸນໂຄງຮ່າງປະຫວັດສາດ ແລະ ເອກະລັກແຫ່ງຊາດ ຂອງອາຊີຕາເວັນ ອອກສຽງໃຕ້ ດຳເນີນໄປຄວບຄູ່ກັບຄວາມຮູ້ສຶກທີ່ກຳລັງເຕີບໃຫຍ່ຂຶ້ນ ໃນຖານະເປັນ ພາກພື້ນໜຶ່ງ ຄືມັນແມ່ນຂະບວນການໜຶ່ງ ທີ່ໄດ້ຮັບການສົ່ງເສີມ ດ້ວຍຄວາມສຳເລັດ ຂອງອາຊຽນ ແລະ ການນຳພາແບບໃຊ້ສະຕິປັນຍາ ຂອງມະຫາວິທະຍາໄລຕ່າງໆ ແລະໜ່ວຍງານສຶກສາຄົ້ນຄວ້າຕ່າງໆ ເຊັ່ນ ສະຖາບັນຄົ້ນຄວ້າກ່ຽວກັບອາຊີຕາເວັນ ອອກສຽງໃຕ້ ຂອງສິງກະໂປ, ສະຖາປະນາຂຶ້ນໃນຊຸມປີ 1960 ແລະ ສູນຄົ້ນຄວ້າ ຍຸດທະສາດ ແຫ່ງຊາດ ອີກຫຼາຍບ່ອນ, ມີກອງປະຊຸມສຳມະນາປະຈຳພາກພື້ນ ສຳລັບ ນັກວິຊາການ ນັກທຸລະກິດ ແລະພະນັກງານລັດ ບໍ່ຮູ້ວ່າເທົ່າໃດຄັ້ງ. ຢ່າງໃດກໍດີ ບໍ່ ຄວນເວົ້າໂຍກໂພດເກີນໄປ ກ່ຽວກັບລະດັບການປ່ຽນແປງນີ້. ສຳລັບຊາວອາຊີຕາເວັນ ອອກສຽງໃຕ້ ເກືອບທັງໝົດ ເມື່ອກ່ອນຊຸມປີ 1980 ນັ້ນ ໂລກໜ່ວຍນີ້ ຍັງຄົງຖືກ ຈຳກັດດ້ວຍເສັ້ນຊາຍແດນ ລະດັບທ້ອງຖິ່ນ ແລະລະດັບປະເທດຢູ່.

ການຂະຫຍາຍຕົວຢ່າງມະຫາສານ ຂອງໂອກາດທາງການສຶກສາ ໃນອາຊີ ຕາເວັນອອກສຽງໃຕ້ ລຸນຫຼັງສົງຄາມ ໄດ້ເດີນໄປພ້ອມໆກັບການພັດທະນາ ແບບດຽວ ກັນກັບຢູ່ບ່ອນອື່ນໆໃນອາຊີ ອາຟຣິກາ ແລະ ອາເມລິກາລາຕິນ. ລາຍງານຂອງ ທະນາຄານໂລກປີ 1980 ຄາດຄະເນວ່າ ຈຳນວນສະເລ່ຍຂອງເດັກນ້ອຍໃນໄວຮຽນ ເຊິ່ງກຳລັງຮຽນຢູ່ໂຮງຮຽນຂັ້ນປະຖົມ ໃນປະເທດໂລກທີສາມ ມີເຖິງ 62% ຕໍ່ປີ ນັບ ແຕ່ປີ 1960 ມາ. ປະເທດທີ່ນັບຖືອິສລາມ, ຂົງຈື້, ໂຮມັນຄາໂທລິກ ແລະ ສາສະ ໜາພຸດ ນິກາຍເຖຣະວາດ ໃນອາຊີຕາເວັນອອກສຽງໃຕ້ນີ້ ມັກໃຫ້ຄວາມສຳຄັນແກ່ ການສຶກສາສະເໝີ ແຕ່ໂດຍທົ່ວໄປ ກໍເບິ່ງການສຶກສາ ໃນຄວາມໝາຍຂອງການຮຽນ ຮູ້ສະເພາະບຸກຄົນຫຼາຍກວ່າ ເປັນສິ່ງຮັບປະກັນຄວາມກ້າວໜ້າຂອງສ່ວນໂຮມ, ປະ ເທດຟິລິບປິນ ເປັນອີກແບບໜຶ່ງ ທີ່ຢູ່ນອກເໜືອຈາກການຕີລາຄາແບບກວມລວມອັນ ນີ້.

ດັ່ງທີ່ເວົ້າໄວ້ຂ້າງເທິງ ການຄາດຄະເນດ້ານຈຳນວນປະຊາກອນ ສຳລັບປະ ເທດອາຊີຕາເວັນອອກສຽງໃຕ້ ຍົກເວັ້ນ ສິງກະໂປ ຊີ້ໃຫ້ເຫັນວ່າ ຈະມີປະຊາກອນ

ໜຸ່ມກວ່າເກົ່າ ຢູ່ໃນປະເທດໃນພາກພື້ນນີ້ ສຳລັບອະນາຄົດ ທີ່ເຫຼືອໃນສະຕະວັດທີ 20. ແນ່ນອນເລື່ອງນີ້ ຈະສ້າງຂີດຈຳກັດ ໃຫ້ແກ່ການອຳນວຍຄວາມສະດວກສຳລັບການສຶກສາທີ່ມີຢູ່ ແລະໂຍນພາລະໄປໃສ່ນັກວາງແຜນ ແລະງົບປະມານແຫ່ງຊາດຢ່າງແນ່ແທ້. ໃນເວລາດຽວກັນ ເບິ່ງຄືວ່າ ຜູ້ນຳຫຼາຍຄົນຂອງປະເທດໃນອາຊີຕາເວັນອອກສຽງໃຕ້ ຕະຫຼອດທັງຜູ້ຄົນທັງຊາຍແລະຍິງທຳມະດາສາມັນ ຍັງຄົງສືບຕໍ່ໃຫ້ບຸລິມະສິດສູງ ແກ່ໂອກາດທາງການສຶກສາສຳລັບລູກຫຼານຂອງພວກເຂົາຢູ່. ເຖິງວ່າ ພວກນັກສຶກສາໃນເກນອາຍຸເຂົ້າມະຫາວິທະຍາໄລ ກາງຕໍ່ການປ່ຽນແປງແບບດຽວກັນໝົດ ຈົນສ້າງຄວາມກົດດັນ ຕໍ່ອຳນາດການປົກຄອງຜະເດັດການ ທີ່ເຄີຍໄດ້ລະເມີດຄຳຂວັນຂອງຕົນເອງ ຢູ່ໃນທົ່ວພາກພື້ນ ມາຮອດຊຸມທ້າຍປີ 1980 ອຳນາດການປົກຄອງຂອງຫຼາຍໆປະເທດ ກໍໄດ້ສະແດງເຈດຈຳນົງວ່າຈະແກ້ໄຂເລື່ອງນີ້ ເພື່ອໃຫ້ບັນລຸເປົ້າໝາຍທາງສັງຄົມ ເສດຖະກິດ ແລະ ຄວາມປອດໄພຂອງພວກເຂົາ.

ເຖິງວ່າ ໄດ້ມີການພັດທະນາທາງດ້ານເສດຖະກິດ ຢູ່ໃນອາຊີຕາເວັນອອກສຽງໃຕ້ ແລະ ການຂະຫຍາຍຕົວ ໃນເລື່ອງໂອກາດການມີວຽກເຮັດງານທຳ ຫຼາຍຂຶ້ນ ຢູ່ໃນໂຮງຈັກ ແລະ ທ້ອງການຕ່າງໆ ຕະຫຼອດທັງການຂະຫຍາຍໂອກາດໃນດ້ານການສຶກສາກໍດີ ຍິງຊາຍທີ່ເຮັດວຽກຢູ່ໃນປະເທດອາຊີຕາເວັນອອກສຽງໃຕ້ ໃນຊຸມປີ 1980 ຫຼາຍກວ່າເຄິ່ງໜຶ່ງ ຍັງຫາລ້ຽງຊີບດ້ວຍການກະສິກຳ ແລະ ການປະມົງ. ປະຊາກອນສ່ວນທີ່ເຫຼືອ ສ່ວນໃຫຍ່ໄດ້ເພິ່ງພາອາໄສພວກເຂົາເຈົ້າໃນສອງດ້ານ ຄືການສະໜອງອາຫານໃຫ້ທຸກຄົນໃນຊາດ ແລະ ພວກເຂົາເຈົ້າຍັງເປັນຕະຫຼາດສຳຄັນ ສຳລັບສິນຄ້າຜະລິດຈາກໂຮງງານ ແລະ ການບໍລິການ ທີ່ຈັດຫາໃຫ້ ໂດຍຄົນໃນເມືອງ ຈຳນວນໜ້ອຍດຽວ. ໃນປະເທດທີ່ກວ້າງໃຫຍ່ທັງຫຼາຍ ມາຮອດປີ 1983 ມີແຕ່ມາເລເຊຍ ປະເທດດຽວ ທີ່ປະຊາຊົນໜ້ອຍກວ່າເຄິ່ງໜຶ່ງ ຍັງຢູ່ກັບດິນ. ໃນພະມ້າ ແລະ ຫວຽດນາມ ເຖິງວ່າພວກລັດຖະບານ ໄດ້ມີຄວາມພະຍາຍາມເພື່ອຈັດຕັ້ງໂຄງສ້າງໃໝ່ສຳລັບເສດຖະກິດ ແຕ່ກໍຍັງມີ ປະຊາກອນປະມານ 65% ແລະ 71% ຕາມລຳດັບ ທຳມາຫາລ້ຽງຊີບຢູ່ກັບດິນ ໃນກາງຊຸມປີ 1980.

ຕາມປະຫວັດສາດ ປະຊາຊາດໃນອາຊີຕາເວັນອອກສ່ຽງໃຕ້ ຜູ້ປູກຝັ່ງ ຜະລິດ ອາຫານຂອງຕົນເອງ ຖືກກຳໜົດວ່າເປັນຊາວນາ ແລະ ປັດຈຸບັນນີ້ ກໍຍັງເປັນຈັ່ງຊັ້ນ ແຕ່ໃນຕົວຈິງ ສະພາບການເຮັດວຽກຂອງພວກເຂົາ ແລະຕາໜ່າງສາຍຜູກພັນທາງ ດ້ານເສດຖະກິດ ກັບທາງການເມືອງ ເຊິ່ງພວກເຂົາເຈົ້າຕ້ອງເປັນເຈົ້າການໃນບັດນີ້ນັ້ນ ແຕກຕ່າງກັນຫຼາຍ ກັບສິ່ງທີ່ມັນເຄີຍເປັນ ເມື່ອຫ້າສິບປີກ່ອນໜ້ານີ້. ເຖິງແມ່ນວ່າ ເຮົາ ອາດສັງລວມສະພາບກ່ຽວກັບ ຊີວິດທາງເສດຖະກິດຂອງຊົນຊັ້ນຊາວນາ ໃນເຂດອາຊີ ມໍລະສຸມ ໃນຊຸມປີ 1980 ໄດ້ ແຕ່ມາບັດນີ້ ບໍ່ມີໃຜສາມາດເຮັດໄດ້ແນວນັ້ນແລ້ວ. ຜົນສະທ້ອນຈາກລັດທິອານານິຄົມ ແລະ ນະໂຍບາຍທາງເສດຖະກິດ ແລະ ການ ກະສິກຳຂອງລັດຖະບານ ບວກໃສ່ການປ່ຽນແປງທາງດ້ານເຕັກໂນໂລຊີ ສຳລັບການ ຜະລິດ ແລະການເກັບກ່ຽວເຄື່ອງປູກຂອງຝັ່ງ ໄດ້ກໍ່ໃຫ້ເກີດຄວາມແຕກຕ່າງກັນຢ່າງ ຫຼວງຫຼາຍ ຢູ່ໃນຊີວິດການເປັນຢູ່ຂອງຊາວນາ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ບັດນີ້ ມັນບໍ່ແມ່ນເງື່ອນໄຂທາງພູມອາກາດ ທີ່ເປັນຕົວກຳນົດຕົ້ນຕໍອີກແລ້ວ ວ່າໃນລະ ຫວ່າງປີໜຶ່ງໆ ຄອບຄົວໃດ ຈະມີພໍຢູ່ພໍກິນ ຫຼື ອຶດຢາກ ແຕ່ມັນມີປັດໄຈອື່ນໆເຂົ້າມາ ກ່ຽວຂ້ອງນຳ.

ເຖິງຢ່າງໃດກໍດີ ມີທ່າອ່ຽງໜຶ່ງ ເຊິ່ງເຄີຍມີມາແລ້ວເມື່ອຮ້ອຍປີກ່ອນ ຍັງສືບຕໍ່ ຄົງຕົວຢູ່ ແລະ ເບິ່ງຄືວ່າ ກຳລັງເລັ່ງຈ້າວຂຶ້ນອີກຊ້ຳ ໃນການປ່ຽນແປງຢູ່ໃນອາຊີຕາເວັນ ອອກສ່ຽງໃຕ້ນີ້. ຜົນສະທ້ອນຂອງທ່າອ່ຽງນີ້ ສາມາດພົບເຫັນໄດ້ທົ່ວໄປໃນພາກພື້ນນີ້.

ພວກເຮົາໝາຍເຖິງ ການສິ້ນສຸດຂອງຮູບແບບສາຍຜູກພັນ ລະຫວ່າງເຈົ້າຂອງ -ຜູ້ເຊົ່າ ເຊິ່ງເປັນພື້ນຖານດ້ານເສດຖະກິດ ບໍ່ພຽງແຕ່ຂອງຊາວນາ ແຕ່ຍັງເປັນຂອງ ລັດຖະບານ ນຳອີກ. ແລະຮູບແບບອື່ນໆຂອງຊີວິດສັງຄົມ ໃນໂລກຍຸກກ່ອນລັດທິ ອານານິຄົມ ເຊິ່ງໄດ້ພັນລະນາໄວ້ໃນປຶ້ມຊຸດນີ້ ແຕ່ຕົ້ນພຸ້ນແລ້ວ. ການກະສິກຳແບບ ອຸດສະຫະກຳ ແມ່ນອີງໃສ່ ການໄດ້ກຳໄລ ຫຼືຂາດທຶນ ຫຼາຍກວ່າ ການຊົມໃຊ້ແລະ ບໍລິໂພກ, ມັນເຮັດໃຫ້ສາຍຜູກພັນຕາມລະບົບອຸປະຖຳ ຫຼາຍໆຮູບແບບ ຂອງພວກ ຊາວນາ ພັງທະລາຍລົງ. ຕົວຢ່າງຢູ່ໃນເຂດສາມຫຼ່ຽມປາກແມ່ນ້ຳໃນພະມ້າ ອັນພາໄປ

ສູ່ການສະຖາປະນາເສດຖະກິດຂອງຊາວນາ ໃນຮູບແບບໃໝ່ ທີ່ອີງໃສ່ເງິນສິດແລະ ເສດຖະກິດສິນຄ້ານັ້ນເອງ.

ການປ່ຽນແປງຢ່າງໄວວາ ຂອງປະເທດພະມ້າ ເປັນຕົວຢ່າງໜຶ່ງສຳລັບປະເທດ ອື່ນໆນຳ ດ້ວຍວ່າການປ່ຽນແປງເກີດຂຶ້ນດ້ວຍວິຖີທາງຕ່າງກັນ. ພວກຊາວນາໃນຊະວາ ໄດ້ຮັບການ "ປົກປ້ອງ" ເປັນການຊື່ວຄາວ ໂດຍຊາວໂຮນລັງ ຈາກແຮງທຳລາຍຂອງ ເສດຖະກິດຕະຫຼາດ ແລະ ເຊັ່ນດຽວກັນ ຊາວນາມາເລ ໃນທີ່ວດອນແຫຼມມາລາຢູ ກໍມີອົງກິດຄຸ້ມຄອງ. ພວກເຈົ້າທີ່ດິນຂະໜາດໃຫຍ່ ໃນຟີລິບປິນ ຍັງຄົງສືບຕໍ່ສະແດງ ທ່າທີແບບພໍ່-ລູກ ກັບຜູ້ເຊົ່າດິນຂອງຕົນ ໂດຍປົກປ້ອງພວກເຂົາບໍ່ໃຫ້ຂາດເຂີນທາງ ເສດຖະກິດ ໜ້ອຍໜຶ່ງ ແຕ່ສ້າງສາຍຜູກພັນ ໃຫ້ມີຄວາມພັກດີຕໍ່ກັນ ແບບສ່ວນຕົວຂຶ້ນ ລະຫວ່າງພວກເຂົາເອງ ກັບຄອບຄົວແຮງງານຮັບຈ້າງຂອງຕົນ. ແມ່ນແຕ່ ໃນຍຸກອານາ ນິຄົມ. ລັດຖະບານຝຣັ່ງຜູ້ຫິວໂຫຍ ກໍບໍ່ເຄີຍມ້າງເພສາຍສຳພັນ ລະຫວ່າງຄົນກັບແຜ່ນ ດິນ ຢູ່ທາງພາກເໜືອຂອງຫວຽດນາມ, ແຕ່ອາດບໍ່ເປັນຢ່າງນັ້ນ ຢູ່ໃນພາກໃຕ້.

ຢ່າງໃດກໍດີ ການເຕີບໃຫຍ່ທາງການຄ້າໃນເສດຖະກິດຂອງອາຊີຕາເວັນອອກ ສຽງໃຕ້ ນັບແຕ່ປີ 1945 ມາ ໄດ້ປ່ຽນແປງສາຍສຳພັນເຫຼົ່ານັ້ນໄປຢ່າງເລິກເຊິ່ງເຖິງ ຖອງ. ຊາວນາຢູ່ເຂດທົ່ງຮາບ ໃນພາກກາງຂອງປະເທດໄທ ເລີ່ມຕົ້ນປະສົບການຂອງ ພວກເຂົາເມື່ອຊຸມປີ 1960 ແລະ 1970 ໃນເລື່ອງຄວາມໝັ້ນຄົງຂອງການເຊົ່າດິນ ແລະ ການດຳລົງຊີວິດທີ່ຊາວນາໃນພະມ້າ ໄດ້ປະສົບພົບພໍ້ມາແລ້ວ ແຕ່ຊຸມປີ 1920 ແລະ ຊຸມປີ 1930. ພວກຄົນໃນເມືອງ ໃຊ້ເງິນລົງທຶນໃສ່ທີ່ດິນ ອັນເປັນການລົງທຶນ ເພື່ອປ້ອງກັນເງິນເຟີ້ ຫຼື ນັກພັດທະນາ "ທຸລະກິດດ້ານກະສິກຳ" ກໍຫາທາງຍຶດຄອງ ທີ່ດິນ ໂດຍເຊື່ອວ່າ ວິທີການນີ້ ສາມາດຊ່ວຍຍົກປະສິດທິພາບໃນການຜະລິດຂຶ້ນ. ດັ່ງນັ້ນ ຈຶ່ງມີຊາວນາຫຼາຍພັນຄົນ ພົບວ່າ ຕົນເອງຖືກບັງຄັບໃຫ້ອອກໜີຈາກທີ່ດິນຂອງ ຕົນ ໂດຍບຸກຄົນເອກະຊົນຜູ້ມີເງິນ ແລະ ມີປະສົບການ ຕາມວິທີການຂອງລັດຖະບານ ໂດຍມີກົດໝາຍໜຸນຫຼັງ.

ປະສົບການຂອງຊາວນາໄທ ເກີດຂຶ້ນແບບບໍ່ມີຊ້ຳຮອຍໄດ້ຢູ່ບ່ອນອື່ນເລີຍ ແຕ່ ຄວາມບໍ່ໝັ້ນຄົງຂອງພວກຊາວນາ ສາມາດແນມເຫັນໄດ້ ນັບມື້ນັບຫຼາຍຂຶ້ນ ພາຍ ໃຕ້ສະພາບການຕ່າງໆໃນທົ່ວພາກພື້ນ. ຕົວຢ່າງໃນປະເທດ ຟີລິບປິນ ໃນຂະນະທີ່ ເຈົ້າທີ່ດິນໃຫຍ່ ນັບມື້ນັບກ້າວິນນຳການສ້າງກຳໄລໃຫ້ສູງຂຶ້ນ ພວກເຂົາລົງທຶນໃສ່ທັ້ງ ເວລາ ແລະ ເງິນທຶນ ຫຼາຍກວ່າລົງໃສ່ແຮງງານການຜະລິດ. ດັ່ງນັ້ນ ຄວາມຕ້ອງການ ດ້ານແຮງງານ ໜ້ອຍລົງ ຢູ່ໃນທົ່ງນາຂອງເຈົ້າທີ່ດິນໃຫຍ່ ແລະ ມັກຈະມີການໃຊ້ແຮງ ງານອົບພະຍົບມາຈາກບ່ອນອື່ນ ເຊິ່ງຄ່າແຮງງານຖືກກວ່າ. ບັດນີ້ ຜົນປະໂຫຍດຂອງ ເຈົ້າທີ່ດິນເອງ ແມ່ນການເຮັດໃຫ້ພວກຜູ້ຈັດການທະນາຄານພຸ້ນ ມີຄວາມພໍໃຈຫຼາຍ ກວ່າ ໃຫ້ຊາວນາທີ່ອາໄສຢູ່ນຳພວກເຂົານັ້ນມີອາຫານການກິນພຽງພໍ, ໄດ້ຮັບການເບິ່ງ ແຍງຍາມຂັດສົນ ແລະຈະໄດ້ຊົມໃຊ້ສິດໃນການແບ່ງສ່ວນຮັບຕາມປະເພນີ ນຳເຈົ້າ ຂອງດິນ ໃນໂອກາດບຸນສະຫຼອງທາງສາສະໜາ ແລະ ທາງສັງຄົມຕ່າງໆ ຫຼືບໍ່. ການເຕີບໃຫຍ່ທາງການຄ້າຂາຍ ໄດ້ເຮັດໃຫ້ຊີວິດໃນຊົນນະບົດ ຂອງຊາວຟີລິບປິນ ວຸ່ນວາຍຫຼາຍຂຶ້ນ, ຜົນຮັບຢ່າງໜຶ່ງກໍແມ່ນ ຊາວນາມັບມື້ນັບຂາດຄວາມໄວ້ເນື້ອເຊື່ອ ໃຈຫຼາຍຂຶ້ນ ແລ້ວຈັດຕັ້ງກັນຂຶ້ນ ຕໍ່ຕ້ານກັບພວກເຈົ້າຂອງທີ່ດິນແລະລັດຖະບານ ທີ່ ສະໜັບສະໜຸນຢູ່ເບື້ອງຫຼັງຝ່າຍນາຍທຶນນີ້. ແມ່ນແຕ່ ການປະຕິຮູບທີ່ດິນ ເມື່ອດຳ ເນີນການໄປນັ້ນ ມັນບໍ່ໄດ້ປັບປຸງຄວາມໝັ້ນຄົງປອດໄພ ໃຫ້ແກ່ຊາວນາກັບຄອບຄົວ ຂອງເຂົາເລີຍ, ເພາະແທນທີ່ວ່າ ຈະຊ່ອຍສ້າງຄວາມໝັ້ນຄົງໃຫ້ພວກເຂົາ ຄືດັ່ງທີ່ລະ ບົບເກົ່າເຄີຍໃຫ້ມາແລ້ວ, ບັດນີ້ ເຂົາຕ້ອງໄດ້ຫັນປ່ຽນຕົນເອງ ໄປເປັນຜູ້ດຳເນີນກິດ ຈະການຂະໜາດນ້ອຍໆຂອງຕົນເອງ. ຍ້ອນວ່າ ພວກເຂົາເປັນເຈົ້າຂອງກິດຈະການ ນ້ອຍໆ ແລະ ບໍ່ມີເງິນທຶນພຽງພໍ ຂັ້ນທຳອິດ ພວກເຂົາອາດພົບກັບການເກັບກ່ຽວທີ່ ບໍ່ໄດ້ຜົນ ຫຼື ມີການຂຶ້ນອັດຕາດອກເບ້ຍ ເຊິ່ງຖືກສັ່ງການໂດຍກຳລັງທີ່ຢູ່ຫ່າງໄກ ແລະ ທັ້ງບໍ່ໄດ້ມີການປັບປຸງຫຍັງແບບຊ່ອຍກັນ ເຫັນອົກເຫັນໃຈກັນ ຫຼື ແມ່ນແຕ່ ດ້ວຍ ຄວາມຊື່ສັດພັກດີ ຕາມປະເພນີ.

ປຶ້ມຊື່ "ອາວຸດຂອງຄົນອ່ອນແອ", ຂອງເຈມສ໌ ສະກ໊ອດຕ໌ (Weapon of the weak, James Scott) ນຳສະເໜີລາຍລະອຽດຜົນການສຶກສາ ກ່ຽວກັບຜົນສະທ້ອນ

ຂອງການປ່ຽນແປງທາງເສດຖະກິດ ຕໍ່ຊີວິດຂອງຊາວນາມາເລເຊ ເມື່ອຊຸມປີ 1970 ແລະ ຕົ້ນຊຸມປີ 1980. ຢູ່ໃນບ້ານໜຶ່ງຂອງ ເກດາຫ໌ (Kedah) ຄວາມກ້າວໜ້າທາງ ເສດຖະກິດ ປາກົດຕົວໃນຮູບການລະບົບຊົນລະປະທານ ທີ່ຫຼາຍຂຶ້ນ ແລະການປູກ ເຂົ້າສອງຄັ້ງຕໍ່ປີ ແລະໃນຂັ້ນຕໍ່ມາ ການຊົມໃຊ້ເຄື່ອງກົນຈັກກະສິກຳ ໂດຍສະເພາະ ຢ່າງຍິ່ງ ເຄື່ອງກ່ຽວ-ຟາດ ທີ່ເປັນໜ່ວຍດຽວກັນ ອັນໄດ້ຫຼຸດຜ່ອນການໃຊ້ແຮງຂໍ້ມື ເພື່ອ ກ່ຽວແລະຟາດເຂົ້າແບບຊາວບ້ານ ປາກົດວ່າ ຜົນສະທ້ອນຕ່າງໆສັບສົນປົນເປກັນ ຫຼາຍຢ່າງ. ສຳລັບຊາວນາຜູ້ມີນາຫຼາຍ ແລະ ທຶນຮອນພຽງພໍ ທັງມີຄວາມກ່ຽວພັນ ທາງການເມືອງ ກັບຂັ້ນປົກຄອງໃນພັກ ເພື່ອຂໍຢືມເຈົ້າໜ້າທີ່ ແລະ ໜ່ວຍງານອື່ນໆ ຂອງລັດ, ການນຳໃຊ້ຈັກກ່ຽວຟາດ ຈຶ່ງໝາຍເຖິງຜົນກຳໄລທີ່ຫຼາຍກວ່າ ແລະ ໝັ້ນຄົງ ກວ່າ. ຕາມຄວາມຄາດໝາຍຂອງຊີວິດ ເຄື່ອງຈັກນັ້ນ ຊ່ວຍໃຫ້ພວກເຂົາ ແລະຄອບຄົວ ໄດ້ຊື່ນຊົມນຳ ຜົນກຳໄລເພື່ອການບໍລິໂພກ ແລະສາສະໜາ ເຊັ່ນ ການເດີນທາງໄປ ສະແຫວງບຸນທີ່ເມືອງເມກະ ແລະຊື້ລົດຈັກ ຫຼື ລົດກະບະມາໃຊ້. ແຕ່ວ່າ ສຳລັບພາກ ສ່ວນທີ່ທຸກຈົນກວ່າຢູ່ໃນບ້ານ ການປ່ຽນແປງທາງດ້ານເຕັກນິກ ຊ້ຳໝາຍເຖິງມີຄວາມ ໝັ້ນຄົງຫຼຸດໜ້ອຍລົງລະດັບໜຶ່ງ ແລະມີຄວາມຕ້ອງການຫາວຽກເຮັດຢູ່ບ່ອນອື່ນຫຼາຍ ຂຶ້ນ. ພວກແມ່ຍິງ ບໍ່ສາມາດຫາລາຍໄດ້ມາຊ່ອນຈຸນເຈືອຄອບຄົວ ດ້ວຍການເຂົ້າ ໄປຊ່ວຍວຽກເກັບກ່ຽວ ອີກຕໍ່ໄປ ແລະ ສຳລັບຜູ້ທຸກຈົນກວ່າໝູ່ ເຂົ້າທີ່ເຈົ້າຂອງນາຈະ ແບ່ງປັນໃຫ້ນັ້ນ ຕ້ອງໄດ້ຫາມາດ້ວຍວິທີການອື່ນ. ບ້ານທີ່ເຄີຍເປັນຖິ່ນຖານມະນຸດ ຜູ່ ຢູ່ຮ່ວມກັນຢ່າງເປັນເອກະພາບ ແລະ ກົມກຽວກັນ ຍັງມີຢູ່ອີກບໍ ? ນີ້ເປັນເລື່ອງ ທີ່ຍັງຖົກຖຽງກັນຢູ່, ມາເຖິງຊຸມປີ 1980 ບ້ານທີ່ ສະກ໊ອດຕ໌ ລົງໄປສຶກສາ ແລະ ບ້ານອື່ນໆອີກຫຼວງຫຼາຍ ທີ່ຄ້າຍຄືກັນ ຕະຫຼອດທັງເສດຖະກິດຕະຫຼາດຂອງ ອາຊີຕາ ເວັນອອກສຽງໃຕ້ທັງໝົດ ໄດ້ສ້າງຮູບແບບການຂັດແຍ່ງທາງຊົນຊັ້ນຂຶ້ນເອົາເອງ ແລະ ນັ້ນ ມັນໄດ້ແບ່ງແຍກຄົນຮັ່ງມີ ອອກຈາກຄົນທຸກຈົນ ຢູ່ໃນທຸກໆສັງຄົມ.

ຢ່າງໃດກໍດີ ຄວາມຢ່ອນຍານ ແຫ່ງສາຍສຳພັນແບບເຈົ້າທີ່ດິນ-ຜູ້ເຊົ່າ ຢູ່ໃນ ເຂດເສດຖະກິດຕະຫຼາດຂອງພາກພື້ນນີ້ ໄດ້ພາກັນໄປເຖິງ ຄວາມຂັດຂ້ອງໝອງໃຈ ແລະ ຄວາມບໍ່ເທົ່າທຽມກັນ ໃນຮູບແບບໃໝ່ ທີ່ຈະແຈ້ງກວ່າເກົ່າ, ສິ່ງດຽວກັນນີ້ ກໍ

ເກີດຂຶ້ນຫຼາຍ ຢູ່ໃນລະບົບເສດຖະກິດຕາມແຜນ ເຊັ່ນກັນ. ຢູ່ພະມ້າ ລັດຖະບານ ເລີ່ມດຳເນີນການມາແຕ່ຊຸມປີ 1950 ເພື່ອຮັບປະກັນ ໃຫ້ຊາວນາຫຼີກພົ້ນອອກຈາກ ຜົນສະທ້ອນ ຂອງການກະສິກຳແບບທຶນນິຍົມ ທີ່ພວກເຂົາໄດ້ຜ່ານຜ່ານມາ ເມື່ອຢູ່ພາຍ ໃຕ້ອັງກິດ. ຢ່າງໃດກໍດີ ໃນຊຸມປີທຳອິດ ການກະສິກຳແບບສັງຄົມນິຍົມ ເບິ່ງຄືວ່າ ບໍ່ມີ ຄວາມໝາຍຫຼາຍໄປກວ່າ ການສັບປ່ຽນໂຮງສີເຂົ້າ ຂອງອິນເດຍ ຫຼື ອັງກິດ ມາເປັນ ການຮັບຊື້ເຂົ້າ ໂດຍໜ່ວຍງານຂອງລັດຖະບານ, ໃນປີ 1963 ລັດຖະບານກໍໄດ້ ດຳເນີນບາດກ້າວ ທີ່ເລິກເຊິ່ງກວ່າເກົ່າ ເພື່ອປ່ຽນແປງເງື່ອນໄຂເສດຖະກິດ ຂອງຄອບ ຄົວຊາວນາ ດ້ວຍການໃຊ້ກົດໝາຍລົບລ້າງໜີ້ສິນຂອງຊາວນາທັງໝົດ. ໃນປີ 1965 ການເສຍຄ່າເຊົ່າດິນຖືກຍົກເລີກໄປເຊັ່ນກັນ. ບັດນີ້ ແທນທີ່ຊາວນາຈະເປັນກຳລັງຂອງ ຕະຫຼາດ ພວກເຂົາຕ້ອງມາຜະລິດໃຫ້ລັດແລ້ວ ໃນທາງປີ້ນກັນ ລັດເປັນຝ່າຍຮັບປະ ກັນໃຫ້ມີສິນຄ້າໂຮງງານແລະເຄື່ອງນຳເຂົ້າ ທີ່ຊາວນາຕ້ອງການມາຈຳໜ່າຍ ໃນລາຄາ ຖືກ ແລະພຽງພໍຕະຫຼອດເວລາ. ດ້ວຍເຫດຜົນຫຼາຍຢ່າງ ການແລກປ່ຽນກັນແບບຫຼ້ຽສຸດ ນີ້ ບໍ່ສາມາດເກີດຂຶ້ນໄດ້. ຊາວນາຍັງຄົງຖືກປະຖິ້ມໄປຕາມຍະຖາກຳ ແລະ ຈຳຕ້ອງ ຊອກຫາວິທີການໃໝ່ ເພື່ອເອົາຕົວລອດ, ເມື່ອການຜະລິດຕົກຕ່ຳ ການບໍລິໂພກກໍເປັນ ເຊັ່ນດຽວກັນ, ຍ້ອນວ່າຊາວນາປະຕິເສດ ຂາຍເຂົ້າໃຫ້ລັດຖະບານໃນລາຄາຕ່ຳ ແລະ ທາງລັດບໍ່ສາມາດຕອບສະໜອງສິນຄ້າ ທີ່ຊາວນາກັບຄອບຄົວພວກເຂົາ ຕ້ອງການຊື້. ເສດຖະກິດຄູ່ຂະໜານແບບໜຶ່ງ ຫຼື ຕະຫຼາດມືດ ຈຶ່ງເຕີບໃຫຍ່ຂຶ້ນ ລັດຖະບານຈຳ ຕ້ອງໄດ້ເອົາໃຈໃສ່ຢ່າງຈິງຈັງ ເພື່ອຄວບຄຸມແລະວາງມາດຕະການຕ່າງໆ ເຊັ່ນ ການ ຫຼຸດຄ່າເງິນໃບໃຫຍ່ລົງໃນປີ 1985.

ຄວາມພະຍາຍາມຂອງຫວຽດນາມ ເພື່ອປ່ຽນສະພາບຂອງຊາວນາ ເປັນອີກ ຕົວຢ່າງໜຶ່ງ ແຫ່ງຄວາມຂັດແຍ່ງກັນ ໃນດ້ານໂຄງສ້າງທາງສັງຄົມ. ນັກທິດສະດີກອມ ມູນິດ ຢູ່ທີ່ນີ້ ມັກປຽບທຽບຄວາມແຕກຕ່າງໃນສິ່ງທີ່ພວກເຂົາເຫັນວ່າ ເປັນເລື່ອງຂອງ ລັດທິເອກະເທດແບບອານາທິປະໄຕ ຂອງພວກຊາວນາດັ້ງເດີມ ທີ່ເປັນ "ຜູ້ຜະລິດ ຂະໜາດນ້ອຍ" ໃສ່ກັບລັດທິເສດຖະກິດແບບໂຮມໝູ່ ທີ່ມີລະບຽບວິໄນ ເຊິ່ງພວກເຂົາ ພະຍາມນຳເຂົ້າມາໃຊ້. ບ້ານຊາວຫວຽດນາມ ກ່ອນຍຸກທັນສະໄໝ ເກັ່ງໃນການບໍລິ

ທານຊັບສິນຂອງຫຼວງ, ດັ່ງໃນປີ 1932 ດິນນາຮອມຂອງບ້ານ ມີຮອດປະມານ ໜຶ່ງ ສ່ວນຫ້າ ຂອງດິນປູກຝັງທັງໝົດ ໃນເຂດປາກແມ່ນ້ຳແດງ. ຈຸດສຳຄັນບໍ່ໄດ້ຢູ່ວ່າ ການ ເປັນເຈົ້າຮອມໝູ່ ຕໍ່ຊັບສິນນັ້ນມີຫຼືບໍ່ມີ, ມັນມີຢູ່ ແຕ່ຫາກວ່າ ມັນມີຈຸດປະສົງ ທີ່ແຕກ ຕ່າງກັນ. ຢູ່ຫວຽດນາມ ດິນນາໂຮມຂອງບ້ານ ແຕ່ດັ້ງເດີມມາ ເຄີຍຖືກນຳໃຊ້ ເປັນຄື ລະບົບເງິນເດືອນຂອງລັດຖະບານ (ທີ່ດິນຖືກແບ່ງປັນ ໃຫ້ຂຸນນາງ ເກັບກ່ຽວເອົາໝາກ ຜົນ) ຫຼື ເປັນວິທີການໜຶ່ງ ໃຫ້ຊາວບ້ານໄດ້ມີກຽດ ແລະສາມາດມີສ່ວນແບ່ງໃນຊັບ ສິນຂອງຄອບຄົວຂຸນນາງ ຜູ້ມີຊື່ສຽງ (ທີ່ອາດຈະສະໝັກໃຈ ເພີ່ມດິນນາບາງສ່ວນຂອງ ຕົນ ຕື່ມໃສ່ດິນສາທາລະນະທີ່ມີຢູ່ແລ້ວ ເພື່ອເປັນການຕອບແທນ ຕາມຄຳໝັ້ນສັນຍາ ຂອງຊາວບ້ານ ໃນການປະຕິບັດຮີດຄອງ ເຮັດບຸນອຸທິດໃຫ້ແກ່ພວກເຂົາ ໃນອີກຫຼາຍໆ ສະຕະວັດຕໍ່ໆມາ) ດັ່ງນັ້ນ ແນວຄິດກ່ຽວກັບທີ່ດິນສາທາລະນະ ຈຶ່ງບໍ່ແມ່ນເລື່ອງແປກ ໃໝ່ ສຳລັບຊາວນາຫວຽດນາມ ຜູ້ທີ່ເຄີຍເຂົ້າເຮັດວຽກຢູ່ດິນນາໂຮມໝູ່ມາແລ້ວ. ສິ່ງທີ່ ແປກໃໝ່ສຳລັບພວກເຂົາ ແມ່ນການຊັກຊວນໃຫ້ຄຶດເຖິງທີ່ດິນຫຼວງ ຕອນນັ້ນ ໃນ ຄວາມໝາຍຂອງປະໂຫຍດການໃຊ້ສອຍແບບແຄບໆ ຄື ເບິ່ງແຕ່ໃນແງ່ ຊັບສິນດ້ານ ເສດຖະກິດຢ່າງດຽວ ຄື ເປັນເຄື່ອງມືທີ່ກໍ່ໃຫ້ເກີດທຶນຮອນ ເພື່ອການຫັນປ່ຽນເປັນ ທັນສະໄໝ ຫຼາຍກວ່າ ການເບິ່ງວ່າ ເປັນສິ່ງໜຶ່ງທີ່ມີຄວາມໝາຍທາງສັງຄົມ ແລະ ສາສະໜາ ຢ່າງກວ້າງຂວາງ ດັ່ງໃນອະດີດ.

ບ້ານຊາວຫວຽດນາມແບບເດີມ (ທາງພາກເໜືອ) ທີ່ຕັ້ງຢູ່ຢ່າງໂດດດ່ຽວປ່ຽວ ພອຍ ເຊື່ອງລີ້ຢູ່ເບື້ອງຫຼັງປ່າໄຜ່ສີຂຽວຕຶບ ບັດນີ້ ລຶບເລືອນໄປໝົດແລ້ວ. ປັດຈຸບັນ ຊາວບ້ານມັກອອກຈາກບ້ານໄປ ແບບຊົ່ວຄາວ ຫຼື ແບບຖາວອນກໍມີ ເພື່ອໄປເປັນ ທະຫານ ຮັບໃຊ້ກອງທັບ, ເພື່ອເຂົ້າຮ່ວມກອງປະຊຸມອົງການຊາວໜຸ່ມ, ເພື່ອໄປອົບຮົມ ເລື່ອງການນຳໃຊ້ເຄື່ອງກົນຈັກ ຢູ່ອູ່ລົດໄຖນາຢູ່ໃນເມືອງ, ເພື່ອໄປເປັນກຳມະກອນ ຢູ່ ໃນໂຮງຈັກໂຮງງານໃນເມືອງ, ເພື່ອອົບພະຍົບໄປ ຫຼືບໍ່ກໍໄປກັບຍາດພີ່ນ້ອງ ໄປຢູ່ໃນ ນິຄົມເສດຖະກິດໃໝ່ ແລະ ບາງທີ ຖ້າຫາກໂຊກດີ ໄດ້ໄປຮຽນຕໍ່ມະຫາວິທະຍາໄລ ຫຼື ວິທະຍາໄລຄູ ຫຼື ຢ່າງໜ້ອຍ ກໍໂຮງຮຽນມັດທະຍົມໃນຕົວເມືອງ. ພວກຊາວໜຸ່ມ ມັກອອກຈາກບ້ານໄປ ຫຼາຍກວ່າແມ່ຍິງໄວກາງຄົນ ເຊິ່ງຍັງເຮັດວຽກໄຮ່ການນາ ເກືອບ ທັງໝົດ.

ໂດຍບໍ່ນັບເອົາກຳລັງແຮງງານທີ່ຢູ່ເບື້ອງຫຼັງ ສະພາບຂອງຊົນຊັ້ນຊາວນາ ໃນ ທົ່ວພາກພື້ນ ກໍຫາກເປັນດັ່ງກ່າວມາ. ການຕັດຂາດສາຍຜູກພັນແບບລະບົບອຸປະຖຳ ແລະ ຄວາມຜູກພັນຕາມປະເພນີຂອງຊາວນາ ຕໍ່ຜືນແຜ່ນດິນຂອງພວກເຂົາ ທີ່ມີມາ ຫຼາຍເສັ່ນຄົນ ໄດ້ຖືກປ່ຽນແທນດ້ວຍການເຄື່ອນຍ້າຍກຳລັງຢ່າງຫຼວງຫຼາຍ ກັບການ ສະແຫວງຫາ ຂອງແຕ່ລະຄົນ ໃນອັນທີ່ພວກເຂົາຖືວ່າ ເປັນສິ່ງດີເລີດສຳລັບຕົນເອງ ແລະສຳລັບຄອບຄົວຂອງພວກເຂົາ. ໃນການເຮັດດັ່ງນັ້ນ ພວກເຂົາມັກປະເຊີນໜ້າ ກັບຮູບແບບຄວາມສຳພັນແນວໃໝ່ ຂອງພະນັກງານແລະຂ້າລັດຖະການ ທີ່ບໍ່ຄືກັບທີ່ ຄົນຮຸ່ນນາຍເຖົ້າແມ່ເຖົ້າ ຂອງພວກເຂົາ ເຄີຍປະສົບມາ.

ການພັດທະນາຂອງຊົນຊັ້ນໃໝ່ ແລະ ຄວາມຂັດແຍ່ງທາງສັງຄົມອື່ນໆ ຢູ່ ພາຍໃນອາຊີຕາເວັນອອກສຽງໃຕ້ ໄດ້ຖ່ວງດຶງຄວາມອາດສາມາດ ຂອງສະຖາບັນ ຕ່າງໆ ເພື່ອຮັກສາໄວ້ ທັງລະບຽບການທາງສັງຄົມ ແລະ ຄວາມຮູ້ສຶກກ່ຽວກັບ ຈຸດໝາຍຂອງຊີວິດ ຂອງມວນໝູ່ປະຊາຊົນ. ໂດຍລວມແລ້ວ, ໃນສະຖານະການອັນ ສຸດຂີດຢ່າງນັ້ນ ການຮັກສາລະບຽບການທາງສັງຄົມ ຂຶ້ນຢູ່ກັບສະຕິສຳນຶກສ່ວນບຸກ ຄົນ ຕໍ່ກັບກົດເກນຂອງລັດຖະບານ. ສຳລັບພະນັກງານບໍລິຫານຂອງລັດ, ການປົກຄອງ ໂດຍບໍ່ບັງຄັບຂົ່ມຂູ່ ງ່າຍດາຍກວ່າການໃຊ້ກຳລັງ, ດັ່ງທີ່ນັກປົກຄອງຫຼາຍຄົນ ໄດ້ພົບ ເຫັນມາແລ້ວວ່າ ການນຳໃຊ້ຄວາມຮຸນແຮງນັ້ນ ໃນທີ່ສຸດແລ້ວ ອາດພາໄປເຖິງການ ມ້າງເພສັງຄົມ ທີ່ປະຄັບປະຄອງມາແຕ່ດົນນານ. ການປະຕິບັດຕາມລະບຽບຂອງພົນ ລະເມືອງ ຜູ້ມີຈິດສຳນຶກທາງການເມືອງ ເປັນໝາກຜົນຂອງຄວາມຮູ້ສຶກໃນໃຈຂອງ ເຂົາ ຫຼືຂຸນນາງ ກ່ຽວກັບສ່ວນຮັບໃນຜົນປະໂຫຍດທີ່ຈະໄດ້ຈາກລັດຖະບານ ແລະ ສັງຄົມ ກັບຄວາມຮູ້ສຶກແບບຊື່ສັດພັກດີຢ່າງນັ້ນ ກໍມີແຕ່ຢູ່ບ່ອນທີ່ມີຄ່ານິຍົມຫຼາກຫຼາຍ ເຊັ່ນ ບ່ອນທີ່ຜູ້ຄົນທັ້ງຫຼາຍມີສ່ວນຮ່ວມນຳກັນ ໃນທົ່ວທຸກຊັ້ນຄົນ ຊົນເຜົ່າ ແລະ ຫຼາຍໆ ສາສະໜາທີ່ມີຢູ່.

ໃນສັງຄົມທີ່ມີປະຫວັດຍືນຍາວສືບຕໍ່ກັນມາ ມີການຕັ້ງຄຳສັບບັນຍັດໄວ້ ເພື່ອ ບັນຍາຍເຖິງຄ່ານິຍົມເຫຼົ່ານັ້ນ. ແຕ່ໃນສັງຄົມທີ່ສູນເສຍພະລັງພາຍໃນ ຂາດຄວາມຕໍ່

ເນື່ອງທາງປະຫວັດສາດແລ້ວນັ້ນ ກໍຕ້ອງຊອກຫາສັນຍະລັກອັນໃໝ່ໆອອກມາ. ໃນ ທຸກກໍລະນີ ຂັ້ນຕອນຂອງການປູກຝັງຄ່ານິຍົມອັນສູງສົ່ງ ໃຫ້ຕິດເປັນນິໄສໃຈຄໍຂອງ ຜູ້ຄົນຈຳນວນຫຼາຍ ຈະຕ້ອງຊັກຊ້າຢູ່ຫຼາຍ, ມັນຮຽກຮ້ອງໃຫ້ຊົນໃຊ້ການສື່ສານຕໍ່ກັນ ໃຫ້ມີຄົນຢູ່ເຄິ່ງກາງໃນລະຍະຂ້າມຜ່ານພົ້ນອອກມາ ເຊັ່ນພວກຄູສອນ ກັບ ພະນັກ ງານສົ່ງເສີມການກະສິກຳ ເພື່ອເຊື່ອມຕໍ່ຄວາມແຕກໂຕນໃນສັງຄົມ ໃຫ້ມີການສະແດງ ອອກເຖິງຄວາມຮູ້ສຶກສະດຸ້ງໄວໃນທາງການເມືອງແລະວັດທະນະທຳ ໂດຍຊົນຊັ້ນສູງ. ຫຼັງຈາກໄດ້ຮັບເອກະລາດແລ້ວ ກຸ່ມຊົນຊັ້ນຜູ້ນຳໃນອາຊີຕາເວັນອອກສ່ຽງໃຕ້ບາງກຸ່ມ ໄດ້ສະແດງທ່າອ່ຽງອັນໜຶ່ງອອກມາ ເພື່ອຜູກຂາດການສ້າງຮູບແບບ ແລະ ການສະ ແດງອອກໃນເລື່ອງຄ່ານິຍົມແຫ່ງຊາດຂອງພວກເຂົາ. ແມ່ນແຕ່ບຸກຄົນຄື ຊູການ໋ໂນ, ສະຫຼຶດ ແລະ ສີຫະນຸ ເອງ ໄດ້ຊື່ວ່າເປັນຄົນຂອງປະຊາຊົນໃນທາງທິດສະດີ ແຕ່ ໃນຄວາມເປັນຈິງ ພວກເຂົາລ້ວນແຕ່ເປັນ ນັກຄະນາທິປະໄຕ (ເຫັນແກ່ພວກພ້ອງ). ຢ່າງໃດກໍຕາມ ພວກເຂົາຮູ້ດີວ່າ ມັນມີຄວາມຈຳເປັນໃນການສ້າງຈິດສຳນຶກເລື່ອງ ລວມໝູ່ຂຶ້ນ ໃນແນວຄຶດຈິດໃຈຂອງປະຊາຊົນໃນຊາດ ຖ້າພວກເຂົາຢາກປົກຄອງ ຢ່າງສະຫງົບສຸກ. ດ້ວຍເຫດຜົນນີ້ ລັດຖະບານທັງໝົດໃນພາກພື້ນອາຊີຕາເວັນອອກ ສ່ຽງໃຕ້ ຈຶ່ງໄດ້ເອົາໃຈໃສ່ເປັນພິເສດ ທີ່ຈະພັດທະນາອຸດົມຄະຕິແຫ່ງຊາດ ເຊັ່ນ ປັນຈະ ສິລາ(ສິນຫ້າ) ໃນອິນໂດເນເຊ, ເສັ້ນທາງສູ່ສັງຄົມນິຍົມຂອງພະມ້າ ແລະ ພະໄຕລັດ ຕະນະ ຄື ຊາດ ສາສະໜາ ແລະພະມະຫາກະສັດ ຂອງປະເທດໄທ. ຢ່າງໃດກໍຕາມ ລັດຖະບານຍັງຕ້ອງບັນຈຸເອົາຖັນແຖວເຈົ້າໜ້າທີ່ ເຂົ້າມາປະຕິບັດ ໃຊ້ສິດອຳນາດຂອງ ລັດ ແລະ ຕໍ່ໄປນີ້ ພວກເຮົາຈະຫັນມາເວົ້າເຖິງພວກເຂົາ ແລະ ສາຍສຳພັນຂອງພວກ ເຂົາ ກັບລັດຖະບານ.

ຢູ່ໃນປະເທດອາຊີຕາເວັນອອກສ່ຽງໃຕ້ທັງຫຼາຍ ເກີດມີຊົນຊັ້ນຂ້າລາຊະການ ໃນການປົກຄອງ ແລະການເມືອງໃໝ່ຂຶ້ນຫຼັງຍຸກສົງຄາມ. ຊົນຊັ້ນນີ້ກໍໄດ້ກ່າຍແບບຢ່າງ ມາຈາກໂລກຍຸກກ່ອນອານານິຄົມ ແລະ ຈາກໂລກສະໄໝອານານິຄົມ. ຢ່າງໃດກໍຕາມ ຜົນສະທ້ອນຂອງມັນມີຄື ລັກສະນະສະເພາະຂອງມັນ ສະແດງອອກຢູ່ໃນຫຼາຍໆດ້ານ ສິ່ງທີ່ພາໃຫ້ຜູ້ຄົນເຫຼົ່ານີ້ໂດດເດັ່ນ ພົ້ນອອກຈາກຊົນຊັ້ນອື່ນໆໃນສັງຄົມ ແມ່ນການນຸ່ງ

ເຄື່ອງແບບ. ພວກຜູ້ຊາຍ ສ່ວນຫຼາຍ, ເພາະແມ່ຍິງມີໜ້ອຍທີ່ສຸດ, ເຄື່ອງແບບມີຂີດ ແຕ້ມຢູ່ບ່າໄຫຼ່ ສີເຫຼືອງຄຳ ໄດ້ກາຍເປັນໃບໜ້າຜູ້ມີສິດອຳນາດ ທີ່ສາມາດອອກຄຳສັ່ງ ໃນການປະຕິບັດໜ້າທີ່ໃຫ້ລັດຖະບານຢ່າງເປີດເຜີຍຂຶງຂັງແລະໂອ້ອວດ.ບຸກຄົນເຫຼົ່ານີ້ ເປັນພວກນາຍທະຫານ ແລະ ບາງຄັ້ງ ມີພະນັກງານພົນລະເຮືອນຂອງກົມກອງ ທີ່ນຸ່ງ ເຄື່ອງແບບເປັນບາງໂອກາດ ເຊັ່ນ ຝ່າຍພາສີ ຝ່າຍຊົນລະປະທານ, ຝ່າຍຄວບຄຸມ ການເກີດ, ຝ່າຍການອະນາໄມ, ການຂົນສົ່ງ ແລະ ຝ່າຍສຶກສາ. ຄົນພວກນີ້ ໄດ້ ຮັບການສຶກສາຢູ່ໃນເມືອງ ຫຼື ບາງຄົນກໍຮຽນມາຈາກຕ່າງປະເທດ ມີແນວຄຶດກ່ຽວກັບ ສິດອຳນາດ ທີ່ຕິດພັນຢູ່ກັບສຳນຶກແບບສິດທິແຫ່ງຈັກກະພັດ ຫຼາຍກວ່າສຳນຶກແບບ ໃຫ້ການບໍລິການປະຊາຊົນ ເຊິ່ງຊື່ຕຳແໜ່ງບົ່ງບອກຢູ່ແລ້ວ. ມາເຖິງຊຸມປີ 1980 ປາ ກົດການອັນນີ້ ຍັງມີຢູ່ໃນຫຼາຍປະເທດຂອງອາຊຽນ ຄືກັນກັບໃນ ພະມ້າສັງຄົມນິຍົມ ຫຼື ໃນລັດອິນໂດຈີນ ກອມມູນິດ ເຖິງວ່າ ໃນແຕ່ລະສັງຄົມ ລັກສະນະຕ່າງໆຂອງກຸ່ມ ການປົກຄອງໃໝ່ ຈະແຕກຕ່າງກັນແດ່ກໍຕາມ.

ຕົວຢ່າງ ໃນຫວຽດນາມ ປະຊາຊົນຜູ້ເຮັດວຽກຈັດການກິດທຸລະຂອງລັດ ມີຊື່ ເອີ້ນວ່າ "ຖັນແຖວ ພະນັກງານລັດ" ຜູ້ຄົນເຫຼົ່ານີ້ ທັງຊາຍແລະຍິງ ເປັນພຽງພະນັກງານ ເຊິ່ງ ກໍຄືກັນກັບພວກຂຸນນາງຮຸ່ນກ່ອນ ໃນຍຸກນັບຖືລັດທິຂົງຈື້ຢູ່ ໜ້ອຍໜັກໜ້ອຍໜາ ຈະເປັນຜູ້ເຮັດວຽກດ້ວຍມື. ສຳລັບເຂົາເຈົ້າເອງ ການສ້າງຊົນຊັ້ນຂະໜາດໃຫຍ່ແບບ ນີ້ຂຶ້ນມາ ແມ່ນຄວາມສຳເລັດອັນຍິ່ງໃຫຍ່ ຂອງກອມມູນິດຫວຽດນາມ. ໃນປີ 1960 ຫວຽດນາມເໜືອ ມີຖັນແຖວພະນັກງານພຽງ 18,400 ຄົນ ເທົ່ານັ້ນ ທີ່ສຳເລັດການ ສຶກສາຂັ້ນມະຫາວິທະຍາໄລ ແລະ ໂຮງຮຽນວິຊາຊີບຊັ້ນກາງ, ມາເຖິງປີ 1975 ຫວຽດນາມປະກາດວ່າ ຕົນມີຖັນແຖວພະນັກງານແບບນັ້ນ ເຖິງ 365,700 ຄົນ. ໃນທຳນອງຄ້າຍຄືກັນ ຢູ່ອິນໂດເນເຊຍ ກາງຊຸມປີ 1980 ມີກຳລັງແຮງງານຢູ່ 15.4% ຫຼື ເທົ່າກັບ 8.3 ລ້ານຄົນ ທີ່ເຮັດວຽກກັບລັດຖະບານ.

ການຂະຫຍາຍວຽກເຮັດງານທຳ ໃນວົງການລັດຖະບານ ກາຍເປັນປາກົດ ການສາມັນ ຢູ່ໃນທົ່ວອາຊີຕາເວັນອອກສຽງໃຕ້ ຍ້ອນວ່າ ມັນເຮັດໃຫ້ກຸ່ມທີ່ມີອຳນາດ

ທາງການເມືອງ ມີວຽກເຮັດ ແລະ ຮັບປະກັນໃຫ້ກຸ່ມພົນລະເມືອງຫຼັກແຫຼ່ງ ຜູ້ເຊິ່ງ ຄວາມຢູ່ດີກິນດີຂອງພວກເຂົາ ຍັງຕ້ອງຂຶ້ນກັບລັດໂດຍກົງ. ພະນັກງານຂັ້ນນຳຂອງລັດ ໄດ້ຮັບອຳນາດພິເສດ ແລະ ມີບຸລິມະສິດຫຼວງຫຼາຍທີ່ສຸດ. ອີກຄັ້ງໜຶ່ງ ຂໍຍົກຕົວຢ່າງ ກໍລະນີຫວຽດນາມ ມາໃຫ້ເຫັນ. ຖັນແຖວພະນັກງານຂັ້ນນຳຜູ້ມີການສຶກສາ ບໍ່ພຽງແຕ່ ຍຶດຖືໃນປະເພນີຮີດຄອງຂອງພວກຂຸນນາງແມນດາຣິນ ຫວຽດນາມເກົ່າ ແຕ່ຍັງຄົງປັບ ປຸງຕົວເອງໃຫ້ເຂົ້າກັບວັດທະນະທຳຕາເວັນຕົກ ທົ່ວໆໄປໄດ້ ໂດຍສະເພາະແນວຄຶດ ແບບ ມາກສ໌ ເລນິນ ໂດຍຍົກສູງວິທະຍາສາດ ແລະ ວິທີການ ຂຶ້ນແຜນບໍລິຫານຈັດ ການ. ໃນລະຍະຕົ້ນໆ ປະເທດຫວຽດນາມກອມມູນິດ ປະກອບມີແຕ່ສອງປະເພດຖັນ ແຖວພະນັກງານ ຄື ນັກຈັດຕັ້ງທາງການເມືອງ ກັບ ຜູ້ຊ່ຽວຊານດ້ານການທະຫານ, ແຕ່ມາໃນຊຸມປີ 1980 ຕຳແໜ່ງຂອງຖັນແຖວພະນັກງານທີ່ມີກຽດສັກສີສູງກວ່າໝູ່ ກໍ ຖືກຄອບງຳໂດຍຜູ້ທີ່ມີການສຶກສາສູງ. ຄ້າຍຄືກັນກັບ ໃນຍຸກຂຸນນາງແມນດາຣິນ ພວກມີລະດັບການສຶກສາສູງກວ່າ ມັກເຮັດວຽກຢູ່ໃນສານ ຫຼາຍກວ່າຢູ່ໃນຂັ້ນບ້ານ ດັ່ງ ນັ້ນໃນຫວຽດນາມໃໝ່ ກໍເຊັ່ນດຽວກັນ ແຮ່ງຈາກບ້ານເຄີຍຢູ່ມາໄກເທົ່າໃດ ຄຸນສົມບັດ ດ້ານການສຶກສາຂອງຖັນແຖວພະນັກງານ ກໍແຮ່ງເປັນທີ່ປະທັບໃຈຫຼາຍເທົ່ານັ້ນ.

ການທີ່ຖັນແຖວພະນັກງານ ຜູ້ມີການສຶກສາດີຢູ່ຫວຽດນາມ ບໍ່ປາຖະໜາຈະ ອອກໄປເຮັດວຽກຢູ່ໃນເຂດການຜະລິດກະສິກຳຫ່າງໄກ ແມ່ນປາກົດການທຳມະດາ ທີ່ເກີດຢູ່ທົ່ວໄປໃນອາຊີຕາເວັນອອກສຽງໃຕ້. ໂດຍທົ່ວໄປແລ້ວ ພະນັກງານຜູ້ມີການ ສຶກສາດີ ຕ້ອງການຢູ່ອາໄສໃນຕົວເມືອງ ບ່ອນທີ່ລູກຫຼານພວກເຂົາ ມີໂອກາດທາງ ການສຶກສາສູງກວ່າ, ມີບໍລິການດ້ານສາທາລະນະສຸກດີກວ່າ ແລະ ມີຫ້າງຮ້ານ ກັບ ສະຖານບັນເທີງໃຫ້ພ້ອມ. ຂໍ້ນີ້ເປັນຄວາມຈິງ ສຳລັບພະນັກງານທຸກປະເພດ ແລະມີ ແຕ່ລັດຖະບານພະມ້າເທົ່ານັ້ນ ທີ່ສາມາດກະເກນເອົາຄົນລະດັບດອກເຕີ ໄປເຂົ້າຮັບ ໃຊ້ໃນກອງທັບໄດ້ ໃນປີ 1962 ເພື່ອຈັດສົ່ງພວກເຂົາອອກໄປຢູ່ນອກຕົວເມືອງ ອັນຝືນ ກັບຄວາມມຸ່ງຫວັງຂອງພວກເຂົາແລະຄອບຄົວ ເປັນທີ່ສຸດ.

ຊົນຊັ້ນປົກຄອງທີ່ເປັນຂ້າລັດຖະການ, ພວກນາຍທະຫານຂອງກອງທັບ ແລະ ນັກວິຊາການ ນັ່ງຢູ່ຈອມສູງຂອງສັງຄົມ ອອກຄຳສັ່ງແລະເຮັດບົດລາຍງານ ຂະນະ

ດຽວກັນ ກໍໄດ້ຮັບຜົນປະໂຫຍດຕ່າງໆນາໆ ເຊັ່ນ ໄດ້ເຂົ້າຮ້ານຄ້າພິເສດ ຫຼືແມ່ນແຕ່ການເດີນທາງໄປຕ່າງປະເທດ ເຊິ່ງບໍ່ສາມາດເປັນໄປໄດ້ສຳລັບພົນລະເມືອງທົ່ວໆໄປ. ການປົກຄອງຊຸມຊົນທ້ອງຖິ່ນ ໃນຄວາມເປັນຈິງ ສ່ວນຫຼາຍຖືກດຳເນີນການໂດຍບຸກຄົນເອກະເທດ ຜູ້ໄດ້ຮັບຕຳແໜ່ງເປັນນາຍບ້ານໃນຊົນນະບົດ ຫຼື ພາຍໃຕ້ການແຕ່ງຕັ້ງຕຳແໜ່ງແບບສະໄໝໃໝ່ກວ່າ ເອີ້ນວ່າ ປະທານສະພາປະຊາຊົນ ຂັ້ນບ້ານ ຫຼື ທີ່ປຶກສາປະຈຳເມືອງ ຍ້ອນຄວາມນັບຖື ທີ່ພວກຊາວບ້ານມີຕໍ່ພວກເຂົາ ຫຼືວ່າ ຍ້ອນອຳນາດການປົກຄອງສູນກາງ ເຫັນວ່າ ພວກເຂົາເປັນຕາເຊື່ອໝັ້ນໄດ້ ແລະຈະປະຕິບັດຕາມຄຳຊີ້ແນະໄດ້. ດັ່ງຕົວຢ່າງ ໃນປະເທດພະມ້າ ແລະ ອິນໂດເນເຊຍ ພວກນາຍສິບທະຫານທີ່ກິນເບ້ຍບຳນານແລ້ວ ມັກໄດ້ເປັນຫົວໜ້າການປົກຄອງໃນຂັ້ນບ້ານ (ນາຍບ້ານ) ແລະ ພວກນາຍທະຫານຂັ້ນສູງ ມັກອອກກິນບຳນານ ເພື່ອໄປເປັນຫົວໜ້າໜ່ວຍງານທີ່ໃຫຍ່ກວ່າ ຢູ່ໃນທ້ອງຖິ່ນ. ຕຳແໜ່ງເຫຼົ່ານີ້ ສ່ວນຫຼາຍມັກເປັນເລື່ອງຂອງບຸນຄຸນ ເພາະຜູ້ກຳຕຳແໜ່ງນັ້ນ ຈຳຕ້ອງເຮັດໃຫ້ກົງລໍ້ຂັ້ນເທິງກວ່າຂອງລັດຖະບານກາງ ພໍໃຈ ແລະຍັງຕ້ອງຜະເຊີນກັບກົງລໍ້ປະຊາຊົນ ທີ່ບໍ່ຢາກເສຍພາສີ ຫຼືວ່າ ບໍ່ຢາກຕອບສະໜອງບໍລິການອື່ນໆ ໃຫ້ແກ່ປະເທດຊາດ.

ຢ່າງໃດກໍດີ ຊາວອາຊີຕາເວັນອອກສ່ຽງໃຕ້ສ່ວນຫຼາຍ ຮັບຮູ້ວ່າ ການເຮັດວຽກງານກັບລັດ ເປັນເລື່ອງທີ່ໜ້າຍິນດີຢ່າງໜຶ່ງ. ມັນຕອບສະໜອງລາຍຮັບທີ່ໝັ້ນຄົງ ແລະມັກຕິດຕາມດ້ວຍການໄດ້ຮັບກຽດສັກສີພໍສົມຄວນ ແລະໂດຍທົ່ວໄປແລ້ວ ມັນເປັນວຽກງານສຳລັບຕະຫຼອດຊີວິດ. ສ່ວນພວກແມ່ຍິງ ອາດເຮັດວຽກຄ້າຂາຍເລັກໆນ້ອຍໆຕໍ່ໄປ ແລະກຸ່ມຊາວຕ່າງດ້າວ ກໍຍັງດຳເນີນທຸລະກິດຂະໜາດໃຫຍ່ໆສືບຕໍ່ໄປ. ສຳລັບອ້າຍບ່າວໜຸ່ມຜູ້ມີຄວາມຄຶດໄຝ່ສູງແດ່ ຢາກໄດ້ແຕ່ງດອງດີໆ ມີຄວາມໝັ້ນຄົງການເຮັດວຽກກັບລັດ ເປັນທາງເລືອກຢ່າງໜຶ່ງ. ລະດັບເງິນເດືອນທີ່ໄດ້ ບາງຄັ້ງ ກໍບໍ່ແມ່ນເຫດໃນການເລືອກແບບນີ້ດອກ, ດ້ວຍວ່າ ເງິນເດືອນທີ່ໄດ້ຈາກລັດຖະບານນັ້ນຢູ່ໃນຫຼາຍໆປະເທດອາຊີຕາເວັນອອກສ່ຽງໃຕ້ ບໍ່ສາມາດກຸ້ມປາກກຸ້ມທ້ອງຊ້ຳ, ໂດຍສະເພາະຢູ່ເຂດໃນເມືອງ ຕົວຢ່າງຊຸມປີ 1980 ລົດໂອໂຕ ໂຕໂຢຕາມີສອງ ຄັນໜຶ່ງ ຫຼັງຈາກເສຍພາສີນຳເຂົ້າ ປະມານ 300% ແລ້ວ ຍັງມີລາຄາປະມານ 30,000

ໂດລາ ສຳລັບຊາວເມືອງ ຢ່າງກ້ຽງ ຂະນະທີ່ ຂະໜາດເງິນເດືອນພະນັກງານລັດຜູ້ໜຶ່ງ ຕົກເປັນປະມານ 1,000 ໂດລາ/ປີ ແລ້ວເຮັດໃດເຂົາຈະຫາຊື້ລົດໂອໂຕສ່ວນຕົວມາຂີ່ໄດ້.

ແນ່ນອນວ່າ ຄຳຕອບກໍຄື ການເຮັດວຽກກັບລັດຖະບານນັ້ນ ຖືກໝຸນໃຊ້ກັນຢ່າງກວ້າງຂວາງ ເພື່ອຫາລາຍຮັບເພີ່ມພິເສດ. ເລື່ອງນີ້ ເບິ່ງຈັ່ງນຶ່ງກໍເປັນການສໍ້ລາດບັງຫຼວງຢ່າງໜຶ່ງ ຫຼື ຕົວຢ່າງໃນຟີລິບປິນ ກໍຖືກເບິ່ງວ່າ "ຜິດປົກກະຕິ". ເມື່ອໃດ ໜັງສືພິມຕ່າງປະເທດກັບໜັງສືພິມພາຍໃນ ໄດ້ຮັບອະນຸຍາດໃຫ້ຂຽນຂ່າວແນວນີ້ ກໍມີການຊ່າລືກັນຢ່າງອຶກກະທຶກ ກໍລະນີໂດ່ງດັງກວ່າໝູ່ ແມ່ນເລື່ອງ ຂອງປະທານາທິບໍດີມາກັອສ ແຫ່ງຟີລິບປິນ ຜູ້ເຊິ່ງຮູ້ຈັກຈັດການ ສະສົມຊັບສິນໄດ້ຫຼາຍກວ່າ 10 ຕື້ ໂດລາ ທັງທີ່ວ່າ ເງິນເດືອນປະຈຳປີ ມີແຕ່ 5,000 ໂດລາ ເທົ່ານັ້ນ. ຮູບການຂອງສິ່ງ "ຜິດປົກກະຕິ" ທີ່ແຜ່ກະຈາຍກວ້າງຂວາງນີ້ ເປັນຜົນຈາກຄວາມເປັນຈິງທີ່ວ່າ ວຽກງານຂອງລັດ ບໍ່ວ່າຈະແມ່ນຍ້ອນເຫດຜົນລາຍໄດ້ສ່ວນຕົວ, ຄ່າໃຊ້ຈ່າຍຕ່ຳສຸດ ຫຼື ຍ້ອນພັນທະຕໍ່ຄອບຄົວ ຫຼື ຕໍ່ຊຸມຊົນກໍຕາມ ມັນຊຸກຍູ້ໃຫ້ບຸກຄົນຜູ້ໜຶ່ງ ໝຸນໃຊ້ຖານະຕຳແໜ່ງທາງການຂອງຕົນ ໄປໃນທາງຜິດກົດໝາຍໄດ້.

ເຖິງຢ່າງໃດກໍດີ ບໍ່ຄວນຟ້າວສະຫຼຸບຈາກສິ່ງທີ່ເວົ້າມານັ້ນວ່າ ຫຼັງຈາກທີ່ໄດ້ຮັບເອກະລາດ, ການສໍ້ລາດບັງຫຼວງ ແລະຄວາມຂີ້ຕົກມັກໄດ້ ຈະຄອບຄຸມການເມືອງຂອງບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້ໄປທັງໝົດ ຄືກັບທີ່ເຄີຍເປັນມາດອກ. ບາງທີ ອາດມີຜູ້ພິພາກສາຈຳນວນຫຼາຍ ຢູ່ປະຈຳສານປະຊາຊົນ ທີ່ບໍ່ສໍ້ໂກງກິນສິນບົນ ເຊັ່ນວ່າ ຢູ່ໃນພະມ້າ ເມື່ອຊຸມປີ 1980 ຄືກັບທີ່ເຄີຍມີມາແລ້ວໃນຊຸມປີ 1930. ແຕ່ວ່າບາງຢ່າງກໍປ່ຽນແປງຫຼາຍຂຶ້ນແທ້ ເຊັ່ນວ່າລະດັບຄວາມບໍ່ພໍໃຈຂອງພົນລະເມືອງຈຳນວນຫຼວງຫຼາຍ ຕໍ່ການສໍ້ໂກງກິນຫຼາຍໂພດ ເຊິ່ງປາກົດຈະແຈ້ງຫຼາຍຂຶ້ນ ແລະໄດ້ກາຍເປັນພາລະແກ່ຊາວນາກະສິກອນ ແລະນັກທຸລະກິດຂະໜາດນ້ອຍ ຜູ້ພົບວ່າ ຕົນເອງເຮັດວຽກການໜັກໜ່ວງຢ່າງແທ້ຈິງ ບາດທີຜູ້ອື່ນໆເຮັດໜ້ອຍ ແຕ່ຊ້ຳໄດ້ຮັບຜົນປະໂຫຍດຈາກເງິນຫຼວງຫຼາຍກວ່າຜູ້ທີ່ເສຍພາສີຊ້ຳອີກ. ການຮັບຮູ້ຄວາມຈິງອັນນີ້ ກັບ

ການຕື່ນຕົວຂອງພວກນັກກົດໝາຍ ນັກໜັງສືພິມ ນັກວິຊາການ ແລະນັກຮຽນຮູ້ ຈາກ ມະຫາວິທະຍາໄລ ເຊິ່ງມຸ່ງຫວັງສວຍໃຊ້ຄວາມບໍ່ພໍໃຈອັນນີ້ ກໍ່ໃຫ້ເກີດກຸ່ມປະຊາຊົນ ຜູ້ຢາກປົກປ້ອງແລະສະໜັບສະໜຸນ ຂະບວນການຕໍ່ຕ້ານລັດຖະບານ ໃຫ້ກວ້າງຂວາງ ຍິ່ງຂຶ້ນ. ຜົນກໍຄືຢູ່ໃນສັງຄົມອາຊີຕາເວັນອອກສຽງໃຕ້ເຫຼົ່ານັ້ນ ຜູ້ຄົນໃນເມືອງໃຫຍ່ ມີ ການສຶກສານັບມື້ນັບຫຼາຍຂຶ້ນ ໂດຍສະເພາະຊົນຊັ້ນກາງ ມັກສະແດງອອກໃຫ້ເຫັນຢູ່ ໃນການປະທ້ວງຂອງປະຊາຊົນ ຄັດຄ້ານການກໍ່ສ້າງ ໂຮງຈັກ ໂຮງງານ ທີ່ສ້າງມົນ ລະພິດ ກັບການກໍ່ຕັ້ງກຸ່ມຜູ້ທັກທ້ວງໃນເລື່ອງສິດເສລີພາບຂອງພົນລະເມືອງ. ສ່ວນ ເຫດການໃນບາງກອກ ປະເທດໄທ ຄົງຈະເປັນການເວົ້າໂພດໄປ ຖ້າໄປອ້າງວ່າ ພວກນັກສຶກສາໄດ້ ໂຄ່ນລົ້ມລັດຖະບານທະຫານລົງເອງ ໃນປີ 1973 ຫຼື ວ່າ ປະທານາທິບໍດີ ມາກັອສ ຫຼົບໜີອອກຈາກ ປະເທດໃນປີ 1986 ຍ້ອນອຳນາດ ຂອງປະຊາຊົນ. ຢ່າງໃດກໍດີ ລັດຖະບານຕ່າງໆໃນພາກພື້ນນີ້ ຈຳຕ້ອງຕື່ນຕົວໃຫ້ຫຼາຍ ກວ່ານີ້ ພາຍຫຼັງການປ່ຽນແປງອາຊີຕາເວັນອອກສຽງໃຕ້ ມາໄດ້ຕັ້ງ 40 ປີ ແລ້ວ ວ່າ ອຳນາດ ຈະບໍ່ເກີດຈາກປາຍປືນ ຫຼື ອາໄສແຕ່ປາຍປືນຢ່າງດຽວ ສະເໝີໄປ.

ແຫຼ່ງອຳນາດທີ່ສຳຄັນອີກແຫຼ່ງໜຶ່ງ ໃນສັງຄົມອາຊີຕາເວັນອອກສຽງໃຕ້ ນັບ ແຕ່ສິ້ນສຸດສົງຄາມໂລກຄັ້ງທີ II ມາ ແມ່ນຄວາມເຊື່ອຖືປະຕິບັດທາງສາສະໜາ. ໃນ ລະຍະຊຸມປີ 1980 ເກີດມີທ່າອ່ຽງສາມປະການ ທີ່ຈະແຈ້ງຂຶ້ນ ຢູ່ໃນຮູບແບບການດຳ ລົງຊີວິດທາງສາສະໜາຂອງຊາວອາຊີຕາເວັນອອກສຽງໃຕ້. ທ່າອ່ຽງທີ່ສຳຄັນກວ່າໝູ່ ອາດແມ່ນການຫັນອອກຈາກສາສະນະຈັກ ຕາມສາຍວັດທະນະທຳແບບຄົນໃນເມືອງ ຂອງອາເມຣິກາ ໂດຍສະເພາະຂອງຊົນຊັ້ນກາງ. ໃນທົ່ວພາກພື້ນ ກະບອກສຽງຂອງ ລັດຖະບານໄດ້ຫຼຸດຜ່ອນຄວາມສຳຄັນຂອງສາສະໜາ ຢູ່ໃນກິດຈະວັດປະຈຳວັນ ຂອງ ຊີວິດປະຊາຊົນນຳ. ການຫັນມານິຍົມຊົມຊອບວັດທະນະທຳອາເມລິກາ ຢູ່ບັນດາປະ ເທດສັງຄົມນິຍົມ ຖືກກວດກາຄວບຄຸມໂດຍພັກ ຝ່າຍປົກຄອງ ຢ່າງກວ້າງຂວາງ ແລະ ຊົນຊັ້ນປົກຄອງຂອງບັນດາປະເທດກອມມູນິດ ຕ່າງເມີນເສີຍຕໍ່ພິທີກຳທາງສາສະໜາ ແລະບໍ່ສົ່ງເສີມໃຫ້ປະຊາຊົນເຂົ້າຮ່ວມກິດຈະກຳເຫຼົ່ານັ້ນ. ຢູ່ອິນໂດເນເຊຍ ກໍເຊັ່ນດຽວ ກັນເຖິງແມ່ນວ່າປັດຊະຍາຂອງຫຼັກປັນຈະສິນໄດ້ຮວມເອົາທັງ"ຄວາມເຊື່ອໃນພະເຈົ້າ"

ເຂົ້າເປັນມາດຕະຖານ ຂອງການເປັນພົນລະເມືອງດີ ຂໍ້ໜຶ່ງແລ້ວ ກໍຕາມ, ລະບອບໂກນຄາຣ ຂອງ ຊູຮາຣ໌ໂຕ ກໍມັກວາງທ່າທາງເສີຍເມີຍໃສ່ ທັງເບິ່ງວ່າ ສາສະໜາ ອິດສະລາມແບບດັ້ງເດີມ ເປັນໄພຄຸກຄາມໜຶ່ງ ຕໍ່ຄ່ານິຍົມຂອງພວກຕົນ.

ທ່າອ່ຽງທີສອງ ເຊິ່ງດຳເນີນການຢູ່ໃນລະດັບປະຊາຊົນທົ່ວໄປໂດຍສະເພາະນັ້ນ ແມ່ນການຟື້ນຟູຄືນ ພາກປະຕິບັດທາງສາສະໜາ ສ່ວນໜຶ່ງ ອາດເປັນການຕອບໂຕ້ກັບການທັນອອກຈາກສາສະນະຈັກ ແຫ່ງຄ່ານິຍົມໃນການດຳລົງຊີວິດປະຈຳວັນ ແລະ ພຶດຕິກຳປະຕິບັດຂອງຊົນຊັ້ນນຳທາງການເມືອງ. ທີ່ສັງເກດເຫັນໄດ້ດີເປັນພິເສດໃນກຸ່ມຊາວມຸສະລິມຢູ່ ມາລາຢູ, ອິນໂດເນເຊຍ ແລະ ພາກໃຕ້ຂອງຟີລິບປິນ ກໍຄື ເຂດນັບຖືຄາໂທລິກ ຂອງປະເທດຟີລິບປິນ ເກີດມີຄວາມສົນໃຈໃນເລື່ອງການເພິ່ງພາບຸນບາລະມີຂຶ້ນຫຼາຍ ແລະ ຄຳສອນທາງສັງຄົມ ຂອງພວກຄາໂທລິກຫົວຮຸນແຮງ ທີ່ແຕກຈ່ຳຈາກ “ເທວະສາດແຫ່ງການປົດປ່ອຍ” ສ່ວນວ່າ ພາກປະຕິບັດທາງພຸດທະສາສະໜາໃນປະເທດໄທ ກັບ ພະມ້າ ກຳລັງຖືກບິດເບືອນ ປ່ຽນແປງ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການທາງສັງຄົມ ເສດຖະກິດໃໝ່.

ທ່າອ່ຽງອັນທີສາມ ເຊິ່ງບໍ່ສຳຄັນຫຼາຍເທົ່າ ແມ່ນການເຕີບໃຫຍ່ຂອງການຍອມຮັບກັນຫຼາຍຂຶ້ນ ຂອງສາສະໜາ ແລະ ຄວາມຫຼາກຫຼາຍແຕກໂຕນກັນ ທາງວັດທະນະທຳຢູ່ໃນພາກພື້ນ, ເຊິ່ງສ່ອງແສງອອກ ຢູ່ໃນຄວາມສຳເລັດຂອງຄຶດຕະຈັກ ນິກາຍອີວັນເຊລິກ (evangelical Christians) ທີ່ເຮັດວຽກຢູ່ໃນ ອິນໂດເນເຊຍ ແລະ ຟີລິບປິນ ກັບຄວາມສົນໃຈທີ່ຫຼາຍຂຶ້ນ ໃນໝູ່ຊາວຊະວາຈຳນວນຫຼາຍ ຕໍ່ຄຳສອນຂອງພຸດທະສາສະໜາ ແລະ ຄຣິສຕະສາສະໜາ. ໃນບັນດາປະເທດທີ່ກິດຈະກຳຂອງຄະນະເຜີຍແຜ່ສາສະໜາ ຖືກເກືອດຫ້າມນັ້ນ ແມ່ນອນວ່າ ເກືອບບໍ່ມີການປ່ຽນແປງແຕ່ຢ່າງໃດເລີຍ.

ທ່າອ່ຽງປ່ຽນແປງເຫຼົ່ານີ້ ສ່ວນໜຶ່ງ ສາມາດເບິ່ງວ່າ ເປັນການຕອບຮັບຈາກສ່ວນບຸກຄົນ ຫຼື ຈາກມະຫາຊົນ ຕໍ່ຄວາມກົດດັນທາງເສດຖະກິດ ສັງຄົມ ແລະ ການ

ເມືອງບາງຢ່າງ ທີ່ພວກເຮົາເວົ້າມາແລ້ວ. ຕົວຢ່າງ ການຟື້ນຟູສາສະໜາອິສລາມ ໃນໝູ່ຊົນເຜົ່າມາເລ ສາມາດນຳໄປເຊື່ອມຕໍ່ເຂົ້າກັບອັດຕາອັນເລັ່ງລັດ ທີ່ປະຊາຊົນ ຊາວຊົນນະບົດສ່ວນໃຫຍ່ ຖືກກວາດເຂົ້າມາຢູ່ໃນຕົວເມືອງ ທີ່ມີວັດທະນະທຳແປກ ໃໝ່ສຳລັບພວກເຂົາ ເຊັ່ນການມາເປັນແຮງງານ ຫຼື ເປັນນັກຮຽນນັກສຶກສາໃນວິທະ ຍາໄລ ແລະ ມະຫາວິທະຍາໄລ. ສຳລັບຜູ້ຊາຍ ແລະແມ່ຍິງໜຸ່ມເຫຼົ່ານີ້ ການເຜີຍແຜ່ ສາສະໜາອິສລາມ ຫຼື ດາກວາທ໌ ແມ່ນແຮງດຶງດູດທີ່ຊົງພະລັງ ໃຫ້ລຸກຂຶ້ນຢືນຕ່ໍຕ້ານ ດ້ວຍກຸງດສັກສີຊົນເຜົ່າ ຕ່ໍກັບຊາວຈີນໂດຍສະເພາະ ແລະມັນມີສ່ວນພົວພັນກັບການ ລຸກຮື ຂອງຝ່າຍອິສລາມ ຢູ່ແຫ່ງອື່ນໆນຳ.

ການຂະຫຍາຍຕົວຢ່າງກວ້າງຂວາງ ຂອງສາສະໜາອິສລາມນີ້ ຊຸກຍູ້ໃຫ້ພັກ ຝ່າຍຄ້ານ ເຊິ່ງອີງໃສ່ສາສະໜາເປັນຕົ້ນຕໍ ເຊັ່ນ ພັກອິສລາມຢູ່ມາເລເຊຍ ກັບພັກ ສະຫະພັດທະນາ ໃນອິນໂດເນເຊຍ ໄດ້ເຊື່ອມຕໍ່ອຸດົມການຂອງຕົນເຂົ້າກັບການຟື້ນຟູ ສາສະໜາອິສລາມໃນທົ່ວໂລກ ເຊິ່ງຖືກເບິ່ງວ່າ ເປັນກົດຈະວັດປະຈຳວັນທີ່ບໍລິສຸດ ຍິ່ງກວ່າສິ່ງທີ່ ພະນັກງານຂອງລັດ ຜູ້ຮັບເລືອກມາ ຫຼືໄດ້ຮັບການແຕ່ງຕັ້ງມາ ປະຕິ ບັດກັນຢູ່. ເຊັ່ນດຽວກັນກັບຢູ່ພາກໃຕ້ຂອງປະເທດໄທ ແລະ ເກາະດອນມິນດາເນົາ ພວກຊົນເຜົ່າມຸສະລິມສ່ວນໜ້ອຍ ທີ່ຖືກກົດຂີ່ຂົ່ມເຫງ ໄດ້ລຸກຂຶ້ນຕ້ານທານຢ່າງຮຸນ ແຮງ ກັບສິ່ງທີ່ພວກເຂົາເຫັນວ່າ ເປັນລັດທິອານານິຄົມ ກັບຄວາມຄັບແຄບ ຂອງ ພະນັກງານຊາວພຸດ ຫຼືຄາໂທລິກ.

ຢູ່ປະເທດຟີລິບປິນທີ່ນັບຖືຄາໂທລິກ ເສັ້ນຊາຍແດນລະຫວ່າງການເມືອງ ກັບ ສາສະໜາ ບໍ່ຈະແຈ້ງ. ໃນຊຸມປີ 1980 ພະສັງຄະລາດແຫ່ງ ມະນີລາ ຊື່ ເຈມສ໌ ຄາດິນານ ຊິນ ກໍໄດ້ມີບົດບາດເດັດດ່ຽວ ຢູ່ໃນການໂຄ່ນລົ້ມປະທານາທິບໍດີ ມາກ໊ອສ, ສະຖານີວິທະຍຸ ຄາໂທລິກ ຣາດິໂອ ເວຣິຕັສ (Radio Veritas) ສົ່ງກະຈາຍສຽງໂຈມຕີ ມາກ໊ອສ ຢ່າງເປີດເຜີຍ ສ່ວນພະສົງບາດໜວງ ແລະ ແມ່ຊີ ກັບສະມາຊິກອື່ນໆ ຂອງສາສະນະຈັກ ກໍໄດ້ຮັບການຊຸກຍູ້ຈາກຂັ້ນເທິງຂອງຕົນ ອອກມາເດີນຂະບວນ ປະທ້ວງຄັດຄ້ານ ຕ້ານລະບອບ ມາກ໊ອສ. ໃນສະພາບແວດລ້ອມນີ້ ຄວາມໝາຍຂອງ

“ເທອະສາດການປົດປ່ອຍ” ຖືກດຶງເຂົ້າໄປຮ່ວມກັບນິກາຍຄາໂທລິກ ສາຍເຄັ່ງ ຢູ່ໃນ ປະເທດລາຕິນອາເມລິກາ ແຜ່ກວ້າງອອກ ເພື່ອບັນຈຸເອົາສູນກາງປະຊາທິປະໄຕເຂົ້ານຳ.

ພຸດທະສາສະໜານິກາຍເຖຣະວາດ ກໍຖືກກະທົບກະເທືອນຢ່າງແຮງ ໂດຍກະ ໂຕທາດແທ້ຂອງລະບອບການເມືອງ ທີ່ສາສະໜາພຸດເອງ ດຳລົງຄົງຕົວຢູ່ພາຍໃຕ້ລະ ບອບນັ້ນ ລະຫວ່າງຊຸມປີ 1960, 1970 ແລະ 1980. ຊາວພຸດໃນເມືອງ ຢູ່ປະ ເທດໄທ ຖືກດຶງອອກຈາກຄວາມຍຶດຖືດັ້ງເດີມ ຍ້ອນແຮງດຶງດູດຂະໜາດແຮງ ຂອງ ຄວາມທັນສະໄໝ. ຊາຍໜຸ່ມຜູ້ຮູ້ສຶກວ່າ ຕົນເອງມີພັນທະບວດ ໃນພຣະສາສະໜາ ແມ່ນແຕ່ໃນລະຍະສັ້ນໆ ນັບມື້ນັບມີໜ້ອຍລົງ ສ່ວນຈຳນວນຜູ້ສະໝັກໃຈຢູ່ໃນເພດ ສະມະນະ ລະຍະຍາວກວ່ານັ້ນ ກໍຍິ່ງມີໜ້ອຍຫຼາຍ. ຢູ່ໃນປະເທດລາວ ແລະ ກຳປູເຈ ຊາວພຸດພົບວ່າ ສາສະໜາຖືກຕິດຕາມກວດກາໂດຍລະບອບສັງຄົມນິຍົມ ແຕ່ຢູ່ພະ ມ້າ ກັບປະເທດໄທ ພຣະສົງອົງທີ່ມີຊື່ສຽງທາງເທດເຜີຍແຜ່ ເປັນໜໍປິ່ນປົວ ແລະ ໃຫ້ຄຳແນະນຳ ຫຼື ແມ່ນແຕ່ພະກຳມະຖານ ອົງມີຊື່ສຽງດ້ານປະກອບພິທີກຳ ກໍມັກ ມີສາວົກລູກສິດ ຕິດຕາມເປັນຈຳນວນຫຼາຍ, ພະສົງບາງຮູບໃນບາງກອກ ເປົ່າຫູຊົນ ຊັ້ນກາງຫົວຮີດເດີມ ດ້ວຍການໂຈມຕີລັດທິກອມມູນິດ ຢ່າງດຸເດືອດ. ພາຍຫຼັງໄດ້ຮັບ ເອກະລາດ ພຸດທະສາສະໜານິກາຍເຖຣະວາດ ໄດ້ຮັບການກອບກູ້ຄືນໃນປະເທດ ພະມ້າ ໂດຍແຮງສົ່ງເສີມສະໜັບສະໜຸນຈາກລັດຖະບານ ຢ່າງເປັນທາງການ ແລະບໍ່ ເປັນທາງການ ແລະໃນນັ້ນກໍມີຮູບແບບການປະຕິບັດແນວໃໝ່ ສຳລັບເອກະຊົນສ່ວນ ບຸກຄົນ ໂດຍສະເພາະ ການວິປັດສະນາກຳມະຖານ ເຊິ່ງນັບມື້ນັບມີຄວາມສຳຄັນ ຫຼາຍຂຶ້ນ ສຳລັບຊາວພຸດຜູ້ເຄັ່ງຄັດ. ເຖິງແມ່ນວ່າຊາວພະມ້າ ຈະເຫັນວ່າ ເປັນເລື່ອງ ຍາກ ທີ່ຈະເອົາເງິນໄປລົງທຶນໃສ່ການຜະລິດສິນຄ້າ ຫຼືການກະສິກຳ ແຕ່ການປຸກສ້າງ ສາສະນະສະຖານວັດວາ ໂດຍສະເພາະພາຍຫຼັງປີ 1962 ມາ ຊາວພຸດທີ່ເປັນຄະຣິຫັດ ໄດ້ບໍລິຈາກໂລຫະຄຳ ເງິນ ແລະ ທະນະບັດ ເປັນຈຳນວນຫຼາຍ ພຽງແຕ່ໃນລະຍະ ຫົກປີເທົ່ານັ້ນ ມີການບໍລິຈາກເງິນ ຫຼາຍກວ່າ 3.2 ລ້ານໂດລາອາເມລິກາ ໃສ່ການ ປຸກສ້າງວັດໃໝ່ແຫ່ງດຽວໃນກຸງ ຢ່າງກຸ້ງ.

ການຫັນໜ້າອອກຈາກສາສະນະຈັກ ກັບການຟື້ນຟູສາສະໜາ ໃນທົ່ວພາກພື້ນ ໄດ້ບັງຄັບໃຫ້ພວກຊົນຊັ້ນນຳ ໃນອາຊີຕາເວັນອອກສຽງໃຕ້ ເບິ່ງສາສະໜາດ້ວຍສາຍຕາຕ່າງຈາກເກົ່າ. ຕົວຢ່າງວ່າ ການທີ່ຊົນຊັ້ນນຳ ຍຶດໝັ້ນຢູ່ກັບຕຳລາວິທະຍາສາດທີ່ອີງໃສ່ແຕ່ຄວາມກ້າວໜ້າຢ່າງດຽວນັ້ນ ໄດ້ນຳໄປສູ່ການຈຳແນກຄວາມແຕກຕ່າງ ລະຫວ່າງ "ສາສະໜາ" (ເຊິ່ງພວກເຂົາໝາຍເອົາຄວາມຮູ້ປັດຊະຍາ ທາງສາສະໜາ ແບບນັກປາດໃນລະດັບສູງ) ກັບ "ຄວາມເຊື່ອແບບງົມງາຍ" ດ້ານໜຶ່ງ (ໃນນີ້ພວກເຂົາໝາຍເຖິງຮູບແບບແນວຄຶດ ທີ່ມີລັກສະນະດ້ອຍກວ່າ ແລະເປັນຮູບແບບຂອງມະຫາຊົນສ່ວນຫຼວງຫຼາຍກວ່າ) ຜູ້ປົກຄອງຊາວອາຊີແຕ່ເດີມ ແມ່ນແຕ່ໃນສະໄໝອານານິຄົມ ບໍ່ເຄີຍຈຳແນກແບ່ງຊັ້ນແບບນີ້ຈັກເທື່ອ. ຢ່າງໃດກໍຕາມ ຢູ່ຫວຽດນາມ ໃນຊຸມປີ 1980 ບໍ່ເຫັນວ່າພຸດທະສາສະໜາ ເປັນຂອບເຂດດຽວຂອງຮີດຄອງປະເພນີຊົນຊັ້ນທີ່ສູງກວ່າ ແລະ ຊົນຊັ້ນຕ່ຳກວ່າ ເຊິ່ງໃນທັງສອງນັ້ນ ອາດໄປກ່ຽວຂ້ອງກັບຊີວິດຊາວໄຮ່ຊາວນາ ນຳ. ແຕ່ແທນທີ່ຈະເປັນຢ່າງນັ້ນ ພຸດທະສາສະໜາ ໄດ້ແຍກອອກເປັນສອງປະເພດ ຄື ປະເພດທີ່ໃຈກວ້າງ ຍອມຮັບອັນອື່ນໄດ້ ແລະ ປະເພດບໍ່ຍອມຮັບສິ່ງອື່ນເລີຍ. ສຳລັບພຸດທະສາສະໜາຂອງຜູ້ຄົນທີ່ມີການສຶກສາດີໃນສັງຄົມເມືອງ ລັດຖະບານໃຊ້ວິທີການຜ່ອນຜັນແດ່ ແຕ່ກໍເຂົ້າໄປຈັດການຢູ່ນັ້ນເອງ ດ້ວຍການອະນຸຍາດ ໃຫ້ຄະນະກຳມະການສູນກາງຂອງພຸດທະຈັກ ຢູ່ໃນຫວຽດນາມ ຄົງຕົວຢູ່ໄດ້ ແລະ ໃນປີ 1981 ໄດ້ໄຂສະຖາບັນການສຶກສາຊັ້ນສູງ ເພື່ອການສຶກສາພຸດທະສາສະໜາ ແຫ່ງຫວຽດນາມຂຶ້ນ. ແນວໃດກໍດີ ລັດຖະບານກໍຍັງສະແດງທ່າທີເປັນປໍລະປັກກັບ ການເຊື່ອໃນເລື່ອງຜູ້ມີບຸນ ທີ່ຈະມາໂຜດໃນອະນາຄົດ ທີ່ຍັງແຜ່ຫຼາຍຢູ່ທົ່ວໄປ ເຖິງວ່າຄຳສັ່ງສອນຂອງພວກເຂົາ ບໍ່ໄດ້ກ່ຽວກັບການເມືອງກໍຕາມ. ພວກໝໍມໍ ໝໍຜີ ແລະ ໝໍເຢົ້າຢາ ພື້ນເມືອງທັງຫຼາຍ ເຊິ່ງສະໄໝຢູ່ພາຍໃຕ້ລະບອບລາຊາທິປະໄຕ (ຫຼື ພາຍໃຕ້ການປົກຄອງຝຣັ່ງ) ອາດຖືກຕິດຕາມນຳເບິ່ງ ແຕ່ບໍ່ເຖິງກັບຖືກບັງຄັບໃຫ້ປ່ຽນອາຊີບ ມາບັດນີ້ ຖືກຕູ່ຫາ ບໍ່ພຽງແຕ່ວ່າເປັນ "ຜູ້ຫຼ້າຫຼັງ" ເທົ່ານັ້ນ ແຕ່ຍັງເປັນ ອຸປະສັກສຳຄັນຕໍ່ເຫງົ້າພະລັງວັດທະນະທຳ ທີ່ເປັນວິທະຍາສາດກວ່າ ແລະ ສົມເຫດຜົນກວ່າ ທາງດ້ານເສດຖະກິດ. ຜ້າຄຸມຫົວ ເຄື່ອງຊີງ ຂອງພະເຈົ້າຈັກກະພັດ ແລະ ເຄື່ອງປະກອບໃຊ້ໃນການເຮັດຮີດຄອງຂອງໝໍຜີ ໃນຊົນນະບົດ ໄດ້ຖືກຍຶດໄປ. ພວກແມ່ຍິງ ຖືກບັງ

ຄັບໃຫ້ປະຖິ້ມອາຊີບຂອງພວກເຂົາ ແລະ ຍ້າຍເຂົ້າໄປຢູ່ໃນເຂດເຮັດວຽກງານໃໝ່. ເຖິງວ່າ ມີຄວາມກົດດັນແບບນີ້ ມາຮອດທ້າຍປີ 1982 ຊາວຫວຽດນາມຈຳນວນຫຼາຍ ກໍໄດ້ປະກາດຕົນເອງວ່າ ເປັນສາສະດາພະຍາກອນ ຂອງສະມັດຊາດອກໄມ້ ແຫ່ງ ພຣະພຸດທະອົງ ທີ່ຈະລົງມາໂຜດໃນອະນາຄົດ ແລະ ສາວົກຂອງພວກເຂົາ ກໍຄືວ່າ ບໍ່ມີພຽງແຕ່ ສັງກະລີເຝົ້າວັດ ພວກໝໍມໍ ນາຍຄ້າຊາວຂາຍເທົ່ານັ້ນ ແຕ່ຍັງມີນັກສຶກສາ ປັນຍາຊົນ ແລະ ສະມາຊິກພັກກອມມູນິດ ຢູ່ນຳ.

ຕົວຢ່າງໜຶ່ງ ຄ້າຍຄືກັນ ທີ່ເກີດຂຶ້ນໃນອິນໂດເນເຊຍ ເມື່ອຕົ້ນຊຸມປີ 1980 ແມ່ນ "ກໍລະນີສະວິດໂຕ (Sawito affairs)" ມີການສັ່ງສອນເຖິງຄວາມສັກສິດອັດ ສະຈັນ ຂອງສາສະໜາພຸດ ປະສົມຮົນດູແບບຊະວາ ເຂົ້າກັນ ແຕ່ຍັງມີສ່ວນພົວພັນກັບ ການຕໍ່ຕ້ານລັດຖະບານນຳ. ຈາກປະຫວັດຕອນນີ້ ອາດພໍປະເມີນໄດ້ວ່າ "ປະເພນີຍິບ ຍ່ອຍ" ຫຼືວ່າ ການປະສົມປະສານກັນຂອງປະເພນີອັນຍິ່ງໃຫຍ່ ກັບອັນມະຍິບມະຍ່ອຍ ຂອງມະຫາຊົນ ໄດ້ເຄີຍມີມາຕະຫຼອດ ຢູ່ອາຊີຕາເວັນອອກສຽງໃຕ້ ທັງໆທີ່ວ່າ ໄດ້ມີ ການລົບລ້າງແນວຄວາມຄຶດ ຂອງຊາວອາຊີຕາເວັນອອກສຽງໃຕ້ ນັບແຕ່ ສົງຄາມ ໂລກຄັ້ງທີ II ສ້ຽງສຸດລົງ. ທີ່ແທ້ແລ້ວ ລັດທິຄວາມເຊື່ອທີ່ແຜ່ຫຼາຍ ຍັງຄົງຍືນຍົງມາ ໃນປະເທດຟີລິບປິນ ຄຽງຄູ່ກັນກັບ ຫຼື "ທີ່ຝັງຊ້ອນຢູ່", ພາຍໃຕ້ຄວາມເຊື່ອທາງສາ ສະໜາຄາໂທລິກ. ຊາວພຸດຈຳນວນຫຼາຍຮ້ອຍຄົນ ທີ່ຍັງຂາບໄຫວ້ບູຊາພະພຸດທະອົງ ໃນແຕ່ລະວັນນັ້ນ ບໍ່ແມ່ນເພື່ອບັນລຸການຕັດສະຮູ້ ແຕ່ຫາກ ເພື່ອຂໍໃຫ້ຊ່ວງເຊົ້າຈາກ ການເຈັບປ່ວຍ ຫຼື ໃຫ້ລອດພົ້ນຈາກວິກິດການຕ່າງໆ. ຢູ່ພະມ້າ ບ່ອນທີ່ລັດຖະບານ ໄດ້ກວດກາສິ່ງພິມຕ່າງໆທີ່ມີຢູ່ ໃນຊຸມປີ 1980, ປາກົດວ່າໜັງສືພິມ ວາລະສານ ກ່ຽວ ກັບການດູມໍ ເບິ່ງເລກຕ່າງໆ ຍັງມີຢູ່ຢ່າງແຜ່ຫຼາຍ ຄືໆກັບຢູ່ໃນປະເທດໄທ. ຍົກເວັ້ນ ຢູ່ບ່ອນທີ່ ລັດເປັນປໍລະປັກກັບສາສະໜາ ແລະ ໃນບ່ອນທີ່ ນັກຟື້ນຟູອິສະລາມ ຕ້ອງ ການໃຫ້ມີການປະຕິບັດຢ່າງຖືກຕ້ອງ ຢູ່ໃນໝູ່ຜູ້ສັດທາທັງຫຼາຍ, ຊາວອາຊີຕາເວັນ ອອກສຽງໃຕ້ ເກືອບທັງໝົດ ຍັງຄົງຍຶດໝັ້ນ ປະຕິບັດຕາມຫຼັກສາສະໜາຂອງຕົນ ທີ່ ຍັງສອດຄ່ອງ ກັບຄວາມຕ້ອງການທາງດ້ານຈິດໃຈ ແລະ ທາງສັງຄົມຂອງພວກເຂົາ. ສ່ວນອັນທີ່ບໍ່ສອດຄ່ອງ ກໍຖືກປັບປ່ຽນ ຫຼື ຖິ້ມໄປເລີຍ ແລະ ອີກຄັ້ງໜຶ່ງ ໄດ້ມີການ

ປະຕິເສດ ສຳນຶກອັນໄຮ້ດຽງສາທີ່ວ່າ ພຶດຕິກຳທາງສາສະໜາ ເປັນສິ່ງ "ຢູ່ນອກເໜືອ ການເວລາ" ນັ້ນນຳ ກໍຄືມັນຍັງຄົງຢູ່ຢ່າງເດີມຕະຫຼອດໄປ.

ເປັນສິ່ງແນ່ນອນຢູ່ແລ້ວວ່າ ສາສະໜາທັງຫຼາຍ ຖືກກະທົບກະເທືອນ ຈາກ ສະພາບແວດລ້ອມທາງວັດທະນະທຳ ບ່ອນທີ່ສາສະໜາດຳລົງຄົງຕົວຢູ່. ໃນອາຊີຕາ ເວັນອອກສຽງໃຕ້ ການຫັນປ່ຽນເປັນຕົວເມືອງ ເລີ່ມດັດແປງຮູບໂສມຂອງແຫຼ່ງທີ່ມີ ປະຊາກອນນັບມື້ນັບຫຼາຍຂຶ້ນ ກ່ອນໝູ່. ຜູ້ທີ່ກັບໄປຢ້ຽມຢາມອາຊີຕາເວັນອອກສຽງ ໃຕ້ ເປັນລະຍະໆ ໂດຍສະເພາະ ຖ້າເດີນທາງໄປທາງອາກາດ ມັກຮູ້ສຶກແປກໃຈ ນຳ ສິ່ງທີ່ພວກເຂົາໄດ້ເຫັນ ນັ້ນຄືການຫັນປ່ຽນເປັນຕົວເມືອງຢ່າງໄວວາ ຂອງເຂດນັ້ນໆ. ຄວາມວ່ອງໄວໃນການປ່ຽນແປງເປັນຕົວເມືອງນັ້ນ ໄດ້ທະວີຂຶ້ນຢ່າງໜ້າຕົກໃຈ ເມື່ອ ປຽບທຽບໃສ່ກັບຍຸກອານານິຄົມ ເມື່ອພາກພື້ນນີ້ ເປັນສ່ວນໜຶ່ງຂອງໂລກ ທີ່ມີຊຸມຊົນ ຕົວເມືອງໜ້ອຍທີ່ສຸດ. ເມືອງເກົ່າແກ່ທັງຫຼາຍ ເຊັ່ນ ຈາກາຣຕາ ບາງກອກ ກົວລາລຳເປີ ແລະ ມະນີລາ ຖືກປ່ຽນມາເປັນນະຄອນຫຼວງອັນໃຫຍ່ກວ້າງ ທັນສະໄໝທີ່ສຸດ, ແຕ່ໃນ ຄວາມເປັນຈິງ ອັດຕາສ່ວນຂອງຊາວອາຊີຕາເວັນອອກສຽງໃຕ້ ທີ່ໄດ້ເຂົ້າມາຢູ່ໃນ ເມືອງໃຫຍ່ໆເຫຼົ່ານັ້ນ ຫວ່າງບໍ່ດົນມານີ້ ກໍຍັງມີໜ້ອຍຫຼາຍ ເມື່ອປຽບໃສ່ຄົນກຸ່ມດຽວ ກັນນີ້ ໃນພາກສ່ວນອື່ນໆ ໂດຍສະເພາະ ໃນລາຕິນອາເມລິກາ, ອາຟຣິກາຕາເວັນອອກ ແລະ ອາຊີໃຕ້. ຍົກເວັ້ນ ລັດທີ່ບໍ່ທຳມະດາ ເຊັ່ນ ບຣູໄນ ກັບ ສິງກະໂປ ທີ່ ປະກາດວ່າ ມີປະຊາກອນເປັນຊາວໃນເມືອງ 71% ແລະ 100% ຕາມລຳດັບ, ມີແຕ່ກົວດອນມາລາຢູ ກັບ ຟິລິບປິນ ສອງປະເທດນີ້ເທົ່ານັ້ນ ໃນຊຸມປີ 1980 ມີ ປະຊາກອນຫຼາຍກວ່າໜຶ່ງສ່ວນສາມ ດຳລົງຊີວິດຢູ່ໃນເມືອງ, ຂະນະທີ່ ປະຊາກອນ ກວ່າເຄິ່ງໜຶ່ງ ຂອງປະເທດ ອາກຊັງຕິນາ ບຽດແຫຍ້ກັນຢູ່ໃນຊຸມຊົນອັ່ງອໍ (ຊະລຳ) ຂອງຕົວເມືອງ ບູຍໂນເອແຣສ (Buenos Aires).

ເຖິງວ່າ ສະຖາປັດຕະຍະກຳຕາມແບບສາກົນ ໄດ້ເຮັດໃຫ້ມີອາຄານຕຶກສູງ ດາດຟ້າຢ່າງຫຼວງຫຼາຍ ແລະ ປ່ຽນແປງຮູບໂສມຂອງເມືອງ ຈາກາຕາ ມະນີລາ ບາງ ກອກ ແລະ ກົວລາລຳເປີ ທີ່ລຽນແບບຂອງ ສິງກະໂປ, ຂະໜາດທີ່ແທ້ຈິງຂອງຕົວ

ເມືອງ ທີ່ເຄີຍເປັນອານານິຄົມທຳມະດາໆເຫຼົ່ານີ້ ບັດນີ້ ໄດ້ກາຍເປັນຕົວເມືອງທີ່ໜ້າຕື່ນເຕັ້ນຫຼາຍຂຶ້ນໆ. ໃນກາງຊຸມປີ 1980 ປະຊາກອນປະມານ 7 ລ້ານຄົນ ອາໄສຢູ່ເຂດບາງກອກ ກັບບໍລິເວນຮອບນອກຂອງເມືອງ, ມີ 8.5 ລ້ານຄົນ ອາໄສຢູ່ໃນເມືອງ ຈາກາຕາ ແລະ ອະນາເຂດຂອງ ມະນີລາ ທັງໝົດ ຮວມທັງບໍລິເວນອ້ອມຮອບ ທີ່ມີພື້ນທີ່ປະມານ 246 ໄມລ໌ ມີນທີນ ທີ່ປະທານາທິບໍດີ ມາກ້ອສ ປະດິດສ້າງຂຶ້ນ ໃຫ້ເປັນທີ່ຢູ່ອາໄສຂອງຜູ້ຄົນ 13% ຂອງປະຊາກອນທັງໝົດ ຂອງປະເທດຟີລິບປິນ ນັ້ນໝາຍຄວາມວ່າເກືອບ 9 ລ້ານຄົນ.

ບໍ່ມີຫຍັງໜ້າສົນໃຈເປັນພິເສດ ກ່ຽວກັບເຫດຜົນທີ່ເຮັດໃຫ້ມີການເຕີບໃຫຍ່ ອັນນີ້ ນອກຈາກອັດຕາການເກີດທີ່ສູງແລ້ວ ເຫດຜົນອື່ນໆປະກອບ ມີ ຄວາມຫວັງ ທີ່ຈະໄດ້ຜົນປະໂຫຍດທາງເສດຖະກິດ ແລະ ວຽກງານເຮັດກັບລັດຖະບານ ວຽກງານ ໃນອຸດສະຫະກຳທີ່ໝັ້ນຄົງດີ, ໂອກາດໃນການສຶກສາຫຼາຍຂຶ້ນ ແລະ ຊີວິດອັນໜ້າ ຕື່ນເຕັ້ນໃນເມືອງ. ພວກນັກວິຊາການຖົກຖຽງກັນຢ່າງບໍ່ຢຸດຢ່ອນ ໃນເລື່ອງທີ່ວ່າ ແມ່ນ ຊາວອາຊີຕາເວັນອອກສຽງໃຕ້ ຖືກຊຸກຍູ້ອອກມາຈາກສິ່ງແວດລ້ອມຊົນນະບົດ ຫຼືວ່າ ຖືກຍັດແຫຍ້ໃຫ້ເຂົ້າມາຢູ່ໃນຕົວເມືອງກັນແທ້. ບ່ອນໃດທີ່ດິນທາຍາກ ແລະປະຊາຊົນ ຊົນນະບົດ ມີຢູ່ໜາແໜ້ນແດ່ ເຊັ່ນຢູ່ ຊະວາ ເປັນຕົ້ນ "ປັດໄຈຊຸກຍູ້" ກໍມີຫຼາຍກວ່າ ແຕ່ບ່ອນໃດ ທີ່ໂອກາດ ມີວຽກເຮັດງານທຳຫຼາຍຂຶ້ນ ເຊັ່ນໃນເຂດນິຄົມອຸດສະຫະກຳ ຢູ່ມາເລເຊຍ ຜູ້ຄົນກໍຖືກດຶງດູດໃຫ້ເຂົ້າໄປ.

ທຸກເຫດຜົນ ລ້ວນເປັນເລື່ອງຊັບຊ້ອນຫຍຸ້ງເຫຍີງແດ່ ເພາະວ່າ ຜູ້ຄົນທີ່ອົບພະຍົບເຄື່ອນຍ້າຍໄປມາ ໃນອາຊີຕາເວັນອອກສຽງໃຕ້ ຈຳນວນຫຼາຍ ທັງຍິງຊາຍ ເຂົ້າມາຢູ່ໃນເມືອງ ໃນເວລາທີ່ຜົນຜະລິດກະສິກຳຕົກຕ່ຳ ເພື່ອຊອກຫາເງິນລາຍໄດ້ເສີມ. ຢູ່ ຈາກາຕາ ຜູ້ຄົນຊາວອົບພະຍົບເຫຼົ່ານີ້ ມັກພັກເຊົ່າຢູ່ກັບບ່ອນເຮັດວຽກໂລດ ຫຼື ທີ່ເອີ້ນກັນໃນພາສາພື້ນເມືອງວ່າ "ປອນດອກ (Pondok)" ໃນນັ້ນ ເງື່ອນໄຂການ ເຮັດວຽກຂີ້ຮ້າຍຫຼາຍ. ໃນເມື່ອກ່ອນ ສຳລັບຄົນຈາກບ້ານດຽວກັນ ຫຼື ຜູ້ຄົນທີ່ມາຈາກ ກຸ່ມຕະກູນພາສາດຽວກັນ ພວກເຂົາມັກໄປຕັ້ງຖິ່ນຖານຢູ່ແຫ່ງອື່ນໆທີ່ໜ້າຢູ່ກວ່າ. ເຊັ່ນ

ໃນຄຸ້ມ ຊີບັນໂນ ໃນ ມະນີລາ. ນັບແຕ່ກາງຊຸມປີ 1960 ມາ ຊາວອີບພະຍົບຈຳນວນຫຼວງຫຼາຍເຫຼົ່ານີ້ ມີທ່າອ່ຽງວ່າ ຈະພັກເຊົາຢູ່ໃນຕົວເມືອງໃຫຍ່ ດົນນານກວ່າເກົ່າ ໂດຍເຂົ້າຢູ່ປະປົນກັບຊາວເມືອງທີ່ຢູ່ຖາວອນແລ້ວ. ຢ່າງໃດກໍດີ ຜູ້ຄົນເຫຼົ່ານີ້ ສ່ວນຫຼາຍ ຍັງຄົງຕິດຕໍ່ກັບບ້ານເກີດເດີມຂອງພວກເຂົາ ໃນຊົນນະບົດ ແລະກັບຄືນໄປບ້ານເກົ່າເພື່ອແຕ່ງດອງ ຫຼື ໃນຍາມຕົກວ່ຽງງານຢູ່ໃນເມືອງ. ການສຶກສາຄົ້ນຄວ້າຫຼາຍຊຸດເປີດເຜີຍວ່າ ສ່ວນຫຼາຍແລ້ວ ຜູ້ຄົນທີ່ມີຄົນສະໜັບສະໜຸນ ຫຼື ລົ້ງເຄີຍກັບຄົນໃນເມືອງຜູ້ຮັ່ງມີດອກ ຈຶ່ງກ້າສ່ຽງໄພ ຍ້າຍເຂົ້າໄປຢູ່ໃນເມືອງ ແບບຖາວອນ.

ລັກສະນະຂອງຊີວິດໃນເມືອງ ຢູ່ປະເທດອາຊີຕາເວນອອກສ່ຽງໃຕ້ ມີສອງແບບ ທີ່ຖືກເລືອກວ່າ ເປັນແບບໃໝ່ພໍສົມຄວນ ເຖິງວ່າບໍ່ເປັນເລື່ອງໜ້າປະຫຼາດໃຈເທົ່າໃດ. ຕົວເມືອງໃຫຍ່ໆເຫຼົ່ານີ້ ບໍ່ຄືກັບໃນຍຸກອານານິຄົມ ບັດນີ້ມັນເປັນຍິ່ງກວ່າຄັ້ງສ່ຽງສິນຄ້າຂອງຕ່າງປະເທດຊ້ຳອີກ ແລະໄດ້ພັດທະນາໂຄງສ້າງດ້ານສັງຄົມ ກັບຮູບແບບການວ່າຈ້າງເຮັດວຽກຂຶ້ນມາ ແທນການບໍລິການສິນຄ້າ ໃຫ້ແກ່ເຂດຊົນນະບົດ. ໄດ້ມີການຈັດແບ່ງຊົນຊັ້ນກຳມາຊີບ ເປັນສ່ວນໜຶ່ງ ໃນກຳລັງແຮງງານ, ມີຜົນໃຫ້ເກີດມີການຈັດເປັນກຸ່ມພວກ ມີຄວາມສາມັກຄີ ແລະ ສະຕິຕື່ນຕົວໃນເລື່ອງຊົນຊັ້ນ ນີ້ແມ່ນໃນດ້ານໜຶ່ງ ແລະໃນອີກດ້ານອື່ນ ກໍເກີດມີຊົນຊັ້ນກາງທີ່ເປັນຂ້າລັດຖະການ ນັກທຸລະກິດນ້ອຍ ມີທ່າອ່ຽງໄປທາງຕາເວັນຕົກແດ່ ເຊິ່ງກໍເປັນທີ່ຍອມຮັບກັນໃນສັງຄົມ. ຂະນະທີ່ແຮງງານຮັບຈ້າງ ມັກອາໄສຢູ່ໃນເຮືອນຕູບ ປຸກຂຶ້ນຕາມດິນຫວ່າງເປົ່າ ໃນບໍລິເວນກາງໃຈເມືອງ ຫຼືບໍ່ ກໍຕ້ອງເດີນທາງມາໄກດ້ວຍລົດໂດຍສານ ລົດເມທີ່ອັ່ງອໍບ່ຽດແຫຍ້ກັນ ມາຈາກເຂດອ້ອມເມືອງ, ພາກສ່ວນທີ່ຮັ່ງມີກວ່າ ກັບມີອຳນາດກວ່າຂອງຊົນຊັ້ນກາງໃໝ່ ມີທ່າທີວ່າຈະແຍກຕົວອອກຈາກກຸ່ມຄົນທຸກຍາກ ໂດຍເດີນທາງຢູ່ພາຍໃນລົດສ່ວນຕົວ ຕິດອາກາດເຢັນ ກັບແຜ່ນແກ້ວຕິດຟິມກັນແສງ ແລະຢູ່ພາຍໃນເຮືອນຫຼັງໃຫຍ່ ລ້ອມຮົ້ວປິດແຈບ ໃນບໍລິເວນນອກເມືອງ ບ່ອນບໍ່ມີຄົນທຸກຍາກຢູ່ ແລະບໍ່ຕ້ອນຮັບຄົນທຸກ ນອກຈາກວ່າ ຈ້າງພວກເຂົາມາເປັນຄົນຮັບໃຊ້ໃນເຮືອນ. ຢູ່ໃນຄຸ້ມ ມາກາຕິ (Makati) ກາງ ມະນີລາ ແລະ ຄຸ້ມ ປອນດອກ ອິນທາ (Pondok Indha) ໃນເມືອງ ຈາກາຕາ ນັກທ່ອງທ່ຽວອາດຝັນໄປໄກວ່າ ພວກເຂົາກຳລັງຍ່າງຢູ່ໃນ

ບໍລິເວນຊານເມືອງ ຮູສຕັນ (Huston) ຫຼື ເຂດນອກເມືອງ ຊັນດິເອໂກ (San Diego) ໄດ້.

ຢູ່ລະຫວ່າງກາງຂອງຊົນຊັ້ນທັງສອງນີ້ ຍັງມີຜູ້ຄົນອີກຫຼາຍລ້ານ ທີ່ບໍ່ສາມາດ ສັບຊ້ອນເຂົ້າໃນຊົນຊັ້ນ (ສົມມຸດຕາມການວິໄຈ) ສອງປະເພດນັ້ນ ໄດ້ດີເທົ່າໃດ. ການ ຕອບສະໜອງຂອງຊົນຊັ້ນຜູ້ອອກແຮງງານໃນເມືອງໃໝ່ ຕໍ່ແຮງງານຮັບຈ້າງ ໃນພາກ ພື້ນອາຊີຕາເວັນອອກສ່ຽງໃຕ້ ແຕກຕ່າງກັນໄປ ແລະຖືກຄວບຄຸມພໍສົມຄວນ ໂດຍພະ ນັກງານໃນອຳນາດການປົກຄອງແບບປະຊາທິປະໄຕ ດັ່ງທີ່ເວົ້າກັນມາແລ້ວ ຫຼື ດ້ວຍ ລະບອບສັງຄົມນິຍົມທີ່ເຄັ່ງຄັດກວ່າ ແລະຖືກໂຍະຍານລົງ ຕາມລັກສະນະຊົນນະບົດ ທີ່ສືບທອດມານັ້ນ ເປັນຊີວິດໃນເມືອງ. ລະບົບສະຫະພາບແຮງງານ ໃນອາຊີຕາເວັນ ອອກສ່ຽງໃຕ້ ຍັງບໍ່ພັດທະນາເຕັມຂີດ ການນັດຢຸດງານຍັງມີໜ້ອຍ ສ່ວນຫຼາຍຍັງຖື ວ່າ ບໍ່ຖືກຕ້ອງຕາມກົດໝາຍ ແລະຄວາມຜູກພັນຕາມສາຍຂວາງ ລະຫວ່າງວຽກ ງານແຕ່ລະຊະນິດ ກໍບໍ່ຄ່ອຍມີ. ເຫດປັດໄຈຊົນນະບົດ ກໍມີຄວາມສຳຄັນຄືກັນ. ໃນ ພາກພື້ນ ອາຊີຕາເວັນອອກສ່ຽງໃຕ້ ຄຳວ່າ "ບ້ານ" (ລາວ), ໝູ່ບ້ານ (ໄທ), ກຳປົງ (ຂະເໝນ), ບາຣັໂອ (ຕາກາລອກ), ໄອວາ ໃຊ້ພັນລະນາເຂດຄຸ້ມໃນເມືອງ ເຊິ່ງ ປະຊາຊົນເຄີຍມີຄວາມສຳພັນ ເປັນພີ່ນ້ອງກັນມາ ມີຄວາມຮູ້ສຶກວ່າ ພວກເຂົາເປັນ ຄົນພົນລະເມືອງຂອງ "ບ້ານນັ້ນ" ຫຼາຍກວ່າ ເຂດຄຸ້ມໃດໜຶ່ງ ທີ່ກວ້າງໃຫຍ່ກວ່າ ເຊັ່ນ ເມືອງ ຫຼືວ່າ ສະຫະພາບແຮງງານ. ແນ່ນອນ ຄວາມຊື່ສັດພັກດີ ຕໍ່ຄວາມເປັນບ້ານ ດຽວກັນປະເພດນີ້ ບໍ່ແມ່ນສິ່ງແປກໃໝ່ຂອງຊາວອາຊີຕາເວັນອອກສ່ຽງໃຕ້ ແຕ່ກໍເປັນ ສິ່ງທີ່ເຫັນໄດ້ຢ່າງຈະແຈ້ງ ເພາະວ່າ ໃນຫຼາຍໆບ່ອນ ຍັງເປັນແນວນັ້ນຢູ່. ບໍ່ຄືກັບໃນຍຸກ ອາມານິຄົມ ຮູບແບບການບໍລິໂພກ ແລະຄວາມຢາກເປັນຢາກມີ ແບບຄົນໃນເມືອງ ໄດ້ແຜ່ກະຈາຍອອກໄປຮອດບ້ານນອກຂອກຄາເມ ເຄື່ອງໃຊ້ທີ່ເຮັດດ້ວຍຢາງປລາດ ສະຕິກ ກັບນ້ຳຫວານກະປ໋ອງ ມີຂາຍຊະຊາຍ ເຕັມໄປທົ່ວທຸກແຫ່ງ.

ແມ່ນແຕ່ ຢູ່ຫວຽດນາມ ຄວາມເທີ່ນິຍົມຊົມຊອບຊີວິດແບບໃນເມືອງ ຂອງ ຊາວຊົນນະບົດ ກໍໄດ້ຖືກບັນຈຸເຂົ້າເປັນຂໍ້ມູນສະຖິຕິທາງການ. ການສຳຫຼວດສຳມະ

ໃນຄິວປີ 1979 ບັນທຶກວ່າ ປະຊາກອນຂອງ ຮ່າໂນຍ ມີ 6.2 ລ້ານຄົນ ແຕ່ ຈຳແນກຈັດແບ່ງປະຊາຊົນເຫຼົ່ານີ້ ເກືອບສອງສ່ວນສາມວ່າ ເປັນ "ຊາວບ້ານ". ຕິວ ເລກນີ້ ຍັງສູງຂຶ້ນເລື້ອຍໆເຊັ່ນກັນ ເມື່ອປຽບໃສ່ກັບ ບໍລິເວນຮອບນອກຂອງນະຄອນ ໂຮຈິມິນ ເຊິ່ງເມື່ອກ່ອນນີ້ ເອີ້ນວ່າ ໄຊ່ງ່ອນ ມີປະຊາຊົນເກືອບໜຶ່ງສ່ວນສີ່ ເອີ້ນວ່າ ເປັນຊາວບ້ານ. ໃນສະໄໝອານານິຄົມ ດັ່ງທີ່ໄດ້ເວົ້າກັນມາແລ້ວ ສູນກາງຂອງເມືອງ ເກົ່າແກ່ເຫຼົ່ານີ້ ລ້ວນແຕ່ແມ່ນຖິ່ນຖານເດີມຂອງຊົນເຜົ່າສ່ວນນ້ອຍຕ່າງໆ ໂດຍສະ ເພາະຊາວຈີນ ເຊັ່ນໃນ ພະມ້າ ກໍແມ່ນຊາວອິນເດຍ. ສິ່ງເຫຼົ່ານີ້ ບໍ່ໄດ້ມີຢູ່ໃຫ້ເຫັນອີກ ແລ້ວ ຍ້ອນວ່າ ຊາວອາຊີຕາເວັນອອກສຽງໃຕ້ ທີ່ມີເຊື້ອສາຍຈີນ ຫຼາຍແສນຄົນ ໄດ້ ອົບພະຍົບອອກໄປຢູ່ບໍລິເວນຮອບນອກເມືອງ ດັ່ງໃນກໍລະນີຫວຽດນາມນັ້ນ ແຮ່ງໜິ ອອກຈາກປະເທດໄປເລີຍ ໃນຂະນະທີ່ຊາວເມືອງທ້ອງຖິ່ນຫຼາຍລ້ານຄົນ ໂດຍສະ ເພາະໃນ ມາເລເຊຍ ກັບ ຟີລິບປິນ ຊ້ຳພາກັນອົບພະຍົບເຂົ້າສູ່ຕິວເມືອງ. ການທີ່ ຊາວອິນເດຍຫຼາຍໝື່ນຄົນ ໜີອອກຈາກພະມ້າ (ມ່ຽນມ້າ) ໃນຊຸມປີ 1950 ເຮັດໃຫ້ ຢ່າງກ້ຽງ ກາຍເປັນເມືອງທີ່ມີຊາວພະມ້າອາໄສຢູ່ເປັນສ່ວນຫຼາຍ ເປັນຄັ້ງທຳອິດ ໃນ ປະຫວັດສາດສະໄໝໃໝ່ຂອງພະມ້າ.

ບາງທີ ດັ່ງທີ່ການຄົ້ນຄວ້າໄດ້ຊີ້ບອກ, ສະມັດຖະພາບຂອງບັນດາຊຸມຊົນ ເມືອງເຫຼົ່ານີ້ ໃນການດຶງດູດ ຫຼື ດູດຊັບເອົາຊັບພະຍາກອນທັ້ງຫຼາຍເຂົ້າມາໄວ້ນຳກັນ ນັ້ນ ໄດ້ຊ່ອຍບັນເທົາ ສິ່ງທີ່ອາດກາຍເປັນວິກິດການຢ່າງຮ້າຍແຮງ ຢູ່ໃນການຈັດ ສະໜອງການບໍລິການ. ເຖິງແມ່ນວ່າ ມີບາງຄົນເວົ້າວ່າ ອັນນີ້ແມ່ນການເຂົ້າຂ້າງໂຕເອງ ຂອງຄົນໃນເມືອງ ຕໍ່ການວາງແຜນລະດັບຊາດ ຂອງປະເທດອາຊີຕາເວັນອອກສຽງໃຕ້ ແລະ ຄວາມອະຄະຕິຂອງຊົນຊັ້ນກາງ ໃນການຄິດກ່ຽວກັບຕິວເມືອງ ກໍຕາມ ຜູ້ຄົນ ສ່ວນໃຫຍ່ໃນເມືອງໃຫຍ່ໆຂອງອາຊີຕາເວັນອອກສຽງໃຕ້ ຕ່າງກັບຊົນຊັ້ນປົກຄອງກຸ່ມ ໃໝ່ອື່ນໆ ພວກເຂົາໄດ້ຜ່ານຜ່າ ສູ້ທົນ ກັບການຂາດເຂີນເປັນລະຍະໆ ໃນເລື່ອງນ້ຳ ໃຊ້, ບັນຫາທ່ໍສິ່ງນ້ຳ ແລະພະລັງງານໄຟຟ້າ, ສະພາບນ້ຳຖ້ວມ ຕາມລະດູການ ໂດຍ ສະເພາະແລ້ວ ຢູ່ບາງກອກ ແມ່ນຮ້າຍແຮງສົມຄວນ ແລະຍັງມີເລື່ອງ ຄວາມຊັກຊ້າ ແລະຄວາມລົ້ມແຫຼວ ຂອງລະບົບຄົມມະນາຄົມ ໃນຕິວເມືອງອີກ.

ບັນດາຕົວເມືອງໃນອາຊີຕາເວັນອອກສຽງໃຕ້ ຍັງຄົງມີສິ່ງທີ່ນັກເສດຖະສາດ ພາກັນເອີ້ນວ່າ "ພາກສ່ວນນອກລະບົບ" ເຊິ່ງປະກອບດ້ວຍ ພໍ່ຄ້າຊາວຂາຍຍ່ອຍ ຜູ່ ຮັບເໝົາຂະໜາດນ້ອຍ ພໍ່ຄ້າມືກາງ ຄົນຂັບລົດຮັບຈ້າງ ແລະອື່ນໆ ປະເພດດຽວກັນ. ຊີວິດຂອງບຸກຄົນເຫຼົ່ານີ້ ຕົກຢູ່ໃນສະຖານະການ ເກືອບຈະເປັນກຳລັງແຮງງານ. ພວກ ເຂົາຕ້ອງດິ້ນຮົນ ຫາເຊົ້າກິນຄ່ຳ ໃຫ້ກຸ້ມມື້ກຸ້ມວັນໄປ. ຕົວຢ່າງ ໃນກຸງ ຈາກາຕາ ເມື່ອ ພວກເຂົາຫາເງິນ ສຳລັບຄ່າອາຫານກັບຄ່າເດີນທາງ ພຽງພໍສຳລັບແຕ່ລະມື້ແລ້ວ ມີ ໜ້ອຍຄົນທີ່ສຸດ ຈະໄດ້ໃຊ້ຈ່າຍເງິນເກີນກວ່າ 20 ໂດລາຕໍ່ເດືອນ, ສ່ວນຫຼາຍ ພາກັນ ຈັດສົ່ງເງິນ ຄືນໄປໃຫ້ຄອບຄົວ ໃນຊົນນະບົດ.

ລະບອບການປົກຄອງແບບສັງຄົມນິຍົມ ຫຼື ບໍ່ເປັນສັງຄົມນິຍົມ ກໍຄືກັນ ມັກ ມີທ່າອ່ຽງ ເບິ່ງຜູ້ຄົນເຫຼົ່ານີ້ວ່າ ເປັນໄພຄຸກຄາມຢ່າງໜຶ່ງ ທັງໜ້າອັບອາຍ ອາດຈະປ່ຽນ ຈາກຄວາມຊື່ສັດໃຫ້ກາຍເປັນປໍລະປັກຕໍ່ລັດ ຫຼື ເວົ້າອີກແບບໜຶ່ງວ່າ ເຂົາເຈົ້າອາດເຮັດ ໃຫ້ອຸດົມການລັດ ກ່ຽວກັບການພັດທະນາປະເທດໃຫ້ທັນສະໄໝ ຕາມແບບທຶນນິຍົມ ຫຼື ແບບສັງຄົມນິຍົມນັ້ນ ເສື່ອມເສຍຊື່ສຽງລົງ. ຢູ່ກຸງ ຈາກາຕາ, ຢ່າງກຸ້ງ ແລະ ຮ່າໂນຍ ເມື່ອປາຍຊຸມປີ 1970 ພວກແມ່ຄ້າຫາບຍ່າງ ທີ່ບໍ່ໄດ້ຮັບອະນຸຍາດ ຖືກລັດຖະບານ ສູນກາງ ກວາດລ້າງ ອອກຈາກໃຈກາງເມືອງ ແຕ່ບໍ່ເທົ່າໃດມື້ຕໍ່ມາ ຫຼື ບໍ່ເທົ່າໃດຊົ່ວໂມງ ກໍກັບຄືນມາອີກ.

ຄວາມພະຍາຍາມເປັນຄັ້ງເປັນຄາວໃນການ "ກວາດລ້າງຊຸມຊົນຄັບຄັ່ງ ຫຼື ຊະລຳ" ລາກດຶງເອົາທັງຊາຍຍິງແລະເດັກນ້ອຍ ອອກຈາກ "ພາກສ່ວນນອກລະບົບ" ເຫຼົ່ານີ້ ໃຫ້ເຂົ້າໄປຢູ່ອ້ອມຮອບຕົວເມືອງຄືແຕ່ກ່ອນໆ, ບ່ອນນັ້ນ ບໍ່ຮູ້ເລີຍວ່າ ການໃຫ້ ບໍລິການ ຈະເປັນແບບໃດ, ວຽກງານກໍຫາຍາກ ແລະ ຄວາມສາມັກຄີລະຫວ່າງບ້ານ ໃກ້ເຮືອນຄຽງ ກໍຍັງຕ້ອງໄດ້ພັດທະນາຂຶ້ນ ຈາກຄວາມຂາດເຂີນ, ຜູ້ຄົນທີ່ຍັດແຫຍ້ກັນ ຢູ່ໃນຕຶກອັບໆ ຫຼື ໃນຊຸມຊົນເຮືອນຕູບ ປຸກຂຶ້ນແບບຊົ່ວຄາວ ເຊິ່ງບໍ່ຮູ້ວ່າມື້ໃດ ທາງການ ຈະມາກວາດລ້າງຂັບໄລ່ຄືກັນ.

ນອກຈາກວ່າ ປະຊາກອນ ຂອງຊາວອາຊີຕາເວັນອອກສ່ຽງໃຕ້ ຈະຫຼຸດລົງ ຢ່າງຈິງຈັງ ໃນຊຸມປີທີ່ເຫຼືອ ຂອງສະຕະວັດນີ້ ເຊິ່ງກໍເປັນໄປໄດ້ຍາກ.ອັນໜຶ່ງອີກ ແມ່ນ ຄວາມແຕກໂຕນລະຫວ່າງ ຄົນຮັ່ງ ກັບຄົນທຸກ ຢູ່ໃນເຂດຕົວເມືອງ ຍິ່ງນັບມື້ນັບກວ້າງ ແລະເລິກຍິ່ງຂຶ້ນ ເພາະການໃຫ້ບໍລິການທີ່ນັບມື້ນັບຂີ້ຮ້າຍລົງ ແລະ ການອົບພະຍົບ ເຂົ້າສູ່ຕົວເມືອງ ຂອງຊາວຊົນນະບົດ ທີ່ຈະຍັງຄົງສືບຕໍ່ໄປ. ນອກຈາກວ່າ ແຮງຊຸກຍູ້ ພາຍໃນຈາກສິ່ງເຫຼົ່ານີ້ ຈະປ່ຽນແປງຄວາມຮັບຮູ້ເຂົ້າໃຈຂອງຜູ້ຄົນ ກ່ຽວກັບຕົນເອງ ແລະກົດລະບຽບທາງການເມືອງ ຕາມເສັ້ນແບ່ງຊົນຊັ້ນ ແລະ ບໍ່ວ່າໝາກຜົນຂອງມັນ ຈະເປັນແບບໃດ ຖ້າຫາກວ່າ ສິ່ງນັ້ນ ເກີດເປັນຈິງແທ້ ກໍບໍ່ມີທາງວ່າ ຈະຄາດຄະເນ ຜົນມັນໄດ້ງ່າຍໆ.

ປາກົດການຫັນປ່ຽນເປັນເມືອງ ເປັນພຽງສ່ວນໜຶ່ງຂອງຂະບວນການປ່ຽນແປງ ຮູບໂສມ ທີ່ກຳລັງດຳເນີນໄປໃນພາກພື້ນນີ້. ນັບແຕ່ການປົດແອກອອກຈາກລັດທິອາ ນານິຄົມ ລັດໃນອາຊີຕາເວັນອອກ ສ່ວນໃຫຍ່ ໄດ້ພະຍາຍາມຫຼຸດຜ່ອນຄວາມເຄັ່ງຕຶງ ໃນເລື່ອງພາສາສາດ ນິເວດວິທະຍາ ວັດທະນະທຳ ແລະ ປະຫວັດສາດ ຂອງບັນ ດາເຜົ່າຕ່າງໆ ຕະຫຼອດຮອດການສະແດງອອກ. ນີ້ແມ່ນດ້ານໜຶ່ງ ສ່ວນອີກດ້ານໜຶ່ງ ຈິດສຳນຶກກ່ຽວກັບຄວາມສາມັກຄີທາງການເມືອງ ແລະ ຄວາມຈົງຮັກພັກດີໜຶ່ງດຽວ ເຊິ່ງຖືກຕີລາຄາວ່າ ແມ່ນພື້ນຖານສຳລັບການກໍ່ສ້າງແລະຮັກສາໄວ້ ເຊິ່ງຄວາມຄົງຕົວ ຢູ່ຂອງລັດຊາດທັນສະໄໝ. ຕົວຢ່າງ ປະເທດຫວຽດນາມ, ຕາມທາງການແລ້ວ ປະ ກອບດ້ວຍພົນລະເມືອງຊົນຊາດຊົນເຜົ່າຕ່າງໆຮອດ 55 ຊົນເຜົ່າ; ເຂດພູດອຍ ແລະ ພູພຽງ ເປັນເຂດຂອງ ປະຊາຊົນ “ຊົນເຜົ່ານ້ອຍ” ຂອງຫວຽດນາມ ຄອບຄອງພື້ນທີ່ ປະມານສາມສ່ວນສີ່ ຂອງແຜ່ນດິນປະເທດຫວຽດນາມ ແລະມີຕົວເມືອງຢູ່ປະມານ 250 ຕໍ່ 400 ເມືອງ (ຮູເຢນ, huyen) ຕາມບັນຊີໃນລະບົບການປົກຄອງ. ນີ້ເປັນ ຕົວຢ່າງໜຶ່ງ ຂອງການຈັດແບ່ງກຸ່ມປະຊາຊາດຊົນເຜົ່າໂດຍຝ່າຍດຽວ ເຊິ່ງມັກໄດ້ແບບ ມາຈາກນັກວິຊາການເອີຣົບ ສະໄໝສະຕະວັດທີ 19 ທີ່ພາກັນອອມຊອນໃນຄວາມ ຫຼາກຫຼາຍທາງພາສາສາດຊົນເຜົ່າ ແລະການນຸ່ງຖື ທີ່ແຕກຕ່າງກັນ. ປະເທດພະມ້າ ມີ ພາສາຊົນຊາດຊົນເຜົ່າຫຼາຍກວ່າຫວຽດນາມ ແຕ່ຖືກເບິ່ງວ່າ ມີຊົນຊາດຊົນເຜົ່າ ແຕ່ ຫ້າກຸ່ມເທົ່ານັ້ນ. ທັງສອງກໍລະນີ ຕ່າງກໍບໍ່ສົມເຫດສົມຜົນຄືກັນ.

ບັນຫາຕ່າງໆ ທີ່ຊົນຊາດຊົນເຜົ່າທ້ອງຖິ່ນຕັ້ງຂຶ້ນ ກັບລັດຖະບານ ໃນພາກພື້ນນີ້ ລ້ວນແຕ່ມາຈາກປາກົດການສອງແບບ. ອັນທີໜຶ່ງ ເກີດຈາກການອ້າງເຫດອ້າງຜົນຄວາມຖືກຕ້ອງຂອງອຸດົມການ ເຂົ້າຂ້າງລັດ ໃນສະຕະວັດທີ ຊາວ. ຄຳວ່າ ປະເທດ/ລັດ ແລະຊາດ ມັກຖືກເຂົ້າໃຈຢ່າງຜິດໆວ່າ ແມ່ນສິ່ງດຽວກັນ, ດັ່ງນັ້ນ ແຕ່ລະລັດ ຈຶ່ງຄວນເປັນຕົວແທນໃຫ້ແກ່ຊາດໜຶ່ງ ຢູ່ໃນລະບົບສາກົນ. ອີກຢ່າງໜຶ່ງ ລັດຕ່າງໆໃນອາຊີຕາເວັນອອກສ່ຽງໃຕ້ ລ້ວນແຕ່ປະກອບດ້ວຍກຸ່ມຜູ້ຄົນ ທີ່ປະກາດວ່າ ຫຼື ເຄີຍມີຄົນປະກາດແທນພວກເຂົາວ່າ ພວກຕົນ ແຕກຕ່າງຈາກກຸ່ມຊົນເຜົ່າໃຫຍ່ ເຊິ່ງປະເທດ/ລັດ ມັກເອົາຊື່ພວກເຂົາ ມາເປັນຊື່ປະເທດ ເຊັ່ນ ໄທແລນດ໌ ທີ່ໝາຍ ຄວາມວ່າ ແຜ່ນດິນຂອງຄົນໄທ. ບາງລັດ ເຊັ່ນ ອິນໂດເນເຊຍ ແລະ ຟີລິບປິນ ກໍ ຍິ່ງມັກເສກສັນປັ້ນແຕ່ງຫຼາຍກວ່າປະເທດອື່ນໆ. ໃນຄວາມເປັນຈິງແລ້ວ ບໍ່ມີຄົນຊາດ ອິນໂດເນເຊຍເລີຍ ຈົນວ່າ ພວກໂຮນລັງ ໃສ່ຊື່ວ່າລັດເນເທີແລນ໌ ອິນດີອີສ ຂຶ້ນ, ດັ່ງນັ້ນ ມັນຈຶ່ງເປັນການງ່າຍສຳລັບຜູ້ປົກຄອງອິນໂດເນເຊຍ ທີ່ປະກາດຄຳຂວັນແຫ່ງ ຊາດວ່າ “ເອກະພາບ ພາຍໃນຄວາມຫຼາກຫຼາຍ” ດ້ວຍວ່າ ເຄີຍມີຜູ້ຄົນທີ່ເກີດຢູ່ ດອນຊະວາ ຢູ່ຄອບຄອງເປັນສ່ວນໃຫຍ່ມາແລ້ວ ແລະປະກາດວ່າ ມີກຸ່ມພາສາແລະ ວັດທະນະທຳຫຼາຍກຸ່ມ ທີ່ປາຖະໜາໃຫ້ສະຖາປະນາຕົວຕົນຂຶ້ນ ເພື່ອຈະສາມາດຢູ່ໃນ ດິນແດນຂອງລັດແຫ່ງນີ້ຢ່າງປອດໄພ. ຄວາມພະຍາຍາມສ້າງຕັ້ງສະຫະພັນທະລັດ ດັ່ງ ທີ່ເຄີຍເຮັດມາແລ້ວຢູ່ອິນໂດເນເຊຍ ເມື່ອຊຸມປີທຳອິດ ພາຍຫຼັງໄດ້ຮັບເອກະລາດ ລົ້ມ ແຫຼວໄປທັງໝົດ ແລະ ລັດທີ່ຮວມຕົວກັນເປັນອັນດຽວ ກໍໄດ້ກາຍມາເປັນ ຕົວແບບ ມາດຖານໃນທົ່ວພາກພື້ນ.

ມີບັນຫາຫຼາຍຢ່າງ ທີ່ຫຍຸ້ງຍາກກວ່າ ສຳລັບລັດອື່ນ ບ່ອນທີ່ແນວຄວາມຄຶດ ກ່ຽວກັບ ຊົນຊາດຊົນເຜົ່າ ກາຍມາເປັນສາຍຜູກພັນຢ່າງໃກ້ຊິດ ກັບຄວາມສຳນຶກ ກ່ຽວກັບອຳນາດທາງການເມືອງ ໃນລະຍະການປົກຄອງແບບອານານິຄົມ. ຕົວຢ່າງ ໃນປະເທດພະມ້າ ພາຍຫຼັງປີ 1954 ການອ້າງໃນສິດທາງການເມືອງເພື່ອການປົກ ຄອງຕົນເອງ ເບິ່ງຄືວ່າມີເຫດຜົນທີ່ຈະເປັນໄປໄດ້ ສຳລັບແຕ່ລະບຸກຄົນ ທີ່ອ້າງ ວ່າ ອອກມາເວົ້າແທນ ພວກກະຫຣ່ຽງ, ສານ, ກະເຣນີ, ກະຊິ່ນ, ຊິ່ນ ແລະ ກຸ່ມ

ອື່ນໆ ເຊິ່ງເມື່ອໜຶ່ງຮ້ອຍປີກ່ອນ ບໍ່ເຄີຍມີຄວາມສຳນຶກກ່ຽວກັບການປົກຄອງຕົນເອງ ຈັກເທື່ອ. ພາຍຫຼັງສົງຄາມໂລກຄັ້ງທີ II ທັດສະນະດັ່ງກ່າວ ໄດ້ຮັບຄວາມເຊື່ອຖື ຍ້ອນວ່າມັນສອດຄ່ອງກັບ ຖະແຫຼງການວ່າດ້ວຍ "ບັນຫາເລື່ອງເຊື້ອຊາດ" ທີ່ປ່າວ ກະຈາຍໂດຍນັກນິຍົມແນວຄຶດ ມາກສ໌ (Maxist) ໃນນັ້ນ ຮວມທັງ ສະຕາລິນ (Stalin) ກ່ຽວກັບບັນຫາ ລັດທິຊາດນິຍົມໃນເອີຣົບ. ດັ່ງນັ້ນ ຜູ້ຮ່າງກົດໝາຍ ລັດຖະທຳມະນູນ ສະບັບທຳອິດຂອງພະມ້າ ຈຶ່ງອະນຸຍາດໃຫ້ມີການເວົ້າເຖິງ ເລື່ອງການປົກຄອງຕົນເອງ ສຳລັບຊົນຊາດຊົນເຜົ່າ. ໃນຕົວຈິງ ບໍ່ເຄີຍໃຫ້ມີສິດປົກຄອງຕົນເອງ ຫຼາຍກວ່າສິ່ງທີ່ ລັດຖະບານກາງອະນຸຍາດໃຫ້ແກ່ພາກສ່ວນອື່ນໆ ແລະ ເມື່ອໃດຫາກຜູ້ນຳຂອງພາກ ພື້ນຢູ່ເຂດນອກໆ ເລີ່ມສະແດງອາການຂົ່ມຂູ່ ວ່າຈະແຍກຕົວອອກຈາກສະຫະພັນ ແລະ ອາດຊອກຫາທາງເປັນພັນທະມິດ ກັບອາເມລິກາ ຫຼື ກັບລັດອື່ນໆໄດ້ ລັດ ຖະບານກາງຂອງພະມ້າ ກໍຕອບໂຕ້ທັນທີ ດ້ວຍການຍົກຍ້າຍພວກເຂົາອອກຈາກອຳ ນາດໄປ. ນັບແຕ່ 1962 ມາ ຄວາມຄຶດຝັນກ່ຽວກັບສິດປົກຄອງຕົນເອງໃນພາກພື້ນ ກໍຖືກເຄື່ອນຍ້າຍອອກຈາກພະມ້າອີກ ແລະ ເຖິງແມ່ນວ່າ ອີກເຈັດລັດ ທີ່ມີຊື່ຕາມ ຊື່ຊົນເຜົ່າ ຍັງຄົງມີຕົວຕົນຢູ່ ແຕ່ລັດເຫຼົ່ານັ້ນ ກໍຫາກຖືກປົກຄອງແບບດຽວກັນກັບພາກ ສ່ວນທີ່ເຫຼືອຢູ່ໃນປະເທດ.

ການປະຕິເສດສິ່ງທີ່ພວກເຂົາຄຶດວ່າ ເປັນສິດທິອັນຊອບທຳ ໃນເລື່ອງ "ການ ຕັດສິນຊາຕາກຳຂອງຊາດຕົນເອງ" ພາໃຫ້ຊາວພະມ້າບາງຄົນ ໄປໄກ ເຖິງຂັ້ນສະ ແຫວງຫາການແຍກຕົວອອກເປັນລັດຕ່າງຫາກ ໃນປີ 1948. ດັ່ງທີ່ໄດ້ສະເໜີໄວ້ແລ້ວ ໃນບົດ 35 ນັບແຕ່ປີ 1958 ມາ ກຸ່ມອື່ນໆ ກໍໄດ້ພະຍາຍາມສະແຫວງຫາແນວທາງ ຕໍ່ສູ້ດ້ວຍກຳລັງອາວຸດ ເພື່ອສະຖາປະນາລັດເອກະລາດ ສຳລັບພວກເຂົາຕ່າງຫາກ. ບໍ່ມີກຸ່ມໃດປະສົບຄວາມສຳເລັດ ແລະເປັນຄວາມຈິງທີ່ວ່າ ເມື່ອບໍ່ດົນມານີ້ ບໍ່ມີບ່ອນ ໃດໃນໂລກ ທີ່ຄວາມພະຍາຍາມແບບນັ້ນ ປະສົບໄຊຊະນະ ໂດຍບໍ່ມີການແຊກແຊງ ດ້ານກຳລັງອາວຸດຈາກລັດທີສາມ. ດັ່ງການສະຖາປະນາລັດບັງກະລາເທດ ພາຍຫຼັງ ທີ່ກອງທັບອິນເດຍ ເຂົ້າໄປຕໍ່ຕ້ານຂັດຂວາງລັດຖະບານປາກິດສະຖານ. ແນ່ນອນວ່າ ການກະທຳແບບນັ້ນ ອາດເຮັດໃຫ້ບັນຫາກ່ຽວກັບຊົນຊາດຊົນເຜົ່າ ແລະ ການຮວມ

ຊາດ(ເປັນອັນໜຶ່ງອັນດຽວກັນ) ເກີດມີຄວາມສຳຄັນຫຼາຍ ສຳລັບລັດຖະບານ ທັ້ງຫຼາຍ ໃນປະເທດອາຊີຕາເວັນອອກສຽງໃຕ້. ໄພຄຸກຄາມຂອງຊາວລິບີຢັນ ທີ່ໜຸນຫຼັງ ໂມຣອສ (Moros) ຢູ່ພາກໃຕ້ ຟີລິບປິນ ໃນຊຸມປີ 1970 ກໍໄດ້ສ້າງບັນຫາໃນທຳນອງດຽວກັນ ສຳລັບລັດຖະບານ ມະນີລາ.

ໃນປີ 1976 ພັກກອມມູນິດຫວຽດນາມ ປະກາດຄວາມຕັດສິນໃຈເພື່ອ "ແກ້ ໄຂ" ບັນຫາເລື່ອງຊົນຊາດຊົນເຜົ່າ ຂອງຫວຽດນາມ, ວິທີການນັ້ນ ແມ່ນການສ້າງ ບູລະນາພາບຢ່າງເຂັ້ມຂຸ້ນຈິງຈັງກວ່າເກົ່າ ໃຫ້ແກ່ເສດຖະກິດ ແລະ ວັດທະນະທຳຂອງ ເຂດພູດອຍ ແລະເຂດທົ່ງຮາບ. ກອງປະຊຸມໃຫຍ່ຄັ້ງສຳຄັນ ກ່ຽວກັບຊົນຊາດຊົນເຜົ່າ ຕ່າງໆໃນຫວຽດນາມ ຈັດຂຶ້ນທີ່ເມືອງ ຍາຕຣັງ ໃນປີ 1978 ໄດ້ປ້ອງກັນແນວທາງ ບູລະນະການແບບນີ້ ດ້ວຍການສະເໜີວ່າ ຊົນເຜົ່ານ້ອຍທັ້ງຫຼາຍໃນຫວຽດນາມ ກໍ ແມ່ນສ່ວນໜຶ່ງຂອງ ມະຫາຊົນສາມັນ ຢູ່ໃນ "ຄອບຄົວໃຫຍ່" ຂອງປະຊາຊົນ ຜູ້ໄດ້ ຮ່ວມກັນຕໍ່ສູ້ ກັບທຳມະຊາດ ຫຼື ພວກຮຸກຮານຕ່າງດ້າວ ນັບແຕ່ "ຮຸ່ງອະລຸນ ຂອງ ປະຫວັດສາດຫວຽດນາມ" ເລີ່ມຂຶ້ນ. ບູລະນາການທາງເສດຖະກິດ ຂອງຊົນຊາດຊົນ ເຜົ່າ ທາງເຂດພູດອຍພາກເໜືອຂອງຫວຽດນາມ ສ່ວນຫຼາຍ ມັກໝາຍເຖິງການຫັນ ປ່ຽນພວກເຂົາ ຈາກການເຮັດໄຮ່ເຄື່ອນທີ່ ລົງມາຢູ່ທົ່ງຮາບ ດ້ວຍການເຂົ້າເປັນສະມາ ຊິກສະຫະກອນກະສິກຳ ແລະເຮັດນາລວມຂອງລັດ. ແຕ່ບັນດາຊົນເຜົ່າໃນເຂດພູດອຍ ຕໍ່ຕ້ານການຫັນເປັນສະຫະກອນລວມໝູ່ແບບຖາວອນ ດ້ວຍວ່າ ມັນຝືນກັບຮີດຄອງ ປະເພນີ ແລະຄວາມມັກຂອງພວກເຂົາ. ສະຫະກອນຫຼາຍແຫ່ງຂອງພວກເຂົາ ຫຼົ້ມຈົມ ແຕກສະຫຼາຍໄປ ແລະລັດຖະບານ ຈຳຕ້ອງໄດ້ຮວບຮວມມັນເຂົ້າກັນອີກ.

ເບິ່ງຄືວ່າ ສະຫະກອນເຫຼົ່ານີ້ ປະລາໄຊໄປ ຍ້ອນວ່າມັນຖືກຕັດແຍກໂດຍ ເຈດຕະນາ ອອກຈາກກຳລັງແຮງທາງເສດຖະກິດຕາມປະເພນີຂອງເຂດພູດອຍ ແລະ ເຂດພູພຽງ (ການແຜ່ພັນສັດ, ການປູກພືດພັນບາງຊະນິດ ເຊັ່ນ ແກ່ນຫອມຍີ່ລ່າ, ໝາກກ້ຽງ, ຖົ່ວເຫຼືອງ ແທນທີ່ຈະປູກເຂົ້າຢ່າງດຽວ) ຍ້ອນວ່າ ພວກເຂົາ ລະເມີດ ຄວາມຄຶດຂອງປະຊາຊົນ ໃນເລື່ອງຂະໜາດ ອັນພໍເໝາະພໍດີ ຂອງຊຸມຊົນເສດຖະກິດ

(ສະຫະກອນຂອງຊາວບ້ານຫວຽດນາມໃນເຂດທີ່ງຣາບ ໃຫຍ່ກວ່າບ້ານນ້ອຍໆໃນເຂດພູດອຍຫຼາຍ) ແລະຍ້ອນວ່າ ປະຊາຊົນເຂດພູສູງ ບໍ່ໄດ້ເຫັນວ່າ ການເປັນຫົວໜ້າສະຫະກອນນັ້ນ ຕ້ອງເປັນຜູ້ມີຄວາມຊຳນິຊຳນານຈັດການອັນໃດອັນໜຶ່ງ ເປັນພິເສດ ດ້ວຍວ່າ ມັນພຽງແຕ່ເປັນການເລືອກຕັ້ງແບບໝຸນວຽນ ດັ່ງນັ້ນ ຈະປ່ຽນແປງຍາມໃດກໍໄດ້.

ຢູ່ຫວຽດນາມ ການບູລະນາການທາງການສຶກສາ ຂອງຊົນຊາດຊົນເຜົ່າ ກໍເປັນນະໂຍບາຍສຳຄັນໜຶ່ງຂອງຊາດ. (ໃນພາສາຫວຽດນາມ ຄຳທີ່ໃຊ້ສຳລັບ ວັດທະນະທຳແທ້ໆນັ້ນ ໝາຍຄວາມວ່າ ການປ່ຽນແປງທີ່ມາຈາກວັນນະຄະດີ) ຕົວຢ່າງ ໃນປີ 1982 ເພື່ອລະດົມໃຫ້ເດັກນ້ອຍຂະເໝນຢູ່ໃນໂຮງຮຽນຫວຽດນາມ ໃຫ້ເຂົ້າໂຮງຮຽນຫວຽດນາມ, ເດັກນ້ອຍຂະເໝນທີ່ຮຽນສຸດປະຖົມສຶກສາແລ້ວ ໄດ້ຮັບອະນຸຍາດໃຫ້ເຂົ້າຮຽນຕໍ່ມັດທະຍົມ ໂດຍບໍ່ຕ້ອງ “ສອບເສັງເລື່ອນຊັ້ນ” ເຊິ່ງຕ່າງຈາກເດັກນ້ອຍຫວຽດນາມ, ມີການອອກດຳລັດໃຫ້ໃຊ້ພາສາຫວຽດນາມ ເປັນພາສາແຫ່ງການ “ສື່ສານ”, ດ້ວຍການໃຊ້ພາສານີ້ ທຸກຊົນຊາດຊົນເຜົ່າ ກໍສາມາດໄດ້ຮັບຜົນສຳເລັດທາງດ້ານວັດທະນະທຳ ແລະ ວັດຖຸ ແບບທົ່ວເຖິງກັນ. ຢ່າງໃດກໍດີ, ນັກຮຽນຈາກເຂດພູດອຍພາກເໜືອ ກໍບໍ່ສາມາດຢູ່ໂຮງຮຽນໄດ້ດົນ ຄືກັບເດັກນ້ອຍຊາດຫວຽດນາມ ຢູ່ນັ້ນເອງ.

ລັດຖະບານຂອງປະເທດອື່ນໆ ໃຊ້ວິທີການແກ້ໄຂບັນຫາແບບແຕກຕ່າງກັນ. ຕົວຢ່າງ ຢູ່ປະເທດໄທ, ພວກທີ່ລຸກຮືໃນເຂດພູດອຍ ທາງພາກເໜືອ ໃນຊຸມປີ 1960 ແລະ ຕົ້ນຊຸມປີ 1970 ໄດ້ຮັບການປຸກລະດົມ ສິ່ງເສີມໃຫ້ເຄື່ອນໄຫວຕໍ່ຕ້ານການທີ່ພວກເຂົາຖືກຂັບໄລ່ອອກຈາກທີ່ດິນຂອງພວກເຂົາ ໂດຍພວກມາຈາກທົ່ງຣາບ ທີ່ຊອກຫາດິນເຮັດການກະສິກຳໃຫຍ່. ການຕອບໂຕ້ຂອງລັດຖະບານໃນຂັ້ນທຳອິດ ຕໍ່ປະຊາຊົນເຫຼົ່ານີ້ (ເຊິ່ງບໍ່ເຄີຍມີອຳນາດໃນຮູບແບບອື່ນໃນກຳມືຈັກເທື່ອ) ຈຶ່ງແມ່ນການໃຊ້ກຳລັງອາວຸດ ແມ່ນແຕ່ການຖິ້ມລະເບີດ ຈູດເຜົາໝົດບ້ານ ແລະນັ້ນ ກໍຍິ່ງສ້າງຄວາມຂັດຂ້ອງໝອງໃຈຕື່ມຂຶ້ນ. ໃນທີ່ສຸດ ລັດຖະບານກໍຕ້ອງໃຊ້ຍຸດທະວິທີໃໝ່ ແລະເລີ່ມໂຄງການທີ່ອອກແບບໄວ້ ເພື່ອການບູລະນາການເສດຖະກິດ ແລະ ວັດທະນະທຳ ຂອງປະຊາຊົນຊາວພູດອຍ ເຂົ້າກັບຂອງປະຊາຊົນອື່ນໆຂອງປະເທດ. ການເຂົ້າມາມີ

ບົດບາດຂອງເຈົ້າຊີວິດ ຢູ່ໃນໂຄງການເຫຼົ່ານີ້ ເນັ້ນຍ້ຳຄວາມສຳຄັນຂອງມັນຕໍ່ລັດຖະບານ. ໃນມາເລເຊຍ ຄວາມເຄັ່ງຕຶງ ທາງດ້ານຊົນເຜົ່າ ທີ່ແຍກແບ່ງປະຊາຊົນສ່ວນຫຼາຍອອກຈາກປະຊາຊົນສ່ວນໜ້ອຍ ຄືຊຸມຊົນຊາວຈີນ ແລະ ອິນເດຍ ຊ້ຳເປັນອີກແບບໜຶ່ງ ແລະລັດຖະບານ ກໍໄດ້ຫາທາງຜ່ອນເບົາມັນລົງ ດ້ວຍການພະຍາຍາມແຈກຢາຍຊັບສິນໃຫ້ ຢ່າງເທົ່າທຽມກັນຫຼາຍຂຶ້ນ ໃນທົ່ວຊາດ.

ຢູ່ພະມ້າ ລັດຖະບານໄດ້ເນັ້ນເຖິງໂຄງການທາງເສດຖະກິດ ແລະການສຶກສາຫຼາຍຄືກັນ ເພື່ອພະຍາຍາມຫຼຸດຜ່ອນສາເຫດແຫ່ງຄວາມຂັດຂ້ອງໝອງໃຈ ຂອງບັນດາຊົນຊາດຊົນເຜົ່າຕ່າງໆ ໂດຍຍອມຮັບຮູ້ວ່າ ພື້ນຖານໜຶ່ງແຫ່ງການເປັນປໍລະປັກຂອງທ້ອງຖິ່ນ ກັບລັດຖະບານກາງ ກໍແມ່ນວ່າ ພື້ນທີ່ເຂດຫ່າງໄກທີ່ສຸດຂອງປະເທດນັ້ນ ແມ່ນເຂດທີ່ທຸກຍາກທີ່ສຸດ, ໄດ້ມີຄວາມພະຍາຍາມຫຼາຍຢ່າງ ເພື່ອນຳເອົາໂຄງການພັດທະນາທັ້ງຫຼາຍເຂົ້າໄປປະຕິບັດ ໃນເຂດທີ່ຂາດເຂີນວຽກງານ ແລະ ໂອກາດອັນອຳນວຍ ພ້ອມດຽວກັນ ກໍພະຍາຍາມປັບປຸງສະມັດຖະພາບການຜະລິດກະສິກຳ ເພື່ອໃຫ້ລາຄາຂາຍຕ່ຳລົງ. ໃນປີ 1965 ລັດຖະບານໄດ້ຂຶ້ນໂຄງການໜຶ່ງອີກ ເພື່ອນຳເອົາທັ້ງຊາຍແລະຍິງ ຈາກບໍລິເວນຊາຍແດນປະເທດ ເຂົ້າມາຮຽນຮ່ວມກັນໃນສະຖາບັນການສຶກສາ ເພື່ອພັດທະນາກຸ່ມຊົນເຜົ່າຕ່າງໆໃນຊາດ ຜູ້ຄົນທີ່ເຂົ້າມາອົບຮົມແລ້ວຈະກັບຄືນເມືອບ້ານເກີດເມືອງນອນຂອງພວກເຂົາ ຫຼື ໄປເຂດອື່ນພາຍໃນປະເທດ ເພື່ອເຮັດວຽກເປັນຄູສອນ ຫຼືພະນັກງານອື່ນໆ ເພື່ອສົ່ງເສີມຄວາມສາມັກຄີພາຍໃນຊາດ. ໃນໂອກາດສະຫຼອງ “ວັນສະຫະພາບ (Union Day)” ປະຈຳປີ ໄດ້ມີການສະແດງດ້ານສິລະປະວັດທະນະທຳ ຂອງກຸ່ມຊົນເຜົ່າຕ່າງໆ ທີ່ນຸ່ງເຄື່ອງແຕ່ງຕົວ ຫຼິ້ນດົນຕຼີ ແລະຟ້ອນລຳ ຕາມແບບທ້ອງຖິ່ນຂອງຕົນ. ສຳລັບຊາວເອີຣົບ ຜູ້ທີ່ອາດຖືວ່າ ລັດທິຊາດນິຍົມ ເປັນແນວຄຶດຫຼ້າສະໄໝ ຫຼື ເປັນສາເຫດແຫ່ງສົງຄາມ ການໄດ້ເຫັນພາບ ທີ່ພະນັກງານຊາວພະມ້າໃນແຕ່ລະປີ ມາກົ້ມຫົວຄຳນັບຕໍ່ໜ້າທຸງຊາດ ຂະນະທີ່ມີການນຳເອົາທຸງ ຜ່ານໜ້າລັດທຸກລັດ ແລະ ທຸກໜ່ວຍງານ ໃນວັນ “ວັນສະຫະພາບ” ອາດຖືກເບິ່ງວ່າ ເປັນສິ່ງຫຼ້າຫຼັງ ແຕ່ສຳລັບລັດຖະບານພະມ້າແລ້ວ ມັນເປັນແນວທາງໜຶ່ງ ເພື່ອປູກຝັງຄວາມຄຶດໃສ່ພົນລະເມືອງຂອງຕົນ ວ່າຄວາມຈົງຮັກພັກດີ

ໃນຂັ້ນທຳອິດທີ່ສຸດ ຂອງພວກເຂົາ ຕ້ອງແມ່ນຄວາມຈົງຮັກພັກດີຕໍ່ ລັດຊາດສູນກາງ ຫຼາຍກວ່າ ຕໍ່ເອກະລັກຂອງຊົນຊາດຊົນເຜົ່າໃດໜຶ່ງ.

ຂະບວນການ ແຫ່ງຄວາມປ່ຽນແປງທີ່ກຳລັງເປັນໄປ ຢູ່ໃນເຂດຊົນຊາດ ແລະ ທ້ອງຖິ່ນຕ່າງໆ ໃນອາຊີຕາເວັນອອກສຽງໃຕ້ນັ້ນ ຖືວ່າເປັນເລື່ອງຍິ່ງໃຫຍ່ ແລະ ສະຫຼັບ ຊັບຊ້ອນຫຼາຍ ບໍ່ວ່າຈະດ້ວຍການຄຶດໄລ່ແບບລວມໆ ແຕ່ຄວບຄຸມທົ່ວວົງກວ້າງພຽງໃດ ກໍຕາມ ມັນຍາກທີ່ຈະໃຫ້ໃຜອະທິບາຍ ແລະສັງລວມໃຫ້ເຫັນຮູບພາບສຸດທ້າຍຂອງ ມັນໄດ້ ນອກຈາກພວກນັກປາດອັນດັບໜຶ່ງເທົ່ານັ້ນ ຈຶ່ງຈະເຮັດໄດ້. ຄວາມພະຍາຍາມ ທີ່ຈະເຂົ້າໃຈພັດທະນາການທາງການສຶກສາ ການຄົມມະນາຄົມ ສາສະໜາ ແລະ ພາສາ ທີ່ໄດ້ສົນທະນາກັນມາເມື່ອກ່ອນນີ້ ເປັນພຽງການເລີ່ມຕົ້ນເປີດສາກ ໄປສູ່ການ ບັນລຸເຖິງຄວາມຮູ້ອັນຍິ່ງໃຫຍ່ກວ່ານີ້. ຍ້ອນເຫດນີ້ເອງ ຄົງຈະເປັນການເສກສັນປັ້ນ ແຕ່ງເອົາເອງ ຖ້າຫາກວ່າ ຕ້ອງຂຽນໃບປະເມີນຄວາມສຳເລັດ ຫຼື ຄວາມລົ້ມແຫຼວ ທີ່ປະເທດທັງໝົດໃນອາຊີຕາເວັນອອກສຽງໃຕ້ ໄດ້ປະສົບມາ ໃນຄວາມພະຍາຍາມ ຟື້ນຟູ ກໍ່ສ້າງລະບົບສັງຄົມ ແລະການເມືອງຂອງຕົນ ໂດຍມີເປົ້າໝາຍ ຢູ່ທີ່ການຫຼຸດ ຜ່ອນໂອກາດທີ່ຈະຕົກເປັນຝ່າຍຮັບ ຢູ່ໃນຊີວິດຊຸມຊົນຂອງໂລກທີ່ພວມສັ່ນສະເທືອນ ຢູ່ນີ້. ດ້ວຍວ່າ ຕ້ອງປະເຊີນກັບຄວາມພະຍາຍາມ ບໍ່ວ່າໃນຮູບແບບໃດກໍຕາມ ເພື່ອ ຕັດສິນກ່ຽວກັບອະນາຄົດຂອງພາກພື້ນນີ້. ອັນທີ່ບັນດານັກປະຫວັດສາດ ເຮັດໄດ້ດີທີ່ ສຸດ ກໍຄົງແມ່ນ ການຈົດຈຳວ່າ ພວກເຂົາ ກັບນັກປາດອື່ນໆ ຫາກໍໄດ້ລົງມືສຶກສາ ປະຫວັດສາດອາຊີຕາເວັນອອກສຽງໃຕ້ ຫວ່າງບໍ່ດົນມານີ້ເອງ ແລະຄຶດຫວນຄືນ ເຖິງ ສຸພາສິດຫວຽດນາມບົດໜຶ່ງ ທີ່ວ່າ **"ຖ້າຮູ້ແດ່ແລ້ວ ກໍເວົ້າອອກມາໂລດ ແຕ່ຖ້າບໍ່ຮູ້ ກໍຢືນອີງເສົາຕໍ່ໄປ ແລະຟັງຜູ້ອື່ນ"**.

ຂໍ້ມູນບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ເດວິດ ໂຈລ ສະເຕນເບີກ

ຮູ້ຈັກປະເທດໃນອາຊີຕາເວັນອອກສ່ຽງໃຕ້: ພາກ V ປະເທດອາຊີຕາເວັນ
ອອກສ່ຽງໃຕ້ ກັບ ໂລກສະໄໝໃໝ່ / ເດວິດ ໂຈລ ສະເຕນເບີກ, ແປໂດຍ ດາຣາ
ກັນລະຍາ. -- ວຽງຈັນ : ສຳນັກພິມດອກເກດ , 2012.
256 ໜ້າ : ພາບປະກອບ : 21 ຊມ

1. ອາຊີຕາເວັນອອກສ່ຽງໃຕ້ -- ປະຫວັດສາດ. I. ດາຣາ ກັນລະຍາ, ຜູ້ແປ.
II. ຊື່ເລື່ອງ

959--dc21

ISBN 978-9932-07-026-8

ຈາກຊ້າຍ : ຣັອຟ, ເທເລີ, ໄວແອັຕ, ແຊນດະເລີ, ວູດໄຊດ໌, ສເມລ, ສະເຕນເບີກ
(ພາບຖ່າຍໂດຍ ດີເວ ເນລ, .5. , ອິຫາກາ, ນິວຢ໊ອກ)

ໂດຍເຫັນວ່າ ມີຄວາມຈຳເປັນຕ້ອງນຳໃຊ້ປຶ້ມຫົວນີ້ ໃນການສອນປະຫວັດສາດ ອາຊີຕາເວັນ ອອກສຽງໃຕ້ ດ້ວຍວ່າ ເນື້ອໃນປຶ້ມນີ້ ຈະພາທ່ານຜູ່ອ່ານໄປພົບເຫັນ ຂະບວນການ ປ່ຽນແປງທີ່ສ້າງສັນ ເຊິ່ງອາຊີຕາເວັນອອກສຽງໃຕ້ ໄດ້ປັບວັດທະນາທຳຂອງຕົນເອງ ເຂົ້າກັບໂລກ ແຫ່ງຄວາມປ່ຽນແປງ. ໄປຄຽງຄູ່ກັບການປ່ຽນແປງທາງເສດຖະກິດສັງຄົມ ແລະວັດທະນາທຳ ໄປສູ່ ຍຸກສະໄໝໃໝ່ ກໍຍັງມີບັນຍາກາດ ຈາກອິດທິພົນຂອງດິນຟ້າອາກາດ ແລະສິ່ງແວດລ້ອມ, ວິທະ ຍາສາດ ແລະເທັກໂນໂລຢີ. ເນື້ອໃນຂອງປຶ້ມທີ່ດຳເນີນເລື່ອງ ໄປຕາມໂຄງຮ່າງທີ່ກ່າວມານີ້ ຊ່ອຍໃຫ້ ຜູ່ຂຽນ ໄດ້ໃຫ້ຂໍ້ສັງເກດ ກ່ຽວກັບວິວັດທະນາການຂອງລະບົບ ແລະວິເຄາະຄວາມປ່ຽນແປງ ທັງຫມົດໂດຍລວມ ຂອງຂົງເຂດນີ້.

ນັບແຕ່ປຶ້ມ ຊອກຮູ້ກ່ຽວກັບ ອາຊີຕາເວັນອອກສຽງໃຕ້ ໄດ້ຮັບການຈັດພິມຂຶ້ນຄັ້ງທຳອິດ ເປັນເວລາຫລາຍປີມາແລ້ວ ເຫດການຕ່າງໆກໍໄດ້ຜັນແປໄປ. ສົງຄາມຢູ່ຫວຽດນາມ ໄດ້ສ້ຽງສຸດລົງ, ຄວາມປ່ຽນແປງອັນສຳຄັນ ດ້ານການເມືອງ ໄດ້ເຮັດໃຫ້ບັນດາປະເທດໃນອິນໂດຈີນ ກ້າວເຂົ້າສູ ຊີວິດໃໝ່. ຜ່ານມາ ຫລາຍໆປະເທດໃນຂົງເຂດນີ້ ໄດ້ພົບພໍ້ຄວາມທຸກຍາກ ຄວາມຜັນແປ ທາງ ການເມືອງ; ໄດ້ຕໍ່ສູ້ກັບຜົນສະທ້ອນ ດ້ານເສດຖະກິດ ຈາກວິກິດການພະລັງງານ ໃນຊຸມປີ 1970. ປຶ້ມເຫລັ້ມນີ້ ກໍໄດ້ຮັບການກວດແກ້ຄືນ ທຸກຂໍ້ມູນກ່ຽວກັບເຫດການສຳຄັນ.

ປຶ້ມຫົວນີ້ ຂຽນຂຶ້ນໂດຍຫລາຍຜູ່ຂຽນ ອັນເປັນເອກະລັກສະເພາະຂອງປຶ້ມລັກສະນະນີ້ ກໍຍັງຄົງຢູ່ໃນສະບັບນີ້. ຜູ່ຊ່ຽວຊານປະຫວັດສາດພະມ້າ ທ່ານ ໂຣເບີດ ເທເລີ ໄດ້ເຂົ້າມາຮ່ວມນຳ ຄະນະນັກຂຽນ ຮວມເປັນຫົກຄົນ. ທ່ານ ເທເລີ ໄດ້ເປັນຜູ່ສຸມໃສ່ວຽກປັບປຸງເນື້ອໃນ ສ່ວນທີ່ ກ່ຽວເຖິງ ພະມ້າ ໂດຍສະເພາະ. ມີການຂຽນບົດໃໝ່ໆຕື່ມໃສ່ ເນັ້ນເຫດການທີ່ສົດໆຮ້ອນໆ ຢູ່ໃນຂົງເຂດນີ້. ບົດອ້າງອີງ ອັນເປັນແຫລ່ງຂໍ້ມູນປະຫວັດສາດ ກໍໄດ້ຮັບການປັບປຸງ6 ເພື່ອໃຫ້ສອດຄ່ອງ ກັບການ ສຶດສອນ ແລະໃຫ້ທຶນການສຶກສາ ກ່ຽວກັບອາຊີຕາເວັນອອກສຽງໃຕ້ ຫລັງສົງຄາມໂລກຄັ້ງທີ II ທີ່ຈັດພິມ ໄດ້ກ່ວາສິບປີມາແລ້ວ.